# ຄຳນຳ

ອີງຕາມແຜນຍຸດທະສາດ ການພັດທະນາການທ່ອງທ່ຽວຂອງ ສປປ ລາວ 2016-2025.

ອີງຕາມຄວາມຮຽກຮ້ອງຕ້ອງການ ໃນການພັດທະນາແຫຼ່ງທ່ອງທ່ຽວຂອງ ສປປ ລາວ.

ເພື່ອເຮັດໃຫ້ການພັດທະນາແຫຼ່ງທ່ອງທ່ຽວໃນ ສປປ ລາວ ໄດ້ຮັບການພັດທະນາເປັນຈຸດສຸມ, ມີຄຸນນະພາບ ແລະ ຍືນຍົງ ມີສິ່ງອຳນວຍຄວາມສະດວກທີ່ເປັນລະບົບ ສາມາດດຶງດູດຄວາມສົນໃຈ ຈາກຕະຫຼາດນັກທ່ອງທ່ຽວພາຍໃນ ແລະ ສາກົນເພີ່ມຂຶ້ນ.

ວຽກງານດ້ານການເກັບກຳຂໍ້ມູນບັນຊີແຫຼ່ງທ່ອງທ່ຽວ ເປັນໜ້າວຽກໜຶ່ງທີ່ມີຄວາມຈຳເປັນ ແລະ ມີຄວາມສຳຄັນ ເນື່ອງຈາກ ເປັນໜ້າວຽກທີ່ສະໜອງຂໍ້ມູນພື້ນຖານດ້ານຈຳນວນ, ຮູບພາບ ແລະ ປະຫວັດຂອງແຫຼ່ງທ່ອງທ່ຽວ ທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ໃນຂອບເຂດທົ່ວປະເທດ, ປະຈຸບັນ ແຫຼ່ງທ່ອງທ່ຽວໄດ້ມີການສຳຫຼວດເກັບກຳຂໍ້ມູນ ແລະ ຂຶ້ນບັນຊີ ເປັນແຫຼ່ງທ່ອງທ່ຽວຂອງ ສປປ ລາວ ທັງໝົດ 2199 ແຫ່ງ (ຂໍ້ມູນປີ 2019). ການຂຶ້ນບັນຊີແຫຼ່ງທ່ອງທ່ຽວ ແມ່ນເພື່ອເປັນການໃຫ້ຮູ້ວ່າ ຢູ່ໃນນະຄອນຫຼວງວຽງຈັນ ແລະ ໃນບັນດາແຂວງທົ່ວປະເທດ ມີແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາແລ້ວຈັກແຫ່ງ ແລະ ມີແຫຼ່ງທ່ອງທ່ຽວທີ່ໄດ້ຮັບການສຳຫຼວດຈັດສັນແລ້ວຈັກແຫ່ງ.

ໃນການປັບປຸງປຶ້ມບັນຊີແຫຼ່ງທ່ອງທ່ຽວຂອງ ສປປ ລາວ ຄັ້ງນີ້, ໂດຍໄດ້ຮັບການສະໜັບສະໜູນທາງດ້ານງົບປະມານ ພາຍໃຕ້ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວ ຂອງທະນາຄານພັດທະນາອາຊີ. ປຶ້ມບັນຊີແຫຼ່ງທ່ອງທ່ຽວຂອງ ສປປ ລາວໄດ້ຮັບການປັບປຸງ ໂດຍແມ່ນພະແນກສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວ, ກົມພັດທະນາການທ່ອງທ່ຽວເປັນຜູ້ຈັດຕັ້ງປະຕິບັດ, ປຶ້ມບັນຊີແຫຼ່ງທ່ອງທ່ຽວສ້າງຂຶ້ນບົນພື້ນຖານ ການສັງລວມຂໍ້ມູນຈາກທ້ອງຖິ່ນ ກໍ່ຄືຈາກບັນດາພະແນກ ຖວທ ນະຄອນຫຼວງ ແລະ ບັນດາແຂວງທົ່ວປະເທດ.

ຕ່າງໜ້າກົມພັດທະນາການທ່ອງທ່ຽວ ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວທີ່ໄດ້ສະໜັບສະໜູນງົບປະມານ ໃນການປັບປຸງປຶ້ມບັນຊີແຫຼ່ງທ່ອງທ່ຽວໃນຄັ້ງນີ້. ຂໍສະແດງຄວາມຂອບໃຈມາຍັງ ຖວທ ນະຄອນຫຼວງ ແລະ ບັນດາ ຖວທ ແຂວງທົ່ວປະເທດ ທີ່ໃຫ້ຄວາມຮ່ວມມື ສະໜອງຂໍ້ມູນໄດ້ເປັນຢ່າງດີ, ຂໍສະແດງຄວາມຍ້ອງຍໍຊົມເຊີຍຄະນະຮັບຜິດຊອບ ການປັບປຸງປຶ້ມບັນຊີແຫຼ່ງທ່ອງທ່ຽວຂັ້ນສູນກາງ ທີ່ມີຄວາມຮັບຜິດຊອບສູງໃນການຄົ້ນຄວ້າເກັບຂໍ້ມູນ ແລະ ສຳເລັດການປັບປຸງປຶ້ມບັນຊີແຫຼ່ງທ່ອງທ່ຽວຂອງ ສປປ ລາວ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ຂໍ້ມູນທີ່ໄດ້ສັງລວມຢູ່ໃນປຶ້ມບັນຊີແຫຼ່ງທ່ອງທ່ຽວຫົວນີ້ ຈະເປັນປະໂຫຍດຕໍ່ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ໄດ້ນຳໄປເປັນບ່ອນອີງໃນການພັດທະນາ. ສົ່ງເສີມ ແລະ ຄຸ້ມຄອງຢ່າງມີພະສິດທິພາບ, ມີຜົນປະໂຫຍດສູງສຸດ ໂດຍອີງໃສ່ທ່າແຮງຂອງແຕ່ລະທ້ອງຖິ່ນ, ພັດທະນາຢ່າງມີຄວາມຮັບຜິດຊອບ ແລະ ມີຄວາມຍືນຍົງໃນອະນາຄົດ. ຄະນະຮັບຜິດຊອບການຈັດພິມ ກໍ່ບໍ່ສາມາດຫຼີກລ້ຽງໄດ້ ຂໍ້ຂາດຕົກບົກຜ່ອງເຊັ່ນ: ອາດບໍ່ທັນຄົບຖ້ວນ ແລະ ລະອຽດຊັດເຈນ, ຈຶ່ງຫວັງວ່າ ຈະໄດ້ຮັບການປະກອບຄຳເຫັນຈາກທ່ານ ເພື່ອຈະໄດ້ປັບປຸງແກ້ໄຂໃນຄັ້ງຕໍ່ໄປ.

ຫົວໜ້າກົມພັດທະນາການທ່ອງທ່ຽວ

ດຣ. ອາລຸນ ບຸນມີໄຊ

ສາລະບານ

ຄຳນຳ I

ສັງລວມສະຖິຕິແຫຼ່ງທ່ອງທ່ຽວປີ 2019 1

ຕາຕະລາງສະຫຼຸບບັນຊີແຫຼ່ງທ່ອງທ່ຽວ .......... 2

ແຂວງຜົ້ງສາລີ 7

1. ແຫຼ່ງທ່ອງທ່ຽວທຳມະຊາດອ່າງເກັບນ້ຳເຂື່ອນໄຟຟ້ານ້ຳອູ 6. .......... 8
2. ສວນຊາຫຼັກ 4 (ບ້ານ ສາຍລົມ). .......... 9
3. ຕົວເມືອງເກົ່າຜົ້ງສາລີ (ບ້ານຜົ້ງສາລີ ແລະ ບ້ານຕະຫຼາດວິໄລ). .......... 10
4. ແຫຼ່ງທ່ອງທ່ຽວພູຟ້າ. .......... 11
5. ສວນຊາ 400 ປີ. .......... 12
6. ບ້ານບຸນພຽງ. .......... 13
7. ໜອງຫຼວງອູເໜືອ. .......... 14
8. ແຫຼ່ງທ່ອງທ່ຽວທາງທຳມະຊາດຕາດ ຫ້ວຍຫອຍ. .......... 15
9. ວັດສີຖູນເມືອງ (ເມືອງຂວາ). .......... 16
10. ອ່າງເກັບນ້ຳ ໄຟຟ້ານ້ຳອູ 5. .......... 16
11. ອ່າງເກັບນ້ຳ ໄຟຟ້ານ້ຳອູ 4. .......... 17
12. ບໍ່ນ້ຳອຸ່ນ, ປ່າສະຫງວນນ້ຳລານ. .......... 18
13. ປ່າສະຫງວນພູຕ່ຳຊ່ານ. .......... 19
14. ການທ່ຽວຊົມທຳມະຊາດ ແລະ ຫມູ່ບ້ານຊົນເຜົ່າ 1 ມື້ - 4ມື້ (Trekking Program). .......... 20

ແຂວງຫຼວງນ້ຳທາ 21

1. ປ່າສະຫງວນແຫ່ງຊາດນ້ຳຫ້າ. .......... 22

2. ແຫຼ່ງທ່ອງທ່ຽວບ້ານນໍ້າດີ, ເມືອງຫຼວງນໍ້າທາ..................23
3. ນໍ້າຕົກຕາດບ້ານນໍ້າທຸງ..................24
4. ພະທາດປູມປຸກ..................25
5. ວັດຫຼວງຂອນ...................26
6. ພະທາດຫຼວງນໍ້າທາ..................27
7. ຫໍວາງສະແດງຜະລິດຕະພັນແຂວງຫລວງນໍ້າທາ..................28
8. ບ້ານວັດທະນະທໍາເຜົ່າຍວນ (ເຮືອນຮັບຕ້ອນແຂກ)..................29
9. ຕະຫລາດກາງຄືນແຂວງຫລວງນໍ້າທາ..................30
10. ນໍ້າຕົກຕາດນໍ້າແກ້ວ ເມືອງສິງ...................31
11. ພະທາດຫຼວງຊຽງຕຶງ..................32
12. ພະທາດຈອມສິງ..................34
13. ພະທາດຫີນຟູ (ບ້ານຊາຍ)..................35
14. ວັດເຈົ້າຟ້າສີຣິໝໍ່ຄໍາ (ວັດບ້ານຫົວຂົວ)...................36
15. ຫໍວາງສະແດງເມືອງສິງ (ເຮືອນເກົ່າພະຍາຊຽງກອງ)...................37
16. ນໍ້າຕົກຕາດຜາເຍືອງ...................38
17. ຄ້າຍເກົ່າຂອງທະຫານຝຣັ່ງເມືອງສິງ..................39
18. ພູຜາຄໍາ ແລະ ຖໍ້າຍັກ ເມືອງລອງ..................40
19. ນໍ້າຕົກຕາດນໍ້າລອງ..................42
20. ນໍ້າຕົກຕາດຫ້ວຍນໍ້າແກ້ວ..................43
21. ພະທາດຈອມແຈ້ງ, ພະທາດແມວສີ ເມືອງລອງ..................44
22. ພະທາດຈອມເມືອງ...................45

LAO
Simply Be

23. ຖ້ຳເກົາເລົາ ເມືອງວຽງພູຄາ. ........ 46
24. ສວນອຸທິຍານບໍ່ກຸ້ງ. ........ 47
25. ວັດມະຫາໂປດ ແລະ ຄູວຽງ. ........ 48
26. ແຫລ່ງທ່ອງທ່ຽວຈຸດຊົມວິວບ້ານນ້ຳແພ. ........ 50
27. ຖ້ຳນ້ຳກຸດ........ 51
28. ຫລັກຊ້າງ........ 52
29. ນ້ຳຕົກຕາດ ນ້ຳກຸດ. ........ 53
30. ບ້ານຄອນຄຳ........ 54

ແຂວງບໍ່ແກ້ວ 55

1. ບໍ່ນ້ຳຮ້ອນບ້ານນ້ຳເກິ່ງ ເຊື່ອມຕໍ່ກັບຕາດນ້ຳຢອງ. ........ 56
2. ດອນປຸ່ງ. ........ 57
3. ປ່າສະຫງວນແຫ່ງຊາດນ້ຳກ່ານ. ........ 58
4. ເມືອງເກົ່າສຸວັນນະໂຄມຄຳ. ........ 60
5. ຄ້າຍເກົ່າທະຫານຝຣັ່ງ. ........ 62
6. ພູຜາຮຸ້ງ - ພູຜາແດງ ຕິດພັນກັບຕາດນ້ຳຍອນ........ 63
7. ນ້ຳລອດພູຊ້າງ........ 65
8. ດອນຊາວ (ງານເທດສະການດອກງີ້ວບານ)........ 66
9. ຜາພຣະ. ........ 67
10. ວັດຈອມເຂົາມະນີຣັດ. ........ 68
11. ວັດທາດສຸວັນນະຜ້າຄຳ........ 69
12. ພູຊີ້ຟ້າ........ 70

13. ປ່າຫວາຍຫຼວງ (ໃຫຍ່). ........ 71
14. ນ້ຳຕົກຕາດຂຸນລູ - ນາງອົ້ວ. ........ 72
15. ປ່າຊາຕົ້ນໃຫຍ່ (ພູຫຍ້າຄາ). ........ 74
16. ຄຸກ 24ຫ້ອງ ສະໄໝອາເມລິກາ. ........ 75
17. ຖ້ຳຜາແກ່. ........ 76
ແຂວງອຸດົມໄຊ 77
1. ນ້ຳຕົກຕາດນ້ຳກັດ (ນ້ຳກັດຢໍລະປ່າ). ........ 78
2. ຖ້ຳຈອມອອງ. ........ 80
3. ອ່າງນ້ຳຫີນ. ........ 82
4. ຕາດຫຼັກ 11. ........ 83
5. ວັດຮອຍຕີນພະບາດ ບ້ານລ້ອງຍາ. ........ 84
6. ວັດພູທາດໄຊມຸງຄຸນລັດຕະນະມິ່ງເມືອງ. ........ 88
7. ຕົ້ນໄມ້ມະນີໂຄດວັດສັນຕິພາບ. ........ 89
8. ເຜົ່າກຶມມຸ ບ້ານແຟນ. ........ 90
9. ເຜົ່າກຶມມຸບ້ານໂຣມໄຊ. ........ 91
10. ວັດພະເຈົ້າສິງຄຳ. ........ 92
11. ເຜົ່າອາຄາ ບ້ານອາໂນ. ........ 95
12. ເຜົ່າອາຄາ ບ້ານພູແທນ. ........ 96
13. ເຜົ່າກຶມມຸ ບ້ານຕະນອງປໍ. ........ 97
14. ຖ້ຳຫຼວງບ້ານຕະນອງປໍ. ........ 98
15. ຕາດຫ້ວຍໄຄ້ບ້ານຜາວິ. ........ 99

16. ນ້ຳລອດພູບ້ານນາທົ່ງ. ...... 100
17. ຕາດນ້ຳແຈບ້ານທ່າມິ່ນ. ...... 101
18. ເຜົ່າລື້ ບ້ານຍໍ້. ...... 102
19. ບ້ານເຜົ່າໄທຂາວ ບ້ານສາມກາງ. ...... 103
20. ຖ້ຳຫຼວງ ບ້ານກັນວາງ. ...... 104
21. ນ້ຳຕົກຕາດນ້ຳແຮງ. ...... 105
22. ຕາດຕະແລ. ...... 106
23. ຕົ້ນໄມ້ລຳທຽນ (ໜອງຫຼົ່ມ). ...... 107
24. ຖ້ຳພະເຈົ້າຄຳຕັນ ບ້ານປາກເງີຍ. ...... 108
25. ວັດສີຈອມແຈ້ງ ບ້ານສີຈອມແຈ້ງ. ...... 109
26. ປ່າຊາພັນປີບ້ານມົກແຄະ. ...... 110

ແຂວງຫຼວງພະບາງ 111

1. ປະຫວັດຫຍໍ້ເມືອງຫຼວງພະບາງ. ...... 112
2. ວັດຊຽງທອງ. ...... 114
3. ປະຫວັດພະບາງ. ...... 118
4. ຖ້ຳຕິ່ງ. ...... 120
5. ປະຫວັດຜາແອ່ນ. ...... 122
6. ບ້ານປາກອູ. ...... 124
7. ວັດປາກອູ. ...... 124
8. ບ້ານຊ່າງໄຫ. ...... 125
9. ພູທ້າວ, ພູນາງ. ...... 127

10. ວັດຈອມເພັດ.....130
11. ບ້ານຈ່ານເໜືອ.....132
12. ພະເຈົ້າມ່ານ.....134
13. ພູສີ ແລະ ວັດຕ່າງໆຢູ່ບໍລິເວນພູສີ.....136
14. ຫໍພິພິທະພັນແຫ່ງຊາດຫຼວງພະບາງ (ພະລາດຊະວັງເກົ່າ ຫຼວງພະບາງ).....142
15. ວັດວິຊຸນ, ພະທາດໝາກໂມ ແລະ ວັດອາຮາມ.....145
16. ວັດໃໝ່.....148
17. ໜອງຂຽວ ແລະ ບ້ານເມືອງງອຍ.....150
18. ວັດແສນ.....152
19. ນໍ້າຕົກຕາດກວາງຊີ ແລະ ບ້ານທ່າແປ້ນ.....155

ແຂວງຫົວພັນ 157

1. ສວນອຸທິຍານຫີນຕັ້ງ.....158
2. ບໍ່ນໍ້າອຸ່ນນາເມືອງ.....160
3. ພູຫຼວງ.....161
4. ບ້ານຫັດຖະກຳຕໍ່າຫູກ(ບ້ານສະເຫຼີ້ຍ).....162
5. ຖໍ້າປະຫັວດສາດເຂດທາງລ້ອງ.....162
6. ພູຈອມກຸບ.....163
7. ນາຄັງຖ້າຍ USA ເກົ່າ.....163
8. ຕາດແກ້ງຊໍາ.....164
9. ຕາດລຸນ.....164
10. ຕາດຜາທ່ວາງ.....165

11. ຕາດວັງໄນ. 166
12. ຕາດຫ້ອຍສ້ານ. 167
13. ຕາດຫ້ອຍແວກ. 168
14. ບ້ານຫັດຖະກຳຕ່ຳຫູກ(ບ້ານນາສະລາ). 169
15. ບ້ານຫັດຖະກຳຕ່ຳຫູກ(ບ້ານຊຳໃຕ້). 169
16. ບ້ານຫັດຖະກຳຈັກສານ (ບ້ານນາຍົມ). 170
17. ບ້ານເຜົ່າມົ້ງຂາວ (ບ້ານຫ້ອຍໄຄ້). 170
18. ບ້ານເຜົ່າໄທພວນ(ບ້ານຖ້ຳລາ). 171
19. ພູສາມເສົ້າ. 171
20. ວັດດ່ານຮິມ (ວັດວິຫູນ). 172
ແຂວງໄຊຍະບູລີ 173
1. ອ່າງນ້ຳຕຽນ. 174
2. ເຂດພັນຖ້ຳນ້ຳຫັ່ງ. 174
3. ຕາດເຈົ້າ. 175
4. ຕາດຮຳ. 175
5. ວັດສີບຸນເຮືອງ. 176
6. ບ້ານວຽງແກ້ວ. 176
7. ທຳໄຊ. 177
8. ຖ້ຳສະຫວັນຮັກ. 177
9. ຖ້ຳລອດ. 178
10. ວັດພູທອກ. 179

11. ສວນຊາພັນປີ. ....179
12. ຖ້ຳພະຜາຂີ້ໜິ້ນ. ....180
13. ຫໍພິພິທະພັນ ກອງເຂົ້າໃຫຍ່. ....180
14. ຕົ້ນໄມ້ຂ່າໃຫຍ່. ....181
15. ປ່າສະຫງວນແຫ່ງຊາດນ້ຳປຸຍ. ....182
ແຂວງຊຽງຂວາງ 183
1. ທົ່ງໄຫຫີນ. ....184
2. ວັດເພຍວັດ. ....188
3. ທາດຝຸ່ນ. ....189
4. ທາດຈອມເພັດ. ....190
5. ວັດສີພົມ. ....190
6. ໂຮງໝໍເກົ່າ. ....191
7. ຕາດຄາ. ....192
8. ພູກູດ ຈອມເຫຼັກວິລະຊົນ. ....193
9. ຖ້ຳປິວ. ....196
10. ຕາດຄະ. ....197
11. ບ້ານຊຽງກ່ຽວ ຫັດຖະກຳຕໍ່າຫູກໄໝມ້ອນ. ....198
12. ຖ້ຳພະ. ....198
13. ຖ້ຳຊ້າງ. ....199
14. ບໍ່ນ້ຳຮ້ອນນ້ອຍບ້ານຊາງ. ....200
15. ບໍ່ນ້ຳຮ້ອນໃຫຍ່ ບ້ານນ້ຳຮົ່ມ. ....200

16. ຣີສອດບໍ່ນ້ຳຮ້ອນນາທອງ (ໃໝ່)................................................ 201

17. ຂຸມຫຼຸບໄພຂອງທ່ານຜູ້ນຳ (ໃໝ່)................................................ 202

18. ຫໍພິພິທະພັນມູນເຊື້ອແຂວງຊຽງຂວາງ (ໃໝ່)................................................ 203

19. ເຮືອນຈຳລອງຂອງຊົນເຜົ່າມົ້ງ (ໃໝ່)................................................ 204

ແຂວງວຽງຈັນ 205

1. ຖ້ຳປູຄຳ................................................ 206

2. ຖ້ຳນ້ຳ................................................ 207

3. ຖ້ຳລິມ................................................ 208

4. ອ່າງຫຼວງ................................................ 209

5. ນ້ຳຕົກຕາດນ້ຳແຖ່ມ................................................ 210

6. ລ່ອງເຮືອໃຫຍ່ທ່ຽວຊົມທຳມະຊາດອ່າງນ້ຳງື່ມ 1 ເມືອງແກ້ວອຸດົມ................................................ 211

7. ແກ້ງຂິດຄູ້................................................ 212

8. ພູຄໍ້-ພູໃຫ່ຍ................................................ 213

9. ຜາທໍ່ໝໍ່ຄຳ................................................ 214

10. ວັງຊ້າງ................................................ 216

11. ວັດວຽງຄຳບູຮານ................................................ 216

12. ເມືອງວັງວຽງ................................................ 217

ແຂວງໄຊສົມບູນ 221

1. ພູເບຍ................................................ 222

2. ສັນພູໝອກ................................................ 223

3. ຜາພະເຈົ້າ................................................ 224

4. ອ່າງນ້ຳງື່ມ 2.....226
5. ອ່າງນ້ຳງື່ມ 1.....227
6. ຕາດຫ້ວຍນິກ.....228
7. ນ້ຳຕົກຕາດພະແຈແຫລ້.....229
8. ນ້ຳຕົກຕາດປຸ່ງ.....230
9. ນ້ຳຕົກຕາດດ່ານຜາແຊບ.....231
10. ນ້ຳຕົກຕາດຍອງ.....232
11. ຖ້ຳຜາສີງ.....233
12. ນ້ຳຕົກຕາດຫ້ວຍປາຕືນ.....234
13. ຖ້ຳຜາດອກ.....235
14. ພູພະດ່າງ.....236
15. ຖ້ຳເຈົ້າອະນຸວົງ.....237
16. ເດີ່ນບິນເກົ່າເມືອງລ້ອງແຈ້ງ.....239
17. ເຮືອນເກົ່າວາງປາວ.....240
18. ພະລາດຊະວັງເກົ່າ.....241
19. ຊຸມມໍລະກົດ.....242
20. ສິມເກົ່າວັດຈອມແຈ້ງ.....243
ນະຄອນຫຼວງວຽງຈັນ 245
1. ພຣະທາດຫລວງວຽງຈັນ.....246
2. ຫໍທຳມະສະພາ.....248
3. ປະຕູໄຊ.....249

4. ໂຮງກາຍະສິນ. 250
5. ວັດສີເມືອງ. 251
6. ຫໍຫລັກເມືອງ. 252
7. ຫໍພຣະແກ້ວ. 253
8. ວັດສີສະເກດ. 254
9. ວັດອິງຕື້ ມະຫາວິຫານ. 255
10. ວັດອິນແປງ ວໍຣະວິຫານ. 256
11. ພິພິທະພັນໄກສອນ ພົມວິຫານ. 257
12. ອະນຸສອນສະຖານ ປະທານສຸພານຸວົງ. 257
13. ພິພິທະພັນກອງທັບ. 258
14. ພິພິທະພັນປ້ອງກັນຄວາມສະຫງົບ. 258
15. ສວນເຈົ້າອານຸວົງ. 259
16. ຕະຫລາດກາງຄືນແຄມຂອງ. 260
17. ຕາດທີນຄັນນາ. 261
18. ຕາດຊອນ. 262
19. ຕາດມູນ-ຕາດປ່າໄລ່-ຕາດວັງນອງ-ຕາດວັງນ້ຳເຜີ້ງ. 262
20. ສວນວັດທະນະທຳຊຽງຄວນ. 263
21. ວັດພະບາດແອວຂັນ. 264
22. ວັດຖ້ຳພຣະລືສີ. 265
23. ເຮືອແພທ່າງ່ອນ. 265
24. ວັດຖ້ຳພະ. 266

25. ວັດປ່າຖ້ຳຄອກມ້າ. ....................................................................................................267

26. ພິພິທະພັນຜ້າໄໝບູຮານລາວ. ....................................................................................................268

ແຂວງບໍລິຄຳໄຊ 269

1. ນ້ຳຕົກຕາດຊາຍ. ....................................................................................................270

2. ນ້ຳຕົກຕາດເລີກ. ....................................................................................................271

3. ຮອຍພະບາດ ຖ້ຳສະແບນ. ....................................................................................................272

4. ວັດໂພນສັນ. ....................................................................................................272

5. ວັດພະບາດ. ....................................................................................................273

6. ເສັ້ນທາງຍ່າງປ່າ ບ້ານນາ. ....................................................................................................273

7. ຕາດມັງກອນ. ....................................................................................................274

8. ຫາດຊາຍຂາວ. ....................................................................................................275

9. ຖ້ຳມັງກອນ. ....................................................................................................275

10. ວັງນ້ຳເຢັນ. ....................................................................................................276

11. ບໍ່ນ້ຳອຸ່ນ. ....................................................................................................277

12. ແກ້ງຫຼວງ. ....................................................................................................277

13. ຕາດນ້ຳປາ. ....................................................................................................278

14. ຕາດເຕັກ. ....................................................................................................278

15. ຕາດຫ້ວຍກູ້. ....................................................................................................279

16. ຕາດທອນ. ....................................................................................................280

17. ຕາດໄກ້. ....................................................................................................281

18. ຜາເມືອງ-ຜາສາດນາງພົມຫອມ. ....................................................................................................282

19. ຜາພີຣ້ອງ(ຜານາງຮ້ອງ). ........ 284
20. ວັດທາດພູວຽງ........ 285
ແຂວງຄຳມ່ວນ 287
1. ພະທາດສີໂຄດຕະບອງ. ........ 288
2. ຖໍ້າກອງລໍ........ 290
3. ຖໍ້າພະໜອງປາຝາ........ 292
4. ຖໍ້າຊ້າງ........ 293
5. ກຳແພງຫີນຍັກ ພູຄັນນາ. ........ 294
6. ຖໍ້ານໍ້າລອດເຊບັ້ງໄຟ........ 295
7. ຖໍ້າພະຈັນ........ 296
8. ຂຸນນໍ້າໂດນ........ 297
9. ເຂດທົ່ງຊາດ. ........ 298
10. ຕາດຖູນ........ 299
11. ທົ່ງກະແຈງ........ 300
12. ຖໍ້າຜານາງຫຼົງ........ 301
13. ນໍ້າຕົກຕາດຊຽງລີ. ........ 302
14. ທ່າລັ່ງ. ........ 303
15. ຕາດນໍ້າສະນາມ........ 305
16. ຕາດມ່ວງ........ 306
17. ຖໍ້າຜານາງ. ........ 307
18. ທາດຕຸມພະວັງ. ........ 308

19. ພະທາດເມືອງພອນ........309
20. ໜອງໜາລອດ. ........310
ແຂວງສະຫວັນນະເຂດ 311
1. ຕົວເມືອງເກົ່າ ເຂດເຮືອນເກົ່າຝຣັ່ງເສດ. ........312
2. ພະທາດອີງຮັງ. ........313
3. ແຫຼ່ງທ່ອງທ່ຽວແກ້ງຫຼວງ ( ຮອຍຕີນໄດໂນເສົາ )........313
4. ຫໍໄຕປີດົກ........314
5. ແຫຼ່ງທ່ອງທ່ຽວປ່າສະຫງວນດົງນາຕາດ-ໜອງລື່ມ........314
6. ຜາສາດເຮືອນຫີນ........315
7. ດົງລີງ. ........316
8. ແຫຼ່ງທ່ອງທ່ຽວສຸຍ........317
9. ຫໍພິພິຕະພັນມູນເຊື້ອໄຊຊະນະຮ່ວມສຳພັນສູ້ຮົບລາວ–ຫວຽດນາມ ບໍລິເວນສາຍທາງເລກ 9. ........318
10. ວັດເກົ່າຕາແຫຼວ. ........318
11. ແຫຼ່ງທ່ອງທ່ຽວພະທາດໂພ່ນ. ........319
12. ຫໍພິພິທະພັນໄດໂນເສົາ. ........319
13. ພະທາດນາງລາວ........320
ແຂວງສາລະວັນ 323
1. ນໍ້າຕົກຕາດເລາະ, ຕາດຮັງ........324
2. ແກ້ງກຸ. ........325
3. ນໍ້າຕົກຕາດສູງ (ເຊເຊັດ). ........326
4. ນໍ້າຕົກຕາດເທວະດາ (ຕາດຕະຫຼູຍ)........327

5. ຖ້ຳເກົ້າຮູ-ພູຕາກເຂົ້າ. ........ 328
6. ບ້ານຫ້ວຍຫູນ (ຫັດຖະກຳຕ່ຳແຜ່ນ). ........ 329
7. ຫໍໄຕບ້ານວັດກາງ. ........ 330
8. ຈຸດແວ່ ບ້ານນາປົ່ງ. ........ 331
9. ຫາດກະເດົາທຶກ. ........ 331
10. ວັດໜອງສອງຫ້ອງ (ວັດພະແກ້ວນ້ຳຢາດ). ........ 332
11. ຫາດກອງຫີນອີງແກ້ວ. ........ 333
12. ຂົວທ່ານສຸພານຸວົງ (ຂົວບ້ານດ່ານ). ........ 334
13. ນ້ຳຕົກຕາດລະໂຊຍ. ........ 334
14. ຮອຍພະບາດພະພຸດທະເຈົ້າ (ບ້ານນາດູ່). ........ 335
15. ກອງເສົາເສ. ........ 335
16. 4000 ຂຸມບ້ານທ່າ. ........ 336
17. ຕາດໄມ້ເຮັ້ຍ. ........ 336
18. ນ້ຳຕົກຕາດເສນ. ........ 337
19. ວັດຖຸບູຮານ (ສະໄໝພະທາດພະນົມ). ........ 338
ແຂວງເຊກອງ 339
1. ນ້ຳຕົກຕາດແຝກ. ........ 340
2. ຕາດຫົວຄົນ. ........ 341
3. ຕາດປະອໍ. ........ 342
4. ຕາດໄຟໄໝ້. ........ 343
5. ຕາດນົກເຄົ້າ. ........ 344

6. ແກ້ງຫຼວງ. ....................................................................................................345
7. ບ້ານກິກພຸງໃຕ້. ..............................................................................................345
8. ຖ້ຳຕອກອີງແກ້ວ.............................................................................................346
9. ບ້ານກັນດອນ....................................................................................................347
10. ເຮືອນຊິນເຜົ່າອາຣັກ........................................................................................348
11. ທຳມະຊາດທົ່ງນິມ. ........................................................................................349
12. ທົ່ງເຫຼັກ.........................................................................................................349
13. ດິນຍະທົ່ງໂກ. ................................................................................................350
14. ຖ້ຳເດັ້ງພູນາງລາວ..........................................................................................350
ແຂວງອັດຕະປື 351
1. ລູກສອນໄພ ແລະ ເສັ້ນທາງໂຮ່ຈິມິນ.................................................................352
2. ຫັດຖະກຳປັ້ນດິນເຜົາ.......................................................................................353
3. ຫັດຖະກຳຕ່ຳແຜ່ນແພເຜົ່າຕະຫຼຽງ.....................................................................353
4. ຊິນເຜົ່າໂອຍ. ...................................................................................................354
5. ເຜົ່າເບຣົາ.........................................................................................................355
6. ວັດອີງແສນສຸກຂະລາມ. ....................................................................................356
7. ວັດທາດເຈົ້າໄຊຍະເສດຖາທິລາດ. ......................................................................357
8. ໜອງຟ້າ. .........................................................................................................358
9. ໜອງທົ່ງໄກ່ໂອກ..............................................................................................360
10. ນ້ຳຕົກຕາດຫົວຄົນ..........................................................................................361
11. ຕາດແຊພະ. ...................................................................................................362

12. ຕາດແຊປ້ອງໄລ.......... 363
13. ເຂດອະນຸລັກດົງໄມ້ປ່ຽນທາດເປັນຫີນ.......... 364
14. ໜອງລີມ.......... 365
15. ນໍ້າຕົກຕາດສະໜອງພາກ.......... 366
ແຂວງຈຳປາສັກ 367
1. ນໍ້າຕົກຕາດຄອນພະເພັງ.......... 368
2. ວັດພູຈຳປາສັກ.......... 371
3. ນໍ້າຕົກຕາດສົມພະມິດ (ຫຼີຜີ).......... 375
4. ນໍ້າຕົກຕາດຜາສ້ວມ ເມືອງບາຈຽງ.......... 377
5. ນໍ້າຕົກຕາດຟານ.......... 380
6. ນໍ້າຕົກຕາດເຢືອງ.......... 381
7. ນໍ້າຕົກຕາດອີ່ຕູ້ ບ້ານຫຼັກ 35.......... 382
8. ນໍ້າຕົກຕາດຕາເກັດ (ຕາດ7ຊັ້ນ).......... 383
9. ພູອາສາ.......... 385
10. ບຶງໃຫຍ່ກຽດໂງ້ງ.......... 387
11. ຜາສາດຫີນອຸງມຸງໂຕະໂໝະ.......... 389
12. ເຂດປ່າສະຫງວນພູຊຽງທອງ.......... 391
13. ວັງປາຂ່າ.......... 394
14. ອຸທິຍານພູສະເຫຼົ່າ.......... 397
15. ຕາດກອຍ.......... 399
16. ບ້ານດອນແດງ.......... 400

17. ກຸ່ມຕາດຕາຍິກເສືອ....402
18. ນ້ຳຕົກຕາດຈຳປີ. ....403
19. ສະຖານທີ່ບູຮານທາດສາມປາງ. ....404
20. ສະຖານບູຮານທາດນາງອີງ. ....407
ຕາຕະລາງບັນຊີແຫຼ່ງທ່ອງທ່ຽວທົ່ວປະເທດ 408
ຕາຕະລາງແຂວງຜົ້ງສາລີ....409
ຕາຕະລາງແຂວງຫຼວງນ້ຳທາ....412
ຕາຕະລາງແຂວງບໍ່ແກ້ວ....414
ຕາຕະລາງແຂວງອຸດົມໄຊ ....416
ຕາຕະລາງແຂວງຫຼວງພະບາງ ....419
ຕາຕະລາງແຂວງຫົວພັນ ....425
ຕາຕະລາງແຂວງໄຊຍະບູລີ....428
ຕາຕະລາງແຂວງຊຽງຂວາງ....431
ຕາຕະລາງແຂວງວຽງຈັນ ....435
ຕາຕະລາງແຂວງໄຊສົມບູນ ....440
ຕາຕະລາງນະຄອນຫຼວງວຽງຈັນ....442
ຕາຕະລາງແຂວງບໍລິຄຳໄຊ....444
ຕາຕະລາງແຂວງຄຳມ່ວນ....447
ຕາຕະລາງແຂວງສະຫວັນນະເຂດ ....453
ຕາຕະລາງແຂວງສາລະວັນ ....456
ຕາຕະລາງແຂວງເຊກອງ ....458

ຕາຕະລາງແຂວງອັດຕະປື ........................................................................................................................ 459
ຕາຕະລາງແຂວງຈຳປາສັກ ........................................................................................................................ 461

# ສັງລວມສະຖິຕິແຫຼ່ງທ່ອງທ່ຽວປີ 2019

| ແຂວງ | ຈຳນວນແຫຼ່ງທ່ອງທ່ຽວ | ທຳມະຊາດ | ວັດທະນະທຳ | ປະຫວັດສາດ | ເປີດບໍລິການແລ້ວ | ສຳຫຼວດແລ້ວ | ໄດ້ຮັບການພັດທະນາ |
|---|---|---|---|---|---|---|---|
| ຜົ້ງສາລີ | 105 | 27 | 74 | 4 | 80 | 69 | 7 |
| ຫຼວງນ້ຳທາ | 109 | 55 | 47 | 7 | 62 | 68 | 15 |
| ບໍ່ແກ້ວ | 77 | 53 | 14 | 10 | 18 | 40 | 41 |
| ອຸດົມໄຊ | 106 | 54 | 40 | 12 | 30 | 58 | 46 |
| ຫຼວງພະບາງ | 224 | 114 | 77 | 33 | 24 | 90 | 25 |
| ຫົວພັນ | 133 | 43 | 28 | 62 | 15 | 83 | 4 |
| ໄຊຍະບູລີ | 96 | 70 | 19 | 7 | 49 | 5 | 13 |
| ຊຽງຂວາງ | 146 | 79 | 44 | 23 | 20 | 54 | 2 |
| ວຽງຈັນ | 200 | 171 | 25 | 4 | 44 | 168 | 165 |
| ໄຊສົມບູນ | 72 | 57 | 5 | 10 | 4 | 35 | 8 |
| ນະຄອນຫຼວງວຽງຈັນ | 84 | 45 | 24 | 15 | 19 | 11 | 21 |
| ບໍລິຄຳໄຊ | 115 | 100 | 12 | 3 | 30 | 47 | 7 |
| ຄຳມ່ວນ | 207 | 143 | 33 | 31 | 28 | 157 | 120 |
| ສະຫວັນນະເຂດ | 117 | 74 | 32 | 11 | 112 | 24 | 60 |
| ສາລະວັນ | 94 | 50 | 38 | 6 | 33 | 90 | 16 |
| ເຊກອງ | 34 | 19 | 6 | 9 | 5 | 17 | 14 |
| ອັດຕະປື | 63 | 33 | 18 | 12 | 19 | 11 | 7 |
| ຈຳປາສັກ | 217 | 127 | 55 | 35 | 217 | 13 | 16 |
| ລວມ | 2199 | 1314 | 591 | 294 | 809 | 1040 | 587 |

# ຕາຕະລາງສະຫຼຸບບັນຊີແຫຼ່ງທ່ອງທ່ຽວ

| | | ຈຳນວນແຫຼ່ງທ່ອງທ່ຽວ | ທຳມະຊາດ | ວັດທະນະທຳ | ປະວັດສາດ | ເປີດໃຫ້ບໍລິການແລ້ວ | ສຳຫຼວດແລ້ວ | ດຳເນີນການພັດທະນາ | ຮ້ານອາຫານ | ຫ້ອງນ້ຳ | ຮ້ານຂາຍເຄື່ອງ | ລະດັບເມືອງ | ລະດັບແຂວງ | ລະດັບຊາດ |
|---|---|---|---|---|---|---|---|---|---|---|---|---|---|---|
| | ທົ່ວປະເທດ | 2199 | 1314 | 591 | 294 | 809 | 1040 | 587 | 193 | 469 | 120 | 1358 | 297 | 50 |
| ຜົ້ງສາລີ | | 105 | 27 | 74 | 4 | 80 | 69 | 7 | 7 | 38 | 0 | 101 | 4 | 0 |
| | ເມືອງຜົ້ງສາລີ | 19 | 6 | 13 | 0 | 16 | 15 | 4 | 5 | 16 | 0 | 17 | 2 | 0 |
| | ເມືອງບູນເໜືອ | 16 | 3 | 13 | 0 | 13 | 4 | 0 | 0 | 3 | 0 | 15 | 1 | 0 |
| | ເມືອງຍອດອູ | 17 | 5 | 10 | 2 | 9 | 8 | 0 | 0 | 3 | 0 | 17 | 0 | 0 |
| | ເມືອງບູນໃຕ້ | 10 | 3 | 7 | 0 | 10 | 10 | 0 | 0 | 7 | 0 | 9 | 1 | 0 |
| | ເມືອງສຳພັນ | 15 | 6 | 8 | 1 | 10 | 10 | 1 | 0 | 0 | 0 | 15 | 0 | 0 |
| | ເມືອງຂວາ | 23 | 1 | 22 | 0 | 18 | 22 | 2 | 0 | 6 | 0 | 23 | 0 | 0 |
| | ເມືອງໃໝ່ | 5 | 3 | 1 | 1 | 4 | 0 | 0 | 2 | 3 | 0 | 5 | 0 | 0 |
| ຫຼວງນ້ຳທາ | | 109 | 55 | 47 | 7 | 62 | 68 | 15 | 5 | 14 | 5 | 70 | 29 | 2 |
| | ເມືອງຫຼວງນ້ຳທາ | 31 | 15 | 13 | 3 | 19 | 22 | 7 | 4 | 12 | 5 | 8 | 21 | 2 |
| | ເມືອງສິງ | 23 | 8 | 12 | 3 | 10 | 14 | 1 | 0 | 0 | 0 | 20 | 3 | 0 |
| | ເມືອງລອງ | 25 | 11 | 14 | 0 | 16 | 18 | 2 | 0 | 0 | 0 | 24 | 1 | 0 |
| | ເມືອງວຽງພູຄາ | 21 | 14 | 7 | 0 | 12 | 12 | 4 | 1 | 2 | 0 | 17 | 4 | 0 |
| | ເມືອງນາແລ | 9 | 7 | 1 | 1 | 5 | 2 | 1 | 0 | 0 | 0 | 1 | 0 | 0 |
| ບໍ່ແກ້ວ | | 77 | 53 | 14 | 10 | 18 | 40 | 41 | 8 | 21 | 7 | 56 | 20 | 1 |
| | ເມືອງຫ້ວຍຊາຍ | 15 | 8 | 5 | 2 | 8 | 15 | 15 | 4 | 11 | 4 | 0 | 14 | 1 |
| | ເມືອງຕົ້ນເຜິ້ງ | 19 | 11 | 2 | 6 | 8 | 14 | 12 | 1 | 5 | 1 | 13 | 6 | 0 |
| | ເມືອງປາກທາ | 25 | 19 | 5 | 1 | 0 | 4 | 8 | 2 | 2 | 2 | 25 | 0 | 0 |
| | ເມືອງເມິງ | 7 | 5 | 1 | 1 | 0 | 2 | 1 | 0 | 2 | 0 | 7 | 0 | 0 |
| | ເມືອງຜາອຸດົມ | 11 | 10 | 1 | 0 | 2 | 5 | 5 | 1 | 1 | 0 | 11 | 0 | 0 |
| ອຸດົມໄຊ | | 106 | 54 | 40 | 12 | 30 | 58 | 46 | 4 | 18 | 5 | 97 | 8 | 0 |
| | ເມືອງໄຊ | 19 | 8 | 8 | 3 | 6 | 4 | 5 | 3 | 7 | 2 | 13 | 6 | 0 |
| | ເມືອງງາ | 9 | 6 | 3 | 0 | 1 | 9 | 9 | 0 | 0 | 0 | 9 | 0 | 0 |
| | ເມືອງຮຸນ | 27 | 17 | 3 | 7 | 1 | 20 | 11 | 1 | 0 | 2 | 26 | 1 | 0 |
| | ເມືອງນາໝໍ້ | 15 | 7 | 8 | 0 | 2 | 2 | 3 | 0 | 0 | 0 | 15 | 0 | 0 |
| | ເມືອງປາກແບງ | 13 | 7 | 6 | 0 | 10 | 12 | 8 | 0 | 8 | 0 | 12 | 0 | 0 |
| | ເມືອງຫລາ | 13 | 5 | 7 | 1 | 9 | 1 | 1 | 0 | 1 | 0 | 12 | 1 | 0 |
| | ເມືອງແບງ | 10 | 4 | 5 | 1 | 1 | 10 | 9 | 0 | 2 | 1 | 10 | 0 | 0 |
| ຫຼວງພະບາງ | | 224 | 114 | 77 | 33 | 24 | 90 | 25 | 29 | 86 | 40 | 182 | 34 | 8 |
| | ນະຄອນຫຼວງພະບາງ | 47 | 13 | 28 | 6 | 11 | 37 | 14 | 19 | 44 | 26 | 6 | 33 | 8 |

| | ຈຳນວນແຫຼ່ງທ່ອງທ່ຽວ | ທຳມະຊາດ | ວັດທະນະທຳ | ປະວັດສາດ | ເປີດໃຫ້ບໍລິການແລ້ວ | ສຳຫຼວດແລ້ວ | ດຳເນີນການພັດທະນາ | ຮ້ານອາຫານ | ຫ້ອງນ້ຳ | ຮ້ານຂາຍເຄື່ອງ | ລະດັບເມືອງ | ລະດັບແຂວງ | ລະດັບຊາດ |
|---|---|---|---|---|---|---|---|---|---|---|---|---|---|
| ທົ່ວປະເທດ | 2199 | 1314 | 591 | 294 | 809 | 1040 | 587 | 193 | 469 | 120 | 1358 | 297 | 50 |
| ຈອມເພັດ | 20 | 11 | 9 | 0 | 1 | 11 | 2 | 2 | 11 | 4 | 19 | 1 | 0 |
| ປາກອູ | 14 | 10 | 3 | 1 | 1 | 5 | 3 | 3 | 4 | 3 | 14 | 0 | 0 |
| ເມືອງຊຽງເງິນ | 19 | 10 | 8 | 1 | 2 | 6 | 2 | 2 | 10 | 2 | 19 | 0 | 0 |
| ເມືອງນານ | 23 | 10 | 11 | 2 | 0 | 6 | 0 | 0 | 4 | 0 | 23 | 0 | 0 |
| ເມືອງພູຄູນ | 16 | 12 | 1 | 3 | 0 | 8 | 0 | 0 | 2 | 1 | 16 | 0 | 0 |
| ເມືອງປາກແຊງ | 8 | 5 | 1 | 2 | 2 | 0 | 0 | 0 | 0 | 0 | 8 | 0 | 0 |
| ເມືອງໂພນໄຊ | 23 | 15 | 7 | 1 | 0 | 4 | 0 | 0 | 6 | 0 | 23 | 0 | 0 |
| ເມືອງວຽງຄຳ | 5 | 4 | 0 | 1 | 0 | 0 | 0 | 0 | 0 | 0 | 5 | 0 | 0 |
| ເມືອງງອຍ | 22 | 6 | 5 | 11 | 0 | 7 | 2 | 1 | 2 | 1 | 22 | 0 | 0 |
| ເມືອງນ້ຳບາກ | 13 | 4 | 4 | 5 | 7 | 5 | 2 | 2 | 3 | 3 | 13 | 0 | 0 |
| ເມືອງໂພນທອງ | 14 | 14 | 0 | 0 | 0 | 1 | 0 | 0 | 0 | 0 | 14 | 0 | 0 |
| ຫົວພັນ | 133 | 43 | 28 | 62 | 15 | 83 | 4 | 12 | 21 | 13 | 70 | 43 | 13 |
| ເມືອງຊຳເໜືອ | 18 | 4 | 12 | 2 | 3 | 16 | 2 | 1 | 4 | 1 | 12 | 5 | 1 |
| ເມືອງວຽງໄຊ | 58 | 7 | 1 | 50 | 10 | 44 | 1 | 8 | 10 | 8 | 6 | 37 | 8 |
| ເມືອງຊຳໃຕ້ | 10 | 5 | 4 | 1 | 1 | 5 | 1 | 0 | 2 | 2 | 10 | 0 | 0 |
| ເມືອງກ້ອນ | 2 | 2 | 0 | 0 | 0 | 0 | 0 | 0 | 0 | 0 | 2 | 0 | 0 |
| ເມືອງສົບເບົາ | 8 | 3 | 5 | 0 | 0 | 5 | 0 | 0 | 0 | 0 | 8 | 0 | 0 |
| ເມືອງຊຽງຄໍ້ | 5 | 2 | 0 | 3 | 0 | 3 | 0 | 0 | 0 | 0 | 4 | 0 | 1 |
| ເມືອງແອດ | 4 | 3 | 0 | 1 | 0 | 2 | 0 | 0 | 1 | 0 | 4 | 0 | 0 |
| ເມືອງຫົວເມືອງ | 5 | 2 | 1 | 2 | 0 | 4 | 0 | 1 | 1 | 0 | 3 | 0 | 2 |
| ເມືອງຮ້ຽມ | 11 | 8 | 1 | 2 | 0 | 2 | 0 | 1 | 2 | 1 | 9 | 1 | 1 |
| ເມືອງຊອນ | 12 | 7 | 4 | 1 | 1 | 2 | 0 | 1 | 1 | 1 | 12 | 0 | 0 |
| ໄຊຍະບູລີ | 96 | 70 | 19 | 7 | 49 | 5 | 13 | 5 | 19 | 3 | 43 | 5 | 0 |
| ເມືອງໄຊຍະບູລີ | 19 | 17 | 2 | 0 | 11 | 4 | 9 | 2 | 7 | 2 | 4 | 4 | 0 |
| ເມືອງພຽງ | 12 | 10 | 2 | 0 | 8 | 0 | 2 | 1 | 1 | 0 | 4 | 0 | 0 |
| ເມືອງປາກລາຍ | 9 | 6 | 1 | 2 | 4 | 0 | 0 | 0 | 0 | 0 | 6 | 1 | 0 |
| ເມືອງແກ່ນທ້າວ | 6 | 3 | 2 | 1 | 5 | 0 | 1 | 1 | 3 | 0 | 6 | 0 | 0 |
| ເມືອງບໍ່ແຕນ | 13 | 11 | 1 | 1 | 5 | 1 | 0 | 0 | 2 | 0 | 5 | 0 | 0 |
| ເມືອງທົ່ງມີໄຊ | 3 | 2 | 1 | 0 | 1 | 0 | 1 | 0 | 1 | 0 | 3 | 0 | 0 |
| ເມືອງເງິນ | 6 | 2 | 3 | 1 | 4 | 0 | 0 | 0 | 0 | 0 | 4 | 0 | 0 |
| ເມືອງຄອບ | 11 | 6 | 4 | 1 | 4 | 0 | 0 | 0 | 1 | 0 | 4 | 0 | 0 |
| ເມືອງຊຽງຮ່ອນ | 10 | 9 | 1 | 0 | 4 | 0 | 0 | 0 | 1 | 0 | 4 | 0 | 0 |
| ເມືອງທົ່ງສາ | 6 | 3 | 2 | 1 | 2 | 0 | 0 | 1 | 3 | 1 | 3 | 0 | 0 |
| ເມືອງໄຊສະຖານ | 1 | 1 | 0 | 0 | 1 | 0 | 0 | 0 | 0 | 0 | 0 | 0 | 0 |

| | | ຈຳນວນແຫຼ່ງທ່ອງທ່ຽວ | ທຳມະຊາດ | ວັດທະນະທຳ | ປະວັດສາດ | ເປີດໃຫ້ບໍລິການແລ້ວ | ສຳຫຼວດແລ້ວ | ດຳເນີນການພັດທະນາ | ຮ້ານອາຫານ | ຫ້ອງນ້ຳ | ຮ້ານຂາຍເຄື່ອງ | ລະດັບເມືອງ | ລະດັບແຂວງ | ລະດັບຊາດ |
|---|---|---|---|---|---|---|---|---|---|---|---|---|---|---|
| | ທົ່ວປະເທດ | 2199 | 1314 | 591 | 294 | 809 | 1040 | 587 | 193 | 469 | 120 | 1358 | 297 | 50 |
| ຊຽງຂວາງ | | 146 | 79 | 44 | 23 | 20 | 54 | 2 | 5 | 22 | 5 | 123 | 10 | 12 |
| | ເມືອງແປກ | 22 | 10 | 4 | 8 | 5 | 12 | 0 | 0 | 5 | 1 | 14 | 5 | 3 |
| | ເມືອງໜອງແຮດ | 11 | 9 | 1 | 1 | 1 | 3 | 1 | 0 | 1 | 0 | 11 | 0 | 0 |
| | ເມືອງຄຳ | 22 | 17 | 4 | 1 | 4 | 10 | 0 | 3 | 6 | 3 | 16 | 3 | 3 |
| | ເມືອງຄູນ | 58 | 25 | 23 | 10 | 4 | 11 | 0 | 0 | 4 | 1 | 56 | 2 | 0 |
| | ເມືອງຜາໄຊ | 10 | 4 | 6 | 0 | 2 | 7 | 0 | 1 | 3 | 0 | 6 | 0 | 3 |
| | ເມືອງພູກູດ | 14 | 7 | 5 | 2 | 4 | 7 | 1 | 1 | 3 | 0 | 11 | 0 | 3 |
| | ເມືອງໝອກ | 9 | 7 | 1 | 1 | 0 | 4 | 0 | 0 | 0 | 0 | 9 | 0 | 0 |
| ວຽງຈັນ | | 200 | 171 | 25 | 4 | 44 | 168 | 165 | 13 | 26 | 5 | 55 | 2 | 0 |
| | ເມືອງວັງວຽງ | 42 | 42 | 0 | 0 | 42 | 42 | 42 | 11 | 14 | 5 | 42 | 0 | 0 |
| | ເມືອງໂພນໂຮງ | 8 | 4 | 4 | 0 | 1 | 8 | 8 | 1 | 1 | 0 | 3 | 0 | 0 |
| | ເມືອງທຸລະຄົມ | 20 | 12 | 6 | 2 | 0 | 0 | 14 | 0 | 0 | 0 | 0 | 0 | 0 |
| | ເມືອງແກ້ວອຸດົມ | 10 | 5 | 5 | 0 | 1 | 4 | 10 | 1 | 4 | 0 | 0 | 0 | 0 |
| | ເມືອງວຽງຄຳ | 12 | 7 | 4 | 1 | 0 | 12 | 12 | 0 | 3 | 0 | 0 | 0 | 0 |
| | ເມືອງເຟືອງ | 10 | 10 | 0 | 0 | 0 | 9 | 9 | 0 | 1 | 0 | 0 | 0 | 0 |
| | ເມືອງຊະນະຄາມ | 6 | 4 | 1 | 1 | 0 | 6 | 6 | 0 | 2 | 0 | 0 | 0 | 0 |
| | ເມືອງກາສີ | 15 | 15 | 0 | 0 | 0 | 15 | 15 | 0 | 1 | 0 | 10 | 2 | 0 |
| | ເມືອງຫີນເຫີບ | 32 | 28 | 4 | 0 | 0 | 32 | 32 | 0 | 0 | 0 | 0 | 0 | 0 |
| | ເມືອງໝື່ນ | 28 | 27 | 1 | | 0 | 25 | 12 | 0 | 0 | 0 | 0 | 0 | 0 |
| | ເມືອງແມດ | 17 | 17 | 0 | 0 | 0 | 15 | 5 | 0 | 0 | 0 | 0 | 0 | 0 |
| ໄຊສົມບູນ | | 72 | 57 | 5 | 10 | 4 | 35 | 8 | 1 | 5 | 0 | 53 | 1 | 0 |
| | ເມືອງອະນຸວົງ | 15 | 12 | 1 | 2 | 2 | 5 | 3 | 1 | 0 | 0 | 14 | 1 | 0 |
| | ເມືອງລ່ອງແຈ້ງ | 32 | 25 | 2 | 5 | 0 | 11 | 2 | 0 | 3 | 0 | 32 | 0 | 0 |
| | ເມືອງຮົ່ມ | 6 | 5 | 0 | 1 | 1 | 6 | 1 | 0 | 1 | 0 | 6 | 0 | 0 |
| | ເມືອງລ້ອງຊານ | 10 | 8 | 1 | 1 | 1 | 8 | 1 | 0 | 1 | 0 | 1 | 0 | 0 |
| | ເມືອງທ່າໂທມ | 9 | 7 | 1 | 1 | 0 | 5 | 1 | 0 | 0 | 0 | 0 | 0 | 0 |
| ນະຄອນຫຼວງວຽງຈັນ | | 84 | 45 | 24 | 15 | 19 | 11 | 21 | 27 | 43 | 4 | 50 | 14 | 11 |
| | ເມືອງຈັນທະບູລີ | 12 | 1 | 8 | 3 | 1 | 1 | 1 | 0 | 0 | 0 | 1 | 1 | 4 |
| | ສີສັດຕະນາກ | 4 | 0 | 2 | 2 | 0 | 0 | 0 | 0 | 3 | 0 | 0 | 1 | 1 |
| | ເມືອງໄຊເສດຖາ | 5 | 0 | 2 | 3 | 0 | 1 | 1 | 0 | 5 | 0 | 1 | 0 | 4 |
| | ເມືອງນາຊາຍທອງ | 12 | 11 | 1 | 0 | 8 | 2 | 2 | 9 | 7 | 0 | 9 | 3 | 0 |
| | ເມືອງສັງທອງ | 11 | 8 | 1 | 2 | 0 | 0 | 10 | 0 | 0 | 0 | 8 | 2 | 1 |
| | ເມືອງສີໂຄດຕະບອງ | 17 | 10 | 6 | 1 | 10 | 0 | 1 | 10 | 16 | 0 | 12 | 4 | 0 |
| | ເມືອງໄຊທານີ | 13 | 10 | 0 | 3 | 0 | 3 | 2 | 4 | 6 | 2 | 11 | 1 | 1 |

| | | ຈຳນວນແຫຼ່ງທ່ອງທ່ຽວ | ທຳມະຊາດ | ວັດທະນະທຳ | ປະວັດສາດ | ເປີດໃຫ້ບໍລິການແລ້ວ | ສຳຫຼວດແລ້ວ | ດຳເນີນການພັດທະນາ | ຮ້ານອາຫານ | ຫ້ອງນ້ຳ | ຮ້ານຂາຍເຄື່ອງ | ລະດັບເມືອງ | ລະດັບແຂວງ | ລະດັບຊາດ |
|---|---|---|---|---|---|---|---|---|---|---|---|---|---|---|
| | ທົ່ວປະເທດ | 2199 | 1314 | 591 | 294 | 809 | 1040 | 587 | 193 | 469 | 120 | 1358 | 297 | 50 |
| | ເມືອງຫາດຊາຍຟອງ | 7 | 3 | 3 | 1 | 0 | 4 | 4 | 3 | 3 | 2 | 7 | 0 | 0 |
| | ເມືອງປາກງື່ມ | 3 | 2 | 1 | 0 | 0 | 0 | 0 | 1 | 3 | 0 | 1 | 2 | 0 |
| ບໍລິຄຳໄຊ | | 115 | 100 | 12 | 3 | 30 | 47 | 7 | 6 | 17 | 1 | 95 | 15 | 0 |
| | ເມືອງທ່າພະບາດ | 25 | 18 | 7 | 0 | 19 | 12 | 1 | 2 | 12 | 1 | 12 | 13 | 0 |
| | ເມືອງບໍລິຄັນ | 14 | 12 | 2 | 0 | 2 | 8 | 1 | 0 | 0 | 0 | 14 | 0 | 0 |
| | ເມືອງປາກຊັນ | 11 | 8 | 1 | 2 | 3 | 5 | 2 | 0 | 1 | 0 | 11 | 0 | 0 |
| | ເມືອງປາກກະດິງ | 10 | 10 | 0 | 0 | 0 | 7 | 0 | 0 | 0 | 0 | 9 | 1 | 0 |
| | ເມືອງຄຳເກີດ | 39 | 37 | 1 | 1 | 6 | 14 | 3 | 4 | 4 | 0 | 33 | 1 | 0 |
| | ເມືອງວຽງທອງ | 10 | 9 | 1 | 0 | 0 | 1 | 0 | 0 | 0 | 0 | 10 | 0 | 0 |
| | ເມືອງໄຊຈຳພອນ | 6 | 6 | 0 | 0 | 0 | 0 | 0 | 0 | 0 | 0 | 6 | 0 | 0 |
| ຄຳມ່ວນ | | 207 | 143 | 33 | 31 | 28 | 157 | 120 | 6 | 17 | 2 | 198 | 7 | 2 |
| | ເມືອງທ່າແຂກ | 40 | 33 | 6 | 1 | 7 | 37 | 32 | 3 | 6 | 2 | 35 | 4 | 1 |
| | ເມືອງໜອງບົກ | 10 | 4 | 5 | 1 | 0 | 6 | 7 | 0 | 2 | 0 | 10 | 0 | 0 |
| | ເມືອງເຊບັ້ງໄຟ | 16 | 14 | 2 | 0 | 0 | 4 | 5 | 0 | 1 | 0 | 16 | 0 | 0 |
| | ເມືອງໄຊບົວທອງ | 7 | 6 | 1 | 0 | 2 | 5 | 2 | 1 | 2 | 0 | 7 | 0 | 0 |
| | ເມືອງມະຫາໄຊ | 43 | 17 | 6 | 20 | 0 | 32 | 25 | 0 | 4 | 0 | 43 | 0 | 0 |
| | ເມືອງຍົມມະລາດ | 17 | 11 | 3 | 3 | 0 | 14 | 14 | 0 | 0 | 0 | 17 | 0 | 0 |
| | ເມືອງນາກາຍ | 17 | 13 | 3 | 1 | 4 | 16 | 16 | 0 | 0 | 0 | 17 | 0 | 0 |
| | ເມືອງບົວລະພາ | 21 | 17 | 1 | 3 | 1 | 10 | 2 | 0 | 0 | 0 | 18 | 2 | 1 |
| | ເມືອງຫີນບູນ | 13 | 9 | 3 | 1 | 6 | 11 | 5 | 0 | 0 | 0 | 12 | 1 | 0 |
| | ເມືອງຄູນຄຳ | 23 | 19 | 3 | 1 | 8 | 22 | 12 | 2 | 2 | 0 | 23 | 0 | 0 |
| ສະຫວັນນະເຂດ | | 117 | 74 | 32 | 11 | 112 | 24 | 60 | 12 | 42 | 5 | 90 | 26 | 1 |
| | ນະຄອນໄກສອນພົມວິຫານ | 15 | 6 | 5 | 4 | 15 | 4 | 13 | 5 | 9 | 3 | 8 | 6 | 1 |
| | ເມືອງອຸທຸມພອນ | 1 | 0 | 1 | 0 | 1 | 0 | 1 | 0 | 0 | 0 | 1 | 0 | 0 |
| | ເມືອງອາດສະພັງທອງ | 3 | 1 | 2 | 0 | 3 | 0 | 3 | 0 | 2 | 0 | 3 | 0 | 0 |
| | ເມືອງໄຊບູລີ | 13 | 11 | 1 | 1 | 13 | 0 | 13 | 1 | 1 | 0 | 13 | 0 | 0 |
| | ເມືອງໄຊພູທອງ | 6 | 2 | 4 | 0 | 6 | 3 | 3 | 2 | 5 | 2 | 4 | 2 | 0 |
| | ເມືອງສອງຄອນ | 14 | 7 | 6 | 1 | 14 | 0 | 2 | 0 | 3 | 0 | 14 | 0 | 0 |
| | ເມືອງຈຳພອນ | 8 | 6 | 2 | 0 | 8 | 7 | 5 | 3 | 7 | 0 | 3 | 5 | 0 |
| | ເມືອງອາດສະພອນ | 19 | 13 | 6 | 0 | 19 | 2 | 6 | 0 | 9 | 0 | 17 | 2 | 0 |
| | ເມືອງພະລານໄຊ | 5 | 4 | 1 | 0 | 4 | 1 | 3 | 0 | 2 | 0 | 5 | 0 | 0 |
| | ເມືອງຊົນບູລີ | 5 | 4 | 1 | 0 | 2 | 2 | 2 | 1 | 1 | 0 | 4 | 1 | 0 |
| | ເມືອງພີນ | 4 | 3 | 0 | 1 | 4 | 1 | 1 | 0 | 1 | 0 | 1 | 3 | 0 |
| | ເມືອງເຊໂປນ | 9 | 5 | 1 | 3 | 9 | 1 | 5 | 0 | 1 | 0 | 6 | 3 | 0 |

LAOS
Simply Beautiful

| | ຈຳນວນແຫຼ່ງທ່ອງທ່ຽວ | ທຳມະຊາດ | ວັດທະນະທຳ | ປະວັດສາດ | ເປີດໃຫ້ບໍລິການແລ້ວ | ສຳຫຼວດແລ້ວ | ດຳເນີນການພັດທະນາ | ຮ້ານອາຫານ | ຫ້ອງນ້ຳ | ຮ້ານຂາຍເຄື່ອງ | ລະດັບເມືອງ | ລະດັບແຂວງ | ລະດັບຊາດ |
|---|---|---|---|---|---|---|---|---|---|---|---|---|---|
| ທົ່ວປະເທດ | 2199 | 1314 | 591 | 294 | 809 | 1040 | 587 | 193 | 469 | 120 | 1358 | 297 | 50 |
| ເມືອງທ່າປາງທອງ | 5 | 5 | 0 | 0 | 5 | 1 | 1 | 0 | 0 | 0 | 5 | 0 | 0 |
| ເມືອງວິລະບຸລີ | 6 | 4 | 2 | 0 | 6 | 2 | 2 | 0 | 1 | 0 | 4 | 2 | 0 |
| ເມືອງນອງ | 4 | 3 | 0 | 1 | 3 | 0 | 0 | 0 | 0 | 0 | 2 | 2 | 0 |
| ສາລະວັນ | 94 | 50 | 38 | 6 | 33 | 90 | 16 | 10 | 34 | 4 | 66 | 8 | 0 |
| ເມືອງສາລະວັນ | 23 | 13 | 7 | 3 | 12 | 23 | 9 | 7 | 9 | 3 | 13 | 5 | 0 |
| ເມືອງເລົ່າງາມ | 19 | 15 | 4 | 0 | 4 | 19 | 3 | 0 | 5 | 0 | 14 | 0 | 0 |
| ເມືອງອາຫຼີ | 11 | 7 | 4 | 0 | 4 | 11 | 2 | 2 | 6 | 0 | 7 | 0 | 0 |
| ເມືອງຄົງເຊໂດນ | 13 | 3 | 9 | 1 | 10 | 12 | 1 | 0 | 8 | 0 | 10 | 2 | 0 |
| ເມືອງຕະໂອ້ຍ | 13 | 7 | 5 | 1 | 1 | 12 | 0 | 0 | 0 | 0 | 12 | 0 | 0 |
| ເມືອງລະຄອນເພັງ | 7 | 2 | 5 | 0 | 1 | 6 | 0 | 0 | 5 | 0 | 3 | 1 | 0 |
| ເມືອງຕຸ້ມລານ | 5 | 1 | 3 | 1 | 1 | 6 | 1 | 1 | 1 | 1 | 5 | 0 | 0 |
| ເມືອງສະໝ້ວຍ | 3 | 2 | 1 | 0 | 0 | 1 | 0 | 0 | 0 | 0 | 2 | 0 | 0 |
| ເຊກອງ | 34 | 19 | 6 | 9 | 5 | 17 | 14 | 3 | 4 | 0 | 9 | 8 | 0 |
| ເມືອງລະມາມ | 10 | 6 | 2 | 2 | 3 | 5 | 4 | 3 | 3 | 0 | 4 | 6 | 0 |
| ເມືອງທ່າແຕງ | 8 | 6 | 2 | 0 | 2 | 4 | 2 | 0 | 1 | 0 | 5 | 2 | 0 |
| ເມືອງດາກຈຶງ | 9 | 2 | 2 | 5 | 0 | 4 | 4 | 0 | 0 | 0 | 0 | 0 | 0 |
| ເມືອມກະລຶມ | 7 | 5 | 0 | 2 | 0 | 4 | 4 | 0 | 0 | 0 | 0 | 0 | 0 |
| ອັດຕະປື | 63 | 33 | 18 | 12 | 19 | 11 | 7 | 12 | 11 | 8 | 0 | 63 | 0 |
| ເມືອງສາມັກຄີໄຊ | 14 | 6 | 5 | 3 | 7 | 3 | 1 | 4 | 4 | 2 | 0 | 14 | 0 |
| ເມືອງໄຊເສດຖາ | 10 | 3 | 4 | 3 | 5 | 2 | 2 | 5 | 4 | 4 | 0 | 10 | 0 |
| ເມືອງສະໜາມໄຊ | 16 | 9 | 4 | 3 | 0 | 2 | 4 | 0 | 0 | 0 | 0 | 16 | 0 |
| ເມືອງຊານໄຊ | 16 | 9 | 5 | 2 | 5 | 4 | 0 | 3 | 3 | 1 | 0 | 16 | 0 |
| ເມືອງພູວົງ | 7 | 6 | 0 | 1 | 2 | 0 | 0 | 0 | 0 | 1 | 0 | 7 | 0 |
| ຈຳປາສັກ | 217 | 127 | 55 | 35 | 217 | 13 | 16 | 28 | 31 | 13 | 0 | 0 | 0 |
| ນະຄອນປາກເຊ | 16 | 4 | 8 | 4 | 16 | 4 | 0 | 3 | 6 | 3 | | | |
| ເມືອງຊະນະສົມບູນ | 19 | 8 | 9 | 2 | 19 | 0 | 0 | 0 | 0 | 0 | | | |
| ເມືອງໂພນທອງ | 5 | 0 | 4 | 1 | 5 | 1 | 0 | 2 | 2 | 0 | | | |
| ເມືອງບາຈຽງຈະເລີນສຸກ | 23 | 20 | 3 | 0 | 23 | 0 | 0 | 2 | 1 | 0 | | | |
| ເມືອງຈຳປາສັກ | 13 | 5 | 4 | 4 | 13 | 1 | 2 | 1 | 1 | 1 | | | |
| ເມືອງປະທຸມພອນ | 16 | 13 | 2 | 1 | 16 | 0 | 0 | 0 | 1 | 1 | | | |
| ເມືອງສຸຂຸມາ | 18 | 10 | 1 | 7 | 18 | 0 | 0 | 0 | 0 | 0 | | | |
| ເມືອງມູນລະປະໂມກ | 15 | 9 | 3 | 3 | 15 | 0 | 0 | 0 | 0 | 0 | | | |
| ເມືອງໂຂງ | 39 | 18 | 14 | 7 | 39 | 2 | 2 | 2 | 2 | 2 | | | |
| ເມືອງປາກຊ່ອງ | 53 | 40 | 7 | 6 | 53 | 5 | 12 | 18 | 18 | 6 | | | |

# ແຂວງຜົ້ງສາລີ

## 1. ແຫຼ່ງທ່ອງທ່ຽວທຳມະຊາດອ່າງເກັບນ້ຳເຂື່ອນໄຟຟ້ານ້ຳອູ 6.

ອ່າງເກັບນ້ຳ ໄຟຟ້ານ້ຳອູ 6 ຕັ້ງຢູ່ທິດຕາເວັນອອກສ່ຽງເໜືອຂອງ ແຂວງຜົ້ງສາລີ ຫ່າງຈາກເທດສະບານແຂວງປະມານ 35 ກິໂລແມັດ, ເປັນສະຖານທີ່ທ່ອງທ່ຽວທາງທຳມະຊາດແຫ່ງໜຶ່ງທີ່ມີຄວາມສວຍງາມທາງທິວທັດທຳມະຊາດ, ຄວາມອຸດົມສົມບູນຂອງສັດນາໆພັນໃນພື້ນນ້ຳ ແລະ ມີໝູ່ບ້ານປະຊາຊົນບັນດາເຜົ່າທີ່ອາໄສຕາມໜ້າອ່າງ; ດັ່ງນັ້ນທາງພະແນກ ຖວທ ແຂວງ ແລະ ຫ້ອງການ ຖວທ ເມືອງຜົ້ງສາລີ ໄດ້ວາງແຜນເພື່ອພັດທະນາ ການທ່ອງທ່ຽວໃນຂົງເຂດນີ້ໂດຍອີງໃສ່ 6 ທາງອອກຂອງແຂວງຜົ້ງສາລີ ແລະ ໃນນັ້ນກໍ່ປະຕິບັດຕາມທາງອອກທີ່ 5 ຫັນການທ່ອງທ່ຽວເປັນອຸດສາຫະກຳ ໃນນີ້ກໍ່ເພື່ອສ້າງກິດຈະກຳໃຫ້ພາກສ່ວນຜູ້ປະກອບການ ບໍລິການຮ້ານອາຫານ, ການປະມົງ, ການບໍລິການຂີ່ເຮືອຊົມພາບທິວທັດ ໜ້າເຂື່ອນ ແລະ ສ້າງບ້ານໃກ້ຄຽງໃຫ້ເປັນບ້ານໂຮມສະເຕ (Home stay) ເພື່ອຮອງຮັບນັກທ່ອງທ່ຽວທີ່ຈະໄປທ່ຽວຊົມ ແລະ ພັກແຮມ, ໃນນີ້ ກໍ່ເພື່ອສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້ເສີມໃຫ້ແກ່ຊຸມຊົນໂດຍກົງ. ຂະນະດຽວກັນນີ້, ກໍໄດ້ກໍ່ສ້າງພື້ນຖານໂຄງລ່າງ ເພື່ອສ້າງສິ່ງອຳນວຍຄວາມສະດວກດ້ານການບໍລິການຕິດພັນກັບຄວາມອຸດົມສົມບຸນທາງດ້ານຊັບພະຍາກອນທຳມະຊາດ ແລະ ວັດທະນະທຳ ອັນດີງາມຂອງປະຊາຊົນບັນດາເຜົ່າ ອັນໄດ້ເຮັດໃຫ້ວຽກງານການທ່ອງທ່ຽວ ນັບມື້ມີທ່າຂະຫຍາຍຕົວເພີ່ມຂຶ້ນເລື້ອຍໆ ເປັນທີ່ດຶງດູດໃຫ້ແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວອ່າງເກັບນ້ຳໄຟຟ້ານ້ຳອູ 6 ນັບມື້ນັບຫຼາຍຂຶ້ນ, ໃນນີ້ ໜ້າເຂື່ອນມີຮ້ານອາຫານ ແລະ ຮ້ານກິນດື່ມ 3 ແຫ່ງ ພ້ອມທັງມີເຮືອບໍລິການຂົນສົ່ງນຳພ້ອມ, ບັນດາທຸລະກິດເຫລົ່ານີ້ ແມ່ນທຸລະກິດແບບຄອບຄົວ ບໍລິການແບບປະຖົມປະຖານ ເຊິ່ງສາມາດຮັບຮອງນັກທ່ອງທ່ຽວໄດ້ໂດຍພື້ນຖານ.





## 2. ສວນຊາຫຼັກ 4 (ບ້ານ ສາຍລົມ).

ສວນຊາສາຍລົມ (ຫຼັກ 4) ມີທີ່ຕັ້ງຢູ່ທິດເໜືອຂອງເທດສະບານເມືອງຜົ້ງສາລີ ຕັ້ງຢູ່ບ້ານສາຍລົມ ຫ່າງຈາກເທດສະບານປະມານ 4 ກິໂລແມັດ ເປັນສວນຊາສະນິດນ້ອຍ, ເຊິ່ງເປັນສວນຊາທີ່ມີຄວາມສວຍງາມດ້ວຍການຕັດຕົກແຕ່ງເປັນຖັນແຖວສວຍງາມເປັນໜ້າທ່ຽວຊົມ, ສວນຊາມີເນື້ອທີ່ທັງໝົດ 22 ເຮັກຕາ, ມີຕົ້ນຊາປະມານ 8,800 ຕົ້ນ, ມີອາຍຸ 15-16 ປີ.



## 3. ຕົວເມືອງເກົ່າຜົ້ງສາລີ (ບ້ານຜົ້ງສາລີ ແລະ ບ້ານຕະຫຼາດວິໄລ).

ເມືອງຜົ້ງສາລີ ຕັ້ງຢູ່ໃຈກາງເທດສະບານຂອງແຂວງ ເຊິ່ງເປັນໜຶ່ງໃນ 7 ເມືອງ ຂອງແຂວງຜົ້ງສາລີ. ແຂວງຜົ້ງສາລີເວົ້າລວມເວົ້າສະເພາະ ເທດສະບານເມືອງຜົ້ງສາລີ ມີທ່າແຮງທາງດ້ານທີ່ຕັ້ງພູມສາດ ເປັນທາງຜ່ານ ເຂົ້າ-ອອກ ປະເທດ ສສ ຫວຽດນາມ,  ສປ ຈີນ ແລະ ອອກສູ່ແຂວງອຸດົມໄຊ ເຖິງນະຄອນຫຼວງວຽງຈັນ. ນອກນັ້ນ ຍັງມີວັດທະນະທຳ ຮີດຄອງປະເພນີອັນຫຼາກຫຼາຍຂອງບັນດາເຜົ່າ ເຊິ່ງເປັນເອກະລັກອັນສະເພາະຂອງຕົນ, ມີທັດສະນີຍະພາບທີ່ສວຍງາມ, ມີພູຜາປ່າດົງທີ່ຕຶບໜາ, ມີພູສູງທີ່ສາມາດແນມເຫັນທິວທັດທຳມະຊາດ, ຕົວເມືອງ ແລະ ໝູ່ບ້ານນ້ອຍໃຫຍ່ ທີ່ຢັ່ງຍາຍຢູ່ຕາມເປີ້ນພູ ແລະ ຮ່ອມພູ, ມີອາກາດທີ່ສົດຊື່ນ, ມີວັດຖຸບູຮານ, ປູສະນີຍະຖານທີ່ເກົ່າແກ່ເຊັ່ນ: ພູຟ້າ, ສວນຊາ 400 ປີ, ສວນຊາສາຍລົມ, ໝູ່ບ້ານຊິນເຜົ່າ ແລະ ອື່ນໆ... ສິ່ງເຫຼົ່ານັ້ນແມ່ນໄດ້ສ້າງແຮງດຶງດູດ ແລະ ຈູງໃຈ ເອົານັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຊົມ ເມືອງຜົ້ງສາລີ ນັບມື້ຫຼາຍຂຶ້ນ.





## 4. ແຫຼ່ງທ່ອງທ່ຽວພູຟ້າ.



ພູຟ້າ ແມ່ນມິ່ງຂວັນເມືອງ ຂອງຊາວເມືອງຜົ້ງສາລີ, ຕັ້ງຢູ່ທິດຕາເວັນອອກສ່ຽງເໜືອຂອງຕົວເມືອງຜົ້ງສາລີ, ມີຄວາມສູງຈາກລະດັບນ້ຳທະເລ 1,625 ແມັດ, ມີຂັ້ນໄດຍ່າງແຕ່ຕີນພູຫາຈອມພູ 863 ຂັ້ນ ເຊິ່ງຢູ່ເທິງຈອມພູ ເປັນຈຸດຊົມວິວຂອງເທດສະບານເມືອງຜົ້ງສາລີ, ຊົມຕາເວັນຕົກ ແລະ ທະເລໝອກໃນຍາມເຊົ້າ, ພູຟ້າມີເນື້ອທີ່ທັງໝົດ 200 ເຮັກຕາ, ເປັນພູທີ່ອຸດົມສົມບູນໄປດ້ວຍປ່າໄມ້ດົກໜາ ແລະ ພືດພັນຫຼາຍສິ່ງຫຼາຍຢ່າງ ທັງເປັນພື້ນທີ່ອາໄສຂອງສັດປ່ານາໆສະນິດ, ໃນຂົງເຂດພູຟ້າມີເສັ້ນທາງສັນຈອນສະດວກດ້ວຍທາງເປ່ຕົງ ແລະ ມີສະຖານທີ່ພັກຜ່ອນກວ້າງຂວາງ ເໝາະສົມແກ່ນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດທີ່ຈະມາສຳພັດ ແລະ ທ່ຽວຊົມ ເພື່ອພັກຜ່ອນຍ່ອນອາລົມ ແລະ ສູບເອົາອາກາດບໍລິສຸດ.





## 5. ສວນຊາ 400 ປີ.

ບ້ານກໍແມນ (ບ້ານລຸງຈິ້ງ) ເປັນບ້ານໜຶ່ງທີ່ຂຶ້ນກັບເມືອງຜົ້ງສາລີ, ມີໄລຍະທາງຈາກເທດສະບານເມືອງ 15 ກມ ເປັນບ້ານທີ່ມີປະຫວັດການປູກຊາລ້ຽງຊີບມາແຕ່ດຶກດຳບັນ, ຕາມການເລົ່າຂອງຄົນເຖົ້າແກ່ອາວຸໂສຂອງບ້ານໃຫ້ຮູ້ວ່າ: ບ້ານກໍແມນນັບແຕ່ສ້າງຕັ້ງບ້ານແມ່ນມີອາຍຸປະມານ 400 ກວ່າປີ ແລ້ວ ແລະ ຕົ້ນຊາ ຊາວບ້ານກໍ່ໄດ້ປູກຕັ້ງແຕ່ເລີ່ມຕັ້ງບ້ານ ສະນັ້ນຊາວບ້ານຈຶ່ງເອີ້ນຊານີ້ວ່າ ຊາ 400 ປີ, ປະຈຸບັນຊາວບ້ານໄດ້ຖືການປູກຊາ ແລະ ຂາຍຊາເປັນອາຊີບຫຼັກ, ພາຍໃນບ້ານມີເນື້ອທີ່ສວນຊາ 32.25 ເຮັກຕາ, ມີກົກຊາທັງໝົດ 48,373 ກົກ ແລະ ເປັນຊາປູກທີ່ມີອາຍຸແກ່ທີ່ສຸດໃນ ສປປ ລາວ.







## 6. ບ້ານບຸນພຽງ.



ບ້ານບູນພຽງເປັນຊົນເຜົ່າອາຄານຸກຸຍ ແລະ ເປັນເຜົ່າໜຶ່ງ ທີ່ຍັງອະນຸລັກຮັກສາຮີດຄອງປະເພນີດັ່ງເດີມ, ເຊິ່ງນັກທ່ອງທ່ຽວ ຢູຣົບໃຫ້ຄວາມສົນໃຈຫຼາຍ ແລະ ເປັນບ້ານ Homestay ຂອງສາຍ Trekking 2ມື້1 ຄືນ ທີ່ນັກທ່ອງທ່ຽວມັກໄປທ່ຽວຊົມຫຼາຍ, ຊາວບ້ານມີຄວາມຮັບຮູ້ເຂົ້າໃຈ ແລະ ເປັນບ້ານທີຕິດກັບປ່າສະຫງວນບໍລິເວນດັ່ງກ່າວມີປ່າໄມ້ຂຽວງາມອຸດົມສົມບູນ, ມີວິວທິວທັດທຳມະຊາດທີສວຍງາມ, ໄລຍະທາງ 7 ກມ, ການເຂົ້າເຖິງສະດວກ.





## 7. ໜອງຫຼວງອູເໜືອ.



ໜອງຫລວງອູເໜືອ ມີທີ່ຕັ້ງຢູ່ບ້ານອູເໜືອຫ່າງຈາກເທດສະບານເມືອງຍອດອູ **23 km** ມີເນື້ອທີ່ **1,794** ຕາແມັດ ເປັນໜອງປາທຳມະຊາດຂອງລວມຊາວອູເໜືອ; ຕາມການບອກເລົ່າຂອງຜູ້ເຖົ້າໃນແຕ່ກ່ອນແມ່ນມີ **2** ໜອງຄື: ໜອງຜູ້ ແລະ ໜອງແມ່ ຕໍ່ມາມີພໍ່ຄ້າຄົນຈີນໄດ້ມາທ່ຽວ ແລະ ໄດ້ມີການສັນນິຖານວ່າໜອງຜູ້ແມ່ນຮັກສາຕໍ່ໄປບໍ່ໄດ້ ເນື່ອງຈາກວ່າ ຖ້າຮັກສາໄວ້ຕໍ່ໄປ ແມ່ນຈະເປັນໄພຕໍ່ຊາວບ້ານ ແລະ ຕໍ່ການພັດທະນາເສດຖະກິດ, ດັ່ງນັ້ນຊາວບ້ານຈຶ່ງໄດ້ພາກັນປ່ອຍນ້ຳອອກ ແລະ ປູກສ້າງເຮືອນໃສ່ ຍັງເຫລືອແຕ່ໜອງແມ່; ຕໍ່ມາ ໃນສະໄໝເຮັດການປະຕິວັດ ທ່ານ ຄຳອ້ວນ ບຸບຜາ ໄດ້ນຳພາປະຊາຊົນຕັນນ້ຳສອງເບື້ອງ ເພື່ອເປັນອ່າງເກັບນ້ຳເປັນບ່ອນເອົານ້ຳໄປໃສ່ນາ ແລະ ຕໍ່ຈາກນັ້ນ ປະຊາຊົນຫັນມາເປັນໜອງປາລວມ ເພື່ອເປັນບ່ອນຊອກຢູ່ຫາກິນຂອງຊາວບ້ານຈົນເຖິງປະຈຸບັນ.

## ໘. ແຫຼ່ງທ່ອງທ່ຽວທາງທຳມະຊາດຕາດ ຫ້ວຍຫອຍ.



ນ້ຳຕົກຕາດຫ້ວຍຫອຍ ມີໄລຍະທາງຫ່າງຈາກຕົວ ເມືອງບຸນເໜືອ 29 ກມ, ເຊິ່ງເປັນຕາດທີ່ມີຄວາມສວຍງາມ ແລະ ມີນ້ຳໄຫຼຕະຫຼອດປີ, ໃນບໍລິເວນນ້ຳຕົກຕາດມີປ່າໄມ້ທີ່ອຸດົມສົມບູນໄປດ້ວຍພືດພັນນາໆສະນິດ ແລະ ມີສັດສາວາສິ່ງນາໆພັນ ເຊິ່ງເໝາະແກ່ການສ້າງເປັນແຫຼ່ງທ່ອງທ່ຽວ ເພື່ອເປັນບ່ອນພັກຜ່ອນຢ່ອນອາລົມ ແລະ ຄາຍຮ້ອນ ຂອງນັກທ່ອງທ່ຽວທາງພາຍໃນ ແລະ ຕ່າງປະເທດ.



## 9. ວັດສີຖູນເມືອງ (ເມືອງຂວາ).



ວັດສີຖູນເມືອງ ຕັ້ງຢູ່ເຫດສະບານ ເມືອງຂວາ ເຊິ່ງເປັນບ່ອນປະດິດສະຖານຂອງ ພະເຈົ້າ ສຳລິດ ເຊິ່ງພະອົງມີຄວາມສັກສິດ ແລະ ປະຫວັດຄວາມເປັນມາຍາວນານ ເປັນທີ່ຮູ້ຈັກ ແລະເຄົາລົບບູຊາຂອງຊາວພຸດທັງພາຍໃນ  ແລະຕ່າງປະເທດ ນອກນັ້ນຍັງເປັນບ່ອນສຶກສາຄົ້ນຄວ້າກ່ຽວກັບ ວັດທະນະທຳ ທາງພຸດທະສາດສະໜາ ຂອງນັກສຶກສາປັນຍາຊົນ ເວົ້າສະເພາະ ກ່ຽວກັບປະຫວັດຄວາມເປັນມາຂອງພະເຈົ້າ ສຳລິດ ທີ່ຄົນທ້ອງຖິ່ນກໍ່ຄືຊາວພຸດໃຫ້ຄວາມນັບຖື, ສັກກະລະບູຊາ ແລະ ຂໍພອນໃຫ້ຊີວິດພົບແຕ່ສິ່ງດີໆ.

## 10. ອ່າງເກັບນ້ຳ ໄຟຟ້ານ້ຳອູ 5.



ໜ້າອ່າງເກັບນ້ຳ ໄຟຟ້ານ້ຳອູ 5 ໄລຍະທາງຫ່າງຈາກຕົວເມືອງສຳພັນ 15 ກມ. ແມ່ນໜຶ່ງໃນແຫຼ່ງທ່ອງທ່ຽວທີ່ສ້າງຂຶ້ນໃໝ່ ໂດຍເໝາະແກ່ການສ້າງເປັນແຫຼ່ງທ່ອງທ່ຽວທາງດ້ານການປະມົງ, ການຂີ່ເຮືອ, ເປັນສະຖານທີ່ພັກຜ່ອນ ແລະ ເຮັດກິດຈະກຳຕ່າງເທິງໜ້າອ່າງຂອງນັກທ່ອງທ່ຽວ ເຊິ່ງໃນໃນໄລຍະທີຜ່ານມາ ຍັງບໍ່ທັນມີຜູ້ສຳປະທານ ແຕ່ກໍມີນັກທ່ອງທ່ຽວເຂົ້າໄປທ່ຽວຈຳນວນຫຼວງຫຼາຍ, ສະນັ້ນ ຄວນຈະມີທຸລະກິດພາກເອກະຊົນມາສຳປະທານແຫຼ່ງທ່ອງທ່ຽວດັ່ງກ່າວ ເພື່ອບໍລິການໃຫ້ເປັນລະບົບ.



## 11. ອ່າງເກັບນ້ຳ ໄຟຟ້ານ້ຳອູ 4.

ໜ້າອ່າງເກັບນ້ຳ ໄຟຟ້ານ້ຳອູ 4 ໄລຍະທາງຫ່າງຈາກຕົວເມືອງສຳພັນ 4 ກມ ອ່າງດັ່ງກ່າວ ໄດ້ສ້າງສຳເລັດພາຍໃນປີ 2018 ຊຶ່ງເປັນອີກເຂື່ອນໜຶ່ງທີ່ເໝາະແກ່ການສ້າງເປັນສະຖານທີ່ທ່ອງທ່ຽວ ເພື່ອການພັກຜ່ອນ ແລະ ເຮັດກິດຈະກຳຂີ່ເຮືອ, ຫາປາ, ກິນປາ ເພາະຢູ່ບໍ່ໄກຈາກເທດສະບານ ເມືອງຂວາ.





## 12. ບໍ່ນ້ຳອຸ່ນ, ປ່າສະຫງວນນ້ຳລານ.



ບໍ່ນ້ຳອຸ່ນ ແມ່ນອຸ່ນຕະຫຼອດປີທັງລະດູໜາວ ແລະ ລະດູຝົນ ເຊິ່ງມີເນື້ອທີ່ປະມານ 1,5 ເຮັກຕາ ຕັ້ງຢູ່ບ້ານນາແຕນ ເມືອງບູນໃຕ້ ແລະ ບໍນ້ຳອຸ່ນນີ້ ແມ່ນຢູ່ໃນຂອບເຂດປ່າສະຫງວນນ້ຳລານ ມີເນື້ອທີ່ 15,200 ເຮັກຕາ, ເຊິ່ງບໍລິເວນດັ່ງກ່າວ ມີທົ່ງນາ ແລະ ປ່າໄມ້ຂຽວງາມອຸດົມສົມບູນ, ແຕ່ກ່ອນນີ້ ຊາວບ້ານໄດ້ໃຊ້ເປັນບ່ອນປິ່ນປົວຮັກສາພະຍາດ ແຕ່ດຽວນີ້ ເປັນບ່ອນອາບນ້ຳໃນລະດູໜາວ, ມາຮອດ ປີ 2002-2004 ທາງໂຄງການອີຢູ ໄດ້ມີການພັດທະນາການທ່ອງທ່ຽວຢູ່ບ້ານດັ່ງກ່າວ ໂດຍຕິດພັນກັບບໍ່ນ້ຳອຸ່ນ ເຊິ່ງມີຄວາມຮ້ອນສາມາດ ຕົ້ມໄຂ່ສຸກ ແລະ ໄດ້ມີການໂຄສະນາໃຫ້ນັກທ່ອງທ່ຽວເອີລົບ ເຂົ້າໄປທ່ຽວສະຖານທີ່ດັ່ງກ່າວຫຼາຍພໍສົມຄວນ ໂດຍສະເພາະການທ່ຽວຊົມຄວາມຫຼາກຫຼາຍຂອງແມງກະເບື້ອງ.



## 13. ປ່າສະຫງວນພູຕ່ຳຊ່ານ.





ປ່າສະຫງ່ວນພູຕ່ຳຊ່ານມີເນື້ອທີ່ 550 ເຮັກຕາ, ຕັ້ງຢູ່ທາງທິດເໜືອຂອງເມືອງຜົ້ງສາລີ ຊຶ່ງມີຊາຍແດນທິດຕາເວັນອອກ ແລະທິດໃຕ້ ຕິດກັບເມືອງຜົ້ງສາລີ, ທິດເໜືອຕິດກັບ ສປ.ຈີນ ແລະ ທິດຕາເວັນຕົກຕິດກັບເມືອງບຸນເໜືອ, ຊຶ່ງເປັນເຂດທີ່ມີສັດນ້ຳສັດປ່າ ແລະ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ທີ່ຍັງຮັກສາຄວາມອຸດົມສົມບູນໄປດ້ວຍລະບົບນິເວດວິທະຍາ ແລະ ຊີວະວິທະຍາ ດັ່ງນັ້ນ, ຜ່ານມາ ຈຶ່ງໄດ້ມີການສຳຫຼວດອອກແບບເບື້ອງຕົ້ນ ເພື່ອຈັດເປັນເຂດ ແຫຼ່ງທ່ອງທ່ຽວແນໃສ່ປົກປັກຮັກສາ ສັດນ້ຳ-ສັດປ່າ ໃຫ້ດຳລົງຄົງຕົວ ແລະຂະຫຍາຍຕົວຕາມທຳມະຊາດເພື່ອສ້າງເປັນຈຸດການສຶກສາຄົ້ນຄ້ວາທາງດ້ານວິທະຍາສາດ ແລະ ສິ່ງແວດລ້ອມ. ມີໄລຍະທາງຫ່າງຈາກເທດສະບານເມືອງຜົ້ງສາລີ ຂຶ້ນໄປທິດເໜືອປະມານ 82 ກິໂລເມັດ.

## 14. ການທ່ຽວຊົມທຳມະຊາດ ແລະ ຫມູ່ບ້ານຊົນເຜົ່າ 1 ມື້ - 4ມື້ (Trekking Program).

ນັກທ່ອງທ່ຽວທີ່ເຂົ້າມາ ແຂວງຜົ້ງສາລີ 70% ມີຄວາມສົນໃຈເຂົ້າມາທ່ຽວຊົມທຳມະຊາດ ແລະ ໝູ່ບ້ານຊົນເຜົ່າ ເພາະແຂວງຜົ້ງສາລີມີທຳມະຊາດອາກາດໜາວ, ທະເລໝອກ ເປັນແຂວງທີ່ມີອາກາດເຢັນຕະຫຼອດປີ ແລະ ມີປະຊາຊົນບັນດາເຜົ່າຫຼາຍກວ່າ 15 ຊົນເຜົ່າ, ທີ່ຍັງອະນຸລັກຮັກສາຮີດຄອງປະເພນີດັ່ງເດີມໄວ້ ເປັນທີ່ໜ້າສົນໃຈ.













# ແຂວງຫຼວງນ້ຳທາ

111

# 1. ປ່າສະຫງວນແຫ່ງຊາດນໍ້າຫ້າ.

ປ່າສະຫງວນແຫ່ງຊາດນໍ້າຫ້າ, ມໍລະດົກອາຊຽນ, ມີສັດລ້ຽງລູກດ້ວຍນໍ້ານົມ 38 ຊະນິດ ແລະ ມີສັດປ່າທີ່ຫາຍາກ ຈຳນວນ 22 ຊະນິດ. ປ່າສະຫງວນແຫ່ງຊາດນໍ້າຫ້າ ເປັນປ່າໄມ້ເຂດຮ້ອນ, ມີຄວາມຕຶບໜາ. ຄາດວ່າປະມານ 30% ຂອງເນື້ອທີ່ປ່າສະຫງວນ ຍັງເປັນປ່າດົງດິບ ແລະ 60% ເຄີຍຖືກຖາງ. ແຕ່ປະຈຸບັນ ໄດ້ກາຍມາ ເປັນປ່າໄມ້ທຳມະຊາດ ທີ່ເຕັມໄປດ້ວຍໄມ້ຫຼາຍຊະນິດ. 10 % ຂອງເນື້ອທີ່ ໄດ້ປ່ຽນເປັນດິນກະສິກຳ. ປ່າສະຫງວນແຫ່ງຊາດນໍ້າຫ້າ ຖືກແບ່ງເປັນ 3 ເຂດຄື: ເຂດຫວງຫ້າມເດັດຂາດ, ເຂດນຳໃຊ້ເພື່ອການເກັບກູ້ເຄື່ອງປ່າຂອງດົງ ແລະ ເຂດເຮັດການກະສິກຳສຳລັບຊາວບ້ານຈຳນວນ 104 ບ້ານ ທີ່ດຳລົງຊີວິດ ຢູ່ໃນບໍລິເວນປ່າສະຫງວນ. ສັດປ່າທຸກຊະນິດມີການຫລຸດລົງ ຍ້ອນມີການລ່າເນື້ອ ແລະ ການຄ້າຂາຍສັດປ່າ. ຕົກມາໃນປີ 1999 ອົງການທ່ອງທ່ຽວແຫ່ງຊາດ ໄດ້ສົມທົບກັບຫ້ອງການທ່ອງທ່ຽວແຂວງຫລວງນໍ້າທາ ໂດຍໄດ້ຮັບການສະໜັບສະໜູນ ທຶນຊ່ວຍເຫຼືອລ້າ ຈາກປະເທດນິວຊີແລນ ໄດ້ເຂົ້າມາພັດທະນາການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມ ໃນນາມໂຄງການທ່ອງທ່ຽວອະນຸລັກນໍ້າຫ້າ, ໂດຍຜ່ານໄລຍະເວລາການພັດທະນາເປັນ 3 ປີ, ຈົນສ້າງຊື່ສຽງ ແລະ ກາຍເປັນຕົວແບບຂອງການພັດທະນາການທ່ອງທ່ຽວຢູ່ປະເທດລາວ ຈົນມາຮອດທຸກມື້ນີ້.





## 2. ແຫຼ່ງທ່ອງທ່ຽວບ້ານນ້ຳດີ, ເມືອງຫຼວງນ້ຳທາ.



ບ້ານນ້ຳດີ ຫ່າງຈາກເທດສະບານແຂວງ ພຽງ 7 ກິໂລແມັດ, ຕາດນີ້ ຊາວບ້ານໄດ້ຄົ້ນພົບປີ 1995, ຈາກນັ້ນ ບ້ານກໍ່ພາກັນອະນາໄມອ້ອມສະຖານທີ່ ແລະ ຕັ້ງກຸ່ມບໍລິການນັກທ່ອງທ່ຽວທີ່ເຂົ້າຊົມຕາດນ້ຳດີ ໄດ້ຈ່າຍຄ່າຜ່ານປະຕູເລັກນ້ອຍ ເພື່ອເຂົ້າທ່ຽວຊົມນ້ຳຕົກຕາດ.

ນອກນັ້ນ ຍັງມີຄ່າຝາກລົດຈັກ, ລົດຖີບ ແລະ ລົດໃຫຍ່. ເສັ້ນທາງເຂົ້າເຖິງນ້ຳຕົກຕາດ ມີຄວາມສະດວກສະບາຍ, ໃນແຕ່ລະວັນ ກໍ່ມີນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ເຂົ້າໄປທ່ຽວຊົມ. ທາງເຂົ້າຫານ້ຳຕົກ ມີ 2 ເສັ້ນ, ຢູ່ເບື້ອງລຸ່ມຂອງນ້ຳຕົກຕາດ ມີສາລາພັກຜ່ອນ. ນັກທ່ອງທ່ຽວ ສາມາດອາບນ້ຳຢູ່ກ້ອງນ້ຳຕົກຕາດໄດ້. ມີຮ້ານຂາຍເຄື່ອງດື່ມ ແລະ ເຄື່ອງຫັດຖະກຳຢູ່ຈຸດບໍລິການເຂົ້າຊົມ. ການເຂົ້າຫາແຫຼ່ງທ່ອງທ່ຽວນີ້ ແມ່ນເຂົ້າໄດ້ທຸກລະດູການ.





## 3. ນ້ຳຕົກຕາດບ້ານນ້ຳທຸງ.



ນ້ຳຕົກຕາດນ້ອຍນ້ຳທຸງ ຢູ່ເຂດບ້ານນ້ຳແດງ ໄປຕາມເສັ້ນທາງ ແລວເສດຖະກິດເໜືອ-ໃຕ້ ຫ່າງຈາກເທດສະບານແຂວງ ປະມານ **18** ກິໂລແມັດ. ເສັ້ນທາງຫລວງແຫ່ງຊາດນ້ຳທາ - ນາເຕີຍ, ອອກຈາກເສັ້ນທາງໃຫຍ່ ຍ່າງໄປປະມານ **1** ກິໂລແມັດ (ເປັນນ້ຳຕົກຕາດນ້ອຍ ທີ່ຢູ່ໃນຂອບເຂດດິນສວນໄມ້ສັກ, ຕົ້ນຢາງພາລາຂອງປະຊາຊົນ ໃນແຫຼ່ງນີ້ ບໍ່ທັນໄດ້ຮັບການພັດທະນາ ແລະ ຍັງບໍ່ມີສິ່ງອຳນວຍຄວາມສະດວກ).



## 4. ພະທາດປູມປຸກ.







ພະທາດປູມປຸກ ແມ່ນພະທາດທີ່ເກົ່າແກ່ທີ່ສຸດ ຂອງເມືອງຫຼວງນ້ຳທາ, ສ້າງຂຶ້ນໃນປີ ຄສ 1628 ເພື່ອເປັນ ສັນຍາລັກ ແຫ່ງມິດຕະພາບ ລະຫວ່າງ ເມືອງຫົວທາ ແລະ ເມືອງຊຽງແສນ. ພະທາດດວງເກົ່າ ໄດ້ຖືກຍົນອາເມລິກາ ຖິ້ມລະເບີດທຳລາຍ ໃນປີ 1966. ປະຈຸບັນ ຍັງມີຮ່ອງຮອຍເສດເຫຼືອຢູ່ຂ້າງພະທາດດວງໃໝ່. ພະທາດປູມປຸກ ຕັ້ງຢູ່ຫ່າງຈາກເທດສະບານແຂວງຫຼວງນ້ຳທາປະມານ 7 ກິໂລແມັດ. ທ່ານສາມາດຂີ່ລົດໂດຍສານ ຫຼື ລົດຖີບໄປເຖິງສະຖານທີ່ດັ່ງກ່າວໄດ້. ປະຈຸບັນ ຍັງບໍ່ທັນມີປ້າຍອະທິບາຍປະຫວັດຄວາມເປັນມາ ຂອງທາດດັ່ງກ່າວ. ບຸນພະທາດປູມປຸກ ຈັດຂຶ້ນໃນເດືອນກຸມພາຂອງທຸກໆປີ.

ອີງຕາມປະຫວັດສາດ ເມືອງຫຼວງຫົວທາ ບັນທຶກໄວ້ວ່າ: ມາເຖິງເດືອນ 6 ອອກໃໝ່ 13 ຄ່ຳ ປີ ເປີກສີ ຈສ 990 ຄສ 1628 ກົງກັບປີ ພສ 2171 ແມ່ນພະຍານາແລຕາໄຟ ທີ່ປົກຄອງເມືອງຊ້າຍ ຈັນທະບູລີ ແລະ ພະຍາ ສີສຸໂທທະນະທຳມິກະລາຊາ ແຫ່ງເມືອງຊຽງແສນ ໄດ້ຕົກລົງເຫັນດີນຳກັນໄດ້ນຳ ເອົາໄພ່ພົນທັງສອງ ເມືອງມາເມືອງ ຫຼວງຫົວທາ ເພື່ອກໍ່ສ້າງພະທາດຜູກໄມຕີກັນຂຶ້ນ 2 ດວງຄື: ດວງທີ 1 ສ້າງຂຶ້ນຢູ່ເທິງພູ ທາງທິດຕາເວັນຕົກສຽງເໜືອ ຂອງເມືອງຫຼວງຫົວທາ; ພະທາດດວງນີ້ ແມ່ນສ້າງຂຶ້ນໂດຍ ພະຍາສີສຸໂທທະນະ ທຳມິກະລາຊາ ເຈົ້າຜູ້ປົກຄອງເມືອງ ຊຽງແສນ ແລະ ຕັ້ງນາມພະທາດດວງນີ້ວ່າ "ພະທາດພູກຸກ ຫຼື ພະທາດພູປຸກ" ແຕ່ມາໃນໄລຍະຕໍ່ມາ ເອີ້ນວ່າ "ພະທາດ ປູມປຸກ ອິນທະລິງກາຣາຊາທະນີ" ມາຈົນເຖິງປະຈຸບັນ. ດວງທີ 2 ແມ່ນສ້າງຂຶ້ນຢູ່ເທິງພູ ທີ່ມີຊື່ວ່າ "ພູຜາສາດ" ຕັ້ງຢູ່ ທາງທິດຕາເວັນອອກສ່ຽງເໜືອ ຂອງເມືອງຫຼວງຫົວທາ, ປະຈຸບັນບໍ່ລິເວນດັ່ງກ່າວ ແມ່ນຫ່າງຈາກບ້ານນ້ຳທຸງ 2 ກິໂລ ແມັດ ພະທາດດວງນີ້ ແມ່ນສ້າງຂຶ້ນໂດຍ ພະຍານາແລຕາໄຟ ຜູ້ປົກຄອງເມືອງຊ້າຍຈັນທະບຸລີແຫ່ງອານາຈັກລ້ານຊ້າງ.

## 5. ວັດຫຼວງຂອນ.



ວັດຫຼວງຂອນ ແມ່ນຕັ້ງຢູ່ໃນບ້ານຫຼວງ, ເມືອງນໍ້າທາ, ແຂວງ ຫຼວງນໍ້າທາ. ຕັ້ງຢູ່ຕິດກັບເສັ້ນທາງຫຼວງ ຈາກເທດສະບານແຂວງ 6 ກິໂລແມັດ. ວັດຫຼວງຂອນ ແມ່ນວັດເກົ່າແກ່ວັດໜຶ່ງ ຢູ່ເມືອງຫຼວງນໍ້າທາ ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ ຄສ 1892 ໂດຍເຈົ້າຫຼວງກົມມະຈ້າງ ແຫ່ງເມືອງກຸສາວະດີ (ເມືອງເງິນໃຕ້).

ອີງຕາມເອກະສານ ປະຫວັດເມືອງຫຼວງຫົວທາ ຫຼື ເມືອງຫຼວງນໍ້າທາ ເວົ້າວ່າ: ພາຍຫຼັງເມືອງຫຼວງຫົວທາ ກາຍເປັນເມືອງຮ້າງ ໃນສະໄໝການປົກຄອງຂອງ ເຈົ້າໜ່ອມຫຼວງ ໂດຍ ເຈົ້າໜ່ອມນ້ອຍ ຜູ້ເປັນຫຼານຊາຍເຈົ້າໜ່ອມຫຼວງ ເຮັດສົງຄາມຍາດຊິງເອົາບັນລັງ ຂອງເຈົ້າໜ່ອມຫຼວງ ໃນປີ ຄສ 1733. ເຮັດໃຫ້ເມືອງຫຼວງຫົວທາ ກາຍເປັນເມືອງຮ້າງ ແລະ ເຈົ້າໜ່ອມຫຼວງ ກໍ່ໄດ້ຍ້າຍໄປຕັ້ງເມືອງໃໝ່ ຊື່ວ່າ "ເມືອງກຸສາວະດີ" (ເມືອງເງິນໃຕ້).

ພາຍຫຼັງເມືອງຫຼວງຫົວທາ ກາຍເປັນເມືອງຮ້າງໄດ້ 158 ປີ. ຈົນຮອດປີ ຄສ 1891 ກໍ່ໄດ້ມີເຈົ້າ ຫຼວງກົມມະຈ້າງ ເຈົ້າຫຼວງເມືອງກຸສາວະດີ (ເມືອງເງິນໃຕ້) ກໍໄດ້ພາຂຸນເສນາອາມາດຈໍານວນໜຶ່ງ ອອກຈາກເມືອງກຸສາວະດີ ມາເຖິງເມືອງຫຼວງຫົວທາ ໄດ້ພັກເຊົາຢູ່ແຄມນໍ້າແງ້ນ (ບໍ່ລິເວນຂົວນໍ້າແງ້ນປະຈຸບັນ) ແລະ ໄດ້ຈັດແຈງບ່ອນທີ່ຈະຕັ້ງເມືອງໃໝ່ ແລ້ວເຈົ້າຫຼວງກົມມະຈ້າງ ກໍ່ໄດ້ກັບຄືນສູ່ເມືອງກຸສາວະດີ ເພື່ອເຕົ້າໂຮມເອົາເຈົ້າຂຸນມູນນາຍ, ບ່າວໄພ່ລາດຊະດອນຈໍານວນ 500 ຄົນ ແລະ ເສນາອາມາດ ຕິດຕາມອາລັກຂາຈໍານວນ 16 ຄົນ ແລະ ເຈົ້ານະຄອນນານ ເດີນທາງມາເມືອງຫຼວງຫົວທາ, ເຈົ້ານະຄອນນານ ຈຶ່ງຈັດເອົາສະກັນ ສິ່ງຫາບສິ່ງຫາມຕາມບ້ານຕໍ່ບ້ານ ຈົນຮອດບ້ານພ້າວກຸດຊຽງຂອງ ແລ້ວມີເຜົ່າລື້ຕິດຕາມມານໍາອີກ ແລະ ໄດ້ຂ້າມແມ່ນໍ້າຂອງ ມາຫາບ້ານຫ້ວຍຊາຍ ແລະ ຜ່ານເມືອງຫຼວງພູຄາ ມາຮອດເມືອງຫຼວງຫົວທາ ໃນປີ ຄສ 1892. ຈາກນັ້ນ ຈຶ່ງໄດ້ຕັ້ງອາຮາມ ເຊິ່ງແມ່ນວັດຫຼວງຂອນ; ປະຈຸບັນ ມີສາທຸພໍ່ເຈົ້າຈັນຕະ ເປັນເຈົ້າອະທິການວັດ ແລະ ມີສາມະເນນ 2 ຕົນຄື: ເນນຈັນຍາ ແລະ ເນນນັນຕະ ພ້ອມດ້ວຍມັດສະທາຍົກສອງທ່ານ.

## 6. ພະທາດຫຼວງນໍ້າທາ.



ຕັ້ງຢູ່ບ້ານໄຊສີມບູນ, ເມືອງ ແລະ ແຂວງຫຼວງນໍ້າທາ, ສ້າງສໍາເລັດໃນປີ 2007. ໂດຍການຮ່ວມແຮງຮ່ວມໃຈ ຂອງເຈົ້າສັດທາຈາກປະຊາຊົນຜູ້ມີຈິດໃຈເຫຼື່ອມໃສໃນສາດສະໜາພຸດ ໄດ້ພາກັນສ້າງພະທາດດວງນີ້ຂຶ້ນມາ, ເພື່ອສັກກາລະບູຊາ, ໃນທຸກໆປີລະຫວ່າງເດືອນກຸມພາ ເພິ່ນຈະຈັດງານສະຫຼອງພະທາດຫລວງນໍ້າທາຂຶ້ນ ຢູ່ບໍລິເວນພະທາດຫຼວງນໍ້າທາ ໃນງານດັ່ງກ່າວ ມີການຄົບງັນເຄື່ອງອັດທະຂອງເຈົ້າສັດທາ, ມີການວາງສະແດງຜະລິດຕະພັນທ້ອງຖິ່ນ, ທ່ານສາມາດເຂົ້າຫາແຫຼ່ງທ່ອງທ່ຽວດັ່ງກ່າວ ໄດ້ຢ່າງສະດວກສະບາຍ ແລະ ຈາກຈຸດດັ່ງກ່າວ ທ່ານສາມາດຊົມທິວທັດເທດສະບານແຂວງຫຼວງນໍ້າທາ ໄດ້ຢ່າງສວຍງາມ.

## 7. ຫໍວາງສະແດງຜະລິດຕະພັນແຂວງຫລວງນໍ້າທາ.



ຫໍວາງສະແດງຜະລິດຕະພັນແຂວງຫລວງນໍ້າທາ, ຕັ້ງຢູ່ໃຈກາງຂອງເທດສະບານແຂວງຫລວງນໍ້າທາ, ເຊິ່ງແມ່ນ ຫໍວາງສະແດງໃໝ່ ຫາກໍ່ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2008 ແລະ ເປີດບໍລິການ ປີ 2010. ໂດຍທຶນການ ຊ່ວຍເຫຼືອຂອງແຂວງແຮກສ່ຽວ ແຂວງວິງຝຸກ ຈາກປະເທດວຽດນາມ, ເປັນຫໍວາງສະແດງມູນເຊື້ອປະຫວັດສາດ ຂອງແຂວງຫລວງນໍ້າທາ, ວາງສະແດງມູນເຊື້ອທາງວັດທະນະທໍາຂອງບັນດາເຜົ່າ, ສ່ວນໜຶ່ງ ເຮັດເປັນຫ້ອງປະຊຸມຂະໜາດໃຫຍ່ ແລະ ນ້ອຍ ເຊິ່ງໝູນໃຊ້ຕາມຄວາມເໝາະສົມທີ່ຈໍາເປັນ. ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດສະມາດຊື້ປີ້ເຂົ້າຊົມຫໍດັ່ງກ່າວຕາມວັນ ແລະ ເວລາທາງລັດຖະການ.







## 8. ບ້ານວັດທະນະທຳເຜົ່າຍວນ (ເຮືອນຮັບຕ້ອນແຂກ).





ເຮືອນຮັບຕ້ອນແຂກເຜົ່າຍວນ ຕັ້ງຢູ່ໃຈກາງບ້ານວຽງເໜືອ, ເມືອງຫລວງນ້ຳທາ, ແຂວງຫລວງນ້ຳທາ, ຫ່າງຈາກເທດສະບານແຂວງຫຼວງນ້ຳທາ ມາທາງທິດໃຕ້ ປະມານ 4 ກິໂລແມັດ.

ບ້ານນີ້ຕັ້ງຂຶ້ນ ໃນປີ 1909, ມີປະຊາຊົນຈຳນວນ 10 ຫຼັງຄາເຮືອນ ທີ່ຍ້າຍມາຈາກບ້ານວຽງໃຕ້ ມາຕັ້ງບ້ານຢູ່ ແລະ ໃສ່ຊື່ວ່າ "ບ້ານວຽງເໜືອ", ປະຈຸບັນ ມີຈຳນວນ 278 ຄອບຄົວ, ອາຊີບຕົ້ນຕໍ ແມ່ນການເຮັດນາ ປະຊາຊົນ ສ່ວນຫລາຍນັບຖືສາດສະໜາພຸດ ແລະ ຜີເມືອງ. ຕໍ່ມາປີ 2003, ເນື່ອງຈາກຂັ້ນເທິງ ມີການປັບປຸງກໍ່ສ້າງສະ ໜາມບິນ ຈິ່ງໄດ້ຍົກຍ້າຍປະຊາຊົນຈຳນວນ 109 ຫຼັງຄາເຮືອນ ທີ່ຖືກຜົນກະທົບ ໄປຢູ່ສະຖານທີ່ເບື້ອງຊ້າຍທາງ. ດ້ວຍເຫດນັ້ນ ການນຳແຂວງ ຈຶ່ງໄດ້ຊີ້ນຳໃຫ້ພະແນກທ່ອງທ່ຽວແຂວງ ສົມທົບກັບອຳນາດການປົກຄອງຂັ້ນເມືອງ, ຂັ້ນບ້ານ ພ້ອມກັນ ຫາຊ່ອງທາງສ້າງກິດຈະກຳ ທີ່ຕິດພັນກັບການບໍລິການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໂດຍການສ້າງເຮືອນຮັບ ຕ້ອນແຂກຂອງເຜົ່າຍວນ ແລະມີກິດຈະກຳບໍລິການໃຫ້ນັກທ່ອງທ່ຽວເຊັ່ນ: ກຸ່ມບໍລິການຈັດບາສີສູ່ຂວັນ, ຈັດລາຍການສະແດງສິລະປະສະມັກຫຼິ້ນ, ແຕ່ງອາຫານພື້ນເມືອງຂອງເຜົ່າຍວນ, ຈັດການບໍລິການໂຮມສະເຕ, ຈັດການຕັ້ງແຄ້ມນອນຊົມແສງເດືອນ. ທັງໝົດນີ້ ແມ່ນໄດ້ຮັບທຶນສະໜັບສະໜູນ ຊ່ວຍເຫຼືອຫລ້າຈາກໂຄງ ການພັດທະນາການ ທ່ອງທ່ຽວແບບຍືນຍົງ (ທະນາຄານພັດທະນາອາຊີ ADB) ເປີດໃຊ້ບໍລິການເປັນທາງການໃນວັນທີ 18/02/2007 ເປັນ ຕົ້ນມາ.

## ໙. ຕະຫລາດກາງຄືນແຂວງຫລວງນໍ້າທາ.








ຕະຫຼາດກາງຄືນ ເທດສະບານແຂວງຫຼວງນໍ້າທາ. ຕັ້ງຢູ່ບ້ານໂພນໄຊ, ເມືອງນໍ້າທາ - ແຂວງຫຼວງນ້ຳທາ; ທິດເໜືອ ຕິດກັບທາງຊອຍ 4 ແຍກຖະໜົນຫຼວງນໍ້າທາ, ທິດໃຕ້ ຕິດກັບທະນາຄານການຄ້າຕ່າງປະເທດ ແລະ ຄັງເງິນຂອງແຂວງ, ເບື້ອງຕາເວັນອອກ ຕິດກັບພະແນກ ຖວທ ແຂວງ ຂະແໜງການທ່ອງທ່ຽວ ແລະ ເບື້ອງຕາເວັນຕົກ ຕິດກັບຫ້ອງການໄປສະນີລາວ ແຂວງຫຼວງນໍ້າທາ ແລະ ຖະໜົນຫຼວງນໍ້າທາ.

ໃນເມື່ອກ່ອນ ຕະຫລາດກາງຄືນ ເປັນຕະຫລາດອຸດສະຫະກຳທົ່ວໄປ, ຕໍ່ມາໄລຍະໜຶ່ງສະຖານທີ່ດັ່ງກ່າວ ໄດ້ຮັບການກໍ່ສ້າງໃຫ້ເປັນ ຕະຫລາດຂາຍເຄື່ອງໃຊ້ປະເພດເສື້ອຜ້າ, ໃນປີ 1998 ທາງແຂວງໄດ້ຍົກຍ້າຍກິດຈະກຳດັ່ງກ່າວ ໄປຂາຍລວມກັນ ຢູ່ທີ່ຕະຫຼາດອຸດສາຫະກຳແຂວງໃນປະຈຸບັນ, ເຮັດໃຫ້ສະຖານທີ່ດັ່ງກ່າວ ເປົ່າຫວ່າງໄວ້ເປັນເວລາຫລາຍປີ, ໃນປີ 2004 ພະແນກທ່ອງທ່ຽວແຂວງໄດ້ຮັບທຶນກູ້ຢືມຈາກ ທະນາຄານພັດທະນາອາຊີ ມາພັດທະນາກິດຈະກຳທ່ອງທ່ຽວ. ໃນທີ່ນີ້ ຕະຫລາດກາງຄືນ ກໍ່ເປັນສະຖານທີ່ໜຶ່ງ ທີ່ໄດ້ຮັບການປັບປຸງມາຮັບໃຊ້ສັງຄົມ ໃນລະດັບຂັ້ນພື້ນຖານ ໂດຍມີຈຸດປະສົງເປັນຕະຫລາດນະໂຍບາຍ ໃຫ້ຜູ້ມີທຶນນ້ອຍ ເຂົ້າບໍລິການຢູ່ສະຖານທີ່ນີ້ ເຊັ່ນ: ຂາຍເຄື່ອງຫັດຖະກຳ, ທີ່ລະນຶກ, ອາຫານສຸກ, ໝາກໄມ້ ແລະ ເປັນບ່ອນສະແດງສິລະປະຂອງທ້ອງຖິ່ນ, ພ້ອມນີ້ ກໍ່ໃຊ້ເປັນອາຄານອາເນກປະສົງ ເຊິ່ງຢູ່ພາຍໃຕ້ການບໍລິຫານ ແລະ ຄຸ້ມຄອງຂອງທ່ອງທ່ຽວແຂວງ. ກຳນົດເວລາເປີດ ເລີ່ມແຕ່ 14 ໂມງ 30 ນາທີ ແລະ ເວລາປິດ 22:30 ຂອງທຸກໆຄືນ.

## 10. ນ້ຳຕົກຕາດນ້ຳແກ້ວ ເມືອງສິງ.



ແຫຼ່ງທ່ອງທ່ຽວນ້ຳຕົກຕາດແຫ່ງນີ້ ຖືກສຳຫລວດ ແລະ ຄົ້ນພົບໂດຍທີມງານວິຊາການຂອງພະແນກທ່ອງທ່ຽວ, ຫ້ອງການທ່ອງທ່ຽວເມືອງຫຼວງນ້ຳທາ ໂດຍທ່ານ ຄຳລຽນ ຕັນຍາແກ້ວໃນປີ 1998. ແຫຼ່ງທ່ອງທ່ຽວນີ້ ຕັ້ງຢູ່ຂອບເຂດຂອງບ້ານນ້ຳແກ້ວ. ດັ່ງນັ້ນ ຊາວບ້ານຈຶ່ງເອີ້ນຕາມຊື່ຂອງບ້ານຄື "ນ້ຳຕົກຕາດນ້ຳແກ້ວ" ບ້ານນ້ຳແກ້ວ ຫ່າງຈາກເທດສະບານເມືອງສິງ 10 ກິໂລແມັດ ແລະ ແຫຼ່ງທ່ອງທ່ຽວນ້ຳຕົກຕາດນ້ຳແກ້ວ ຫ່າງຈາກບ້ານນ້ຳແກ້ວ 10 ກິໂລແມັດ, ຫົນທາງເຂົ້າຫາ ແມ່ນເສັ້ນທາງຍ່າງໄປໄຮ່ຂອງຊາວບ້ານ, ນ້ຳຕົກຕາດນີ້ ມີລັກສະນະ ເປັນນ້ຳຕົກຜ່ານຫີນຊັ້ນຫລາຍໆຊັ້ນ, ຈະເບິ່ງງາມ ແມ່ນລະດູຝົນນ້ຳຫລາຍ, ອ້ອມຮອບບໍລິເວນນ້ຳຕົກຕາດ ຍັງມີທຳມະຊາດ ແລະ ໝູ່ບ້ານຊົນເຜົ່າ ເປັນຕົ້ນເຜົ່າອາຄາ ທີ່ຍັງມີວິຖີການດຳລົງຊີວິດແບບດັ່ງເດີມ. ດັ່ງນັ້ນ ໜ່ວຍງານບໍລິການທ່ອງທ່ຽວ ຈຶ່ງສ້າງເສັ້ນທາງຍ່າງປ່າຊົມທຳມະຊາດ ແລະ ວັດທະນະທາຊົນເຜົ່າ. ທ່ານສາມາດຍ່າງເຂົ້າໄປທ່ຽວຊົມໄດ້ 2 ວິທີຄື: ໄປທ່ອງທ່ຽວເອງ ໂດຍບໍ່ມີການຈ່າຍຄ່າສິ້ນເປືອງໃດໆ ເພາະວ່າບໍ່ທັນມີສິ່ງອຳນວຍຄວາມສະດວກເທື່ອ ຫຼື ຈະຊື້ລາຍການທ່ອງທ່ຽວ ກັບໜ່ວຍງານບໍລິການທ່ອງທ່ຽວ ທີ່ຕັ້ງຢູ່ເມືອງສິງກໍ່ໄດ້.



## 11. ພະທາດຫຼວງຊຽງຕຶງ.



ພະທາດຫຼວງຊຽງຕຶງ ເມືອງສິງ ຕັ້ງຢູ່ເທິງຈອມພູ ທາງທິດຕາເວັນຕົກສຽງໃຕ້ ຂອງເມືອງສິງ ຫ່າງຈາກເທດສະບານເມືອງສິງ ໄປທາງແຂວງ ຫຼວງນໍ້າທາ 5 ກິໂລແມັດ. ມີເສັ້ນທາງຈາກຕີນພູ ຂຶ້ນໄປຮອດຕົວພະທາດ ສອງເສັ້ນທາງຄື: ທາງຍ່າງ ແມ່ນມີຂັ້ນໄດຂຶ້ນມີຄວາມຍາວປະມານ 750 ແມັດ ແລະ ເສັ້ນທາງລົດໃຫ່ຍຂຶ້ນ ແມ່ນປູຢ່າງມີຄວາມຍາວປະມານ 1000 ແມັດ.

ພະທາດຫຼວງຊຽງຕຶງ ເປັນແຫຼ່ງທ່ອງທ່ຽວທາງດ້ານປະຫວັດສາດ ແລະ ວັດທະນາທຳ ທີ່ຖືກຮັບຮອງເອົາເປັນມູນມໍລະດົກວັດທະນາທຳ ຂອງແຂວງຫຼວງນໍ້າທາ ຜ່ານມາຫຼາຍປີແລ້ວ, ພະທາດຫຼວງຊຽງຕຶງ ເປັນພະທາດເກົ່າແກ່, ເປັນສູນລວມ ຄວາມເຊື່ອສັດທາ ຂອງຊາວເມືອງສິງມາແຕ່ໂບຮານນະການ.

ຕາມຕຳນານພະທາດຫຼວງຊຽງຕຶງ ໄດ້ກ່າວໄວ້ວ່າ: ມີພະພຸດຖະເຈົ້າ ສິດທັດຖະ ໄດ້ເດີນທາງມາຈາກເມືອງ ລັງກາທີບ ແລະ ໄດ້ຜ່ານມາ ເຖິງໜ່ອຍພູ ທີ່



ພະທາດຊຽງຕຶງ ຕັ້ງຢູ່ໃນປະຈຸບັນ ແລະ ປະຊາຊົນ ກໍ່ໄດ້ເອົາວັດຖຸປະທານ ແລະ ຂອງທານມາຖວາຍໃຫ້ພະພຸດທະເຈົ້າໄດ້ສັນ (ກິນ) ແລະ ພະພຸດທະເຈົ້າ ກໍ່ໄດ້ເທດສະໜາທຳໃຫ້ປະຊາຊົນໄດ້ຮັບຟັງ ແລະ ໄດ້ກ່າວສັ່ງສອນ ໃຫ້ຊາວເມືອງແຫ່ງນີ້ ຖືສິນກິນທານ ແລະ ກ່ອນທີ່ພະພຸດທະເຈົ້າຈະຈາກໄປ ໄດ້ສັ່ງໄວ້ກັບ ພະມະຫາອະນັນຕະຖຽນ ໂລລາຊາ ຜູ້ຕິດຕາມຂອງຕົນໄວ້ວ່າ "ໃນເມື່ອເຮົາຫາກໄດ້ປະລິນິພານໄປແລ້ວ ໃຫ້ພະມະຫາອະນັນຕະຖຽນເຈົ້າ ເອົາກະດູກຄໍຫອຍ, ຫີນລັບພ້າຊາຍຄຳ ແລະ ພ້າມີດຊູບດ້າມຄຳຂອງເຮົາມາຈຸ້ມກໍ່ໄວ້ເໜືອດອຍ (ເທິງພູ) ຊຽງຕຶງແຫ່ງນີ້ ເພື່ອໄວ້ປົກປັກຮັກສາດິນແດນເມືອງ ແຫ່ງນີ້ຕໍ່ໄປ. ຫຼັງຈາກນັ້ນ ກໍ່ໄດ້ເດີນທາງໄປສູ່ປ່າເຈຕະວັນນະ ແລະ ອີກສອງປີຕໍ່ມາພະພຸດທະເຈົ້າສິດທັດຖະ ກໍໄດ້ປະລິນິພານ (ຕາຍ). ດັ່ງນັ້ນ ພະມະຫາອະນັນຕະຖຽນໂລລາຊາ ຈຶ່ງໄດ້ນຳເອົາກະດູກຄໍຫອຍ, ຫີນລັບພ້າຊາຍຄຳ ແລະ ມີດຊູບດ້າມຄຳ ຂອງພະພຸດທະເຈົ້າ ມາມອບໃຫ້ພະມະຫາ

ຖຽນເຈົ້າ ທີ່ຢູ່ເມືອງແຫ່ງນີ້ ຕາມຄຳບອກຂອງພະພຸດທະເຈົ້າ ແລະ ສິ່ງຂອງເຫຼົ່ານີ້ ໄດ້ຖືກເກັບຮັກສາໄວ້ໃນຫີບຄຳຢູ່ໃນເມືອງແຫ່ງນີ້ ເປັນເວລາ 7 ຊົ່ວເຈົ້າຟ້າ ທີ່ປົກຄອງເມືອງແຫ່ງນີ້ ເຊິ່ງເປັນເວລາ 400 ປີ ແລະ ມີພະສຳພູຕະຖຽນຕົນໜຶ່ງ ທີ່ມີລູກສິດ 500 ຕົນ ທີ່ໄດ້ຮັກສາຫີບຄຳນີ້ໄດ້ 20 ປີ. ຈາກນັ້ນ ຈຶ່ງໄດ້ຮູ້ຂ່າວວ່າມີພະຍາຕົນໜຶ່ງຊື່ວ່າ "ພະຍາອະໂສກະທຳມະລາຊາ" ເປັນຜູ້ທີ່ມີຊື່ສຽງໂດ່ງດັງ ໃນການສ້າງວັດວາອາລາມ ແລະ ກໍ່ສ້າງເຈດີຍະທາດມາໄດ້ເຖິງ 84,000 ດວງ ຢູ່ທຸກຫົນທຸກແຫ່ງໃນໂລກ. ດັ່ງນັ້ນ ພະສຳພູຕະຖຽນຜູ້ນີ້ ຈຶ່ງໄດ້ໄປອັນເຊີນເອົາ ພະຍາອະໂສກະທຳມະລາຊາ ມາສ້າງພະທາດຢູ່ໃນເມືອງແຫ່ງນີ້. ດັ່ງນັ້ນ ພະຍາອະໂສກະທຳມະລາຊາ ກໍໄດ້ເດີນທາງມາຕາມຄຳເຊີນ ແລະ ພະສຳພູຕະຖຽນຕົນນັ້ນ ພ້ອມດ້ວຍລູກສິດ 500 ຕົນ; ກໍ່ໄດ້ເອົາຫີບຄຳ ທີ່ໄດ້ເກັບຮັກສາກະດູກຄໍຫອຍ, ຫີນລັບພ້າຊາຍຄຳ ແລະ ມີດຊູບດ້າມຄຳມາມອບໃຫ້ພະຍາອະໂສກະທຳມະລາຊາ ເພື່ອກໍເຈດີຍະທາດ. ດັ່ງນັ້ນ ພະຍາອະໂສກະກໍໄດ້ຫາເລີກງາມຍາມດີ ແລະ ກໍ່ເຈດີຍະທາດກວມເອົາຫີບຄຳ ທີ່ບັນຈຸກະດູກຄໍຫອຍ  ຫີນລັບພ້າຊາຍຄຳ ແລະ ມີດຊູດດ້າມຄຳ ຂອງພະພຸດທະເຈົ້າ ຢູ່ທີ່ເໜືອດອຍ (ເທິງພູ) ຊຽງຕຶງ ໃນເດືອນຈຽງເພັງປີ ພສ 400 ເພື່ອບັນຈຸໄວ້ທີ່ໃຫ້ຊາວເມືອງໄດ້ສັກກະລະບູຊາ ແລະ ເປັນພະທາດຄູ່ບ້ານຄູ່ເມືອງແຫ່ງນີ້ຕະຫຼອດໄປ ແລະ ໄດ້ກຳນົດເອົາມື້ 15 ຄ່ຳ ເດືອນກາຊິນເຜົ່າໄຕລື້ ເຊິ່ງກົງກັບເດືອນ 12 ລາວ ຫຼືເດືອນຈຽງເພັງຂອງທຸກໆປີ ເປັນມື້ນະມັດສະການພະທາດຕະຫຼອດມາ. ດັ່ງນັ້ນ, ເມື່ອອີງຕາມ ຕຳນານຂອງພະທາດຫຼວງຊຽງຕຶງ ໄດ້ໃຫ້ຮູ້ວ່າ: ເມືອງສິງໃນປະຈຸບັນນີ້ມີຄົນອາໄສ ແລະ ດຳລົງຊີວິດຢູ່ເປັນເວລາ 2,500  ກວ່າປີຜ່ານມາແລ້ວ.

ນອກຈາກນັ້ນ ພະທາດຫຼວງຊຽງຕຶງ ກໍ່ໄດ້ຖືກ ປະຕິສັງຂອນ ຈາກເຈົ້າຟ້າສາມອິງຄື: ພະຍາແຕນ ໃຫ້ ບູລະນະປະຕິສັງຂອນໃໝ່ ໃນປີ ຄສ 1591, ເຈົ້າແສງສີຂະຕິຍະວົງສາ ບູລະນະປະຕິສັງຂອນຂຶ້ນໃໝ່ ໃນປີ ຄສ 1792, ເຈົ້າຟ້າສິຫຼີໜໍ່ຄາ ບູລະນະປະຕິສັງຂອນຂຶ້ນໃໝ່ ໃນປີ ຄສ 1873. ພະທາດຊຽງຕຶງໃນປະຈຸບັນນີ້ ປະຊາຊົນຈັດງານບຸນ ເພື່ອສະຫລອງແມ່ນໄລຍະ ດຽວກັບການສະຫລອງ ພະທາດຫລວງວຽງຈັນຂອງທຸກໆປີ.



## 12. ພະທາດຈອມສິງ.



ພະທາດຈອມສິງ ເມືອງສິງ ແມ່ນຕັ້ງຢູ່ທາງທິດຕາ ເວັນຕົກສ່ຽງໃຕ້ຂອງເມືອງສິງ ຕັ້ງຢູ່ເທິ່ງຈອມພູ ແຄມເສັ້ນທາງເມືອງສິງ-ເມືອງລອງ, ໄລຍະຫ່າງຈາກຕົວເມືອງສິງ ໄປທາງເມືອງລອງປະມານ 10 ກິໂລແມັດ. ມີເສັ້ນທາງດິນແດງຈາກຕີນພູ ຂຶ້ນຫາຈອມພູຕົວພະທາດ ທີ່ສາມາດ ເອົາລົດຈັກ ແລະ ລົດໃຫ່ຍຂຶ້ນໄດ້ໄລຍະທາງຈາກຕີນພູ ຫາຈອມພູມີ ຄວາມຍາວ ປະມານ 300 ແມັດ.

ປີ ຄສ 1519 ໄດ້ມີຄົນຜູ້ໜຶ່ງມີຊື່ວ່າ "ທ້າວ ໄຣ່ພະ (ຍາແທນໃຫ້)" ໄດ້ນຳພາຄົນຈຳນວນ 600 ຄົນ. ເຂົ້າມາຕັ້ງບ້ານເຮືອນ ຢູ່ໃນດິນແດນເມືອງອາລາວີເຊິ່ງເປັນ ເມືອງປະຮ້າງໄວ້ເຖິງ 350 ປີ. ພະຍາແທນ ໃຫ້ສ້າງວຽງ (ເມືອງ) ຂຶ້ນຢູ່ບໍລິເວນພູທາດຫຼວງຊຽງຕຶງ ໃນປະຈຸບັນ ໃນປີ ຄສ 1519 ແລະ ຕັ້ງຊື່ເມືອງວ່າ: "ເມືອງມະຊິມມະອາລະວີ" ພາຍຫຼັງສ້າງວຽງ (ເມືອງ) ແລ້ວປະຊາຊົນໄດ້ຫົດສົງໃຫ້ທ້າວໄຣ່ ຂຶ້ນເປັນ "ພະຍາທ້າວໄຣ່" ຂຶ້ນປົກຄອງເມືອງ "ມະຊິມມະທະນີອາລະວີ" ແລະ ເນື່ອງຈາກວ່າ ລາວເປັນ ຄົນໃຈບຸນໃຈກຸສົນ, ມັກກິນມັກທານ, ຢູ່ໃນສິນກິນໃນທຳ, ມີຈິດໃຈເອື້ອເຟື້ອເພື່ອແຜ່ ເວລາໃຜຂໍຫຍັງກໍໃຫ້ດັ່ງໃຈ. ດັ່ງນັ້ນ ຈາກຊື່ພະຍາໄຣ່ ປະຊາຊົນ ຈຶ່ງພາກັນເອີ້ນວ່າ "ພະຍາແຕນໃຫ້" (ແທນໃຫ້) ພາຍຫຼັງທີ່ພະຍາແທນໃຫ້ ປົກຄອງ ເມືອງ "ມະຊິມມະທະນີອາລະວີ" ມາຮອດປີ ຄສ 1521 ກໍໄດ້ປ່ຽນຊື່ເມືອງ ຈາກ "ເມືອງມະຊິມມະທະນີອາລະວີ" ມາເປັນ "ເມືອງສິງກຸດຕະລະ ລາຊາທະນີອາລະວີ ຫຼື ເມືອງສິງຫຼວງ (ສິງໃຫ່ຍ)". ນອກຈາກນັ້ນ ພະຍາແທນໃຫ້ ຍັງໄດ້ບູລະນະພະທາດຫຼວງຊຽງຕຶງຂຶ້ນໃໝ່ ແລະ ສ້າງພະທາດດວງໜຶ່ງຂຶ້ນ ແລະ ຕັ້ງຊື່ວ່າພະທາດຈອມສິງ ເຊິງໄດ້ເອົານາມເມືອງສິງທີ່ຕັ້ງຂຶ້ນໃໝ່ນັ້ນ ມາຕັ້ງເປັນຊື່ພະທາດນຳ ເພື່ອເປັນພະທາດບ້ານຄູ່ເມືອງສິງອີກດວງໜຶ່ງ ທີ່ສະແດງ ເຖິງວ່າ ສ້າງຂຶ້ນພ້ອມກັບການສ້າງເມືອງສິງຂຶ້ນມານັ້ນເອງ ແລະ ໄດ້ກຳນົດເອົາມື້ຕາມການຄິດໄລ່ຂອງເຖົ້າແກ່ບ້ານ ຂອງທຸກໆປີ ເປັນມື້ນະມັດສະການພະທາດ.

ຕະຫຼອດລາດຊະການຂອງພະຍາແທນໃຫ້ ປົກຄອງເມືອງສິງຫຼວງ ແມ່ນມີຄວາມອຸດົມສົມບູນ, ກໍ່ສ້າງສາຕົວເມືອງ (ວຽງ) ຂອງເພິ່ນເອງ ພ້ອມທັງຂຸດຄູອ້ອມຮອບ (ປະຈຸບັນຮ່ອງຮອຍຄູວຽງເກົ່າ ຍັງມີຢູ່ບາງສ່ວນບໍລິເວນ ພະທາດຫຼວງຊຽງຕຶງ).

## 13. ພະທາດຫີນຟູ (ບ້ານຊາຍ).



ພະທາດຫີນຟູ ແມ່ນຕັ້ງຢູ່ເທິງດອນໜຶ່ງ ຢູ່ເຊິ່ງກັບບ້ານຊາຍ, ເມືອງສິງ ໂດຍມີແມ່ນ້ຳຂອງອ້ອມຮອບ ຕັ້ງຢູ່ຫ່າງຈາກເທດສະບານເມືອງສິງໄປທາງທິດຕາເວັນອອກສຽງເໜືອ ປະມານ 70 ກິໂລແມັດ. ເສັ້ນທາງເຂົ້າໄປຫາ ແມ່ນມີຄວາມຫຍຸ້ງຍາກພໍ່ສົມຄວນ ເນື່ອງຈາກພະທາດ ຕັ້ງຢູ່ຫ່າງໄກສອກຫຼີກ ແລະ ເປັນເສັ້ນທາງພູດອຍ.

ພະທາດຫີນຟູ ແມ່ນພະທາດ ທີ່ເກົ່າແກ່ອີກດວງໜຶ່ງ ຢູ່ໃນເມືອງສິງ ໄດ້ສ້າງຂຶ້ນໃນປີ ຄສ 1792. ພ້ອມກັບພະທາດຈອມໝອກ (ເມືອງລອງ), ພະທາດຜາຄຳ (ເມືອງ ລອງ), ພະທາດຈອມຈອງ (ເມືອງລອງ) ແລະ ພະທາດແມວສີເມືອງສະ (ພະມ້າ). ບັນດາພະທາດເຫຼົ່ານີ້ແມ່ນສ້າງຂຶ້ນ ໂດຍເຈົ້າແສງສີຂະຕິຍະວົງສາ ໃນສະໄໝມາສ້າງເມືອງສິງຂຶ້ນໃໝ່. ຕາມຄວາມເຊື່ອ ແລະ ການບອກເລົ່າຂອງຜູ້ເຖົ້າຜູ້ແກ່ເວົ້າວ່າ: ພະທາດຫີນຟູ ແມ່ນຕັ້ງຢູ່ກາງແມ່ນ້ຳຂອງ ເຊິ່ງເປັນດິນທີ່ພູນຂຶ້ນວິດຈາກໜ້ານ້ຳພຽງໜ້ອຍດຽວ ແຕ່ບໍ່ເຄີຍຖືກນ້ຳຖ້ວມຈັກເທື່ອ. ຍ້ອນວ່າ ເມື່ອເວລານ້ຳຂຶ້ນ ດອນນີ້ກໍ່ຟູຂຶ້ນຕາມນ້ຳ ແລະ ນ້ຳລົງ ກໍ່ລົງຕາມນ້ຳ ດັ່ງນັ້ນ ພະທາດດວງນີ້ ຈິ່ງໄດ້ຊື່ວ່າ "ພະທາດຫີນຟູ"

## 14. ວັດເຈົ້າຟ້າສີຣີໜໍ່ຄຳ (ວັດບ້ານຫົວຂົວ).





ວັດຫົວຂົວ ຫຼື ວັດເຈົ້າຟ້າສີຣີ ໜໍ່ຄຳ ເປັນວັດເກົ່າແກ່ວັດໜຶ່ງຂອງເມືອງສິງ ຕັ້ງຢູ່ບ້ານຫົວຂົວທາງທິດຕາເວັນຕົກສຽງເໜືອ ຂອງເທດສະບານເມືອງ ໄລຍະທາງ ປະມານ 1,5 ກິໂລແມັດ, ຈາກເທດສະບານເມືອງຫາວັດ. ວັດຫົວຂົວ ແມ່ນວັດທີ່ ສ້າງຂຶ້ນໃນສະໄໝ ເຈົ້າຟ້າສີຣີ ໜໍ່ຄຳ ລົງມາຕັ້ງເມືອງສິງທຳອິດ ແລະ ເປັນວັດທຳອິດ ທີ່ເຈົ້າຟ້າສີຣີ ໜໍ່ຄຳ ສ້າງຂຶ້ນ. ໃນປະຈຸບັນ. ວັດຫົວຂົວ ແມ່ນວັດລວມ ຂອງ ປະຊາຊົນຊາວເມືອງສິງ ເຊິ່ງການສ້ອມແປງ, ການບູລະນະຮັກສາ ເຮັດບຸນສິນກິນ ທານໃຫຍ່ ໃນແຕ່ລະຄັ້ງ ແມ່ນການປະກອບສ່ວນ ຂອງປະຊາຊົນຊາວເມືອງສິງທັງ ໝົດ. ວັດຫົວຂົວ ສ້າງຂຶ້ນໃນເດືອນ 8 ລື້, ປີ ຈສ 1232, ກົງກັບປີ ຄສ 1870, ໂດຍ ເຈົ້າຟ້າສີຣີ ໜໍ່ຄ່ຳທຳອິດ ແມ່ນປຸກເປັນອາຮາມນ້ອຍກ່ອນ ເມື່ອສ້າງອາຮາມສຳເລັດ ແລ້ວ ຮອດເດືອນ 9 ລື້, ຈສ 1232, ຄສ 1870, ເພິ່ນກໍ່ໄດ້ໄປນິມົນເອົາພະພິຊຸສຳ ມະເນນເຂົ້າພັນສາ, ເຖິງເດືອນ 11 ເພັງລື້, ຈສ 1232, ກໍ່ໄດ້ພາປະຊາຊົນທານພະ ເວດ, ຮອດເດືອນ 12 ເພັງ ກໍ່ໄດ້ອອກພັນສາ. ຕໍ່ມາ ພາຍຫຼັງເກັບກ່ຽວເຂົ້າໄຮ່ນາ ແລ້ວ ກໍ່ໄດ້ພາປະຊາຊົນ ສ້າງວິຫານວັດຂຶ້ນ ເຊິ່ງແມ່ນວັດຫົວຂົວປະຈຸບັນນີ້ເອງ, ໄລຍະຕໍ່ມາ ໃນປີ ຄສ 1872, ເຈົ້າຟ້າສີຣີ ໜໍ່ຄຳ ຊວນເສນາອາມາດ ປັ້ນດິນ ແລະ ມາສ້າງພະພຸດທະຮູບພິມພາສາຮູບ (ພະເຈົ້າຫຼວງ) ກັບແທ່ນແກ້ວໃນເວຫານ ໃຫ້ ສຳເລັດຕົບແຕ່ງປະດັບ ດ້ວຍດອກດວງທັງມວນ: ດອກບົວເຄືອ, ດອກຈັງກອນ ແລະ ດອກເນລະບຸນ ເປັນເອກະລັກສີສັນ ແລະ ສິລະປະກຳວັດທະນະທຳເຜົ່າລື້ ແຕ້ມດ້ວຍ ສີມືເຈົ້າຟ້າເອງ.



## 15. ຫໍວາງສະແດງເມືອງສິງ (ເຮືອນເກົ່າພະຍາຊຽງກອງ).





ເຮືອນເກົ່າຂອງພະຍາຊຽງກອງ ຫຼື ຫໍວາງສະແດງຜະລິດຕະພັນເມືອງສິງ ຕັ້ງຢູ່ບ້ານຊຽງໃຈ, ໃຈກາງເທດສະບານຂອງເມືອງສິງ, ແຂວງຫລວງນໍ້າທາ. ຕາມການບອກເລົ່າສືບຕໍ່ກັນມາ ຂອງຜູ້ເຖົ້າຜູ້ແກ່ໃນເມືອງສິງ ບອກໃຫ້ຮູ້ວ່າ: ສະຖານທີ່ນີ້ ໄດ້ຖືກສ້າງຕັ້ງຂຶ້ນ ປີ 1934. ໃນເມືອກ່ອນ ໄດ້ເປັນເຮືອນທີ່ຢູ່ອາໃສຂອງພະຍາຊຽງກອງ ຜູ້ທີ່ເຈົ້າຊີວິດຫລວງພະບາງ ແຕ່ງຕັ້ງໃຫ້ປົກຄອງດູແລເຂດເມືອງສິງ, ໃນຕົ້ນສະຕະວັດທີ 20 ເຊິ່ງເປັນຜູ້ທີ່ຮັ່ງມີ ທາງດ້ານຊັບສິນບັດໃນທ້ອງຖິ່ນເວລານັ້ນ, ເປັນພະຍາເຈົ້າເມືອງທີ່ ປະຊາຊົນໃຫ້ຄວາມຊັດທາ ແລະ ເຫລື່ອມໃສມາຕະຫລອດ ເປັນເວລາຫລາຍປີ, ພາຍຫລັງປະເທດຊາດ ໄດ້ຮັບການປົດປ່ອຍ. ເຮືອນດັ່ງກ່າວ ໄດ້ຖືກປະຮ້າງໄວ້ໄລຍະໜຶ່ງ, ຕໍ່ມາປີ 1990 ອົງການປົກຄອງທ້ອງຖິ່ນ ໄດ້ປັບປຸງ ແລະ ເຮັດເປັນເຮືອນພັກສໍາລັບພະນັກງານລັດ ທີ່ເດີນທາງມາເຮັດວຽກທີ່ເມືອງສິງ, ຕົກມາປະມານປີ 2007,ທາງອົງການປົກຄອງເມືອງສິງ ໄດ້ມອບເຮືອນດັ່ງກ່າວ ໃຫ້ຫ້ອງການຖະແຫລງຂ່າວ, ວັດທະນະທໍາ ບຸລະນະປັບປຸງເຮືອນ ດັ່ງກ່າວ ເພື່ອເຮັດເປັນສູນວາງສະແດງວັດທະນະທໍາຂອງເມືອງສິງ: ປະຈຸບັນ ສູນດັ່ງກ່າວ ເປັນບ່ອນເກັບຮັກສາອຸປະກອນຮັບໃຊ້ ແລະ ລາຊາສິນບັດປະເພດຕ່າງໆ ທີ່ເປັນຊັບສິນບັດຊາວເມືອງສິງ ພ້ອມກັນອານຸລັກມາຕັ້ງແຕ່ສັກກະວັດທີ 19-20 ໄດ້ວາງສະແດງບັນດາມູນເຊື້ອ ກ່ຽວກັບວັດທະນະທໍາຂອງບັນດາເຜົ່າ, ວັດຖຸບູຮານ ແລະ ຂໍ້ມູນອື່ນໆ. ຫໍວາງສະແດງເມືອງສິງນີ້ ເປັນຈຸດດີສໍາລັບການຄົ້ນພົບຄວາມຮັ່ງມີ, ທາງດ້ານວັດທະນະທໍາ ແລະ ປະຫວັດສາດເມືອງສິງ, ນັກທ່ອງທ່ຽວ, ສາມາດເຂົ້າໄປທ່ຽວຊົມໄດ້ ຕາມເວລາທາງລັດຖະການ.

## 16. ນ້ຳຕົກຕາດຜາເຍືອງ.



ຕັ້ງຢູ່ເຂດເສັ້ນທາງຫລວງນ້ຳທາ - ເມືອງສິງ ຫ່າງຈາກເມືອງຫລວງນ້ຳທາ 40 ກິໂລແມັດ ແລະ ຫ່າງຈາກເມືອງ ສິງ 17 ກິໂລແມັດ.

ນ້ຳຕົກຕາດຜາເຍືອງ ແມ່ນຖືກຄົ້ນພົບດ້ວຍກອງກຳລັງປ້ອງກັນຄວາມສະຫງົບສຸກ ເປັນເວລາຫລາຍປີມາແລ້ວ. ຈາກນັ້ນ ໃນປີ 2003, ທາງອົງການປົກຄອງແຂວງ ໄດ້ອະນຸມັດໃຫ້ກອງບັນຊາການທະຫານແຂວງ ນຳໃຊ້ເຂດທີ່ດິນດັ່ງກ່າວ ໂດຍຕິດພັນກັບວຽກງານປ້ອງການຊາດປ້ອງກັນຄວາມສະຫງົບ ໂດຍອີງໃສ່ສະພາບແວດລ້ອມ, ຈຸດພິເສດ, ທີ່ຕັ້ງ, ທ່າແຮງບົ່ມຊ້ອນທັງເຮັດໃຫ້ເຂດດັ່ງກ່າວ ເປັນເຂດທີ່ສາມາດໃຫ້ການບໍລິການທ່ອງທ່ຽວ ແຂກພາຍໃນ ແລະ ຕ່າງປະເທດ. ໃນປີ 2005 ກອງບັນຊາການທະຫານແຂວງ ໄດ້ລົງມືປັບປຸງເສັ້ນທາງ, ສ້າງຮ້ານຂາຍປີ້ເຂົ້າທ່ຽວຊົມທຳມະຊາດ ແລະ ຮ້ານອາຫານໃນຂັ້ນພື້ນຖານ ເປີດບໍລິການແຂກມາຮອດປະຈຸບັນ, ນັກທ່ອງທ່ຽວສາມາດແວ່ທ່ຽວຊົມທຳມະຊາດໄດ້.



## 17. ຄ້າຍເກົ່າຂອງທະຫານຝຣັ່ງເມືອງສິງ.



ຄ້າຍເກົ່າຂອງທະຫານຝຣັ່ງ ແມ່ນຕັ້ງຢູ່ໃນບ້ານສິງຈະເລີນ ໃນເທດສະບານ ເມືອງສິງ. ເມືອທ່ານໄປຮອດຕະຫລາດເກົ່າຂອງເມືອງສິງ ທ່ານກໍ່ຈະພົບເຫັນຄ້າຍ ດັ່ງກ່າວ ຢູ່ເບື້ອງຫລັງຂອງຫ້ອງການຕຳຫລວດເມືອງສິງ.ບໍ່ມີເອກະສານທີ່ເປັນທາງການ ຢັ້ງຢືນໄດ້ວ່າ, ຄ້າຍເກົ່າຂອງທະຫານຝຣັ່ງ ທີ່ເມືອງສິງ ມີປະຫວັດຄວາມເປັນມາຄືແນວ ໃດ, ສ່ວນຂໍ້ມູນທີ່ມີຢູ່ນີ້ ແມ່ນໄດ້ມາຈາກການບອກເລົ່າສືບຕໍ່ກັນມາ ຂອງຜູ້ເຖົ້າຜູ້ແກ່ ໃນເມືອງສິງ, ບອກໃຫ້ຮູ້ວ່າ: ສະຖານທີ່ນີ້ ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ 1919, ເມືອງສິງ ເປັນເມືອງທີ່ອຸດົມຮັ່ງມີໄປດ້ວຍຮ່ອງຮ່ອຍປະຫວັດສາດ, ເຊິ່ງໃກ້ຄຽງກັບອານາຈັກສິ ບສອງພັນນາ ເຊິ່ງມີຈຸດສູນກາງ ຢູ່ມືນທືນຢູນານ ສປ.ຈີນ. ໃນປະຈຸບັນ ເມືອງສິງ ເຄີຍ ໄດ້ຮັບອິດທິພົນມາຈາກຈີນ, ພະມ້າ, ການປົກຄອງຂອງຝຣັ່ງເສດ. ໃນເມື່ອກ່ອນ ຝຣັ່ງ ເສດ ໄດ້ສ້າງຄ້າຍທະຫານຂຶ້ນ ສ່ວນທີ່ເປັນກຳແພງ, ປ້ອມຍາມ ກໍ່ໄດ້ຖືກຫັກພັງໄປ. ໃນປີ 2012 ນີ້ ທາງອົງການປົກຄອງເມືອງສິງ ໄດ້ມອບສະຖານທີ່ດັ່ງກ່າວ ມີເນື້ອທີ່ 4 ພັນກວ່າຕາແມັດ ໃຫ້ຫ້ອງການຖະແຫລງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວເມືອງ ສິງ ໃຫ້ມີສິດນຳໃຊ້ ແລະ ພັດທະນາ ເປັນສະຖານທີ່ທ່ອງທ່ຽວທາງປະຫວັດສາດໃນຕໍ່ ໜ້າ.



## 18. ພູຜາຄຳ ແລະ ຖ້ຳຍັກ ເມືອງລອງ.



ພູຜາຄຳ ແລະ ຖ້ຳຍັກ ຕັ້ງຢູ່ທາງທິດເໜືອ ເຊິ່ງນອນໃນປ່າສະຫງວນຂອງເມືອງ ແລະ ຢູ່ໃກ້ເທດສະບານເມືອງລອງ ຫ່າງຈາກຕົວເມືອງ 4 ກິໂລແມັດ ແລະ ຕ້ອງຍ່າງເຂົ້າໄປຫາອີກ 2 ກິໂລແມັດ, ເສັ້ນທາງເຂົ້າຫາ ເປັນທາງສຳຮອງ ແລະ ຕ້ອງຍ່າງອີກ. ໃນເຂດດັ່ງກ່າວ ບໍ່ທັນມີສິ່ງອຳນວຍຄວາມສະດວກໄດ້ ເພື່ອໃຫ້ບໍລິການນັກທ່ອງທ່ຽວເທື່ອ.

ຄຳວ່າ "ພູຜາຄຳ" ໄດ້ມາຈາກພູຜາດັ່ງກ່າວ ມີສີເຫຼືອມຫຍິບຫຍັບຄ້າຍຄືສີຄຳ, ໂດຍສະເພາະ ເວລາຕາເວັນສ່ອງໃນຍາມແລງ ຈະເຫັນເປັນສີທອງເຫຼືອມງາມຕາ. ດັ່ງນັ້ນ, ຜູ້ຄົນກໍ່ເລີຍເອີ້ນກັນວ່າ "ພູຜາຄຳ" ມາເຖິງທຸກວັນນີ້ ພູຜາຄຳແຫ່ງນີ້ ຍັງບໍ່ທັນໄດ້ມີຫຼັກຖານຢືນຢັນກ່ຽວກັບການຄົ້ນພົບ.

ແຕ່ຊາວເມືອງລອງບອກວ່າ: ແຕ່ໃດມາຫາກເຫັນທຳມະຊາດຢູ່ເຂດນີ້ແລ້ວ, ອ້ອມຮອບພູຜາຄຳ ມີຕົ້ນໄມ້ ແລະ ປ່າດົງທີ່ຕຶບໜາ ແລະ ຕົ້ນໄມ້ກໍ່ມີອາຍຸຫລາຍຮ້ອຍປີ, ພ້ອມນີ້ ກໍ່ຍັງພົບເຫັນສັດປ່າຫຼາຍຊະນິດເຊັ່ນ: ເຍືອງ, ລີງ, ນົກປ່າຊະນິດຕ່າງໆ ແລະ ຍັງເປັນບ່ອນຊົມທິວທັດທຳມະຊາດຂອງເມືອງອີກດ້ວຍ.









ເຂດບໍລິເວນດັ່ງກ່າວ ຊາວບ້ານຍັງພົບເຫັນມີບັນດາຖ້ຳນ້ອຍ-ຖ້ຳໃຫຍ່ ທີ່ຍັງບໍ່ທັນໄດ້ສຳຫຼວດດ້ວຍນັກວິຊາການເທື່ອ, ເຂດພູຜາຄຳ ຍັງເປັນບ່ອນທີ່ປະຊາຊົນນັບຖືວ່າເປັນສະຖານທີ່ສັກສິດ, ແຕ່ລະປີ ທ້າຍເດືອນ 1 ຫາເດືອນ 2 ຊາວເມືອງລອງ ໂດຍສະເພາະແມ່ນປະຊາຊົນທີ່ນັບຖືສາດສະໜາພຸດ ໃນ 4 ບ້ານຂອງເທດສະບານເມືອງລອງ ໄດ້ພ້ອມກັນເປັນເຈົ້າພາບ ຈັດພິທີທາງສາດສະໜາ ພິທີປາງເມືອງ (ບຸນກຳເມືອງ) ຢູ່ທີ່ນີ້ ເພື່ອໃຫ້ເຈົ້າພໍ່-ເຈົ້າແມ່ຂອງເມືອງ ໄດ້ປົກປັກຮັກສາໄພ່ຟ້າລາດຊະດອນ ໃຫ້ຢູ່ເຢັນເປັນສຸກ,

## 19. ນ້ຳຕົກຕາດນ້ຳລອງ.



ເປັນແຫລ່ງທ່ອງທ່ຽວ ທີ່ຢູ່ທາງທິດໃຕ້ຂອງເມືອງລອງ, ຫ່າງຈາກເທດສະບານເມືອງ 25 ກິໂລແມັດ. ມີເສັ້ນທາງສຳຮອງ ເຊິ່ງລົດໃຫຍ່, ລົດຈັກສາມາດເຂົ້າເຖິງໄດ້, ຈາກນັ້ນ ກໍ່ຍ່າງຈາກເສັ້ນທາງປະມານ 20 ນາທີ, ຜ່ານບ້ານນ້ຳໂບ້ແລ້ວກໍ່ເຖິງຕາດ, ນ້ຳຕົກໃນຕາດສູງປະມານ 30 ແມັດ, ໃນບໍລິເວນຕາດ ຍັງມີຄວາມອຸດົມສົມບູນຂອງປ່າໄມ້, ສັດປ່າເຊັ່ນ: ກວາງ, ຟານ, ເຍືອງ, ລິງ, ນົກ, ພ້ອມນີ້ ຍັງມີບ້ານຊົນເຜົ່າອາໃສ່ຢູ່ 3 ຊົນເຜົ່າ ຄື: ເຜົ່າກຸ່ຍ, ມົ້ງ, ອາຄາ ເຊິ່ງແຕ່ລະເຜົ່າ ຍັງຄົງຮັກສາວັດທະນະທຳຂອງເຜົ່າໃວ້ໄດ້, ເຊິ່ງເປັນທ່າແຮງໃຫ້ແກ່ການທ່ອງທ່ຽວແບບ ອານຸລັກ, ດັ່ງນັ້ນ ໜ່ວຍງານບໍລິການຍ່າງປ່າ ຈິ່ງສ້າງລາຍການຍ່າງປ່າ-ທ່ຽວຊົມຊົນເຜົ່າຢູ່ເຂດນີ້, ສ່ວນດ້ານ ພື້ນຖານສິ່ງຮອງຮັບນັກທ່ອງທ່ຽວທົ່ວໄປ ຍັງບໍ່ທັນໄດ້ຮັບການພັດທະນາເທື່ອ.





## 20. ນ້ຳຕົກຕາດຫ້ວຍນ້ຳແກ້ວ.

ນ້ຳຕົກຕາດຫ້ວຍນ້ຳແກ້ວ ຕັ້ງຢູ່ທິດໃຕ້ ຂອງບ້ານປ່າຄາ ເຊິ່ງມີໄລຍະຫ່າງຈາກເທດສະບານເມືອງລອງ ປະມານ 6 ກິໂລແມັດ. ໃນນີ້ ລົດເຂົ້າຮອດພຽງແຕ່ 4 ກິໂລແມັດ, ເຮົາຕ້ອງຍ່າງ 2 ກິໂລແມັດ ຈຶ່ງຮອດນ້ຳຕົກຕາດ, ນ້ຳຕົກຕາດນ້ຳແກ້ວ ປະກອບມີ 3 ຊັ້ນຕິດຕໍ່ກັນ; ຊັ້ນທີ 1 ສູງປະມານ 10 ແມັດ, ຊັ້ນທີ 2 ສູງ 6 ແມັດ ແລະ ຊັ້ນທີ 3 ສູງ 15 ແມັດ. ນ້ຳຕົກຕາດນີ້ ຖືກຄົ້ນພົບດ້ວຍຊາວບ້ານ ທີ່ໄປຊອກທຳມາຫາກິນ, ຕາມການບອກເລົ່າຂອງຊາວບ້ານໃຫ້ຮູ້ວ່າ ແຕ່ກ່ອນມີພະຍາຕົນໜຶ່ງ ສ້າງພະທາດຢູ່ໃກ້ຄ່ຽງບໍລິເວນດັ່ງກ່າວ ໂດຍບັນຈຸແກ້ວໃສ່ໃນທາດ ແລະ ເອີ້ນກັນວ່າ ຕາດນ້ຳພະແກ້ວ, ແຕ່ປະຈຸບັນ ໄດ້ປ່ຽນຊື່ຈາກຕາດນ້ຳພະແກ້ວ ມາເປັນຕາດນ້ຳແກ້ວ ຈົນເຖິງທຸກວັນນີ້, ຕາດຫ້ວຍນ້ຳແກ້ວ ຍັງມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ມີສັດປ່າ ເຊັ່ນ: ກະຮອກ, ກວາງ, ຟານ, ເຍືອງ, ລີງ, ນົກ...

ຍ້ອນວ່າຕາດດັ່ງກ່າວຢູ່ຫ່າງໄກ; ສິ່ງອຳນວຍຄວາມສະດວກຕ່າງໆ ບໍ່ທັນໄດ້ຮັບການກໍ່ສ້າງ, ເຮັດໃຫ້ນັກທ່ອງທ່ຽວ ບໍ່ຄ່ອຍເຂົ້າໄປທ່ອງທ່ຽວຫຼາຍ ໃນໄລຍະຜ່ານມານັກທ່ອງທ່ຽວຈຳນວນໜຶ່ງ ໂດຍສະເພາະແມ່ນນັກທ່ອງທ່ຽວຈາກຝຣັ່ງ ໄດ້ຊື້ລາຍການທົ່ວຈາກໜ່ວຍງານນຳທ່ຽວ ເພື່ອໄປທ່ຽວບ້ານຊົນເຜົ່າ ແລະ ອອກມາໃສ່ຕາດຫ້ວຍນ້ຳແກ້ວ.

# 21. ພະທາດຈອມແຈ້ງ, ພະທາດແມວສີ ເມືອງລອງ.



ຕາມປະຫວັດສາດເມືອງສິງ ສະໄໝເຈົ້າແສງສີຂະຕິຍະວົງສາ ກ່າວວ່າ: ເຈົ້າແສງສີ ຂະຕິຍະວົງສາ ຫຼື ເຈົ້າ ແສງເມືອງ ເປັນລູກຊາຍຜູ້ທີສອງ ຂອງເຈົ້າສຸນັນຕາ ແລະ ນາງເຂັມມາ (ເຈົ້າສຸນັນຕາເປັນເຈົ້າຟ້າເມືອງເງິນຍາງ ຊຽງແສນ) ເຊິ່ງເຈົ້າສຸນັນຕາ ແມ່ນເປັນນ້ອງຊາຍຂອງເຈົ້າຄຳສຸກ (ເຈົ້າຟ້າຊຽງແຂງອົງທີສາມ) ເຈົ້າສຸນັນຕາມີລູກ 6 ຄົນຄື: ເຈົ້າຍອດໃຈແພ່ງ, ເຈົ້າແສງສີ, ເຈົ້າຕ່ອມຄຳແດງ, ເຈົ້າອິນແປງ, ເຈົ້າບຸນແຍງ, ເຈົ້າບຸນແປງ. ເຈົ້າແສງສີ ຂະຕິຍະວົງສາ ໄດ້ມາຕັ້ງເມືອງສິງ ໃນປີ ຄສ 1792. ສາເຫດທີ່ເຮັດໃຫ້ ເຈົ້າແສງສີ ຂະຕິຍະວົງສາ ມາສ້າງເມືອງສິງ ແມ່ນມາຈາກການຂັດແຍ່ງພາຍໃນຕະກຸນ ຂອງເຈົ້າຟ້າຊຽງແຂງເອງ

ໃນສະໄໝນັ້ນ ແມ່ນສະໄໝທີ່ເມືອງສິງຮຸ່ງເຮືອງ, ທາງດ້ານວັດທະນະທຳອັນດີງາມຂອງຊາວລື້ ເຊິ່ງເວລານັ້ນ ປະຊາຊົນທີ່ລົງມາຈາກຊຽງແຂງ ໄດ້ລົງມາຕັ້ງບ້ານເຮືອນຢູ່ທີ່ງເມືອງສິງຫຼາຍໆບ້ານ ແລະອີກພາກສ່ວນໜຶ່ງ ກໍຕັ້ງໄປ ຕາມລ້ອງນ້ຳມະ, ນ້ຳລອງຄື: ບ້ານເມືອງນັງ, ບ້ານເມືອງກາງ, ບ້ານເມືອງລອງ, ບ້ານປາງອານ, ບ້ານຈຽງກົກ ຫຼັງຈາກນັ້ນ ກໍ່ພາກັນສ້າງວັດວາອາລາມ, ເຈດີຍະທາດຄື: ພະທາດຫິນຟູ (ບ້ານຊາຍ), ພະທາດຈອມຈອງ (ບ້ານເມືອງນັງ), ພະທາດຜາຄຳ (ເມືອງລອງ), ພະທາດຈອມໝອກ (ເມືອງລອງ), ພະທາດແມວສີ (ເມືອງສະ). ນອກຈາກນັ້ນ ກໍໄດ້ບູລະນະພະທາດ ແລະ ວັດເກົ່າແກ່ ທີ່ຖືກໄພສົງຄາມທຳລາຍ ແລະ ຫັກພັງລົງຄືນໃໝ່ຄື: ພະທາດຫຼວງຊຽງຕຶງ (ເມືອງ ສິງ), ພະທາດຈອມສິງ (ເມືອງສິງ) ແລະ ວັດອື່ນໆ.



## 22. ພະທາດຈອມເມືອງ.

ພະທາດຈອມໃຈເມືອງ ຕັ້ງຢູ່ບ້ານຈອມແຈ້ງ, ຢູ່ເບື້ອງທິດໃຕ້ຂອງເທດສະບານເມືອງລອງ ຍ້ອນວ່າພະທາດດັ່ງກ່າວ ຕັ້ງຢູ່ໃຈກາງເທດສະບານເມືອງ ຈິ່ງເອີ້ນວ່າພະທາດໃຈເມືອງ, ພະທາດນີ້ມີຂະໜາດ 10 ແມັດ, ຄູນ 10 ແມັດ. ສູງ 9,5 ແມັດ, ມີພະຍານາກ 9 ໂຕ, ມີພະພຸດ ທະຮູບ 9 ອົງ. ເມື່ອພວກເຮົາຂຶ້ນໄປບໍລິເວນພະທາດ ເຮົາສາມາດເບິ່ງເຫັນທິວທັດຂອງເທດສະບານເມືອງລອງໄດ້. ພະທາດນີ້ ນັກທ່ອງທ່ຽວ ສາມາດຂຶ້ນໄປສັກກາລະບຸຊາ, ຊົມທິວທັດທຳມະຊາດຂອງເທດສະບານເມືອງລອງໄດ້ ໂດຍສະເພາະແມ່ນຕອນເຊົ້າໆ ແລະ ຕອນຕາເວັນໃກ້ຈະຕົກດິນ.



## 23. ຖ້ຳເກົາເລົາ ເມືອງວຽງພູຄາ.



ຕັ້ງຢູ່ ບ້ານນ້ຳແອງ, ເມືອງວຽງພູຄາ, ຫ່າງຈາກເທດສະບານເມືອງວຽງພູຄາ 12 ກິໂລແມັດ, ມີຖ້ຳທັງໝົດ 3 ຖ້ຳ. ຖ້ຳເກົາເລົາ ເປັນຖ້ຳຫີນປູນ, ເລິກ 3,2 ກິໂລແມັດ, ເລິກເຂົ້າໄປໃນໜ່ອຍພູ, ມີຄວາມສວຍງາມ ໜ້າປະທັບໃຈຫຼາຍ, ຊາວບ້ານ ເປັນຜູ້ບໍລິການເກັບຄ່າຜ່ານປະຕູ ແລະ ຈັດລາຍການທ່ອງທ່ຽວເຂົ້າຖ້ຳ. ໃນລະດູຝົນ ພາຍໃນຖ້ຳຈະມີນ້ຳ. ສ່ວນອີກຖ້ຳໜຶ່ງ ຢູ່ທິດໃຕ້ຂອງຖ້ຳໃຫຍ່ ບໍ່ທັນໄດ້ເປີດບໍລິການນັກທ່ອງທ່ຽວເຂົ້າຊົມ ຍ້ອນຊາວບ້ານເຊື່ອວ່າ ເປັນຖ້ຳສັກສິດ. ແຕ່ສາມາດໄປຊົມບ່ອນຮູນ້ຳອອກຈາກຖ້ຳດັ່ງກ່າວໄດ້ ຈາກເສັ້ນທາງຫຼວງ R3 ປະມານ 5 ນາທີ. ຕາມຕຳນານກ່າວກັນວ່າ: ມີງູເຫຼືອມໂຕໜຶ່ງ ໄດ້ຖືກປ່ອຍເຂົ້າໄປໃນຖ້ຳ ໂດຍຜູ້ເຖົ້າຄົນໜຶ່ງ ຊຶ່ງເປັນເຈົ້າຂອງທີ່ລ້ຽງມັນມາແຕ່ນ້ອຍ, ເຈົ້າຂອງງູ ໄດ້ທຸບຕາງູໃຫ້ບອດຍ້ອນມັນກິນສັດລ້ຽງຂອງຊາວບ້ານ. ຜູ້ເຖົ້າຄົນນັ້ນ ປ່ອຍງູເຂົ້າຖ້ຳ ແລະ ໄດ້ບອກກັບງູວ່າ ແຕ່ລະປີຈະຈັດພິທີລ້ຽງ. ດັ່ງນັ້ນ ໃນແຕ່ລະປີ ຊາວບ້ານຈະເອົາໄກ່ ແລະ ໝູມາລ້ຽງຢູ່ປາກຖ້ຳ.





## 24. ສວນອຸທິຍານບໍ່ກຸ້ງ.



ຕັ້ງຢູ່ເມືອງວຽງພູຄາ, ປ່າບໍ່ກຸ້ງມີ ເນື້ອທີ 18 ເຮັກຕາ, ເປັນປ່າອະນຸລັກຢູ່ໃກ້ກັບເທດສະບານເມືອງວຽງພູຄາ. ມີຕົ້ນໄມ້ໃຫຍ່ຈຳນວນຫຼວງຫຼາຍ ແລະ ມີນ້ຳອອກຣູ, ຊຶ່ງນຳໃຊ້ເປັນບ່ອນອາບນ້ຳຂອງຊາວບ້ານ. ນ້ຳບໍ່ກຸ້ງ ເປັນນ້ຳ ທີ່ໃສເຢັນຕະຫຼອດເວລາ. ນອກນັ້ນ ໃນບໍລິເວນເຂດອະນຸລັກບໍ່ກຸ້ງ ມີຮ່ອງຮອຍຂອງວັດເກົ່າ ໃນສັດຕະວັດທີ 16. ວັດບໍ່ກຸ້ງ ແມ່ນຕັ້ງຢູ່ຂອບເຂດບ້ານດົງວຽງ, ເມືອງວຽງພູຄາ, ຕັ້ງຢູ່ໃຈກາງເທດສະບານເມືອງວຽງພູຄາ.

ວັດບໍ່ກຸ້ງ ແມ່ນວັດໜຶ່ງທີ່ເກົ່າແກ່ຂອງເມືອງວຽງພູຄາ ເປັນສະຖານບູຮານຄະດີ ທີ່ສ້າງຂຶ້ນໃນສະໄໝການ ປົກຄອງຂອງສັກດີນາພະມ້າ ຢູ່ເມືອງວຽງພູຄາ. ດັ່ງຕອນໜຶ່ງ ຂອງປະຫວັດເມືອງວຽງພູຄາ ໄດ້ກ່າວວ່າ: "ມາເຖິງສັດຕະວັດທີ 16 ໄທສະຫຍາມ ໄດ້ຕົກເປັນຫົວເມືອງຂຶ້ນຂອງພວກພະມ້າ, ໃນເຂດແດນລ້ານຊ້າງ ຕອນຕາເວັນຕົກ ສ່ຽງເໜືອ, ລວມທັງເມືອງພູຄາ; ພວກພະມ້າ ກໍ່ເຂົ້າມາຢຶດຄອງຢູ່ ໂດຍສະເພາະແຕ່ເຈົ້າໄຊຍະເສດຖາທິລາດ ຂຶ້ນໄປຕີຫົວເມືອງຝ່າຍເໜືອ ເສຍໄຊໃຫ້ພະມ້າເປັນຕົ້ນມາ ພວກພະມ້າ ກໍ່ມາສ້າງເມືອງພູຄາໃຫ້ເປັນເມືອງດ່ານໜ້າ ຂອງ ເມືອງຕອງອູ ເພື່ອສູ້ຍັນກັບອານາຈັກລ້ານຊ້າງ. ກະສັດພະມ້າ ບູເຣັງນອງ ໄດ້ໃຫ້ມະຫາໂປຕະຣຸນະວິດີ (ມະຫາໂປດ) ນຳພາໄພ່ພົນເຂົ້າມາຢູ່ພູຄາ ຄື: ນຳເອົາໄທລື້ ແລະ ພູນ້ອຍ ມາຢູ່ສັບປົນກັບເຜົ່າຂະມຸ ຍ້ອນເຜົ່າລື້ ແລະ ພູນ້ອຍ ຖືສາດສະໜາພຸດເມື່ອເຂົ້າມາຕັ້ງບ້ານເມືອງແລ້ວ ເຂົາຈຶ່ງສ້າງວັດໄວ້ຫຼາຍແຫ່ງທີ່ເຂົາເຈົ້າສ້າງບ້ານ ແປງ ເຮືອນຢູ່ ແລະ ວັດທີ່ສຳຄັນໄດ້ແກ່: ວັດມະຫາໂປດ, ວັດໃຈວຽງ, ວັດບໍ່ກຸ້ງ, ວັດຈອມທອງ, ວັດຜາປຸນ...

ພາຍຫຼັງສ້າງບ້ານແປງເມືອງແລ້ວ ເຂົາໄດ້ປ່ຽນຊື່ເມືອງພູຄາເດີມ ເປັນຊື່ໃໝ່ ທີ່ຮຽກຕາມພາສາບາລີວ່າ: "ປຸຄະເຂຣັດຖະເຈົ້າ" ມະຫາໂຂດ ປົກຄອງເມືອງ ໃນປີ ຄສ 1567, ຈສ 929, ພສ 2110 ແລະ ໄດ້ສ້າງຄອງວຽງໄວ້ທີ່ໂນນພູນ້ອຍ ເຊິ່ງມີທົ່ງພຽງ ແລະ ບ້ານຄົນອ້ອມຮອບ ເພື່ອໄວ້ເປັນບ່ອນຮັບມື ກັບອານາຈັກລ້ານຊ້າງ ໃນເວລາເກີດ ສົງຄາມຂຶ້ນ (ເອີ້ນວ່າ: ຄອງຈຽງ ຫຼື ຄອງວຽງ)".

## 25. ວັດມະຫາໂປດ ແລະ ຄູວຽງ.



ທ່ອງທ່ຽວປະຫວັດສາດ ວັດມະຫາໂປດ ແລະ ຄູວຽງ ຕັ້ງຢູ່ທາງທິດເໜືອຂອງເທດສະບານເມືອງວຽງພູຄາ ແຄມເສັ້ນທາງຫຼວງ R3. ແຫຼ່ງທ່ອງທ່ຽວດັ່ງກ່າວຍັງບໍ່ທັນມີການສຳຫຼວດລະອຽດ, ແຕ່ເບິ່ງຈາກຮ່ອງຮອຍ ສິ່ງເສດເຫຼືອ ໃຫ້ຮູ້ວ່າ: ໃນລະຫວ່າງ ຕົ້ນສະຕະວັດທີ 8 – 11 ຢູ່ທີ່ນີ້ ເຄີຍເປັນຕົວເມືອງໃຫຍ່ແຫ່ງໜຶ່ງ. ເມືອງດັ່ງ ກ່າວ ຖືກທຳລາຍ ໃນສະຕະວັດທີ 18 ແລະ ຮອດສະຕະວັດທີ 19 ໄດ້ກາຍເປັນເມືອງຮ້າງ. ນີ້ຄືແຫຼ່ງຜະລິດຄ້ອງບັ້ງໃຫຍ່, ປະຈຸບັນ ທ່ານສາມາດພົບເຫັນຄ້ອງບັ້ງດັ່ງກ່າວ ໃນເຮືອນບຸກຄົນ ຢູ່ເມືອງວຽງພູຄາ, ຢູ່ໃນຫໍພິພິຕະພັນແຂວງຫຼວງນໍ້າທາ ແລະ ຢູ່ຊຽງໃໝ່. ທ່ານສາມາດເບິ່ງຮ່ອງຮອຍເສດເຫຼືອ ຂອງເມືອງຮ້າງດັ່ງກ່າວ ໄດ້ໃນຂອບເຂດວັດມະຫາໂປດ, ຊຶ່ງມີ ພະ ທາດເກົ່າຫຼາຍແຫ່ງ, ມີກ້ອນດິນຈີ່ທີ່ເກົ່າແກ່ ແລະ ມີເສດເຫຼືອຂອງເຄື່ອງປັ້ນດິນເຜົາກະຈາຍຢູ່ໃນບໍລິເວນເນື້ອທີ 20 ກວ່າເຮັກຕາ. ປະຈຸບັນ ເຂດດັ່ງກ່າວໄດ້ຖືກກຳນົດໃຫ້ເປັນເຂດອະນຸລັກຂອງເມືອງ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທອງທ່ຽວເມືອງວຽງພູຄາ.

ວັດມະຫາໂປດ (ວັດມະຫາໂພ) ຕັ້ງຢູ່ບໍລິເວນບ້ານຖ້ຽວ (ຕໍ່ໜ້າວຽງເກົ່າ) ເມືອງວຽງພູຄາ. ຄວາມເປັນມາ ຂອງວັດມະຫາໂປດໃນອະດີດຕະການ ເປັນວັດຫຼັງທຳອິດ ທີ່ສ້າງຂຶ້ນໃນວຽງພູຄາ ທີ່ມີຊົນເຜົ່າຖືພຸດທະສາສະໜາ ເຂົ້າມາຢູ່ທ້ອງຖິ່ນແຫ່ງນີ້ ຜູ້ນຳພາສ້າງວັດ ແມ່ນຄົນພະມ້າ ມີຊື່ວ່າ: "ມະຫາໂປດ" ສ້າງຂຶ້ນໃນລະຫວ່າງສະຕະວັດທີ 16 ກົງກັບປີ ຄສ 1530.

ຕົວວັດມະນາໂປດ ແມ່ນຕັ້ງຢູ່ເທິງໂນນພູນ້ອຍໜ່ອຍໜຶ່ງ ເຊິ່ງຖືກປັບປຸງພື້ນທີ່ໃຫ້ຮາບພຽງດີ, ວັດນີ້ເປັນຮູບ 4 ລ່ຽມ, ມີລວງຍາວ 54 ແມັດ, ກ້ວາງ 50 ແມັດ, ທັງສີ່ດ້ານຂອງວັດກໍ່ດ້ວຍດິນຈີ່ ສູງກ່ວາ 1 ແມັດ. ໃນວັດແຫ່ງນີ້ ມີວິຫານ 1 ຫຼັງ ທີ່ມີຂະໜາດໃຫຍ່ຄື: ກ້ວາງ 10 ແມັດ, ຍາວ 28 ແມັດ, ມີກຸດຕິ 2 ຫຼັງ ຫຼືອຸໂບສົດທີ່ມີຂະໜາດກ້ວາງ 6 ແມັດ, ຍາວ 10 ແມັດ, ວິຫານ ແລະ ກຸຕິຍົກພື້ນສູງຈາກໜ້າດິນປະມານ 1 ແມັດ, ກໍ່ດ້ວຍດິນຈີ່ໂບກປູນຂາວ ມຸງດ້ວຍດິນຂໍ.

ວັດມະຫາໂປດ ຖືກປະຮ້າງໃນສະໄໝສະຫຍາມ (ເມືອງນານ) ເຂົ້າມາຮຸກຮານໃນສະຕະວັດທີ 19 ປະມານ ປີ ຄສ 1872, ຜ່ານການສຳຫຼວດຕົວຈິງພົບເຫັນວ່າ: ຮ່ອງຮອຍຂອງວັດ ແມ່ນຖືກທັບຖົມໄປຫຼາຍແລ້ວ ເຫຼືອໄວ້ແຕ່ຮ່ອງຮອຍດິນຈີ່ ແລະ ວັດສ່ວນໃດສ່ວນໜຶ່ງເທົ່ານັ້ນ.

ວັດມະຫາໂປດເມືອງວຽງພູຄາ ແມ່ນຮ່ອງຮອຍບູຮານຄະດີທີ່ເກົ່າແກ່ ເຊິ່ງເປັນສັນຍາລັກໜຶ່ງ ທີ່ສະແດງໃຫ້ ເຫັນເຖິງຄວາມສີວິໄລໃນອະດີດ ຂອງເມືອງວຽງພູຄາ ໃນສະຕະວັດທີ 16–19 ແລະ ໃນປະຈຸບັນ ຊາວເມືອງວຽງພູຄາ ແມ່ນຍັງຄົງຖືວ່າ ສະຖານທີ່ແຫ່ງນີ້ ແມ່ນເປັນສະຖານທີ່ສັກສິດ, ເຂັດຢໍາ.

ກຳແພງເມືອງວຽງພູຄາ ຕັ້ງຢູ່ທິດຕາເວນອອກສຽງເໜືອຂອງບ້ານຖ້ຽວ ແລະ ທິດເໜືອຂອງສາຍນ້ຳຈຸກ, ກຳ ແພງເມືອງວຽງພູຄາ ເປັນຄັນຄູດິນ ແລະ ຮ່ອງຄອງທີ່ມີຄະໜາດກ້ວາງ-ເລິກ ແຕກຕ່າງກັນ ບາງບ່ອນເລິກ 3–4 ແມັດ, ກ້ວາງ 4–5 ແມັດ, ບາງບ່ອນ ກ້ວາງ 10–15 ແມັດ, ເລິກ 8–10 ແມັດ. ປະກອບເປັນຮູບກົ້ນຫ້ອຍຫຼາຍຊັ້ນ ຢູ່ໂນນພູຄື: ດ້ານຕາເວັນຕົກກຳແພງເມືອງສາມຊັ້ນ, ດ້ານຕາເວັນອອກ ມີກຳແພງເມືອງສອງຊັ້ນອັດຈອດກັນ ຜ່ານການສຳຫຼວດ ເຫັນວ່າ: ຄັນຄູດິນ, ຮ່ອງຄອງ ເຖິງວ່າຖືກທັບຖົມ ດ້ວຍທຳມະຊາດ ແລະ ການເວລາຈົນບາງບ່ອນ ມີຕົ້ນໄມ້ຂຶ້ນໃຫຍ່ປະມານ 1 ແມັດ, ກໍຕາມແຕ່ກຳແພງ ເມືອງທຸກຊັ້ນກໍປະກົດໃຫ້ເຫັນຢູ່ຢ່າງຊັດເຈນ.

ກຳແພງເມືອງວຽງພູຄາ ໃນລະຫວ່າງທົດສະວັດທີ 4 ຂອງສະຕະວັດທີ 16 ໃນຍຸກພະມ້າເຮືອງອຳນາດ ເຂົ້າມາຄອບຄອງດິນແດນແຫ່ງນີ້ ພວກເຂົາໄດ້ເລືອກເອົາປອມພູນ້ອຍທີ່ມີທົ່ງພຽງອ້ອມຮອບ ນີ້ເຮັດກຳແພງເມືອງຄື: ດ້ານຕາເວນອອກແມ່ນທົ່ງຫຼົ່, ດ້ານເໜືອແມ່ນທົ່ງບ້ານຖ້ຽວ, ດ້ານຕາເວັນຕົກ ແມ່ນທົ່ງຜາປູນ (ບໍ່ກຸ້ງບໍ່ຂາງ) ດ້ານທິດໃຕ້ ຕິດກັບນ້ຳຈຸກ, ຜູ້ປົກຄອງວຽງພູຄາເຊິ່ງແມ່ນມານ (ພະມ້າ) ໃນຍຸກນັ້ນ ໄດ້ເກນແຮງງານລາຊະດອນ ຂຸດກາແພງເມືອງ ນີ້ ເພື່ອສ້າງເປັນປ້ອມທີ່ໝັ້ນສູ້ຍັນກັບປະເທດລ້ານຊ້າງ. ຈຸດໃຈກາງກຳແພງ ໄດ້ສ້າງພະທາດໄວ້ສອງລູກ ແລະ ວິຫານໜຶ່ງຫຼັງ. ປະຈຸບັນ ຍັງເຫຼືອແຕ່ຊາກຫັກພັງ, ກຳແພງເມືອງວຽງພູຄາ ໄດ້ເປັນສັນຍາລັກ ແຫ່ງການປົກຄອງຂອງສັກດີນາພະມ້າໃນຍຸກນັ້ນ ແລະ ເປັນສະຖານທີ່ທາງປະຫວັດສາດ ເພື່ອຄົ້ນຄ້ວາເຖິງຄວາມຮຸ່ງ ເຮືອງ ຂອງວຽງພູຄາກ່ອນໜ້ານີ້ ກ່ວາ 4 ສະຕະວັດຜ່ານມາ.

ກຳແພງເມືອງວຽງພູຄາ ເປັນແຫຼ່ງປະຫວັດສາດແຫ່ງໜຶ່ງ ທີ່ມີຄວາມສຳຄັນ ແລະ ມີມາແຕ່ເຫິງນານ ນັ້ນເປັນ ສິລະປະ ທີ່ມີການສ້າງແບບປະຖົມປະຖານ ແລະ ເປັນຍຸດທະສາດປ້ອງກັນບ້ານເມືອງຂອງ ຄົນບູຮານໃນຍຸກນັ້ນ.

ກຳແພງເມືອງວຽງພູຄາ ແມ່ນຖືກປະຮ້າງໄປໃນໄລຍະ ທີ່ອານາຈັກລ້ານຊ້າງກອບກູ້ອິດສະລະພາບຈາກ ສັກດີນາພະມ້າ ໃນໄລຍະສະຕະວັດທີ 18 ແລະນັບຈາກນັ້ນມາ ກໍ່ບໍ່ມີກຸ່ມຄົນໃດເຂົ້າໄປຊົມໃຊ້ກຳແພງເມືອງນີ້ຕໍ່ໄປ, ເປັນອັນວ່າກຳແພງເມືອງວຽງພູຄາຖືກສ້າງຂຶ້ນ ແລະ ຊົມໃຊ້ແຕ່ຢູ່ໃນຍຸກສັກດີນາພະມ້າ ເຂົ້າມາຍຶດຄອງດິນແດນນີ້ເທົ່ານັ້ນ. ປະຈຸບັນກຳແພງເມືອງນີ້ ແມ່ນຖືກປະຮ້າງ ບໍ່ຕ່ຳກວ່າ 200 ປີຜ່ານມາແລ້ວ.

## 26. ແຫລ່ງທ່ອງທ່ຽວຈຸດຊົມວິວບ້ານນ້ຳແພ.



ຈຸດຊົມທິວທັດທຳມະຊາດ ຕັ້ງຢູ່ ບ້ານນ້ຳແພ ຫ່າງຈາກເທດສະບານ ເມືອງວຽງພູຄາ ໄປຕາມເສັ້ນທາງຫຼວງນ້ຳທາ-ບໍ່ແກ້ວ ຫ່າງຈາກເມືອງ 38 ກິໂລແມັດ. ທ່ານຈະໄດ້ແວ່ຊົມທຳມະຊາດ ຈາກບ້ານນ້ຳແພ ສາມາດມອງເຫັນ ທັດສະນີຍະພາບອັນງົດງາມຂອງພູ, ປ່າໄມ້ ແລະ ເຫັນຊາຍແດນລະຫວ່າງ ປະເທດມຽນມາໄດ້ອີກດ້ວຍ, ຈຸດຊົມວິວດັ່ງກ່າວ ໄດ້ສ້າງຂຶ້ນໃນປີ 2011 ແລະ ເປີດໃຊ້ບໍລິການໃນເດືອນ 5 ປີ 2012 ໂດຍທຶນການສະໜັບສະໜູນ ຂອງໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ (ADB) ນອກນີ້ ທ່ານຍັງ ສາມາດພັກແຮມກັບເຮືອນປະຊາຊົນໄດ້.



## 27. ຖ້ຳນ້ຳກຸດ.

ຖ້ຳນ້ຳກຸດ ເມືອງນາແລ ມີຄວາມໝາຍວ່າ ເປັນຖ້ຳທີ່ສັ້ນ ແລະ ໄລຍະຄວາມຍາວຂອງຖ້ຳພຽງແຕ່ 200 ປາຍແມັດ ແລະ ມີນ້ຳໄຫຼ ອອກມາຈາກຖ້ຳ ແລະ ຂ້ອນຂ້າງແຄບ ແຕ່ເມື່ອເວລາເຂົ້າໄປໃນຖ້ຳ (ບ່ອນທີ່ມືດສຸດ) ຈະເຫັນຫູ ບ່ອນທີ່ນ້ຳໄຫຼອອກມາ ແລະ ກັບຄືນອອກມາທາງເກົ່າ. ສຳລັບຢູ່ໃນຖ້ຳ ມັນຈະມີຮູບລັກສະນະຄ້າຍຄືນົມຢ່ອນລົງມາ ແລະ ບາງອັນຈະຄ້າຍຄືຮູບຄົນ. ຖ້ຳນ້ຳກຸດນີ້ຈະມີ 2 ຊັ້ນຄື: ຊັ້ນລຸ່ມທີ່ມີນ້ຳໄຫຼຜ່ານ ແລະ ຊັ້ນເທິງຈະແຫ້ງ. ນ້ຳທີ່ໄຫຼອອກຈາກຖ້ຳ ຈະເປັນປະເພດນ້ຳປູນ ເມື່ອມີໃບໄມ້ ຫລື ຂີ້ດິນຕົກໃສ່ນ້ຳ; ຈະກາຍເປັນກ້ອນຫີນປູນ ແລະ ຊາວບ້ານຈະບໍ່ສາມາດດື່ມນ້ຳນັ້ນໄດ້. ນ້ຳທີ່ໄຫລອອກຈາກຖ້ຳນ້ຳກຸດ ຈະມາຕົກເປັນນ້ຳຕົກຕາດ ທີ່ມີພາບສວຍງາມ, ເຊິ່ງຫ່າງຈາກຖ້ຳ ປະມານ 300 ແມັດ.







## 28. ຫລັກຊ້າງ.

ຖ້ຳຫຼັກຊ້າງ ຂຶ້ນກັບເມືອງນາແລ ເປັນຖ້ຳທີ່ກວ້າງ, ຍາວປະມານ 400 ແມັດ ແລະ ເຂົ້າໄປໃນຖ້ຳ ຈະມີທາງອອກຕ່າງຫາກ (ຢູ່ຫ່າງຈາກຖ້ຳ ນ້ຳກຸດ ປະມານ 100 ແມັດ). ຄຳວ່າ "ຫຼັກຊ້າງ" ໃນຖ້ຳຈະມີເສົາຫີນ 2 ອັນ ຕັ້ງຂຶ້ນ ແລະ ຄົນບູຮານສະໄໝແຕ່ກີ້ ຈະມັກ ເອົາຊ້າງໄປມັດໄວ້ຢູ່ເສົາຫີນໃນຖ້ຳ. ນັ້ນຈຶ່ງເອີ້ນວ່າ "ຖ້ຳຫລັກຊ້າງ" ແລະ ຍັງເປັນບ່ອນພັກອາໃສ ຂອງທະຫານຫວຽດນາມ ເຂົ້າມາຊ່ວຍລາວໃນສະໄໝສົງຄາມ. ໃນຖ້ຳຫລັກຊ້າງນີ້ ຈະມີສິ່ງທີ່ສວຍງາມ ແລະ ໜ້າປະທັບໃຈເຊັ່ນ: ມີສີເຫຼື້ອມຄືເພັດ ແລະ ຄຳສະທ້ອນອອກມາຈາກກ້ອນຫີນ ແລະ ຍັງມີຮູບຖ້າຍຄືນ້ຳແຂງຢອດຕົກລົງມາຄືລັກສະນະນ້ຳຕົກຕາດ ສຳລັບຖ້ຳນ້ຳກຸດ, ຖ້ຳຫລັກຊ້າງ, ນ້ຳຕົກຕາດ ແລະ ບ້ານເຜົ່າກືມມຸ ຈະຢູ່ສະຖານທີ່ບ່ອນດຽວກັນ (ຕິດກັນ) ແຫຼ່ງທ່ອງທ່ຽວເຫຼົ່ານີ້ ຈະຢູ່ຕິດກັບເສັ້ນທາງລົດ, ເຊິ່ງຈະຂີ່ລົດ ຫລື ຍ່າງປ່າກໍ່ໄດ້ ອີງຕາມຄວາມສົນໃຈຂອງນັກທ່ອງທ່ຽວ ເຊັ່ນ: ທ່ຽວຊົມຖ້ຳ, ບ້ານເຜົ່າກືມມຸ ແລະ ນ້ຳຕົກຕາດ.



## 29. ນ້ຳຕົກຕາດ ນ້ຳກຸດ.



ນ້ຳທີ່ໄຫຼອອກມາຈາກຖ້ຳນ້ຳກຸດ, ຫ່າງຈາກຖ້ຳນ້ຳກຸດ ປະມານ 400 ແມັດ ແລະ ມີລວງສູງປະມານ 45 ແມັດ. ໃນນັ້ນ ຈະມີສະຖານທີ່ກວ້າງ ເຊິ່ງເໝາະແກ່ການໄປຫຼິ້ນຫຼ່ອອາບນ້ຳຕົກຕາດ, ກິນເຂົ້າປ່າ, ສຳລັບ ສະຖານທີ່ນ້ຳຕົກຕາດນີ້ ຈະຢູ່ຕິດກັບສະຖານທີ່ດຽວກັນກັບ ຖ້ຳນ້ຳກຸດ.



## 30. ບ້ານຄອນຄຳ.

ບ້ານຄອນຄຳ ເມືອງນາແລ ເປັນບ້ານຂອງຊົນເຜົ່າລື້ ການເດີນທາງຫາບ້ານ ຕ້ອງເດີນທາງດ້ວຍທາງນ້ຳ ໂດຍການໃຊ້ ເຮືອລອງຕາມລ້ອງນ້ຳທາ ໄລຍະທາງຈາກເທດສະບານເມືອງຫາບ້ານ ໃຊ້ເວລາປະມານ 2 ຊົ່ວໂມງ 30 ນາທີ ແລະ ຊາວບ້ານ ກໍ່ມີເຮືອໂດຍສານໄວ້ຄອຍບໍລິການແກ່ແຂກຄົນ, ຊາວບ້ານໄປມາ ແລະ ນັກທ່ອງທ່ຽວອື່ນໆ. ບ້ານຄອນຄຳ ເປັນບ້ານຜະລິດຫັດຖະກຳຕ່ຳຜ້າ ປະເພດຜ້າຝ້າຍແບບພື້ນເມືອງ ຂອງຊົນເຜົ່າລື້ (ສິ້ນຝ້າຍ, ແພປູໂຕະ, ແພປູບ່ອນ) ທີ່ມີລວດລາຍ ແລະ ສີສັນທີ່ສວຍງາມຈາກສີມື ຂອງແມ່ຍິງຊົນເຜົ່າໄທລື້ເອງ.







# ແຂວງບໍ່ແກ້ວ

## 1. ບໍ່ນ້ຳຮ້ອນບ້ານນ້ຳເກິ່ງ ເຊື່ອມຕໍ່ກັບຕາດນ້ຳປອງ.



ບໍ່ນ້ຳຮ້ອນບ້ານນ້ຳເກິ່ງຕັ້ງຢູ່ ບ້ານນ້ຳເກິ່ງເກົ່າ, ເມືອງຕົ້ນເຜິ້ງ. ບໍ່ນ້ຳຮ້ອນແຫ່ງນີ້ ຖືກຄົ້ນພົບ ປີ ຄສ 1960 ມີໄລຍະຫ່າງຈາກເທດສະບານແຂວງໄປທາງທິດເໜືອ ປະມານ 29 ກິໂລແມັດ ແລະ ຫ່າງຈາກບ້ານນ້ຳເກິ່ງເກົ່າປະມານ 4 ກິໂລແມັດເຂົ້າໄປ ທາງຫົວນ້ຳຍາວ, ບໍ່ນ້ຳຮ້ອນແຫ່ງນີ້ເປັນອີກບ່ອນໜຶ່ງທີ່ເປັນບໍ່ນ້ຳຮ້ອນທຳມະຊາດ ມີ ຄວາມຮ້ອນປະມານ 75 - 80 ອົງສາ. ຕາມການໃຫ້ຂໍ້ມູນຂອງ ທ່ານ ຄາຜິວ ອຸ່ນ ປະເສີດ ນາຍບ້ານ ບ້ານນ້ຳເກິ່ງເກົ່າ ໄດ້ເວົ້າວ່າ ແຕ່ກ່ອນຜູ້ເຖົ້າຜູ້ແກ່ຢູ່ບ້ານນ້ຳເກິ່ງ (ບ້ານນາ) ໃນສະໄໝນັ້ນ ຊາວບ້ານຫຼາຍຄົນກໍ່ພາກັນຊອກບ່ອນທຳມາຫາກິນ ເປັນຕົ້ນແມ່ນຊອກຫາດິນນາ ມີຊາວບ້ານຫຼາຍຄົນພາກັນຂຸດເບິ່ງໄປເປັນຈຸດ ເປັນບ່ອນໆທີ່ບໍ່ມີໝາກຫີນຈຶ່ງເອົາບ່ອນນັ້ນເຮັດດິນນາປູກເຂົ້າ ຈົນໄປຮອດບ່ອນນີ້ ເຫັນວ່າມີຫີນຫຼາຍຕ່າງບ່ອນອື່ນ ແລະ ຫີນທີ່ຢູ່ທີ່ນັ້ນກໍ່ຮ້ອນ, ນ້ຳກໍ່ຮ້ອນ ແລະ ອອກ ອາຍຄືກັນກັບເພີ່ນຈູດໄຮ່, ໃນເວລານັ້ນຊາວບ້ານກໍ່ໄດ້ສັງເກດເຫັນວ່າມີສັດປ່າຫຼາຍ ຊະນິດມາກິນນ້ຳປຸ່ງຮ້ອນແຫ່ງນັ້ນເປັນແມ່ນຕົ້ນ: ກວາງ, ຟານ ແລະ ນົກ, ເມື່ອຂັ້ນ ເທິງຮູ້ແນວນັ້ນຈຶ່ງປະສານສົມທົບກັບອຳນາດການປົກຄອງບ້ານ ໃຫ້ອະນຸລັກຮັກສາ ໄວ້ເປັນແຫຼ່ງທ່ອງທ່ຽວແລ້ວຫ້າມຊາວບ້ານບໍ່ໃຫ້ຂຸດຄົ້ນ ຈົນມາຮອດ ປີ ຄສ 2006 - 2007 ຈຶ່ງໄດ້ສ້າງເປັນແຫຼ່ງທ່ອງທ່ຽວຂອງບ້ານໃຫຍ່ນ້ຳເກິ່ງເກົ່າຈົນເຖິງປັດຈຸບັນ

ນ້ຳປອງ ມີທີ່ຕັ້ງຢູ່ບ້ານນ້ຳເກິ່ງເກົ່າ, ມີໄລຍະຫ່າງຈາກເທດສະບານແຂວງ ປະມານ 29 ກິໂລແມັດ, ມີເສັ້ນທາງເຂົ້າເຖິງແຕ່ສະດວກປານໃດ, ນ້ຳຕົກຕາດນ້ຳ ປອງຖືກຄົ້ນພົບໃນປີ ຄສ 1972 ໃນສະໄໝນັ້ນແມ່ນລະບົບເກົ່າໄດ້ມາສ້າງ ຊົນລະປະທານ ໂດຍແມ່ນການສົມທົບທຶນຂອງລັດຖະບານ ກັບຊາວບ້ານທັງໝົດ ເພື່ອສ້າງຝາຍແຫ່ງນີ້ ຕໍ່ມາຈົນຮອດປີ ຄສ 1975 ຊາວບ້ານກໍ່ໄດ້ຊົມໃຊ້ຝາຍນີ້ເຮັດນາ ແຊງ ແລະ ນາປີ. ໃນ ປີ 1982 ທາງພາກລັດ ໄດ້ມີການສຳຫຼວດ ແລະ ເຫັນວ່າຈຸດ ນັ້ນມີນ້ຳຕົກຕາດນ້ຳປອງອັນສວຍສົດງົດງາມກົມກືນຕາມທຳມະຊາດ, ທີ່ມີພູຜາ ປ່າໄມ້ຂຽວສົດງົດງາມ ຈົນມີຊື່ສຽງໂດ່ງດັງໄປຮອດປະເທດເພື່ອນບ້ານເຮັດໃຫ້ມີນັກ ທ່ອງທ່ຽວເຂົ້າມາທ່ຽວຊົມ, ຕັ້ງແຕ່ນັ້ນມາປະຊາຊົນບ້ານນ້ຳເກິ່ງເກົ່າກໍ່ໄດ້ອະນຸລັກ ຮັກສາ ແລະ ສ້າງຕາດແຫ່ງນີ້ໃຫ້ເປັນແຫຼ່ງທ່ອງທ່ຽວຂອງບ້ານຈົນເຖິງປັດຈຸບັນ. ເຊິ່ງ ໃນປັດຈຸບັນທາງແຂວງໄດ້ມີໂຄງການພັດທະນາບໍ່ນ້ຳຮ້ອນບ້ານນ້ຳເກິ່ງ ແລະ ມີ ນັກທຸລະກິດຕ່າງປະເທດໃຫ້ຄວາມສົນໃຈຢາກລົງທຶນພັດທະນາເປັນແຫຼ່ງທ່ອງທ່ຽວ ເຊື່ອມຕໍ່ກັບຕາດນ້ຳປອງ ແລະ ບ້ານ ນ້ຳເກິ່ງເກົ່າ ໃຫ້ກາຍເປັນສະຖານທີ່ບໍລິການ ດ້ານການທ່ອງທ່ຽວທີ່ຕິດພັນກັບວັດທະນະທຳຮີດຄອງປະເພນີຂອງຊົນເຜົ່າລື້ ເພາະ ບ້ານນີ້ເປັນບ້ານວັດທະນະທຳ, ມີທັງສິ່ງອຳນວຍຄວາມສະດວກ ແລະ ແຫຼ່ງທ່ອງ ທ່ຽວທີ່ໜ້າສົນໃຈຫຼາຍແຫ່ງ ເຊັ່ນ: ພະທາດສຸວັນນະເກິ່ງຄຳ, ຫີນສີວະລົງ, ຮ້ານເຂົ້າ ຊອຍແຊບບ້ານນ້ຳເກິ່ງ, ຮ້ານຫັດຖະກຳຜ້າຝ້າຍ ລາວ - ລື້ ປ້າບົວພັດ, ຜະລິດຕະພັນ ສິນຄ້າໂອດ້ອບ ຕ່າງໆໃຫ້ແກ່ນັກທ່ອງທ່ຽວໄດ້ທ່ຽວຊົມ ແລະ ທ່ຽວຊື້ທີ່ຫຼາກຫຼາຍ.

## 2. ດອນປຸ່ງ.





ດອນປຸ່ງ ຕັ້ງຢູ່ບ້ານໃຫຍ່ຫ້ວຍຊາຍໃຕ້ ເຂດໃຈກາງເທດສະບານເມືອງຫ້ວຍຊາຍ ເຊິ່ງເປັນດອນຢູ່ກາງແມ່ນ້ຳຂອງ ມີການເຂົ້າເຖິງທີ່ສະດວກສະບາຍ ດ້ວຍການຂີ່ເຮືອຂ້າມໄປໂດຍໃຊ້ເວລາບໍ່ເກີນ 5 ນາທີເທົ່ານັ້ນ. ເຊິ່ງຕັ້ງແຕ່ສະໄໝປູ່ຍ່າຕາຍາຍຜ່ານມາ ໄດ້ຖືເອົາດອນແຫ່ງນີ້ ເປັນສະຖານທີ່ຈັດກິດຈະກຳບຸນປີໃໝ່ລາວ (ລົງດອນ) ໃນມື້ສັງຂານລ່ວງ ທີ່ປະກອບມີກິດຈະກຳຕົບພະທາດຊາຍ ເພື່ອສັກກາລະບູຊາແມ່ນ້ຳ, ການຂາຍອາຫານການກິນ, ການຫຼິ້ນກິລາພື້ນບ້ານເຊິ່ງເປັນການສືບທອດມາແຕ່ດຶກດຳບັນຈົນເຖິງປັດຈຸບັນ ເມື່ອເຖິງເທດສະການປີໃໝ່ລາວຂອງແຕ່ລະປີ ປະຊາຊົນກໍ່ຈະພາກັນຂີ່ເຮືອຂ້າມໄປດອນ ເພື່ອຕົບທາດ, ມີການປະກວດຕົບທາດຂອງແຕ່ລະບ້ານ, ມີປະຊາຊົນມາຂາຍເຄື່ອງໃຫ້ແກ່ນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ ທີ່ພາກັນມາຫຼິ້ນບໍລິເວນນີ້ເປັນຈຳນວນຫຼາຍ ແລະ ປະຈຸບັນນີ້ ແຂວງໄດ້ກຳນົດເອົາດອນແຫ່ງນີ້ ເປັນສະຖານທີ່ຈັດງານປີໃໝ່ 2 ຝັ່ງຂອງ (ຫ້ວຍຊາຍ - ຊຽງຂອງ ຣາຊະອານາຈັກໄທ) ເຊິ່ງໄດ້ຈັດຂຶ້ນ 2 ຄັ້ງແລ້ວ ປະກອບມີຫຼາກຫຼາຍກິດຈະກຳຮ່ວມກັນ ເຊັ່ນ: ການສະແດງສິລະປະວັນນະຄະດີສອງຝັ່ງຂອງ, ການຫຼິ້ນກິລາພື້ນເມືອງ (ດຶງເຊືອກ, ປີນເສົານ້ຳມັນ, ຕີມອຍນ້ຳ) ການປະກອບອາຫານພື້ນບ້ານສອງຝັ່ງ, ກິດຈະກຳແຂ່ງຂັນຕົບພະທາດຊາຍ 18 ໝູ່ບ້ານໃນເທດສະບານ, ແຕ່ໃນຕໍ່ໜ້າ ທາງແຂວງກໍ່ໄດ້ມີໂຄງການພັດທະນາດອນປຸ່ງແຫ່ງນີ້ ໃຫ້ກາຍເປັນສະຖານທີ່ພັກຜ່ອນ ແລະ ບໍລິການດ້ານການທ່ອງທ່ຽວແບບຄົບວົງຈອນ ທີ່ມີທັງ ລີສອດ, ເຮືອນພັກ, ຮ້ານຂາຍເຄື່ອງທີ່ລະນຶກ ແລະ ອື່ນໆ ໂດຍແມ່ນການສະເໜີຂໍສຳປະທານຈາກກຸ່ມບໍລິສັດຮ່ວມມືພັດທະນາຫາຍເຊິ່ງ (ຈີນ) ນັ້ນເອງ.

## 3. ປ່າສະຫງວນແຫ່ງຊາດນ້ຳກ່ານ.




ປ່າສະຫງວນແຫ່ງຊາດນ້ຳກ່ານຕັ້ງຢູ່ ບ້ານຕູບ, ເມືອງຫ້ວຍຊາຍ ແຂວງບໍ່ແກ້ວ ຫ່າງຈາກເທດສະບານແຂວງໄປທາງທິດໃຕ້ປະມານ 84 ກິໂລແມັດ, ມີເນື້ອທີ່ 136,000 ເຮັກຕາ ນັບແຕ່ເດືອນກັນຍາ 2008 ປ່າສະຫງວນແຫ່ງຊາດນ້ຳກ່ານໄດ້ຖືກປະກາດເປັນປ່າສະຫງວນແຫ່ງທີ່ 21 ຢ່າງເປັນທາງການຂອງ ສປປລາວ. ເຂດປ່າສະຫງວນດັ່ງກ່າວ ກໍ່ເປັນປ່າທີ່ໄດ້ຮັບການຢັ້ງມຢາມຫຼາຍທີ່ສຸດ ໃນການສົ່ງເສີມການນຳໃຊ້ສິ່ງອຳນວຍຄວາມສະດວກ ຄູ່ຮ່ວມງານກາກບອນປ່າໄມ້ (FCPF, Forets Carbon Partnership Facility) ແລະ ແຜນງານ REDD+ ການລຸດຜ່ອນການປ່ອຍອາຍແກັດເຮືອນແກ້ວ ຈາກການຕັດໄມ້ທຳລາຍປ່າ ແລະ ການເຮັດໃຫ້ປ່າເຊື່ອມໂຊມ, (Reducing Emissions Deforestation and Forest Degradation)ໃນປີ 2010 ຊີວະນາໆພັນຂອງໂລກ, ບໍລິສັດອະນຸລັກຊີວະນາໆພັນ ເອນີໂມໄດ້ບັນລຸຜົນສຳເລັດດ້ານການປົກປັກຮັກສາປ່າໄມ້, ການທ່ອງທ່ຽວການປູກຕົ້ນໄມ້ ແລະ ການສະໜັບສະໜູນການຫັນກະສິກຳຈາກການເຮັດໄຮ່ມາເປັນການເຮັດນາຄົງທີ່ເພື່ອຮັບປະກັນລະດັບການປົກປັກຮັກສາ ແລະ ສ້າງມູນຄ່າໃຫ້ແກ່ປ່າສະຫງວນໃຫ້ນັບມື້ນັບດີຂຶ້ນ. ການພັດທະນາໂຄງການ Gibbon Experience ໃນປ່າສະຫງວນແຫ່ງຊາດນ້ຳກ່ານ ເຊິ່ງວັດຖຸປະສົງຕົ້ນຕໍແມ່ນເພື່ອປົກປັກຮັກສາຕົ້ນໄມ້ດ້ວຍການພັດທະນາການທ່ອງທ່ຽວແບບທຳມະຊາດ ເພື່ອສາມາດຊ່ວຍປະກອບທຶນສ່ວນໜຶ່ງໃຫ້ແກ່ການປົກປັກຮັກສາຊີວະນາໆພັນໃຫ້ຜົນປະໂຫຍດແກ່ແຂວງບໍ່ແກ້ວ

ໃນປະຈຸບັນດ້ວຍຫຼາຍຮູບແບບໃນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ໂຄງການໄດ້ສ້າງວຽກງານດ້ານການທ່ອງທ່ຽວ ໃຫ້ປະຊາຊົນເຂດຊົນນະບົດໂດຍຈິດວິນຍານໃນການປົກປັກຮັກສາ ຊັບພະຍາກອນທຳມະຊາດ. ໃນເມື່ອກ່ອນຫ້ວຍຊາຍທີ່ພຽງແຕ່ເປັນດ່ານຊາຍແດນໄດ້ກາຍມາເປັນຈຸດໝາຍປາຍທາງການທ່ອງທ່ຽວ, ການສ້າງວຽກເຮັດງານທຳໃນຂະແໜງການທ່ອງທ່ຽວທຳມະຊາດ ແລະ ເພື່ອປົກປັກຮັກສາປ່າໄມ້ເພື່ອຫຼຸດຜ່ອນການຖາງໄຮ່ ແລະ ຈູດປ່າໂດຍບໍລິສັດເປັນສ່ວນປະກອບໜຶ່ງໃນການປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດຄັ້ງທີ 6 ຂອງລັດຖະບານລາວ, ເຊິ່ງໄດ້ກ່າວໄວ້ໃນຍຸດທະສາດແຫ່ງຊາດ ເພື່ອພັດທະນາ ແລະ ການລຶບລ້າງຄວາມທຸກຍາກຮອດປີ 2020. ປ່າສະຫງວນແຫ່ງຊາດ




ນ້ຳກ່ານ ໄດ້ຮັບການສຳປະທານຈາກພາກສ່ວນເອກະຊົນໃນການຄຸ້ມຄອງ ແລະ ພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວໃຫ້ມີຄວາມດຶງດູດໃຈນັກທ່ອງທ່ຽວຫຼາຍຂຶ້ນ ໃນນາມບໍລິສັດອະນຸລັກຊີວະນາໆພັນ (the Gibbon Experience) ຂອງທ່ານ ຊັງຟຣັງຊົວ ເຣີມົວ ເປັນນັກລົງທຶນຊາວຝຣັ່ງເສດ ເປັນຜູ້ບໍລິຫານ ທັງເປັນເຈົ້າຂອງບໍລິສັດ ທີ່ເປັນໂຄງການປູກປ່າ ແລະ ອະນຸລັກສັດປ່າ ມາສຳປະທານໂຄງການຄຸ້ມຄອງຊັບພະຍາກອນທຳມະຊາດຂອງຊຸມຊົນທ້ອງຖິ່ນແບບຄົບວົງຈອນ ໃນເຂດປ່າສະຫງວນແຫ່ງນີ້. ເຊິ່ງນັບແຕ່ປີ 2006 ທີ່ໄດ້ມີການຄົ້ນພົບປ່າສະຫງວນນ້ຳກ່ານ, ມີການລົງສຳຫຼວດ ແລະ ພັດທະນາ ຈົນມາຮອດ ປີ 2008 ປ່າສະຫງວນດັ່ງກ່າວກໍ່ໄດ້ຖືກປະກາດໃຫ້ເປັນປ່າສະຫງວນແຫ່ງຊາດ ແຫ່ງທີ່ 21 ຂອງ ສປປລາວ ໂດຍມີຈຸດປະສົງ ເພື່ອຄຸ້ມຄອງຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດ ເຮັດໃຫ້ປ່າສະຫງວນແຫ່ງນີ້ ເປັນບ່ອນທີ່ໄດ້ຮັບການຢ້ຽມຢາມຫຼາຍທີ່ສຸດຈາກນັກທ່ອງທ່ຽວ ເພາະໃນນີ້ ມີທັງການຮອງຮັບຄວາມສະດວກໃນການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກຫຼາຍຢ່າງ ເນື່ອງຈາກປ່າສະຫງວນແຫ່ງຊາດນ້ຳກ່ານ ໄດ້ກາຍເປັນແຫຼ່ງທ່ອງທ່ຽວລະດັບຊາດ ທີ່ມີນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຂົ້າທ່ຽວຊົມເປັນຈຳນວນຫຼາຍ. ດັ່ງນັ້ນ, ຈຶ່ງໄດ້ຮັບຄວາມສົນໃຈ ແລະ ໄດ້ຮັບການສຳປະທານຈາກພາກສ່ວນເອກະຊົນໃນການຄຸ້ມຄອງ ແລະ ພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວນີ້ ໃຫ້ມີຄວາມດຶງດູດໃຈນັກທ່ອງທ່ຽວຫຼາຍຂຶ້ນ.

## 4. ເມືອງເກົ່າສຸວັນນະໂຄມຄຳ.

ເມືອງເກົ່າສຸວັນນະໂຄມຄຳຮ້າງຕັ້ງຢູ່ຈຸດຕາເວັນຕົກສຸດຂອງປະເທດລາວ ຄື ຫ່າງຈາກເມືອງຫ້ວຍຊາຍໄປທາງທິດຕາເວັນຕົກປະມານ 40 ກິໂລແມັດ ທາງອາກາດ ຫຼື 60 ກິໂລແມັດ ທາງນ້ຳ ໃນຂອບເຂດບ້ານດອນທາດ ເມືອງຕົ້ນເຜິ້ງ, ຫ່າງຈາກ ເທດສະບານເມືອງຕົ້ນເຜິ້ງປະມານ 5 ກິໂລແມັດ ແລະ ໄລຍະທາງຈາກ ບ້ານດອນ ທາດ ເຂົ້າສູ່ເມືອງເກົ່າສຸວັນນະໂຄມຄຳແມ່ນ 3 ກິໂລແມັດ, ເວົ້າໄດ້ວ່າເປັນສະຖານທີ່ ທີ່ມີຄວາມສະດວກສະບາຍໃນການເດີນທາງເຂົ້າເຖິງ. ຕາມຕຳນານຂອງ ປະເທດສີ ລັງກາ ທ່ານ ຝຣັ່ງຊິດ ກາເຍ ໄດ້ຂຽນໄວ້ໃນປຶ້ມ "ການສຳຫຼວດແມ່ນ້ຳຂອງ" ຂອງ ທ່ານໃນສະຕະວັດທີ 19 ໄດ້ເວົ້າໄວ້ວ່າ: ເມືອງເກົ່າສຸວັນນະໂຄມຄຳນັ້ນ ໄດ້ປາກົດຕົວ ຂຶ້ນໃນສະຕະວັດທີ 5 ຂອງຄຣິສຕະສັງກາດ ແລະ ຕາມຕຳນານນ້ຳຖ້ວມໂລກ ໄດ້ ເວົ້າເຖິງພະຍາສີສັດຕະນາກ ທີ່ເກີດເມືອງໜອງກະແສແສນຍ່ານ ໄດ້ນຳລີ້ພົນ 7 ໂກດ ທະລຸລົງຕາມລຳນ້ຳຂອງ, ອັນໄດ້ກາຍເປັນນາກ 15 ຕະກຸນ ຢູ່ຫຼວງພະບາງໃນໄລຍະຕໍ່ ມາ, ນອກນັ້ນ ຍັງຮູ້ອີກວ່າຊາວເມືອງໂພທິສານຫຼວງ (ສີໂຄດຕະບອງ ຫຼື ໂຄຕະ ປຸລະ) ນັ້ນແມ່ນເຊື້ອສາຍຂອມ. ຕຳນານຍັງບອກໃຫ້ຮູ້ອີກວ່າ: ເມືອງນີ້ໄດ້ມີການເຕີບ ໃຫຍ່ຂຶ້ນຢ່າງໄວວາ ພຽງແຕ່ 3 ປີເທົ່ານັ້ນກໍ່ມີບ້ານເຮືອນຂອງໄພ່ພົນເຖິງໜຶ່ງແສນຫຼັງ, ຕໍ່ມາເມືອງສຸວັນນະໂຄມຄຳໄດ້ມີການປະພຶດທີ່ບໍ່ຊື່ສັດຕໍ່ພໍ່ຄ້າ ເຊິ່ງເປັນຊາວນາກຫຼວງ ພະບາງ ອັນເປັນສາເຫດກໍ່ໃຫ້ເກີດຄວາມຜິດຂ້ອງຕ້ອງຖຽງກັນ ພວກເຂົາເຈົ້າຈຶ່ງໄດ້ ຍົກລີ້ພົນຂຶ້ນເມືອທຳລາຍເມືອງສຸວັນນະໂຄມຄຳຈົນຮາບກ້ຽງ ເຮັດໃຫ້ຊາວເມືອງ ແຕກຕື່ນໄປທົ່ວທຸກສາລະທິດ ເຊັ່ນ: ທິດອຸມຸງ, ສີຊັດຊະນາໄລ ແລະ ຫຼວງພະບາງ ເຫຼົ່ານີ້ເປັນຕົ້ນ.



ເມືອງສຸວັນນະໂຄມຄຳແຫ່ງນີ້ນັບໄດ້ວ່າໄດ້ຜ່ານຂະບວນການຖືກທຳລາຍ ແລະ ໄດ້ຮັບການຟື້ນຟູມາຫຼາຍຄັ້ງຫຼາຍຫົນ ພາຍໃຕ້ຊື່ຕ່າງໆກວ່າຈະກາຍມາເປັນ ສະພາບນະຄອນຮ້າງທີ່ເຫຼືອພຽງຮ່ອງ ຮອຍປະໄວ້, ເຊິ່ງສາມາດຈັດເປັນແຫຼ່ງທ່ອງ ທ່ຽວລະດັບແຂວງ ທີ່ພາກສ່ວນແຂວງຄຸ້ມຄອງເອງ, ຕາມການສຳຫຼວດໃນເບື້ອງຕົ້ນ ພົບວ່າມີ 44 ບູຮານສະຖານກໍ່ສ້າງດ້ວຍອິດ ແລະ ປະທາຍ ອັນເປັນພຸດທະສີມມາ, ພະທາດ, ພະພຸດທະຮູບ, ນ້ຳສ້າງ ແລະ ອື່ນໆ ທີ່ຍັງຄົງຫຼົງເຫຼືອຈາກໂຈນປຸ້ນສົມບັດ



ທັງໄທ ແລະ ລາວ, ແຕ່ສິ່ງທີ່ຊີງຄວາມງົດງາມສະຫງ່າຕະການ ໃນສະໄໝກ່ອນນັ້ນໄດ້ແກ່ພະພຸດທະອົງປາງສະມາທິ ເປັນພະພຸດທະຮູບອົງໃຫຍ່ ທີ່ມີໜ້າຕັກກ້ວາງ 7,10 ແມັດ, ສູງ 7,22 ແມັດ (ບໍ່ນັບຍອດເກດ), ບ່າແຕ່ລະຂ້າງ 1,10 ແມັດ, ດ້ານຂ້າງແຕ່ກະໂພກຫາເຂົ່າ 3,60 ແມັດ ເຊິ່ງນັບວ່າເປັນພະພຸດທະຮູບອົງໜຶ່ງ ທີ່ໃຫຍ່ທີ່ສຸດໃນປະເທດລາວ ແລະ ໃນຍ່ານອາຊີອາຄະເນ, ນອກນັ້ນ ກໍ່ຍັງມີປູສະນີຍະສະຖານທີ່ຍັງຄົງຫຼົງເຫຼືອຢູ່ຈຳນວນໜຶ່ງ ສັນນິຖານໄດ້ວ່າແມ່ນມາຈາກຍຸກຂອງນະຄອນຊຽງແສນເປັນສ່ວນໃຫຍ່, ເປັນຕົ້ນແມ່ນ ໃນສະໄໝເຈົ້າໄຊຍະເສດຖາທິຣາດ ເຊິ່ງພະອົງໄດ້ໃຫ້ການສະຖາປະນາ, ບູລະນະໃຫ້ເປັນນະຄອນທີ່ສວຍສົດງົດງາມ ຕາມຝັ່ງແມ່ນ້ຳຂອງ ແລະ ຕໍ່ມາ ກໍ່ໄດ້ຖືກພັງທະລາຍລົງ ໂດຍການຮຸກຮານຂອງກອງທັບພະມ້າ ຫຼົງເຫຼືອໄວ້ພຽງແຕ່ຮ່ອງຮອຍປະຫວັດສາດໃຫ້ແກ່ຄົນຮຸ່ນຫຼັງໄດ້ສຶກສາຮ່ຳຮຽນຕໍ່ໄປ ທັງເປັນສະຖານທີ່ອະນຸລັກ ແລະ ຫວງຫ້າມ, ເປັນອຸທິຍານບ່ອນສຶກສາຫາຄວາມຮູ້ ບ່ອນທ່ອງທ່ຽວ ແລະ ພັກຜ່ອນຍ່ອນອາລົມຂອງນັກຄົ້ນຄວ້າ, ນັກສຶກສາ, ນັກນິຍົມຂອງເກົ່າ ແລະ ສະຫງວນວັດທະນາທຳທີ່ຫຼາກຫຼາຍ ກໍ່ຄືທຳມະຊາດທີ່ສ່ວຍງາມປອດໂປ່ງ ແລະ ບໍ່ໄກຈາກປູຊະນີຍະສະຖານແຫ່ງນີ້ ກໍ່ມີສິ່ງດຶງດູດໃຈທ່ານຜູ້ມາຢາມທີ່ນີ້ບໍ່ໜ້ອຍ ນັ້ນຄື: ບໍ່ນ້ຳຮ້ອນ, ຮ່ອງຮອຍອາດີດສາມຫຼ່ຽມທອງຄຳ, ຖ້ຳຄູຫາ, ວິຖີຊີວິດຂອງບັນດາຊົນເຜົ່າຕ່າງໆທີ່ຫຼາກຫຼາຍ. ນອກຈາກນັ້ນແລ້ວ ອັນພິເສດນັ້ນແມ່ນ ເມື່ອເຖິງປາງບຸນອອກພັນສາ ທ່ານກໍ່ຈະໄດ້ຊົມການໄຫຼເຮືອໄຟບູຊາພະຍານາກ ບ່ອນທີ່ເປັນກົກເຄົ້າຂອງປະເພນີນີ້.

## 5. ຄ້າຍເກົ່າທະຫານຝຣັ່ງ.





ຄ້າຍເກົ່າທະຫານຝຣັ່ງ ມີທີ່ຕັ້ງຢູ່ຈຸດໃຈກາງເທດສະບານເມືອງຫ້ວຍຊາຍ, ການເຂົ້າທ່ຽວຊົມແຫຼ່ງທ່ອງທ່ຽວແຫ່ງນີ້ ກໍ່ສາມາດເວົ້າໄດ້ວ່າມີຄວາມສະດວກສະບາຍຫຼາຍ. ຄ້າຍແຫ່ງນີ້ ເປັນສະຖານທີ່ທາງປະຫວັດສາດສະໄໝສົງຄາມອິນດູຈີນ, ຖືກສ້າງຕັ້ງຂຶ້ນໃນປີ 1900 ຄ້າຍທະຫານແຫ່ງນີ້ ໄດ້ມີການສຳຫຼວດ ແລະ ໄດ້ພັດທະນາໃຫ້ກາຍເປັນແຫຼ່ງທ່ອງທ່ຽວລະດັບແຂວງ ເຊິ່ງເປີດບໍລິການຢ່າງເປັນທາງການໃນປີ 2012, ປະຫວັດຄວາມເປັນມາຂອງຄ້າຍແຫ່ງນີ້ ແມ່ນອີງຕາມການເລົ່າຂານຂອງຄົນເຖົ້າຄົນແກ່ໄດ້ເວົ້າໄວ້ວ່າ: ພາຍຫຼັງທີ່ປະເທດລາວໄດ້ຖືກຈັດເຂົ້າເປັນແຄວ້ນໜຶ່ງຂອງອານາເຂດຝຣັ່ງປົກຄອງອິນດູຈີນ ໃນປີ 1893 ພວກເຂົາໄດ້ສ້າງຕັ້ງຄ້າຍແຫ່ງນີ້ຂຶ້ນມາ ເພື່ອເປັນສູນບັນຊາການດ້ານການທະຫານ, ຈົນມາເຖິງປີ 1945 ປະເທດລາວກໍ່ໄດ້ປະກາດເອກະລາດຈາກຝຣັ່ງ ກອງທັບລາຊະອານາຈັກລາວ ກໍ່ໄດ້ນຳໃຊ້ຄ້າຍແຫ່ງນີ້ຈົນຮອດປີ 1975. ຫຼັງຈາກນັ້ນເປັນຕົ້ນມາ ຄ້າຍທະຫານດັ່ງກ່າວ ແມ່ນຢູ່ໃນຄວາມຮັບຜິດຊອບຂອງກອງທັບປະຊາຊົນປະຕິວັດລາວ ຈົນມາເຖິງໄລຍະບໍ່ດົນມານີ້ ຄ້າຍເກົ່າທະການຝຣັ່ງ ກໍ່ໄດ້ຖືກໂອນມາຢູ່ໃນຄວາມຮັບຜິດຊອບຂອງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຈົນມາເຖິງປັດຈຸບັນ, ເຊິ່ງໃນຕໍ່ໜ້າ ກໍ່ມີແຜນໂຄງການປັບປຸງ ແລະ ພັດທະນາຄ້າຍເກົ່າທະຫານຝຣັ່ງ ໃຫ້ກາຍເປັນສູນການສຶກສາຮຽນຮູ້ປະຫວັດສາດຂອງຈັກກະພັດ ທີ່ຮຸກຮານລາວ ແລະ ບໍລິການຂໍ້ມູນຂ່າວສານການທ່ອງທ່ຽວ ພາກເໜືອຂອງລາວ ທີ່ຕິດພັນກັບການທ່ອງທ່ຽວດ້ານປະຫວັດສາດ.

## 6. ພູຜາຮຸ້ງ - ພູຜາແດງ ຕິດພັນກັບຕາດນໍ້າຍອນ.





ພູຜາຮຸ້ງ ຕັ້ງຢູ່ ບ້ານປະນະ, ເມືອງຫ້ວຍຊາຍ ມີໄລຍະຫ່າງຈາກເທດສະບານແຂວງໄປທາງທິດເໜືອ ປະມານ 28 ກິໂລແມັດ. ພູແຫ່ງນີ້ໄດ້ຖືກຄົ້ນພົບໃນປີ 2010 ແລະ ໄດ້ມີການພັດທະນາ ໃຫ້ເປັນແຫຼ່ງທ່ອງທ່ຽວຢ່າງຄຶບວິງຈອນຂຶ້ນໃນປີ 2011, ເຊິ່ງບ້ານເປັນພາກສ່ວນຄຸ້ມຄອງ ແລະ ຖືກຈັດລະດັບເປັນແຫຼ່ງທ່ອງທ່ຽວລະດັບແຂວງນັ້ນເອງ. ພູຜາຮຸ້ງມີນິທານເລົ່າຂານກັນວ່າ: ໃນສະໄໝແຕ່ກີ້ ມີພະຍາຮຸ້ງສອງຜົວເມຍ ໄດ້ອາໄສຢູ່ເທິງພູຜາຮຸ້ງ ເພື່ອຊອກກິນສັດນ້ອຍໃຫຍ່, ມີນິໄສດຸຮ້າຍຈົນໃນບາງຄັ້ງ ກໍ່ກິນຮອດມະນຸດ. ເມື່ອເລື່ອງນີ້ໄດ້ຍິນໄປເຖິງພະຍາແຖນ ເພິ່ນຈຶ່ງໄດ້ເອີ້ນເອົາພະຍາຮຸ້ງສອງຜົວເມຍນັ້ນ ມາກ່າວຕັກເຕືອນຫຼາຍຄັ້ງ ແຕ່ກໍ່ບໍ່ຍອມເຊື່ອຟັງ, ພະຍາແຖນເກີດຄວາມໃຈຮ້າຍ ຈຶ່ງໄດ້ສາບໃຫ້ພະຍາຮຸ້ງສອງໂຕດັ່ງກ່າວ ກາຍເປັນຫີນ ແຕ່ເຖິງຈະເປັນຫີນກໍ່ຕາມ ວິນຍານຂອງພະຍາຮຸ້ງ ກໍ່ຍັງຄືງຄວາມດຸຮ້າຍ ເມື່ອໃດມີຄວາມຫິວໂຫຍ ກໍ່ຈະເປັ່ງສຽງອອກມາຢ່າງແຮງ ຈົນໄດ້ຍິນໄປທົ່ວບໍລິເວນນັ້ນ ແລ້ວແກ່ວງຫົວໄປມາ, ຖ້າຫົວຂອງພະຍາຮຸ້ງປິ່ນໄປທາງທິດໃດ ກໍ່ຈະມີຜູ້ຄົນໃນທິດນັ້ນ ລົ້ມຫາຍຕາຍຈາກໄປ, ສັດສາວາສິ່ງໃນຂົງເຂດດັ່ງກ່າວ ກໍ່ເກີດຄວາມແຕກຕື່ນ ຍ້ອນເຫດນີ້ພະຍາແຖນ ຈຶ່ງເຮັດໃຫ້ເກີດຟ້າຜ່າໃສ່ຫີນຂອງພະຍາຮຸ້ງໂຕຜົວມຸ່ນທະລາຍລົງ ຍັງຄົງເຫຼືອແຕ່ຫີນຂອງນາງຮຸ້ງໂຕເມຍ ຈັບງອຍຜາຫີນຢູ່ໂຕດຽວດ້ວຍຄວາມໂສກເສົ້າອາໄລຫຼັງຈາກນັ້ນມາ ເຫດການວຸ່ນວາຍດັ່ງກ່າວກໍ່ຍຸດຕິລົງ ຈົນມາເຖິງປັດຈຸບັນ ກໍ່ປາກົດວ່າຍັງເຫັນຮຸ້ງນ້ອຍສອງຜົວເມຍ ບິນອອກມາຫຼິ້ນໃນບໍລິເວນນີ້ທຸກມື້ອັນສິນ ແຕ່ປະຊາຊົນກໍ່ບໍ່ໄດ້ທຳລາຍ ເພາະຢ້ານກົວຕໍ່ສິ່ງສັກສິດ.

ພູຜາແດງ ມີທີ່ຕັ້ງຢູ່ບ້ານລາວຫຼວງ, ເມືອງຫ້ວຍຊາຍ ມີໄລຍະຫ່າງຈາກເທດສະບານແຂວງປະມານ 26 ກິໂລ ແມັດ. ພູແຫ່ງນີ້ ເປັນສະຖານທີ່ທ່ອງທ່ຽວທາງທຳມະຊາດທີ່ສວຍງາມແຫ່ງໜຶ່ງ ທີ່ໄດ້ຮັບການລົງສຳຫຼວດໃນປີ 2010 ແລະ

ພັດທະນາໃຫ້ກາຍເປັນແຫຼ່ງທ່ອງທ່ຽວຂຶ້ນໃນປີ 2011, ເປັນແຫຼ່ງທ່ອງທ່ຽວລະດັບແຂວງ ໂດຍມີການຄຸ້ມຄອງຈາກພາກສ່ວນບ້ານນັ້ນເອງ. ພູດັ່ງກ່າວເປັນພູປະຫວັດສາດໃນສະໄໝອາເມລິກາດຳເນີນສົງຄາມຢູ່ລາວ ເຊິ່ງນອກຈາກການຍ່າງປ່າທ່ຽວຊົມທຳມະຊາດແລ້ວ ນັກທ່ອງທ່ຽວ ກໍ່ຍັງໄດ້ທ່ຽວຊົມຮ່ອງຮອຍປະຫວັດສາດຂອງຄ້າຍທະຫານເກົ່າອາເມລິກາທີ່ຢູ່ເທິງພູ ເຊັ່ນ: ຖໍ້າຫີນທີ່ເປັນບ່ອນປະຈຳການ, ເດີ່ນຍົນ, ປືນໃຫຍ່ ແລະ ຄອງເໝືອງ.

ນໍ້າຕົກຕາດນໍ້າຍອນ ຕັ້ງຢູ່ບ້ານປະນະ, ເມືອງຫ້ວຍຊາຍ ມີໄລຍະຫ່າງຈາກເທດສະບານແຂວງປະມານ 25 ກິໂລແມັດ, ໃນປັດຈຸບັນໄດ້ມີການພັດທະນາໃຫ້ມີຄວາມສະດວກດ້ານການເຂົ້າເຖິງເຊິ່ງສາມາດເດີນທາງເຂົ້າໄປແຫຼ່ງທ່ອງທ່ຽວດ້ວຍລົດນັ້ນເອງ. ຕາດນ້ຳຍອນ ເປັນຕາດທີ່ມີຄວາມສວຍສົດງົດງາມ ເປັນສະຖານທີ່ທ່ອງທ່ຽວທີ່ມີມາແຕ່ດົນນານຈົນກາຍເປັນທີ່ຮູ້ຈັກຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ. ຕາດດັ່ງ ກ່າວນີ້ໄດ້ມີການລົງສຳຫຼວດ, ມີແຜນພັດທະນາ ແລະ ໃດ້ເລີ່ມເປີດບໍລິການຕັ້ງແຕ່ປີ 2012 ເປັນຕົ້ນມາ, ໂດຍພາກສ່ວນເອກະຊົນເປັນຜູ້ຄຸ້ມຄອງ, ແຫຼ່ງທ່ອງທ່ຽວແຫ່ງນີ້ ກໍ່ຍັງຈັດເປັນແຫຼ່ງທ່ອງທຽວລະດັບແຂວງນັ້ນເອງ.

ເຊິ່ງທາງແຂວງ ໄດ້ມີໂຄງການພັດທະນາເຂດພູຜາຮຸ້ງ ພູຜາແດງ ຕິດພັນກັບຕາດນໍ້າຍອນ ສ້າງກິດຈະກຳການຍ່າງປ່າ, ຂີ່ສະລິງ ແລະ ພັກແຮມຊົ່ວຄາວໃຫ້ແກ່ນັກທ່ອງທ່ຽວ.



## 7. ນ້ຳລອດພູຊ້າງ.



ແຫຼ່ງທ່ອງທ່ຽວ ນ້ຳລອດພູຊ້າງຈຽງຕອງ ເປັນສະຖານແຫຼ່ງທ່ອງທ່ຽວແຫ່ງໃໝ່ອີກຈຸດໜຶ່ງຂອງແຂວງບໍ່ແກ້ວ, ມີທີ່ຕັ້ງຢູ່ບ້ານຈຽງຕອງ ເມືອງປາກທາ ຫ່າງຈາກເທດສະບານແຂວງໄປທາງທິດໃຕ້ປະມານ 70 ກມ. ທ່ານສາມາດເດີນທາງໄປດ້ວຍຕີນເອງ ເຊິ່ງມີສອງເສັ້ນທາງໃຫ້ເລືອກຄື: ເສັ້ນທາງລົດ ແມ່ນໄປຕາມເສັ້ນທາງໄປເມືອງປາກທາ ຈາກເມືອງປາກທາ ມຸ່ງໜ້າໄປທາງບ້ານກ້ອນຕື່ນ (ຂ້າມບັກຢູທີ່ທ່າບ້ານກ້ອນຕື່ນ) ແລ້ວຂີ່ລົດເຂົ້າໄປຕໍ່ອີກປະມານ 15 ກິໂລແມັດ ກໍ່ເຖິງສະຖານທີ່ແຫ່ງດັ່ງກ່າວ. ອີກເສັ້ນທາງໜຶ່ງ ແມ່ນຂີ່ເຮືອໄວ ຫຼື ເຮືອໂດຍສານ ບໍ່ແກ້ວ-ເມືອງປາກແບງ ແລ້ວແວ່ຈອດອອກທີ່ທ່າບ້ານກ້ອນຕື່ນ ແລ້ວຂີ່ລົດກະບະເຂົ້າໄປ ແລະ ອີກເສັ້ນທາງໜຶ່ງແມ່ນສາມາດຂີ່ລົດເຂົ້າມາທາງເມືອງຄອບ ຫາ ບ້ານກ້ອນຕື່ນ ແລ້ວມີເສັ້ນທາງແຍກຊ້າຍເຂົ້າບ້ານດົງ ແລະ ຈຽງຕອງ.

ຢູ່ສະຖານທີ່ແຫ່ງນີ້ ເປັນແຫຼ່ງທ່ອງທ່ຽວແບບທຳມະຊາດປະສົມປະສານກັບວັດທະນະທຳຊົນເຜົ່າ ແລະ ແຫຼ່ງທ່ອງທ່ຽວດ້ານປະຫວັດສາດທີ່ຢັ່ງຢາຍຢູ່ບໍລິເວນໃກ້ຄຽງກັນ. ແຫຼ່ງທ່ອງທ່ຽວແຫ່ງນີ້ໄດ້ເລີ່ມພັດທະນາມາແຕ່ປີ 2015 ເປັນຕົ້ນມາ ໂດຍແມ່ນການລົງທຶນຂອງ ທ່ານ ຈືກຸ ວື ນັກທຸລະກິດພາຍໃນແຂວງ ເປັນຜູ້ລົງທຶນ 100% ໃນເບື້ອງຕົ້ນໄດ້ສ້າງເຮືອນພັກເປັນຫຼັງ (ຣີສອດ) ຈຳນວນ 10 ຫຼັງ, ຮ້ານອາຫານ 1 ຫຼັງ, ມາເຖິງປີ 2015 ຜູ້ກ່ຽວໄດ້ຂະຫຍາຍກິດຈະການເພີ່ມເຕີມ ເພື່ອຮອງຮັບ ແລະ ອຳນວຍຄວາມສະດວກໃຫ້ກັບລູກຄ້າ ທີ່ຈະມາໃຊ້ບໍລິການໃຫ້ພຽງພໍເຊັ່ນ: ສ້າງເຮືອນພັກອີກ 1 ຫຼັງ ສອງຊັ້ນ, ຈຳວນ 19 ຫ້ອງນອນ, ມີຮ້ານອາຫານ, ມີເວທີການສະແດງເຄື່ອງສຽງຄົບຊຸດ, ມີສະລອຍນ້ຳແບບທຳມະຊາດ (ຫ້ວຍນ້ຳທຳມະຊາດ) ແລະ ຜູ້ທີ່ມັກປະຈົນໄພ ກໍຈະມີກິດຈະກຳຂີ່ສາຍສະລິງ (Zipline) ແລະ ຂົວອູ່ ໄວ້ຄອຍບໍລິການຜູ້ທີ່ມາທ່ຽວຊົມ, ນອກຈາກນີ້ກໍຍັງມີລາຍການເດີນປ່າທ່ຽວຊົມທຳມະຊາດ, ທ່ຽວຊົມຖ້ຳ ທີ່ປະດັບປະດາດ້ວຍນິມຜາ ທີ່ມີຮູບຊົງລວຍລາຍຕ່າງໆທີ່ໜ້າສົນໃຈ ເຊິ່ງຈຸດພິເສດຂອງສະຖານທີ່ແຫຼ່ງທ່ອງທ່ຽວແຫ່ງນີ້ ມີແມ່ນ້ຳທີ່ໄຫຼລອດອອກຈາກຕີນພູທີ່ໃສສະອາດ ແລະ ມີຄວາມສວຍງາມ ສາມາດລອຍອາບຫຼິ້ນ ເພື່ອຜ່ອນຄາຍກັບອາກາດທີ່ຮ້ອນອົບເອົ້າ, ພ້ອມກັນນັ້ນ ກໍຍັງມີຕູບນັ່ງຫຼິ້ນລຽບແຄມແມ່ນ້ຳໄວ້ນັ່ງກິນອາຫານແບບສ່ວນຕົວ ແລະ ຄອບຄົວອີກດ້ວຍ.

ໃນແຕ່ລະປີ ອຳນາດການປົກຄອງບ້ານໄດ້ສົມທົບກັບເຈົ້າຂອງໂຄງການ ນຳໃຊ້ສະຖານທີ່ແຫ່ງນີ້ຈັດງານບຸນປະເພນີຂອງເຜົ່າມົ້ງ ເພື່ອເປັນການສົ່ງເສີມໃຫ້ຄົນຮຸ່ນຫຼັງຊ່ວຍກັນອະນຸລັກ, ປົກປັກຮັກສາທາງດ້ານວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງເຜົ່າໄວ້ໃຫ້ໝັ້ນຄົງ ເປັນຕົ້ນງານ ບຸນກິນຈຽງ (ນໍເປເຈົາ) ເຊິ່ງແຕ່ລະປີຈະຈັດຢູ່ໃນຊ່ວງ ທ້າຍເດືອນມັງກອນ ຫາຕົ້ນເດືອນກຸມພາຂອງທຸກໆປີ. ຢູ່ໃນງານກໍ່ຈະມີກິດກຳຕ່າງໆ ເຊັ່ນ: ການແຂ່ງຂັນກິລາບານເຕະ, ກິລາງົວຊົນງົວ, ກິດຈະກຳໂຍນໝາກຄອນ ແລະ ພິທີການຕ່າງໆຕາມປະເພນີຂອງເຜົ່າ.

## 8. ດອນຊາວ (ງານເທດສະການດອກງິ້ວບານ).

ດອນຊາວແມ່ນດອນທີ່ມີຄວາມສວຍສົດງົດງາມທາງດ້ານທຳມະຊາດ ຢູ່ຫ່າງຈາກເທດສະບານເມືອງໄປທາງທິດຕາເວັນຕົກສຽງເໜືອປະມານ 5 ກິໂລແມັດ, ທິດຕາເວັນອອກຕິດກັບບ້ານສາມຫຼ່ຽມຄຳ, ທິດຕາເວັນຕົກຕິດກັບແມ່ນ້ຳຂອງມີເສັ້ນຊາຍແດນທາງນ້ຳຮ່ວມກັບປະເທດໄທ, ທິດເໜືອຕິດກັບບ້ານສີບຸນເຮືອງ, ທິດໃຕ້ຕິດກັບບ້ານພຽງງາມ.ຈຸດພິເສດຂອງດອນຊາວນີ້ ແມ່ນເປັນດອນທີ່ໃຫຍ່ເຕັມໄປດ້ວຍຕົ້ນງິ້ວ ແລະ ສວຍສົດງົດງາມທາງດ້ານທຳມະຊາດ, ມີຕົ້ນງິ້ວທັງໝົດປະມານ 2.000 ກວ່າຕົ້ນ, ເນື້ອທີ່ 71,709 ເຮັກຕ່າ. ເຊິ່ງເຮັດໃຫ້ມີການຈັດງານບຸນປະເພນີເທດສະການດອກງິ້ວບານຂຶ້ນໃນທຸກປີ ເຊິ່ງເລີ່ມຈັດຂຶ້ນຕັ້ງແຕ່ປີ ຄສ 2000, ເທດສະການດອກງິ້ວບານໄດ້ຈັດຂຶ້ນໃນຊ່ວງລະຫວ່າງທ້າຍເດືອນມັງກອນ ຫາ ຕົ້ນເດືອນກຸມພາ ຂອງທຸກໆປີ, ງານບຸນດັ່ງກ່າວ ໄດ້ດຳເນີນໄປເປັນເວລາ 3 ວັນ ເພາະມັນໄດ້ກາຍເປັນສະຖານທີ່ ແລະ ຊ່ວງເວລາທີ່ເໝາະສົມ ສຳລັບການຈັດງານເທດສະການ ໃນຂະນະທີ່ດອກງິ້ວພວມເບັ່ງບານເປັນສີແດງ ເປັ່ງປະກາຍຄວາມໂດດເດັ່ນໄປທົ່ວດອນດັ່ງກ່າວ. ຈຸດປະສົງໃນການຈັດງານດັ່ງກ່າວ ແມ່ນເພື່ອເປັນການອະນຸລັກຕົ້ນດອກງິ້ວປ່າ ແລະ ວັດທະນະທຳຮີດຄອງປະເພນີລາວ ໂດຍສະເພາະປະຊາຊົນເຜົ່າຕ່າງໆໃນເຂດເມືອງຕົ້ນເຜີ້ງ, ກິດຈະກຳທີ່ຈັດຂຶ້ນໃນງານດັ່ງກ່າວ ເຊິ່ງປະກອບມີ: ການປະກວດນາງສາວດອກງິ້ວບານ, ການສະແດງສິລະປະວັນນະຄະດີຂອງບັນດາເຜົ່າຈາກບັນດາບ້ານອ້ອມຂ້າງ, ການວາງສະແດງສິນຄ້າ ແລະ ການແຂ່ງຂັນກິລາປະເພດຕ່າງໆຢ່າງມ່ວນຊື່ນ



ເຊິ່ງມີນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ນັກທ່ອງທ່ຽວສັນຊາດໄທ, ຈີນ ແລະ ມຽນມາ ເຂົ້າມາທ່ຽວແຕ່ລະມື້ຫຼາຍຮ້ອຍຄົນ. ໃນປະຈຸບັນລັດຖະບານໄດ້ອະນຸຍາດໃຫ້ນັກທຸລະກິດຊາວຈີນ ຄື: ທ່ານ ຈ້າວເຫວີຍ ສຳປະທານສ້າງເປັນເຂດເສດຖະກິດພິເສດເລີ່ມແຕ່ປີ 2007 ແລະ ເປີດນຳໃຊ້ມາຈົນເຖິງປັດຈຸບັນ.

## ໙. ຜາພຣະ.



ຜາພຣະ ຕັ້ງຢູ່ບ້ານປາກງາວ, ເມືອງຫ້ວຍຊາຍ ມີໄລຍະຫ່າງຈາກເທດສະບານແຂວງ ໄປທາງທິດເໜືອປະມານ 15 ກິໂລແມັດ ເຊິ່ງໄດ້ຖືກຄົ້ນພົບຕັ້ງແຕ່ສະໄໝເຈົ້າອານຸວົງ. ຜ່ານການລົງສຳຫຼວດແລ້ວ ເຫັນວ່າສະຖານທີ່ແຫ່ງນີ້ສາມາດເດີນທາງເຂົ້າໄປທ່ຽວຊົມໄດ້ຢ່າງສະດວກສະບາຍ, ມີໄຟຟ້າໄວ້ເພື່ອອຳນວຍຄວາມສະດວກ ໃນການເບິ່ງເຫັນສະຖານທີ່ນັ້ນໃຫ້ຊັດເຈນຂຶ້ນໃນຍາມກາງຄືນ, ດັ່ງນັ້ນ ຈຶ່ງມີການເປີດບໍລິການໃຫ້ທ່ຽວຊົມ, ໄດ້ກາບໄຫວ້ສັກກາລະບູຊາ ເພື່ອຂໍພອນໃນເວລາເດີນທາງ ໃຫ້ມີໂຊກມີໄຊ, ເດີນທາງຕະຫຼອດປອດໄພ ເຖິງຈຸດໝາຍປາຍທາງ. ການຄຸ້ມຄອງປົກປັກຮັກສາບູລະນະປະຕິສັງຂອນ ແມ່ນມອບໃຫ້ປະຊາຊົນຊາວບ້ານປາກງາວ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ເບິ່ງແຍງ. ຜາພຣະນີ້ ເປັນສະຖານທີ່ທາງທຳມະຊາດ ທີ່ປະສົມປະສານກັບວັດທະນະທຳໄດ້ຢ່າງກົມກືນ, ຖ້າສັງເກດເບິ່ງຢູ່ເທິງຜາຫີນຂອງສະຖານທີ່ແຫ່ງນີ້ ແມ່ນໄດ້ມີຮອຍແກະສະຫຼັກຮູບພາບທີ່ສວຍງາມ ເຊິ່ງຕາມການເລົ່າຂານມາວ່າ ຮູບພາບທີ່ສະຫຼັກຢູ່ຜາຫີນນີ້ ແມ່ນການແກະສະຫຼັກດ້ວຍຝີມື ແລະ ປາຍດາບຂອງເຈົ້າອານຸວົງ ເພື່ອເປັນການລະນຶກເຖິງດວງວິນຍານລູກສາວຂອງເພິ່ນທີ່ໄດ້ສິ້ນພະຊົນຊີບຢູ່ສະຖານທີ່ແຫ່ງນີ້, ນອກຈາກນັ້ນ ເພິ່ນຍັງໄດ້ຝັງເຄື່ອງມີຄ່າຈຳນວນໜຶ່ງໄວ້ບໍລິເວນໂງ່ນຫີນກາງແມ່ນ້ຳຂອງ ແລະ ໄດ້ຂຽນຈາລຶກໄວ້ວ່າ: “ໄປພຽງຕາ ມາພຽງຕີນ” ແຕ່ກໍ່ໜ້າເສຍດາຍທີ່ເຄື່ອງມີຄ່າເຫຼົ່ານັ້ນ ໄດ້ຖືກກຸ່ມຄົນທີ່ບໍ່ດີຂຸດເອົາໄປໝົດແລ້ວ ເຫຼືອໄວ້ພຽງແຕ່ຮ່ອງຮອຍເທົ່ານັ້ນ.

## 10. ວັດຈອມເຂົາມະນີຣັດ.





ວັດຈອມເຂົາມະນີຣັດ ຕັ້ງຢູ່ບ້ານໃຫຍ່ຫ້ວຍຊາຍເໜືອ ເມືອງຫ້ວຍຊາຍ ຫຼືອາດເວົ້າໄດ້ວ່າ ເປັນວັດທີ່ຕັ້ງຢູ່ໃຈກາງເມືອງເລີຍກໍ່ເປັນໄດ້, ດ້ວຍເຫດນີ້ຈິ່ງມີການເຂົ້າເຖິງທີ່ສະດວກສະບາຍອີກຢ່າງວັດແຫ່ງນີ້ກໍ່ເປັນວັດທີ່ມີຄວາມເກົ່າແກ່ ແລະ ມີຄວາມສັກສິດ ທີ່ພຸດທະສາສະນິກະຊົນໄດ້ໃຫ້ຄວາມເຄົາລົບນັບຖື ເຊິ່ງສ້າງຕັ້ງຂຶ້ນໃນປີ 1880, ໄດ້ມີການລົງສຳຫຼວດແລ້ວເຫັນວ່າມີສິ່ງອຳນວຍຄວາມສະດວກໄວ້ບໍລິການພຽງພໍຕໍ່ຜູ້ທ່ຽວຊົມໃນລະດັບໜຶ່ງ ແລະ ມີແຜນພັດທະນາໃຫ້ເປີດບໍລິການເປັນແຫຼ່ງທ່ອງທ່ຽວຢ່າງສົມບູນແບບ. ວັດຈອມເຂົາມະນີຣັດນີ້ໄດ້ຖືກຈັດໃຫ້ເປັນແຫຼ່ງທ່ອງທ່ຽວລະດັບແຂວງ ໂດຍມີພາກສ່ວນບ້ານເປັນຜູ້ຄຸ້ມຄອງ ເພາະເປັນວັດທີ່ເປັນຈຸດເດັ່ນເປັນບ່ອນສັກກາລະບູຊາຂອງຊາວເມືອງ ແລະ ນັກທ່ອງທ່ຽວ, ເລົ່າຂານກັນວ່າວັດນີ້ເປັນຕົ້ນກຳເນີດຂອງເຮືອນເສົາຢອງຫີນ ໃນກາງສະຕະວັດທີ່ 15 ເຊິ່ງປັດຈຸບັນໄດ້ຖືກໄຟໃໝ້ແລ້ວ, ພາຍໃນສິມກໍ່ຍັງມີຮູບພາບເລົ່າເຖິງປະຫວັດຂອງພະພຸດທະເຈົ້າ, ມີເຕົ່າຫີນເພື່ອສ່ຽງທວາຍ, ບານປະຕູສະຫຼັກດ້ວຍຮູບພາບຂອງທ້າວສິທົນ ແລະ ນາງມະໂນລາ ທີ່ສວຍສົດງົດງາມ.

## 11. ວັດທາດສຸວັນນະຜ້າຄຳ.



ວັດທາດສຸວັນນະຜ້າຄຳ ເດີມມີຊື່ວ່າ: ວັດພະທາດປາກຫ່າຍ ເປັນວັດທີ່ມີຄວາມສັກສິດແຫ່ງໜຶ່ງທີ່ປະຊາຊົນທັງພາຍໃນ ແລະ ຕ່າງປະເທດທີ່ນັບຖືສາສະໜາພຸດໃຫ້ຄວາມເຄົາລົບນັບຖື, ໃນຕຳນານໄດ້ກ່າວໄວ້ວ່າ ມີເຈົ້າລະວະ ແລະ ເຈົ້າລະວ້າ ສອງອ້າຍນ້ອງ ເຊິ່ງເປັນຣາຊະບຸດຂອງ ພະຍາ ລະໂວ ລະວາ ໄດ້ນຳເອົາບໍລິວານປະພາດປ່າເພື່ອລ່າເນື້ອ, ມາເຖິງໂນນແຫ່ງໜຶ່ງເຊິ່ງເປັນບ່ອນທີ່ເໝາະສົມທີ່ຈະປັກຂ່າຍດັກເອົານົກ ເວລານັ້ນໄດ້ມີພະສຳມະນະເດີນຈາຣິກມາ, ເມື່ອເຈົ້າ ລະວະ ລະວ້າ ໄດ້ເຫັນໂສມມະນັດກໍ່ເກີດມີຈິດໃຈເຫຼື້ອມໃສສັດທາ ຈຶ່ງໄດ້ພາກັນນິມົນລົງໄປສົງນ້ຳຢູ່ແຄມຂອງ (ຢູ່ບ່ອນນັ້ນມີກົກເດື່ອໃຫຍ່ກົກໜຶ່ງ, ຢູ່ກ້ອງກົກເດື່ອມີພະລານຫີນໃຫຍ່ທີ່ກວ້າງຂວາງ ແລະ ຮົ່ມເຢັນ), ເມື່ອສົງນ້ຳຮຽບຮ້ອຍແລ້ວກໍ່ຍື່ນຜ້າອາບນ້ຳໃຫ້ ເຈົ້າລະວະ ເອົາໄປຕາກ, ພາຍຫຼັງຕາກຜ້າອາບນ້ຳແລ້ວທັງສອງພີ່ນ້ອງກໍ່ພາກັນລົງມາອາບນ້ຳ ຫຼັງຈາກນັ້ນກໍ່ຂຶ້ນມາກູ້ເອົາຜ້າອາບນ້ຳທີ່ຕາກໄວ້, ເມື່ອຮື້ຜ້ານັ້ນຂຶ້ນ ຜ້າກໍ່ກາຍເປັນຄຳໄປໝົດທັງຜືນ ເຮັດໃຫ້ສອງອ້າຍນ້ອງຕື່ນເຕັ້ນ, ຕື້ນຕັນໃຈໃນຄວາມມະຫັດສະຈັນ ຈຶ່ງນຳເອົາຜ້າຜືນນັ້ນມາເຄນໃຫ້ພະສຳມະນະ ແລ້ວຕິດຕາມພະສຳມະນະ ກັບຄືນເມືອຫາທີ່ພັກ ພໍຕົກຄ່ຳກໍ່ພາກັນຈັດທີ່ນອນຖວາຍ, ພໍຕື່ນເຊົ້າມາກໍ່ພາກັນຈັດເອົາພັດຕະຫານມາຖວາຍ ຈາກນັ້ນສອງພີ່ນ້ອງພ້ອມດ້ວຍບໍລິວານກໍ່ພາກັນເຂົ້າຟັງທຳມະເທດສະໜາ ພາຍຫຼັງຟັງເທດຈົບແລ້ວກໍ່ພາກັນຄາລະວະ, ພະສຳມະນະເຈົ້າໄດ້ເອົາມືລູບຫົວ ມີເສັ້ນຜົມຕິດມືອອກມາ 3 ເສັ້ນ, ຍື່ນມອບໃຫ້ເຈົ້າລະວະ, ລະວ້າ ສອງພີ່ນ້ອງ ພ້ອມທັງຜ້າອາບນ້ຳທີ່ກາຍເປັນຄຳນັ້ນແລ້ວບອກໃຫ້ສອງພີ່ນ້ອງຈົ່ງພາກັນເອົາຂອງສອງຢ່າງນີ້ໄປສ້າງເປັນອານຸສາວະລີ ໄວ້ເປັນບ່ອນນົບໄຫວ້ເຄົາລົບບູຊາແກ່ປວງຊົນທັງຫຼາຍສືບເມື່ອພາຍໜ້າ ຈາກນັ້ນທັງສອງພີ່ນ້ອງຈຶ່ງເອົາຜ້າຄຳ ແລະ ເງິນໃຫ້ຊ່າງຕີເປັນເຮືອຄຳ ເຮືອເງິນ ອູບຄຳ ອູບເງິນ ແລ້ວເອົາຜົມ 3 ເສັ້ນນັ້ນມາບັນຈຸໄວ້ໃນອູບຄຳອູບເງິນນັ້ນ. ຕໍ່ຈາກນັ້ນກໍ່ພາໃຫ້ບໍລິວານທັງຫຼາຍຂຸດຂຸມຢູ່ເທິງໂນນທີ່ປັກຂ່າຍ (ປັກຫ່າຍ) ໃຫ້ເລິກພຽງລະດັບນ້ຳຂອງ ຫຼັງຈາກນັ້ນກໍ່ບັນຈຸເຮືອຄຳ ເຮືອເງິນ ອູບຄຳ ອູບເງິນ ລົງໃນ ແລ້ວກວາດດິນຖົມແລ້ວກໍ່ພາກັນກໍ່ພະທາດເຈດີກວມເອົາໄວ້ໃນລະຫວ່າງ ປີຈູນສັກກະລາດ 384 ໂຕ ກົງກັບ ປີ ຄສ 1022 ຫຼື ພສ 1565 ແລ້ວໃຫ້ຊື່ວ່າ ພະທາດປັກຫ່າຍ ຈາກນັ້ນກໍ່ແບ່ງບໍລິວານຕັ້ງບ້ານຢູ່ ເພື່ອເບິ່ງແຍງຮັກສາອຸປະຖຳພະທາດນັ້ນໃນເວລາຕໍ່ມາ ຄຳວ່າພະທາດປັກຫ່າຍ ກໍ່ພ້ຽນມາເປັນພະທາດປາກຫ່າຍ, ພະລານຫີນຜາຄຳກໍ່ໄດ້ກາຍເປັນຜ້າຄຳສືບຕໍ່ກັນມາ ເຊິ່ງລວມໄດ້ອາຍຸ 990 ປີ ແຕ່ປີ ຄສ 1022 ຫາ ປີ ຄສ 2012 ແລະ ຕາມການເລົ່າຂານຂອງຜູ້ເຖົ້າໃນເມື່ອກ່ອນຍັງເວົ້າອີກວ່າ ພໍຮອດມື້ວັນສິນ 15 ຄ່ຳ ເທິງຈອມພະທາດ ກໍ່ຈະມີແສງຮຸ່ງແຈ້ງສະຫວ່າງຢູ່ຕະຫຼອດ ເຮັດໃຫ້ມີຜູ້ເຂົ້າມາທ່ຽວຊົມເປັນຈຳນວນຫຼວງຫຼາຍ. ເຊິ່ງວັດນີ້ຕັ້ງຢູ່ ບ້ານຕີນທາດ ເມືອງຫ້ວຍຊາຍ ຫ່າງຈາກເທດສະບານແຂວງໄປທາງທິດໃຕ້ປະມານ 2,5 ກິໂລແມັດ, ມີການເຂົ້າເຖິງທີ່ສະດວກສະບາຍ. ຜ່ານການລົງສຳຫຼວດແລ້ວ ແລະ ມີແຜນພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວທີ່ສົມບູນ, ສາມາດຈັດລະດັບໃຫ້ເປັນແຫຼ່ງທ່ອງທ່ຽວລະດັບແຂວງທີ່ພາກສ່ວນບ້ານເປັນຜູ້ຄຸ້ມຄອງ ເຊິ່ງຂໍ້ມູນນີ້ແມ່ນໄດ້ມາຈາກປຶ້ມປະຫວັດຂອງເມືອງຫ້ວຍຊາຍ.

## 12. ພູຊີ້ຟ້າ.



ພູຊີ້ຟ້າ ຕັ້ງຢູ່ບໍລິເວນບ້ານຈຽງຕອງ ເມືອງປາກທາ ມີໄລຍະຫ່າງຈາກເທດສະບານເມືອງປາກທາ ປະມານ 35 ກິໂລແມັດ ແລະ ຫ່າງຈາກເທດສະບານແຂວງປະມານ 75 ກິໂລແມັດ. ພູຊີ້ຟ້ານີ້ເປັນເຂດພື້ນທີ່ທີ່ຕິດຊາຍແດນລະຫວ່າງປະເທດ (ລາວ - ໄທ) ແລະ ມີລັກສະນະເປັນໜ້າຜາສູງແຫຼມຊີ້ຂຶ້ນເທິງຟ້າ, ເຊິ່ງມີຄວາມສູງຈາກໜ້ານໍ້າທະເລປະມານ 1.360 ແມັດ ແລະ ຍັງມີທັດສະນີຍະພາບອັນສວຍງາມເຊັ່ນ: ພູຜາປ່າໄມ້ທີ່ສະຫຼັບຊັບຊ້ອນ, ທະເລໝອກ ແລະ ໝູ່ບ້ານ. ພູແຫ່ງນີ້ໄດ້ຜ່ານການລົງສໍາຫຼວດ ແລະ ພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວທີ່ເປີດບໍລິການຢ່າງເປັນທາງການແລ້ວແຕ່ກໍ່ຍັງບໍ່ທັນມີສິ່ງອໍານວຍຄວາມສະດວກ, ບໍ່ມີຄວາມສະດວກສະບາຍໃນການເດີນທາງເຂົ້າເຖິງແຫຼ່ງທ່ອງທ່ຽວ ແຕ່ກໍ່ຍັງຢູ່ໃນການຄຸ້ມຄອງຂອງເມືອງ ແລະ ຖືກຈັດເປັນແຫຼ່ງທ່ອງທ່ຽວລະດັບແຂວງນັ້ນເອງ.



## 13. ປ່າຫວາຍຫຼວງ (ໃຫຍ່).





ປ່າຫວາຍຫຼວງເປັນແຫຼ່ງທ່ອງທ່ຽວທີ່ຕັ້ງຢູ່ລະຫວ່າງກາງ ບ້ານມອນແຫຼມ ແລະ ບ້ານປຸ່ງຈອມແສງ ເມືອງເມິງ, ມີໄລຍະຫ່າງຈາກເທດສະບານແຂວງປະມານ 129 ກິໂລແມັດ ແລະ ຫ່າງຈາກຕົວເມືອງປະມານ 12 ກິໂລແມັດ, ສາມາດເດີນທາງເຂົ້າເຖິງໄດ້ດ້ວຍພາຫະນະເຊັ່ນ: ລົດນັ້ນເອງ. ເຊິ່ງຕາມຄວາມເຊື່ອຂອງຄົນເຖົ້າແກ່ພາຍໃນບ້ານ ແມ່ນໄດ້ເວົ້າວ່າ: ປ່ານີ້ເປັນປ່າສັກສິດ, ເປັນບ່ອນສັກກາລະບູຊາ, ເຊິ່ງຕົ້ນຫວາຍໃນປ່າແຫ່ງນີ້ ຍັງມີຄວາມເຊື່ອອີກວ່າ ໃນໄລຍະເວລາເຖິງ 9 ປີ ຈຶ່ງຈະອອກດອກໜຶ່ງຄັ້ງ ແລະ ນອກຈາກຈະມີຕົ້ນຫວາຍໃຫຍ່ແລ້ວ ຍັງມີຕົ້ນ ໝາກເຜັດໃຫຍ່ 3 ອ້ອມ ແລະ ມີວັດ ແຕ່ວ່າຕົ້ນໝາກເຜັດນັ້ນໄດ້ຫາຍໄປ ໂດຍບໍ່ມີຮ່ອງຮອຍ ແລະ ຫາຄຳຕອບບໍ່ໄດ້ ເຫຼືອພຽງຕຳນານກ່າວຂານກັນມາເທົ່ານັ້ນ, ນອກຈາກນີ້ ສະຖານທີ່ດັ່ງກ່າວ ຍັງມີຫີນສິມມາ ຕາມພາສາທ້ອງຖິ່ນ (ພາສາລື້) ເອີ້ນວ່າເປັນບ່ອນລອງກຳ ລອງບຸນນັ້ນເອງ, ຕາມຄວາມເຊື່ອແລ້ວຫີນນີ້ ເປັນບ່ອນຂໍພອນ ຫຼື ຂໍບຸນກຸສົນ ເພື່ອຕໍ່ອາຍຸສັງຂານ ເຊິ່ງໃຊ້ວິທີໂດຍການອາແຂນໃສ່ໄມ້ ແລ້ວກໍ່ແທກໄວ້ຫຼັງຈາກຂໍພອນແລ້ວ ກໍ່ອາແຂນອີກເທື່ອໜຶ່ງຖ້າຫາກວ່າ ວາຍາວຂຶ້ນກ່ວາເກົ່າແມ່ນຖືວ່າເຮົາໄດ້ຮັບພອນທີ່ຂໍໄປນັ້ນ. ປ່າແຫ່ງນີ້ຖືວ່າເປັນປ່າທີ່ມີຄວາມສັກສິດ ແລະ ໄດ້ຮັບຄວາມນັບຖືຈາກປະຊາຊົນເປັນຈຳນວນຫຼວງຫຼາຍ ເຊິ່ງໄດ້ເວົ້າກັນວ່າຖ້າຫາກໃຜທີ່ໄດ້ເຂົ້າມາກາບໄຫວ້ບູຊາ ແມ່ນຖືວ່າຈະເປັນສິລິມຸງຄຸນໃຫ້ແກ່ຊີວິດ, ແຕ່ເຖິງຢ່າງໃດກໍ່ຕາມ ເຖິງວ່າປ່າຫວາຍຫຼວງນີ້ ຈະເປັນສະຖານທີ່ທີ່ທາງເມືອງ ເປັນພາກສ່ວນຄຸ້ມຄອງ ແຕ່ກໍ່ຍັງບໍ່ທັນມີການລົງສຳຫຼວດ ແລະ ຍັງບໍ່ທັນມີແຜນພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວຢ່າງເປັນທາງການ.

## 14. ນ້ຳຕົກຕາດຊຸມລູ - ນາງອື້ວ.



ນ້ຳຕົກຕາດຊຸມລູ - ນາງອື້ວ ມີທີ່ຕັ້ງຢູ່ຂອບເຂດບ້ານ ປາງທອງ ເຊິ່ງຫ່າງຈາກຕົວເມືອງປະມານ 7 ກິໂລແມັດ ແລະ ມີຊາຍແດນຕິດກັບບັນດາສະຖານທີ່ຕ່າງໆດັ່ງນີ້: ທິດຕາເວັນອອກຕິດກັບບ້ານປາງທອງ, ທິດເໜືອຕິດກັບພູຜາອ່າງ, ທິດໃຕ້ຕິດກັບຜາຫີນ ແລະ ທິດຕາເວັນຕົກຕິດກັບຂົງເຂດສວນຂອງປະຊາຊົນ, ເສັ້ນທາງການເຂົ້າເຖິງແມ່ນຖືວ່າມີຄວາມສະດວກພໍສົມຄວນ ເຊິ່ງສາມາດໃຊ້ລົດເດີນທາງເຂົ້າໄປເຖິງນ້ຳຕົກໄດ້ ເພາະນ້ຳຕົກຕາດແຫ່ງນີ້ໄດ້ມີການສຳຫຼວດແລ້ວ ເຫັນວ່າຕາດດັ່ງກ່າວນີ້ມີຄວາມສູງປະມານ 30 ແມັດ ມີນ້ຳຕົກທີ່ສວຍງາມ, ນອກນັ້ນບໍລິເວນອ້ອມຮອບນັ້ນຍັງມີປ່າໄມ້ ແລະ ພູຜາທີ່ສວຍສົດງົດງາມ ແລະ ມີການພັດທະນາສ້າງສິ່ງຮອງຮັບຫຼາຍຢ່າງໃຫ້ແກ່ຜູ້ເຂົ້າທ່ຽວຊົມ, ຕໍ່ມາໃນ ປີ 2016 ໄດ້ມີການເປີດບໍລິການໃຫ້ແກ່ນັກທ່ອງທ່ຽວເຂົ້າໄປທ່ຽວຊົມຢ່າງເປັນທາງການ ໂດຍແມ່ນທາງພາກສ່ວນເອກະຊົນມາລົງທຶນ ແລະ ສ້າງສິ່ງອຳນວຍຄວາມສະດວກຫຼາຍຢ່າງເຊັ່ນ: ຮ້ານອາຫານ, ຮ້ານຂາຍເຄື່ອງທີ່ລະນຶກ, ໄຟຟ້າ, ຫ້ອງນ້ຳ ແລະ ບ່ອນຈອດລົດ ໂດຍຢູ່ຂອບເຂດການຄຸ້ມຄອງຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເມືອງຜາອຸດົມ.

ນ້ຳຕົກຕາດແຫ່ງນີ້ ມີຕຳນານເລົ່າຂານວ່າ: ແຕ່ກ່ອນໃນໝູ່ບ້ານແຫ່ງໜຶ່ງມີສອງສ່ຽວ ຊື່ວ່າ: ນາງຄຳພັນ ແລະ ນາງທອງສີ ເປັນເພື່ອນຮັກກັນຕັ້ງແຕ່ຄາວຍັງນ້ອຍ ເຂົາເຈົ້າທັງສອງ ໄດ້ໃຫ້ສັນຍາກັນວ່າຖ້າມີລູກຊາຍ-ຍິງ ຈະໃຫ້ແຕ່ງງານເປັນຄູ່ຜົວເມຍກັນ. ໃນເວລາຫຼາຍປີຕໍ່ມາເມື່ອທອງສີ ແລະ ຄຳພັນ ໄດ້ສ້າງຄອບຄົວ ແລະ ທັງສອງ ຕ່າງກໍ່ຖືພາ, ຢູ່ມາມື້ໜຶ່ງ ທອງສີໄດ້ໄປຢ້ຽມຢາມຄຳພັນ ຜູ້ມີສວນໝາກກ້ຽງ ຫວັງຊິກິນສົ້ມກັບໝູ່ຮັກ ແຕ່ວ່າຄຳພັນຊໍ້າພັດປະຕິເສດຄຳຂໍຮ້ອງຂອງທອງສີ ແລະ ເວົ້າວ່າໝາກກ້ຽງບໍ່ທັນສຸກບໍ່ທັນໃສ ຍັງບໍ່ທັນກິນໄດ້, ເມື່ອທອງສີໄດ້ຍິນເຊັ່ນນັ້ນ ກໍ່ຄິດຄຽດແຄ້ນໃນໃຈວ່າ: ຍາມຖືພານັ້ນຢາກກິນສົ້ມຢາກໄປລົມພົບໝູ່ກໍ່ບໍ່ສົມມາດແມ້ງ, ຄວາມສົ້ມຈຶ່ງບົ່ມໃຈແຕ່ປາງນັ້ນບໍ່ມີລືມ. ຈົນຮອດມື້ທີ່ທັງສອງໄດ້ເກີດລູກເປັນຍອດຍິງ - ຊາຍ ສົມໃຈດັ່ງສອງສ່ຽວ ເຊິ່ງລູກຂອງຄຳພັນມີຊື່ວ່າ: "ຂຸນລູ" ແລະ ລູກຂອງທອງສີມີຊື່ວ່າ: "ນາງອົ້ວ". ເມື່ອລູກຂອງທັງສອງໃຫຍ່ຂຶ້ນມາ ແລະ ເກີດມີຄວາມຮັກມັກກັນ ຕ່າງກໍ່ມີແນວຄິດຢາກມີຄູ່ຊ້ອນນອນກ່ອມ, ທັນໃດນັ້ນຄຳພັນຈຶ່ງໄດ້ເດີນທາງມາຍັງເພື່ອນແກ້ວ ເພາະຄິດເຖິງຄຳໝັ້ນໝາຍທີ່ມີຕໍ່ກັນເພື່ອໝາຍໃຫ້ລູກຊາຍໄດ້ຜູກພັນກ່ອມກ້ຽວໃຫ້ເປັນເຜີ້ງປ່ຽງດຽວກັນກັບລູກສາວຂອງເພື່ອນຄືດັ່ງສັນຍາແຕ່ຄາວກ່ອນ. ແຕ່ພໍຄຳພັນໄດ້ເດີນທາງມາເຖິງທອງສີ, ທອງສີຊໍ້າພັດປະຕິເສດຄຳຂອງຄຳພັນ ເພາະຍັງເຈັບໃຈຕັ້ງແຕ່ຄັ້ງຄາວຫຼັງຍັງບໍ່ອາດລືມລົງໄດ້ ໂດຍເວົ້າວ່າ: ນາງອົ້ວຈະເອົາຂຸນລາງຜູ້ຮັ່ງມີລືກ້ອງ, ມີເຂົ້າຂອງເງິນທອງເຄື່ອງໃຊ້ ແລະ ມີທັງງົວຄວາຍຊ້າງມ້າ, ເຊິ່ງເວລານີ້ທອງສີຍັງບໍ່ຮູ້ວ່າລູກສາວຕົນໄດ້ມອບໝາຍໃຈໃຫ້ກັບຂຸນລູ, ທັງສອງໄດ້ສັນຍາຮັກນຳກັນເດັດດ່ຽວບໍ່ໝາຍມ້າງຫ່າງກັນ. ຈົນເວລາຕໍ່ມາທອງສີໄດ້ຮັບຮູ້ວ່າລູກສາວຕົນຮັກມັກກັບຂຸນລູຈຶ່ງໄດ້ມີການກີດກັ້ນ, ກັກຂັງ, ຮ້າຍດ່າ, ປະນາມນາງອົ້ວ ແລະ ຍັງໄດ້ບັງຄັບຂືນໃຈໃຫ້ນາງອົ້ວແຕ່ງດອງກັບຂຸນລາງຢ່າງໄວວາ.

ເມື່ອຮັກຖືກກີດກັ້ນບໍ່ສົມມະໂນໝາຍ ນາງອົ້ວ ຈຶ່ງຕັດສິນໃຈບໍ່ຂໍຢູ່ເປັນຄົນແລ້ວຕາຍໄປຖ້າ ຂຸນລູ ຢູ່ສະຫວັນຊັ້ນຟ້າ, ທັນໃດນັ້ນ ນາງອົ້ວ ກໍ່ຊອກເຊືອກມາແຂວນຄໍກ້ອງຕົ້ນຈອງຈັນຫອມ ແລະ ສິ້ນໃຈໃນວັນນັ້ນ, ເວລາຕໍ່ມາ ຂຸນລູ ຮູ້ຂ່າວວ່ານາງອົ້ວ ຜູ້ເປັນສາຍໃຈຮັກສິ້ນໃຈ ກໍ່ເລີຍແທງຄໍຕົນເອງດ້ວຍດາບດັບຊີບສິ້ນນຳໄປຫາ ນາງອົ້ວ ຢູ່ສະຫວັນ.

ຕື່ນຮຸ່ງເຊົ້າຂະບວນແຫ່ຂອງ ຂຸນລາງ ພວມມ່ວນມາຕາມທາງ ວ່າຈະໄປກິນດອງກໍ່ໄດ້ຍິນສຽງຊ່ານັ້ນເນືອງກ້ອງວ່າ ຂຸນລູນາງອົ້ວ ພ້ອມໃຈກັນຕາຍແລ້ວແຕ່ມື້ວານ, ຂະບວນແຫ່ຈຶ່ງແຕກກະຈາຍທົ່ວດົງດອນ ປະເຄື່ອງແຫ່ໄວ້ປ່ານັ້ນ, ຂຸນລາງຜູ້ຜິດຫວັງຢ່າງເຂຊັດເຊຊວນລົ້ມທ່າວລົງເອີກແຕກຕາຍເຝົ້າປ່າດອຍ. ສ່ວນທອງສີແມ່ຂອງນາງອົ້ວ ສຸດກິນແໜງໃຈໃນຄວາມສຳນຶກຜິດກໍ່ແມ່ນສວາຍເກີນແກ້ ນໍ້າຕາຕົກໄຫຼລົ້ນນອງເຂົ້າປ່າໝົດລົມຫາຍໃຈຢູ່ເທິງພູ, ສ່ວນວ່ານໍ້າຕານາງ ຍັງຫຼັ່ງໄຫຼລົ້ນເປັນຕາດໂຕນຍາວລົງເລື້ອຍ ໄຫຼເປັນຕາດໃຫຍ່ທັງຍາມຝົນ ແລະ ຍາມແລ້ງ ບໍ່ມີວັນເຫືອດແຫ້ງຫາຍ. ນັບແຕ່ມື້ນັ້ນມາເພິ່ນຈຶ່ງເອີ້ນຊື່ນໍ້າຕົກແຫ່ງນີ້ວ່າ: ນໍ້າຕົກຕາດນໍ້າຕາແມ່ ຫຼື ນໍ້າຕົກຕາດຂຸນລູ - ນາງອົ້ວ ມາຈົນເຖິງທຸກວັນນີ້.

## 15. ປ່າຊາຕົ້ນໃຫຍ່ (ພູຫຍ້າຄາ).

ພູຫຍ້າຄາມີທີ່ຕັ້ງຢູ່ ບ້ານປຸ່ງຜາ ເມືອງເມິງ ທີ່ມີໄລຍະຫ່າງຈາກຕົວເມືອງປະມານ 70 ກິໂລແມັດ, ຈອມພູດັ່ງກ່າວແມ່ນສະຖານທີ່ທີ່ສ້າງຄວາມຕື່ນເຕັ້ນ ແລະ ຄວາມປະທັບໃຈໃຫ້ແກ່ບັນດານັກປີນພູທີ່ໄດ້ປີນຂຶ້ນໄປເພື່ອຊົມວິວທິວທັດຂອງປະເທດໄທ ແລະ ປະເທດມຽນມາ. ອີກສິ່ງໜຶ່ງທີ່ສ້າງຄວາມດຶງດູດໃຫ້ແກ່ສະຖານທີ່ແຫ່ງນີ້ ແລະ ສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນໃນຂົງເຂດນີ້ ແມ່ນການລ້ຽງເຜິ້ງໂກນ, ໂດຍການເອົາເຜິ້ງໂກນໄປປະໄວ້ໃນປ່າ ເມື່ອຮອດລະດູເກັບກ່ຽວຊ່ວງເດືອນສີ່ກ່ອນໜ້າຝົນປະຊາຊົນກໍ່ຈະພາກັນໄປເກັບນໍ້າເຜິ້ງດັ່ງກ່າວ ເຊິ່ງນໍ້າເຜິ້ງທີ່ໄດ້ມານັ້ນ ສ່ວນໃຫຍ່ແມ່ນໂຕເຜິ້ງຈະໄປກິນເກສອນຂອງດອກຊາປ່ານັ້ນເອງ ເພາະຢູ່ຂົງເຂດດັ່ງກ່າວຈະມີຕົ້ນຊາໃຫຍ່ ນ້ອຍເປັນຈໍານວນຫຼວງຫຼາຍ ເຊິ່ງສາມາດສັງເກດເຫັນໄດ້ຢູ່ຕາມບ້ານປະຊາຊົນກໍ່ຈະມີຕົ້ນຊາ ໃຫ້ເຫັນກັນທົ່ວໄປນັ້ນເອງ ແລະ ເມື່ອຂຶ້ນໄປເທິງພູຫຍ້າຄາ ກໍ່ຈະເຫັນຕົ້ນຊາຂະໜາດໃຫຍ່ເປັນຈໍານວນຫຼວງຫຼາຍ ຕາມການບອກເລົ່າຂອງປະຊາຊົນໄດ້ເວົ້າວ່າຕົ້ນຊາຈໍາພວກນີ້ແມ່ນມີອາຍຸປະມານ 1000 ກ່ວາປີເປັນສ່ວນໃຫຍ່.



## 16. ຄຸກ 24ຫ້ອງ ສະໄໝອາເມລິກາ.



ຄຸກ24ຫ້ອງຕັ້ງຢູ່ ບ້ານຫ້ວຍດອກທອງ ເມືອງເມິງ ເຊິ່ງມີໄລຍະຫ່າງຈາກຕົວເມືອງ ປະມານ 50 ກິໂລແມັດຜ່ານການລົງສຳຫຼວດແລ້ວມີຂໍ້ມູນວ່າ ຄຸກແຫ່ງນີ້ສ້າງຂຶ້ນປະມານປີ 1963 ສະໄໝທີ່ຈັກກະພັດອາເມລິກາເຂົ້າມາຮຸກຮານລາວ ແລະ ຖືກຄົ້ນພົບໃນ ປີ 1972 ເຊິ່ງເປັນສະໄໝທີ່ຈັກກະພັດອາເມລິກາປົກຄອງລາວຢູ່, ດັ່ງນັ້ນ ຄຸກນີ້ຈຶ່ງເປັນສະຖານທີ່ທີ່ລ່າເມືອງຂຶ້ນຈັກກະພັດອາເມລິກາ ໃຊ້ເປັນບ່ອນຂັງນັກໂທດທີ່ຕໍ່ຕ້ານລະບອບລ່າເມືອງຂຶ້ນຂອງພວກເຂົາ. ຜ່ານການລົງສຳຫຼວດແລ້ວເຫັນວ່າເສັ້ນທາງເຂົ້າເຖິງຍັງມີຄວາມຫຍຸ້ງຍາກ, ບໍ່ມີສິ່ງອຳນວຍຄວາມສະດວກພຽງພໍທີ່ຈະຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ ແຕ່ກໍ່ຍັງມີແຜນພັດທະນາໃຫ້ເປີດບໍລິການເປັນແຫຼ່ງທ່ອງທ່ຽວຢ່າງເປັນທາງການໃນຕໍ່ໜ້າ.

## 17. ຖ້ຳຜາແກ່.

ຖ້ຳຜາແກ່ ຕັ້ງຢູ່ ບ້ານຜາແກ່, ມີໄລຍະຫ່າງຈາກເທດສະບານແຂວງປະມານ 86 ກິໂລແມັດ, ເຊິ່ງເປັນຖ້ຳທີ່ຖືວ່າສູງກ່ວາໝູ່ໃນເຂດເທດສະບານ ເມືອງຜາອຸດົມ, ເມື່ອຂຶ້ນໄປເທິງບໍລິເວນປາກຖ້ຳເບິ່ງລົງມາ ຈະເຫັນທິວທັດຂອງເທດສະບານເມືອງໄດ້ເປັນຢ່າງດີ, ນອກຈາກຖ້ຳແຫ່ງນີ້ ຈະເປັນຖ້ຳທີ່ສູງກ່ວາໝູ່ແລ້ວ ກໍ່ຍັງເປັນຖ້ຳທີ່ມີຄວາມກວ້າງໃຫຍ່ທີ່ນັກທ່ອງທ່ຽວ ຫຼື ຜູ້ເຂົ້າທ່ຽວຊົມສາມາດເຂົ້າໄປໄດ້ປະມານ 500 ຄົນຂຶ້ນໄປ, ໃນຂົງເຂດຖ້ຳ ຍັງມີຖ້ຳນ້ອຍຈຳນວນໜຶ່ງອ້ອມຮອບຢູ່ເຊັ່ນ: ຖ້ຳເງິນ, ຖ້ຳແຈ້ງ ແລະ ອື່ນໆ, ນອກນັ້ນ ຍັງມີຫ້ວຍນ້ຳປ່າແກ່, ທົ່ງນາທີ່ກວ້າງຂວາງຢູ່ອີກເຊັ່ນກັນ. ເຊິ່ງໃນປັດຈຸບັນ ມີປະຊາຊົນເຜົ່າມົ້ງ ໄປຕັ້ງບ້ານຢູ່ໃກ້ໆກັນກັບຖ້ຳແຫ່ງນີ້ ທີ່ມີໄລຍະຫ່າງພຽງແຕ່ 500 ແມັດເທົ່ານັ້ນ ເຮັດໃຫ້ເສັ້ນທາງເຂົ້າເຖິງສະຖານທີ່ດັ່ງກ່າວ ມີຄວາມສະດວກສະບາຍ.





# ແຂວງອຸດົມໄຊ

## 1. ນ້ຳຕົກຕາດນ້ຳກັດ (ນ້ຳກັດຍໍລະປ່າ).



ຕາດນ້ຳກັດຕັ້ງຢູ່ປ່າສະຫງວນຂອງແຂວງ (ພູຫີຜີ), ແຂວງອຸດົມໄຊ. ຫ່າງຈາກເທດສະບານເມືອງໄຊ ປະມານ 24 ກິໂລແມັດ. ສະພາບເສັ້ນທາງເຂົ້າເຖິງສອງລະດູ. ປູຢາງຈາກເທດສະບານເມືອງໄຊເຖິງບ້ານບໍ່ 5 ກິໂລແມັດ, ແຕ່ບ້ານບໍ່ຫາບ້ານແຟນ ແລະ ເຂົ້າເຖິງຕາດນ້ຳກັດແມ່ນເປັນເສັ້ນທາງທີ່ປູດ້ວຍຫີນແຮ່ 18 ກິໂລແມັດ ແລະ ຍ່າງປະມານ 900 ແມັດ ຈຸດເດັ່ນຫຼືສິ່ງດຶງດູດນັກທ່ອງທ່ຽວມາທ່ຽວຢູ່ໃນເຂດປ່າສະຫງວນຂອງ (ພູຫີຜີ) ທີ່ມີປ່າດົງດິບດົກໜາ, ຕົ້ນໄມ້ໃຫຍ່, ມີຊີວະນາໆພັນຊະນິດຕ່າງໆທີ່ອາໄສຢູ່ໃນປ່າສະຫງວນດັ່ງກ່າວ ແລະ ເໝາະສົມທີ່ຈະໄປສຶກສາວິໄຈສິ່ງທີ່ມີຊີວິດດ້ານພຶກສາຊາດ, ຕາກອາກາດ, ກິນເຂົ້າປ່າ, ພັກຜ່ອນຢ່ອນອາລົມຕາມໂງ່ນຫີນ ແລະ ສາຍນ້ຳ. ນ້ຳຕົກຕາດນ້ຳກັດເປັນຕາດຊັ້ນດຽວ ມີຄວາມສູງປະມານ 15–20 ແມັດ ແລະ ກວ້າງປະມານ 20-50 ແມັດ, ໜ້າຕາດມີອ່າງອາບນ້ຳທຳມະຊາດ ເຢັນສະບາຍ. ປັດຈຸບັນພວມຢູ່ໃນໄລຍະການພັດທະນາ ແລະ ກໍ່ສ້າງຂອງບໍລິສັດແຟເຊັດພັດທະນາການທ່ອງທ່ຽວ ເປັນຜູ້ສຳປະທານພັດທະນາທ່ອງທ່ຽວແບບຄົບວົງຈອນ ປັດຈຸບັນສຳເລັດ 95% ບໍລິສັດໄດ້ເປີດບໍລິການທົດລອງແລ້ວ ແລະ ປະກອບມີຫຼາຍກິດຈະກຳ ລາຍລະອຽດບັນດາທ່ານສາມາດເຂົ້າເຖິງ ແລະ ສອບຖາມໄດ້ www.namkatyolapa.com.

ຕາດນໍ້າກັດໄດ້ຄົ້ນພົບໃນປີ ຄສ 1999 ແລະ ເປີດບໍລິການປີ ຄສ 2006, ຈາກການເລົ່າປາກຕໍ່ປາກຕໍ່ໆກັນມາຂອງຊາວບ້ານທີ່ເອີ້ນກັນວ່າ “ຫ້ວຍນໍ້າກັດ” ໄດ້ມາຈາກຄຳວ່າ “ສະກັດກັ້ນສັດຕູ”ເຊິ່ງສະໄໝການຕໍ່ສູ້ເສິກເຈືອງ ໄດ້ມີທະຫານໄປສະກັດຕີສັດຕູຢູ່ເຂດບ້ານແຫ່ງໜຶ່ງ ມີປະມານ 2–3 ຄອບຄົວອາໄສຢູ່ແຄມຫ້ວຍສາຍໜຶ່ງ(ບໍ່ຮູ້ຊື່ຫ້ວຍ) ພາຍຫຼັງໄດ້ຮັບໄຊຊະນະໃນການສະກັດກັ້ນຕີຕ້ານສັດຕູແລ້ວ ປະຊາຊົນຈຶ່ງພາກັນມາຕັ້ງຖິ່ນຖານຢູ່ເຂດດັ່ງກ່າວເຊິ່ງເປັນເຂດທີ່ອຸດົມສົມບູນເໝາະສົມໃນການຜະລິດເຂົ້າປາອາຫານຈຶ່ງໃສ່ຊື່ວ່າ: ບ້ານກັດ ແລະໃສ່ຊື່ຫ້ວຍດັ່ງກ່າວວ່າ: ຫ້ວຍນໍ້າກັດ ຈົນເຖິງປັດຈຸບັນ. ອີກຄວາມໝາຍໜຶ່ງເອີ້ນວ່າຫ້ວຍກັດຄຳວ່າ“ກັດ” ແມ່ນພາສາກຶມມຸແປວ່າ “ເຢັນກັດ” ເຊິ່ງເປັນຊົນເຜົ່າໜຶ່ງທີ່ອາໄສຢູ່ເຂດດັ່ງກ່າວມາກ່ອນແລ້ວຫຼາຍພັນປີ, ເຂົາເຈົ້າໄດ້ໃສ່ຊື່ຫ້ວຍດັ່ງກ່າວວ່າ: ຫຣົງອົມກັດ ເຊິ່ງມີຄວາມໝາຍວ່າ: ຫ້ວຍນໍ້າກັດ ເມື່ອເວລາລົງອາບນໍ້າຫ້ວຍ ຮູ້ສຶກເຢັນທີ່ສຸດ ຈຶ່ງເອີ້ນວ່ານໍ້າກັດມາຈົນເຖິງປັດຈຸບັນ. ໃຫ້ຂໍ້ມູນໂດຍ: ລຸງແພງອາຍຸ 58 ປີ ຊາວບ້ານກັດເມືອງໄຊແຂວງອຸດົມໄຊ



## 2. ຖ້ຳຈອມອອງ.



ຖ້ຳຈອມອອງຕັ້ງຢູ່ບ້ານຈອມອອງເມືອງໄຊຫ່າງຈາກເທດສະບານເມືອງໄຊ 45 ກິໂລແມັດ (ເປັນເສັ້ນທາງດິນແດງ) ເຊິ່ງສາມາດເຂົ້າເຖິງໄດ້ດ້ວຍ 2 ທາງຄື: ຍ່າງລັດແຕ່ບ້ານຜ່ານທົ່ງນາໄປຫາຖ້ຳ 2 ກິໂລແມັດ ແລະ ທາງລົດເຂົ້າຮອດ (ທາງດິນແດງ) ຖ້ຳຈອມອອງຕັ້ງຢູ່ຫ່າງຈາກບ້ານຈອມອອງປະມານ 3 ກິໂລແມັດ, ເປັນເສັ້ນທາງລົດສາມາດແລນເຂົ້າເຖິງບໍລິເວນຖ້ຳ ເປັນຖ້ຳໃຫຍ່, ຍາວ ແລະ ສວຍງາມທີ່ສຸດຂອງແຂວງອຸດົມໄຊເຊິ່ງປະກອບດ້ວຍລະບົບນິເວດທຳມະຊາດທີ່ອັດສະຈັນ, ມີຫຼາຍຊ່ອງທາງເຂົ້າ–ອອກພາຍໃນຖ້ຳ ປະມານ 16 ກວ່າກິໂລແມັດ, ຄວາມກວ້າງປະມານ 15 – 50 ແມັດ ແລະຄວາມສູງປະມານ 25–100 ແມັດ. ຢູ່ໃນຖ້ຳບາງບ່ອນມີສາຍນ້ຳໄຫຼຜ່ານ, ມີນົມຜາ, ຫີນຍ້ອຍ ທີ່ມີລວດລາຍສວຍງາມ,ຫີນແກ້ວເປັນສີຂາວເຫຼື້ອມຄືກັບເພັດພອຍເປັນກ້ອນໃຫຍ່ປະດັບປະດາຫ້ອຍຢູ່ຕາມຝາຫີນຄືກັບດອກໄຟປະດັບຢ່າງສວຍງາມ. ຢູ່ໃນຖ້ຳຍັງເປັນລັກສະນະເດີມທີ່ຍັງບໍ່ໄດ້ຮັບການດັດແປງແຕ່ຢ່າງໃດ. ຖ້ຳນີ້ໄດ້ຜ່ານການສຳຫຼວດຂອງນັກວິທະສາດ ຈາກສະຫະພັນຢູໂຣບໃນປີ 2009 ແລະປີ 2010 ໄດ້ສຳຫຼວດ 4 ປີ ເປັນຖ້ຳໃໝ່ລະດັບຊາດ ASEAN ແລະ ລະດັບໂລກ ປະຈຸບັນລັດຖະບານແຫ່ງ ສປປ ລາວ ໄດ້ຮັບທຶນຈາກທະນາຄານພັດທະນາອາຊີ ADB ໃຫ້ທຶນຊ່ວຍເຫຼືອ ເພື່ອພັດທະນາເສັ້ນທາງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ

ຖ້ຳນີ້ໄດ້ຄົ້ນພົບໃນປີ ຄສ 2005 ແລະ ເປີດບໍລິການປີ ຄສ 2007. ຖ້ຳຈອມອອງ ແມ່ນເອີ້ນຕາມຊື່ຂອງບ້ານ, ປະຊາຊົນທ້ອງຖິ່ນເຄີຍເອີ້ນຊື່ຖ້ຳນີ້ໃນເມື່ອກ່ອນວ່າ ຖ້ຳເຈຍ ຫຼື ຖ້ຳຂີ້ເຈຍ ຍ້ອນວ່າສະໄໝກ່ອນ ມີໂຕເຈຍມາອາໄສຢູ່ເປັນຈຳນວນຫຼວງຫຼາຍ, ປະຊາຊົນເຂດຈອມອອງ ໄດ້ພາກັນຂຸດເອົາຂີ້ໂຕເຈຍຢູ່ໃນຖ້ຳມາເຮັດໝີ້ປືນແກັບ. ປະຊາຊົນໃກ້ຄຽງຖ້ຳ ຈຶ່ງໄດ້ພາກັນເອີ້ນຊື່ຂອງຖ້ຳນີ້ວ່າຖ້ຳເຈຍ ຫຼື ຖ້ຳຂີ້ເຈຍ. ແຕ່ທາງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ໂຄສະນາໃຫ້ເອີ້ນຊື່ວ່າຖ້ຳຈອມອອງ ຕາມຊື່ຂອງບ້ານເພື່ອໃຫ້ເຂົ້າໃຈງ່າຍ.

ບ້ານຈອມອອງອີກປະຫວັດໜຶ່ງທີ່ເອີ້ນວ່າຈອມອອງ ຍ້ອນວ່າ: ຄຳວ່າ “ຈອມ” ເປັນພາສາກຶມມຸ ແປວ່າຕິດ ຕາມໄປ, ນຳກົ້ນໄປ, ຄຳວ່າ “ອອງ”” ແປວ່າໂຕຕໍ່ດິນ, ໃນສະໄໝກ່ອນປະຊາຊົນເມືອງນາໝໍ້ໄດ້ໄປຄ້ອງຕໍ່ຫຼື ໃຊ້ພູມປັນຍາຈາກບັນພະບູລຸດ ເອົາຍອງຝ້າຍນ້ອຍໆອ່ອນໆມັດ ໃສ່ຕີນໂຕຕໍ່ແລ້ວກໍ່ປ່ອຍຕໍ່ໃຫ້ບິນກັບໄປ ປະຊາຊົນໄດ້ຕິດຕາມຕໍ່ນັ້ນ ບິນໄປບໍ່ຈັກແຫ່ງຫົນໃດໃນທີ່ສຸດຕໍ່ໂຕດັ່ງກ່າວໄດ້ບິນເຖິງ ພື້ນທີ່ດັ່ງກ່າວຊາວບ້ານເຫັນວ່າ ເປັນເຂດທີ່ອຸດົມສົມບູນ ເໝາະສົມໃນການຜະລິດກະສິກຳ, ປູກຝັງ, ລ້ຽງສັດ ຈຶ່ງພາກັນຍ້າຍຖິ່ນຖານມາຢູ່ບ້ານນີ້ ຈຶ່ງເອີ້ນວ່າບ້ານຈອມອອງຈົນເຖິງປັດຈຸບັນ.



**ສຳລັບດ້ານລຸ່ມເອີ້ນວ່າຖ້ຳນ້ຳອອກຮູ.**

ຖ້ຳນ້ຳອອກຮູຢູ່ໃນບໍລິເວນຖ້ຳຈອມອອງ ລັກສະນະຂອງຖ້ຳມີນ້ຳໄຫຼອອກມາຈາກຮູ ຄືກັບສາຍນ້ຳຫ້ວຍ, ເຊິ່ງໄຫຼມາແຕ່ເຂດບ້ານຫຼັກ 22 ລົງມາປ່ອງໃສ່ຖ້ຳ ພາຍໃນຖ້ຳມີຄວາມຍາວ ປະມານ 7 ກິໂລແມັດ, ມີລະບົບນິເວດທີ່ອຸດົມສົມບູນ ແລະ ເໝາະສົມແກ່ການໄປທ່ຽວຊົມ.

## 3. ອ່າງນ້ຳຫີນ.

ອ່າງນ້ຳຫີນ ຕັ້ງຢູ່ບ້ານຫ້ວຍອຸ່ນ ເມືອງໄຊ, ແຂວງອຸດົມໄຊ, ຫ່າງຈາກເທດສະບານເມືອງໄຊ ປະມານ 8 ກິໂລແມັດ, ອ່າງນີ້ປະກອບມີຫຼາຍຫ້ວຍ ທີ່ໄຫຼໂຮມເຂົ້າກັນ. ສະພາບເສັ້ນທາງເຂົ້າເຖິງສະດວກສະບາຍ ແຂວງພວມພັດທະນາປັບປຸງເປັນສະຖານທີ່ທ່ອງທ່ຽວ.ອ່າງນ້ຳຫີນ ສາມາດພັດທະນາທ່ອງທ່ຽວທຳມະຊາດຕຶກປາ, ອາບນ້ຳ, ຂີ່ເຮືອເລາະຊົມທຳມະຊາດ , ຮ້ານອາຫານ ແລະ ເປັນບ່ອນຕາກອາກາດສຳລັບນັກທ່ອງທ່ຽວທີ່ມັກຄວາມສະຫງົບ ແລະ ອາກາດສົດຊື່ນ.



ປີຄສ 2007. ແຂວງໄດ້ໃຊ້ງົບປະມານຈຳນວນມະຫາສານເພື່ອຕັນນ້ຳຫີນສ້າງເຂື່ອນຊົນລະປະທານຂະໜາດໃຫຍ່ ເພື່ອສົ່ງເສີມການຜະລິດທາງດ້ານກະສິກຳເປັນເຂດທີ່ອຸດົມສົມບູນ ອ່າງເກັບນ້ຳທີ່ໃຫຍ່ທີ່ສຸດຂອງແຂວງ ເປັນສະຖານທີ່ບໍລິການ, ສະຖານທີ່ທ່ອງທ່ຽວ ຊ່ວງເຮືອ ເນື້ອທີ່ອ່າງທັງໝົດ ມີປະມານ 121,7 ກິໂລຕາແມັດໄດ້ກວມເອົາ 7 ໝູ່ບ້ານ.



## 4. ຕາດຫຼັກ 11.

ຕາດຫຼັກ 11 ຕັ້ງຢູ່ບ້ານນາງິ້ວ ເມືອງໄຊ ແຂວງອຸດົມໄຊ. ຫ່າງຈາກເທດສະບານເມືອງໄປທາງທິດໃຕ້ທາງເລກທີ 13 ເໜືອ 11 ກິໂລແມັດ, ເປັນຕາດຂະໜາດນ້ອຍ.ປັດຈຸບັນຊາວບ້ານຄອບຄົວໜຶ່ງເປັນຜູ້ຄຸ້ມຄອງບໍລິການ ບໍ່ມີປະຫວັດຄວາມເປັນມາເອີ້ນຕາມກິໂລແມັດທີ່ 11 ຍ້ອນຕັ້ງຢູ່ກິໂລແມັດທີ 11. ລັກສະນະຂອງຕາດເປັນຕາດຂະນ້ອຍ ມີຄວາມສູງປະມານ 30 ແມັດ ແລະ ກວ້າງປະມານ 10-15 ແມັດໃນບໍລິເວນຕາດມີຕົ້ນໄມ້ປົກຫຸ້ມເຢັນສະບາຍ ເໝາະສົມໃນການແວ່ຊົມ ແລະ ພັກຜ່ອນຢ່ອນອາລົມສຳລັບນັກທ່ອງທ່ຽວທີ່ເດີນທາງຜ່ານໄປມາ ແລະ ເໝາະສຳລັບຊາວອຸດົມໄຊ ນິຍົມພັກຜ່ອນແບບຄອບຄົວ ໃນວັນສຳຄັນ ແລະ ວັນປະເພນີຕ່າງໆຂອງຊາດ.

## 5. ວັດຮອຍຕີນພະບາດ ບ້ານລ້ອງຍາ.



ຕາມການເລົ່າຂານສືບຕໍ່ກັນມາວ່າ: ຢູ່ທາງຕາເວັນອອກສຽງໃຕ້ມີປ່າໄມ້ ແລະ ຕົ້ນໄມ້ໃຫຍ່ດົກໜາ ເປັນທີ່ຢູ່ອາໄສຂອງສັດນາໆຊະນິດ. ດັ່ງນັ້ນ ໃນແຕ່ລະປີ ໄດ້ມີຊ້າງຝູງໜຶ່ງ ລ່ອງຫ້ວຍແຮ ມາກາບໄຫວ້ຮອຍຕີນພະບາດໃນມື້ວັນສິນໃຫຍ່ 14-15 ຄ່ຳເດືອນຈຽງເພັງ ໂດຍແມ່ນ ທ້າວແສນປັນຍາ ເປັນຜູ້ພົບເຫັນ ຊ້າງຝູງນັ້ນ ໄດ້ກາບໄຫວ້ດ້ວຍການນັ່ງຄຸລີງ ແລ້ວເອົາງວງຍົກຂຶ້ນຟ້າ ລັກສະນະເຮັດຄືຄົນເຮົາກາບໄຫ້ວ ແລ້ວກໍ່ພາກັນລ່ອງຫ້ວຍແຮ ຂ້າມນ້ຳກໍ່ລຽບຕີນພູທາງທິດຕາເວັນອອກສຽງເໜືອ ທຸກວັນນີ້ຊາວບ້ານລ້ອງຍາ ຈິ່ງເອີ້ນກັນວ່ານາຊ້າງລຽບ ຊ້າງຝູງນັ້ນມີພຶດຕິກຳບໍ່ດີ ເຊັ່ນ:ທຳລາຍຜົນລະປູກ ໄຮ່-ນາ-ຮົ້ວສວນຂອງປະຊາຊົນມີຜົນເສຍຫາຍ ປະຊາຊົນມີຄວາມຄຽດແຄ້ນ ຈິ່ງພາກັນເອົາປືນແກັບ, ປືນເພີງ ໄລ່ຍິງໂຫ່ຮ້ອງໃສ່ຊ້າງຝູງນັ້ນແຕກຕື່ນແລ່ນໜີ ມີຊ້າງໂຕໜຶ່ງຖືກຍິງບາດເຈັບ ມາຕາຍຢູ່ທາງທິດໃຕ້ຂອງບ້ານປຸງຫຽງ ປະຈຸບັນນີ້ເພິ່ນຈິ່ງເອີ້ນວ່ານາຝັງຊ້າງ.

**ການຄົ້ນພົບເຫັນຮອຍຕີນພະບາດ:**

ປີ 1915-1926 ໂດຍອີງໃສ່ຮີດຄອງທີ່ເຄີຍນັບຖືກັນມາ ທາງພຸດທະສາດສະໜາໄດ້ມີການເຂົ້າປະຕິບັດທຳຢູ່ວັດບ້ານລ້ອງຍາ, ດັ່ງນັ້ນ ເຖົ້າແກ່ທັງຫລາຍ ຈິ່ງແຕ່ງຕັ້ງກັນເມືອນິມົນພະພິຊຸສີງຢູ່ເມືອງຊ່າງຍອງ ປະເທດຈີນ ມາເຂົ້າກຳທີ່ວັດບ້ານລ້ອງຍາ ເມື່ອພະພິຊຸສີງມາຮອດແລ້ວ ເຖົ້າແກ່ພໍ່ແມ່ນ້ອຍໜຸ່ມຍິງສາວ ກໍ່ພາກັນຕົກແຕ່ງຫ້າງຫາເຄື່ອງທານ, ຕູບກຳ 3 ຕູບ, ພະຕູບ 3 ຕົນ ໄປປະຈຳຢູ່ໃນສັນເຂົ້າຄາບດຽວ. ທໍາດະທໍາເດືອ ໃນເມື່ອຫ້າງຫາກະກຽມແລ້ວ ໃນມື້ເດືອນເພັງ ກໍ່ມີການແຈກທານຈົນຮອດ 9 ວັນ 9 ຄືນ ຈິ່ງມີການເລືອກການເຂົ້າກຳ. ໃນເມື່ອກ່ອນ ກໍ່ແມ່ນການປະຕິບັດທຳມະຄຳສັ່ງສອນທາງພຸດທະສາດສະໜາ ໃນເມື່ອເລືອກກຳສະຫລອງກຳແລ້ວ ສາທຸຊ່າງຍອງ ກໍໄດ້ເອົາທຳມະພະບາດລຽບໂລກ ມາເທດສະໜາສະຫລອງກຳ ຕາມຄຳພີຂອງພະບາດ

ລຽບໂລກໄດ້ກ່າວວ່າ: ຢູ່ໃນໂລກມີຮອຍພະບາດຈຳນວນ 3 ຕື້ 4 ແສນ 150 ໝື່ນ ຮອຍຢູ່ໃນທົ່ວໂລກ ຕາມຄຳພີພະບາດລຽບໂລກໄດ້ກ່າວໄວ້ວ່າ: ຢູ່ຫ້ວຍແຮປ້ອງນ້ຳກຳ ກໍ່ມີ 1 ຮອຍ, ຮອຍຕີນເສນາ 2 ຮອຍ. ໃນເມື່ອສາທຸເທດສະໜາສຸດແລ້ວ ສາທຸກໍ່ໄດ້ ຄົ້ນຄວ້ານຳເຖົ້າແກ່ທີ່ມາຟັງທຳວ່າ ຢູ່ຫ້ວຍແຮກໍ່ມີ 1 ຮອຍ. ດັ່ງນັ້ນ ສາທຸ ຈິ່ງໄດ້ ຄົ້ນຄວ້າຕົກແຕ່ງກັນ ຊອກຫາຮອຍຕີນພະບາດ. ສ່ວນສາທຸ ກໍ່ໄດ້ຂຶ້ນໄປຊອກຢູ່ທາງ ເມືອງນາໝໍ້ ເຂດບ້ານອ່າຍ, ບ້ານຂວາງ ໄປຊອກນ້ຳກຳປ່ອງ, ນ້ຳພາກ ກໍ່ບໍ່ເຫັນຊອກຫາ ທຸກສາລະທິດກໍ່ບໍ່ເຫັນ. ຈິ່ງກັບຄືນມາວັດບ້ານລ້ອງຍາ ສາທຸຈິ່ງຄົ້ນຄວ້ານຳເຖົ້າແກ່ ແລ້ວພາກັນຊອກແຕ່ປາກຫ້ວຍແຮປ່ອງນ້ຳກຳ; ເມື່ອໄປຮອດບ່ອນປ່າດົງໜາປ່າໄມ້ໃຫ່ຍ ບ່ອນທີ່ຝູງຊ້າງມາກາບໄຫ້ວໃນເມື່ອກ່ອນ ຜ່ານໄປຫລາຍປີທີ່ ທ້າວແສນປັນຍາ ເມື່ອ ພົບເຫັນຊ້າງມາກາບໄຫວ້ ກໍ່ເຫັນກ້ອນຫີນກ້ອນໜຶ່ງ ຍາວປະມານ 1,5 ແມັດ ກ້ວາງ ປະມານ 80 ຊັງຕີແມັດ, ສູງປະມານ 50 ຊັງຕີແມັດ. ມີສີດຳເຫລື້ອມຫລິ່ງໄປທາງ ທິດຕາເວັນຕົກ ມີແຕ່ສົ້ນຕີນ ບໍ່ມີນິ້ວ ຢູ່ໃນວົງສົ້ນຕີນມີ 4 ຮອຍ ຕາມຄຳພີດີກາກ່າວ ໄວ້ວ່າ:

- ຮອຍສົ້ນທີ່1: ກະກຸສັນໂທ
- ຮອຍສົ້ນທີ່2: ໂກນາກຳມະໂນ
- ຮອຍສົ້ນທີ່3: ກັດສະໂປ
- ຮອຍສົ້ນທີ່4: ໂຄຕະໂມ

ຊ້ອນກັນຢູ່ໃນວົງຂອງສົ້ນຕີນ ສ່ວນຮອຍທີ 5 ຊື່ວ່າ: ອະຣິຍະເມດໄຕ ເປັນຮອຍສຸດ ທ້າຍ ຍັງບໍ່ທັນມາເທື່ອ. ຮອຍພະບາດແມ່ນຫລິ່ງ (ງ່ຽງ) ໄປທາງທິດຕາເວັນຕົກ ປະມານ 90 ອົງສາ ເປັນກ້ອນຫີນສີດຳເຫຼື້ອມ ເປັນໜ້າອັດສະຈັນ ແລະ ພິດສະດານ ບໍ່ມີສັດໂຕໃດມາຣຸກສີ, ໃບໄມ້ໃບໜຶ່ງ ກໍ່ບໍ່ຕົກມາໃສ່ຮອຍຕີນ ທັງທີ່ວ່າຢູ່ບໍລິເວັນນັ້ນ ມີຕົ້ນໄມ້ເບິ່ງແລ້ວເປັນຕາເບິ່ງຕາຊົມ. ໃນເມື່ອເຫັນກ້ອນຫີນແປກປະຫລາດແນວນັ້ນ



ສາທຸຈຶ່ງເວົ້ານຳເຖົ້າແກ່ທຸກຄົນທີ່ໄດ້ມາຮູ້ມາເຫັນວ່າ ນີ້ແລ້ວແມ່ນຮອຍພະບາດທີ່ອອກຢູ່ໃນທຳພະບາດລຽບໂລກວ່າ ຫ້ວຍແຮປ່ອງນໍ້າ ກໍມີ 1 ຮອຍ, ເປັນແຕ່ນຳບຸນກຸສົນຂອງພວກເຮົາທີ່ໄດ້ມາຄົ້ນຫາຫລາຍວັນ ຈຶ່ງໄດ້ມາພົບພໍ້ ສາທຸຈຶ່ງໄດ້ບອກກ່າວໃຫ້ເຖົ້າແກ່ທັງຫລາຍວ່າ: ໃຫ້ພາກັນປົກປັກຮັກສາ ຖ້າບຸກຄົນໃດມີສັດທາ ຢາກມາສ້າງສາ ໃຫ້ນົບຂຶບຢຳເມດຕາພາວັນນາຈຳສິນ, ຕັ້ງທຳໂຮງສ້າງກວມຮອຍພະບາດນີ້ກໍ່ໄດ້ ແຕ່ຫ້າມບໍ່ໃຫ້ງັດແງະ, ບໍ່ໃຫ້ພິກປີ້ນ ແມ່ນແຕ່ເສັ້ນຜົມຜ່າແປດ ມັນຈະເກີດອຸປະຕິເຫດໂກລະຫົນ ແພ້ບ້ານແພ້ເມືອງ, ຄົນຈະລົ້ມຕາຍ ໂດຍສະເພາະແມ່ນຊາວບ້ານລ້ອງຍາ. ໃນເມື່ອຄົ້ນພົບຮອຍຕີນພະບາດເຫັນແລ້ວ ສາທຸຍັງນຳພາເຖົ້າແກ່ ຊອກຫາຮອຍຕີນເສນາທັງ 2 ຮອຍທີ່ໄດ້ກ່າວໃນທຳພະບາດລຽບໂລກ ໃນທີ່ສຸດສາທຸ ແລະ ເຖົ້າແກ່ ກໍໄດ້ຄົ້ນພົບຮອຍຕີນເສນາທັງ 2; ຮອຍທີ 1 ຢູ່ທິດຕາເວັນຕົກສຽງໃຕ້ຂອງບ້ານລ້ອງຍາ ຮອຍທີ 2 ຢູ່ທີ່ທິດຕາເວັນອອກສຽງໃຕ້ ຫ່າງຈາກຮອຍພະບາດ 200 ແມັດ ໃນເມື່ອຄົ້ນພົບຮອຍພະບາດ ແລະ ຕີນເສນາທັງ 2 ແລ້ວ ສາທຸ ກໍ່ໃຫ້ຄຳໂອວາດຕັກເຕືອນເຖົ້າແກ່ ແລະຊາວບ້ານ ແລ້ວກໍ່ກັບຄືນເມືອຊ່າງຍອງ ເພື່ອຈະເມືອເອົານໍ້າຮັກ, ນໍ້າຫາງ ແລ້ວຈະກັບຄືນມານຳພາເຖົ້າແກ່ ແລະ ຊາວບ້ານ ສ້າງສາພະບາດໃຫ້ເປັນທີ່ເຄົາລົບກາບໄຫ້ວແກ່ຊາວພຸດທັງຫລາຍ. ໃນທີ່ສຸດ ສາທຸກໍ່ບໍ່ໄດ້ກັບຄືນມາ ຍ້ອນສະພາບການບ້ານເມືອງການໄປມາຫາສູ່ກັນບໍ່ໄດ້ແລ້ວ. ໃນເມື່ອເຖົ້າແກ່ ແລະ ຊາວບ້ານລໍຖ້າສາທຸບໍ່ມາ ຈຶ່ງພາກັນຕັ້ງຕູບນ້ອຍກວມເອົາຮອຍພະບາດ, ເອົານໍ້າເຕົ້າດິນວາງໄວ້, ຮອດມື້ປີໃໝ່ ເຂົ້າພັນສາ-ອອກພັນສາ ຈຶ່ງພາກັນເມືອແຈກເມືອທານ ຕາມຮີດຄອງປະເພນີທີ່ເຊື່ອຖືກັນມາ.

❖ <u>**ການກໍ່ສ້າງຮອຍພະບາດຖືກຫລົ້ມເຫລວ**</u>

ມາເຖິງປີ 1930 ສຽງຊາລືໄປທຸກສາລະທິດ ວ່າຢູ່ຫ້ວຍແຮປ່ອງນໍ້າກໍມີຮອຍຕີນພະບາດຢູ່ບ້ານລ້ອງຍາ ເມືອງໄຊ ແຂວງອຸດົມໄຊ ໃນປະຈຸບັນ ປ່າວຂ່າວລືໄປຮອດນໍ້າບາກ, ນໍ້າອູ ເວລານັ້ນມີສາທຸລາວ ຈຳນວນ 22 ອົງ ຂຶ້ນມາແຕ່ຫາດສາດອນລ້ອມມາກິນທານທີ່ວັດພະເຈົ້າສິງຄຳ ເມືອງຫລາ ເມື່ອກິນທານແລ້ວ ເພິ່ນຈຶ່ງພາກັນຂຶ້ນຕາມນໍ້າກໍມາຮອດວັດລ້ອງຍາ ເມື່ອສາທຸມາເຖິງແລ້ວ ກໍ່ໄດ້ເອີ້ນເຖົ້າແກ່ທັງຫລາຍມາຖາມວ່າ ຢູ່ຫ້ວຍແຮປ່ອງນໍ້າກໍ ຢູ່ບ້ານລ້ອງຍາ ມີຮອຍຕີນພະບາດບໍ່? ເຖົ້າແກ່ທັງຫລາຍກໍ່ໄດ້ກາບອາລັດທະນາຕອບສາທຸວ່າ ໂດຍແມ່ນແລ້ວ ເມື່ອສາທຸໄດ້ຍິນ ຈຶ່ງໃຫ້ເຖົ້າແກ່ພາໄປເບິ່ງຕົວຈິງ ແມ່ນຮອຍພະບາດແທ້ ດັ່ງນັ້ນສາທຸກໍ່ມີຈິດໃຈຢາກສ້າງ ຈຶ່ງໄດ້ປຶກສາຫາລືນຳເຖົ້າແກ່ທັງຫລາຍ ກໍເຫັນດີເປັນເອກະພາບຕົກລົງພ້ອມກັນລົງມືສ້າງ: ສາທຸ ແລະ ຊາວບ້ານທັງຫລາຍ ໄດ້ຂຸດທາງແຕ່ບ້ານອ້ອມພູເຈີງ ລວງກວ້າງ 2 ແມັດ ລວງຍາວປະມານ 200 ແມັດ ໄປຮອດຕີນພະບາດ ຍ່າງສະດວກໃນການໄປມາ, ຂຸດເດີ່ນສະຖານທີ່ຮາບພຽງ ໂດຍນຳເອົາກ້ອນຫີນມາກໍ່ອ້ອມຮອຍຕີນພະບາດຢ່າງສະອາດງາມຕາໃນທຸກໆດ້ານ ແຕ່ຮອຍພະບາດມັນຫລິ່ງໄປທາງທິດຕາ ເວັນຕົກ ເພື່ອຢາກໃຫ້ມັນພຽງກັນ ຈຶ່ງພາກັນຂຸດອ້ອມ ແລ້ວເອົາໄມ້ມາງັດແງະມັນ ມີຜົນສະທ້ອນຕໍ່ຮອຍຕີນພະບາດ ທັນໃດນັ້ນ ກໍ່ເກີດເຫດກົນລະຫົນທີ່ບໍ່ຄາດຄິດຂຶ້ນມາທັນທີ ສາທຸທັງຫລາຍກໍ່ເລືອດດັງອອກ ມີບາງຕົນກໍ່ເລືອດສົບອອກ ເປັນຕາຢ້ານກົວທີ່ສຸດ ເມື່ອເກີດເຫດແນວນັ້ນ ສາທຸທັງຫລາຍກໍ່ພາກັນແຕກໜີໄປໃຜໄປມັນ ໂດຍບໍ່ມາຢຽບຮອດວັດອີກເລີຍ, ສ່ວນຊາວບ້ານ ກໍ່ມີເຫດລົ້ມຕາຍແຕ່ລະມື້ແຕ່ລະວັນບໍ່ຂາດ, ເອົາໄປຝັງທາງໜ້າ ຜູ້ຢູ່ບ້ານຕາຍອີກຢ່າງຕໍ່ເນື່ອງລຽນຕິດ. ຈົນຂ່າວຄາວໄປຮອດບ້ານໃຕ້ບ້ານເໜືອ ສະພາບຜ່ານໄປໄດ້ 15 ວັນ ຜູ້ຄົນກໍ່ຍັງລົ້ມຫາຍຕາຍຈາກ ເມື່ອເປັນແນວນັ້ນ ຊາວບ້ານ ກໍ່ພາກັນແຕກຕື່ນຢ້ານກົວ ຈຳນວນໜຶ່ງກໍ່ພາກັນໜີໄປຢູ່ເມືອງຜາອຸດົມ, ຈຳນວນໜຶ່ງກໍ່ພາກັນໜີໄປຢູ່ເມືອງຫ້ວຍຊາຍ, ຈຳນວນໜຶ່ງກໍ່ໜີໄປຢູ່ນຳພີ່ນ້ອງບ້ານໃຕ້-ເໜືອ, ເກີດເປັນບ້ານເສົ້າເມືອງໝອງ ແຕ່ລະມື້ ຊາວບ້ານນໍ້າຫູມານໍ້າຕາອອກ, ມີຄວາມຢ້ານກົວແຕ່ລະມື້ບໍ່ມີຄວາມສະຫງົບ ເມື່ອສະພາບເປັນຄືແນວນັ້ນ ບັນດາເຖົ້າແກ່ທັງຫລາຍນຳພາໂດຍເຖົ້າແສນປັນຍາ, ເຖົ້າແສນລັງສີ ແລະ ເຖົ້າແສນທະນາ ຫ້າງຂັນດອກໄມ້ທຽນ 12 ຄູ່ ເມືອຄາລະວະສົມມາຮອຍຕີນພະບາດ ທີ່ສາທຸ ແລະ ເຖົ້າແກ່ຊາວບ້ານທັງຫລາຍໄດ້ກະທຳຜິດຂຸດອ້ອມ, ງັດແງະ ແລະ ພິກປີ້ນ ເຮັດໃຫ້ມີການເຄື່ອນເໜັງຕີງທີ່ສົ່ງຜົນກະທົບຕໍ່ຮອຍຕີນພະບາດ. ຫຼັງຈາກນັ້ນ ສະພາບການຕາຍ ແລະ ສິ່ງທີ່ສະທ້ານຢ້ານກົວຂອງຊາວບ້ານ ຈຶ່ງສະຫງົບລົງ, ເຖົ້າແກ່ທັງຫລາຍ ຈຶ່ງມາສະດຸ້ງຕື່ນຄິດອອກຄຳສັ່ງສອນຂອງສາທຸຊ່າງຍອງ ໄດ້ບອກກ່າວໄວ້ວ່າ: ຫ້າມບໍ່ໃຫ້ພິກ, ປີ້ນ

ເຄື່ອນຍ້າຍ, ງັດແງະ ແມ່ນແຕ່ເສັ້ນຜົມຜ່າແປດ ມັນຈະເກີດເຫດຮ້າຍມີເພດໄພສະທ້ານຍ້ານກົວ, ຜູ້ຄົນລົ້ມຕາຍ.

ເປັນອັນວ່າການກໍ່ສ້າງພະບາດໃນຄັ້ງນັ້ນ ກໍ່ໄດ້ຢຸດເຊົາລົງ ຫາຜູ້ມາສືບຕໍ່ກໍ່ສ້າງກໍ່ບໍ່ມີ ສະພາບການບ້ານເມືອງເກີດເສິກທາງເໜືອເສືອທາງໃຕ້ ການໄປມາຫາສູ່ກັນກໍ່ມີໂຈນຮ້າຍ, ຂະໂມຍເກີດຂຶ້ນ. ເກີດເສິກສົງຄາມຕໍ່ສູ້ກັນມາຫລາຍປີ ປະເທດຊາດໄດ້ຖືກສັດຕູເຜົາຜານວັດວາອາຮາມ. ຮອຍພະບາດຖືກທໍາລາຍ ເກີດເປັນບ້ານຮ້າງເມືອງໝອງຢ່າງໜ້າສົມເພດເວດທະນາ ຈາກສົງຄາມຍືດເຍື້ອຍາວນານກວ່າ 60 ປີ.

❖ <u>***ການກໍ່ສ້າງ ແລະ ປະຕິສັງຂອນຮອຍຕີນພະບາດຄືນໃໝ່***</u>

ມາເຖິງປີ 1960-1965 ເຖົ້າແກ່ເມືອປຸກຕູບນ້ອຍກວມຮອຍຕີນພະບາດໄວ້ເພື່ອເປັນການອານຸລັກໄວ້,ເອົານໍ້າເຕົ້າຂັນໝາກເມືອໄຫວ້ ພໍເຖິງເດືອນ 6 ປີໃໝ່, ເຂົ້າພັນສາ ແລະ ອອກພັນສາ ກໍ່ພາກັນເມືອແຈກເມືອທານ ຕາມຮີດຄອງທາງພຸດທະສາດສະໜາທີ່ເຄີຍປະຕິບັດກັນມາ ຈະເຮັດລື່ນນັ້ນກໍ່ຍ້ານເກີດເຫດເພດໄພສະທ້ານຍ້ານກົວຜູ້ຄົນລົ້ມຕາຍຄືໃນເມື່ອກ່ອນທີ່ຜ່ານມາ.

ມາເຖິງປີ 1975 ປະເທດຊາດໄດ້ຮັບການປົດປ່ອຍທົ່ວປະເທດ ມີການປ່ຽນໄປສູ່ລະບອບການປົກຄອງໃໝ່ ແລະ ມີການພັດທະນາໃນທຸກດ້ານ. ດັ່ງນັ້ນທາງພຸດທະສາດສະໜາກໍ່ໄດ້ຮັບການປັບປຸງ ແລະ ສ້າງສາພັດທະນາໄປພ້ອມໆກັນເຊັ່ນ: ວັດວາອາຮາມ, ຮອຍພະບາດ, ເຈດີ, ກຸດຕິວິຫານທີ່ຖືກທໍາລາຍໃນສະໄໝສົງຄາມອາເມຣິກາ ກໍ່ໄດ້ສ້າງສາພັດທະນາຄືນໃໝ່.

ມາເຖິງປີ 1985 ເຖົ້າແກ່ໄດ້ຊອກຫາທຸກວິທີທາງ ເພື່ອປະຕິສັງຂອນພະບາດຄືນໃໝ່ ເພື່ອໃຫ້ເປັນທີ່ເຄົາລົບບູຊາຂອງຊາວພຸດທັງຫລາຍ. ດັ່ງນັ້ນ ທາງເຖົ້າແກ່ຈຶ່ງໄດ້ເຊີນທ່ານ ອາຈານ ໄມ່ ດວງຄໍາ ຜູ້ຮູ້ຮີດຄອງທາງພຸດທະສາດສະໜາ ເປັນຜູ້ມານໍາພາສ້າງສາປະຕິສັງຂອນ ແຕ່ຫ້າມຂຸດ, ງັດແງະ, ພິກປີ້ນ ທ່ານໄດ້ນໍາພາສ້າງໃນທຸກດ້ານເຊັ່ນ: ປັບປຸງເດີ່ນເຂດພະບາດ ໃຫ້ມີຄວາມສວຍງາມ ຄືດັ່ງຄົນຫລຸນກ່ອນທີ່ໄດ້ສ້າງປະໄວ້ໃຫ້ພວກເຮົາສືບຕໍ່, ປັບປຸງຄືນໃໝ່ໃຫ້ມີຄວາມສວຍສົດງົດງາມ ເປັນຕາເບິ່ງຕາຊົມການປະຕິສັງຂອນໃນເທື່ອນີ້ ແມ່ນມີຄວາມແຕກຕ່າງຈາກເມື່ອກ່ອນ ໄດ້ນໍາເອົາຮອຍຕີນເສນາກໍ້າຂວາ-ກໍ້າຊາຍມາໄວ້ຄຽງຂ້າງຮອຍຕີນພະບາດ. ພ້ອມນັ້ນ ກໍ່ໄດ້ເອົາຮອຍຕີນສັດນາໆຊະນິດມາຈັດສັນອ້ອມຮອຍຕີນພະບາດເຊັ່ນ: ຮອຍຕີນຊ້າງ-ມ້າ-ນົກ-ງົວປ່າ-ຄວາຍປ່າ-ເສືອ-ສິງ-ລິງ-ເປັດ-ໄກ່ ແລະ ໝາປ່າ, ຈັດສັນຢ່າງເປັນລະບຽບງາມຕາແກ່ຜູ້ມາເບິ່ງມາຊົມມີຄວາມຊົມຊື່ນຍິນດີ ແລະ ເປັນສະຖານທີ່ເຄົາລົບບູຊາທີ່ສັກສິດຂອງຊາວພຸດທະສາສະນິກກະຊົນທັງຫລາຍ. ທ່ານກໍ່ໄດ້ນໍາພາສ້າງສາໃນທຸກດ້ານຢູ່ເຂດຮອຍພະບາດ. ແຕ່ຫ້າມບໍ່ໃຫ້ໃສ່ປະຕູອັດແຈບ, ປະຕູຕາໜ່າງເຫລັກ, ບໍ່ໃຫ້ເຮັດຮົ້ວມາອ້ອມລ້ອມບັງກັ້ງ ຍ້ອນວ່າຮອດມື້ວັນສິນ 7-8 ຄໍ່າ, 14-15 ຄໍ່າເດືອນເພັງ-ເດືອນແຮມ ມີສັດນາໆຊະນິດ ມາກາບໄຫວ້ສັກກາລະບູຊາຮອຍຕີນພະບາດ. ໃນການສ້າງສາປະຕິສັງຂອນໃນຄັ້ງນີ້ ບໍ່ມີເຫດການຫຍັງເກີດຂຶ້ນ, ມີແຕ່ຄວາມອຸດົມທີຈໍາເລີນເຮັດໃຫ້ຜູ້ຄົນຫລັ່ງໄຫລກັນມາສ້າງສາມາເບິ່ງມາຊົມສັກ ກາລະບູຊາ, ຊື່ສຽງຮຽງນາມຂອງຮອຍພະບາດ ໄດ້ແຜ່ຂະຫຍາຍໄປທຸກບ້ານນ້ອຍເມືອງໃຫຍ່ ຜູ້ມີສັດທາໃຈບຸນຮູ້ຂ່າວຄາວ ກໍ່ພາກັນມາແຜ່ເມດຕາພາວະນາບໍ່ຂາດ ຈົນເຖິງທຸກວັນນີ້.

## 6. ວັດພູທາດໄຊມຸງຄຸນລັດຕະນະມິ່ງເມືອງ.





ພະທາດໄຊມຸງຄຸນ ລັດຕະນະມິ່ງເມືອງ ຕັ້ງຢູ່ບ້ານນາຫວານນ້ອຍ (ຈຸດໃຈກາງເທດສະບານແຂວງ). ພະທາດນີ້ມີຄວາມສູງ 18 ແມັດ, ກວ້າງ 18x18 ແມັດເປັນພະທາດທີ່ສວຍງາມແລະ ເປັນທີ່ສັກກະລະບູຊາຂອງຊາວ ແຂວງອຸດົມໄຊ ແລະ ພຸດທະສາສະນິກະຊົນທົ່ວໄປເຂົ້າມາທ່ຽວກາບໄຫວ້ ແລະ ຊົມທິວທັດ ແລະ ສຳພັດບັນຍາກາດຕົວເມືອງໄຊ ແລະ ກາບໄຫວ້ສັກກາລະບູຊາ. ທ່າແຮງຂອງທາດມິ່ງເມືອງ ຕັ້ງຢູ່ໃຈກາງເທດສະບານແຂວງ ເປັນສູນກາງທາງດ້ານວັດທະນະທຳ, ເປັນທີ່ເພິ່ງທາງໃຈ, ສະຖານທີ່ສັກກາລະບູຊາກາບໄຫວ້, ສະຖານພັກຜ່ອນໃນຍາມແລງ ແລະ ເປັນຂວັນບ້ານມິ່ງເມືອງຂອງແຂວງອຸດົມໄຊ ຖ້າຜູ້ໃດມາແຂວງອຸດົມໄຊ ບໍ່ໄດ້ຂຶ້ນວັດພູທາດ ກໍ່ຊໍ່າກັບວ່າບໍ່ໄດ້ມາຮອດແຂວງອຸດົມໄຊ.

ພະທາດໄຊມຸງຄຸນ ຣັດຕະນະມິ່ງເມືອງ ໄດ້ສ້າງຂຶ້ນໃໝ່ໃນປີຄສ 1996 ແລະ ເປີດບໍລິການໃນປີຄສ 1997. ເມື່ອກ່ອນເອີ້ນວ່າ “ພະທາດ” ຕາມການສັນນິຖານ ທາດດັ່ງກ່າວ ໄດ້ສ້າງຂຶ້ນໃນສະໄໝເຈົ້າໄຊຍະເສດຖາທິລາດ ປະມານ 400-500 ປີກ່ອນນີ້. ພະທາດດັ່ງກ່າວມີຄວາມສູງປະມານ 4-5 ແມັດ ກໍ່ດ້ວຍດິນຈີ່ກາງທາດ. ໃນສະໄໝສົງຄາມຝຣັ່ງ ແລະ ອາເມລິກາ, ພະທາດໄດ້ຖືກທຳລາຍເປເພ່ ເຫຼືອແຕ່ກອງດິນຈີ່. ມາຮອດປີ 1990 ບໍລິສັດນໍ້າມັນເຊື້ອໄຟ ໄດ້ສ້າງເສັ້ນທາງຂຶ້ນ ແລະ ມາຮອດປີ 1996 ແຂວງອຸດົມໄຊ ໄດ້ປະຕິສັງຂອນຄືນໃໝ່ ໂດຍສ້າງທາດຂຶ້ນໃໝ່ ເຊິ່ງກວມເອົາທາດເກົ່າມີລວງສູງ 18 ແມັດ, ກວ້າງ 18X18 ແມັດ, ໄດ້ປ່ຽນຊື່ໃໝ່ ເອີ້ນວ່າພະທາດໄຊມຸງຄຸນຣັດຕະນະມິ່ງເມືອງ ໄດ້ສະຫຼອງໃນເດືອນ 3 ເພັງຂອງທຸກໆປີ. ທຶນປັບປຸງ ແມ່ນຂອງລັດຖະບານມູນຄ່າ 60 ລ້ານກວ່າກີບ, ເລີ່ມສ້າງແຕ່ວັນທີ 09/01/1996 - 9/01/1997 ສຳເລັດ ແລະ ຈັດພິທີສະຫຼອງວັນທີ 19-22/2/1997.

## 7. ຕົ້ນໄມ້ມະນີໂຄດວັດສົມຕິພາບ.



ຕົ້ນໄມ້ມະນີໂຄດ ຕັ້ງຢູ່ວັດບ້ານເຈງ, ໃຈກາງເທດສະບານເມືອງໄຊ. ສາມາດເຂົ້າເຖິງໄດ້ຢ່າງສະດວກສະບາຍ. ເປັນຕົ້ນໄມ້ທີ່ສ້າງຂຶ້ນມາເປັນຮູບຈຳລອງເພື່ອໃຫ້ຊາວພຸດທະສາສະນິກະຊົນທົ່ວ ໄປໄດ້ໄປໄຫວ້ສັກກາລະບູຊາຕາມການເຊື່ອຖືຂອງຊາວພຸດ ເວົ້າສະເພາະຊາວແຂວງອຸດົມໄຊ ເປັນການຈຳລອງໃຫ້ອະນຸຊົນລຸ້ນຫຼັງ ໄດ້ສຶກສາຮຽນຮູ້ປະຫວັດຄວາມເປັນມາຂອງຕົ້ນໄມ້ມະນີໂຄດ ທີ່ຕິດພັນກັບສາດສະໜາພຸດ. ຕົ້ນໄມ້ມະນີໂຄດ ໄດ້ສ້າງຂຶ້ນໃນຮູບແບບຈຳລອງຂອງ ໄມ່ດວງຄຳ ເປັນຕົ້ນໄມ້ສັກສິດປະເພດໜຶ່ງ ທີ່ເກີດຂຶ້ນຢູ່ປ່າໄມ້ຫິມມະພານ ທີ່ບໍ່ແມ່ນໂລກມະນຸດ. ຕົ້ນໄມ້ດັ່ງກ່າວ ມີອາຍຸຍືນເຖິງ 4,476 ປີ. ເປັນຕົ້ນໄມ້ວິເສດ (ແປກປະຫຼາດ), ໝາກຂອງມັນມີຄວາມໃຫຍ່ເຖິງ 260 ກຳມືນທົນເທົ່າກັນ ແລະ ສັດທັງຫຼາຍກໍ່ກິນບໍ່ໄດ້. ໝາກໄມ້ນີ້ຕົກຍາມໃດເຮັດໃຫ້ໜ້ານ້ຳ ແລະ ແຜ່ນດິນສັ່ນສະເທືອນຫວັ່ນໄຫວ, ມັນໄດ້ສິ່ງຜົນສະທ້ອນໃຫ້ແກ່ພະຍານາກ ແລະທຸກສິ່ງທີ່ມີຊີວິດຢູ່ໃນບໍລິເວນປ່າໄມ້ຫິມມະພານທັງຫຼາຍຢູ່ບໍ່ໄດ້ກິນບໍ່ເປັນ. ຈາກນັ້ນພະຍານາກ ແລະ ສັດທັງຫຼາຍຈຶ່ງໄດ້ມາປຶກສາຫາລືກັນ ຊອກຫາວິທີທາງທີ່ຈະແກ້ໄຂ. ເວລາດຽວກັນນັ້ນ ໄດ້ມີພະຍາອິນສັ່ງໃຫ້ເທວະບຸດ ເນລະມິດເປັນນົກກາທອງ ມາບອກໃຫ້ພະຍານາກວ່າ ໃຫ້ພວກເຈົ້າໄປໄຫວ້ພະພຸດທະເຈົ້າ ມາປາບຈຶ່ງຈະໄດ້ ແລ້ວນົກກາທອງກໍ່ເລີຍຫາຍໄປ. ຫຼັງຈາກນັ້ນພະຍານາກກໍ່ໄປໄຫວ້ພະພຸດທະເຈົ້າຕາມການບອກເລົ່າຂອງເທວະບຸດ. ຕໍ່ມາພະພຸດທະເຈົ້າ ໄດ້ສະເດັດມານັ່ງຈຳສິນພາວະນາຢູ່ກ້ອງຕົ້ນໄມ້ມະນີໂຄດຕາມຄຳໄຫວ້ຂອງພະຍານາກ ແລະ ສັດທັງຫຼາຍ ເພື່ອປາບໝາກໄມ້ຕົກ ແລະ ພະຍາອິນກໍ່ໄດ້ເນລະມິດເປັນນາງເທວະດາ ມານອນຢູ່ງ່າໄມ້ມະນີໂຄດ ເພື່ອປາບຊ່ອຍກັນ. ຕໍ່ມາຕົ້ນໄມ້ ແລະ ໝາກໄມ້ກໍ່ເລີຍຫົດແຫ່ວລົງ ແລະ ບໍ່ມີລິດເດດຄືຜ່ານມາ. ຈາກນັ້ນ ສັດທັງຫຼາຍຈຶ່ງກິນໝາກໄມ້ນັ້ນໄດ້. ເຊິ່ງໝາກໄມ້ແຕ່ລະງ່າ ແມ່ນມີຄວາມແຕກຕ່າງກັນເຊັ່ນວ່າ: ສັດກິນຖືກງ່າເປັນ ກໍ່ຈະກາຍເປັນຄົນ, ຄົນກິນຖືກງ່າເປັນ ກໍ່ຈະກາຍເປັນສັດ, ສັດກິນຖືກງ່າມີແຮງ ກໍ່ຈະມີແຮງ ແລະ ກິນຖືກງ່າອາຍຸຍືນ ກໍ່ຈະອາຍຸຍືນ. ຕົ້ນໄມ້ມະນີໂຄດດັ່ງກ່າວ ອອກແບບ ແລະ ກໍ່ສ້າງໂດຍ ທ່ານ ໄມ່ດວງຄຳ ເກີດຢູ່ບ້ານລາດຫານ, ເມືອງງາ, ແຂວງອຸດົມໄຊ, ປະຈຸບັນຢູ່ບ້ານໜອງແມງດາ. ໃນອາດີດພໍ່ອາຍຸໄດ້ 21 ປີ ທ່ານໄດ້ບວດເປັນສຳມະເນນ ເຄື່ອນໄຫວຕາມວັດຕ່າງໆຢູ່ຫຼວງພະບາງ ແລະ ວຽງຈັນ. ວັນໜຶ່ງ ທ່ານໄດ້ຫາຍຕົວໄປໂດຍບັງເອີນ ເປັນເວລາ 3 ເດືອນກັບ 16 ວັນ ທ່ານໄດ້ໄປສະຫິດຕາມຄວາມຈິງທີ່ພະພຸດທະເຈົ້າພາໄປ. ຈາກນັ້ນມາເຖິງປີ 1990 ທ່ານຈຶ່ງໄດ້ອອກແບບປະດິດຄິດແຕ່ງ ສ້າງຕົ້ນໄມ້ມະນີໂຄດນີ້ຂຶ້ນ ເພື່ອເປັນທີ່ສັກກະລະບູຊາໃຫ້ແກ່ຜູ້ຄົນທັງຫຼາຍ ທີ່ເຄົາລົບນົບໄຫ້ວຍ້ອນວ່າຕົ້ນໄມ້ດັ່ງກ່າວເປັນຕົ້ນໄມ້ວິເສດ.

## ໘. ເຜົ່າກຶມມຸ ບ້ານແຟນ.



ບ້ານແຟນ ເປັນບ້ານເຜົ່າກຶມມຸ ຕັ້ງຢູ່ເມືອງໄຊ ຫ່າງຈາກເທດສະບານແຂວງ ປະມານ 7 ກິໂລແມັດ. ສະພາບເສັ້ນທາງເຂົ້າເຖິງບ້ານ ເປັນເສັ້ນທາງປູຢາງ 5 ກິໂລແມັດ ແລະ ທາງດິນແດງ 3 ກິໂລແມັດ, ເປັນເສັ້ນທາງປູດ້ວຍຫີນແຮ່. ຈຸດເດັ່ນທ່າແຮງຂອງບ້ານແມ່ນເປັນບ້ານຊົນເຜົ່າທີ່ຍັງຮັກສາຮີດຄອງປະເພນີ, ມີວິຖີຊີວິດແຕກຕ່າງຈາກເຜົ່າອື່ນໆ ແລະ ສິ່ງທີ່ໂດດເດັ່ນພິເສດ ແມ່ນບ້ານນີ້ ມີແຫຼ່ງທ່ອງທ່ຽວນ້ຳຕົກຕາດນ້ຳກັດ ເຊິ່ງເປັນນ້ຳຕົກຕາດທີ່ສວຍງາມຢູ່ພາຍໃນແຂວງ ແລະ ທັງອຸດົມສົມບູນໄປດ້ວຍດ້ວຍທຳມະຊາດ, ມີຕົ້ນໄມ້ໃຫຍ່, ຊີວະນາໆພັນ ເໝາະສົມແກ່ການໄປທ່ຽວຊົມຍ່າງປ່າ, ກິນເຂົ້າປ່າ ແລະ ຫຼິ້ນນ້ຳຕົກ ເປັນບ້ານທີ່ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ ພັດທະນາເປັນບ້ານເຄືອຄ່າຍຫັດຖະກຳໄມ້ປ່ອງ ແລະ ບ້ານ CBT ທ່ຽວຊົມບ້ານແຟນ-ພູຜາແດງ-ຕາດນ້ຳກັດ.

ຊາວບ້ານແຟນ ໄດ້ຍົກຍ້າຍພູມລຳເນົາມາຈາກບ້ານບາລູ ເຂດແສນຍອດ ເບື້ອງຕົ້ນມີ 3 ຄອບຄົວມາ ຮັບຈ້າງຢູ່ເມືອງໄຊ, ສາມເດືອນຕໍ່ມາ ຈຶ່ງໄດ້ພາກັນຍ້າຍມາຕັ້ງຖິ່ນຖານຢູ່ຫົວນ້ຳແຟນ ໃນເວລານັ້ນ ໄດ້ມີຊາວບ້ານ 3 ຄົນ ພາກັນອອກໄປລ່າເນື້ອຢູ່ເຂດພູເຫຼັກ ບັງເອີນໄດ້ເຫັນກວາງເຖິກດ່ອນໂຕໜຶ່ງ ພວກເຂົາໄດ້ຍິງກວາງໂຕນັ້ນຖືກບາດເຈັບສາຫັດ ແຕ່ບໍ່ຕາຍ ພວກເຂົາຈຶ່ງໄດ້ພາກັນນຳກວາງໂຕນັ້ນໄປຕາມດົງຕາມປ່າເປັນເວລາຫຼາຍວັນ ຈົນມາເຖິງນ້ຳກໍ ຈຶ່ງພົບກວາງໂຕນັ້ນຕາຍຢູ່ຫ້ວຍໜຶ່ງ ທັງສາມຄົນໄດ້ພາກັນປາດເອົາຊີ້ນກວາງ ແລ້ວນຳເອົາຊີ້ນກວາງໄປຕົ້ມ-ແກງເປັນອາຫານ ແລະ ໃຊ້ນ້ຳຫ້ວຍນັ້ນມາເຮັດນ້ຳແກງ ເມື່ອປຸງແຕ່ງອາຫານສຸກແລ້ວຈຶ່ງພາກັນກິນ ປາກົດວ່າກິນບໍ່ໄດ້ເຄັມຫຼາຍ ຈາກນັ້ນທັງສາມ ຈຶ່ງໄດ້ສັນນິຖານວ່າອາດເປັນເພາະຫ້ວຍແຫ່ງນັ້ນມີບໍ່ເກືອ. ປີຕໍ່ມາ ບ້ານບໍ່ ແລະ ບ້ານແຟນ ໄດ້ປຶກສາຫາລືກັນກ່ຽວກັບບໍ່ເກືອແຫ່ງນັ້ນ ບ້ານບໍ່ໄດ້ສະເໜີຂໍເອົາບໍ່ເກືອ ເພື່ອທຳການຜະລິດ. ດັ່ງນັ້ນ ທັງສອງບ້ານ ຈຶ່ງໄດ້ຕົກລົງກັນ ຖ້າຝ່າຍໃດຝ່າຍໜຶ່ງ ຕ້ອງການຄອບຄອງຕ້ອງມີສິ່ງວັດຖຸທີ່ມີມູນຄ່າໃດໜຶ່ງ ເພື່ອແລກປ່ຽນ. ສະນັ້ນ, ຊາວບ້ານຈຶ່ງຕົກລົງກັນເອົາຜາເຜີ້ງມາແລກເອົາບໍ່ເກືອ ສ່ວນບໍ່ເກືອ ເປັນຂອງບ້ານບໍ່ຈົນເຖິງປະຈຸບັນ. ສ່ວນຄຳວ່າ" ແຟນ" ໄດ້ມາຈາກບ້ານດັ່ງກ່າວ ຕັ້ງຢູ່ຫົວຫ້ວຍນ້ຳແຟນ ຊາວບ້ານຈຶ່ງໄດ້ຕັ້ງຊື່ວ່າ: ບ້ານແຟນຈົນເຖິງປະຈຸບັນ.

## ໙. ເຜົ່າກຶມມຸບ້ານໂຮມໄຊ.



ບ້ານໂຮມໄຊ ເປັນບ້ານຊົນເຜົ່າກຶມມຸ, ຕັ້ງຢູ່ຫ່າງຈາກເທດສະບານເມືອງໄຊ ທາງໄປແຂວງຫຼວງນ້ຳທາ 7 ກິໂລແມັດ. ທ່າແຮງ ແລະ ສິ່ງໂດດເດັ່ນຊາວບ້ານ ຍັງຮັກສາວັດທະນະທຳ, ຮີດຄອງປະເພນີ, ວິຖີຊີວິດແບບດັ່ງເດີມ.

ບ້ານໂຮມໄຊ ສ້າງຕັ້ງຂຶ້ນເມື່ອປີ ຄສ 1905, ແຕ່ກ່ອນມີຊື່ວ່າ: ບ້ານນາຈັກ ຄວາມເປັນມາຂອງບ້ານນາຈັກ ຍ້ອນວ່າຝຣັ່ງໄດ້ເອົາຈັກໄຖໄຮ່ ໄຖນາ, ປະກອບມີ 1 ຄອບຄົວ (ເປັນເຜົ່າລາວລຸ່ມ) ແມ່ນຄົນບ້ານຖິ່ນ ເມືອງໄຊ ອາຊີບພື້ນຖານແມ່ນເຮັດໄຮ່, ອາຊີບສຳຮອງແມ່ນລ້ຽງສັດ ແລະ ນັບຖືຜີ. ການນຸ່ງຖື ແມ່ນແບບກຶມມຸ ທີ່ກາຍມາເປັນບ້ານຫຼັກ 7 ຫຼື ບ້ານໂຮມໄຊ ເອີ້ນວ່າບ້ານຫຼັກ 7 ຍ້ອນວ່າຕັ້ງຫ່າງເທດສະບານເມືອງໄຊ 7 ກິໂລແມັດ. ຄວາມເປັນມາຂອງບ້ານໂຮມໄຊນີ້ ຍ້ອນວ່າແຕ່ກ່ອນ ເປັນຫຼາຍກຸ່ມຫຼາຍເຂດມາໂຮມເຂົ້າກັນເປັນບ້ານ ຈຶ່ງໃສ່ຊື່ວ່າ: ບ້ານໂຮມໄຊ ຈົນເຖິງປະຈຸບັນນີ້.

## 10. ວັດພະເຈົ້າສິງຄຳ.



ວັດພະເຈົ້າສິງຄຳ ຕັ້ງຢູ່ໃຈກາງເທດສະບານເມືອງຫຼາ, ວັດພະເຈົ້າສິງຄຳ ເປັນວັດທີ່ເກົ່າແກ່, ມີປະຫວັດຄວາມເປັນມາອັນຍາວນານ ແລະ ເປັນວັດທີ່ມີພະເຈົ້າສັກສິດແຫ່ງໜຶ່ງທີ່ຊາວພຸດທະສາສະນິກະຊົນທົ່ວໄປ ໄດ້ເຂົ້າໄປກາບໄຫ້ວພະເຈົ້າສິງຄຳເປັນຈຳນວນຫຼວງຫຼາຍ ເພື່ອຂໍພອນຄວາມສັກສິດຕ່າງໆ ຂອງແຕ່ລະຄົນບໍ່ໄດ້ຂາດໃນແຕ່ລະວັນ. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງອຸດົມໄຊ ໄດ້ພັດທະນາ ແລະ ປັບປຸງກໍ່ສ້າງສິ່ງອຳນວຍຄວາມສະດວກຂະໜາດນ້ອຍ ເປັນຕົ້ນແມ່ນຫ້ອງນ້ຳວິດຖ່າຍ, ບ່ອນຂາຍທູບທຽນ, ບ່ອນເຊົ່າ (ຫຼືປ່ຽນສິ້ນ) ແລະ ເດີ່ນຈອດລົດ ເພື່ອອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ເຂົ້າມາຢ້ຽມຊົມ ແລະ ກາບໄຫວ້.

ວັດພະເຈົ້າສິງຄຳ ແຕ່ກ່ອນເອີ່ນວ່າ ວັດກາງ ເພາະເປັນວັດໃຫຍ່ ທີ່ຊາວເມືອງຫຼາ ພາກັນມາກາບໄຫ້ວສັກກາລະບູຊາ ເປັນທີ່ເພິ່ງທາງໃຈ. ຕາມການສັນນິຖານຂອງເຖົ້າແກ່ ວັດນີ້ ໄດ້ສ້າງຂຶ້ນໄດ້ປະມານ 2000 ກວ່າປີແລ້ວ ຕັ້ງຢູ່ເທິງພູເຂົາຄວາຍ ບ້ານປາກຫຼາ (ປັດຈຸບັນໂຮມເປັນບ້ານດອນສະອາດ). ພາຍຫຼັງໄດ້ເອົາພະເຈົ້າສິງຄຳ ມາປະດິດສະຖານໄວ້ ຈຶ່ງປ່ຽນຊື່ວັດກາງ ມາເປັນວັດພະເຈົ້າສິງຄຳ ຕາມຊື່ຂອງພະເຈົ້າສິງຄຳ ຈົນເຖິງປະຈຸບັນ.

ພູເຂົາຄວາຍ ສະຖານທີ່ຕັ້ງວັດພະເຈົ້າສິງຄຳແຫ່ງນີ້ ປະກົດມີຮູຢູ່ເທິງພູເບື້ອງນ້ຳຫຼາ ມີລັກສະນະກ້ຽງບໍ່ເສົ້າໝອງ. ຕາມການເລົ່າຂານວ່າ ເມື່ອຮອດມື້ວັນສິນໃຫຍ່ຂຶ້ນ 14–15 ຄ່ຳ ປະກົດວ່າ ສາມະເນນ ໄດ້ເຫັນຊາຍໜຸ່ມ ເອົາຜ້າສີແດງມັດຫົວ ຂຶ້ນມາ



ໄຫວ້ພະເຈົ້າສິງຄຳ ແລ້ວກໍ່ລົງຮູຫາຍໄປ ສ້າງຄວາມອັດສະຈັນ, ພະສົງສາມະເນນຈຶ່ງບອກຊາວບ້ານໄປເບິ່ງຮູດັ່ງກ່າວ ແລະ ຊາວບ້ານກໍ່ປະຫຼາດໃຈຫຼາຍ ຕໍ່ມາຊາວບ້ານຈຶ່ງຕົກລົງກັນ ເອົາໝາກພຸກມາປ່ອນລົງຮູ ແລ້ວໃຫ້ຄົນໄປເບິ່ງວັງນ້ຳພາກຄື: ວັງຄຳ, ວັງອີງ, ວັງອ່າງ ກໍ່ແມ່ນວັງນ້ຳຕາມສາຍນ້ຳພາກ, ນ້ຳຫຼາ. ນັບແຕ່ນັ້ນມາ ຊາວບ້ານຈຶ່ງເວົ້າກັນວ່າແມ່ນຮູພະຍານາກຂຶ້ນມາໄຫວ້ພະເຈົ້າສິງຄຳ. ສະນັ້ນ, ຊາວບ້ານຈຶ່ງຢ້ານພະຍານາກເອົາພະເຈົ້າສິງຄຳໄປໄວ້ໃນນ້ຳຕື່ມ ຊາວບ້ານຈຶ່ງພາກັນຊອກຫາເອົາສິ່ງເປິເປື້ອນມາຖົ້ມລົງຮູ ແລະ ອັດຮູໄວ້ຈົນເຖິງປະຈຸບັນ ແລະ ກໍ່ບໍ່ປະກົດເຫັນພະຍານາກຂຶ້ນມາອີກ. ລະຫວ່າງປີ ພສ 2000 ປີກົງກັບປີ ຄສ 1457 ຊາວບ້ານຈຶ່ງໄດ້ສ້າງອາຮາມ ສິລະປະແບບເຜົ່າລື້ຂຶ້ນ ແລະ ໄດ້ກໍ່ອຸບມຸງກວມໄວ້ໃນໃຈກາງອາຮາມ ແລ້ວເອົາພະເຈົ້າສິງຄຳໄວ້ໃນອຸບມຸງໂດຍແມ່ນນາຍຊ່າງຫໍ້ ເປັນຜູ້ສ້າງແຕ່ບໍ່ທັນສຳເລັດສົມບູນ. ຮອດປີພ ສ 2743 (ຄສ 1930) ໄດ້ມີສາທຸຈຳປາເປັນຄົນ ບ້ານດອນ ໄດ້ມາປະຈຳ ສາທຸອ້ວນ ຄົນບ້ານຫາດນາງ ແລະ ພ້ອມດ້ວຍພະສົງສາມະເນນອອກຕົນຍາດໂຍມ ສືບຕໍ່ກໍ່ສ້າງຈົນສຳເລັດ.

ພະເຈົ້າສິງຄຳ ເປັນພະເຈົ້າທີ່ເກົ່າແກ່ ແລະ ສັກສິດອົງໜຶ່ງຢູ່ໃນ ສປປ ລາວ ເຊິ່ງມີອາຍຸໄດ້ປະມານ 2400 ກວ່າປີແລ້ວ ເປັນທີ່ສັກກາລະບູຊາຂອງຊາວລາວທົ່ວປະເທດ ເວົ້າສະເພາະ ກໍ່ແມ່ນຊາວແຂວງອຸດົມໄຊ ເປັນຂວັນບ້ານມິ່ງເມືອງ ແລະ ເປັນມໍລະດົກອັນລ້ຳຄ່າຂອງຊາດກໍຄືຂອງແຂວງ. ປັດຈຸບັນໄດ້ປະດິດສະຖານໄວ້ຢູ່ວັດພະເຈົ້າສິງຄຳເທດສະບານເມືອງຫຼາ ແຂວງອຸດົມໄຊ. ພະເຈົ້າສິງຄຳອົງນີ້ ໄດ້ຫຼໍ່ຂຶ້ນຢູ່ລັງກາທະວີບ, ຕຳນານກ່າວໄວ້ວ່າ ປີພຸດທະສັກກະລາດໜຶ່ງຮ້ອຍປີ (100) ແລະ ພະສິງຄຳໄດ້ປະກົດຢູ່ປະເທດລາວໃນປີ ພສ 868 ພະເຈົ້າສິງຄຳ ໄດ້ປະກົດຕົວຢູ່ເຂດລ້ອງແມ່ນ້ຳພາກ, ເມືອງຫຼາແຂວງອຸດົມໄຊໃນປີ ຄສ 1355 ພະເຈົ້າສິງຄະຄຳອົງນີ້ ຈັດໄດ້ວ່າ ເປັນໜຶ່ງໃນຫ້າຂອງພະພຸດທະຮູບ ທີ່ມີອຳນາດ ແລະ ເດັ່ນທີ່ສຸດ ທາງດ້ານພຸດທະສາສະໜາເຊິ່ງຫ້າພະພຸດທະຮູບດັ່ງກ່າວມີຄື:1. ພະຄ້ອງ, 2. ພະຫີນ, 3.ພະນັກ, 4. ພະສຳລິດ, 5. ພະສິງຄຳ. ມາຮອດສະຕະວັດທີ່ 14, ພະເຈົ້າສິງຄຳ ໄດ້ຖືກສົ່ງໄປຍັງເມືອງຊຽງຮຸ່ງ(ສິບສອງພັນນາ–ໄທລື້) ປະເທດຈີນ ໂດຍເຈົ້າຟ້າງຸ່ມ. ຈຸດປະສົງແມ່ນເພື່ອສືບຕໍ່ຂະຫຍາຍສາດສະໜາ ແລະ ເສີມສ້າງຄວາມສັດທາ ໃຫ້ແກ່ບັນດາຊາວພຸດ ຢູ່ເຂດຫ່າງໄກ ດ້ວຍອານາຈັກຂອງພະອົງ. ແຕ່ເຮືອທີ່ກຳລັງນຳສົ່ງພະເຈົ້າສິງຄຳຢູ່ນັ້ນ ໄດ້ຖືກທຳລາຍ ໃນທ່າ

ມກາງການຕໍ່ສູ້ທີ່ຮຸ່ນແຮງ ຕາມລ້ອງແມ່ນໍ້າພາກ ແລະ ພະເຈົ້າສິງຄໍາໄດ້ຈົມລົງໃນນໍ້າເປັນເວລານານສົມຄວນ ທີ່ຢູ່ລະຫວ່າງກາງຊາຍແດນຂອງເມືອງຫຼາ ແລະ ເມືອງຂວາ. ຕໍ່ມາ ມີຄົນຢູ່ບ້ານຫາດນາງ, ເມືອງຂວາ ແຂວງຜົ້ງສາລີ ຊື່ວ່າ ທ້າວ ແສນສວາກ ໄດ້ຫວ່ານແຫລົງໄປໃນວັງ ແລ້ວກໍ່ພົບເຫັນພະພຸດທະຮູບທີ່ເປັ່ງລັດສະໝີທີ່ສວຍງາມ, ຫຼັງຈາກນັ້ນ ເລື່ອງລາວຂອງພະພຸດທະຮູບດັ່ງກ່າວ ໄດ້ກາຍເປັນຂ່າວລືໄປທົ່ວບ້ານຕາມລອງນໍ້າພາກ ແລະ ບ້ານໃກ້ຄຽງຢູ່ເຂດເມືອງຫຼາ ແລະ ເມືອງຂວາ. ຫຼັງຈາກນັ້ນ ທັງຝ່າຍເມືອງຫຼາ ແລະ ເມືອງຂວາ ກໍ່ໄດ້ມາຊ່ວຍກັນດຶງພະເຈົ້າສິງຄໍາອົງນີ້ ຂຶ້ນ ແຕ່ເຮັດແນວໃດກໍ່ບໍ່ຂຶ້ນ ຈຶ່ງຕີຄ້ອງຮ້ອງປ່າວໄປທຸກໝູ່ບ້ານ ຍັງມີແຕ່ໝູ່ບ້ານໜຶ່ງຊື່ວ່າບ້ານລັນ ເປັນຊົນເຜົ່າກຶມມຸ ທາງຊາວເມືອງຫຼາ ຈຶ່ງໄດ້ສັ່ງໃຫ້ເອົາຊາວບ້ານດັ່ງກ່າວມາ ຊາວບ້ານກຶມມຸຈຶ່ງໄດ້ຕົກລົງກັນດຶງເອົາຫຍ້າຄາຂຽວ, ເຟືອງເຂົ້າກໍ່າ ແລະ ສາຍຝ້າຍດໍາ, ຝາຍແດງຂອງແມ່ມ້າຍ 3 ຢ່າງນີ້ມາຟັ້ນເຂົ້າກັນຈົນໄດ້ 100 ວາ ຈຶ່ງພ້ອມກັນລົງມາເມືອງຂວາ ຕາມນັດໝາຍ ພໍໄປຮອດວັງຫອມແລ້ວ ເຂົາເຈົ້າກໍ່ພ້ອມກັນຍົກມືນົບໄຫວ້ ແລະ ອະທິຖານວ່າ ສາທຸເນີ ຂໍໃຫ້ເທວະບຸດ ເທວະດາ ຟ້າແຖນ ນາຄາ ພະຍານາກ ຈົ່ງມາຊ່ວຍ ໃຫ້ຜູ້ຂ້າດຶງເອົາພະພຸດທະອົງນີ້ໃຫ້ຂຶ້ນມາໄດ້ດ້ວຍເທີ ແລ້ວກໍ່ເວົ້າເປັນພາສາກຶມມຸ ເຊິ່ງແປວ່າລູກເຢີ ລູກຍອມເຟືອງຫຍ້າຄາ ລູກຍອມເຟືອງເຂົ້າກໍ່າ ເວົ້າແລ້ວ ຈຶ່ງໃຫ້ຄົນດໍາລົງໄປໃນນໍ້າ ເອົາເຊືອກມັດໃສ່ຕົວພະພຸດທະຮູບ ແລ້ວກໍ່ພ້ອມກັນດຶງຂຶ້ນມາຢ່າງງ່າຍດາຍ ອັນເປັນທີ່ສ້າງຄວາມງຶດງໍ້ອັດສະຈັນໃຫ້ແກ່ຄົນທັງຫຼາຍເປັນຢ່າງຍິ່ງໜັກ ພາຍຫຼັງທີ່ໄດ້ພະເຈົ້າສິງຄໍາອົງນີ້ແລ້ວ ໃຜໆກໍ່ຢາກໄດ້ເອົາມາໄວ້ບູຊານົບໄຫວ້, ທັງສອງຝ່າຍເກີດມີຄວາມຂັດແຍ່ງກັນລະຫວ່າງເມືອງຂວາ ແລະ ເມືອງຫຼາ ເມື່ອເປັນແນວນັ້ນທັງສອງຝ່າຍຈຶ່ງໄດ້ຕົກລົງກັນສ່ຽງເອົາດ້ວຍບຸນ, ດ້ວຍວິທີອາລາດທະນາ ໂດຍເອົາພະພຸດທະຮູບອົງນີ້ເຂົ້າໃສ່ເຮືອ ແລ້ວອະທິຖານວ່າພະພຸດທະຮູບອົງນີ້ໄຫຼລົງໄປທາງໃຕ້ໃຫ້ເປັນຂອງເມືອງຂວາ(ຝ່າຍໃຕ້) ແລະ ຖ້າຫາກໄຫຼໄປທາງເໜືອໃຫ້ເປັນຂອງເມືອງຫຼາ(ຝ່າຍເໜືອ). ພໍອະທິຖານແລ້ວກໍ່ປ່ອຍເຮືອສູ່ກາງວັງນໍ້າ, ແຕ່ໜ້າອັດສະຈັນ ເຮືອໄດ້ທວນກະແສນໍ້າຂຶ້ນເມືອທາງເໜືອຢ່າງໜ້າອັດສະຈັນ, ເມືອເປັນດັ່ງນັ້ນແລ້ວພະພຸດທະຮູບອົງນີ້ຈຶ່ງໄດ້ຕົກເປັນຂອງຝ່າຍເໜືອເມືອງຫຼາ. ຫຼັງຈາກພະເຈົ້າສິງຄໍາຕົກເປັນຂອງຝ່າຍເມືອງຫຼາແລ້ວ, ເຂົາເຈົ້າໄດ້ຫາມພະເຈົ້າສິງຄໍາ ຂຶ້ນຕາມລ້ອງແມ່ນໍ້າພາກ ເພື່ອເຂົ້າສູ່ບ້ານ ແຕ່ມາຮອດແຄມຝັ່ງນໍ້າ ໃກ້ພູເຂົາຄວາຍ (ພູທີ່ວັດພະເຈົ້າສິງຄໍາຕັ້ງຢູ່ປັດຈຸບັນນີ້)ພະເຈົ້າສິງຄໍາອົງນີ້ໄດ້ເກີດມີຄວາມໜັກຂຶ້ນຈົນຫາມ ແລະ ຍົກຂຶ້ນບໍ່ໄດ້. ຫຼັງຈາກນັ້ນໄດ້ມີການທໍານາຍເບິ່ງ ໂດຍອີງໃສ່ຜົນການທໍານາຍ, ພະເຈົ້າສິງຄໍາອົງນີ້ ແມ່ນມີຄວາມຕ້ອງການທີ່ຈະສະຖິດ ແລະ ຕັ້ງຖິ່ນຖານຢູ່ພູເຂົາຄວາຍແຫ່ງນີ້, ສະນັ້ນ, ຊາວເມືອງຫຼາຈຶ່ງໄດ້ສ້າງວັດຂຶ້ນຢູ່ຈອມພູເຂົາຄວາຍ ແລະ ໄດ້ນໍາເອົາພະເຈົ້າສິງຄໍາອົງນີ້ ໄປສະຖິດຢູ່ວັດດັ່ງກ່າວ. ສະນັ້ນ, ຈຶ່ງເອີ້ນວ່າ: ວັດພະເຈົ້າສິງຄໍາ ຈົນເຖິງປະຈຸບັນນີ້.

**ຂະໜາດຂອງພະເຈົ້າສິງຄໍາ**

- ໜ້າເອິກກວ້າງ : 54 ຊມ
- ລວງສູງ: 114 ຊມ
- ນໍ້າໜັກ: ປະມານ 200 ກມ (ບໍ່ໄດ້ສັ່ງຕົວຈິງ)



## 11. ເຜົ່າອາຄາ ບ້ານອາໂນ.

ບ້ານອາໂນ ແມ່ນບ້ານເຜົ່າອາຄາ ຕັ້ງຢູ່ທາງທິດຕາເວັນອອກຂອງເມືອງຫຼາ, ຫ່າງຈາກເມືອງຫຼາ ປະມານ 32,5 ກິໂລແມັດ (ເສັ້ນທາງເຂົ້າຫາບ້ານສາມາດທຽວໄດ້ 2 ລະດູເປັນທາງດິນແດງອັດແໜ້ນບາງບ່ອນມີຄວາມຫຍຸ້ງຍາກໃນໄລຍະລະດູຝົນ). ບ້ານອາໂນມີຊາຍແດນທິດເໜືອຕິດກັບບ້ານຫ້ວຍແກ້ງ, ທິດໃຕ້ຕິດກັບບ້ານແສນຫຼວງ, ບ້ານກໍ່ວທາກ, ເມືອງຂວາ ແຂວງຜົ້ງສາລີ, ທິດຕາເວັນອອກຕິດກັບບ້ານໄກໃຕ້ ແລະ ທິດຕາເວັນຕົກຕິດກັບບ້ານຫ້ວຍຈ່າຍ. ທ່າແຮງ ແມ່ນວັດທະນະທຳ ເຜົ່າອາຄາ ທີ່ມີເອກະລັກແຕກຕ່າງຈາກເຜົ່າອື່ນທີ່ສ້າງຄວາມສົນໃຈຂອງນັກທ່ອງທ່ຽວທີ່ໄດ້ມາພົບເຫັນ ແຕ່ງກາຍ ວິຖີດຳລົງຊີວິດ. ປະຊາກອນ: 934 ຄົນ ຍິງ 450 ຄົນ, 152 ຄົວເຮືອນ ແລະ 129 ຄອບຄົວ. ພາສາເຜົ່າອາຄາມີສຳນຽງຄ້າຍຄືກັບພາສາຈີນ ແລະມົ້ງ. ອາຊີບຫຼັກແມ່ນປູກເຂົ້າ (ໄຮ່), ຂາຍເຄື່ອງປ່າຂອງດົງ, ລ້ຽງສັດ ແລະ ອື່ນໆເຜົ່າອາຄານັບຖືຜີ, ມີການນຸ່ງຖືແຕກຕ່າງກັບເຜົ່າອື່ນໆ ຍັງມີເອກະລັກທີ່ມີຄວາມໝາຍແຕກຕ່າງກັນໂດຍສະເພາະຢູ່ດ້ານຫຼັງຂອງຜ້າຄຽນຫົວ (ໝວກ) ມີ 4 ແບບຄື: ລັກສະນະມີໝາກປັດຮ້ອຍຍາວລົງມາໝາຍເຖິງຜູ້ຍິງຍັງໂສດ, ຮູບສາມແຈແມ່ນແຕ່ງງານແລ້ວ, ຮູບສີ່ແຈແມ່ນແມ່ຮ້າງ, ຮູບວົງມົນແມ່ນແມ່ໝ້າຍ. ບຸນປີໃໝ່ຂອງເຜົ່າອາຄາ ແມ່ນຈັດຂຶ້ນທຸກໆເດືອນມັງກອນຂອງທຸກປີ, ບຸນກິນເຂົ້າໃໝ່ ຈັດຂຶ້ນທຸກໆເດືອນກັນຍາ, ບຸນປະຕູໂຂງ (ບຸນລ້ຽງຜີ) ຈັດຂຶ້ນທຸກໆເດືອນພຶດສະພາ.



ຕາມການບອກເລົ່າຂອງເຖົ້າແກ່ເຜົ່າອາຄາຢູ່ພາຍໃນບ້ານອາໂນ ຄວາມຈິງມີຕົ້ນກຳເນີດດັ້ງເດີມຂອງເຜົ່າອາຄາກຸ່ມນີ້ ແມ່ນຍົກຍ້າຍມາຈາກປະເທດຈີນ ເຂົ້າມາປະເທດຫວຽດນາມ ແລະ ຕໍ່ມາໃນປີ 1882 ໄດ້ຍົກຍ້າຍມາຢູ່ປະເທດລາວ ຈົນເຖິງປະຈຸບັນ. ບ້ານດັ່ງກ່າວໄດ້ໃສ່ຊື່ອາໂນ ຍ້ອນວ່າຫົວໜ້າກຸ່ມເຈົ້າກົກເຈົ້າເລົ່າ ຜູ້ທີ່ໄດ້ນຳພາປະຊາຊົນເຜົ່າອາຄານັ້ນລາວຊື່ວ່າ ທ້າວ ອາໂນ ໄດ້ນຳພາປະຊາຊົນຈຳນວນ 40 ຄອບຄົວມາອາໄສຢູ່ບ້ານແຫ່ງນີ້ ຫຼັງຈາກທ້າວ ອາໂນໄດ້ເສຍຊີວິດ ຈຶ່ງໃສ່ຊື່ບ້ານວ່າ ບ້ານອາໂນ ຈົນເຖິງທຸກວັນນີ້. ຢູ່ຕໍ່ມາກໍໄດ້ມີປະຊາຊົນເຜົ່າອາຄາກຸ່ມໜຶ່ງ ມາອາໄສຢູ່ນຳ ປັດຈຸບັນຈຳນວນປະຊາກອນເຜົ່າອາຄາກຸ່ມນີ້ ກໍ່ໄດ້ເພີ່ມຫຼາຍຂຶ້ນເລື້ອຍໆ.

## 12. ເຜົ່າອາຄາ ບ້ານພູແທນ.



ບ້ານພູແທນເປັນບ້ານຊົນເຜົ່າອາຄາປະສົມ ເຜົ່າກຶມມຸ. ຕັ້ງຢູ່ຫ່າງຈາກເທດສະບານເມືອງຫຼາ ປະມານ 19 ກິໂລແມັດ. ສະພາບເສັ້ນທາງເຂົ້າເຖິງບ້ານເປັນເສັ້ນທາງດິນແດງ ທຽວໄດ້ລະດູດຽວໃນຍາມແລ້ງ, ເປັນທາງປູຢາງຈາກເມືອງຫຼາໄປຫາທາງແຍກບ້ານຫຼັກ 37, ມີທາງແຍກຂຶ້ນໄປຫາບ້ານ ແຕ່ເປັນເສັ້ນທາງດິນແດງປະມານ 12 ກິໂລແມັດ. ທ່າແຮງຂອງບ້ານ ເໝາະສຳຫຼັບການທ່ຽວຊົມທຳມະຊາດ, ວັດທະນະທຳເຜົ່າອາຄາປະສົມເຜົ່າກຶມມຸ, ວິຖີຊີວິດແບບພື້ນເມືອງ ແລະ ຮີດຄອງປະເພນີແບບດັ່ງເດີມ.

ບ້ານພູແທນ ມີຊື່ພາສາເຜົ່າແມ່ນ ບ້ານຕາງຫຣິດ ເອົາຊື່ຂອງຕົ້ນໄມ້ມາຕັ້ງຍ້ອນວ່າໃນສະໄໝນັ້ນ ມີຕົ້ນໄມ້ປະເພດນີ້ຫຼາຍ (ພາສາລາວແປວ່າຕົ້ນໄມ້ຂ້າງລາຍ) ຈາກການເລົ່າລຸ້ນສູ່ລຸ້ນ ປາກຕໍ່ປາກກັນມາ. ບ້ານນີ້ໄດ້ຍ້າຍໄປຍ້າຍມາຫຼາຍຊົ່ວຄົນແລ້ວ ຍ້ອນສາເຫດມີເສິກສົງຄາມເກີດຂຶ້ນຢ່າງຕໍ່ເນື່ອງ ແລະ ມີພະຍາດສັດລະບາດມາສູ່ຄົນ, ມາຮອດປີ 1968 ທ້າວໄຕໄດ້ເຕົ້າໂຮມກັນມາຕັ້ງຖິ່ນຖານຄືນໃໝ່. ຕໍ່ມາໄດ້ແຕ່ງຕັ້ງທ້າວຫຼ້າເປັນນາຍບ້ານ ແລະ ທ້າວແສງເປັນຮອງ, ມີປະຊາຊົນມາຈາກບ້ານມີກຍິງ ແລະ ບ້ານລາງລິງ ມີປະມານ 11 ຄອບຄົວ.ປີ 1972 ມີຊົນເຜົ່າອາຄາກຸ່ມໃຫຍ່ມາຈາກບ້ານພູສະຖີ, ບ້ານປາງສະບັດຈຳນວນ 22 ຄອບຄົວໄດ້ມາອາໄສຢູ່ນຳ. ສາຍເຫດທີ່ເອີ້ນວ່າບ້ານພູແທນ ຍ້ອນວ່າໃນຕອນນັ້ນມີຫຼາຍໆກຸ່ມຄົນມາຕັ້ງຖິ່ນຖານຢູ່ໄດ້ໄລຍະໜຶ່ງ ກໍຍົກຍ້າຍໄປຕໍ່ມາມີກຸ່ມຄົນໃໝ່ມາແທນເປັນຊົນເຜົ່າອາຄາຈຶ່ງເອີ້ນວ່າ ບ້ານພູແທນ ຮອດປັດຈຸບັນ.

## 13. ເຜົ່າກຶມມຸ ບ້ານຕະນອງປໍ.



ບ້ານຕະນອງປໍ ເປັນບ້ານເຜົ່າກຶມມຸ ຕັ້ງຢູ່ຫ່າງຈາກເທດສະບານເມືອງຫຼາ 5 ກິໂລແມັດ. ສະພາບເສັ້ນທາງເຂົ້າເຖິງບ້ານຈາກເທດສະບານເມືອງຫຼາ 14 ກິໂລແມັດ ເປັນເສັ້ນທາງປູຢາງ, ແລະ ຍ່າງປ່າ 4ກິໂລແມັດ. ທ່າແຮງ ແລະ ຈຸດເດັ່ນບ້ານນີ້ ຊາວບ້ານຍັງຮັກສາວັດທະນະທຳຮີດຄອງປະເພນີ, ວິຖີຊີວິດ ຕິດພັນກັບຖ້ຳຫລອງ ເປັນວົງຈອນທ່ອງທ່ຽວຍ່າງປ່າທີ່ຍັງມີທຳມະຊາດສວຍງາມ ແລະ ໜ້າທ່ຽວຊົມ.

ຕາມການບອກເລົ່າຂອງຊາວບ້ານວ່າ: ເມື່ອກ່ອນເຂົາເຈົ້າໄດ້ຕັ້ງຖິ່ນຖານຢູ່ຍອດຫ້ວຍປໍ ເນື່ອງຈາກມີຄວາມຫຍຸ້ງຍາກໃນການຊົມໃຊ້ນ້ຳ. ຕໍ່ມາຈຶ່ງຕົກລົງກັນຍ້າຍ ໂດຍການປຸກລະດົມຊາວບ້ານຈາກ ທ້າວ ເຣນ ໃນປີ 1952 ຕັ້ງຖິ່ນຖານເປັນບ້ານນ້ອຍ(ເອີ້ນວ່າລຸ້ງ ໃນພາສາກຶມມຸ) ຍ້າຍມາຕັ້ງທຳອິດມີພຽງແຕ່ 5 ຄອບຄົວເທົ່ານັ້ນ ອາໄສຖາງປ່າເຮັດໄຮ່, ເຮັດສວນ ແລະ ລ່າສັດ. ຕໍ່ມາກຸ່ມດັ່ງກ່າວ ກໍ່ມີຈຳນວນເພີ່ມຂຶ້ນ ຈຶ່ງໄດ້ແຍກກຸ່ມນີ້ອອກເປັນສາມບ້ານຄື: ບ້ານກຸງລັງ, ບ້ານລຸງໝ້ຽງ ແລະ ບ້ານຕະນອງປໍ, ສ່ວນບ້ານລຸງໝ້ຽງ ແມ່ນຍຸບບໍ່ມີແລ້ວ. ທີ່ພາກັນເອີ້ນວ່າ ບ້ານຕະນອງປໍ ນັ້ນຍ້ອນໃນສະໄໝກ່ອນ ບ້ານນີ້ ໄດ້ຕັ້ງຢູ່ຫົວຫ້ວຍ ມີຮ່ອງເລິກ ແລະ ມີຕົ້ນໄມ້ໃຫຍ່ຕົ້ນໜຶ່ງຊື່ວ່າ: ຕົ້ນປໍ (ຕາມພາສາຮຽກຂອງເຜົ່າກຶມມຸ) ພາດຂ້າມຫ້ວຍດັ່ງກ່າວ ເພື່ອເຮັດເປັນຂົວຂ້າມໃຫ້ມັນສະດວກໃນການໄປມາຂອງຊາວບ້ານດ້ວຍໄມ້ປໍດັ່ງກ່າວ. ຄຳວ່າຂົວພາສາກຶມມຸຮຽກວ່າ: ຕືຣ໌ນັອງ. ສະນັ້ນ ຈຶ່ງໃສ່ຊື່ວ່າກຸງຕຣີນັອງປໍ ຖ້າແປເປັນພາສາລາວບ້ານຂົວໄມ້ປໍ. ແຕ່ຍ້ອນການອອກສຽງຂອງພາສາລາວບໍ່ໄດ້ ຈຶ່ງໃສ່ຊື່ວ່າບ້ານຕະນອງປໍ ຈົນເຖິງປະຈຸບັນນີ້.



## 14. ຖ້ຳຫຼວງບ້ານຕະນອງປໍ.



ຖ້ຳຫຼວງ ຕັ້ງຢູ່ຫ່າງຈາກເທດສະບານເມືອງຫຼາ ປະມານ 12.5 ກິໂລແມັດ. ສະພາບເສັ້ນທາງເຂົ້າເຖິງມີສອງເສັ້ນທາງຄື: ຈາກເທດສະບານເມືອງຫຼາ ຫາບ້ານໂພນໄຊ ເປັນເສັ້ນທາງປູຢາງ, ຈາກບ້ານໂພນໄຊໄປຫາຖ້ຳ ເປັນເສັ້ນທາງທະລຸດິນແດງ ປະມານ 5.5 ກິໂລແມັດ. ທ່າແຮງ ແລະ ຈຸດເດັ່ນຂອງຖ້ຳ ເປັນຖ້ຳທີ່ສວຍງາມອີກແຫ່ງໜຶ່ງທີ່ອ້ອມຮອບດ້ວຍທຳມະຊາດທີ່ອຸດົມສົມບູນ. ລັກສະນະຂອງຖ້ຳ ເປັນຮູເຂົ້າທາງເບື້ອງເທິງ ແລະ ເບື້ອງລຸ່ມ, ໃນຖ້ຳມີຫີນຍ້ອຍ, ມີນົມຜາສວຍສົດງົດງາມ ເຊິ່ງມີຄວາມຍາວປະມານ 400 ກວ່າແມັດ, ກວ້າງ 5-20 ແມັດ ແລະ ສູງປະມານ 2-10 ແມັດ.

ຖ້ຳນີ້ ໄດ້ຄົ້ນພົບໃນ ປີຄສ 2005. ຍ້ອນການໄປລ່າສັດຂອງຊາວບ້ານຕະນອງປໍ ໂດຍການເຫັນໂຕເຈຍບິນເວີ່ນຢູ່ບໍລິເວນປາກຖ້ຳນີ້ຈຶ່ງນຳໂຕເຈຍໄປໃນທີ່ສຸດກໍ່ພົບເຫັນຖ້ຳດັ່ງກ່າວນີ້ ແລະ ຢູ່ໃນຖ້ຳດັ່ງກ່າວນີ້ກໍ່ເປັນຖ້ຳທີ່ໃຫຍ່ກວ່າໝູ່. ໃນເຂດນັ້ນມີສັດຫຼາຍຊະນິດອາໄສຢູ່ເປັນຕົ້ນແມ່ນໂຕເຈຍ, ເຜີ້ງ ແລະ ສັດໃຫຍ່ອື່ນໆ. ຕໍ່ມາ ຊາວບ້ານພາກັນຫວງຫ້າມສັດ ໄວ້ເປັນຂອງລວມໝູ່ (ເປັນຂອງຫຼວງພາສາກຶມມຸ) ເພື່ອເປັນບ່ອນແຜ່ພັນຂອງສັດຕ່າງໆ ແລະ ເອີ້ນຖ້ຳນີ້ວ່າຖ້ຳຫຼວງຍ້ອນເປັນຂອງຫຼວງ (ຂອງລວມໝູ່) ພ້ອມທັງເປັນຖ້ຳທີ່ໃຫຍ່ກວ່າໝູ່ໃນເຂດນີ້.

**ສິ່ງທີ່ໜ້າອັດສະຈັນ;** ແຕ່ກ່ອນມີຊາວບ້ານຄົນໜຶ່ງໄປຫາກິນແລ້ວຫຼົງທາງເຂົ້າໄປໃນຖ້ຳ ບໍ່ຮູ້ທາງອອກຢູ່ໃນຖ້ຳນັ້ນຈົນໄດ້ 7 ວັນ 7 ຄືນ ໃນທີ່ສຸດກໍ່ຊອດທາງອອກທີ່ ບ້ານບໍ່ເມືອງໄຊ ແຕ່ກ່ອນຍັງມີຊາວບ້ານສາມຄົນໄປຫາໂຕເຈຍຢູ່ປາກຖ້ຳ ມີຊາຍຄົນໜຶ່ງເຮັດມີດຕົກລົງໄປໃນຖ້ຳ, ຊາຍ 3 ຄົນບໍ່ຮູ້ຊິເຮັດແນວໃດກໍ່ເລີຍຕົກລົງກັນໄປເອົາເຊືອກມາມັດໃສ່ຂອນໄມ້ທາງເທິງປາກຖ້ຳແລ້ວໃຫ້ຊາຍຄົນໜຶ່ງລົງໄປໂດຍການຢ່ອນເຊືອກລົງ ແລ້ວຊາຍຄົນນັ້ນກໍ່ບອກນຳສອງຄົນວ່າ: ຖ້າຕົນເອງສັ່ນເຊືອກເມື່ອໃດໃຫ້ສອງຄົນດຶງຂຶ້ນ, ເວົ້າແລ້ວຊາຍທັງສອງກໍ່ຢ່ອນເຊືອກລົງ ພໍແຕ່ລົງໄປກໍ່ເຫັນມີດນ້ອຍດວງໜຶ່ງແຕ່ບໍ່ແມ່ນຂອງລາວ. ລາວກໍ່ເລີຍຮ້ອງຂຶ້ນບາດໜຶ່ງວ່າ: ໂອຍມີດກູຄືວ່າໃຫຍ່ແທ້ບັດອັນນີ້ຄືວ່ານ້ອຍແທ້ ເວົ້າແລ້ວກໍ່ສັ່ນເຊືອກບາດໜຶ່ງ ແລ້ວຊາຍສອງຄົນຢູ່ເທິງກໍ່ຟ້າວດຶງເຊືອກຂຶ້ນມາກໍ່ເຫັນແຕ່ຂາເບື້ອງໜຶ່ງຂອງຊາຍຄົນນັ້ນແລ້ວຊາຍທັງສອງກໍ່ຮ້ອງຂຶ້ນດ້ວຍຄວາມຢ້ານກົວ, ແລ້ວກໍ່ຮີບພາກັນແລ່ນມາບ້ານ ເພື່ອບອກຊາວບ້ານ , ເມືອຊາວບ້ານຮູ້ເລື່ອງລາວ ກໍ່ເຮັດໃຫ້ຊາວບ້ານພາກັນແຕກຕື່ນຕົກໃຈ ແລະ ບໍ່ມີໃຜກ້າເຂົ້າໄປໃນຖ້ຳນີ້ອີກ.

## 15. ຕາດຫ້ອຍໄຄ້ບ້ານຜາວີ.



ຕາດຫ້ອຍໄຄ້ ບ້ານຜາວີຕັ້ງຢູ່ຫ່າງຈາກເທດສະບານເມືອງຫຼາ ປະມານ 12 ກິໂລແມັດ ເປັນຕາດທີ່ສວຍງາມເໝາະສໍາລັບການໄປທ່ຽວຊົມ ແລະ ອາບນໍ້າ, ຕາກອາກາດ. ຕາດນີ້ຕັ້ງຢູ່ໃກ້ກັບບ້ານຜາວີ, ສະພາບເສັ້ນທາງເຂົ້າເຖິງເປັນເສັ້ນທາງດິນແດງ (ລະດູຝົນທ່ຽວລໍາບາກ)ລັກສະນະຂອງຕາດເປັນຕາດສອງພັກເນີນຂຶ້ນໄປ ແລະ ມີອ່າງອາບຢູ່ພັກລຸ່ມ ແລະ ພັກເທິງ. ຕາດນີ້ໄດ້ຕິດພັນກັບວົງຈອນການທ່ອງທ່ຽວຢ່າງປ່າຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ.

ຕາມການບອກເລົ່າຂອງທ່ານນາຍບ້ານ ບ້ານຜາວີ ວ່າ: ຕາດຫ້ອຍໄຄ້ແມ່ນຮຽກຕາມຊື່ຂອງຫ້ອຍ ເຊິ່ງຫ້ອຍດັ່ງກ່າວຊື່ວ່າຫ້ອຍໄຄ້ຍ້ອນແຕ່ກ່ອນ ຫ້ອຍນີ້ມີກົກໄຄ້ຫຼາຍ. ດ້ວຍເຫດນັ້ນ, ຈຶ່ງເອີ້ນວ່າຕາດຫ້ອຍໄຄ້ເຖິງປັດຈຸບັນ. ໃນປີ 2005 ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ ໄດ້ລົງສໍາຫຼວດເອົາຕາດດັ່ງກ່າວເປັນກິດຈະກໍາໜຶ່ງໃນການເຊື່ອມຕໍ່ກັບລາຍການທ່ອງທ່ຽວຢ່າງປ່າຊົມທໍາມະຊາດລາຍການ 3 ວັນ, ລາຍການ 2 ວັນ ແລະ ລາຍການ 1 ວັນ ທ່ຽວຊົມຕາດຕາມເງື່ອນໄຂ ແລະ ຄວາມຕ້ອງການຂອງນັກທ່ອງທ່ຽວ ປະຈຸບັນບໍລິສັດຂຸດຄົ້ນແຮ່ທາດ ໄດ້ທະລຸທາງລົດສໍາຮອງເຂົ້າໄປເຖິງບ້ານແລ້ວ.

## 16. ນ້ຳລອດພູບ້ານນາທົ່ງ.



ນ້ຳລອດພູແຫ່ງນີ້ ຕັ້ງຢູ່ບ້ານນາທົ່ງ ຢູ່ຫ່າງຈາກເທດສະບານເມືອງນາໝໍ້ ປະມານ 8 ກິໂລແມັດ, ສະພາບເສັ້ນທາງເຂົ້າເຖິງນ້ຳອອກຣູ ຈາກທາງເລກ 13 ເໜືອ ເຂົ້າໄປປະມານ 1 ກິໂລແມັດ, ເປັນເສັ້ນທາງດິນແດງ. ລັກສະນະຂອງນ້ຳອອກຣູ ແມ່ນໄຫຼອອກຈາກໜ່ວຍພູທີ່ໃຫຍ່ ແລະ ຍາວຫຼາຍກິໂລແມັດ ເຊິ່ງພວກເຮົາບໍ່ສາມາດເຂົ້າໄປສຳຫຼວດຈົນສຸດໄດ້ ຍ້ອນສະພາບທຸລະກັນດານ ແລະ ມີຄວາມສ່ຽງສູງ. ພວກເຮົາສຳຫຼວດແລ້ວພຽງແຕ່ປະມານ 4 ກິໂລແມັດ ດ້ວຍທີມງານນັກວິທະຍາສາດຈາກສະຫະພັນເອີລົບ ໃນປີ 2010. ທ່າແຮງຂອງນ້ຳລອດພູນີ້ ຕັ້ງຢູ່ໃກ້ທາງເລກ 13 ເໜືອ ສະຖານທີ່ຮາບພຽງ ເໝາະສົມໃນການພັກຜ່ອນ, ຊົມບັນຍາກາດເຢັນສົດຊື່ນສວຍງາມ ແລະ ຢູ່ບໍ່ໄກຈາກຕົວເມືອງນາໝໍ້ ເໝາະກັບການພັດທະນາການທ່ອງທ່ຽວເຊື່ອມຕໍ່ກັບແຂວງຫຼວງນ້ຳທາ ແລະ ສປ ຈີນ ທີ່ເດີນທາງມາຕາມທາງເລກ 13 ເໜືອ. ນ້ຳລອດພູແຫ່ງນີ້ ໄດ້ຄົ້ນພົບໃນປີ ຄສ 2000 ແລະ ໃຫ້ຄົນເຂົ້າທ່ຽວຊົມປີ ຄສ 2003. ເປັນນ້ຳແຫ່ງໜຶ່ງ ທີ່ສວຍງາມເກີດຂຶ້ນຕາມທຳມະຊາດ, ນ້ຳສະອາດ, ເຢັນດີ ເໝາະແກ່ການໄປທ່ຽວຊົມອາບນ້ຳ ແລະ ຊົມທິວທັດທຳມະຊາດໃນພື້ນທີ່ດັ່ງກ່າວ. ຕົ້ນນ້ຳລອດພູນີ້ ມີຫ້ວຍກະສາ ປ່ອງໃສ່ຫ້ວຍຫ່ານ ເຊິ່ງໄຫຼມາຈາກພູ ບ້ານນ້ຳປີດ ໄຫຼເຂົ້າພູກະສາຫຼັກ 24. ຄາວ່າພູກະສາ ແມ່ນມີບໍ່ແຮ່ຊືນ ເຜົ່າກຶມມຸເອີ້ນວ່າ (ກະສາມາອອກ) ຢູ່ບ້ານນາທົ່ງ ເປັນຫ້ວຍນ້ຳ ຍາວອອກມາຈາກຣູພູ ເປັນສາຍນ້ຳ, ເປັນຫາດ, ເປັນວັງ, ຫີນ ແລະ ມີຕາດຢູ່ບ່ອນໜຶ່ງ ເຂົ້າໄປປະມານ 150–200 ແມັດ, ສູງປະມານ 5–10 ແມັດ ແຕ່ມີພະພຸດທະຮູບຢູ່ຫົວຕາດດັ່ງກ່າວ. ຖ້ຳນ້ຳລອດພູຫຼື ນ້ຳອອກຣູທີ່ປະຊາຊົນເມືອງນາໝໍ້ ພາກັນຮຽກຊື່ວ່ານ້ຳລອດພູ ຍ້ອນວ່ານ້ຳອອກມາຈາກຣູພູ.

## 17. ຕາດນ້ຳແຈບ້ານທ່າມີ່ນ.



ນ້ຳຕົກຕາດນ້ຳແຈ ບ້ານທ່າມີ່ນ ຕັ້ງຢູ່ທາງທິດຕາເວັນອອກຂອງບ້ານທ່າມີ່ນ ເມືອງແບງ ແຂວງອຸດົມໄຊ. ສະພາບເສັ້ນທາງການເຂົ້າເຖິງແມ່ນຍັງມີຄວາມຫຍຸ້ງຍາກ ເປັນເສັ້ນທາງທະລຸໃໝ່ ເຂົ້າໄປຫາຕາດປະມານ 4 ກິໂລແມັດ, ທ່າແຮງ ແລະ ສິ່ງດຶງດູດນັກທ່ອງທ່ຽວ ແມ່ນນ້ຳຕົກຕາດ ແລະ ປ່າໄມ້ໃຫຍ່ຢູ່ບໍລິເວນຕາດປົກຫຸ້ມດ້ວຍປ່າໄມ້ດົກໜາ. ລັກສະນະຂອງຕາດປະກອບດ້ວຍສອງພັກ, ພັກທີໜຶ່ງສູງປະມານ 7 ແມັດ, ພັກທີສອງສູງປະມານ 8 ແມັດໃນປີ 2007 ໄດ້ຮັບການຊ່ວຍເຫຼືອຈາກບໍລິສັດສາລິກາ ໄດ້ທະລຸເສັ້ນທາງ ຈາກບ້ານທ່າມີ່ນ ເຂົ້າໄປຫານ້ຳຕົກຕາດແລ້ວປະມານ 3 ກິໂລແມັດ.

ຕາມການບອກເລົ່າຂອງເຖົ້າແກ່ວ່າ ຕາດນ້ຳແຈ ເປັນຕາດທ່ອນກາງຂອງເງືອກໃນປາງກ່ອນ. ສ່ວນທ່ອນຫົວຕົກຢູ່ຫົວນ້ຳຫາວ ໃກ້ຊາຍແດນເມືອງງາ ແລະ ທ່ອນຫາງ ຕົກຢູ່ຫົວນ້ຳແມດ (ບ້ານນາແມດ) ຍ້ອນການຂ້າຟັນລັນແທງ ລະຫວ່າງມະນຸດກັບເງືອກ ສາເຫດແມ່ນຍາດຜູ້ສາວມາເປັນເມຍ ແລະ ສາເຫດທີ່ສອງ ທີ່ເອີ້ນກັນຕາດນ້ຳແຈ ຍ້ອນເປັນບ່ອນໂຮມຊຸມນຸມກິນແຈ (ໝ້ຽງ) ຂອງຄົນສະໄໝກ່ອນ.

LAOS
Simply Beautiful

## 18. ເຜົ່າລື້ ບ້ານຍໍ້.




ບ້ານຍໍ້ ຕັ້ງຢູ່ຫ່າງຈາກເທດສະບານເມືອງແບງ ປະມານ 7 ກິໂລແມັດ ເປັນບ້ານຊົນເຜົ່າລື້ ໄດ້ປະກາດເປັນບ້ານວັດທະນະທຳແລ້ວ. ຕັ້ງຢູ່ແຄມທາງຫຼວງເລກ 2W. ເປັນບ້ານຊົນເຜົ່າລື້ເກົ່າແກ່ບ້ານໜຶ່ງ ທີ່ມີມູນເຊື້ອດຸໝັ່ນຂະຫຍັນພຽນໃນການຜະລິດກະສິກຳ, ລ້ຽງສັດ, ມີສິລະປະວັນນະຄະດີ, ການຕ່ຳຫູກ ຜະລິດເຄື່ອງປັ້ນດິນເຜົາທີ່ເປັນເອກະລັກຂອງບ້ານເຜົ່າລື້ ແລະ ທາງພະແນກທ່ອງທ່ຽວ ໄດ້ພັດທະນາໂຄງລ່າງພື້ນຖານມາແລ້ວຈຳນວນໜຶ່ງ ເຫັນວ່າໄດ້ມີນັກທ່ອງທ່ຽວເລີ່ມສົນໃຈເຂົ້າມາທ່ຽວ ແລະ ພັກແຮມນຳເຮືອນປະຊາຊົນ ໂດຍສະເພາະບໍລິສັດທ່ອງທ່ຽວ ທີ່ມາຈາກຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ.

ຕົ້ນກຳເນີດຂອງບ້ານຍໍ້ ແມ່ນມາຈາກ 12 ພັນນາລື້ (ເມືອງຍໍ້) ປະຈຸບັນນີ້ແມ່ນຂຶ້ນກັບແຂວງຜົ້ງສາລີ. ປີ 914 ໄດ້ຍົກຍ້າຍຖິ່ນຖານມາພັກຢູ່ບ້ານນາງິວ ປະມານ 10 ຄອບຄົວ. ການດາລົງຊີວິດ ພົບຄວາມຫຍຸ້ງຍາກ ແລະ ຕໍ່ມາ ມີ 3 ຄອບຄົວ ໄດ້ກັບຄືນບ້ານເກົ່າ ຍັງເຫຼືອພຽງ 7 ຄອບຄົວ. ຫຼັງຈາກນັ້ນໄດ້ພາກັນຍ້າຍຖິ່ນຖານມາຕັ້ງຢູ່ບ້ານຍໍ້ ຈົນເຖິງປະຈຸບັນນີ້. ການຍົກຍ້າຍບ້ານໃນຄັ້ງນັ້ນ ແມ່ນຕິດພັນກັບການເຊື່ອຖືສາສະໜາພຸດ. ເມື່ອກ່ອນ ການຍ້າຍບ້ານແມ່ນມີຈົວນ້ອຍໜຶ່ງຕົນໄດ້ມານຳ, ການດຳລົງຊີວິດ ແລະ ການເຊື່ອຖືໄດ້ປະຕິບັດແບບດັ້ງເດີມຕໍ່ໆກັນມາຮອດປະຈຸບັນນີ້.

ບ້ານຍໍ້ ແມ່ນບ້ານໜຶ່ງ ທີ່ຍັງຮັກສາມູນເຊື້ອອັນເກົ່າແກ່ ອັນດີງາມສືບທອດກັນມາຕັ້ງແຕ່ປູ່ຍ່າຕາຍາຍທີ່ກຳເນີດມາຈາກ 12 ພັນນາລື້ ແລະ ເປັນກຸ່ມບ້ານໜຶ່ງ ທີ່ຍັງຮັກສາໄດ້ມູນເຊື້ອການຜະລິດ ເຄື່ອງຫັດຖະກຳແບບພື້ນບ້ານປະຈຳເຜົ່າ ທີ່ມີສີໄມ້ລາຍມື ເປັນຕົ້ນແມ່ນການຕ່ຳຫູກທໍໄໝ, ເຄື່ອງປັ້ນດິນເຜົາ, ຈັກສານ ແລະ ວັດທະນະທຳ ຮີດຄອງປະເພນີແບບດັ່ງເດີມ.

## 19. ບ້ານເຜົ່າໄທຂາວ ບ້ານສາມກາງ.




ບ້ານສາມກາງ ເປັນບ້ານເຜົ່າໄຕຂາວ ຕັ້ງຢູ່ຫ່າງຈາກເທດສະບານເມືອງແບງ ປະມານ 13 ກິໂລແມັດ. ສະພາບເສັ້ນທາງທ່ຽວໄດ້ທຸກລະດູ (ຕິດກັບເສັ້ນທາງເລກ 2 W), ນັບຖືຜີ ແລະ ອາຊີບຕົ້ນຕໍແມ່ນເຮັດນາ ແລະ ປູກສາລີ.

ທ່າແຮງຂອງບ້ານແມ່ນການຕໍ່າແຜ່ນແຜ່, ວິຖີແບບດັ່ງເດີມຂອງຊົນເຜົ່າທີ່ຍັງມີເອກະລັກສະເພາະຖິ່ນ ໃນໄລຍະຜ່ານມາ ເຄີຍມີນັກທ່ອງທ່ຽວໄດ້ມາທ່ຽວຊົມ ແລະ ຊື້ຜະລິດຕະພັນຂອງຊາວບ້ານມາແລ້ວ.

ໄຕຂາວບ້ານສາມກາງມາຈາກເມືອງຕຸງ ແຂວງໄລ່ເຈົາ, ເຂດໄຕບັກທາງພາກເໜືອ ສສ ຫວຽດນາມ. ບ້ານສາມກາງເຊື້ອຊາດໄຕຂາວ (ໄຕດ່ອນ) ໄດ້ຍົກຍ້າຍມາຕັ້ງຖິ່ນຖານຢູ່ທາງພາກເໜືອ ແຂວງຜົ້ງສາລີ ສປປ ລາວ ໃນປີ ຄສ 1865 ດຳລົງຊີວິດຢູ່ແບບກະແຈກກະຈາຍ, ຈຳນວນໜຶ່ງຢູ່ເຂດປາກຫວ້ຍຈາຍ ແລະ ປາກນ້ຳນ້ອຍ, ຈຳນວນໜຶ່ງຍ້າຍມາຢູ່ເຂດເມືອງໄຊ ປະມານ 15 ຄອບຄົວ ຢູ່ໄດ້ໄລຍະໜຶ່ງມີທ້າວຕູ້ຍນີ ໄດ້ຮູ້ຂ່າວວ່າຢູ່ເຂດເມືອງແບງ ທຳມະຊາດອຸດົມສົມບູນກໍ ພາຍາດຕິພີ່ນ້ອງລົງມາພັກເຊົ່າຢູ່ເຂດບ້ານນາບອນ. ໃນປີ 1880 ໄດ້ພາກັນຍ້າຍໄປຢູ່ບ້ານວັງວະມີ 18 ຫຼັງຄາເຮືອນ, ພົນລະເມືອງ85 ຄົນ ຢູ່ໄດ້ປະມານ 3 ປີ ເຈົ້າຊຸນຊຸມຕາວ, ເມືອງຕຸງ ແຂວງໄລ່ເຈົາ ໄດ້ມານຳເອົາພົນລະເມືອງຕົນເອງ ກັບຄືນບ້ານເກີດເມືອງນອນຢູ່ ສສ ຫວຽດນາມ ແຕ່ປະຊາຊົນກໍບໍ່ຍ່ອມກັບຄືນ, ປີ 1903–1904 ທ້າວດອງ ຊ່າງຕີເງິນຕີຄຳ ໄດ້ເຮັດໃຫ້ເກີດອັກຄີໄພໄຟໄໝ້ບ້ານຈົນໝົດກຽ້ງ ຈຶ່ງຍ້າຍບ້ານມາຢູ່ບ້ານວັງສາມກາງປີ 1904 ມີປະມານ 14 ຄອບຄົວມາອາໃສເຮັດນາໂດຍທ້າວຊາ (ຈ່າກວານ) ແລະ ທ້າວໝໍອ່ານ. ສາເຫດທີ່ເອີ້ນບ້ານວັງສາມກາງ ຍ້ອນມີພໍ່ເຖົ້າຄົນໜຶ່ງໄດ້ໄປຂວ່າງແຫຢູ່ວັງກ້ອງທ່າໄດ້ປາຈຳນວນຫຼວງຫຼາຍທັງກິນ ແລະຂາຍແດ່. ສ່ວນປາທີ່ຂາຍກໍ່ໄດ້ເປັນເງິນ 6 ບີ້ 3 ກາງ, ສະນັ້ນ ຈຶ່ງໄດ້ເອົາວັງນ້ຳ ບວກກັບເງິນ 3 ກາງ ມາເປັນຊື່ບ້ານວັງສາມກາງ.

## 20. ຖ້ຳຫຼວງ ບ້ານກັນວາງ.



ຖ້ຳຫຼວງ ຕັ້ງຢູ່ຫ່າງຈາກເທດສະບານເມືອງແບງ ປະມານ 36 ກິໂລແມັດ. ການເຂົ້າເຖິງບ້ານ ເປັນທາງດິນແດງ ທຽວໄດ້ພຽງລະດູດຽວ (ລະດູຝົນທ່ຽວບໍ່ສະດວກ), ເປັນເຂດພູເຂົາສູງກວ່າໝູ່ຢູ່ໃນຂົງເຂດນັ້ນ, ຖ້ານີ້ ຖືວ່າເປັນຖ້າໜຶ່ງອີກທີ່ມີຄວາມສວຍງາມ, ມີປ່າໄມ້ທີ່ດົກໜາ ເໝາະກັບການຍ່າງ ແລະ ສຶກສາຊີວະນາໆພັນ, ການໄປກິນເຂົ້າປ່າ ແລະ ສຶກສາວິຖີຊີວິດຂອງຊົນເຜົ່າ.

ຄຳວ່າຖ້ຳຫຼວງ ແມ່ນການນິຍົມກັນເອີ້ນຕັ້ງແຕ່ຄາວກ່ອນມາ ຍ້ອນວ່າຖ້ຳນີ້ ມີລັກສະນະປາກກວ້າງ ເມື່ອລົງໄປເບິ່ງແລ້ວ ຄືວ່າໃຫຍ່ຫຼວງ ຈຶ່ງເອີ້ນວ່າຖ້ຳຫຼວງ. ຖ້ຳຫຼວງນີ້ ເປັນຖ້ຳຍຸດທະສາດສຳຄັນແຫ່ງໜຶ່ງຂອງສປປລາວ ໃນສະໄໝລາວຖືກການຮຸກຮານຈາກຝຣັ່ງ ແລະ ອາເມຣິກາ. ໃນຊຸມປີ 1954 ໄດ້ມີນັກເດີນສຳຫຼວດພື້ນທີ ເພື່ອຊອກຫາຍຸດທະສາດ ເພື່ອລີ້ຊ່ອນຈາກການຮຸກຮານຝຣັ່ງ ໄດ້ມີໝູ່ທະຫານຈາກ ສສ ຫວຽດນາມ ນຳພາໂດຍ ທ້າວ ບຸນຍາງ ແລະ ທ້າວຄຳມີ ໄດ້ເດີນສຳຫຼວດຮອດເຂດພູໄຊ ບ້ານກັນວາງ ໄດ້ພົບຖ້ຳຫຼວງແຫ່ງນີ້ ສັງເກດແລ້ວແມ່ນ ເໝາະສົມທີ່ຈະຕັ້ງເປັນບ່ອນຍຸດທະສາດກໍ່ໄດ້ຈັດບຸລິມະສິດວ່າຈະຕ້ອງເອົາຖ້ຳແຫ່ງນີ້ເປັນບ່ອນລີ້ຊ່ອນເພື່ອເຮັດສົ່ງຄາມກັບສັດຕູ. ພໍສົງຄາມຝຣັ່ງໄດ້ສິ້ນສຸດພວກເຂົາກັບຄືນປະເທດ, ຈັກກະພັດອາເມຣິກາ ກໍ່ກະໂດດເຂົ້າມາແທນເຮັດເສິກສົງຄາມກັບລາວ, ພໍເມື່ອຮອດປີຄສ 1965 ທະຫານກອງພັນທີ່ 28 ຂອງປະເທດອ້າຍນ້ອງ ສສ ຫວຽດນາມ ກໍ່ໄດ້ມາຕັ້ງຖານທັບເປັນເຂດທີ່ໝັ້ນບຸກໂຈມຕີຢູ່ 3 ເມືອງໃຕ້ຂອງແຂວງອຸດົມໄຊ ເມືອງແບງ, ເມືອງຮຸນ ແລະ ເມືອງປາກແບງ ເມື່ອຮອດປີ ຄສ 1969 ສົງຄາມກໍ່ໄດ້ມີການຫຼຸດຜ່ອນຄວາມເຄັ່ງຕຶງ, ກອງພັນທີ່ 28 ກໍ່ໄດ້ຖອນກຳລັງໄປສູ້ຮົບຢູ່ຂົງເຂດອື່ນ. ດັ່ງນັ້ນ ຖ້ຳຫຼວງ ຈຶ່ງແມ່ນຖ້ຳໜຶ່ງທີ່ເປັນຍຸດທະສາດສຳຄັນຂອງ ສປປ ລາວ ທີ່ປະຊາຊົນຂົງເຂດນີ້ ປົກປັກຮັກສາຈົນມາເຖິງປະຈຸບັນນີ້.

## 21. ນ້ຳຕົກຕາດນ້ຳແຮງ.



ນ້ຳຕົກຕາດນ້ຳແຮງ ບ້ານກະຕາງຢາ ຕັ້ງຢູ່ຫ່າງຈາກເທດສະບານເມືອງຮຸນ ປະມານ 24 ກິໂລແມັດ. ເປັນເສັ້ນທາງປູຢາງ 4 ກິໂລແມັດ, ຈາກນັ້ນເຂົ້າໄປເປັນເສັ້ນທາງຍົກລະດັບປູຫີນແຮ່ ແລະ ດິນແດງ ທຽວໄດ້ໃນລະດູແລ້ງເທົ່ານັ້ນ. ທ່າແຮງຂອງຕາດ ເປັນແຫຼ່ງທ່ອງທ່ຽວທີ່ສວຍງາມອີກແຫ່ງໜຶ່ງຂອງ ເມືອງຮຸນ ອຸດົມສົມບູນດ້ວຍທຳມະຊາດ, ຊີວະນາໆພັນ.

ລັກສະນະຂອງຕາດ ໄດ້ປະກອບມີຫຼາຍພັກເປັນຊັ້ນ ແລະ ມີລັກສະນະເນີນຂຶ້ນໄປ, ແຕ່ລະພັກ ສາມາດລົງຫຼິ້ນອາບນ້ຳໄດ້. ນອກຈາກນີ້ ຍັງສາມາດທ່ຽວຊົມວິຖີຊີວິດ, ຊົມການຜະລິດກະສິກຳຂອງຊາວບ້ານ ທີ່ມີຄວາມຜູກພັນກັບສະຖານທີ່ແຫ່ງນີ້ມາແຕ່ຊ້ານານ.

ນ້ຳຕົກຕາດນ້ຳແຮງ ເປັນນ້ຳຕົກຕາດທີ່ເກີດຂຶ້ນມາໂດຍທຳມະຊາດ ແລະ ໄດ້ພົບເຫັນໃນສະຕະວັດທີ 3, ໃນສະໄໝກ່ອນແມ່ນທ້າວແຊມມີ ເປັນຜູ້ນຳພາມາຕັ້ງບ້ານປະກອບມີ 15 ຄອບຄົວ, ໄດ້ຕັ້ງຊື່ວ່າບ້ານແຊມມີຫຼັງຈາກນັ້ນມາໄດ້ຕັ້ງຊື່ວ່າ: ບ້ານນ້ຳແຮງ ເພາະວ່ານ້ຳໄຫຼຕົກລົງຕາດມີຄວາມແຮງ ແລະ ສົ່ງສຽງດັງສະໜັ່ນໄປໄກ, ສຽງນ້ຳດັງແຮງ, ຊາວບ້ານກໍ່ໄດ້ໃສ່ຊື່ວ່າຕາດນ້ຳແຮງ. ນ້ຳຕົກຕາດນ້ຳແຮງປະກອບມີສາມຕາດລຽນກັນຂຶ້ນຄື: ຕາດທີ 1: ມີຄວາມສູງປະມານ 13 ແມັດ, ຕາດທີ 2: ສູງປະມານ 8 ແມັດ ແລະ ຕາດທີ 3: ສູງປະມານ 5 ແມັດ. ນ້ຳຕົກຕາດນ້ຳແຮງ ມີຄວາມຍາວທັງໝົດປະມານ 20 ແມັດ, ແມ່ນ້ຳນີ້ໄຫຼອອກມາຈາກບ້ານນ້ຳຍິ່ງໄປສູ່ບ້ານສີບຸນເຮືອງ ທີ່ອຸດົມໄປດ້ວຍລະບົບນິເວດວິທະຍາ ແລະ ຊີວະນາໆພັນ. ອີກສາຍເຫດໜຶ່ງທີ່ວ່າ ຕາດນ້ຳແຮງນັ້ນ ຍ້ອນວ່າແຕ່ກ່ອນນັ້ນ ມີປ່າດົກໜາ ປົກຫຸ້ມອຸດົມສົມບູນດ້ວຍປ່າໄມ້ໃຫຍ່, ເຄືອເຂົາ ແລະ ຢູ່ບໍລິເວນໜ້າຕາດ ມີເຄືອໝາກແຫຼະເສັ້ນໜຶ່ງໃຫຍ່ ຢ່ອນລົງມາໜ້າຕາດເວລານ້ຳຕົກໂຕນຕາດຖືກເຄືອເຂົາດັ່ງກ່າວນັ້ນ ມັນກະເດັນອອກທັບໃສ່ນ້ຳໂຕນຕາດກາຍເປັນສຽງດັງແຮງອອກໄປໄກ. ດ້ວຍເຫດນັ້ນ ປະຊາຊົນເມືອງຮຸນ ຈິ່ງພາກັນເອີ້ນຊື່ຕາດນີ້ວ່າ: ຕາດນ້ຳແຮງ ແລະ ເປັນນ້ຳຕົກຕາດສັກສິດດັ່ງຄຳສຸພາສິດເພິ່ນວ່າເງິນສາມສາດບໍ່ທໍ່ຕາດນ້ຳແຮງທີ່ຄົນທ້ອງຖິ່ນເຄີຍເຄົາລົບນັບຖືວ່າມີເຈົ້າຖິ່ນເຈົ້າຖານປົກປັກຮັກສາທີ່ບໍ່ຄວນລົບລູ່ ໂດຍສະເພາະບໍ່ໃຫ້ຂ້າໂຕແບ້ ແລະ ໂຕໝາຖິ້ມລົງນ້ຳ ຊຶ່ງອາດເຮັດໃຫ້ລະບົບນ້ຳແຫ້ງລົງ ຕາມການເຊື່ອຖືຂອງຊາວບ້ານແຕ່ບູຮານນະການ ແລະ ຍັງເຊື່ອຖືກັນມາເຖິງທຸກວັນນີ້.

# 22. ຕາດຕະແລ.



ຕາດຕະແລຕັ້ງຢູ່ບ້ານຕະແລ, ຫ່າງຈາກເທດສະບານເມືອງຮຸນ ປະມານ 20 ກວ່າກິໂລແມັດ, ການເຂົ້າເຖິງເປັນເສັ້ນທາງດິນແດງ.ຈຸດເດັ່ນຂອງຕາດນີ້ເປັນນ້ຳຕົກຕາດແຫ່ງໜຶ່ງທີ່ມີຄວາມສວຍສົດງົດງາມທາງທຳມະຊາດເຊິ່ງອ້ອມຮອບດ້ວຍປ່າດົງດິບ ມີຕົ້ນໄມ້ໃຫຍ່, ນ້ອຍທີ່ມີໃບດົກໜາຂຽວງາມ ແລະ ເຕັມໄປດ້ວຍນົກນາໆຊະນິດ, ນ້ຳຕົກຕາດແຫ່ງນີ້ມີທັງໝົດ 7 ຕາດດ້ອຍກັນ, ມີທັງຕາດໃຫຍ່, ຕາດນ້ອຍຢັ່ງຢາຍໄປຕາມສາຍນ້ຳຕະ ແລະ ຍາວປະມານ 600 ກວ່າແມັດ ຄື:

ຕາດທີ່ 1 ສູງປະມານ 7 ແມັດ ແລະ ກວ້າງປະມານ 8 ແມັດ.

ຕາດທີ່ 2 ສູງປະມານ 15 ແມັດ ແລະ ກວ້າງປະມານ 7 ແມັດ.

ຕາດທີ່ 3 ສູງປະມານ 15 ແມັດ ແລະ ກວ້າງປະມານ 11 ແມັດ.

ຕາດທີ່ 4 ສູງປະມານ 16 ແມັດ ແລະ ກວ້າງປະມານ 27 ແມັດ.

ຕາດທີ່ 5 ສູງປະມານ 40 ແມັດ ແລະ ກວ້າງປະມານ 27 ແມັດ.

ຕາດທີ່ 6 ສູງປະມານ 13 ແມັດ ແລະ ກວ້າງປະມານ 28 ແມັດ.

ຕາດທີ່ 7 ສູງປະມານ 55 ແມັດ ແລະ ກວ້າງປະມານ 35 ແມັດ. (ຕາດທີ່ 4,5,6 ຢູ່ໃນຊ່ວງໄລຍະເດືອນ 12 – 6 ນ້ຳຈະບໍ່ໂຕນຕາດ, ນ້ຳຈະລອດພື້ນ).

ນ້ຳຕົກຕາດຕະແລ ມີຕຳນານເລົ່າຂານປາກຕໍ່ປາກມາວ່າ: ແຕ່ປາງກ່ອນມີບ່າວເງືອກຜູ້ໜຶ່ງ ຊື່ວ່າ ທ້າວ ພັກ ໄດ້ລົງຫຼິ້ນບຸນຢູ່ຫຼວງພະບາງ, ບັງເອີນເຫັນສາວເງືອກຜູ້ໜຶ່ງ ຊື່ວ່າ ນາງ ຄຳພິວ ທີ່ອາໄສຢູ່ນ້ຳຄານ ທ້າວ ພັກ ເກີດມີຄວາມຮັກມັກກັບ ນາງ ຄຳພິວ ແລະ ໄດ້ລັກເອົານາງມານຳ, ຕໍ່ຈາກນັ້ນມາ ມີບ່າວເງືອກຄົນໜຶ່ງທີ່ຢູ່ຫຼວງພະບາງ ທີ່ເຄີຍຮັກມັກກັບ ນາງ ຄຳພິວ ມາກ່ອນ ລາວຈຶ່ງໄດ້ນຳມາເອົານາງ ຄຳພິວ ຄືນ ທັງສອງຝ່າຍ ຈຶ່ງເກີດມີການຕໍ່ສູ້ກັນ, ສ່ວນ ທ້າວ ພັກ ກໍ່ໄດ້ສ້າງດ່ານຕ້ານກັນໄວ້ເປັນຈຸດໆ ຢູ່ທີ່ນ້ຳຕະແລ ແລະ ດ່ານດັ່ງກ່າວ ກໍ່ກາຍເປັນຊັ້ນໆຢາຍກັນໄປ ເພື່ອປ້ອງກັນການບຸກໂຈມຕີຂອງຮັກເກົ່າຂອງ ນາງ ຄຳພິວ ແລະຕັ້ງແຕ່ນັ້ນມາ ຈຶ່ງເອີ້ນວ່າຕາດຕະແລໃນປະຈຸບັນ.

## 23. ຕົ້ນໄມ້ລຳທຽນ (ໜອງຫຼົ່ມ).



ປ່າໄມ້ລຳທຽນແຫ່ງນີ້ ຕັ້ງຢູ່ບ້ານຈອມແລງ, ຫ່າງຈາກເທດສະບານເມືອງຣຸນ ປະມານ 23 ກິໂລແມັດ, ສະພາບເສັ້ນທາງເຂົ້າເຖິງເປັນເສັ້ນທາງດິນແດງຍົກລະດັບ, ທ່ຽວໄດ້ລະດູດຽວ. ທ່າແຮງ ແລະ ລັກສະນະຂອງຕົ້ນໄມ້ສູງຍາວ ບໍ່ມີງ່າຫຼສຍ ຄືກັບລຳທຽນ ເກີດຂຶ້ນໂດຍທຳມະຊາດ ຊຶ່ງກວມເອົາຫຼາຍເຮັກຕາເໝາະສົມໃນການພັດທະນາເປັນສະຖານທີ່ບໍລິການ, ສະຖານທີ່ທ່ອງທ່ຽວທີ່ຫາຊົມໄດ້ຍາກ ເຊິ່ງເວົ້າໄດ້ວ່າມີແຕ່ແຫ່ງດຽວນີ້ ທີ່ມີຕົ້ນໄມ້ທີ່ອັດສະຈັນເກີດຂຶ້ນໃນລັກສະນະນີ້.

ຕົ້ນໄມ້ລຳທຽນ ແລະ ໜອງຫຼົ່ມແຕ່ປາງກ່ອນຊາວບ້ານຈອມແລງ (ໃນອະດີດ) ໄດ້ຟານດ່ອນໂຕໜຶ່ງ ແລ້ວມາແບ່ງປັນຊີ້ນຟານດັ່ງກ່າວໃຫ້ແຕ່ລະຫຼັງຄາເຮືອນກິນ ແຕ່ຍັງມີຄອບຄົວແມ່ໝ້າຍຄອບຄົວໜຶ່ງບໍ່ກ້າເອົາຊີ້ນນັ້ນມາປຸງແຕ່ງກິນກໍເລີຍເອົາຊີ້ນຟານດັ່ງກ່າວໄປຫ້ອຍໄວ້ຢູ່ເສົາຊານ. ຕໍ່ມາໃນຄ່ຳຄືນຂອງມື້ນັ້ນຈຶ່ງເກີດມີຝົນຕົກຟ້າຮ້ອງລົມຢ່າງແຮງຢ່າງໜັກ ແລະ ໃກ້ຂ້ອນແຈ້ງຈຶ່ງເກີດມີເງືອກຈຳນວນຫຼວງຫຼາຍ ມາພັດທະລົ່ມເອົາເຮືອນຂອງ ຊາວບ້ານຈອມແລງ ຕາຍທັງໝົດ ຍັງເຫຼືອແຕ່ແມ່ໝ້າຍຜູ້ດຽວ ຜູ້ທີ່ບໍ່ກ້າກິນຊີ້ນຟານດ່ອນ ແມ່ໝ້າຍຄົນນັ້ນ ເຫັນຄົນອື່ນໃນໝູ່ບ້ານຕາຍໝົດ ລາວກໍຄິດຢາກຕາຍນຳເຂົາເຈົ້າ ລາວເບິ່ງບ່ອນໃດເປັນວັງນ້ຳເລິກ ລາວກໍໄດ້ໂດດລົງໄປ ເພື່ອຂ້າໂຕເອງຕາຍ ແຕ່ເມື່ອໂດດລົງບ່ອນທີ່ເປັນນ້ຳວັງເລິກ ກໍ່ກາຍເປັນບົກ, ເປັນໂພນຂຶ້ນ ຍ້ອນລາວບໍ່ໄດ້ກິນຊີ້ນຟານດ່ອນເງືອກ ຈຶ່ງບໍ່ຕ້ອງການລາວ. ເຂດບ້ານດັ່ງກ່າວ ກໍເລີຍເປັນໜອງ. ແຕ່ປະຈຸບັນ ຍັງມີຮ່ອງຮອຍເຫຼືອໄວ້ໃຫ້ເຫັນບາງບ່ອນ ເປັນໂນນໂພນທີ່ແມ່ໝ້າຍກະໂດດ ແລະ ໂນນເຮືອນຂອງແມ່ໝ້າຍ. ຕໍ່ມາໃນບໍລິເວນບ້ານ, ໜອງເກີດມີຕົ້ນໄມ້ໃຫຍ່ຍາວ, ລຳຊື່, ບໍ່ມີງ່າຄືກັບລຳທຽນ. ດັ່ງນັ້ນ ຊາວເມືອງຣຸນ ຈຶ່ງພາກັນເອີ້ນຊື່ວ່າປ່າໄມ້ລຳທຽນ. ສ່ວນຕົ້ນໄມ້ລຳທຽນທີ່ກ່າວມານີ້ ແມ່ນໄດ້ເກີດຂຶ້ນມາພາຍຫຼັງມີເຮືອນຊານບ້ານຊ່ອງຂອງຊາວບ້ານຫລົ່ມແລ້ວ ຈຶ່ງກາຍເປັນໜອງ. ປະຈຸບັນໃນພື້ນທີ່ດັ່ງກ່າວ ກໍກາຍເປັນໜອງໃຫຍ່ ເປັນບ່ອນລ້ຽງປາຂອງຊາວບ້ານ. ສ່ວນຕົ້ນໄມ້ລຳທຽນແມ່ນຍັງມີເຖິງທຸກວັນນີ້ ຊຶ່ງເປັນຕົ້ນໄມ້ທີ່ຫາເບິ່ງໄດ້ຍາກ.

# 24. ຖ້ຳພະເຈົ້າຄຳຕັນ ບ້ານປາກເງີຍ.

ຖ້ຳພະເຈົ້າຄຳຕັນ ບ້ານປາກເງີຍ ຕັ້ງຢູ່ຫ່າງຈາກເທດສະບານເມືອງປາກແບງ ປະມານ 16 ກິໂລແມັດ. ເສັ້ນທາງເຂົ້າເຖິງສາມາດເຂົ້າເຖິງໄດ້ 2 ເສັ້ນທາງ ທາງລົດຈາກເມືອງປາກແບງ ຫາບ້ານປາກເງີຍປະມານ12 ກິໂລແມັດ, ຂີ່ເຮືອຈາກບ້ານປາກເງີຍຂຶ້ນໄປຫາຖ້ຳປະມານ 20 ນາທີ. ເປັນຖ້ຳນ້ອຍມີຄວາມຍາວປະມານ 30 ແມັດ, ກວ້າງປະມານ 2-15 ແມັດ ແລະ ສູງປະມານ 5 - 10 ແມັດເປັນຖ້ຳທີ່ຄົ້ນພົບໃໝ່. ທ່າແຮງຂອງຖ້ຳແມ່ນຕັ້ງໃກ້ແມ່ນ້ຳຂອງ, ມີທຳມະຊາດສວຍງາມ ແລະ ສາມາດສ້າງເປັນກິດຈະກຳທ່ອງທ່ຽວຕໍ່ກັບແຫຼ່ງທ່ອງທ່ຽວເຊັ່ນ: ບ້ານປາກເງີຍ, ການຂີ່ເຮືອທ່ອງທ່ຽວ, ບ້ານປີ່ງ ແລະ ປ່າຊາພັນປີ ເຊື່ອມຕໍ່ກັບແຂວງບໍ່ແກ້ວ.




ຖ້ຳນີ້ເປັນຖ້ຳໜຶ່ງ ທີ່ປະກອບດ້ວຍທຳມະຊາດສວຍງາມ ມາແຕ່ດຶກດຳບັນ, ໄດ້ຄົ້ນພົບໂດຍຊາວ ບ້ານຊື່ທ້າວເຕາະ ຢູ່ບ້ານຫ້ວຍເປາະ ຄັ້ງວັນທີ 11 ກັນຍາ 2009 ຊຶ່ງຜູ້ກ່ຽວໄດ້ທຳມາຫາກິນ. ບັງເອີນພົບເຫັນໂຕເຈຍຈຳນວນຫຼວງຫຼາຍ ຢູ່ບໍລິເວນດັ່ງກ່າວກໍເລີຍສົນໃຈເຂົ້າໄປເບິ່ງ ກໍເຫັນວ່າມີຖ້ຳ ແລະ ມີເຈຍຫຼາຍ, ລາວຈຶ່ງເອົາມາບໍລິໂພກ ແລະ ເອົາມາຂາຍໃຫ້ຊາວບ້ານປາກເງີຍ, ປະຊາຊົນບ້ານປາກເງີຍເຫັນວ່າພີ່ນ້ອງເຜົ່າກຶມມຸເອົາໂຕເຈຍຈຳນວນຫຼວງຫຼາຍມາຂາຍຜິດປົກກະຕິໃນແຕ່ລະວັນ ເລີຍສົນໃຈໄປຖາມເຖິງກົກປາຍສາຍເຫດ ແລະ ທີ່ມາ, ເມື່ອຮູ້ຂ່າວ ອຳນາດການປົກຄອງບ້ານປາກເງີຍ ຈຶ່ງແຕ່ງຕັ້ງຊາວບ້ານໄປສຳຫຼວດເບິ່ງ ໃນທີ່ສຸດກໍ່ໄດ້ພົບເຫັນຖ້ຳດັ່ງກ່າວ. ພາຍໃນຖ້ຳເບື້ອງຂວາມື ມີແຜ່ນຫີນເປັນຮູບແທ່ນບູຊາ ຫຼັງແທ່ນມີຮູບແມງກະເບື້ອ, ຊ້າຍມືເປັນເສົາຫີນແຂວນ, ທາດກອງເຂົ້າ, ກ້ອນເສົ້າລືສີ, ຂາງ ແລະ ອື່ນໆ ຕາມຄວາມເຊື່ອຖືຂອງຊາວບ້ານ. ຖ້ຳດັ່ງກ່າວ ຕັ້ງຢູ່ເຂດສັກສິດທີ່ຊາວບ້ານເຄີຍເຊື່ອຖືມາເປັນເວລາຊ້ານານ ເຊິ່ງມີນິທານເລົ່າສືບຕໍ່ກັນມາວ່າ: ເປັນຖ້ຳພະຍານາກ ແລະ ເປັນບ່ອນຈຳສິນຂອງລືສີທີ່ຊາວບ້ານຮຽກວ່າ ຖ້ຳພະເຈົ້າຄຳຕັນໃນອະດີດ. ຢູ່ໃນຖ້ຳມີບໍ່ນ້ຳແຫ່ງໜຶ່ງ ທີ່ຊາວບ້ານຕັກເອົາມາບູຊາ ແຕ່ບໍ່ແຫ້ງ, ໃຊ້ເທົ່າໃດກໍ່ຍັງຄືເກົ່າ ບໍ່ວ່າໃນລະດູໃດກໍ່ຕາມ. ຢູ່ມາຄືນໜຶ່ງ ໄດ້ມີຊາວບ້ານຄົນໜຶ່ງ ຝັນວ່າພະລືສີຜູ້ເຝົ້າຢູ່ທີ່ນັ້ນ ຈົ່ມວ່າ ຜູ້ໃດກໍ່ພາກັນຕັກເອົາແຕ່ນ້ຳໄປ ພະອົງຫານ້ຳຈະລ້າງໜ້າກໍ່ບໍ່ມີ ຫຼັງຈາກນັ້ນ ນ້ຳກໍ່ໄດ້ແຫ້ງລົງເທື່ອລະເລັກລະນ້ອຍຈົນໝົດ. ກໍ່ຍ້ອນຊາວບ້ານເຂົ້າໄປລົບກວນສະຖານທີ່ສັກສິດຂອງລືສີ ລືສີຈຶ່ງເຮັດໃຫ້ນ້ຳແຫ້ງ.

## 25. ວັດສີຈອມແຈ້ງ ບ້ານສີຈອມແຈ້ງ.



ວັດສີຈອມແຈ້ງ ຕັ້ງຢູ່ເທດສະບານເມືອງປາກແບງ. ຈຸດເດັ່ນຂອງວັດນີ້ ເປັນວັດທີ່ເກົ່າແກ່ສັກສິດອັນເປັນທີ່ສັກກາລະບູຊາຂອງຊາວເມືອງປາກແບງ.

ວັດສີຈອມແຈ້ງໄດ້ສ້າງຂຶ້ນເມື່ອປີ 1560 ເປັນວັດທີ່ເກົ່າແກ່ສັກສິດເຊິ່ງມີຊາວພຸດຫຼາຍເຊັ່ນຄົນ ໄດ້ນັບຖືສັກກະລະບູຊາມາແຕ່ດົນນານ. ຕາມການເລົ່າຂານຂອງເຖົ້າແກ່ວ່າ: ວັດສີຈອມແຈ້ງໃນເມື່ອກ່ອນ ເປັນບ່ອນອາໄສຂອງຈັກກະພັດຝຼັ່ງແລ້ວຂັບໄລ່ພະສົງລົງໄປຢູ່ຂອບເຂດຫ້ອງວ່າການເມືອງ ຫຼັງຈາກປົດປ່ອຍສຳເລັດແລ້ວ ພະສົງຈຶ່ງໄດ້ກັບຄືນມາຄືເກົ່າ ແລະ ໄດ້ປັບປຸງຄືນໃໝ່. ຕົກມາໃນໄລຍະໜຶ່ງກໍ່ພົບເຫັນຮູທີ່ແປກປະຫຼາດ ຢູ່ດ້ານຫຼັງແທ່ນພະເຈົ້າໃຫ່ຍນັ່ງ ເຖົ້າແກ່ໄດ້ເອົາໝາກພ້າວປ່ອນລົງໄປເບິ່ງ ກໍ່ປະກົດເຫັນໝາກພ້າວອອກມາຢູ່ໜ້າຜາຂວາງ (ນ້ຳແບງ) ຫ່າງຈາກວັດໄປປະມານ 300 ແມັດ, ຈຶ່ງເຊື່ອຖືກັນວ່າ ແມ່ນມີຮູພະຍານາກ ແລະ ສາມາດພິສູດໃຫ້ເຫັນ ໃນເມື່ອບໍ່ດົນຜ່ານມານີ້ ມີບໍລິສັດທີ່ຈະມາຂຸດຄົ້ນພູໄຟໄໝ້ຢູ່ເມືອງຫົງສາ ໄດ້ບະມາແລ້ວຫຼາຍວັດ ແຕ່ບໍ່ປະສົບຜົນສຳເລັດ ຈຶ່ງລອງມາບະຢູວັດສີຈອມແຈ້ງ ເມືອງປາກແບງ ນີ້ເບິ່ງເຫັນວ່າປະສົບສຳເລັດ ເຂົາເຈົ້າກໍ່ໄດ້ນຳເງິນຈຳນວນ 20,000 ບາດ ມອບໃຫ້ວັດເພື່ອສ້າງສາພັດທະນາ. ຊາວພຸດທັງພາຍໃນ ແລະ ຕ່າງປະເທດຮັບຊາບ ກໍ່ມີຄວາມສົນໃຈມີນ້ຳໃຈສັດທາວັດຖຸປັດໃຈຕ່າງໆ ມາສ້າງສາພັດທະນາຈົນເຖິງປະຈຸບັນນີ້. ສິ່ງທີ່ປະທັບໃຈຂອງວັດສີຈອມແຈ້ງກໍ່ຄື: ກອງໃຫ່ຍຊາວບ້ານຮ້ອງຊື່ວ່ານາງກອງ ເຊິ່ງໄດ້ເອົາໄປແຂ່ງຂັນລະດັບທົ່ວປະເທດທີ່ຈັດຂຶ້ນຢູ່ແຂວງຫຼວງພະບາງໃນປີ 2000 ແລະ ໄດ້ອັນດັບທີ່ 2.

## 26. ປ່າຊາພັນປີບ້ານມົກແຄະ.




ປ່າຊາພັນປີ ຕັ້ງຢູ່ບໍລິເວນ ບ້ານມົກແຄະ ເມືອງປາກແບງ ຕັ້ງຢູ່ຫ່າງຈາກເທດສະບານເມືອງປາກແບງ ໄປທາງທິດຕາເວັນຕົກປະມານ 35 ກິໂລແມັດ. ສະພາບເສັ້ນທາງເຂົ້າເຖິງເປັນທາງດິນແດງ ປະມານ 25 ກິໂລແມັດ. ທ່າແຮງຂອງຊາ ແມ່ນສາມາດຜະລິດເປັນສິນຄ້າດ້ວຍການແປຮູບຕ່າງໆ ມາວາງສະແດງຢູ່ຕາມໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ. ຢູ່ຕົວເມືອງປາກແບງ ເປັນຈຸດແວ່ພັກເຊົາຂອງນັກທ່ອງທ່ຽວທີ່ເດີນທາງມາຕາມລຳແມ່ນ້ຳຂອງຈາກເມືອງຫ້ວຍຊາຍ ແຂວງບໍ່ແກ້ວ, ແຂວງຫຼວງພະບາງ, ແຂວງໄຊຍະບູລີ ແລະ ຈັງຫວັດນ່ານ ປະເທດໄທ. ນອກນີ້ ຍັງສາມາດສ້າງເປັນກິດຈະກຳທ່ອງທ່ຽວຊີມ ແລະ ຜະລິດຊາທີ່ຕິດພັນກັບບ້ານຊົນເຜົ່າໃນຂົງເຂດດັ່ງກ່າວ ແລະ ສາມາດສ້າງເປັນລາຍການທ່ອງທ່ຽວເຊື່ອມຕໍ່ກັບແຂວງບໍ່ແກ້ວໄດ້ອີກດ້ວຍ. ປ່າຊາໃນຂົງເຂດນີ້ມີເນື້ອທີ່ປະມານ 500 ເຮັກຕາເຊິ່ງຕັ້ງຢູ່ຕາມສາຍພູ, ເຈີ້ຍພູເຂດບ້ານມົກແວນ, ບ້ານລວງ, ບ້ານພູສູງ ແລະ ບ້ານມົກແຄະ. ໃນໄລຍະການເດີນທາງ ຈະໄດ້ສຳຜັດກັບບັນຍາກາດທີ່ເຕັມໄປດ້ວຍທັດສະນີຍະພາບທີ່ສວຍງາມໜ້າປະທັບໃຈ ແລະ ສາມາດຊົມແສງພະອາທິດຂຶ້ນ ແລະ ໃນຍາມໃກ້ຕົກດິນ, ຊົມທະເລໝອກໃນຍາມເຊົ້າ ໃນຍາມລະດູໜາວ ແລະ ໄດ້ສຳພັດກັບການດຳລົງຊີວິດຂອງຊາວບ້ານໃນຂົງເຂດດັ່ງກ່າວ.

ປ່າຊາພັນປີ ຫລື ຊື່ເດີມວ່າປ່າໝ້ຽງທີ່ຊາວບ້ານເຄີຍຮ້ອງ. ຊາວບ້ານສ່ວນຫລາຍແມ່ນພາກັນເອົາໃບຂອງມັນມາພັນໝ້ຽງອົມ ມີລົດຊາດຫອມສົ້ມແບບທຳມະຊາດ ເພື່ອມາແລກປ່ຽນເປັນສິນຄ້າ. ນອກຈາກນັ້ນ ເຂົາເຈົ້າຍັງສາມາດເອົາໃບມາພັນຢາສູບ ແລ້ວເອົາຂີ້ຢາປົວພະຍາດແຂ້ວແມງເຊິ່ງເປັນຢາຊະນິດໜຶ່ງ ທີ່ສາມາດປົວແຂ້ວແມງໄດ້.ໃນປີ 1996 ນັກທ່ອງທ່ຽວຊາວຝຣັ່ງ ໄດ້ຄົ້ນພົບແລ້ວເອົາໃບມາທົດລອງໃສ່ນ້ຳດື່ມ ເຫັນວ່າເປັນຊາ ທີ່ມີລົດຊາຫອມແບບທຳມະຊາດ ເຊິ່ງມີອາຍຸປະມານພັນປີ. ຫຼັງຈາກນັ້ນ, ຊາວບ້ານຈິ່ງພາກັນຮຽກຊື່ວ່າ ປ່າຊາພັນປີ ຈົນເຖິງປະຈຸບັນນີ້.

# ແຂວງຫຼວງພະບາງ

## 1. ປະຫວັດຫຍໍ້ເມືອງຫຼວງພະບາງ.




ເມືອງຫຼວງພະບາງ ເປັນເມືອງໜຶ່ງທີ່ເກົ່າແກ່ຂອງ ສປປ ລາວ, ເປັນເມືອງທີ່ເຕັມໄປດ້ວຍມົນສະເໜ່, ຄວາມເປັນເອກະລັກທາງດ້ານວັດທະນະທຳ, ມີຄວາມຫຼາກຫຼາຍທາງດ້ານຊັບພະຍາກອນການທ່ອງທ່ຽວ ແລະ ມີປະຫວັດສາດຄວາມເປັນມາ ຕິດພັນກັບຂະບວນວິວັດຂອງຊາດ ຫຼາຍຍຸກຫຼາຍສະໄໝ.

ຕຳນານໜຶ່ງກ່ຽວກັບຕົ້ນກຳເນີດຂອງເມືອງຫຼວງພະບາງນັ້ນແມ່ນ ໄດ້ອີງຕາມປະຫວັດສາດຂອງສະໄໝຂຸນບູລົມ, ຜູ້ທີ່ເປັນລູກຊາຍຂອງພະຍາແຖນ. ເຊິ່ງເພິ່ນໄດ້ພາຊາວໄຕອົບພະຍົບຈາກອານາຈັກໜອງແສ ແລະ ນ່ານເຈົ້າ ພາຍຫຼັງຖືກຮຸກຮານ, ແລ້ວລົງມາຢູ່ຮ່ວມກັບຊາວອາຊີໃຕ້ (Austro-Asiatic) ທີ່ອາໄສຢູ່ເຂດນີ້. ຂຸນບູລົມມີລູກຊາຍ 7 ຄົນ, ເຊິ່ງໄດ້ສ້າງເມືອງຂຶ້ນ 7 ເມືອງ ແລະ ໄດ້ສົ່ງລູກຊາຍຂອງແຕ່ລະຄົນໄປປົກຄອງ ແລະ ລູກຊາຍກົກຊື່ ຂຸນລໍ, ໄດ້ຖືກສົ່ງມາສ້າງເມືອງຫຼວງພະບາງແຫ່ງນີ້.[1]

ຂໍ້ມູນທີ່ແນ່ນອນ ແລະ ຖືກຕ້ອງກ່ຽວກັບປະຫວັດສາດລາວນັ້ນແມ່ນ ເລີ່ມມາແຕ່ສະຕະວັດທີ XIV, ໃນເວລາທີ່ເຈົ້າຟ້າງຸ່ມໄດ້ປົກຄອງ ແລະ ທ້ອນໂຮມເຂດແດນຕ່າງໆເຂົ້າກັນ ເຊິ່ງປະຈຸບັນແມ່ນເມືອງຊຽງຂວາງ, ພູພຽງໂຄລາດ

[1] ການທ່ອງທ່ຽວ ແລະ ການຄຸ້ມຄອງມໍລະດົກ ໃນເມືອງມໍລະດົກໂລກຫຼວງພະບາງ ສປປລາວ.2006 ,7 ,

(ທິດຕາເວັນອອກຂອງປະເທດໄທ) ແລະ ເມືອງຫຼວງພະບາງ ເຂົ້າເປັນອານາຈັກລ້ານຊ້າງ ຫຼື ເອີ້ນອີກຊື່ໜຶ່ງວ່າ “ແຜ່ນດິນທີ່ມີຊ້າງລ້ານໂຕ”.

ພະເຈົ້າຟ້າງຸ່ມໄດ້ນຳເອົາສາສະໜາພຸດນິກາຍຖິລາວະດາ ແລະ ໄດ້ຮັບເອົາພະພຸດທະຮູບຄຳ (ພະບາງ), ເຊິ່ງເປັນຂອງຂວັນຈາກອານາຈັກຂະເໝນ (ກຳປູເຈຍ) ຢູ່ທາງໃຕ້ຂອງປະເທດລາວ. ຄຳວ່າ **ຫຼວງພະບາງ** ແມ່ນໄດ້ມາຈາກຊື່ຂອງພະພຸດທະຮູບຄຳອົງສັກສິດອົງນີ້ ແລະ ໄດ້ກາຍເປັນຊື່ນະຄອນຫຼວງຂອງອານາຈັກລ້ານຊ້າງ ໃນເວລາຕໍ່ມາ. ຫຼວງພະບາງ ເປັນເມືອງເກົ່າແກ່ຂອງຊາດລາວ ມີຜູ້ຄົນເຂົ້າມາຕັ້ງຖິ່ນຖານບ້ານຊ່ອງ ຢູ່ດິນແດນແຫ່ງນີ້ເປັນເວລາດົນນານກວ່າ XII ສັດຕະວັດແລ້ວ, ທັງຍັງເຄີຍເປັນລາດຊະທານີຂອງອານາຈັກລາວລ້ານຊ້າງນັບແຕ່ສ້າງຕັ້ງປະເທດມາ II ສັດຕະວັດ (ກາງສັດຕະວັດທີ XIV ຫາ ກາງສັດຕະວັດທີ XVI); ຫຼວງພະບາງເປັນແຫຼ່ງອາລິຍະທຳທີ່ໂດດເດັ່ນຂອງເຊື້ອຊາດລາວ ຊຶ່ງໄດ້ຮັບການປົກປັກຮັກສາສືບທອດ ແລະ ພັດທະນາມາຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນມໍລະດົກທາງດ້ານທຳມະຊາດ ແລະ ວັດທະນະທຳທີ່ມີຄວາມຫຼາກຫຼາຍ.

ຫຼວງພະບາງຈຶ່ງໄດ້ຖືກຮັບຮອງເປັນເມືອງມໍລະດົກໂລກ ຈາກອົງການອຸຍແນສໂກ ໃນວັນທີ 9 ທັນວາ ປີ 1995, ໃນວາລະປະຊຸມຂອງຄະນະກຳມະການມໍລະດົກໂລກທີ່ນະຄອນຫຼວງແບກແລງ, ປະເທດເຢຍລະມັນ ໂດຍສອດຄ່ອງກັບ 3 ເງື່ອນໄຂ ທີ່ອົງການອຸຍແນສໂກກຳນົດໄວ້ ດັ່ງນີ້:

- ຫຼວງພະບາງໄດ້ສະທ້ອນໃຫ້ເຫັນເຖິງ ການປະສົມປະສານແບບພິເສດຂອງສະຖາປັດຕະຍະກຳລາວດັ້ງເດີມ ແລະ ອາຄານແບບອານານິຄົມຂອງເອີຣົບໃນສັດຕະວັດທີ XIX ແລະ XX.
- ຫຼວງພະບາງ ເປັນຕົວຢ່າງໂດດເດັ່ນຂອງສະຖາປັດຕະຍະກຳທີ່ສ້າງຂຶ້ນມາຫຼາຍສັດຕະວັດ ຊຶ່ງຮວບຮວມເອົາ ສະຖາປັດຕະຍະກຳຂອງອາຄານສາສະໜາ, ອາຄານແບບພື້ນເມືອງ ແລະ ອາຄານຍຸກອານານິຄົມ.
- ທິວທັດທີ່ເປັນເອກະລັກ ຂອງຕົວເມືອງຫຼວງພະບາງ ໄດ້ຖືກຮັກສາໄວ້ເປັນຢ່າງດີ ທີ່ສະແດງໃຫ້ເຫັນ ເຖິງຍຸກທີ່ສຳຄັນຂອງການເຊື່ອມໂຍງຂອງ 2 ວັດທະນະທຳ ປະເພນີທີ່ແຕກຕ່າງກັນ.

ປະຈຸບັນ ຫຼວງພະບາງໄດ້ກາຍເປັນອຸທິຍານທ່ອງທ່ຽວຂອງຊາວໂລກທີ່ມີຊື່ສຽງຕະຫຼອດມາ. ມີແຫຼ່ງທ່ອງທ່ຽວທີ່ໜ້າປະທັບໃຈເຊັ່ນ: ພະທາດພູສີ, ວັດຊຽງທອງ, ວັດວິຊຸນ, ວັດອາຮາມ ແລະ ອື່ນໆ; ຫໍພິພິທະພັນ, ນ້ຳຕົກຕາດກວາງຊີ, ບ້ານຫັດຖະກຳ, ຕະຫຼາດກາງຄືນ, ບຸນປະເພນີປີໃໝ່ລາວ, ບຸນຫໍ່ເຂົ້າປະດັບດິນຊ່ວງເຮືອເດືອນເກົ້າ, ບຸນອອກພັນສາໄຫຼເຮືອໄຟ, ບຸນປະເພນີປີໃໝ່ຂອງເຜົ່າຕ່າງໆ. ແຫຼ່ງທ່ອງທ່ຽວ ແລະ ງານບຸນປະເພນີເຫຼົ່ານັ້ນໄດ້ເປັນສິ່ງດຶງດູດເອົານັກທ່ອງທ່ຽວທົ່ວຈາກທຸກມູມໂລກເຂົ້າມາຢ້ຽມຢາມເມືອງຫຼວງພະບາງນັບປີເພີ່ມຂຶ້ນ.

## 2. ວັດຊຽງທອງ.




ວັດຊຽງທອງ ເປັນວັດທີ່ມີຄວາມສວຍສົດງົດງາມທາງດ້ານສະຖາປັດຕິຍະກຳແບບມີເອກະລັກຂອງຫຼວງພະບາງ ທີ່ໄດ້ຮັບການຍົກຍ້ອງຈາກນັກບູຮານຄະດີ ເປັນດັ່ງອັນຍະມະນີແຫ່ງສະຖາປັດຕະຍະກຳ ຂອງລາວ ອັນເກົ່າແກ່ ແລະ ມີຮູບແບບຊີງລາວດັ້ງເດີມແທ້ໆ.ມີເນື້ອທີ່ ທັງໝົດ 291,12 ຕາແມັດ, ຕັ້ງຢູ່ລະຫວ່າງກາງ ຂອງແມ່ນ້ຳຂອງ ແລະ ແມ່ນ້ຳຄານ ທີ່ໄຫຼ່ປ່ອງໃສ່ກັນ, ສາຍເຫດທີ່ເອີ້ນວ່າວັດຊຽງທອງ ກໍຍ້ອນວ່າ: ເມື່ອກ່ອນວັດແຫ່ງນີ້ ມີກົກທອງຂະໜາດໃຫຍ່ ໂດຍວັດແທກຈາກລອງອ້ອມເທົ່າກັບ 27 ອູ້ມ ແລະ ລວງສູງ ເທົ່າກັບ 117 ແມັດ[2]. ຄຳວ່າ “ທອງ” ແມ່ນມາຈາກຊື່ຂອງຕົ້ນທອງ ທີ່ເປັນຕົ້ນໄມ້ໃຫຍ່ໃນວັດແຫ່ງນີ້.

ຫຼັງຈາກທີ່ເຈົ້າໄຊຍະເສດຖາທິລາດສຳເລັດການສ້າງ ວັດຊຽງທອງ ໃນປີ ຄສ 1560 ແລ້ວ, ພະອົງກໍໄດ້ລົງໄປຍັງນະຄອນຫຼວງວຽງຈັນ ແລະ ໄດ້ສ້າງພະທາດຫຼວງ

[2] ຫ້ອງການມໍລະດົກໂລກ ຫຼວງພະບາງ

ວຽງຈັນຂຶ້ນ. ຮູບຊົງລັກສະນະອາຄານຂອງ ວັດຊຽງທອງ ນັ້ນ ມີລັກສະນະຄ້າຍຄືກັບໄກ່ມູບລູກ ທີ່ມີຫຼັງຄາອາຮາມລັກສະນະລຽນຊ້ອນກັນ 3 ຊັ້ນ, ທາງເຂົ້າອາຮາມມີດອກບົວທັງໝົດ 4 ດອກ ເຊິ່ງແຕ່ລະດອກມີຊື່ແຕກຕ່າງກັນເຊັ່ນ:ດອກບົວມະໂຫລີ, ດອກບົວສີສັດຕະນາກ,ດອກບົວສາດຕະສິນ ແລະ ດອກບົວກົມລະວົນ.[3]

ຫຼັງຈາກສ້າງວັດນີ້ບໍ່ດົນ ພະອົງກໍຊົງຍ້າຍ ເມືອງຫຼວງຂອງປະເທດ ໄປຍັງນະຄອນວຽງຈັນ ແລະ ວັດແຫ່ງນີ້ ໄດ້ຖືກຮັບການອຸປະຖຳສືບຕໍ່ເບິ່ງແຍງ ຈາກເຈົ້າມະຫາຊີວິດ ສີສະຫວ່າງວົງ ແລະ ເຈົ້າມະຫາຊີວິດ ສີສະຫວ່າງ ວັດທະນາ ເຊິ່ງເປັນເຈົ້າມະຫາຊີວິດ ສອງພະອົງສຸດທ້າຍ ຂອງລາວ.

ຕາມອາຮາມ ແລະ ບໍລິເວນອ້ອມຮອບວັດ ກໍ່ຍັງມີຮູບພາບທີ່ສະແດງເຖິງວິຖີການດຳລົງຊີວິດ ຂອງປະຊາຊົນ ທີ່ຕິດດ້ວຍແກ້ວຫຼາກຫຼາຍສີສັນຕິດຕໍ່ກັນເປັນຮູບຕ່າງໆ. ນອກນັ້ນ, ຢູ່ດ້ານນອກ ກໍຍັງມີໂຮງມ້ຽນພະໂກດ ເປັນອາຄານຫຼັງໃຫຍ່ຊົງບູຮານ, ຫໍລາດຊະຣົດ ເປັນບ່ອນເກັບມ້ຽນພະໂກດ ຂອງເຄືອລະຍາດເຈົ້າສີສະຫວ່າງວັດທະນາ ເຊິ່ງໄດ້ຮັບການຄວັດແກະສະຫຼັກ ແລະ ລົງນ້ຳກ້ຽງພອກດ້ວຍຄຳປົວ ເປັນລວດລາຍລາວ ທັງໝົດ.

ພື້ນນິທານ ຈັນທະພານິດ ຕຳນານພື້ນເມືອງລາວເລົ່າວ່າ ພະເຈົ້າ ໄຊຍະເສດຖາທິລາດ ສ້າງວັດຊຽງທອງຂຶ້ນ ແລະ ເປັນວັດແຫ່ງດຽວທີ່ມີຄວາມໂຊກດີ ທີ່ລອດພົ້ນຈາກການເຜົາຜານ ໃນສະໄໝສົງຄາມ ໃນປີ 1887 ແລະໄດ້ຖືກຮັບບູລະນະສ້ອມແປງທັງໝົດ 4 ຄັ້ງ: ຄັ້ງທີ 1 ໃນປີ 1928, ຄັ້ງທີ 2 ລະຫວ່າງ ປີ 1952 ຫາປີ 1960 ໃນສະໄໝເຈົ້າ ສີສະຫວ່າງວົງ, ຄັ້ງທີ 3 ປີ 1984 ແລະ ຄັ້ງທີ 4 ປີ 2013. ວິຫານຂອງວັດແຫ່ງນີ້ ມີຮູບລັກສະນະ ສາມຫ້ອງລອຍ ແລະ ເຊຍດ່ຽວ, ສະແດງລັກສະນະພິເສດດ້ວຍຮູບເສັ້ນລວດລາຍ ທີ່ກົມກືນກັນ. ຫຼັງຄາ ມີຄວາມສະລັບຊ້ອນກັນ ແອ່ນອອກແບບສະຫງ່າຜ່າເຜີຍ. ການສ້ອມແປງໃຫຍ່ຄັ້ງຫຼັງສຸດ ໂດຍພື້ນຖານແລ້ວແມ່ນແນໃສ່ການປະດັບເອ້ ແລະ ການກໍ່ສ້າງຫໍໄຫວ້ໃຫຍ່ ຂອງຫໍລາຊະໂກດ ຊຶ່ງເລີ່ມສ້າງຂຶ້ນໃນປີ 1962 ເປັນຕົ້ນມາ[4].

ຮາດຊະຣົດ ໄດ້ຖືກສ້າງຂຶ້ນ ໃນປີ 1962 ຫຼັງຈາກເຈົ້າຊີວິດ ສີສະຫວ່າງວັດທະນາ ເສຍຊີວິດ ໄດ້ 3 ປີ ໄດ້ໃຊ້ເພື່ອເປັນບ່ອນເກັບຮັກສາ ອັດຖິ ຂອງເຈົ້າຊີວິດໃນສະໄໝກ່ອນ ເຊິ່ງຮາດຊະຣົດນັ້ນ ຈະປະກອບມີ  3 ພະໂກດ. ພະໂກດໃຫຍ່ທີ່ຢູ່ທາງກາງນັ້ນ ແມ່ນພະໂກດທີ່ເກັບຮັກສາອັດຖິ ຂອງເຈົ້້າຊີວິດ ສີສະຫວ່າງ ວັດທະນາເຊິ່ງແມ່ນເຈົ້າຊີວິດ ອົງສຸດທ້າຍ. ສ່ວນພະໂກດ ທີ່ຢູ່ທາງດ້ານໜ້ານັ້ນ ແມ່ນພະໂກດທີ່ເກັບ ອັດຖິ ຂອງພະມານດາ  ແລະ ພະໂກດທີ່ຢູ່ດ້ານຫຼັງນັ້ນ ແມ່ນພະໂກດທີ່ເກັບມ້ຽນ ອັດຖິ ຂອງຜູ້ເປັນອ້າຍ ຂອງເຈົ້າຊີວິດ ສີສະຫວ່າງ ວັດທະນາ ພະໂກດທັງໝົດນັ້ນ ມີການຄວັດແກະສະຫຼັກລວດລາຍອັນງົດງາມ, ດ້ານໜ້າມີການຄວັດແກະສະຫຼັກ ແລະ ຕົກແຕ່ງຢ່າງງົດງາມດ້ວຍຫົວນາກ ທີ່ເຮັດຈາກໄມ້ ສັກທອງ ຈຳນວນ 7 ຫົວໂດຍການລົງນ້ຳກ້ຽງພອກຄຳທັງໝົດ.

ເມື່ອທ່ານເດີນທາງມາເຖິງວັດແຫ່ງນີ້ ສິ່ງທຳອິດທີ່ທ່ານຈະໄດ້ພົບເຫັນ ກໍຄືການໄປຊົມອາຮາມ  ທີ່ເອີ້ນວ່າ “ສິມ” ເຊິ່ງຈະມີຂະໜາດບໍ່ໃຫຍ່ ແຕ່ກໍສະແດງເຖິງສະຖາປັດຕະຍະກຳ ທາງດ້ານສາສະໜາ ແບບເອກະລັກຂອງຫຼວງພະບາງແທ້ໆ ດ້ວຍຫຼັງຄາອາຮາມ ທີ່ແອ່ນໂຄ້ງຊ້ອນກັນຢູ່ 3 ຊັ້ນ, ຫຼຸດລື່ນກັນລົງມາເປັນຖານ ສ່ວນກາງຂອງຫຼັງຄາ ປະດັບເອ້ດ້ວຍຍອດ “ຊໍ່ຟ້າ” ທີ່ສວຍງາມເຊິ່ງປະກອບມີທັງໝົດ 17 ຊໍ່. ອັນມີຄວາມໝາຍວ່າເປັນ ອາຮາມ ທີ່ເຈົ້າມະຫາຊີວິດ ຊົງສ້າງຂຶ້ນ, ສ່ວນທີ່ຄົນສາມັນສ້າງ ຈະມີຊໍ່ຟ້າພຽງແຕ່ 1 – 7 ຊໍ່ເທົ່ານັ້ນ, ຕາມການເລົ່າຂານ ເຊື່ອກັນວ່າບໍລິເວນປ່ອງສີ່ຫຼ່ຽມນ້ອຍໆ ເຄິ່ງກາງຂອງ ຊໍ່ຟ້າ ເຄີຍໃຊ້ເປັນທີ່ເກັບຂອງມີຄ່າເຊັ່ນພຣະພຸດທະຮູບ, ຖັດມາ ສ່ວນທີ່ຢູ່ທາງໜ້ານັ້ນເອີ້ນວ່າ “ໂງ່” ຮູບຮ່າງຄືກັນກັບຫົວນາກ ເປັນສ່ວນປະດັບຕາມຄະຕິທຳທາງພຸດທະສາສະໜາ. ເມື່ອຍ່າງເຂົ້າມາ ທາງດ້ານປະຕູອາຮາມ ເຮົາຈະເຫັນ ປັດຕະຍະກຳ ອັນໂດດເດັ່ນສະດຸດຕາ ກັບລວດລາຍລາວທີ່ຄວັດແກະສະຫຼັກ ອັນປານີດ ແລະ ສວຍງາມ, ປ່ອງຢ້ຽມ ແລະ ຝາພາຍໃນ

[3] ຈານ ທຸມພັນ ສີສົມພອນ ກວານວັດແນວໂຮມບ້ານຊຽງທອງ ,

[4] ທ່ານ ບຸນຄົງ ຄຸດທ້າວ ຮອງຫົວໜ້າຫ້ອງການ ມໍລະດົກໂລກ ແຂວງຫຼວງພະບາງ

ແມ່ນການປະດັບເອ້ດ້ວຍການລົງສີນ້ຳກ້ຽງພອກຄຳປົວ ທີ່ສະແດງເຖິງເລື່ອງລາວປະຫວັດ ຂອງພຸດທະປະຫວັດ ທ້າວສີທົນ, ພະເຈົ້າ 10 ຊາດ ແລະ ພາບນິທານເພື່ອນບ້ານ ແລະ ເມື່ອເບິ່ງເລິກເຂົ້າໄປ ກໍ່ຈະເຫັນພະປະທານ "ອົງຫຼວງ" ນອກຈາກ ອາຮາມວັດຊຽງທອງ ຈະມີພະອຸໂປສົດ ທີ່ໂດດເດັ່ນດ້ວຍສະຖາປັດຕະຍະກຳແບບລ້ານຊ້າງແລ້ວ, ການຕົກແຕ່ງລວດລາຍຕາມຝາພາຍໃນ ກໍສວຍງາມຄືກັນ ບໍລິເວນຝາດ້ານຫຼັງຂອງພະອຸໂປສົດ ກໍມີການຕົກແຕ່ງດ້ວຍການເອົາແກ້ວສີມາຕັດຕໍ່ກັນເປັນຮູບຕົ້ນໂພຂະໜາດໃຫຍ່ ດ້ານຂ້າງກໍຕິດເປັນຮູບສັດໃນວັນນະຄະດີ ຍາມບ່າຍທີ່ແສງແດດສ່ອງສະທ້ອນລົງມາຈະເຮັດໃຫ້ເບິ່ງແລ້ວມີຄວາມງົດງາມ ຖັດມາບໍລິເວນດ້ານຂ້າງ ແລະດ້ານຫຼັງຂອງພະອຸໂບສົດ ເປັນທີ່ຕັ້ງຂອງວິຫານນ້ອຍໆ 2 ຫຼັງ, ຈຸດເດັ່ນຂອງວິຫານດ້ານໜ້າຄື ທີ່ຝາດ້ານນອກ ແຕ່ລະຫຼັງ ຕົກແຕ່ງດ້ວຍແກ້ວສີ ຕັດເປັນຊີ້ນສ່ວນນ້ອຍໆແລ້ວນຳມາຕໍ່ກັນເປັນຮູບຮ່າງຕ່າງໆ ເລົ່າເປັນນິທານພື້ນບ້ານ ເບິ່ງສວຍງາມອາຮາມຕາຕາມແບບສະບັບຫຼວງພະບາງ, ວິຫານຫຼັງນ້ອຍດ້ານຂ້າງພະອຸໂປສົດ ທີ່ມີຊື່ວ່າ "ວິຫານແດງ" ພາຍໃນເປັນທີ່ປະດິດຖານພະພຸດທະຮູບປາງໄສຍາດທີ່ງົດງາມ ດ້ວຍພະຫັດ ທີ່ຮອງຮັບພະສຽນໄວ້ຢ່າງງົດງາມ ແລະ ອອນຊອນ. ພະພຸດທະຮູບນີ້ ເຄີຍນຳໄປຈັດສະແດງ ທີ່ມະຫານະຄອນ ປາຣີ, ປະເທດຝຣັ່ງ ໃນປີ ຄ.ສ 1931 ແລະ ໄປປະດິດສະຖານຢູ່ທີ່ນະຄອນວຽງຈັນ ຫຼາຍສິບປີ ກ່ອນທີ່ຈະນຳກັບຄືນມາຍັງຫຼວງພະບາງ ໃນປີ ຄ.ສ 1964. ສ່ວນວິຫານດ້ານຫຼັງພະອຸໂປສົດຄື "ຫໍພະມ່ານ" ພາຍໃນປະດິດສະຖານ "ພະມ່ານ" ຊຶ່ງມີລັກສະນະຄ້າຍກັບ "ພະບາງ" ຈົນຫຼາຍຄົນເຂົ້າໃຈຜິດຄິດວ່າເປັນພະອົງດຽວກັນ, ຈະມີການອັງເຊີນ "ພະມ່ານ" ລົງມາ ເພື່ອໃຫ້ປະຊາຊົນໄດ້ຫົດສົງນ້ຳ ແລະ ກາບໄຫວ້. ສຳລັບ ເລື່ອງພາຍໃນຝາດ້ານຫຼັງວິຫານນີ້ ເປັນພາບປະດັບແກ້ວສີ ເລົ່າເລື່ອງວິຖີຊີວິດຂອງຜູ້ຄົນ ສ້າງຂຶ້ນໃນປີ ຄ.ສ 1950 ເພື່ອສະເຫຼີມສະຫຼອງທີ່ໂລກກ້າວສູ່ຍຸກເຄິ່ງພຸດທະການ, ດ້ານຫຼັງຫໍພະມ່ານ ເປັນທີ່ຕັ້ງຂອງພະທາດ ເຈົ້າຊີວິດ ສີສະຫວ່າງວົງ, ຊຶ່ງເປັນທີ່ເກັບ ອັດຖິ ຂອງເຈົ້າມະຫາຊີວິດ ສີສະຫວ່າງວົງ ແລະດ້ານທິດຕະເວັນອອກສຽງໃຕ້ ຕິດກັບຮົ້ວ ເປັນໂຮງເກັບເຮືອ ໃກ້ກັບແຄມແມ່ນ້ຳຂອງສ່ວນດ້ານໜ້າພະອຸໂປສົດ ເປັນທີ່ຕັ້ງຂອງຫໍກອງ ມີລວດລາຍລົງນ້ຳກ້ຽງພອກຄຳປົວສວຍງາມເທິງເສົາ. ນອກຈາກນັ້ນ; ໃນບໍລິເວນວັດຊຽງທອງ ເມື່ອທ່ານຍ່າງເຂົ້າໄປທາງດ້ານຖະໜົນໂພທິສາລາດ ດ້ານຂວາມືຈະຕ້ອງສະດຸດຕາກັບອາຄານຊົງບູຮານມີລວດລາຍແກະສະຫຼັກທາສີຄຳ. ຂະໜາດໃຫຍ່ຊຶ່ງເອີ້ນວ່າ "ໂຮງມ້ຽນໂກດ" ຫຼືເປັນໂລງເກັບພະໂກດ, ພະຣາດຊະຣົດ, ລາຊະຍາດຂອງເຈົ້າຊີວິດ ສີສະຫວ່າງ ວັດທະນາ ຊຶ່ງສິ້ນພະຊົນເມື່ອປີ ຄ.ສ.1959 ແລະ ໄດ້ສ້າງໂຮງມ້ຽນໂກດແຫ່ງນີ້ຂຶ້ນ ໃນປີ ຄ.ສ 1962 ພາຍໃນມີລັກສະນະເປັນໂຖງກວ້າງ ຝາດ້ານໜ້າຕັ້ງ, ພື້ນສາມາດຖອດອອກເພື່ອໃຫ້ສາມາດເຄື່ອນຣາດຊະຣົດອອກມາໄດ້. ບໍລິເວນກາງໂຮງມ້ຽນໂກດ ເປັນທີ່ຕັ້ງຂອງຣາດຊະຣົດ ໄມ້ແກະສະຫຼັກຕິດຄຳປົວອ້ອມຮອບຄັນ. ມີພະໂກດ 3 ອົງ, ສູນກາງເປັນໂກດອົງໃຫຍ່ ເປັນບ່ອນເກັບມ້ຽນ ອັດຖິ ຂອງເຈົ້າສີສະຫວ່າງ ວັດທະນາ. ໂກດອົງນ້ອຍດ້ານໜ້າ ເປັນຂອງພະລາຊະມານດາ, ສ່ວນໂກດອົງນ້ອຍດ້ານຫຼັງ ເປັນຂອງຜູ້ເປັນອ້າຍ. ໂຮງມ້ຽນໂກດນີ້ອອກແບບໂດຍ ເຈົ້າມະນີວົງ ແລະ ແກະສະຫຼັກໂດຍຊ່າງຫຼວງພະບາງ ທີ່ຊື່ "ເພຍຕັນ" ເມື່ອຄັ້ງທີ່ ຮັບລາຊະການຢູ່ໃນພະມະຫາລາຊະວັງ ນັບເປັນຊ່າງຝີມືຊັ້ນເອກປະຈຳພະອົງ ຂອງເຈົ້າມະຫາຊີວິດ ສີສະຫວ່າງ ວັດທະນາ, ເຊິ່ງເພິ່ນມີຄວາມຊຳນານທາງດ້ານການແຕ້ມ ແລະ ການແກະສະຫຼັກ ຈຸດເດັ່ນອີກຢ່າງໜຶ່ງຂອງໂຮງມ້ຽນໂກດ ຄືບໍລິເວນຝາດ້ານນອກທີ່ "ເພຍຕັນ" ແກະສະຫຼັກໄວ້ຢ່າງງົດງາມລົງດ້ວຍສີທອງສຸກ ໂດຍການເລົ່າເລື່ອງພະລັກພະລາມ ຕອນສຳຄັນ. ເຊິ່ງດ້ານເທິງສຸດເປັນຕອນ "ພິເພກ" ກຳລັງບອກຄວາມລັບ "ເລື່ອງ" ບ່ອນເຊື່ອງຫົວໃຈ ຂອງທົດສະກັນ ກັບ ພະລັກພະລາມ ແລະ ນາງສີດາ. ຖັດລົງມາເປັນຕອນທີ່ທົດສະກັນຖືກທະນູຂອງພະລາມສຽບເຂົ້າທີ່ຫົວໃຈເປັນຕົ້ນ, ເດີມພາບແກະສະຫຼັກເຫຼົ່ານີ້ ເປັນລັກສະນະການລົງພາບປິດທອງທີ່ສວຍງາມ, ຕໍ່ມາ ມີການບູລະນະໃໝ່ ໂດຍທາສີທອງທັບລົງໄປດັ່ງທີ່ເຫັນໃນປະຈຸບັນ. ນອກຈາກນີ້, ພາຍໃນວັດຊຽງທອງ ຍັງມີເຂດສັງຄາວາດ ປະກອບດ້ວຍກຸດຕິ, ສະຖູບເຈດີ ດັ່ງວັດທົ່ວໆໄປ ແລະ ຍັງມີພະສົງຈຳພັນສາຢູ່.

**ຂະໜາດ, ການຕົກແຕ່ງ, ການປະດັບປະດາ ແລະ ລວດລາຍຕ່າງໆ.**

- ຫໍພະສ່ຽງທາຍ ມີລັກສະນະຫຼັງຄາ 3 ຊັ້ນ, ມີຫົວນາກ 4 ໂຫງ່, ມີແຂນນາງ 18 ອັນ, ມີປະຕູໜຶ່ງ ບານ ປິ່ນໄປທາງທິດເໜືອ ແລະ ປ່ອງຢ້ຽມສອງຂ້າງ ຫັນໄປທາງທິດຕາເວັນອອກ ແລະ ທິດຕາເວັນຕົກ.
- ຫໍພະມ່ານ ມີຫຼັງຄາ 2 ຊັ້ນ, ມີຫົວນາກ 2 ໂຫງ່, ມີແຂນນາງ 16 ອັນ.

- ຫໍໄຕໃຫຍ່ ມີຫົວນາກ 4 ໂຫງ່, ປັດຈຸບັນ ຫັກ 1 ໂຫງ່, ທາງດ້ານໜ້າຂອງ ຫໍໄຕໃຫຍ່.
    - ❖ ລາຍເສົາ ນອກອາຮາມ ວັດຊຽງທອງ ດ້ານໜ້າ ປະດັບດ້ວຍ ລວດລາຍ ດອກຈຽງຕົ້ນເສົາພອກຄຳ.
    - ❖ ລາຍເສົາ ໃນອາຮາມ ແມ່ນພອກຄຳດ້ວຍ ລາຍສ້ອຍສາ ຕີນຝາ.
    - ❖ ລາຍຄ້າວ ນອກອາຮາມ ແມ່ນພອກຄຳດ້ວຍລາຍ ດອກຄັນ, ດອກກົ້, ດອກຈັນ.
    - ❖ ໄມ້ແປ ແຕ້ມດ້ວຍລາຍດອກ ຊິງກາບິນ, ດອກຕາເວັນນ້ອຍ.
    - ❖ ໜ້າອາຮາມວັດ ມີຫົວເສົານ້ອຍ 14 ເສົາ ແລະ ໄມ້ຮົ້ວ ທີ່ແຕ້ມດ້ວຍ ລາຍຊ້ອນ 78 ລຳ.
    - ❖ ດອກຊຸ້ມປະຕູ ດອກເອື້ອງ ທາງເຂົ້າອາຮາມ ມີຍອດສູງ 7 ຊັ້ນ, ມີ ແປຫຼັງຄາ 2 ຊຸດ, ຊຸດລຸ່ມມີ 4 ຄ້າວ, ຊຸດເທິງ ມີ 5 ຄ້າວ ແລະ ແປ ບິນ 1 ແປ.
    - ❖ ລາຍເສົາ ດ້ານໜ້າ ແລະ ຝາຜະໜັງ ດ້ານນອກ ລາດຊະໂກດ ແມ່ນ ແຕ້ມໂດຍລາຍ ເທບພະນົມ ປະສົມກັບ ດອນຈຽງ.
    - ❖ ລາຍເພດານ ລາດຊະໂກດ ແຕ້ມດ້ວຍລາຍດອກ ກົງຈັກ[5].
    - ❖ ອາຮາມວັດ ກວ້າງ 6,80 ແມັດ, ຍາວ 22,40 ແມັດ, ສູງ 15,30 ແມັດ.[6]

**ຄວາມໝາຍຂອງ ຍອດຊໍ່ຟ້າ 17 ຊັ້ນ ຂອງວັດຊຽງທອງ.**

ຍອດຊໍ່ຟ້າທີ່ຫຼັງຄາຂອງອາຮາມ (ສິມ) ນັ້ນ, ແມ່ນມີຄວາມເຊື່ອ ແລະ ເປັນ ສັນຍາລັກຂອງສະຫວັນຊັ້ນຟ້າ ເຊິ່ງມີຄວາມເຊື່ອໃນພຸທະປະຫວັດ ກໍ່ຄື ພຣະທັມມະ ຈັກ ກັບ ປະວັດຕະນະສູຕ ເຊິ່ງເປັນປະຖົມມະບົດຂອງທັມມະເທສະໜາ ກັນທຳອິດ ຂອງພຣະສັມມາສັມພຸທະເຈົ້າ ທີ່ພຣະອົງໄດ້ຊົງໂປຣດເທສະໜາແກ່ ປັນຈະວັກຄີທັງ ຫ້າອົງ ເຊິ່ງມີເນື້ອໃນກ່າວເຖິງ ຕອນທີ່ ພຣະພຸທະເຈົ້າ ກຳລັງປະຕິບັດຕົນເພື່ອ ປະຕິເສດ ທາງສຸດໂຕ່ງ ສອງຢ່າງ ແລະ ໂດຍປະຕິບັດ ຕາມທາງສາຍກາງ ອັນເປັນແບບ ທາງທີ່ປະຕິບັດທີ່ຖືກຕ້ອງ ໃຫ້ແກ່ມວນມະນຸດ ແລະ ມີເນື້ອຫາສະແດງເຖິງຂັ້ນຕອນ ແລະ ການປະຕິບັດໃຫ້ບັນລຸເຖິງ ອະຣິຍະສັຈສີ່ ເພື່ອດຳເນີນຂັ້ນຕອນການປະພຶດ ປະຕິບັດ ແລະ ເຂົ້າໃຈຂອງຄວາມເປັນທຸກ ສະມຸດທັຍນິໂຣດມັຄ ເພື່ອໄປສູ່ ພຣະ ນິພານ ເຊິ່ງເປັນເປົ້າຫມາຍ ແລະ ຈຸດໝາຍສູງສຸດ ຂອງພຸທະສາສະໜາ ເມື່ອພຣະຜູ້ ມີພຣະພາກເຈົ້າ ຕັດທັມມະຈັກ ກັບ ປະວັດຕະນະສູຕ ຢູ່ນັ້ນ. ດວງພຣະເນດສ່ອງ ເຫັນທັມ ສາມາດສ່ອງເຫັນ 15 ຊັ້ນ ນາຮົກ, 16 ຊັ້ນສະຫວັນ.

ສະນັ້ນ, ບູຮານລາວ ຈຶ່ງນິຍົມຖືເອົາ ຂໍ້ນີ້ເປັນຂໍ້ສູງ (16 ຊັ້ນຟ້າ ແລະ 15 ຊັ້ນ ດິນ) ແລະໄດ້ປະຕິບັດ ການເຮັດຍອດຊໍ່ຟ້າ ຫຼັງຄາຂອງວັດຕາມຂໍ້ຄະຕິ ດັ່ງກ່າວ, ເພື່ອ ບັນລຸເປົ້າຫມາຍຂອງ ພຸທະສາສະໜາ ເພື່ອໃຫ້ຕົນໄດ້ບັນລຸໄປເຖິງສະຫວັນ ຊັ້ນອະກະ ນິຕຖາ ທີ່ເປັນຊັ້ນສູງສຸດຂອງສວງສະຫວັນ.



[5] ຈານ ຫຸມພັນ ສີສົມພອນ ກວານວັດ.ແນວໂຮມບ້ານຊຽງທອງ ,

[6] ແຜນຜັງ ແລະ ແຜນວາດ PSMV ຈາກຫ້ອງການມໍລະດົກໂລກ ສະຖິຕິປີ .2015 ຜູ້ໃຫ້ຂໍ້ ມູນ ທພຸດ ຫ້ອງຂໍ້ມູນຂ່າ .ວສານ .ຫ້ອງການມໍລະດົກໂລກ ຫຼວງພະບາງ ,

## 3. ປະຫວັດພະບາງ.



ພະບາງ ແມ່ນພະພຸດທະຮູບອົງສັກສິດ, ເປັນປູສະນີຍະວັດຖຸອັນເກົ່າແກ່ ແລະ ເປັນຂອງຄ້ຳຂອງຄູນ ເປັນພະພຸດທະຮູບສຳຄັນຫຍິ່ງ, ເປັນມະຫາສົມບັດອັນລ້ຳຄ່າ ຄູ່ບ້ານຄູ່ເມືອງລາວ ແລະ ເປັນມິ່ງຂວັນອັນປະເສີດຂອງປະຊາຊົນລາວທັງຊາດ ມາເປັນເວລາອັນດົນນານໂດຍການບອກເລົ່າ ຂອງ ຜູ້ອຳນວຍການຫໍພິພິຕະພັນແຫ່ງຊາດຫຼວງພະບາງ[7] ເພິ່ນໄດ້ເວົ້າວ່າ **ພະບາງ** ເປັນພະພຸດທະຮູບທີ່ເຮັດດວ້ຍ ຄຳ, ເງິນ ແລະ ທອງ ມາປະສົມຫຼອມເຂົ້າກັນ, ເມື່ອຫຼໍ່ ພະພຸດທະຮູບສຳເລັດບໍລິບູນແລ້ວ ຈຶ່ງໄດ້ທຳການພຸດທາພິເສກ, ພະມະຫາຈຸຣະນາຄະເຖຣະເຈົ້າໄດ້ຕັ້ງຈິດອາທິຖານອັນເຊີນເອົາພະສາຣິກະທາດທັງ 5 (ກະດູກຂອງພະພຸດທະເຈົ້າ) ເຂົ້າສິງ ຢູ່ໃນຮ່າງກາຍ ຂອງພະພຸດທະຮູບອົງນີ້, ໃນ 5 ແຫ່ງຄື: ທາດພະ ອົງສະເດັດເຈົ້າ ຢູ່ໃນໜ້າຜາກ, ຄາງ, ເອິກ ແລະ ໃນມືກ້ຳຂວາ ແລະ ກ້ຳຊ້າຍ, ລວງສູງ 83 ຊັງຕີແມັດ, ມີນ້ຳໜັກ 53.400 ກິໂລກຣາມ.

ນັບຕັ້ງແຕ່ພະບາງ ໄດ້ຖືກສ້າງຂຶ້ນມາເພິ່ນໄດ້ປະດິດສະຖານ ຢູ່ປະເທດສີລັງກາເປັນເວລາ ດົນນານ ເຖິງ 963 ປີ. ມາຮອດປີ ພຸດທະສັກກະລາດ 1400 ພະເຈົ້າສີຣິຈັນທະລາດ ແຫ່ງປະເທດກຳປູເຈຍ ໄດ້ໄປຂໍພະບາງ ນຳພະເຈົ້າສຸບິນນາລາດ ຜູ້ປົກຄອງແຜ່ນດິນແຫ່ງເມືອງລັງກາ (ປະເທດສີລັງກາ) ພະອົງກໍຍິນດີມອບ ໃຫ້ແກ່ເຈົ້າຊີວິດກຳປູເຈຍ. ພະບາງໄດ້ສະຖິດ ຢູ່ໃນພະວິຫານກາງນະຄອນຫຼວງອິນທະປັດຖານະຄອນ ປະເທດກຳປູເຈຍ ເປັນເວລາ 502 ປີ.

ມາຮອດປີ ຄ.ສ 1359 ໃນສະໄໝຣາຊະການພຣະເຈົ້າ ປະຣະມັດຖະເຂມະຣາ, ເຈົ້າຊີວິດແຜ່ນດິນປະເທດກຳປູເຈຍ ເຊິ່ງເປັນ ພໍ່ເຖົ້າຂອງພະຍາຟ້າງຸ່ມ ໄດ້ຍິນດີຕົກລົງມອບພະບາງ, ພະຄຳພີ ແລະ ພະໄຕປິດົກ ມອບໃຫ້ເຈົ້າຟ້າງຸ່ມ ຜູ້ເປັນລູກເຂີຍ, ມີພະມະຫາປາສະມັນ ພ້ອມ ດ້ວຍພະພິກຂຸສົງ 20 ອົງ ແລະ ນັກປາດ 4 ທ່ານ ໄດ້ອັນເຊີນ 'ພະບາງ' ແລະ ພະຄຳພີ ແລະ ພະໄຕປິດົກ ຂຶ້ນມາປະເທດລາວ ແລະ ໄດ້ປະດິດສະຖານໄວ້ຢູ່ ເມືອງວຽງຄຳ.

ໃນ ຄ.ສ 1502 ສະໄໝສົມເດັດພະເຈົ້າວິຊຸນນະລາດ ໄດ້ອັນເຊີນ 'ພະບາງ' ມາຈາກເມືອງວຽງຄຳ ຂຶ້ນມານະຄອນຊຽງທອງ ຄື ເມືອງຫຼວງພະບາງໃນປະຈຸບັນ ແລະ ໄດ້ນຳໄປປະດິດ ສະຖານໄວ້ ທີ່ວັດມະໂນລົມ. ໃນປີ ຄ.ສ 1504 ຈຶ່ງໄດ້ອັນເຊີນເອົາ 'ພະບາງ' ອອກຈາກວັດມະໂນລົມ ມາສະຖິດໄວ້ຢູ່ໃນ ວັດວິຊຸນມະຫາວິຫານ. ໃນປີ ຄ.ສ 1705 ສະໄໝຂອງເຈົ້າໄຊວົງເວ້ (ສົມເດັດພຣະເຈົ້າໄຊ

[7] ທ່ານ ສົມພອນ ລໍວັນອິນ25 , ພຶດສະພາ 2016

ຍະເສດຖາທິລາດ ທີ 2) ອັງເຊີນເອົາ ‘ພະບາງ’ ລົງໄປນະຄອນຫຼວງວຽງຈັນ ປະດິດສະຖານໄວ້ທີ່ ວັດປ່າສັກຫຼວງ (ວັດອິນແປງ ປັດຈຸບັນ).

ໃນສະໄໝພະເຈົ້າສິຣິບຸນຍະສານ ເຈົ້າຊີວິດແຫ່ງອານາຈັກລ້ານຊ້າງວຽງຈັນ ສົມເດັດພະເຈົ້າກຸງ ທົນບູລີ ໄດ້ສັ່ງໃຫ້ກອງທັບຫຼວງສະຫຍາມ ຊຶ່ງນໍາທັບໂດຍເຈົ້າພະຍາມະຫາກະສັດສຶກ ມາຕີເຂົ້າຍຶດເອົາ ອານາຈັກລ້ານຊ້າງວຽງຈັນໄດ້ແລ້ວ ກໍ່ປຸ້ນສະດົມເກັບກວາດເອົາຊັບສົມບັດ ວັດຖຸມີຄ່າທັງໝົດແລ້ວ ກໍ່ເຂົ້າປຸ້ນເອົາ ພະບາງ ແລະ ພະແກ້ວມໍລະກົດ ໄປຍັງກຸງທົນບູລີ.

ເມື່ອຕົ້ນປີ ຄ.ສ 1783 ໃນສະໄໝພະພຸດທະຍອດຟ້າຈຸລາໂລກ (ຣາຊະການ ທີ 1) ເປັນ ພະເຈົ້າແຜ່ນດິນສະຫຍາມ. ສົມເດັດພະເຈົ້ານັນທະເສນ ກໍ່ໄດ້ທູນຂໍເອົາ ‘ພະບາງ’ ກັບຄືນສູ່ແຜ່ນດິນ ລາວລ້ານຊ້າງວຽງຈັນ. ໃນສະໄໝເຈົ້າອະນຸວົງ ເປັນເຈົ້າຊີວິດ ຜູ້ປົກຄອງອານາຈັກລ້ານຊ້າງວຽງຈັນ ໃນປີຈຸຣະສັກກະຣາດ ຄ.ສ 1828 ໃນສະໄໝພະບາດສົມເດັດພະນັ່ງເກົ້າ (ຣາຊະການທີ 3) ໄດ້ຕີປຸ້ນເມືອງວຽງຈັນ ແລະ ນໍາເອົາ ‘ພະບາງ’ ໄປປະດິດສະຖານໄວ້ຢູ່ທີ່ວັດຈັກກະວັດກຸງເທບ. ພະບາງ ໄດ້ປະດິດສະຖານ ຢູ່ປະເທດໄທ ເປັນເວລານານເກືອບ 40 ປີ. ຄືມາຮອດປີ ຄ.ສ 1886 ໃນສະໄໝຣາຊະການແຜ່ນດິນຂອງສົມເດັດພະເຈົ້າຈັນທະລາດ ໄດ້ກາບທູນຂໍເອົາ ‘ພະບາງ’ ນໍາເຈົ້າຊີວິດ ປະເທດໄທ ກັບຄືນສູ່ນະຄອນຫຼວງພະບາງລ້ານຊ້າງ ເປັນຄັ້ງທີ 2 ໄດ້ປະດິດສະຖານຢູ່ວັດວິຊຸນ ມະຫາວິຫານໄດ້ 2 ປີ, ສົມເດັດພະເຈົ້າສັກກະລິນ ຈຶ່ງໃຫ້ອັງເຊີນ ‘ພະບາງ’ ຍ້າຍອອກຈາກວັດວິຊຸນ ມາປະດິດສະຖານ ຢູ່ວັດໃໝ່ສຸວັນນະພູມາຮາມ.

ວັນທີ 25 ມີນາ ປີ ຄ.ສ 1904 ໃນສະໄໝ ເຈົ້າຊີວິດສີສະຫວ່າງວົງ ໄດ້ອັນເຊີນພະບາງ ອອກຈາກວັດໃໝ່ສຸວັນນະພູມາຮາມ ມາປະດິດສະຖານໄວ້ຢູ່ໃນພະຣາຊະວັງຫຼວງ (ຫໍພິພິຕະພັນປະຈຸບັນ). ໃນປີ ພ.ສ 2511 ພຣະບາດສົມເດັດພຣະເຈົ້າສີສະຫວ່າງວັດທະນາ ໄດ້ສ້າງຫໍພຣະບາງ ຂຶ້ນໃນພຣະຣາຊະວັງຫຼວງ ທີ່ຫຼວງພະບາງ ແຕ່ບໍ່ທັນສໍາເລັດ. ໃນປີ ຄ.ສ 1975 ປະເທດລາວ ໄດ້ຮັບການປົດປ່ອຍທົ່ວປະເທດ ແລະ ໄດ້ສະຖາປະນາເປັນປະເທດ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 2 ທັນວາ (12) 1975. ພັກ ແລະລັດຖະບານ ໄດ້ຕົກລົງສືບຕໍ່ກໍ່ສ້າງ ຫໍພະບາງຈົນສໍາເລັດໃນປີ ຄ.ສ 2013.

ວັນເສົາ ວັນທີ 14 ເດືອນ ທັນວາ (12) ຄ.ສ 2013 ໃນສະໄໝ ຂອງພະນະທ່ານ ຈູມມາລີ ໄຊຍະສອນ ເປັນເລຂາທິການສູນກາງພັກ, ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ທ່ານ ປອ. ຄໍາແພງ ໄຊສົມແພງ, ເປັນເລຂາ ພັກແຂວງ, ເຈົ້າແຂວງ ຫຼວງພະບາງ ພ້ອມດ້ວຍປະຊາຊົນບັນດາເຜົ່າ ແຂວງຫຼວງພະບາງ ກໍ່ຄື ປະຊາຊົນບັນດາເຜົ່າທົ່ວປະເທດ ໄດ້ຈັດຕັ້ງພິທີອາລາທະນາອັງເຊີນ ‘ພະບາງ’ ຂຶ້ນປະດິດສະຖານ ຢູ່ຫໍພະບາງ ແລະ ໄດ້ມີການຄົບງັນເປັນ ເວລາ 3 ມື້ 3 ຄືນ. ທຸກໆປີ ພໍຮອດມື້ທີ 3 ຂອງບຸນປີໃໝ່ ຄືມື້ສັງຂານຂຶ້ນ ທາງອໍານາດການປົກແຂວງ ແລະ ພໍ່ແມ່ເຖົ້າແກ່ປະຊາຊົນຊາວຫຼວງພະບາງ ໄດ້ອັນເຊີນພະບາງ ແລະ ແຫ່ແຫນໄປປະດິດສະຖານໄວ້ ໃນຫໍສົງທີ່ວັດໃໝ່ສຸວັນນະພູມມາຮາມ ເພື່ອໃຫ້ປະຊາຊົນທົ່ວທັງເມືອງໄດ້ໄປຫົດສົງພະພຸດທະຮູບອົງນີ້.

## 4. ຖ້ຳຕິ່ງ.



ຖ້ຳຕິ່ງແມ່ນຖ້ຳທຳມະຊາດ ທີ່ມີຄວາມສວຍງາມ ທີ່ເກີດຈາກພູຫີນຜາ ຊຶ່ງຕັ້ງຢູ່ຕາມແຄມຝັ່ງຂອງແມ່ນ້ຳຂອງ ທາງຝັ່ງຕາເວັນຕົກ, ກົງກັນຂ້າມກັບບ້ານປາກອູ ບ່ອນທີ່ນ້ຳອູໄຫຼເຊື່ອມໃສ່ແມ່ນ້ຳຂອງ, ຖ້ຳຕິ່ງ ຕັ້ງຫ່າງຈາກຕົວເມືອງຫຼວງພະບາງ ໄປທາງທິດເໜືອປະມານ 30 ກິໂລແມັດ ເປັນສະຖານທີ່ທ່ອງທ່ຽວແຫ່ງໜຶ່ງທີ່ມີຊື່ສຽງຂອງແຂວງຫຼວງພະບາງ ແລະ ໃນ ສປປ ລາວ.

ຖ້ຳຕິ່ງແບ່ງອອກເປັນ 2 ຖ້ຳຄື: ຖ້ຳເທິງ ແລະ ຖ້ຳລຸ່ມ ເຊິ່ງມີເສັ້ນທາງຍ່າງເຊື່ອມຕໍ່ຫາກັນ ແຕ່ລະຖ້ຳກວ້າງຂວາງ ແລະ ມີພະພຸດທະຮູບໄມ້ສັກສິດ ຫຼາຍກວ່າ 4,000 ອົງ. ຕາມການເຊື່ອຖືຂອງປະຊາຊົນລາວແລ້ວ ຖ້ຳຕິ່ງເຄີຍເປັນບ່ອນອາໄສຂອງຄົນບູຮານ ຕໍ່ມາໄດ້ມີການປະຕິສັງຂອນ, ປະດິດສະຖານຂອງພະພຸດທະຮູບໄມ້ສະໄໝກ່ອນໃນແຕ່ລະປີ ປະຊາຊົນໃນພູມລຳເນົາແຫ່ງນີ້ ໄດ້ພາກັນສ້າງພະພຸດທະຮູບມາປະດິດສະຖານ ໄວ້ຖ້ຳຕິ່ງແຫ່ງນີ້ ເພື່ອກາບໄຫວ້ຕາມຮີດຄອງປະເພນີ ແລະ ການເຊື່ອຖືຂອງທ້ອງຖິ່ນ. ມາເຖິງສັດຕະວັດທີ XVIII – XX ເມື່ອຮອດປີໃໝ່ລາວຂອງທຸກໆປີ ເຈົ້າຊີວິດ ພ້ອມດ້ວຍບໍລິວານໄຜ່ຟ້າລາຊະດອນ ໄດ້ພາກັນໄປຫົດສົງພະທີ່ຖ້ຳຕິ່ງ ແລະ ທ່ຽວຊົມທຳມະຊາດ, ປະເພນີຫົດສົງພະດັ່ງກ່າວ ແມ່ນຍັງສືບທອດກັນມາເຖິງທຸກວັນນີ້.

ຄຳວ່າ **ຖ້ຳຕິ່ງ** ນັ້ນ, ມີຊື່ມາແຕ່ເມື່ອໃດນັ້ນພວກເຮົາບໍ່ສາມາດຮູ້ໄດ້ ແຕ່ໜັງສືລາວພື້ນຂຸນບູລົມໄດ້ກ່າວເຖິງຖ້ຳຕິ່ງ ແມ່ນມີຊື່ມາແຕ່ສະໄໝຂຸນລໍ ປະຖົມກະສັດຂອງລາວ ຕຳນານບູຮານກ່າວວ່າຂຸນລໍໄດ້ຍົກພົນ ມາຕາມນ້ຳອູ ແລະ ນ້ຳຂອງ ມາຕັ້ງທັບຢູ່ ສົບອູ (ບໍລິເວນບ້ານປາກອູ) ແລະ ຜາຕິ່ງ. ໃນສະໄໝຕໍ່ມາ ເມື່ອກາງສັດຕະວັດທີ XIV ແຫ່ງຄິດຕະສັງກາດ ເຈົ້າຟ້າງຸ່ມມະຫາລາດ ໄດ້ທ້ອນໂຮມ ແລະ ກໍ່ຕັ້ງອານາຈັກລ້ານຊ້າງ ເອກະພາບ ໄດ້ຍົກທັບມາແຕ່ປະເທດຂະເໝນ ກໍ່ໄດ້ຕັ້ງຫຼັກຢູ່ບ້ານປາກອູ ແລະ ຜາຕິ່ງເຊັ່ນດຽວກັນ. ດັ່ງນັ້ນ, ຄຳວ່າ ຖ້ຳຕິ່ງມີຊື່ມາແຕ່ດົນນານແລ້ວ ແລະ ອີກບັນຫາໜຶ່ງຖ້ຳຕິ່ງມີຍອຍຕິ່ງຍ້ອຍລົງມາຕາມ ຜາພູ ແລະ ໃນຮູຖ້ຳເປັນຈຳນວນຫຼວງຫຼາຍ ເຊິ່ງເອີ້ນຢ່າງໜຶ່ງວ່າ **ນົມຜາ**. ຈາກເຫດຜົນດັ່ງກ່າວປະຊາຊົນທ້ອງຖິ່ນຈິ່ງເອີ້ນວ່າ **ຖ້ຳຕິ່ງ**.

ຕາມທັດສະນະທາງບູຮານວິທະຍາ ຍ້ອນຂະບວນການທໍລະນີວິທະຍາ ນັບເປັນລ້ານປີມາແລ້ວຖ້ຳເທິງ ແລະ ຖ້ຳລຸ່ມ ເຊິ່ງທັງສອງໄດ້ຈົມຢູ່ພື້ນນ້ຳທະເລ ຊຶ່ງນ້ຳໄດ້ກັດເຊາະເຮັດໃຫ້ພູໜ່ວຍນີ້ເກີດເປັນຖ້ຳ ແລະ ໃນຍຸກຕໍ່ມາ ນ້ຳທະເລໄດ້ເຄື່ອນຍ້າຍເຮັດໃຫ້ຂົງເຂດນີ້ ກາຍເປັນພູຜາປ່າດົງ ແລະ ຮ່ອງຮອຍຖ້ຳຕິ່ງໃຫ້ພວກເຮົາເຫັນປະຈຸບັນ.

ນັບເປັນເວລາຫຼາຍພັນປີ ຕໍ່ມາໄດ້ມີມະນຸດຍ້າຍເຂົ້າມາອາໄສຢູ່ຖ້ຳຕິ່ງແຫ່ງນີ້, ອາດເປັນບ່ອນພັກອາໄສຂອງມະນຸດປະຖົມບູຮານ ເມື່ອຂະບວນວິວັດທະນາ

ການດ້ານກະສິກຳມີການຂະຫຍາຍຕົວ ມະນຸດປະສົບຜົນສຳເລັດໃນການດຳລົງຊີວິດ, ສັງຄົມໄດ້ມີການຂະຫຍາຍຕົວສູງຂຶ້ນ ມະນຸດຈຶ່ງໄດ້ເຄື່ອນຍ້າຍອອກຈາກຖ້ຳມາຕັ້ງບ້ານເຮືອນຢູ່ຕາມເຂດທົ່ງພຽງ ແລະ ເຂດທີ່ອຸດົມສົມບູນ ເຊິ່ງເຂົາມີການຈັດຕັ້ງເປັນກຸ່ມ. ດັ່ງນັ້ນ ຖ້ຳທີ່ເຂົາເຈົ້າເຄີຍອາໄສຢູ່ເມື່ອກ່ອນຈຶ່ງກາຍເປັນບ່ອນນັບຖື, ເປັນບ່ອນສັກກະລະບູຊາ ແລະ ທັງເປັນບ່ອນບວງສວງເຖິງດວງວິນຍານຂອງບັນພະບູລຸດເຂົາເຈົ້າ ແລະ ເທບພະເຈົ້າຕ່າງໆ ຕາມຄວາມເຊື່ອຖືຂອງມະນຸດສະໄໝປະຖົມບູຮານ.

ຖ້ຳຕິ່ງໃນສະໄໝປະຫວັດສາດຂອງລາວ ກ່ອນຍຸກພຸດທະສາສະໜາ ຄິດວ່າເບື້ອງຕົ້ນເປັນບ່ອນສັກກະລະບູຊາບວງສວງເຖິງດວງວິນຍານ ຂອງຜີຟ້າ, ຜີແຖນ ເທວະດາຖ້ຳຕິ່ງ ແລະ ອື່ນໆ ເຊິ່ງໄດ້ກ່າວຢູ່ໃນຄຳໂອວາດຂອງມະຫາກະສັດ ເຈົ້າຟ້າງຸ່ມ ສະຕະວັດທີ XIV ຜ່ານ ປະຫວັດສາດມາດົນນານສົມຄວນ. ມາຮອດຕົ້ນສະຕະວັດທີ XVI ແຕ່ງຄິດຕະສັງກາດ 1527 ມີກະສັດອົງໜຶ່ງຊື່ວ່າ **ພະເຈົ້າໂພທິສະລາດ** ມີຄວາມເຫຼື້ອມໃສໃນພະພຸດທະສາດສະໜາ ໄດ້ມີຄຳສັ່ງໃຫ້ປະຊາຊົນຂອງພະອົງ ຍົກເລີກການເຊື່ອຖືຜີ, ຫໍຜີຟ້າຜີແຖນ ແລະ ບ່ອນສັກກະລະບູຊາຕ່າງໆ ນັ້ນຫັນມາເຊື່ອຖືພຸດທະສາສະໜາ. ດັ່ງນັ້ນ, ຖ້ຳຕິ່ງກໍ ແມ່ນບ່ອນໜຶ່ງທີ່ ພະເຈົ້າໂພສາທິລາດ ຫັນເອົາມາເປັນບ່ອນສັກກາລະບູຊາທາງພຸດທະສາສະໜາ ແລະ ໄດ້ອຸປະຖຳຖ້ຳແຕ່ເວລານັ້ນມາ. ທຸກໆປີໃນໂອກາດປີໃໝ່ລາວ ກະສັດລາວກໍໄດ້ໄປຍັງຖ້ຳ ພ້ອມດ້ວຍປະຊາຊົນຊາວຫຼວງພະບາງ ທີ່ນັບຖືພຸດທະສາສະໜາ, ລາຊະວົງໄດ້ແຕ່ງຕັ້ງຊ່າງຫັດຖະກຳຄວັດພະພຸດທະຮູບເພື່ອຖວາຍໄວ້ຖ້ຳ ໃຫ້ປະຊາຊົນໄດ້ສັກກາລະບູຊາ. ເຊິ່ງວ່າພະພຸດທະຮູບສ່ວນຫຼາຍແມ່ນເຮັດດ້ວຍ ໄມ້ເຄືອບນ້ຳຢາສີແດງ ຫຼື ດຳ ແລະພອກດ້ວຍຄຳ.[8]

ຫຼັກຖານທີ່ແທ້ຈິງ, ໄດ້ປະກົດໃຫ້ເຮົາເຫັນມີພະພຸດທະຮູບຫຼາຍກວ່າ 3,000 ກວ່າອົງທີ່ສ້າງຂຶ້ນໃນສັດຕະວັດທີ XVIII ແລະ XIX ແຫ່ງຄິດຕະສັງກາດ, ສ່ວນພະພຸດທະຮູບທີ່ສ້າງຂຶ້ນໃນສັດຕະວັດທີ XVII ແລະ XX ນັ້ນມີຈຳນວນໜ້ອຍ ພະພຸດທະຮູບສ່ວນຫຼາຍແມ່ນເຮັດດ້ວຍໄມ້, ຂີ້ຄັ່ງ, ສ່ວນທອງ ແລະ ຫີນ ແມ່ນມີຈຳນວນໜ້ອຍ. ໃນນັ້ນ ພະພຸດທະຮູບທີ່ມີສິລະປະສວຍງາມ ແລະ ປານິດນັ້ນແມ່ນພະພຸດທະຮູບທີ່ສ້າງຂຶ້ນ ໃນຕົ້ນສະຕະວັດທີ XVIII ແລະ XIX. ນອກຈາກນີ້, ຍັງພົບພະພຸດທະຮູບທີ່ເຮັດດ້ວຍ ຄຳບຸ, ເງິນບຸ, ແຕ່ໜ້າເສຍດາຍໄດ້ມີ ຄົນບໍ່ດີໄດ້ແກະລອກເອົາໝົດແລ້ວປະໄວ້ແຕ່ດິນເຜົາ ແລະ ແກນກາງຂອງພະພຸດທະຮູບ.[9]

ດັ່ງນັ້ນ, ໃນປະຈຸບັນ ຖ້ຳຕິ່ງບໍ່ພຽງແຕ່ມີຄວາມໝາຍທາງດ້ານປະຫວັດສາດເປັນເວລາອັນຍາວນານເທົ່ານັ້ນ ແຕ່ຍັງເປັນບ່ອນສະສົມມໍລະດົກທາງດ້ານວັດທະນະທຳ ຂອງຊາດລາວ ແລະ ຍັງເປັນບ່ອນສຶກສາຄົ້ນຄວ້າຂອງຄົນລຸ້ນຫຼັງ.

❖ **ຖ້ຳລຸ່ມ:** ປາກຖ້ຳລຸ່ມເດ່ອອກຈົນເຫັນໄດ້ຈາກແມ່ນ້ຳຂອງ, ມີເສັ້ນທາງຈາກຖ້ຳລຸ່ມໄປສູ່ຖ້ຳເທິງ ຊຶ່ງມີຄວາມສູງປະມານ 60 ແມັດ ຈາກແມ່ນ້ຳຂອງ.

ຢູ່ຖ້ຳລຸ່ມນີ້ມີພະພຸດທະຮູບຄວັດຢູ່ປະມານ 2,500 ອົງ ຈຸດໂຮມຜູ້ໄປຢ້ຽມຖ້ຳ ແມ່ນແທ່ນທີ່ຢູ່ໃກ້ໆທາງເຂົ້າອັນ ເປັນບ່ອນວາງດອກໄມ້, ທູບທຽນ ເພື່ອສັກກາລະບູຊາ ມີຮູບຄວັດພະລີສີອົງໜຶ່ງພາຍຖົງຢາ ຫຼື ສະໝຸນໄພ ນັ່ງຢູ່ຖ້ຳເທິງຖ້ານທາງເຂົ້າ ແລະ ມີຮູບເຈດີໃຫຍ່ຢູ່ເທິງຖ້ານສູງສຸດ.

❖ **ຖ້ຳເທິງ:** ຖ້ຳຕິ່ງເທິງຫາທ່າທຽບບັກ ມີຂັ້ນໄດທັງໝົດ 278 ຂັ້ນ, ເຊິ່ງມີລວງກວ້າງ 17 ແມັດ ແລະ ເລິກ 50 ແມັດ, ຢູ່ຖ້ຳເທິງນີ້ ກໍມີແທ່ນປະດິດສະຖານພະພຸດທະຮູບຢູ່ເຊັ່ນດຽວກັນ. ພາຍໃນຖ້ຳຍັງມີຮູບພາບຂອງຖ້ຳໃນສະໄໝກ່ອນ ທີ່ຖືກແຕ້ມໂດຍ ຝຣັ່ງຊື່ ກາກນີເອ, ຖືກແຕ້ມຂຶ້ນໃນລະຫວ່າງປີ 1865-1867. ພາຍນອກຖ້ຳ ຍັງມີທາດນ້ອຍອົງໜຶ່ງ ເຊິ່ງຕາມການເລົ່າຂານວ່າ ທາດດັ່ງກ່າວ, ເປັນທາດດູກຂອງປູ່ເຍີຍ່າເຍີ. ເຊິ່ງໃນທຸກໆປີ ໃນເມື່ອກ່ອນເຈົ້າຊີວິດໄດ້ຂີ່ເຮືອຂຶ້ນມາຫົດສົງນ້ຳພະຢູ່ຖ້ຳ ໃນຊ່ວງຂຶ້ນປີໃໝ່. ສ່ວນສີໜ້າ ແລະ ປະຕູຖ້ຳນັ້ນແມ່ນມີການຄວັດດອກດວງໃສ່ຢ່າງສວຍງາມ ຕາມສິລະປະແບບລາວໆ.[10]

---

[8] ຄູ່ມືຝຶກອົບຮົມສຳລັບພະນັກງານນຳທ່ຽວຂັ້ນແຂວງ2004 ,

[9] ປຶ້ມເຊີນມາແວ່ຊົມຫຼວງພະບາງເມືອງມໍລະດົກໂລກ

[10] ສຳພາດ ນນ້ອຍ.,24 ມິຖຸນາ 2016

## 5. ປະຫວັດຜາແອ່ນ.

ຕາມນິທານເລົ່າສືບກັນມາ[11] "ພູຜາແອ່ນ" ກໍແມ່ນແຫຼ່ງທ່ອງທ່ຽວແຫ່ງໜຶ່ງ ທີ່ຂຶ້ນຊື່ຂອງເມືອງປາກອູ ເຊິ່ງຕັ້ງຢູ່ທາງທິດຕາເວັນອອກ ກົງກັນຂ້າມກັບບ້ານປາກອູ ໃນເມື່ອກ່ອນແມ່ນມີຊື່ວ່າ: ຜາແບ່ນ (ແບ່ນປ້ອມ ຫຼື ເບຍເປົ້າ) ໃນລະຫວ່າງການເດີນທາງກ່ອນທີ່ຈະໄປຮອດຜາແອ່ນ ເຮົາຈະໄດ້ພົບກັບແຫຼ່ງທ່ອງທ່ຽວທາງດ້ານປະຫວັດສາດ ທີ່ຕິດພັນກັບທຳມະຊາດຫຼາຍຢ່າງ ເປັນຕົ້ນແມ່ນ ຕາດຫູໝູ.

ບາງຕຳນານໄດ້ກ່າວວ່າ ປະຫວັດຂຸນລູນາງອົ້ວໄດ້ແຕ່ງງານຢູ່ຖ້ຳສະແນນ ຫຼັງຈາກທັງສອງໄດ້ແຕ່ງງານກັນແລ້ວ ນາງອົ້ວຜູ້ເປັນເມຍກໍໄດ້ເສຍຊີວິດ. ຊາວບ້ານຍາດຕິພີ່ນ້ອງກໍ່ໄດ້ໄປເອົາໂລງ ຢູ່ຖ້ຳເຫຼັກ ມາໃສ່ສົບນາງອົ້ວ ເພື່ອທີ່ຈະເອົາສົບນາງອົ້ວໄປໄວ້ຢູ່ຫຼັງຜາແອ່ນ ໃນໄລຍະຂອງການເດີນທາງ ທີ່ໄດ້ຫາມສົບນາງອົ້ວໄປນັ້ນກໍ່ໄດ້ໄປພັກເຊົາຢູ່ ຫ້ວຍປີງ ເມື່ອພັກເຊົາຫາຍເມື່ອຍແລ້ວ ກໍ່ໄດ້ອອກເດີນທາງຕໍ່ຂ້າມໄປ ບ້ານຄົກຂ້າມ ຫຼັງຈາກ ຂ້າມຄົກຂ້າມໄປແລ້ວ ກໍໄປພັກຢູ່ຄົກນາງເຊົາ ຂຸນລູຜູ້ເປັນຜົວດ້ວຍຄວາມຮັກ ແລະ ຄິດຮອດເມຍກໍໄດ້ໄປນັ່ງໄຫ້ຢູ່ ເທິງຜານ້ຳຕາ ຫຼັງຈາກນັ້ນ, ກໍ່ໄດ້ມາລ້າງໜ້າລ້າງຕາຢູ່ຫວ້ຍຂີ້ມູກ ແລ້ວຈຶ່ງໄດ້ນຳເອົາໂລງນາງອົ້ວໄປໄວ້ຫຼັງຜາແອ່ນ. ຫຼາຍມື້ຫຼາຍວັນຕໍ່ມາ ສົບນາງອົ້ວເລີ່ມເໜົ່າ ແລະ ຈະມີຜີເປົ້າໄປກິນນ້ຳເໜົ່າຈາກສົບນາງອົ້ວ ນັ້ນກໍ່ເປັນທີ່ມາຂອງຊື່ບ້ານ, ຫ້ວຍ ແລະ ຜາດັ່ງກ່າວ, ຈົນເທົ່າທຸກວັນນີ້.

ຖັດຈາກນັ້ນ, ກໍຈະມີຖ້ຳຕິ່ງ ເຊິ່ງເປັນແຫຼ່ງທ່ອງທ່ຽວແຫ່ງໜຶ່ງ ທີ່ຂຶ້ນຊື່ຂອງເມືອງປາກອູ. ຖ້ຳຕິ່ງ ເຮົາຈະສັງເກດເຫັນວ່າ ຄືກັບລັກສະນະໂຕລີງກົ້ມກິນນ້ຳຕໍ່ມາເຮົາກໍຈະພົບເຫັນແກ້ງອອຍ ເວົ້າເລື່ອງແກ້ງອອຍແລ້ວ ຈະກ່າວເຖິງສິ່ງມະຫັດສະຈັນ, ຄວາມຮ້າຍກາດຂອງສັດປະຫຼາດ ຫຼື ໃນເມື່ອກ່ອນຖ້ຳໂຕທີ່ຢູ່ໃກ້ແກງອອຍຈະປິ່ນໜ້າ ໄປຫາເບື້ອງເທິງທາງທິດເໜືອ ເຮັດໃຫ້ການເດີນເຮືອບໍ່ສາມາດຜ່ານໄປໄດ້. ມີການເລົ່າຂານກັນວ່າ ໃນເມື່ອກ່ອນມີເຮືອລຳໜຶ່ງ ມາແຕ່ທາງທິດເໜືອ ໄດ້ເກີດອຸປະຕິເຫດຂວ້ຳ (ຫຼົ້ມ, ຈົມ) ຢູ່ແກ້ງອອຍ ໄຫຼໄປຖືກຕາຂອງເງິນ ກໍ່ເຮັດໃຫ້ເກີດສິ່ງມະຫັດສະຈັນຂຶ້ນ ເຮັດໃຫ້ຖ້ຳດັ່ງກ່າວ ໄດ້ຫັນທິດ ປິ່ນໜ້າໄປທາງເບື້ອງລຸ່ມ ຫຼັງຈາກນັ້ນ, ການເດີນເຮືອກໍ່ສະດວກສະບາຍ ແລະ ສາມາດຫຼີກຜ່ານໄປໄດ້.

ຖັດຈາກແກ້ງອອຍມາ ກໍຈະມີ ຜາປ່ອງ ຄວາມເປັນມາຂອງຜາປ່ອງຈະເວົ້າ ກ່ຽວກັບ ເລື່ອງອ້າຍເຈັດຫວດ, ອ້າຍເຈັດໄຫ. ໄດ້ໄປທຳມາຫາກິນເຮັດນາ ຢູ່ບ້ານຄົກ ແລະ ມີຄວາຍເຂົ້າມາກິນເຂົ້າກ້າ ອ້າຍເຈັດຫວດ, ອ້າຍເຈັດໄຫ ໃຈຮ້າຍຈຶ່ງໄດ້ເອົາຫຼາວຊັດມາແຕ່ເມືອງຫຼວງ (ເມືອງຫຼວງພະບາງ) ຕັ້ງໃຈວ່າຈະຊັດມາໃສ່ຄວາຍໂຕດັ່ງກ່າວ ແຕ່ກັບໄປຖືກ ຜາ, ເຮົາຈະສັງເກດເຫັນ ຜາ ດັ່ງກ່າວ ເປັນຮູປະຊາຊົນໃນເຂດນັ້ນຈຶ່ງຮ້ອງວ່າ ຖ້ຳຜາປ່ອງ, ຖ້ຳຜາປ່ອງ ເປັນຖ້ຳທີ່ສູງ ເຊິ່ງສາມາດຂີ່ຊ້າງລອດໄດ້ຢ່າງສະດວກສະບາຍ.

ຖັດມາກໍ່ຈະແມ່ນຜາຮຸ້ງ ຄວາມເປັນມາ ຂອງຜາຮຸ້ງໃນເມື່ອກ່ອນຮຸ້ງຈະກິນມະນຸດຜູ້ຍິງເປັນອາຫານ ເມື່ອກິນໄດ້ຫຼາຍມື້ຕໍ່ຫຼາຍວັນ ຜູ້ຍິງໃນແຖບນັ້ນກໍ່ເລີ່ມໝົດໄປ ສຸດທ້າຍຍັງເຫຼືອແຕ່ ນາງ ຄຳກອງ ທີ່ໄປລີ້ຢູ່ໃນກອງບໍ່ຍອມອອກມາ ມື້ໜຶ່ງສັງສິນໄຊໄດ້ຜ່ານມາທາງໝູ່ບ້ານນັ້ນພໍດີກໍ່ ເລີຍຄິດແປກໃຈເປັນຫຍັງໝູ່ບ້ານແຫ່ງນີ້ບໍ່ມີຜູ້ຍິງເລີຍ ຊາວບ້ານກໍ່ໄດ້ເລົ່າເຖິງເຫດການທີ່ເກີດໃຫ້ສິນໄຊຟັງວ່າ ໃນແຕ່ລະວັນຈະມີຮຸ້ງໂຕໜຶ່ງອອກມາຈັບຜູ້ຍິງ ໄປເປັນອາຫານ ຈົນຜູ້ຍິງໃນໝູ່ບ້ານນີ້ໝົດ ຍັງເຫຼືອແຕ່ຄົນດຽວໄປລີ້ຢູ່ໃນກອງ ພໍເມື່ອໄດ້ຮູ້ຂ່າວແນວນັ້ນ ສິນໄຊກໍ່ໄດ້ໄປຊ່ວຍນາງຄຳກອງ ອອກມາພໍຮຸ່ງເຊົ້າມາ ຮຸ້ງໂຕດັ່ງກ່າວກໍ່ອອກມາຫວັງຈະຈັບ ນາງຄຳກອງ ໄປເປັນຫາອາຫານ ສິນໄຊກໍ່ໄດ້ໃຊ້ທະນູຍິງຖືກປີກເບື້ອງຂວາ ໃນທີ່ສຸດຮຸ້ງໂຕນັ້ນກໍ່ໄດ້ຕາຍໄປ.

[11] ສຳພາດ ລຸງຊຽງຈັນເພັງ1 ,ທອງສີ ,ທິດອ່ອນສີ , ເມສາ 2016

ໃນແຕ່ລະປີ ຮອດມື້ແຮມ 8 ຄ່ຳ, ເດືອນ 5 ປະຊາຊົນ ບ້ານ ລາດຫານ ແລະ ບ້ານ ຄົກຂ້າມ ຈະຈັດຫາເຂົ້າຂອງເສັ້ນໄຫວ້ ໄປໄຫວ້ພະກະເຈ້ ແລະ ໄປປັກທຸງຢູ່ແກ້ງອອຍ ເພື່ອເປັນການສັກກະລະບູຊາເຈົ້າຖິ່ນເຈົ້າຖານ.

ຖັດຈາກຜາຮຸ້ງມາ ກໍຈະແມ່ນ ຜາແອ່ນ ເຊິ່ງໄດ້ປະກົດຮ່ອງຮອຍໃຫ້ເຫັນຄ້າຍຄືກັບລັກສະນະພາບວາດ ຮູບປາບຶກ ເອົາຫົວປັກລົງນ້ຳ ແລະ ເອົາຫາງຊີ້ຂຶ້ນຟ້າ ແລະ ຈະມີແຜ່ນກະດານອັນໜຶ່ງ ເຊິ່ງມີວົງມົນສີແດງສອງອັນຮຽງກັນ ຄ້າຍຄືກັບແວ່ນຕາ ຢູ່ຜາແຫ່ງນີ້ ປະຊາຊົນໃນເຂດ ດັ່ງກ່າວ, ສັນນິຖານວ່າ: ໜ້າຈະເປັນພາບທີ່ວາດດ້ວຍລາຍມືຂອງມະນຸດໃນສະໄໝປະຖົມບູຮານ ແຕ່ກໍ່ບໍ່ມີໃຜສາມາດບອກໄດ້ວ່າ ພາບວາດ ດັ່ງກ່າວ, ເກີດຂຶ້ນດ້ວຍທຳມະຊາດ ຫຼື ດ້ວຍຝີມືຂອງມະນຸດສະໄໝປະຖົມບູຮານ ເພາະເປັນສິ່ງທີ່ໜ້າອັດສະຈັນທີ່ເກີດຂຶ້ນ. ຜາແອ່ນ ເປັນຜາທີ່ສູງຊັນ, ເຊິ່ງຄົນທຳມະດາບໍ່ມີໃຜສາມາດຂຶ້ນໄປໄດ້. ໃນສະໄໝບູຮານຜາແອ່ນ ເປັນບ່ອນແບ່ນປ້ອມ (ເບຍເປົ້າ) ພະນັນກັນຂຶ້ນນັ່ງເມືອງ ລະຫວ່າງສອງອ້າຍນ້ອງ ໃນເມື່ອກ່ອນຊົນເຜົ່າລາວລຸ່ມ ແລະ ຊົນເຜົ່າຂະໝຸ ເປັນອ້າຍນ້ອງກັນ ໄດ້ເກີດຄວາມຂັດແຍ່ງກັນໃນການຂຶ້ນເປັນພະຍາເຈົ້າເມືອງ ຈຶ່ງໄດ້ຕົກລົງແຂ່ງຂັນກັນແບ່ນປ້ອມ (ເບຍເປົ້າ) ຖ້າຜູ້ໃດຍິງຖືກເປົ້າ ຜູ້ນັ້ນຈະໄດ້ເປັນພະຍາເຈົ້າເມືອງ ດັ່ງນັ້ນ, ທັງສອງຈຶ່ງໄດ້ຕົກລົງເອົາທະນູ ແລະ ລູກທະນູຄົນລະອັນ ຫຼັງຈາກກະກຽມເຄື່ອງມືຮຽບຮ້ອຍແລ້ວ ຜູ້ເປັນນ້ອງຈຶ່ງສະເໜີໃຫ້ ພີ່ອ້າຍ (ອ້າຍ) ຍິງກ່ອນ, ຜູ້ເປັນອ້າຍກໍ່ບໍ່ນິ່ງນອນໃຈຈັບທະນູນຂຶ້ນມາ ຢຶດທະນູແນໃສ່ເປົ້າແລ້ວຍິງໄປຖືກເປົ້າພໍດີ ແຕ່ລູກທະນູບໍ່ຕິດຄາຢູ່ເປົ້າຜູ້ເປັນນ້ອງຈຶ່ງຄິດວ່າຜູ້ເປັນ ອ້າຍຍິງບໍ່ຖືກ ແລະ ຜູ້ເປັນອ້າຍກໍ່ຄິດວ່າໂຕເອງຍິງບໍ່ຖືກ ຫຼັງຈາກທີ່ເຫັນຜູ້ເປັນອ້າຍຍິງແລ້ວລູກທະນູບໍ່ຕິດຄາເປົ້າ ຜູ້ເປັນນ້ອງຈຶ່ງຄິດຫາເລກົນ ເພື່ອຈະເອົາຊະນະຜູ້ເປັນອ້າຍ ຈຶ່ງໄດ້ຄິດກົນອຸບາຍ ລັກເອົາຂີ້ສູດມາຕິດໃສ່ປາຍລູກທະນູ ໂດຍທີ່ບໍ່ໃຫ້ຜູ້ ເປັນອ້າຍເຫັນ. ຫຼັງຈາກນັ້ນ ຜູ້ເປັນອ້າຍກໍ່ບອກໃຫ້ ຜູ້ເປັນນ້ອງຍິງ, ຍິງໄປຖືກເປົ້າຕິດປັບຍ້ອນມີຂີ້ສູດໜຽວລູກທະນູຈຶ່ງ ຕິດກັບເປົ້າ ສະນັ້ນການພະນັນຄັ້ງນີ້ ຖືວ່າຜູ້ເປັນນ້ອງເປັນຝ່າຍຊະນະ ໄດ້ເປັນພະຍາເຈົ້າເມືອງ. ຕໍ່ມາກໍ່ເປັນການພະນັນຄັ້ງທີ 2 ກ່ອນທີ່ຈະຂຶ້ນເປັນພະຍາເຈົ້າເມືອງ ຕ້ອງມີເຄື່ອງນຸ່ງຂອງຖື, ຜ້າທ່ອນຜ່ອນສະໄບອັນດີອັນງາມ ຫຼັງຈາກນັ້ນກໍ່ໄດ້ ຈັດຫີບເຄື່ອງ 2 ຫີບມາປະໄວ້ກາງດອນທີ່ຢູ່ໃກ້ກັບ ຜາແອ່ນ ຫີບໜຶ່ງເອົາເຄື່ອງເກົ່າໄວ້ເທິງ, ເອົາເຄື່ອງເກົ່າໄວ້ລຸ່ມ ແລະ ອີກຫີບໜຶ່ງເອົາເຄື່ອງໃໝ່ໄວ້ເທິງ, ເອົາເຄື່ອງເກົ້າໄວ້ລຸ່ມ ເພື່ອໃຫ້ທັງສອງໄດ້ເລືອກ ຈາກນັ້ນກໍ່ໃຫ້ຜູ້ເປັນອ້າຍເລືອກກ່ອນ ຜູ້ເປັນອ້າຍກໍ່ໄດ້ເລືອກເອົາ ຫີບທີ່ມີເຄື່ອງໃໝ່ຢູ່ເທິງ, ເຄື່ອງເກົ່າຢູ່ລຸ່ມ ປະກົດວ່າຫີບທີ່ຜູ້ເປັນອ້າຍເລືອກນັ້ນເປັນຫີບທີ່ມີ ເຄື່ອງໃໝ່ພຽງແຕ່ສອງຜືນເທົ່ານັ້ນສ່ວນຢູ່ທາງລຸ່ມແມ່ນເຄື່ອງເກົ່າໝົດ ສ່ວນຜູ້ເປັນນ້ອງແມ່ນໄດ້ເອົາຫີບທີ່ມີເຄື່ອງເກົ່າຢູ່ ເທິງ, ເຄື່ອງໃໝ່ຢູ່ລຸ່ມ ສະນັ້ນນ້ອງຊາຍໄດ້ເປັນພະຍາເຈົ້າເມືອງ ແລະ ໄດ້ນຸ່ງເຄື່ອງຢູ່ໃນຫີບ ດັ່ງກ່າວ, ຈຶ່ງໄດ້ຮ້ອງຊື່ດອນ ດັ່ງກ່າວວ່າ: ດອນທ້າວ ຈົນເຖິງທຸກວັນນີ້. ອີກສາເຫດໜຶ່ງທີ່ໄດ້ປ່ຽນຊື່ຈາກຜາແບ່ນ ມາເປັນຜາແອ່ນ ຍ້ອນວ່າຜາ ດັ່ງກ່າວ, ມີນົກແອ່ນຫຼາຍຈຶ່ງຮ້ອງຊື່ວ່າ: ຜາແອ່ນຈົນເຖິງທຸກວັນນີ້.

## 6. ບ້ານປາກອູ.

ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່() ໄດ້ເລົ່າຂານກັນມາວ່າ ຖິ່ນກຳເນີດຂອງຜູ້ຄົນທີ່ມາອາໄສຢູ່ສະຖານທີ່ແຫ່ງນີ້ ແມ່ນມາຈາກອານາຈັກ ໜອງແສ (ປະເທດຈີນ) ໄດ້ພາກັນຍົກຍ້າຍລົງມາຢູ່ລຽບຕາມລ້ອງແມ່ນ້ຳຂອງ ຢູ່ແບບກະແຈກກະຈາຍມາເປັນເວລາ 800 ກວ່າປີ. ຈົນມາຮອດສະຖານທີ່ແຫ່ງນີ້ ເຫັນວ່າເປັນເຂດທີ່ມີຄວາມອຸດົມສົມບູນຂອງທຳມະຊາດ ແລະ ບ່ອນທຳມາຫາກິນສະດວກ ເຊິ່ງມີແມ່ນ້ຳສອງສາຍໄຫຼມາປ່ອງໃສກັນ ຈຶ່ງໄດ້ພາກັນສ້າງບ້ານແປງເມືອງແຫ່ງນີ້ ມີຊື່ວ່າ "ເມືອງຊວາ ຫຼື ເມືອງຈຳປາ" ມີບາງເອກະສານໄດ້ບອກວ່າຊົນເຜົ່າດັ້ງເດີມທີ່ດຳລົງຊີວິດຢູ່ແຕ່ສັດຕະວັດທີ XIII ແມ່ນຊົນເຜົ່າກືມມຸ ເປັນຊົນເຜົ່າດັ່ງເດີມທີອາໄສຢູ່ກ່ອນ.

ໃນປັດຈຸບັນ ບ້ານປາກອູ ເປັນບ້ານໜຶ່ງ ທີ່ມີທ່າແຮງດ້ານການທ່ອງທ່ຽວສູງ ຂອງເມືອງປາກອູ ຫ່າງຈາກຕົວເມືອງຫຼວງພະບາງຂຶ້ນໄປຕາມເສັ້ນທາງເລກທີ 13 ເໜືອປະມານ 25 ກິໂລແມັດ. ໂດຍທິດເໜືອຕິດກັບ ແມ່ນ້ຳອູ, ທິດໃຕ້ຕິດກັບ ບ້ານຊ່າງໄຫ, ທິດຕາເວັນອອກຕິດກັບ ພື້ນທີ່ກະຊິກຳ, ທິດຕາເວັນຕົກຕິດກັບ ແມ່ນ້ຳຂອງ, ປະຊາຊົນທີ່ອາໄສຢູ່ສ່ວນໃຫຍ່ແມ່ນຍຶດຖືອາຊີບປູກຝັງລ້ຽງສັດ ແລະ ທຳມາຫາກິນຕາມລ້ອງ ແມ່ນ້ຳຂອງ ແລະ ແມ່ນ້ຳອູ.ມີບ້ານເຮືອນທີ່ສ້າງຂຶ້ນໃນໄລຍະປີ 1930 ແລະ ມີປະຫວັດຄວາມເປັນມາຍາວນານ ທີ່ຕິດພັນກັບພິທີກຳທາງສາດສະໜາທີ່ສຳຄັນຕ່າງໆເຊັ່ນ: ໃນປີໃໝ່ລາວຂອງທຸກໆປີ ນາງສັງຂານໄດ້ມາຫົດສົງ ນ້ຳພະ ແລະ ມາຕົບພະທາດຊາຍ, ເຊິ່ງໃນເມື່ອກ່ອນແມ່ນພະເຈົ້າມະຫາຊີວິດກໍ່ໄດ້ມາຫົດສົງນ້ຳພະ ແລະ ຫຼິ້ນພະທາດຊາຍ ຢູ່ສະຖານທີ່ແຫ່ງນີ້ເຊັ່ນດຽວກັນ. ນອກຈາກນັ້ນ, ບ້ານປາກອູນີ້ຍັງມີແຫຼ່ງທ່ອງທ່ຽວທີ່ມີຊື່ສຽງທີ່ໂດ່ງດັ່ງ ໂດຍສະເພາະແມ່ນ ຖ້ຳຕິ່ງ ແລະ ຜາແອ່ນ ທີ່ນັກທ່ອງທ່ຽວເດີນທາງມາທ່ຽວຊົມເປັນຈຳນວນຫຼວງຫຼາຍໃນແຕ່ລະປີ.

## 7. ວັດປາກອູ.

ວັດປາກອູ ເປັນວັດທີ່ເກົ່າແກ່ ແລະ ມີຄວາມສຳຄັນຂອງຊາວເມືອງປາກອູ, ເປັນບ່ອນສັກກະລະບຸຊາຂອງຊາວເມືອງປາກອູ, ອີງຕາມການເລົ່າຂານກັນມາ ວັດແຫ່ງນີ້ສ້າງຂຶ້ນໂດຍ ພະເຈົ້າໄຊເສດຖາທິລາດ ສ້າງຂຶ້ນເມື່ອປີ ຄສ 1547.

ວັດນີ້ມີຄວາມເປັນມາທີຕິດພັນກັບ ບ້ານປາກອູ - ຖ້ຳຕິ່ງ, ຈຸດພິເສດທີ່ໂດດເດັ່ນ ແມ່ນອາຮາມ (ສິມ) ຂະໜາດນ້ອຍ ແລະ ທາງດ້ານຫຼັງມີມຸກ, ໃນສະໄໝຂອງພະເຈົ້າມະຫາຊີວິດ ສີສະຫວ່າງວົງ ເພິ່ນໄດ້ມີການກໍ່ສ້າງເພີ່ມເຕີມລະບຽງດ້ານຂ້າງ ເພື່ອຂະຫຍາຍພື້ນທີ່ໃຊ້ສອຍ ແລະ ເປັນບ່ອນທຳພິທີສົ່ງນ້ຳພະຂອງເຈົ້າຊີວິດໃນປາງບຸນປີ ໃໝ່ລາວ ເຊິ່ງຈັດຂຶ້ນຢ່າງເປັນປະຈຳ ຫຼັງຈາກມື້ສັງຂານຂຶ້ນ ປີໃໝ່ລາວ 1 ວັນ ຂອງທຸກໆປີ.[12]

ພາຍໃນອາຮາມມີການປະດິດສະຖານພະພຸດທະຮູບ ປາງມານວິໄຊ (ຂັດສະມາທິເພດ) ມີຮູບຊົງຄ້າຍຄືກັບພະພຸດທະຮູບສິລະປະລ້ານນາ ສັນນິຖານວ່າອາດຈະສ້າງຂຶ້ນໃນກາງສັດຕະວັດທີ່ XXI. ສ່ວນດ້ານນອກຂອງອາຮາມ ແມ່ນປະກອບດ້ວຍຮູບແຕ້ມຈິດຕະກຳຝາຜະໜັງ ເປັນນິທານພື້ນເມືອງຂອງລາວ ຕາມແບບສະຖາປັດຕະຍະກຳຂອງລາວ.

[12] ສຳພາດທິດອ່ອນສີ1 ,ທິດເພີຍ , ເມສາ 2016

## 8. ບ້ານຊ່າງໄຫ.

ຕາມການບອກເລົ່າຂອງ ຜູ້ເຖົ້າ, ຜູ້ແກ່, ແນວໂຮມ ແລະ ອຳນາດການປົກຄອງ ບ້ານຊ່າງໄຫ[13] ໄດ້ກ່າວໄວ້ວ່າ: ດົນນານມາແລ້ວ ໃນຍຸກສະໄໝບູຮານ ພື້ນທີ່ແຫ່ງນີ້ໄດ້ມີປະຊາຊົນຜູ້ອອກແຮງງານ ມາອາໄສຢູ່ແບບກະແຈກກະຈາຍ ເປັນກຸ່ມເປັນກ້ອນ. ໄດ້ດຳລົງຊີວິດ ໂດຍອາໄສທຳມະຊາດເປັນຫຼັກ ແລະ ໃຊ້ເປັນບ່ອນທຳມາຫາກິນ ເພື່ອລ້ຽງຊີບໃນເຂດບໍລິເວນສະຖານທີ່ດັ່ງກ່າວ, ກໍຄືບ້ານຊ່າງໄຫໃນປະຈຸບັນ. ເນື່ອງຈາກວ່າ ສະຖານທີ່ແຫ່ງນີ້ ແມ່ນເປັນດິນແດນອັນຮາບພຽງ, ມີຄວາມອຸດົມສົມບູນ ແລະ ເໝາະແກ່ການທຳການຜະລິດປູກຝັງ ແລະ ລ້ຽງສັດ, ອີກຢ່າງໜຶ່ງ ບ້ານນີ້ກໍມີເຂດແດນຕິດກັບແມ່ນ້ຳຂອງ ທີ່ມີຄວາມອຸດົມສົມບູນທາງດ້ານຊັບໃນດິນ ສິນໃນນ້ຳ. ດັ່ງນັ້ນ ກໍເລີຍເຮັດໃຫ້ປະຊາຊົນທີ່ມາຈາກຫຼາຍຂົງເຂດ ມາໂຮມກັນຕັ້ງຖິ່ນຖານ, ເຮືອນຊານບ້ານຊ່ອງ ຢູ່ໃນເຂດບໍລິເວນບ້ານຊ່າງໄຫແຫ່ງນີ້. ດັ່ງນັ້ນ, ຈຶ່ງມີຜູ້ຄົນພາກັນມາຕັ້ງຖິ່ນຖານອາໄສຢູ່ເຂດນີ້ສືບທອດມາຫຼາຍເຊັ່ນຄົນແລ້ວ ແລະ ນັບມື້ເພີ່ມຂຶ້ນທາງດ້ານປະຊາກອນ.

ບ້ານຊ່າງໄຫສ້າງຕັ້ງຂຶ້ນໃນປີ ຄ.ສ 1363 ເຊິ່ງເມື່ອກ່ອນແມ່ນປະຊາຊົນໄດ້ມີການຍົກຍ້າຍມາຈາກ ບ້ານ ໜອງແສ, ເຊິ່ງໄດ້ພາກັນມາເຮັດໄຮ່, ຕາມການສັນນິຖານວ່າ ໃນໄລຍະຕົ້ນແມ່ນ **ຫໍ້** ທີ່ຍ້າຍເຂົ້າມາຕັ້ງຖິ່ນຖານໃນເຂດນີ້ເປັນຜູ້ລິເລີ້ມການປັ້ນໝໍ້ຫຼໍ່ໄຫກ່ອນ ເພື່ອໃຊ້ເປັນບ່ອນໃສ່ເກືອ ແລະ ອຸປະກອນຮັບໃຊ້ພາຍໃນຄົວເຮືອນ, ຈົນເວລາຜ່ານໄປຫຼາຍຮ້ອຍປີ ຊາວບ້ານຈຶ່ງມີການຫັນທິດ ຈາກການປັ້ນໝໍ້ຫຼໍ່ໄຫທີ່ຊົມໃຊ້ພາຍໃນບ້ານເພື່ອທຳມາຫາກິນ ກາຍມາເປັນ ການປັ້ນໝໍ້ຫຼໍ່ໄຫໃນຮູບແບບການຂາຍເປັນສິນຄ້າ, ເຊິ່ງຊາວບ້ານໄດ້ໃຫ້ການສັນນິຖານວ່າ: ເມື່ອກ່ອນມີເຕົາເຜົາໄຫແຈກຢາຍຕາມອ້ອມຮອບຂອງບໍລິເວນໝູ່ບ້ານ ປະມານ 400 – 500 ເຕົາ. ຈົນເຮັດໃຫ້ບ້ານຊ່າງໄຫ ມີຊື່ສຽງທາງດ້ານການປັ້ນໝໍ້ຫຼໍ່ໄຫ ແລະ ປະຊາຊົນໃນສະໄໝນັ້ນຈຶ່ງເອີ້ນບ້ານດັ່ງກ່າວວ່າ: ບ້ານຊ່າງໄຫ.

ແຕ່ກ່ອນບ້ານຊ່າງໄຫ ມີພຽງແຕ່ 10 - 15 ຄອບຄົວເທົ່ານັ້ນ, ພາຍຫຼັງມາປະຊາຊົນຫຼາຍຂົງເຂດ, ຫຼາຍກຸ່ມ ກໍ່ໄດ້ຍ້າຍເຂົ້າມາອາໄສຢູ່ຮ່ວມກັນ. ໃນໄລຍະເວລາທີ່ອາໄສຢູ່ໃນບ້ານແຫ່ງນີ້ນັ້ນ ກໍມີປະຊາຊົນຈຳນວນໜຶ່ງ ເກີດມີຄວາມຄິດລິເລີ່ມຕ້ອງການສ້າງສິ່ງໃດໜຶ່ງຂຶ້ນ ເພື່ອຈະນຳມາສ້າງອຸປະກອນເຄື່ອງໃຊ້ຄົວເຮືອນ ສຳລັບແຕ່ງຢູ່ຄົວກິນ, ອຸປະກອນຊອກຢູ່ຫາກິນ ແລະ ໃຫ້ເປັນຜະລິດຕະພັນເພື່ອການຂາຍເປັນສິນຄ້າ. ດັ່ງນັ້ນ ຊາວບ້ານຈຶ່ງພ້ອມພາກັນປຸ້ມລຸມ ປຶກສາຫາລືກັນວ່າ: ຈະພາກັນເຮັດຫຍັງ? ທີ່ຈະນຳມາເຮັດເປັນສິນຄ້າ ແລະ ສ້າງລາຍຮັບໃຫ້ແກ່ຄອບຄົວ, ບັງເອີນມີຊາຍຄົນໜຶ່ງເຫັນວ່າ ດິນບ້ານຊ່າງໄຫນີ້ ເປັນດິນທີ່ມີຄຸນນະພາບດີ, ມີຄວາມໜາແໜ້ນ ເໝາະແກ່ການປັ້ນຫຼໍ່ ຈຶ່ງເກີດມີແນວຄິດໃນການການປັ້ນໝໍ້ຫຼໍ່ໄຫຂຶ້ນ. ນັບແຕ່ນັ້ນມາ ປະຊາຊົນບ້ານຊ່າງໄຫຈຶ່ງພາກັນສ້າງເຕົາໄຫຂຶ້ນ ແລະ ພາກັນຍຶດອາຊີບການປັ້ນໝໍ້, ປັ້ນໄຫເປັນອາຊີບຫຼັກ. ບ້ານດັ່ງກ່າວກໍ່ໄດ້ຄ່ອຍໆມີຊື່ສຽງ, ເປັນທີ່ຮູ້ຈັກ ແລະ ມີຊື່ສຽງໂດ່ງດັງອອກໄປຍັງບັນດາບ້ານຕ່າງໆ ທີ່ຢູ່ໃນບໍລິເວນໃກ້ຄຽງ ແລະ ຮູ້ຈັກກັນໃນນາມຂອງບ້ານນີ້ວ່າ: ບ້ານປັ້ນໝໍ້ຫຼໍ່ໄຫ.

ແຕ່ເປັນທີ່ໜ້າເສຍດາຍ ປະຈຸບັນບ້ານດັ່ງກ່າວແມ່ນບໍ່ມີຊ່າງປັ້ນໝໍ້ແລ້ວ ເນື່ອງຈາກວ່າວິທີການປັ້ນໝໍ້ບໍ່ໄດ້ຮັບການສືບຜ່ານ ແລະ ສືບທອດໃຫ້ສູ່ຄົນຮຸ່ນຫຼັງ ດ້ວຍເຫດຜົນໃດກໍບໍ່ຮູ້, ມີພຽງຮ່ອງຮອຍຂອງເຕົາເຜົາໄຫພາຍໃນບ້ານເທົ່ານັ້ນ ທີ່ຫຼົງເຫຼືອໄວ້ໃຫ້ຢ້ຽມຊົມ. ພິເສດແມ່ນ **ໄຫນ້ຳຍ້ອຍ** ທີ່ເປັນໄຫເອກະລັກສະເພາະທີ່ຜະລິດຂຶ້ນຢູ່ບ້ານຊ່າງໄຫ.

ໃນປັດຈຸບັນ ບ້ານຊ່າງໄຫ ມີເນື້ອທີ່ທັງໝົດ 2,126 ເຮັກຕາ. ເປັນບ້ານໜຶ່ງທີ່ຂຶ້ນກັບເມືອງປາກອູ ຫ່າງຈາກສຳນັກງານເມືອງ ປະມານ 11 ກມ ແລະ ຫ່າງຈາກຕົວເມືອງຫຼວງພະບາງ ປະມານ 22 ກມ, ມີ 127 ຄອບຄົວ, ມີປະຊາກອນທັງໝົດ

[13] ສຳພາດທ່ານ ອຸ່ນເຮືອນ ບຸນທະຈັກ1 , ເມສາ 2016

615 ຄົນ, ເປັນຍິງ 297 ຄົນ. ຊົນເຜົ່າລາວລຸ່ມ 126 ຄອບຄົວ, ຊົນເຜົ່າກຶມມຸ 1 ຄອບຄົວ. (ສະຖິຕິປີ 2016) ໃນນັ້ນ ມີຮ້ານຂາຍເຄື່ອງຫັດຖະກໍາ 85 ຮ້ານ, ຮ້ານຂາຍເຫຼົ້າ, ຜະລິດ ແລະ ຕົ້ມເຫຼົ້າ 40 ແຫ່ງ, ນອກນັ້ນ; ບ້ານຊ່າງໄຫ ຍັງມີເນື້ອທີ່ດິນປ່າສະຫງວນ 12,50 ເຮັກຕາ, ປ່າຊົມໃຊ້ 29,57 ເຮັກຕາ, ປ່າສັກ 62,6 ເຮັກຕາ, ສວນຢາງພາລາ 16 ເຮັກຕາ. ປະຊາຊົນບ້ານຊ່າງໄຫ ມີອາຊີບຕົ້ມເຫຼົ້າ ແລະ ຕໍ່າແຜ່ນແພ, ຊຶ່ງເປັນກິດຈະກໍາທີ່ໜ້າສົນໃຈ ສໍາລັບນັກທ່ອງທ່ຽວ. ພາຍໃນບ້ານ ຍັງມີຮ້ານຄ້າຂາຍເຄື່ອງທີ່ລະນຶກ ຕ່າງໆນໍາອີກ. ການດໍາລົງຊີວິດຂອງປະຊາຊົນທ້ອງຖິ່ນ ແມ່ນຖືເອົາ ການປູກຝັງ, ຫາປາ, ຕໍ່າຫູກ ແລະ ການຕົ້ມເຫຼົ້າ ເປັນອາຊີບຕົ້ນຕໍ.

ບ້ານຊ່າງໄຫ ຫ່າງຈາກ ບ້ານປາກອູ ພຽງ 5 ກິໂລແມັດ ເປັນເສັ້ນທາງຜ່ານໄປຫາຖໍ້າຕິ່ງ ເຊິ່ງນັກທ່ອງທ່ຽວນິຍົມແວະຊົມບ້ານດັ່ງກ່າວ, ກ່ອນທີ່ຈະໄປ ຖໍ້າຕິ່ງ ເນື່ອງຈາກວ່າ ບ້ານຊ່າງໄຫຍັງຄົງຮັກສາວິຖີຊີວິດຂອງບ້ານແບບດັ້ງເດີມ, ທັງເປັນບ້ານໜຶ່ງ ທີ່ຍັງຄົງຄວາມເປັນເອກະລັກ ແລະ ມີຄວາມຊໍານິຊໍານານ ໃນການຕົ້ມເຫຼົ້າຂາວ. ນັກທ່ອງທ່ຽວສາມາດຍ່າງທ່ຽວຊົມບ້ານ ເພື່ອສຶກສາວິທີການຕົ້ມເຫຼົ້າ ທີ່ຫາຊົມເບິ່ງຍາກ, ເຊິ່ງສາມາດສ້າງຄວາມປະທັບໃຈໃຫ້ແກ່ນັກທ່ອງທ່ຽວ. ພາຍໃນບ້ານຍັງມີຮ້ານຂາຍເຄື່ອງທີ່ລະນຶກຕ່າງໆ ໃຫ້ແກ່ນັກທ່ອງທ່ຽວ ແລະ ຜູ້ທີ່ເຂົ້າມາທ່ຽວຊົມເລືອກຊື້ເປັນຂອງຝາກຂອງຕ້ອນກັບໄປ.

## ໙. ພູທ້າວ, ພູນາງ.



ຢູ່ເທິງບ້ານຊຽງແມນຝັ່ງຂວາຂອງແມ່ນ້ຳຂອງຕໍ່ໜ້ານະຄອນຫລວງພະບາງ ຍັງມີພູສອງໜ່ວຍທີ່ມີຮູບປະພັນສັນຖານເໝືອນມະນຸດນອນຫງາຍຢ່າງໜ້າອັດສະຈັນ. ໜ່ວຍໃຕ້ຮຽກວ່າພູພຸດທະເສນ, ໜ່ວຍເໜືອຮຽກວ່າພູນາງກັງຣີ ຮຽກກັນຫຍໍ້ໆວ່າ ພູທ້າວ ແລະ ພູນາງ.

ນິທານຫຍໍ້ກ່ຽວກັບພູສອງໜ່ວຍນີ້ບູຮານໄດ້ເລົ່າສືບກັນມາວ່າ[14] ແຕ່ກ່ອນຢູ່ບໍລິເວນອິນທະປັດຖາ ມີຄົນຕັດຟືນຜູ້ໜຶ່ງທຸກໄຮ້ເຂັນໃຈທີ່ສຸດ. ຊາຍທຸກຂະຕະຜູ້ນັ້ນມີເມຍຜູ້ໜຶ່ງ ແລະ ມີລູກສາວສິບສອງຄົນ. ດ້ວຍຄວາມທຸກຍາກຫາອັນປຽບບໍ່ໄດ້ ຊາຍຕັດຟືນຜູ້ນັ້ນຈຶ່ງເອົາລູກໄປໂຜດທີ່ປ່າເສຍນາງທັງ 12 ຄົນນັ້ນກໍດັ້ນດອນຊອນປ່າໄປຈຶ່ງໄປພົບນາງຍັກຕົນຫນຶ່ງຊື່ວ່າ ສຸນທະລາ ມີລູກສາວຄົນໜຶ່ງຊື່ວ່າ ນາງກັງຣີ. ນາງຍັກແມ່ໝາຍໄດ້ເອົານາງສິບສອງນັ້ນໄປຢູ່ໃນພະລາດຊະວັງເພື່ອ ໃຫ້ຢູ່ກິນກັບລູກສາວຂອງຕົນ. ນາງທັງສິບສອງໄດ້ຢູ່ໃນວັງກັບນາງຍັກແມ່ໝ້າຍເປັນເວລາຫຼາຍປີຈົນໃຫຍ່ຂຶ້ນມາພໍສອນສາວ.

ວັນໜຶ່ງນາງທັງສິບສອງຄົນພາກັນລັກໜີ. ນາງຍັກກໍຕິດຕາມໄປຈອນຈະພົບແລ້ວນາງສິບສອງກໍເຂົ້າໄປລີ້ຢູ່ໃນ ປາກພະຍາງົວຕົວໜຶ່ງ. ເມື່ອຍັກກັບຄືນແລ້ວນາງສິບສອງຈຶ່ງອອກເດີນທາງຕໍ່ໄປ. ນາງສິບສອງໄປເຖິງນະຄອນຫລວງເຊິ່ງເປັນເມືອງຂອງທ້າວປາລຸທະເສນ. ພະອົງເຫັນນາງທັງຫຼາຍມີຮູບຮ່າງເນື້ອກາຍຈົບງາມ ກໍເອົາຂຶ້ນເປັນມະເຫສີ. ນາງຍັກແມ່ ໝ້າຍ ເມື່ອໄດ້ຮູ້ຂ່າວວ່ານາງສິບສອງ ເປັນເທວີຂອງພະຍາປາລຸທະເສນແລ້ວກໍຕາມໄປ. ເມື່ອໄປໃກ້ຈະຮອດວັງຂອງພະຍາ ນາງກໍຈໍາແລງຕົວເອງກາຍເປັນນາງມະນຸດທີ່ມີເນື້ອກາຍໜຸ່ມນ້ອຍ ແລະ ງົດງາມທີ່ສຸດ ແລ້ວກໍເຂົ້າໄປໃນພະລາຊະວັງ ພະຍາປາລຸທະເສນເຫັນນາງກໍຫຼົງຮັກ ກໍຍົກຂຶ້ນເປັນອັກຄະມະເຫສີອີກຄົນ. ຕໍ່ນັ້ນມາບໍ່ນານນາງຍັກກໍແກ້ງເຈັບປ່ວຍຢ່າງໜັກບໍ່ກິນເຂົ້າ ແລະ ນ້ຳຈົນຮ່າງກາຍຈ່ອຍຜອມຫ່ຽວແຫ້ງໄປ ຈຶ່ງແນະນໍາໃຫ້ພະຍາໄປນໍາເອົາໝໍໂຫນ. ນາງຍັກຈໍາແລງ

---

[14] ປຶ້ມຕໍານານ.2013 ,20-13 ,ພິງສາວະດານເມືອງຫຼວງພະບາງ-

ກາຍເປັນແມ່ໝໍໄປຢູ່ຂ້າງໜ້າ. ເມື່ອຄົນໃຊ້ໄປຫາຈຶ່ງກ່າວຫາວ່ານາງສິບສອງເປັນຄົນເຂັດຄົນຂວາງ ຖ້າຂັບໄລ່ນາງສິບສອງໜີຈາກພະລາຊະວັງ ແລະ ເອົາຕາເຂົາທັງມວນມາສູ່ຂວັນ ນາງສູນທະລາຜູ້ເປັນອັກຄະມະເຫສີ ພະຍານາງຈຶ່ງຈະຫາຍ ບໍ່ດັ່ງນັ້ນເປັນຈັກຕາຍໄປບໍ່ສົງກາ.ດ້ວຍຄວາມ ຫຼົງຮັກນາງຍັກພະຍາຈຶ່ງສັ່ງໃຫ້ບ່າວໄພ່ເຈາະຕານາງສິບສອງແລ້ວ ເອົາພວກນາງໄປໄວ້ຖໍ້າແຫ່ງໜຶ່ງ. ນາງຍັກເມື່ອເພິ່ນເອົາຕານາງສິບສອງມາສູ່ຂວັນຕົນແລ້ວກໍສົ່ງເມືອ ໃຫ້ລູກສາວຂອງຕົນຮັກສາໄວ້ທີ່ເມືອງໄວຍະລັບປະຕິ. ນາງສິບສອງເມື່ອໄດ້ຈາກພະລາດຊະວັງຂອງພະຍາປາລຸທະເສນແລ້ວຜູ້ໃດ ກໍມີຄັນ (ຖືພາມານ) ທຸກຄົນ. ດ້ວຍການອຶດອາຫານນາງສິບສອງເມື່ອຜູ້ໃດອອກລູກມາກໍຈົກປັ້ນກັນ ກິນ. ຈະເປັນດ້ວຍການທຳກົນອຸບາຍ ຫຼື ວ່າດ້ວຍຄວາມເວດທະນາຂອງບ່າວໄພ່ສ່ວນນາງຫຼ້າເຂົາເຈາະເອົາແຕ່ຕາ ຊ້າຍເທົ່ານັ້ນ. ເມື່ອນາງທັງສິບເອັດອອກລູກ ແລະ ປັ້ນມາໃຫ້ກິນນາງກໍເອົາທ້ອນໄວ້ບໍ່ກິນ. ພາຍລຸນມາເມື່ອນາງອອກລູກກໍເອົາເນື້ອຂອງລູກທັງສິບເອັດທີ່ທ້ອນ ໄວ້ນັ້ນແຈກຢາຍໃຫ້ພວກເອື້ອຍກິນບອກວ່າເປັນພູດລູກຂອງຕົນຕາຍ ແລະ ເປື່ອຍເນົ່າອອກມາແຕ່ໃນທ້ອງ. ຕໍ່ນັ້ນມາແມ່ໄກ່ປ່າຕົວໜຶ່ງທີ່ມີໃຈເມດຕາປານີ ກໍຊອກເຂົ້າເປືອກມາລ້ຽງທ້າວນ້ອຍ ແລະ ນາງສິບສອງຄົນວັນລະເລັກລະນ້ອຍ ພໍບໍ່ໃຫ້ຕາຍ.

ເມື່ອເຖິງທ້າວນ້ອຍໃຫຍ່ຂຶ້ນມານາງຫຼ້າກໍບອກເລົ່າແກ່ນາງສິບ ເອັດວ່າລູກຂອງຕົນຍັງຢູ່. ທ້າວນ້ອຍອອກຈາກຖໍ້າໄປທ່ຽວຕາມໝູ່ບ້ານໃກ້ຄຽງໂດຍຈັບເອົາໄກ່ເຖື່ອນໂຕແຂງແຮງໄປຕີກັບໄກ່ເດັກນ້ອຍຊາວບ້ານ. ພໍຕາເວັນລົງແລງ ຝູງເດັກນ້ອຍກໍເອົາເຂົ້າ ແລະ ນໍ້າໃຫ້ ແລ້ວກໍຫາບມາສູ່ນາງສິບສອງຄົນກິນ. ວັນໜຶ່ງທ້າວນ້ອຍໄດ້ໄປຫຼິ້ນ ໝາກຣຸກໝາກສະກາໃນນະຄອນຫຼວງ ເຊິ່ງເປັນເມືອງພະຍາພໍ່ແຫ່ງຕົນ ປາລຸທະເສນໄດ້ຊົງຊາບວ່າທ້າວນ້ອຍເປັນຜູ້ຊຳນານການຫຼິ້ນ ຈຶ່ງຮຽກທ້າວນ້ອຍມາຫຼິ້ນໝາກຣຸກໝາກສະການຳ. ພະອົງໄຕ່ຖາມເຖິງໂຄດວົງທ້າວນ້ອຍໄດ້ທູນຕອບວ່າ: ຕົນເປັນລູກຂອງນາງຈັນທະປະທຸມ ນ້ອງຫຼ້າຂອງນາງສິບເອັດພະຍາຈຶ່ງຮູ້ຈັກວ່າເປັນລູກຂອງຕົນ. ນັບແຕ່ວັນນັ້ນຕໍ່ໄປພະຍາປາລຸທະເສນກໍຊົງຊັກຊວນທ້າວນ້ອຍໃຫ້ມາ ຢູ່ໃນພະລາດຊະວັງນຳພະອົງ. ທ້າວນ້ອຍກໍມາຕາມຄວາມປະສົງຂອງພະຍາ ແຕ່ວ່າໄດ້ລອບເອົາເຂົ້າປາອາຫານໄປລ້ຽງນາງສິບສອງຢູ່ບໍ່ຂາດວັນ. ພະຍາປາລຸທະເສນໄດ້ຕັ້ງຊື່ໃຫ້ທ້າວນ້ອຍວ່າ ພຸດທະເສນ.

ມາບໍ່ນານ ນາງຍັກຜູ້ຈຳແລງຕົວເປັນອັກຄະມະເຫສີຂອງພະຍາ ກໍຮູ້ວ່າທ້າວພຸດທະເສນເປັນລູກຂອງນາງຫລ້າຈຶ່ງຊອກຂ້າທ້າວນ້ອຍ ດ້ວຍເລ່ກົນອຸບາຍ. ນາງຈຶ່ງແກ້ງທຳເປັນຄົນປ່ວຍຢ່າງໜັກອີກ ແລ້ວທູນພະຍາວ່າ ມີແຕ່ຢາເຊິ່ງຢູ່ໃນເມືອງໄວຍະລັບປະຕິຄືເມືອງເດີມຂອງນາງຢ່າງດຽວຈະເອົາຊີວິດຂອງນາງໄວ້ໄດ້ ແລະ ຜູ້ທີ່ຈະໃຊ້ໃຫ້ໄປເອົາຢານັ້ນນາງແລເຫັນແຕ່ທ້າວພຸດທະເສນຄົນດຽວ ເຊິ່ງສາມາດ. ພະຍາກໍສັ່ງທ້າວພຸດທະເສນ ໄປເອົາຢາຕາມຄຳປະສົງຂອງນາງຍັກ. ທ້າວພຸດທະເສນ ເລືອກເອົາມ້າຕົວໜຶ່ງທີ່ແຂງແຮງທີ່ສຸດເຫາະເຫີນເດີນອາກາດໄດ້. ກ່ອນຈະອອກເດີນທາງໄປນາງຍັກໄດ້ມອບໜັງສືໃຫ້ທ້າວສະບັບຫນຶ່ງແລ້ວ ກ່າວວ່າໃຫ້ເຈົ້າເອົາໜັງສືສະບັບນີ້ເມືອໃຫ້ນາງກັງຣີ ຜູ້ເປັນລູກສາວຂອງຕົນ. ເມື່ອນາງໄດ້ອ່ານໜັງສືນີ້ແລ້ວເຈົ້າຈະໄດ້ຮັບສິ່ງເພິ່ງພໍໃຈຂອງ ເຈົ້າເປັນອັນມາກ. ທ້າວພຸດທະເສນຮັບເອົາໜັງສືຈາກນາງຍັກ,ແລ້ວກໍອອກເດີນທາງໄປ ວັນໜຶ່ງໃກ້ຈະຮອດເມືອງໄວຍະລັບປະຕິ ເຫດວ່າທ້າວເດີນທາງອິດອ່ອນຫນັກ ເມື່ອມາຮອດອາສົມລືສີແຫ່ງໜຶ່ງທ້າວກໍລົງຈາກມ້າເພື່ອເຊົາ ເມື່ອຍເອົາແຮງຢູ່ກ້ອງຕົ້ນໂພໄຊ ແລ້ວທ້າວ ແລະ ມ້າ ກໍພາກັນເຊືອບຫຼັບໄປ. ລືສີໄດ້ມາພົບ ແລະ ເຫັນກັບຫນັງສືມັດແຂວນຄໍມ້າກໍມີຄວາມສົນໃຈຈຶ່ງຕັດເຊືອກເອົາ ຫນັງສືອອກມາອ່ານມີໃຈຄວາມວ່າ: “ດູລານາງກັງຣີຄັນວ່າຊາຍນ້ອຍຜູ້ນີ້ໄປຮອດໄປເຖິງເມື່ອໃດມຶງນາງຈຶ່ງກິນຊາຍນ້ອຍຄົນນີ້ເສຍຢ່າໄວ້”. ລືສີເຫັນໄພອັນຕະລາຍຈະມາເຖິງທ້າວນ້ອຍຈຶ່ງລຶບເນື້ອຄວາມທີ່ກ່າວ ມານີ້ແລ້ວແກ້ດ້ວຍເນື້ອຄວາມໃໝ່ວ່າ: “ຊາຍນ້ອຍຜູ້ນີ້ ເປັນລູກແຫ່ງນາງສູນທະລາ ຫາກໄດ້ສົ່ງມາໃຫ້ເປັນຜົວແຫ່ງມຶງນາງ ຄັນວ່າຊາຍຫາກມາເຖິງເມື່ອໃດໃຫ້ມຶງນາງແຕ່ງແປງຕ້ອນຮັບ ແລ້ວໃຫ້ນາງອາພິເສກເອົາທ້າວເປັນເຈົ້າເປັນຜົວໂດຍສະຫວັດດີ ເທີ້ນ”.

ທ້າວພຸດທະເສນເດີນທາງຕໍ່ໄປຮອດເມືອງໄວຍະລັບປະຕິ ນາງກັງຣີ ເປີດໜັງສືຂອງແມ່ອອກມາອ່ານ ແລ້ວກໍຮັບເອົາທ້າວພຸດທະເສນດ້ວຍຄວາມພໍໃຈເພາະທ້າວມີຮູບໂສມຕະ ໂນມພັນອັນງົດງາມມາກ ເວລາເອົາກັນແລ້ວ ນາງກັງຣີ ກໍພາຜົວຂອງຕົນໄປຊົມສວນອຸທິຍານ ແລະ ແນະນຳໃຫ້ຮູ້ຂອງດີວິເສດທຸກສິ່ງທຸກປະການເປັນຕົ້ນວ່າ

ຫວ້ານຫຼາຍຊະນິດ ເມື່ອຂວ່າງໄປເປັນ ປ່າໄຜ່ໜາມ ເປັນໜອງ ເປັນໄຟເຜົາແຜ່ນດິນ ເປັນແມ່ນ້ຳໃຫຍ່ ແລະ ຢ່າງອື່ນໆ. ຮູ້ດັ່ງນັ້ນແລ້ວ ທ້າວພຸດທະເສນ ກໍດີໃຈຈຶ່ງຊອກ ຊ່ອງທາງຈະລັກໜີຈາກນາງກັງຣີກັບໄປນະຄອນຫຼວງ. ວັນໜຶ່ງທ້າວໄດ້ສັ່ງໃຫ້ນາງກັງຣີ ຈັດການຫຼິ້ນມະຫໍລະສົບຄົບງັນໃຫ້ ບ່າວໄພ່ທັງເມືອງໄດ້ຊຸມເຊົ້າຊຸມເຫຼົ້າຊື່ນມ່ວນ. ສ່ວນທ້າວກໍເອົາເຫຼົ້າແຈກນາງກັງຣີຫຼາຍໆເມົາເຫຼົ້າແລ້ວກໍພາກັນ ນອນລັບໄປຢ່າງບໍ່ ຮູ້ເມື່ອຄືງ. ທ້າວພຸດທະເສນ ເຫັນ ນາງກັງຣີແລະໄພ່ພົນຍັກນອນງຽບສະຫງັດແລ້ວ ທ້າວກໍເຂົ້າໄປເອົາ ກົງໃຈຂອງນາງຍັກສຸນທະລາ ເອົາຕານາງສິບສອງ ເອົາໝາກເວີ້ຮູ້ ຫາວໝາກນາວຮູ້ໂຫ່ແລ້ວຫວ້ານດີວິເສດຫຼາຍຊະນິດ. ຈາກນັ້ນທ້າວກໍຂຶ້ນຂີ່ມ້າລັກໜີ ໄປກາງຄືນ. ເມື່ອນາງກັງຣີ ສວ່າງເຫຼົ້າຮູ້ສຶກຕົວຄືນມາ ຊອກຫາຜົວບໍ່ເຫັນກໍເອົາລິພົນ ອອກຕິດຕາມທ້າວພຸດທະເສນເຫັນ ດັ່ງນັ້ນກໍເອົາຫວ້ານດີວິເສດຂວ່າງໄປເກີດເປັນປ່າ ໄຜ່ໜາມ ເປັນໜອງ ເປັນໄຟເຜົາແຜ່ນດິນຕັນທາງທີ່ນາງຈະຕິດຕາມມາ. ນາງກໍເອົາລິ ພົນຟັນປ່າໄຜ່ຖົມໜອງ ແລະ ມອດໄຟຕິດຕາມມາໄດ້. ທ້າຍສຸດ ທ້າວກໍເອົາຫວ້ານ ຊະນິດໜຶ່ງຂວ່າງໄປເປັນແມ່ນ້ຳໃຫຍ່ ມີພູເຝືອນແປວໄຫລຟອງຟາດຢ່າງຮ້າຍແຮງ. ນາງກັງຣີເມື່ອມາເຖິງແຄມນ້ຳນີ້ກໍຕິດຕາມໄປບໍ່ໄດ້ນາງຈຶ່ງເອີ້ນ ຫາຜົວໃຫ້ກັບຄືນດ້ວຍ ຄວາມສະເໜ່ຫາຮັກທ້າວບໍ່ກັບນາງຈຶ່ງເອົາໄພ່ພົນກັບຄືນມາສູ່ເມືອງແຫ່ງຕົນ ນາງມີ ຄວາມໂທມະນັດຄັບແຄ້ນແໜ້ນຫົວໃຈເປັນທີ່ສຸດ ບໍ່ກິນເຂົ້ານ້ຳ ແລະ ອາຫານ ແລ້ວກໍ ເສຍຊີວິດໄປ ກ່ອນໃຈຈະຂາດນາງໄດ້ໄຫວ້ວອນເທວະດາ ຂໍຜູກກຳໝາຍເວນແກ່ຜົວ ຂໍໃຫ້ຜົວໄດ້ຕາຍຍ້ອນຄວາມສະເໜ່ຫາຮັກເໝືອນດັ່ງນາງ.

ທ້າວພຸດທະເສນເມື່ອໄປຮອດນະຄອນຫຼວງແລ້ວກໍໄປຫາແມ່ ແລະ ປ້າຂອງ ຕົນ, ເອົາໝາກເວີ້ຮູ້ຫາວ ໝາກນາວຮູ້ໂຫ່ ບີບໃສ່ໜ່ວຍຕານາງສິບສອງແລ້ວກໍຮຸ່ງແຈ້ງ ດັ່ງເດີມ. ເສັດແລ້ວທ້າວກໍເຂົ້າໄປໄຫວ້ພະຍາພໍ່ແຫ່ງຕົນໃນພະລາດຊະວັງ. ນາງຍັກສູນ ທະລາມາບເຫັນທ້າວ ກໍອັດສະຈັນເພາະວ່າໂຕໄດ້ຂຽນໜັງສືໃຫ້ ນາງກັງຣີ ຈິກກິນ ທ້າວແລ້ວ ເປັນປະການໃດຈຶ່ງບໍ່ກິນ ແລະ ກັບຄືນມາໄດ້ ດ້ວຍຄວາມພິໂລດໂກດແຄ້ນ ນາງຈິ່ງກາຍເປັນຮູບຍັກເໝືອນເດີມແລ້ວກໍໂດດໄປຫວັງຈະຈິກກິນທ້າວ ພຸດທະເສນ. ທ້າວກໍເອົາດາບຕັດກົງໃຈຂອງນາງຍັກໃຫຍ່ໃຫ້ຂາດ. ກໍ່ລົ້ມຕາຍໄປໃນຂະນະນັ້ນ. ເມື່ອນາງຍັກສູນທະລາຕາຍແລ້ວ ທ້າວພຸດທະເສນກໍໄປເອົາຍັງແມ່ ແລະ ປ້າແຫ່ງຕົນ ກັບເຂົ້າມາໃນພະລາດຊະວັງນຳພະຍາພໍ່ດັ່ງເດີມ. ເສັດແລ້ວທ້າວກໍລາພະຍາຕົນພໍ່ແມ່ ແລະ ປ້າກັບຄືນເມືອຫາ ນາງກັງຣີຜູ້ເປັນເມຍພໍໄປເຖິງເມືອງໄວຍະລັບປະຕິກໍເຫັນນາງ ກັງຣີຕາຍຢູ່. ດ້ວຍຄວາມຜູກກຳໝາຍເວນຂອງນາງດັ່ງກ່າວແລ້ວ ທ້າວກໍເກີດຄວາມ ສະເໜ່ຫາຮັກນາງຢ່າງທີ່ສຸດມີຄວາມຄັບແຄ້ນແໜ້ນໃຈ ບໍ່ອາດຈະຕັ້ງຕົນຢູ່ໄດ້ຈຶ່ງ ສະຫຼົບຂາດໃຈຕາຍ ນຳນາງກັງຣີ. ເມື່ອທ້າວພຸດທະເສນຕາຍໄປນັ້ນໄດ້ເອົາຫົວໝູນຕີນ ນາງກັງຣີຢູ່ ເທບໄທ້ຢູ່ເທິງສະຫວັນຫຼິງເປັນດັ່ງນັ້ນ ຈຶ່ງພິຈາລະນາເຫັນວ່າເປັນຂອງບໍ່ ຄວນເພາະໃນພາຍໜ້າຜູ້ຍິງຈະ ຂີ່ມຜູ້ຊາຍເກີນໄປ ຈຶ່ງລົງມາຕ່າວສິບເຂົາທັງສອງໂດຍ ການເອົາສິບນາງກັງຣີເປັນຝ່າຍໝູນຕີນທ້າວ.

ລາວບູຮານຈິນໄດ້ເລົ່າສືບກັນມາວ່າສິບທ້າວພຸດທະເສນ ແລະ ນາງກັງຣີໄດ້ ກາຍມາເປັນ ພູທ້າວ ແລະ ພູນາງ. ບ່ອນລືສີຕັດເຊືອກເອົາໜັງສືອອກຈາກຄໍມ້າແລ້ວ ແກ້ໄຂໃຈຄວາມນັ້ນ ແມ່ນ ຜາຕັດແກ້ ເຊິ່ງຢູ່ຝັ່ງຂວາແມ່ນ້ຳຂອງຕໍ່ໜ້ານະຄອນຫຼວງພະ ບາງ ສວນອຸທິຍານນາງກັງຣີນັ້ນວ່າແມ່ນທີ່ດິນຄ້າຍທະຫານໃນເວລານີ້. ຊຶ່ງແຕ່ກ່ອນ ຮຽກວ່າສວນແຖນມີພືກສາໝາກໄມ້ອັນກິນແຊບຫຼາຍປະການ ແລະ ມີດອກໄມ້ອັນ ງົດງາມລາຍຊະນິດເປັນບ່ອນສຳລານໃຈ. ເມື່ອທ້າວພຸດທະເສນເກັບເອົາໝາກເວີ້ຮູ້ ຫາວໝາກນາວຮູ້ໂຫ່ ນັ້ນທ້າວຟ້າວຟັ່ງໄປທີ່ສຸດໝາກໄມ້ເຫຼົ່ານັ້ນກໍເຣ່ຍຮວາຍໄປຈຶ່ງ ກາຍ ເປັນຫາດໝາກນາວໃນກາລະບັດນີ້. ວິນຍານຂອງນາງກັງຣີຕາມທີ່ເລົ່າກັນມາກໍ ຍັງມາສູນນາງທຽມທີ່ ບ້ານຊຽງແມນຈິນກາລະບັດນີ້.

## 10. ວັດຈອມເພັດ.



ວັດຈອມເພັດ ຕັ້ງຢູ່ອີກຟາກໜຶ່ງຂອງແມ່ນ້ຳຂອງທາງທິດເໜືອຂອງບ້ານຊຽງແມນ ພວກເຮົາສາມາດເດີນທາງໄປໄດ້ 2 ທາງ ຄືດ້ວຍລົດ (ໃຊ້ບັກຂ້າມ) ແລະ ດ້ວຍເຮືອ. ໃຊ້ເວລາຂ້າມ 5 – 10 ນາທີ. ວັດແຫ່ງນີ້ຫ່າງຈາກຕົວເມືອງຫຼວງພະບາງ ປະມານ 3 ກິໂລແມັດ, ວັດຈອມເພັດເປັນວັດໜຶ່ງທີ່ມີຄວາມໂດດເດັ່ນ ແລະ ຂຶ້ນຊື່ລືຊາຂອງເມືອງຈອມເພັດຍ້ອນວ່າມີວັດແຫ່ງນີ້ຕັ້ງຢູ່. ວັດຈອມເພັດເປັນວັດທີ່ຕັ້ງສູງສະຫງ່າຢູ່ຈອມພູເພັດ ສາມາດຫຼຽວເຫັນວິວແມ່ນ້ຳຂອງ, ຕົວເມືອງຫຼວງພະບາງ ແລະ ພະອາທິດຕົກໃນຍາມແລງໄດ້ ຊຶ່ງວັດແຫ່ງນີ້ຈະເລີ່ມເປີດໃຫ້ເຂົ້າຊົມຕັ້ງແຕ່ເວລາ 08:00 – 17:00 ຂອງທຸກໆມື້.

ຫຼັງຈາກທີ່ເຮົາຂ້າມໄປຟາກນັ້ນແລ້ວ ກໍ່ຈະໄດ້ທ່ຽວຊົມກັບວິຖີການດຳລົງຊີວິດທີ່ເປັນເອກະລັກຂອງປະຊາຊົນຊາວເມືອງຈອມເພັດ ເປັນຕົ້ນແມ່ນ: ການທຳມາຫາກິນ, ການປາກເວົ້າ ແລະ ການນຸ່ງຖື. ນອກຈາກນັ້ນຍັງມີສະຖານທີ່ຕ່າງໆທີ່ສຳຄັນຫຼາຍແຫ່ງໃຫ້ເຮົາໄດ້ທ່ຽວຊົມເຊັ່ນ: ວັດຊຽງແມນ, ວັດຈອມເພັດ, ວັດລ້ອງຄູນ, ວັດຖ້ຳສັກກະລິນ, ວັດຫາດສ້ຽວ, ວັດຄົກປາບ ແລະ ວັດໜອງສະແກ້ວ. ຕາມການບອກເລົ່າຂອງຜູ້ເຖົ້າ ແລະ ປະຊາຊົນພາຍໃນບ້ານ ວັດນີ້ ຖືກຄົ້ນພົບໃນປີ 1888 ໂດຍພະຍາ ສຸລິສັກ ມົນຕີ ເຊິ່ງເປັນ ແມ່ທັບພາກທີ່ 3 ຂອງສະຫຍາມ (ໄທ) ສະໄໝທີ່ຝຣັ່ງປົກຄອງ. ຝາຜະໜັງຂອງວັດຈະມີການອອກແບບປະສົມປະສານລະຫວ່າງຈີນ ແລະ ໄທ, ມີຂັ້ນໄດທີ່ຍ່າງຂຶ້ນໄປຫາວັດ 123 ຂັ້ນ, ລວມອາຍຸຂອງວັດໄດ້ປະມານ 112 ປີ ວັດນີ້ຕິດພັນກັບລາຊະປະເພນີຂຶ້ນຄອງລາຊະສົມບັດ ຂອງມະຫາກະສັດຫຼວງພະບາງເຊັ່ນດຽວກັນກັບວັດລ້ອງຄູນ.

ຕາມການບອກເລົ່າຂອງພະນັກງານ ຖວທ ເມືອງຈອມເພັດໄດ້ກ່າວໄວ້ວ່າ[15] ກ່ອນທີ່ຈະຮ້ອງກັນວ່າວັດຈອມເພັດ ແຕ່ກ່ອນນີ້ໜ່ວຍພູແຫ່ງນີ້ໄດ້ມີຊື່ວ່າພູເພັດ ຍ້ອນວ່າສະໄໝກ່ອນທີ່ເພິ່ນສ້າງວັດຊຽງທອງ ເຈົ້າໄຊເສດຖາທິລາດ ເພິ່ນໄດ້ປະກາດໃຫ້ປະຊາຊົນເອົາເພັດ, ພອຍ, ເງິນ, ຄຳ ແລະ ແກ້ວມາຊ່ວຍສ້າງວັດຊຽງທອງ.

---

[15] ສຳພາດທ່ານ 4 ,ບຸນມີ ເພັດສະນຸຮັກ.ມັງກອນ2016

ສະນັ້ນ, ປະຊາຊົນຊາວເມືອງຈອມເພັດ ໂດຍສະເພາະແມ່ນບ້ານຊຽງແມນກໍ່ໄດ້ພາກັນຮິບໂຮມເອົາເພັດ, ພອຍ, ເງິນ, ຄຳ, ແກ້ວເພື່ອຈະໄປສ້າງວັດຊຽງທອງຕາມທີ່ເຈົ້າໄຊເສດຖາທິລາດເພິ່ນໄດ້ເວົ້າໄວ້ນັ້ນ ພາຍຫຼັງທີ່ປະຊາຊົນຮິບໂຮມໄດ້ແລ້ວກໍ່ໄດ້ນຳເອົາເຄື່ອງດັ່ງກ່າວ ໄປມອບໃຫ້ ແລະ ເມື່ອປະຊາຊົນໄປຮອດວັດ ວັດນັ້ນກໍ່ໄດ້ຖືກສ້າງຂຶ້ນຮຽບຮ້ອຍແລ້ວ. ດັ່ງນັ້ນ, ຈຶ່ງເຮັດໃຫ້ພໍ່ ແມ່ ພີ່ນ້ອງເມືອງຈອມເພັດເຫຼືອໃຈແຮງຈຶ່ງໄດ້ນຳເອົາເພັດ, ພອຍ, ເງິນ, ຄຳ ກຳແກ້ວນັ້ນໄປຖິ້ມ ແລະ ໄປຊະໄວ້ຕາມບໍລິເວນບ້ານນັ້ນ ໂດຍສະເພາະແມ່ນພູໜ່ອຍນີ້ເພິ່ນໄດ້ນຳເອົາເພັດມາຖິ້ມໄວ້ ສະນັ້ນ, ເພິ່ນຈຶ່ງຮ້ອງພູໜ່ອຍນີ້ວ່າພູເພັດ.

ພໍຕົກມາຮອດປີ 1888 ພະຍາ ສຸລິສັກ ມົນຕີ ແມ່ທັບພາກທີ່ 3 ຂອງໄທທີ່ໄດ້ຖືກແຕ່ງຕັ້ງຈາກສະຫຍາມໃຫ້ມາປະຈຳຢູ່ໃນຂົງເຂດນີ້ ເພື່ອຈະບຸກໂຈມຕີນະຄອນຫຼວງພະບາງ ກໍ່ໄດ້ສ້າງວັດແຫ່ງນີ້ຂຶ້ນໄວ້ເພື່ອເປັນສິລາຈາລຶກໃຫ້ແກ່ຕົວເອງ ແລະ ວັດແຫ່ງນີ້ກໍ່ໄດ້ມີການບູລະນະ ປະຕິສັງຂອນໃໝ່ຫຼາຍໆຄັ້ງໂດຍຢູ່ພາຍໃຕ້ການນຳພາຂອງ ຫ້ອງການມໍລະດົກ. ທາງເທິງເພດານຂອງວັດຈອມເພັດນີ້ຍັງມີຮູບຫົງ ແລະ ຮູບມັງກອນ ເພາະພະຍາສຸລິສັກ ມົນຕີໄດ້ຖືເອົາສັດສອງປະເພດນີ້ເປັນສັດນຳໂຊກປະຈຳໂຕ ແລະ ກອງທັບ, ວັດແຫ່ງນີ້ໄດ້ສ້າງ ແລະ ໄດ້ບູລະນະໂດຍສະກຸນຊ່າງຂອງຫຼວງພະບາງ ແລະ ສະກຸນຊ່າງຂອງໄທ ວັດຈອມເພັດນີ້ໄດ້ກາຍເປັນວັດທີ່ສຳຄັນອີກວັດໜຶ່ງຂອງເມືອງຈອມເພັດ.



## 11. ບ້ານຈ່ານເໜືອ.




ບ້ານຈ່ານເໜືອ ຕັ້ງຢູ່ແຄມຝັ່ງເບື້ອງຂວາຂອງແມ່ນ້ຳຂອງ ກົງກັນຂ້າມກັບຕົວເມືອງຫຼວງພະບາງໄປທາງໃຕ້ ເຊິ່ງສາມາດລ່ອງເຮືອລົງຈາກຕົວເມືອງຫຼວງພະບາງ ປະມານ 5 ກິໂລແມັດ ກໍສາມາດໄປເຖິງບ້ານຈ່ານເໜືອນີ້ ກໍ່ຄືກັບບ້ານ ແລະ ແຫຼ່ງທ່ອງທ່ຽວຢູ່ເມືອງຈອມເພັດ ເຊິ່ງພວກເຮົາສາມາດເຂົ້າໄປດ້ວຍສອງເສັ້ນທາງຄື: ທາງເຮືອ ແລະ ທາງລົດ. ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ໃນບ້ານຈ່ານເໜືອ: ກ່ອນທີ່ຈະມາເປັນບ້ານຈ່ານເໜືອ ແຕ່ກ່ອນມີຊື່ວ່າບ້ານ ໂພໄຊງອຍ ເພາະວ່າອີງໃສ່ບ້ານຈ່ານເໜືອມີຕົ້ນໂພ ທີ່ງອຍຢູ່ຜາແຄມແມ່ນ້ຳຂອງ ຈຶ່ງໄດ້ພາກັນເອີ້ນວ່າ ບ້ານໂພໄຊງອຍ, ພາຍຫຼັງທີ່ບ້ານຈ່ານກາງຖືກໄຟໄໝ້ ຈຶ່ງເຮັດໃຫ້ປະຊາຊົນພາກັນຍ້າຍມາຕັ້ງຢູ່ທາງເໜືອຂອງຫ້ວຍຈ່ານ ຈຶ່ງພາກັນເອີ້ນຊື່ກັນວ່າ ບ້ານຈ່ານເໜືອຕັ້ງແຕ່ນັ້ນມາ ແລະພາກສ່ວນໜຶ່ງກໍ່ໄປຕັ້ງຢູ່ທາງໃຕ້ຂອງຫ້ວຍຈ່ານ ຈຶ່ງເອີ້ນວ່າ ບ້ານຈ່ານໃຕ້.

ການປັ່ນໝໍ້ຫູ່ໄຫຂອງບ້ານຈ່ານເໜືອໄດ້ສືບທອດມາຕັ້ງແຕ່ສະໄໝເຈົ້າຟ້າງຸ່ມ, ພາຍຫຼັງທີ່ ເຈົ້າຟ້າງຸ່ມໄດ້ຕໍ່ສູ້ ແລະ ທ້ອນໂຮມປະເທດຊາດເຂົ້າເປັນອານາຈັກດຽວໄດ້ສໍາເລັດ, ເພິ່ນສັ່ງໃຫ້ປະຊາຊົນຫ້າງຫາກະກຽມເອົາສິ່ງຂອງຕ່າງໆ ເພື່ອມາຈັດພິທີງານສະເຫຼີມສະຫອງໄຊຊະນະ ເພິ່ນໄດ້ວາງທະຫານອາລັກຂາອອກເປັນ 4 ດ້ານຄື: ທາງທິດເໜືອຢູ່ ເມືອງປາກອູ, ທາງທິດໃຕ້ຢູ່ເມືອງນານ, ທາງທິດຕາເວັນອອກຢູ່ເມືອງຊຽງເງິນ ແລະ ທາງທິດຕາເວັນຕົກຢູ່ບ້ານຈ່ານເໜືອ ແລ້ວມອບໝາຍໃຫ້ແຕ່ລະກອງທະຫານຊອກເອົາສິ່ງຂອງຕ່າງໆ ທີ່ໃຊ້ເຂົ້າໃນການສະຫຼອງໄຊຊະນະ. ແຕ່ເມື່ອມາເຫັນດິນຂອງບ້ານຈ່ານເໜືອ ເປັນດິນດີ ເໝາະສົມແກ່ການປັ່ນໝໍ້ຫູ່ໄຫ ເພິ່ນຈຶ່ງສັ່ງໃຫ້ທະຫານສົມທົບກັບ ປະຊາຊົນ ຊ່ວຍກັນປັ່ນໝໍ້ຫູ່ໄຫເປັນຕົ້ນແມ່ນ: ໄຫນໍ້າ, ໄຫເຫຼົ້າ, ຄົກ, ໝໍ້, ໂຖດອກໄມ້... ນັບຕັ້ງແຕ່ມື້ນັ້ນເປັນຕົ້ນມາ ການປັ່ນໝໍ້ຫູ່ໄຫກໍໄດ້ຕິດພັນກັບການດໍາລົງຊີວິດຂອງປະຊາຊົນບ້ານຈ່ານເໜືອ ແລະ ໄດ້ສືບທອດມາເຖິງປັດຈຸບັນ.[16]

ແຕ່ດັ້ງເດີມ ປະຊາຊົນພາຍໃນບ້ານໄດ້ປັ້ນໄຫ ເພື່ອຈຸດປະສົງເອົາໃສ່ນໍ້າ ແລະ ໃສ່ປາແດກເທົ່ານັ້ນ. ແຕ່ໃນປັດຈຸບັນນີ້ ໄດ້ມີການຜະລິດຢ່າງກວ້າງຂວາງ ແລະ ຫຼາກຫຼາຍຜະລິດຕະພັນ ຊຶ່ງເລີ່ມແຕ່ໂຖດອກໄມ້ເພື່ອການປະດັບປະດາ ຈົນເຖິງດິນຂໍມຸງຫຼັງຄາ, ຊຶ່ງຜະລິດຕະພັນດັ່ງກ່າວນັ້ນຖືກປັ້ນດ້ວຍມືທັງໝົດ.

ຂັ້ນຕອນການຜະລິດ ແມ່ນເລີ່ມຈາກການຂຸດດິນດາກແລ້ວນໍາມາບົດໃຫ້ເປັນຜົງ ແລະ ປະສົມນໍ້າແລ້ວຄົນ ຫຼືຄັ້ນຈົນມັນໃຫ້ມັນຈັບຕົວກັນ ແລະ ສາມາດນໍາມາປັ້ນໄດ້. ຊ່າງປັ້ນໄດ້ປະດິດຄິດສ້າງ ແຕ່ລະຜະລິດຕະພັນ ໂດຍການ ນໍາໃຊ້ວິທີການແບບດັ້ງເດີມ. ການປັ້ນດິນດາກໃຫ້ເປັນຮູບຊົງ ແລະ ປະດັບປະດາ ດ້ວຍການນໍາໃຊ້ແມ່ພິມ ກົດລົງໄປພື້ນຜິວຂອງຜະລິດຕະພັນດິນດາກ ທີ່ຍັງປຽກຢູ່ນັ້ນ ດ້ວຍເຄື່ອງມືທີ່ສ້າງຂຶ້ນດ້ວຍມືທັງໝົດ. ຈາກນັ້ນ ພວກເຮົາໄດ້ນາເອົາຜະລິດຕະພັນ ທີ່ຍັງບໍ່ທັນສໍາເລັດຮູບນັ້ນ ມາຕາກແດດໃຫ້ແຫ້ງກ່ອນ ແລ້ວນໍາເຂົ້າໄປວາງໄວ້ຢູ່ໃນສາມເຕົາເຜົາໃຫຍ່ທີ່ຢູ່ໃຕ້ດິນຢ່າງ ລະມັດລະວັງ. ຊຶ່ງນໍາໃຊ້ພູມປັນຍາຂອງຊາວບ້ານເອງ ໃນການວັດແທກ ທີ່ຢູ່ຂ້າງໃນຂອງເຕົາ ໃນໄລຍະເວລາການເຜົານັ້ນແມ່ນໃຊ້ເວລາທັງໝົດປະມານສອງເຖິງສາມວັນຈຶ່ງສໍາເລັດຂັ້ນຕອນ.

ຜະລິດຕະພັນເຄື່ອງປັ້ນດິນເຜົາຂອງບ້ານຈ່ານ ສາມາດພົບເຫັນໄດ້ໃນທົ່ວປະເທດລາວເຊັ່ນ: ຢູ່ໃນເຮືອນ, ສວນ ຫຼື ຕາມໂຮງແຮມທີ່ມີຊື່ສຽງຕ່າງໆ. ຍັງມີເຄື່ອງປັ້ນດິນເຜົາຫຼາກຫຼາຍຊະນິດໄວ້ໃຫ້ທ່ານໄດ້ເລືອກ ແລະ ຍັງສາມາດຜະລິດຕາມສັ່ງອີກຫຼາກຫຼາຍລາຍການ ຈາກນາຍຊ່າງຫັດຖະກໍາປັ້ນດິນຂອງບ້ານຈ່ານເໜືອ ແລະ ຍາມໃດກໍຍິນດີຕ້ອນຮັບ ບັນດານັກທ່ອງທ່ຽວທີ່ ເຂົ້າມາທ່ຽວຊົມ ແລະ ເລືອກຊື້ຜະລິດຕະພັນສໍາເລັດຮູບຂອງບ້ານໄດ້.

ມີໂຖດອກໄມ້ ແລະ ໄຫ ຫຼາຍກວ່າ 50 ແບບ ແລະ ຂະໜາດທີ່ແຕກຕ່າງກັນ. ທ່ານສາມາດເລືອກຊື້ຜະລິດຕະພັນສໍາເລັດຮູບຫຼາກຫຼາຍຊະນິດໃນບ້ານ ຫຼື ສາມາດສັ່ງຈອງໄດ້ຕາມທີ່ທ່ານຕ້ອງການ.

[16] ສໍາພາດ ທ່ານ1 ,ບຸນມາ ເພັດມະນີ. ເມສາ .2016

## 12. ພະເຈົ້າມ່ານ.

ຄຳວ່າ "ພະເຈົ້າມ່ານ" ແມ່ນມີທີ່ມາຈາກຄຳວ່າ "ພະມ້າ" ໃນສະໄໝປະມານ 700 ກວ່າປີກ່ອນ ພະມ້າ ໄດ້ສ້າງອົງພະມ່ານຂຶ້ນ ດ້ວຍຄຳທີ່ດີ ແລະ ສູງຄ່າທີ່ສຸດ, ພ້ອມທັງປະດັບດ້ວຍອັນຍະມະນີນ້ຳທີ່ 9 ສີ ທີ່ບໍລິເວນ ສາຍແອວ, ສ້ອຍສັງວານ ແລະ ເຄື່ອງຊົງທັງອົງ ຫຼັງຈາກສ້າງສຳເລັດແລ້ວ ຈິ່ງໄດ້ນຳຂຶ້ນແພລອງແມ່ນ້ຳຂອງ ເພື່ອນຳກັບໄປພະມ້າ ພໍເຖິງບໍລິເວນເມືອງຫຼວງພະບາງ ແພທີ່ນຳອົງພະມ່ານມານຳນັ້ນ ໄດ້ເກີດຢຸດ. ເນື່ອງຈາກເກີດມີກະແສນ້ຳວົນຢ່າງແຮງ ທະຫານພະມ້າ ໃຊ້ເວລາດົງຢູ່ ຫຼາຍວັນຫຼາຍຄືນ ແຕ່ກໍ່ບໍ່ສາມາດໄປຕໍ່ໄດ້ ຜູ້ອັນເຊີນຈິ່ງໄດ້ເຮັດການສະກາລະແລ້ວຕັ້ງ ຈິດອາທິຖານວ່າ "ຖ້າຫາກອົງພະມ່ານບໍ່ຢາກກັບໄປເມືອງຫົງສາວະດີ (ປະເທດ ພະມ້າ) ກໍຂໍໃຫ້ທ່ານເລືອກວັດທີ່ຈະຢູ່ເອງເຖີດ" ໃນສະໄໝນັ້ນ, ຫຼວງພະບາງມີວັດ ຫຼາຍກວ່າ 100 ແຫ່ງ. ສາທຸໃຫຍ່ທຸກວັດ ກໍໄດ້ມາອັງເຊີນ ມາອູ້ມພະມ່ານຂຶ້ນຈາກ ແມ່ນ້ຳຂອງ ແຕ່ກໍບໍ່ມີວັດໃດ ສາມາດຍົກຂຶ້ນມາໄດ້ ຜ່ານມາອີກຫຼາຍວັນ, ສາທຸໃຫຍ່ ວັດຊຽງທອງ ໄດ້ຕັ້ງຈິດອາທິຖານແລ້ວເຮັດພິທີອັງເຊີນ. ທັນໃດນັ້ນ, ກໍສາມາດນຳ ອົງພະມ່ານ ຂຶ້ນຈາກແມ່ນ້ຳຂອງໄດ້ ດັ່ງກັບເກີດປະຕິຫານ ແລະ ທ່ານກໍໄດ້ອັນເຊີນ ອົງພະເຈົ້າມ່ານ ໄປປະດິດສະຖານໄວ້ທີ່ວັດຊຽງທອງ ນັບຕັ້ງແຕ່ນັ້ນເປັນຕົ້ນມາ ຈົນ ເຖິງປັດຈຸບັນ.

ນັບແຕ່ມີພະເຈົ້າມ່ານນີ້ມາ ພະເຈົ້າມ່ານ ກໍປະດິດສະຖານຢູ່ວັດຊຽງທອງບໍ່ ເຄີຍເຄື່ອນຍ້າຍໄປບ່ອນໃດນອກເຂດວັດເລີຍ ນ້ຳໜັກຂອງອົງພະເຈົ້າມ່ານ ມີນ້ຳໜັກ 75 ກິໂລ, ແທ່ນພະເຈົ້າມ່ານມີນ້ຳຫນັກ 20,5 ກິໂລ, ລວມອົງພະເຈົ້າມ່ານ ພ້ອມ ແທ່ນ ແມ່ນ 95,5 ກິໂລ. ພະເຈົ້າມ່ານອົງນີ້ ເປັນເນື້ອທອງສຳຣິດ ແຕ່ສີອອກຮຸ່ງແຈ້ງ ຄື ທອງນາກ.

ເມື່ອກ່ອນກ່ອນປີ ຄ.ສ 1930 ພະເຈົ້າມ່ານ ແມ່ນປະດິດສະຖານຢູ່ອຸບມຸງ (ຊາວບ້ານຊາວເມືອງເອີ້ນອູບມຸງນີ້ວ່າ: ອຸບມ່ານ) ອຸບມ່ານນີ້ແມ່ນຕັ້ງຢູ່ບໍລິເວນຂອງ ສວນດອກໄມ້ຫຼັງອາຣາມ (ສິມ) ປັດຈຸບັນ ຫຼັງຈາກອຸບມຸງມ່ານເພພັງແລ້ວ ເພິ່ນກໍນຳ ເອົາ ພະເຈົ້າມ່ານ ມາປະດິດສະຖານໄວ້ທີ່ຫໍພະເຈົ້າມ່ານ ດັ່ງທີ່ເຮົາເຫັນໃນປັດຈຸບັນນີ້ ສ່ວນບັນດາພະພຸດທະຮູບອົງອື່ນໆ ກໍຄືພຣະເຈົ້າທີ່ຕັ້ງຢູ່ກາງສວນດອກໄມ້ ກໍ່ສ້າງ ຖານຂຶ້ນໂດຍນຳເອົາຫີນເປັນຖານພະ (ຫີນດັ່ງກ່າວກໍ່ໄດ້ມາຈາກອຸບມຸງໃນເມືອກ່ອນ ຈາກຖານພະນັ້ນ) ຈົນຊາວບ້ານຊາວເມືອງຕັ້ງຊື່ພະອົງທີ່ປະດິດສະຖານທີສວນດອກ ໄມ້ນັ້ນວ່າ **ພະເຈົ້າຕາກແດດ** ເພາະສາທຸມ້າວ ມະນີວົງໂສ ເຈົ້າອາວາດໃນຂະນະນັ້ນ ຝັນວ່າ: ໃນສວນດອກໄມ້ ເຫັນແດດອາທິດຮ້ອນແຮງ ແລະ ຕາມຮີດຂອງເມືອງຫຼວງ ພະບາງແລ້ວ ພະພຸດຕ້ອງມີສິ່ງປຸກສ້າງ ເພື່ອບໍ່ໃຫ້ຕາກແດດ, ຕາກຝົນ. ຕົກມາຮອດ ໃນປີ ຄ.ສ 1987 ເພິ່ນຈິ່ງນຳພາ ສາທຸ, ອ້າຍຈົວ ປຸກຫໍ ເພື່ອມຸງໃຫ້ພະເຈົ້າຕາກແດດ ນັ້ນ, ສ່ວນພະເຈົ້າມ່ານ ຫຼັງຈາກອຸບມຸງຫຼົ້ມແລ້ວ ເພິ່ນກໍນຳໄປປະດິດສະຖານຢູ່ຫໍພະ ເຈົ້າມ່ານດັ່ງທີ່ເຫັນໃນປັດຈຸບັນນີ້.

ຫໍພຸດທະມາຣາວິໄຊ ພຣະເຈົ້າມ່ານ ທີ່ຕັ້ງຢູ່ດ້ານຫຼັງອາຣາມ (ສິມ) ຂອງວັດ ຊຽງທອງ ນີ້ສ້າງຂຶ້ນມາຫຼາຍຮ້ອຍປີແລ້ວ ແລະ ມີການບູລະນະປະຕິສັງຂອນ ວິຈິດຣິ ຈະນາ ປະດັບປະດາ ຫໍພຸທມາຣາວິໄຊ ໃຫ້ງົດງາມ, ມີການຕິດແກ້ວຫຼາກຫຼາຍສີສັນ ໃສ່ ເຊິ່ງສຳເລັດ ເມື່ອປີ ຄ.ສ 1974 ໃນສະໄໝເຈົ້າມະຫາຊີວິດ ສີສະຫວ່າງ ວັດທະນາ ເຊິ່ງແມ່ນນາຍຊ່າງປະຈຳຣາຊສຳນັກພຣະຣາຊວັງ ເພຍຕັນ ເປັນຫົວໜ້າ ໃນການປະຕິສັງຂອນໃຫຍ່ໃນຄັ້ງນີ້.

ພະເຈົ້າມ່ານ ເປັນພະພຸດທະຮູບປາງຫ້າມຍາດ ປະທັບຢືນ ຊາວຫຼວງພະບາງໃຫ້ຄວາມນັບຖື, ທາງດ້ານຄວາມເຊື່ອວ່າ ສັກສິດ. ຖ້າຫາກວ່າຜູ້ໃດມີຄວາມທຸກໃນໃຈ ກໍຈະມາຂໍຄວາມເຫັນໃຈ ເພື່ອປົດທຸກນຳພະເຈົ້າມ່ານ ກໍຈະໄດ້ຮັບຜົນຕອບແທນຕາມຈຸດປະສົງ ແລະ ຄວາມຕັ້ງໃຈທຸກປະການ ແລະ ເປັນທີ່ຄ້ຳຊູສາດສະໜາ, ວັດ, ພະພຸດທະຮູບ ແລະ ທີ່ເພິ່ງທາງໃຈໃຫ້ແກ່ຊາວທັງຫຼາຍ.

ການນຳເອົາພະເຈົ້າມ່ານ ລົງຫົດສົງນີ້ແມ່ນເກີດຂຶ້ນຄັ້ງທຳອິດ ປະມານປີ ຄ.ສ 1979. ໂດຍປີນັ້ນເມືອງຫຼວງພະບາງ ເກີດແຫ້ງແລ້ງມາຫຼາຍເດືອນ ແລະ ອາກາດກໍຮ້ອນອົບເອົ້າ, ໝອກຄວັນຈາກການຈູດໄຮ່ ກໍປົກຄຸມທົ່ວເມືອງ, ເຖົ້າແກ່ແນວໂຮມສາລາກວານວັດບ້ານຄີລີ, ຊຽງທອງ, ໂພນເຮືອງ ແລະ ບ້ານກາງ. ກໍໄດ້ມາປຶກສາຫາລື ຮ່ວມກັບ ສາທຸໃຫຍ່ ມ້າວ ມະນີວົງໂສ ແລະ ສາທຸໃຫຍ່ ຄຳຈັນວິຣະຈິດຕະເຈົ້າອະທິການວັດໃນສະໄໝກ່ອນ ທັງສອງອົງ ກໍ່ໄດ້ຫາທາງຊ່ວຍຊາວບ້ານຊາວເມືອງໃນຄວາມເດືອດຮ້ອນໃນຄັ້ງນັ້ນ, ຈຶ່ງໄດ້ປຶກສາ ແລະ ເຫັນສົມຄວນ ເອົາພະເຈົ້າມ່ານລົງຫົດສົງ.

ເຊິ່ງໃນໄລຍະທຳອິດ ປີ ຄ.ສ 1979. ເປັນປີທີ່ເອົາພຣະເຈົ້າມ່ານ ລົງຫົດສົງນັ້ນ ແມ່ນບໍ່ໄດ້ເຮັດເປັນພິທີໃຫຍ່ ແມ່ນເອົາລົງຫົດສົງໃນອາຮາມ (ສິມ) ໃນວັດຊຽງທອງ ຜູ້ມາຫົດສົງກໍມີແຕ່ຊາວບ້ານແຖວໆອ້ອມວັດເທົ່ານັ້ນ ຫຼັງຈາກນັ້ນ, ຊາວບ້ານຊາວເມືອງຮູ້ ແລະ ຊ່າລືວ່າ: ມີການນຳເອົາພຣະເຈົ້າມ່ານ ລົງຫົດສົງແລ້ວ ຕ່າງກໍພາກັນມາຫຼາຍຂຶ້ນ. ທາງວັດ ກໍໄດ້ປຶກສາຫາລືກັນ ຍ້ອນມີພໍ່ແມ່ພີ່ນ້ອງມາຫົດສົງຫຼາຍຈະເຮັດຢູ່ໃນອາຮາມນັ້ນກໍ່ຄັບແຄບ ຈຶ່ງເຫັນສົມຄວນໃຫ້ມີການຕັ້ງຜາມ ຢູ່ທາງໜ້າອາຮາມ (ສິມ) ຂອງວັດຊຽງທອງ. ຈາກນັ້ນທຸກໆປີ ກໍມີການອະຣາດທະນາ ພະເຈົ້າມ່ານ ລົງຫົດສົງ ຫຼັງຈາກແລ້ວບຸນປີໃໝ່ລາວ ຂອງທຸກໆປີ ມາຕະຫຼອດ.

ການນຳເອົາ ພະເຈົ້າມ່ານ ລົງຫົດສົງ ນັບແຕ່ປີ ຄ.ສ 2000 ເປັນຕົ້ນມາ ທາງບ້ານ - ເມືອງ ກໍໄດ້ຕົກລົງກັນເອົາ ພະເຈົ້າມ່ານ  ລົງສົງ ບາງປີ ກໍ່ວັນທີ່ 22, ບາງປີ ກໍ່ວັນທີ 23 ຂອງເດືອນເມສາ ຂອງທຸກໆປີ.

ຫໍພະມ່ານ ໃນປັດຈຸບັນນີ້ ຜູ້ອະວຸດໂສເພິ່ນບອກວ່າ ເມື່ອກ່ອນເພິ່ນບໍ່ໄດ້ນຳເອົາ ພະມ່ານ ມາໄວ້ຫໍນີ້, ຫໍນີ້ມີແຕ່ພະປະທານຂອງຫໍນີ້ເທົ່ານັ້ນ. ຈຶ່ງເປັນຂໍ້ໃຫ້ຄິດວ່າແຜ່ນຈາລຶກຫີນອ່ອນທີ່ເຈົ້າມະຫາຊີວິດ ສີສະຫວ່າງ ວັດທະນາ ວິຈິດຣິຈະນາ ປະດັບປະດາ ຫໍພຸທມາຣາວິໄຊ ໃຫ້ງົດງາມແລ້ວ. ປີ ຄ.ສ 1974 ໄດ້ເວົ້າ ແລະ ກ່າວເຖິງສ່ວນໜຶ່ງວ່າ ພຣະພຸທມາຣາວິໄຊ ສ້າງໂດຍ ພຣະຄູມະຫາສົມເດັດ ສຸວັນນະປັນຍາເມື່ອປີ ຄ.ສ 1446 ນັ້ນ. ອາດຈະໝາຍເຖິງແມ່ນພະປະທານ ທີ່ຢູ່ໃນ ຫໍພຣະມ່ານໃນປັດຈຸບັນ ກໍເປັນໄປໄດ້ ເພາະໃນຊ່ວງເວລາໜຶ່ງ ພະເຈົ້າມ່ານ ເພິ່ນກໍບໍ່ໄດ້ເອົາໄວ້ທີ່ຫໍພະມ່ານ ຫຼັງນີ້.

## 13. ພູສີ ແລະ ວັດຕ່າງໆຢູ່ບໍລິເວນພູສີ.



ພູສີ ແມ່ນພູໜ່ອຍໜຶ່ງ ທີ່ຕັ້ງຢູ່ໃຈກາງເມືອງ, ມີຂອບເຂດທີ່ກວ້າງຂວາງ ແລະ ບໍ່ວ່າຈະຢູ່ຈຸດໃດຂອງເມືອງຫຼວງພະບາງ ເຮົາກໍ່ສາມາດເບິ່ງເຫັນໄດ້ຈາກມູມທີ່ສູງຂອງພູແຫ່ງນີ້. ໃນຍາມແລງຈອມພູສີຍັງເປັນຈຸດຊົມພະອາທິດໄດ້ຢ່າງສວຍງາມ ເຕັມໄປດ້ວຍນັກທ່ອງທ່ຽວຈາກຫຼາຍໆປະເທດ ທີ່ມາຮ່ວມຕົວກັນ ແລະ ຖືເປັນສະຖານທີ່ທ່ອງທ່ຽວອີກແຫ່ງໜຶ່ງ ທີ່ທ່ານບໍ່ຄວນພາດ ເມື່ອມາທ່ຽວຫຼວງພະບາງ. ພູສີມີທາງຂຶ້ນໄດ້ເຖິງ 4 ທາງຄື ທາງດ້ານໜ້າຂອງພິພິທະພັນແຫ່ງຊາດ, ທາງດ້ານຫຼັງຕິດກັບນ້ຳຄານ, ທາງດ້ານເໜືອ ສາມາດຂຶ້ນຈາກຟາກເບື້ອງບ້ານຈູມຄ້ອງ ຄືດ້ານຂ້າງຂອງພູສີ ແລະ ທາງດ້ານຕາເວັນຕົກ ກໍສາມາດຍ່າງຜ່ານທາງໂຮງແຮມຈິງລານ. ແຕ່ທາງໜ້າຈະເປັນທີ່ນິຍົມຂອງນັກທ່ອງທ່ຽວຫຼາຍກວ່າ ມີທາງຂຶ້ນເປັນຂັ້ນໄດ 328 ຂັ້ນ ຕະຫຼອດທາງຂຶ້ນເຕັມໄປດ້ວຍຕົ້ນດອກຈຳປາລຽນຢາຍເດຍລະດາດຕະຫຼອດທາງຂຶ້ນ.

ເມື່ອກ່ອນຊື່ເດີມຂອງພູສີແມ່ນ ພູສວງ ແລ້ວປ່ຽນມາເປັນພູສີ ເມື່ອກ່ອນບໍລິເວນພູສີນີ້ ແມ່ນເຂດປ່າສັກສິດ ຕາມຄວາມເຊື່ອຖືຂອງຄົນສະໄໝບູຮານ ຕໍ່ມາໄດ້

ມີລືສີຜູ້ສະແຫວງບຸນຂອງສາສະໜາພຸດ ຂຶ້ນມາອາໄສຢູ່ ປະຊາຊົນທັງຫຼາຍຈຶ່ງເອີ້ນວ່າ: ພູພະລືສີ ຫຼື ພູສີ ຕາມຕຳນານຂຸນບູລົມໄດ້ກ່າວໄວ້ກ່ອນຈະເປັນເມືອງຫຼວງພະບາງ. ໃນບັ້ນພະຍາແຖນລົງມາຕັ້ງເມືອງລຸ່ມໄດ້ເວົ້າວ່າ ມີລືສີ 2 ພີ່ນ້ອງຄື: 1 ອົມມະລະລືສີ, 2 ໂຍທິກະລືສີ ເປັນຜູ້ທີ່ຈະໄປຊອກບ່ອນຕັ້ງບ້ານເມືອງ ແລະ ໄດ້ໄປເຫັນພູໜ່ວຍໃຫຍ່ໜ່ວຍໜຶ່ງລືສີທັງສອງ ຈຶ່ງໄປບວງສວງເທບພະຍາດາບ່ອນບວງສວງ ຈຶ່ງປະກົດໄດ້ຊື່ວ່າ ພູສວງ. ພາຍຫຼັງມາກໍໄດ້ຜັນປ່ຽນສຽງໄປເປັນພູຊວງ ຫຼືພູສວງ (ພູສີໃນປັດຈຸບັນ) ລືສີສອງພີ່ນ້ອງເລີຍຕັ້ງເປັນຫຼັກບ້ານຫຼັກເມືອງ ແລ້ວປະດິດສະຖານພະພຸດທະສາສະໜາຄື: ພະພຸດທະບາດໄວ້ຈອມສີ ເມື່ອຍັກນັນທາ (ຊາວຊວາ) ມາຢູ່ຈຶ່ງປະກົດເປັນຊື່ໄວ້ວ່າ: ພູນັນທາກາງຣີ ສີສັດຕະນາກ ເອົາຊື່ນັນທາກາງຣີ ແລະນາກມາໃສ່ກັນຄື: ນາກ 15 ຕະກຸນ ທີ່ເຫັນຢູ່ໜ້າຫໍພິພິທະພັນແຫ່ງຊາດຫຼວງພະບາງ ຕົນທີ 15 ຊື່ທ້າວໃຈຈຳນົງ ຮັກສາພະບາດເຈົ້າ ເປັນສີສັດຕະນາກ ເຈົ້າເຝົ້າຢູ່ຈອມສີ ຈຶ່ງຕົກລົງກັນວ່າສະຖານທີ່ນີ້ ຄວນເປັນບ່ອນສ້າງຜາສາດໃຫ້ເຈົ້າກະສັດຜູ້ຈະມາປົກຄອງບ້ານເມືອງນີ້ເປັນຜູ້ຄ້ຳສາສະໜາໂຄຕະມະ (ງົວ) ໃນພາຍໜ້າ. ພໍມາຮອດທ້າຍສະຕະວັດທີ XVIII ຫາຕົ້ນສະຕະວັດທີ XIV ໄດ້ມີການສ້າງວັດຂອງສາສະໜາພຸດໃສ່ບໍລິເວນພູສີເປັນຈຳນວນຫຼາຍປະມານ 13 ແຫ່ງຄື: 1. ວັດຊຽງງາມ ຫຼືວັດປ່າຝາງ, 2. ວັດພຣະພຸດທະບາດວັດສີພຸດທະບາດ, 3. ວັດປ່າແຄ, 4. ວັດສາວຫຼວງ, 5. ວັດຈອມສີ, 6. ວັດປະທຽບ, 7. ວັດປ່າຮວກ, 8. ວັດທ້າຍພູ, 9.ວັດຫໍຄວ່າງ, 10. ວັດທາດເນີ້ງ, 11. ວັດຂາມລ່ຽມ, 12. ວັດປ່າແມວ, 13. ວັດທົມໂມທະຍາລາມ (ວັດຖ້ຳເທົ່າ ຫຼື ວັດຖ້ຳພູສີ) ແລະໄດ້ສ້າງພະທາດຈອມສີຂຶ້ນ ໃນປີ ຄ.ສ 1804 ພາຍຫຼັງເຈົ້າອານຸລຸດ ຂຶ້ນສະເຫວີຍລາດ ປົກຄອງອານາຈັກລ້ານຊ້າງໄດ້ 8 ປີ, ປະຊາຊົນທັງຫຼາຍຈຶ່ງໄດ້ເອີ້ນວ່າ: ພະທາດຫຼັກເມືອງ ຫຼື ພະທາດພູສີ ເຊິ່ງໝາຍເຖິງພູ ທີ່ເປັນສິລິມຸງຄຸນເປັນຫຼັກບ້ານຫຼັກເມືອງທີ່ໄດ້ມີການເຄົາລົບໄຫວ້. ພະທາດແຫ່ງນີ້ໄດ້ມີຮູທີ່ເຈາະລົງໄປເຖິງໃຈກາງຂອງໜ່ວຍໂລກ ແລະ ໄດ້ມີພະຍານາກຈຳສິນຢູ່ໃນຮູດັ່ງກ່າວ, ຍ້ອນແນວນັ້ນ, ຊາວເມືອງຫຼວງພະບາງ ຈຶ່ງໄດ້ມີພິທີກຳຕ່າງໆ ເພື່ອບູຊາພະຍານາກນັ້ນກໍຄື: ປະເພນີການແຫ່ນາກ ເຊິ່ງຈະຈັດຂຶ້ນໃນມື້ສຸດທ້າຍຂອງບຸນປີໃໝ່ລາວ, ປະເພນີນີ້ໄດ້ຮັບການສືບທອດ ແລະປະຕິບັດກັນມາຈົນເຖິງປັດຈຸບັນ. ນອກຈາກທີ່ກ່າວມານັ້ນ, ສິ່ງທີ່ຊາວເມືອງຕ້ອງປະຕິບັດທຸກໆປີ ໃນປີໃໝ່ລາວຄື: ມື້ທີສາມຂອງປີໃໝ່ລາວ ເພິ່ນຈະແຫ່ພະຍານາກຕົນທີ 15 ລົງຈາກພະທາດຈອມສີມາຫາໜອງເກດ ແຫ່ນາກອ້ອມໜອງສາມຮອບແລ້ວປົ່ງນາກລົງແຄມໜອງປິ່ນຫົວນາກໄປທາງທິດເໜືອ, ສ່ວນການນຸ່ງຖືຂອງປະຊາຊົນທີ່ມາແຫ່ຈະນຸ່ງເຄື່ອງດຳ, ມັດຜ້າແດງໃສ່ຫົວ, ມັດແອວ ພ້ອມທັງຖືໂຄມໄຟສະແດງເຖິງແສງສະຫວ່າງປີໃໝ່ລາວມາຮອດແລ້ວ ຈາກນັ້ນມີການສະແດງຟ້ອນສະຫຼອງນາກ (ຊາດລາວຕາມພົງສາວະດານເຊື້ອຊາດລາວໄດ້ນັບຖືນາກມາແຕ່ດຶກດຳບັນ) ປັດຈຸບັນນີ້ເອີ້ນວ່າ: ຟ້ອນລຳໂຄມ ແລະ ມີຟ້ອນຂະບວນອື່ນໆ ອີກເຊັ່ນ: ຂະບວນຟ້ອນພະລັກພະລາມ ຈົນເຖິງປະຈຸບັນນີ້ ຍັງສືບຕໍ່ສະແດງທຸກໆປີໃນງານບຸນປີໃໝ່ລາວ [17][18].

ພະທາດແຫ່ງນີ້ ມີຄວາມກວ້າງດ້ານລະ 10.50 ແມັດ, ສູງ 21 ແມັດ ມີຮູບຖານຂອງທາດພູສີເປັນການກໍ່ສ້າງແບບສີ່ຫຼ່ຽມມົນທົນ ຄືດັ່ງຮູບຖານຂອງທາດແຫ່ງອື່ນໆ, ຕົວທາດເປັນທາດຍອງຢູ່ເທິງຖານ 3 ຖານ ປະດັບດ້ວຍລູກທາດເປັນຮູບດອກບົວຢູ່ທຸກໆແຈ ຕົວທາດເປັນຮູບສີ່ຫຼ່ຽມຫຍໍ້ມູມ ປະດັບດ້ວຍເສຕະສັດທອງສຳລິດເຈັດຊັ້ນສີ່ອັນ. ດ້ານຂ້າງພະທາດໄປທາງທິດເໜືອມີວິຫານນ້ອຍຂອງພູສີປະກອບມີຫໍໄຫວ້ ແລະ ຫໍກອງເຊິ່ງຫໍມີໄວ້ ເພື່ອໃຫ້ຜູ້ຄົນທີ່ຂຶ້ນໄປເທິງພູສີໄດ້ເຄົາລົບນົບໄຫວ້ ແລະ ອະທິຖານຫາສິ່ງສັກສິດຕ່າງໆ ຕາມຄວາມປາຖະໜາຂອງຕົນເອງ. ຫໍກ້ອງຢູ່ທີ່ນີ້ ແມ່ນອານຸຍາດໃຫ້ເຂົ້າໄດ້ສະເພາະຜູ້ທີ່ມີໜ້າທີຮັບຜິດຊອບຕີກອງເທົ່ານັ້ນເພາະກອງໜ່ວຍນີ້ ເພິ່ນຈະໃຊ້ສຳລັບຕີປະຈຳຍາມ ແລະ ບໍ່ໃຫ້ຜູ້ຄົນເຂົ້າໄປຕີໂດຍບໍ່ໄດ້ຮັບອານຸຍາດເດັດຂາດ. ຕັ້ງແຕ່ຕີນວັດປ່າຮວກຂຶ້ນໄປຈົນຮອດຈອມພູສີໃນເບື້ອງຕົ້ນແມ່ນສ້າງຂຶ້ນໂດຍພະເຈົ້າອານຸລຸດໃນປີ ຄ.ສ 1804 ໃນໄລຍະນີ້ຈະເປັນຂັ້ນໄດ

---

[17] ທ່ານ ບຸນຄົງ ຄຸດທ້າວ ຮອງຫົວໜ້າຫ້ອງການ ມໍລະດົກໂລກ ຫຼວງພະບາງໃຫ້ຂໍ້ມູນ ກ່ຽວ : ກັບ ປະຫວັດສາດສະຖານທີ່ບູຮານວັດຖຸ ໂດຍອີງໃສ່ປຶ້ມ ປະຫວັດຄວາມເປັນມາ ບັນດາວັດ .ອ້ອມຂ້າງ ພະທາດພູສີ

[18] ທ່ານ ໜໍ່ແສງ ວົງເດືອນ ຮອງຫົວໜ້າຂະແໜງວັດທະນະທຳ ,ພະແນກຖະແຫຼງຂ່າວ , ວັດທະນະທຳ ແລະທ່ອງທ່ຽວ ໂດຍອີງໃສ່ປຶ້ມ ປະຫວັດຄວາມເປັນມາ ບັນດາວັດອ້ອມຂ້າງ .ພະທາດພູສີ

ລັກສະນະປະຖົມປະຖານບໍ່ທັນກໍ່ສ້າງໃຫ້ແຂງແກ່ນທົນທານເທື່ອ ດັ່ງນັ້ນ, ພໍມາເຖິງລາຊະການຂອງພະເຈົ້າຊີວິດສີສະຫວ່າງວົງ ພະອົງໄດ້ທຳການກໍ່ສ້າງຄືນໃໝ່ໂດຍກໍ່ດິນຈີ່ແລ້ວຕິດຈອດດ້ວຍຫີນປູນ ແລະເຈົ້າກົມຂຸນດວງຈັນ ຫົວໜ້າກົມສາສະໜາທຳສະໜາມຫຼວງໃນພະບໍລົມມະຫາລາຊະວັງເປັນຜູ້ທຳການສ້ອມແປງຄັ້ງທຳອິດ ໃນປີ ຄ.ສ 1914 ໄດ້ທຳການສ້ອມແປງຄັ້ງທີສອງໃນລະຫວ່າງທີ່ເກີດສົງຄາມ ໂດຍສະຖາບັນຝຣັ່ງບົວລະພາ ພາຍໃຕ້ການຊີ້ນຳຂອງທ່ານ ຊາກບັດເຕີ (Charcs Battcur) ທ່ານ ຊາກບັດເຕີ ໄດ້ສ້ອມແປງຕົວພະທາດຈອມສີ ແລະ ຂັ້ນໄດໃນປີ ຄ.ສ 1962.

ຢູ່ເທິງພູສີແຫ່ງນີ້ມີປະເພນີອັນສຳຄັນອັນໜຶ່ງ ທີ່ເປັນເອກະລັກສະເພາະຂອງຕົວເມືອງຫຼວງພະບາງກໍ່ຄືປະເພນີຕີກອງຢູເທິງຈອມພູສີເຊິ່ງຈະມີຊາຍຕີກອງຄົນໜຶ່ງທີ່ຊາວເມືອງມອບໜ້າທີ່ໃຫ້ຮັບຜິດຊອບຕີກອງໃຫຍ່,ຄ້ອງໃຫຍ່ ແລະແຊ່ງ, ການຕີນີ້ແມ່ນຕີເປັນຍາມຢ່າງທ່ຽງຕົງ ແລະເຄັ່ງຄັດຕາມຮີດເກົ່າຄອງຫຼັງທີ່ພິຖີພິຖັນ ກອງໜ່ວຍນີ້ເປັນກອງທີ່ຂະໜາດໃຫຍ່ມີຄວາມກວ້າງ 110 ຊັງຕີແມັດ, ລວງຍາວ 175 ຊັງຕີແມັດ , ໜ້າກອງໜ່ວຍນີ້ຫຸ້ມດ້ວຍໜັງງົວ ການຕີກອງເທິງພູສີນີ້ແມ່ນປະກອບມີ 4 ແບບຄື : ການຕີກອງປະຈຳຍາມ, ການຕີກອງໃນມື້ວັນສິນ, ການຕີກອງທ້ອງ ແລະການຕີກອງໃນເວລາມີເຫດສຸກເສີນ. ເຊິ່ງໄດ້ປະຕິບັດກັນມາເປັນເວລາເຫິງນານທີ່ຕິດພັນກັບພູສີກໍເປັນປາງບຸນທີ່ປະຊາຊົນລາວ ຊາວຫຼວງພະບາງໃຫ້ການເຄົາລົບນັບຖື ແລະເອົາໃຈໃສ່ປະຕິບັດທຸກໆປີບໍ່ໄດ້ຂາດຕາມຮີດສິບສອງຄອງສິບສີ່ ແຕ່ລະເດືອນໃນໜຶ່ງປີແຕ່ລະເດືອນກໍ່ມີບຸນປະຈຳຈຶ່ງເອີ້ນວ່າ : ຮີດສິບສອງ, ຕົວຢ່າງບຸນມະຫາຊາດ ຫຼືບຸນພະເວດຕາມທຳມະດາເພິ່ນຈະຈັດຢູ່ໃນເດືອນສີ່ລາວທີ່ເຄີຍປະຕິບັດກັນມາແຕ່ບູຮານນະການຈົນກາຍເປັນປະເພນີ, ບາງທ້ອງຖິ່ນກໍຈັດຂຶ້ນເປັນບຸນປະຈຳປີ. ບຸນມະຫາຊາດ,ພະເວດຕາມທຳມະດາເພິ່ນຈະຈັດຂຶ້ນໃນມື້ອອກໃໝ່ 14 ແລະ 15 ຄ່ຳ ເດືອນສິບເອັດລາວຈະມີຄວາມແຕກຕ່າງກັບບຸນມະຫາຊາດທີ່ຈັດຂຶ້ນຢູ່ຕາມວັດທົ່ວໆໄປ, ສະເພາະຢູ່ພູສີເພິ່ນຈະຈັດເທດ (ສູດມົນ) ບູຊາທາດທີ່ເປັນຫຼັກບ້ານຫຼັກເມືອງ ແລະເທດບູຊາບັນພະບູລຸດ ຜູ້ເພິ່ນສ້າງພະທາດຈອມສີ ນອກຈາກບຸນມະຫາຊາດປະຈຳພູສີແລ້ວຍັງມີບຸນປະເພນີອື່ນໆອີກທີ່ຕິດພັນກັບພະທາດຈອມສີກໍຄື :

ຕັກບາດພູສີ ບຸນຍາຍເຂົ້າພະໝາຍເຖິງການນຳເອົາເຂົ້າຕົ້ມ, ເຂົ້າໜົມຂອງຫວານຕ່າງໆໄປວາງໄວ້ຕາມຫົວຂັ້ນໄດຂຶ້ນພູສີ ເລີ່ມແຕ່ທາງຫຼວງຂຶ້ນໄປຮອດພະທາດຈອມສີ ຈະໄດ້ຈັດຂຶ້ນໃນມື້ສັງຂານຂຶ້ນເປັນມື້ປ່ຽນສັກກະຣາດ ຫຼື ມື້ຂຶ້ນປີໃໝ່ລາວຂອງທຸກໆປີ ຫຼັງຈາກໃສ່ບາດໃຫ້ແກ່ພະສົງຢູ່ຕາມວັດຕ່າງໆສຳເລັດແລ້ວຈະມີຊາຍໜຸ່ມ ແລະ ຍິງສາວຈຳນວນບໍ່ໜ້ອຍພ້ອມກັນທະຍອຍມາວາງຂອງທານ ເພື່ອອຸທິດສ່ວນບຸນກຸສົນໄວ້ພາຍຂ້າງໜ້າໃຫ້ປະສົບແຕ່ຄວາມສຸກກາຍສະບາຍໃຈ, ໃຫ້ແກ່ເຈົ້າກຳນາຍເວນ, ບັນພະບູລຸດຜູ້ລ່ວງລັບ ແລະມິດສະຫາຍຍາດພີ່ນ້ອງໄດ້ມາຮັບເອົາຂອງທານດັ່ງກ່າວ[19].

ປັດຈຸບັນວັດທີ່ອ້ອມຂ້າງບໍລິເວນພູສີມີ 5 ວັດຄື: ວັດປ່າຮວກ, ວັດປ່າຝາງ, ວັດປ່າແຄ, ວັດສິພຸດທະບາດ ແລະ ວັດຖ້ຳພູສີ. ສ່ວນວັດທີ່ສູນຫາຍໄປແລ້ວນັ້ນມີ 8 ວັດຄື: ວັດສາວຫຼຽວ, ວັດຈອມສີ, ວັດປະທຽບ, ວັດທ້າຍພູ, ວັດຫໍຄວ່າງ, ວັດທາດເນີ້ງ, ວັດຂາມລ່ຽມ ແລະ ວັດປ່າແມວ. ເຊິ່ງປະຫວັດຄວາມເປັນມາຂອງແຕ່ລະວັດຍັງຄົງມີຢູ່ຄື:

**ວັດປ່າແຄ**

ໃນວັນທີ 8 ກໍລະກົດ ປີ 1941 ກົງກັບມື້ຂຶ້ນ 15 ຄ່ຳ ມື້ເພັງເດືອນ 8 ຄ.ສ 1941 ເຈົ້າຊີວິດ ສີສະຫວ່າງວົງ ໄດ້ມີພະຣາຊອົງການໃຫ້ໂຮມສອງວັດເຂົ້າກັນຄື: ວັດປ່າແຄ - ວັດປ່າຝາງ ໃຫ້ເປັນວັດດຽວກັນແລ້ວໄດ້ຕັ້ງຊື່ວັດວ່າ: ວັດສີພຸທບາດ (ເພາະວັດນີ້ຕັ້ງຢູ່ລະຫວ່າງຮອຍພະພຸທບາດ ແລະພະທາດຈອມສີ) ຫຼັງຈາກປະກາດພະຣາຊອົງການແລ້ວຄະນະສົງກໍໄດ້ຕັ້ງພິທີຖອດສິມ, ຝັງລູກນິມິດໂດຍແມ່ນສາທຸໃຫ່ຍສົມເດັດພະສັງຂະຣາຊ ບຸນທັນ ທັມມະຍານະມະຫາເຖຣະ ຊົງເປັນປະທານພິທີຂອງສົງຖອດສິມ, ວັດປ່າແຄໃນປະຈຸບັນແມ່ນພາກສ່ວນໜຶ່ງຂອງກຸ່ມສາມວັດເຊິ່ງໃນເມື່ອກ່ອນເປັນວັດເອກະລາດພໍໃຜພໍລາວວັດດັ່ງກ່າວນີ້ຢູ່ຄ້ອຍຕີນພູສີທາງທິດຕາເວັນອອກສ່ຽງເໜືອມີວັດປ່າແຄ, ວັດປ່າຝາງ ຫຼື ວັດຊຽງງາມ ປະກອບເຂົ້າກັນເປັນວັດສີພຸດທະບາດໃນປະຈຸບັນນີ້ ສິມຂອງວັດປ່າແຄ ປິ່ນໜ້າໄປທາງທິດຕາເວັນອອກສ່ຽງເໜືອ ຕາມປະຫວັດສາດກ່າວໄວ້ວ່າ: ວັດນີ້ສ້າງຂຶ້ນໃນປີ ຄ.ສ 1853 ໂດຍເຈົ້າຊີວິດຈັນທະລາດ,

---

[19] ເຈົ້າ ຄຳໝັ້ນ ວົງກົດລັດຕະນະ : ຕຳນານວັດກ່ຽວກັບເມືອງຫຼວງພະບາງ

ສິມຂອງວັດໄດ້ຮັບການບູລະນະສ້ອມແປງໃນປີ ຄ.ສ 1967 ໃຫ້ຢູ່ໃນສະພາບທີ່ດີຈົນຮອດປັດຈຸບັນ, ຕົວສິມເອງມີຮູບແບບການກໍ່ສ້າງເປັນສະຖາປັດຕະຍະກໍາສິມແບບວຽງຈັນ ສ່ວນຮູບແຕ້ມຝາຜະໜັງແມ່ນແຕ້ມໂດຍນັກແຕ້ມທ້ອງຖິ່ນຂອງລາວ ໃນຊຸມປີ 50 ຂອງສະຕະວັດທີ 19, ສິມຂອງວັດປ່າແຄເປັນສິມດຽວໃນປະເທດລາວທີ່ມີເອກະລັກພິເສດແຕກຕ່າງໄປຈາກສິມຂອງວັດອື່ນໆ ອັນເນື່ອງມາຈາກວັດແຫ່ງນີ້ມີສິລະປະຮູບແຕ້ມຝາຜະໜັງທີ່ປົກຄຸມເອົາຝາດ້ານໃນຂອງສິມທີ່ມີຮູບພາບເລື່ອງລາມາຍານາ (ລຶບຫາຍໄປຫຼາຍແລ້ວ) ເຊັ່ນວ່າ: ຝາຜະໜັງຫຼັງແທ່ນພະທາປະຕູຈະມີຮູບພາບສະແດງເຖິງພໍ່ຂອງພະລາມສະຫວັນນະຄົດ ເຮົາຈະສັງເກດໄດ້ຈາກຫີບສີບທີ່ຢູ່ໃນຫໍຄໍາແມ່ພະລາມ ໄດ້ໃຫ້ພະລາມນັ່ງເມືອງແທນພໍ່ ແຕ່ນາງໄກເກສອນສີ (ແມ່ນ້ອຍ)ຄັດຄ້ານ, ພະລາມຈຶ່ງໄດ້ພານາງສີດາ ແລະ ພະລັກໜີອອກຈາກເມືອງ. ຝາຜະໜັງທາງໃນເບື້ອງຊ້າຍເວລາເຂົ້າໄປຈະເປັນບັ້ນພະລາມຕາມກວາງຄໍາໃນຮູບແຕ້ມຈະສະແດງພາບທີ່ພະລັກພະລາມ ແລະນາງສີດາພັກຢູ່ໃນກາງປ່າ, ແລ້ວນາງສັມມະນະຂາ ນ້ອງສາວພະຍາຍັກທົດສະກັນໄດ້ແປງກາຍເປັນກວາງຄໍາກາຍໜ້າສາລາໄປ. ນາງສີດາຫຼົງໄຫຼແລະຢາກໄດ້ເປັນເຈົ້າຂອງກວາງຄໍາໂຕນີ້, ພະລາມຈຶ່ງໄດ້ຕາມໄປຈັບກວາງຄໍາແຕ່ຈັບບໍ່ໄດ້ຈຶ່ງໄດ້ຍິງລູກສອນໃສ່ກວາງຄໍາ, ຈຶ່ງຮ້ອງຂຶ້ນວ່າ: ພະລາມເອີຍມາຊ່ວຍພີ່ແດ່ ພະລັກກໍ່ໄດ້ຕາມໄປຊ່ວຍທົດສະກັນຈຶ່ງໄດ້ແປງກາຍເປັນລືສີມາລັກພາໂຕນາງສີດາໜີໄປ ເລີຍໄດ້ຄົບກັບພະຍາຄຸດ ແລະ ໄດ້ຕໍ່ສູ້ກັນພະຍາຄຸດໄດ້ເສຍທີເລີຍເຮັດໃຫ້ປີກຫັກ ແລະຕົກລົງມາພື້ນດິນ.

ສ່ວນຝາຜະໜັງດ້ານໃນຕອນໜຶ່ງມີຮູບພາບທີ່ສະແດງເຖິງຂຸນຊິວຫາ ຜົວຂອງນາງສັມມະນະຂາ ນ້ອງເຂີຍທົດສະກັນທີ່ແມບລິ້ນກວມເມືອງລັງກາ ແລະ ບັງພະອາທິດໄວ້ເຮັດໃຫ້ເມືອງເຕັມໄປດ້ວຍຄວາມມືດແລ້ວຕົນກໍນອນຫຼັບ, ທົດສະກັນກັບມາເຖິງເມືອງ ເຫັນເມືອງມືດທຶບ ກໍ່ໄດ້ຮ້ອງຫາຂຸນຊິວຫາກໍບໍ່ຕື່ນ ຈຶ່ງໄດ້ຄ່ວາງກົງຈັກໄປຕັດລີ້ນຂຸນຊິວຫາ ນ້ອງເຂີຍຂາດຕາຍ. ພະລາມມີນ້ອງສາມຄົນຊື່ພະລັກ, ພະສັນຕູ,ພະເພົາລົດ ຢູ່ເມືອງອາໂຍທະຍາ. ມີຕອນໜຶ່ງທີ່ສະແດງເຖິງ ຫະນຸມານພົບສຸຄີບ (ລິງໜ້າແດງ) ແລະ ພາມາຖວາຍແກ່ພະລາມ. ຕໍ່ມາໄດ້ເກີດການຕໍ່ສູ້ກັນລະຫວ່າງສຸຄີບກັບຜາລີ (ລີງໜ້າແດງ ແລະ ລີງໜ້າຂຽວ) ສຸດທ້າຍພະລາມໄດ້ຂ້າຜາລີຕາຍ ກ່ອນຈະຕາຍຜາລີໄດ້ເອີ້ນສຸຄີບນ້ອງຊາຍມາສັ່ງວ່າ: ໃຫ້ນ້ອງອາສາເຈົ້າຈົນຕົວຕາຍ ອາສານາຍຈົນຕົວເຖົ້າເທົ່າພີ່ເນີ ຈຶ່ງມີບົດກ່ອນປະພັນໄວ້ຊື່ວ່າ ຜາລີສອນນ້ອງ. ຝູງວານອນ (ລີງ)ນໍາພາໂດຍຫະນຸມານ ໄດ້ພາກັນຂົນກ້ອນຫີນຖົມມະຫາສະມຸດເພື່ອເຮັດຂົວ ໃນການເຄື່ອນທັບຂອງພະລາມໄປຕີເມືອງລັງກາ ແຕ່ບໍ່ເຕັມຈັກເທື່ອ ຫະນຸມານເລີຍຄິດສົງໄສແລະໄດ້ລົງໄປໃນມະຫາສະມຸດ ທັນໃດນັ້ນກໍ່ເຫັນນາງມັດສາ (ປາ) ທັງຫຼາຍພ້ອມກັນຄາບເອົາກ້ອນຫີນອອກໜີ ເຫັນເປັນແນວນັ້ນຫະນຸມານກໍ່ໄດ້ທໍາເລ່ກົນລໍ້ລ່ວງຮ່ວມປະເວນີກັບນາງມັດສາ ແລະສ້າງຄວາມເຂົ້າອົກເຂົ້າໃຈກັນ ໃນທີ່ສຸດຝູງວານອນ (ລີງ)ແລະ ນາງ ມັດສາ (ປາ) ຈຶ່ງໄດ້ພາກັນສ້າງຂົວຕໍ່ຈົນສໍາເລັດ. ເວົ້າລວມແລ້ວຮູບພາບຕ່າງໆຢູ່ພາຍໃນວັດປ່າແຄແຫ່ງນີ້ເປັນວັດແຫ່ງດຽວເທົ່ານັ້ນໃນບໍລິເວນພູສີທີ່ຍັງຄົງຮັກສາຄວາມສວຍງາມດ້ານວິຈິດຕະກໍາຝາຜະໜັງ. ກອງທັບຂອງພະລາມ ທີ່ເປັນຝ່າຍທໍາມະ ແລະ ກອງທັບຂອງພະຍາຍັກທົດສະກັນ ທີ່ເປັນຝ່າຍຂອງພວກອະທໍາ ຍາມໃດທໍາມະກໍຍອມຊະນະອະທໍາຢູ່ສະເໝີໄປ. ອີກປະການໜຶ່ງອັນທີ່ເຮັດໃຫ້ສິມຂອງວັດແຫ່ງນີ້ ມີຊື່ສຽງໂດ່ງດັງໄປທົ່ວໂລກ ກໍ່ຍ້ອນຮູບຄວັດຂອງບານປະຕູໄມ້ ທີ່ໄດ້ສະແດງເຖິງຮູບຄົນຜູ້ທີ່ມີຖານະຂອງຊາວຮອນລັງ ທີ່ເຂົ້າມາພົວພັນກັນທາງການຄ້າກັບອານາຈັກລາວລ້ານຊ້າງໃນສັດຕະວັດທີ XVI ແລະຖືວ່າເປັນຊາວເອີລົບຄົນທາອິດທີ່ເຂົ້າມາໃນອານາຈັກລາວລ້ານຊ້າງ ທີ່ມີຊື່ວ່າ: ທ່ານ ວັນວຸສຕົບ ແລະ ໄດ້ມອບຕູ້ໜ່ວຍໜຶ່ງທີ່ມີຮູບແຕ້ມຄົນທີ່ມີຖານະຂອງຊາວໂຮນລັງ ໃນໄລຍະນັ້ນໃຫ້ເປັນຂອງຂວັນແກ່ອານາຈັກລາວລ້ານຊ້າງໃນລາຊະການຂອງເຈົ້າ ສຸລິຍະ ວົງສາ  ເຊິ່ງໃນລາຊະການນີ້ຖືວ່າເປັນຍຸກທອງຄໍາ (ຍຸກທີ່ມີຄວາມຈະເລີນ ແລະ ຮຸ່ງເຮືອງທີ່ສຸດໃນທຸກດ້ານ)ປັດຈຸບັນຕູ້ໜ່ວຍດັ່ງກ່າວໄດ້ເກັບຮັກສາ ແລະ ວາງສະແດງໄວ້ໃນຫໍພິພິທະພັນແຫ່ງຊາດຫຼວງພະບາງ (ພະລາຊະວັງເກົ່າ). ດັ່ງນັ້ນ, ພໍມາເຖິງລາຊະການຂອງເຈົ້າຈັນທະລາດ ເພິ່ນຈຶ່ງໄດ້ຄວັດຮູບຄົນຜູ້ດີຊາວໂຮນລັງນີ້ໃສ່ປະຕູເສີມໃຫ້ວັດດັ່ງກ່າວ ເພື່ອເປັນອານຸສອນໃນສະໄໝຕໍ່ມາ ແລະສິມຂອງວັດແຫ່ງນີ້ມັກຖືກຂະໜານນາມຈາກນັກຂຽນຊາວຝຣັ່ງ ແລະນັກຂຽນຊາວຕ່າງຊາດວ່າເປັນວັດຂອງຊາວໂຮນລັງດັສ ແລະວັດແຫ່ງນີ້ເປັນວັດທີ່ຮູ້ຈັກກັນດີຂອງຊາວຕ່າງດ້າວ.

## ວັດປ່າຝາງ (ວັດຊຽງງາມ)

ວັດປ່າຝາງມີຄວາມໝາຍວ່າ ເປັນວັດທີ່ມີຕົ້ນຝາງຫຼາຍ ເຊິ່ງໃນເມື່ອກ່ອນບໍລິເວນໃກ້ກັບວັດ ຈະມີປ່າຕົ້ນຝາງເປັນຈຳນວນຫຼວງຫຼາຍ. ດັ່ງນັ້ນ, ປະຊາຊົນທັງຫຼາຍຈຶ່ງເອີ້ນວ່າວັດປ່າຝາງ ຫຼື ເປັນທີ່ຮູ້ຈັກກັນດີອີກຊື່ໜຶ່ງວ່າ: ວັດຊຽງງາມ. ວັດນີ້ປິ່ນໜ້າໄປທາງທິດຕາເວັນອອກສຽງເໜືອ ແລະ ຕັ້ງຢູ່ຕີນພູສີດ້ານເໜືອ, ຕາມປະຫວັດເລົ່າສືບຕໍ່ກັນມາວ່າ ວັດແຫ່ງນີ້ສ້າງຂຶ້ນໂດຍການອຸປະຖຳຂອງເສດຖີຄົນໜຶ່ງທີ່ມີຊື່ວ່າ: ແສນມືຊາ ເປັນຊາວບ້ານຫົວລາດ (ເປັນບ້ານທີ່ວັດແຫ່ງນີ້ຕັ້ງຢູ່) ສ້າງຂຶ້ນໃນປີ ຄ.ສ 1799 ໃນລາຊະການຂອງພະເຈົ້າອານຸລຸດ, ເສົາຂອງວັດປະດັບໄປດ້ວຍລາຍດອກພອກຄຳປິວ, ແທນພະມີຮູບພາບເລື່ອງລາມມະກຽນ ແລະ ຮູບສັດຕ່າງໆພອກດ້ວຍຄຳປິວນຳອີກ ແຕ່ວ່າລາຍດອກດວງຕ່າງໆ ແລະ ຮູບພາບພອກຄຳປິວຈຳນວນນີ້ຢູ່ໃນສະພາບທີ່ເກົ່າແກ່ຫຼາຍ ຈົນຝາກ້ຳເບື້ອງນ້ຳຂອງ ເບິ່ງບໍ່ເຫັນລາຍດອກແລ້ວ, ປ່ອງຢ້ຽມໃສ່ລູກຕິ່ງໄດ້ທາດ້ວຍສີນ້ຳຫາງ, ຝາປະຕູສິມຄວັດເປັນຮູບດອກຈັນລົງນ້ຳກ້ຽງພອກດ້ວຍຄຳປິວ.

ໃນຊ່ວງທ້າຍສັດຕະວັດທີ່ 20 ວັດແຫ່ງນີ້ໄດ້ຕົກຢູ່ໃນສະພາບຊຸດໂຊມ ໂດຍສະເພາະຊ່ວງປີ ຄ.ສ 1995 – 2000 ສິມຂອງວັດແມ່ນຢູ່ໃນສະພາບຊຸດໂຊມທີ່ສຸດຈົນບໍ່ສາມາດນຳໃຊ້ໄດ້ ເພາະຢ້ານມັນຫັກພັງລົງມາ, ຮູບແຕ້ມຕາມຝາຜະໜັງທີ່ສະແດງເຖິງບົດເລື່ອງລາມາຍານາ ຂອງລາວໃນຕອນສຳຄັນຕ່າງໆ ກໍ່ໄດ້ຖືກລຶບຫາຍໄປໝົດ. ພໍມາຮອດປີ ຄ.ສ 2001 ທາງຫ້ອງການມໍລະດົກທີ່ຂຶ້ນກັບອົງການອຸຍແນັດສະໂກ ປະຈຳແຂວງຫຼວງພະບາງ ໄດ້ທຳການບູລະນະໂດຍປັບໜ້າດິນໃຫ້ພຽງດີ ແລະ ສ້ອມແປງຕົວສິມຄືນໃໝ່ໝົດ ຈຶ່ງເຮັດໃຫ້ສິມຂອງວັດດັ່ງກ່າວຢູ່ໃນສະພາບດີຈົນຮອດປັດຈຸບັນ ແລະ ສາມາດນຳໃຊ້ໄດ້ດີຄືເກົ່າ. ວັດປ່າຝາງ ຫຼື ວັດຊຽງງາມ ໄດ້ຮວມກັນກັບວັດປ່າແຄ ແລະ ວັດພະບາດເໜືອ ທີ່ປະກອບເຂົ້າກັນເປັນວັດສີພຸດທະບາດໃນປັດຈຸບັນນີ້.

## ວັດປ່າຮວກ

ສ້າງຕັ້ງຂຶ້ນໃນປີ ຄ.ສ 1861 ໃນລາຊະການຂອງພະເຈົ້າຈັນເທບ ປະພາຄຸນ ຝາດ້ານໃນຂອງສິມ ມີຮູບພາບທີ່ສະແດງເຖິງນິຍາຍຄຳສັ່ງສອນຂອງພະພຸດທະເຈົ້າເລື່ອງໜຶ່ງທີ່ມີຊື່ວ່າ ທ້າວ ຊົມພູປະຕິ ເຊິ່ງໃນນິຍາຍເລື່ອງນີ້ເພິ່ນໄດ້ແຕ້ມຂຶ້ນມາ ເພື່ອສັ່ງສອນໃຫ້ຊາວພຸດທະສາກະນິກກະຊົນທັງຫຼາຍ ໃຫ້ປະພຶດປະຕິບັດຕົນຕາມຄອງສິນຄອງທຳເພື່ອຄວາມສຸກກາຍສະບາຍໃຈ ບໍ່ໃຫ້ປະພຶດຕົນເປັນຄົນທະເຍີທະຍານສູງ, ບໍ່ໃຫ້ເປັນຄົນອວດອົງທະນົງຕົວ, ບໍ່ໃຫ້ເປັນຄົນທີ່ມີຈິດໃຈໂມໂຫໂທໂສ ເພາະມັນຈະພາໃຫ້ຕົນເອງຕົກຕ່ຳລົງນັ້ນເອງ ດັ່ງທີ່ໄດ້ສະແດງອອກຢູ່ໃນບາງຕອນຕາມຝາຜະໜັງຂອງວັດເຊັ່ນ: ຢູ່ຝາເບື້ອງຊ້າຍໜ້າແທ່ນພະ ທີ່ສະແດງໃຫ້ເຫັນເຖິງຕອນທີ່ພະຍາຍົມພູປະຕິ ໄດ້ຍິງລູກສອນໃສ່ພະເຈົ້າ ເພາະຄິດວ່າຕົນເອງເປັນຄົນທີ່ຍິງລູກສອນເກັ່ງທີ່ສຸດບໍ່ມີໃຜມາທຽບໄດ້ ແລະ ຄິດວ່າຕົນເອງຈະເອົາຊະນະພະເຈົ້າໄດ້ເຊັ່ນກັນ ແຕ່ສຸດທ້າຍລູກສອນນັ້ນພັດກັບຄືນມາຫາພະຍາຍົມພູປະຕິດັ່ງເດີມ ແລະ ຢູ່ຝາຂ້າງຂວາຂອງແທ່ນພະໄດ້ມີພາບທີ່ສະແດງໃຫ້ເຫັນເຖິງຄວາມທຸກທໍລະມານ ແລະ ຄວາມເສຍຫາຍຢ່າງມະຫາສານ ຖ້າບໍ່ປະພຶດປະຕິບັດຕົນຕາມຫຼັກຄຳສັ່ງສອນຂອງພະພຸດທະເຈົ້າກໍ່ຈະສັງເກດໄດ້ເຫັນມີພາບທີ່ຜີໂພງກິນເຄື່ອງໃນຂອງຄົນ ແລະ ເຫັນພໍ່ແມ່ຂອງຕົນທີ່ຕາຍໄປແລ້ວນັ້ນ ຕົກນາຮົກທຸກທໍລະມານ ຮ້ອງຂໍຄວາມຊ່ວຍເຫຼືອຢູ່ ເມື່ອເຫັນຄືແນວນັ້ນພະຍາຍົມພູປະຕິຈຶ່ງຂໍອ່ອນຂໍຍອມນຳພະພຸດທະເຈົ້າ ແລ້ວກໍ່ສະຫຼະທາງໂລກເຂົ້າບວດນຳພະພຸດທະເຈົ້າ ດັ່ງທີ່ສະແດງໃນພາບທີ່ຢູ່ເທິງຝາທາງຫຼັງພະປະທານ. ໃນປັດຈຸບັນນີ້ຮູບພາບດັ່ງກ່າວຍັງຄົງສີສັນສວຍງາມດັ່ງເດີມສາມາດເບິ່ງເຫັນໄດ້ຢ່າງຊັດເຈນ.

ມາຮອດປີ ຄ.ສ 1928 ເຈົ້າສີສະຫວ່າງວົງ ໄດ້ທຳການປະຕິສັງຂອນວັດຄືນໃໝ່. ປີ ຄ.ສ 1942 ກະຊວງທຳມະການທໍສະໝາມຫຼວງ ໄດ້ນິມົນພະຢູ່ວັດນີ້ຍ້າຍໄປຢູ່ວັດອື່ນ ແລ້ວນຳໃຊ້ວັດນີ້ໃຫ້ເປັນຫໍສະມຸດຂອງພະພຸດທະສາສະໜາ ຫຼື ບ່ອນເກັບມ້ຽນໜັງສືໃບລານ. ປັດຈຸບັນນີ້ ບັນດາໜັງສືຜູກໃບລານຕ່າງໆ ໄດ້ຖືກຍ້າຍມາໄວ້ທີ່ຫໍໄຕ ຂອງວັດໃໝ່ແລ້ວ ມາໃນປີ ຄ.ສ 1995 ໄດ້ຮັບທຶນບູລະນະສ້ອມແປງວັດ ແລະຮູບແຕ້ມຝາຜະໜັງຈາກລັດຖະບານລາຊະອານາຈັກໄທ.

ນອກຈາກນີ້, ອັນທີ່ໂດດເດັ່ນຂອງວັດປ່າຮວກ ກໍ່ຄືໃນທຸກໆປີໃນມື້ອອກພັນສາ (15 ຄ່ຳ ເດືອນ 11) ຈະມີການເຮັດບຸນສະເຫຼີມສະຫຼອງພະທາດພູສີ ແລະ ບຸນພະເຫວດຢູ່ວັດແຫ່ງນີ້ກ່ອນວັດອື່ນໆ ໃນເມືອງຫຼວງພະບາງ ເພື່ອເປັນການສະເຫຼີມສະຫຼອງວັນອອກພັນສາປະວໍລະນາ, ສະເຫຼີມສະຫຼອງພະທາດຫຼັກເມືອງ ອັນມີວັດປ່າຮວກແຫ່ງນີ້ ເປັນສະຖານທີ່ ເພື່ອອໍານວຍຄວາມສະດວກໃຫ້ແກ່ຜູ້ເຖົ້າຜູ້ແກ່, ຜູ້ອາວຸໂສ ທີ່ຂຶ້ນມາຄົບງັນພາກັນຮັບສິນ ຮັບພອນໄດ້ສະດວກສະບາຍຂຶ້ນ ແລະ ພ້ອມກັນປະຕິບັດສືບທອດກັນຈົນມາເຖິງທຸກວັນນີ້.

### ວັດພະບາດເໜືອ

ວັດນີ້ຕັ້ງຢູ່ຕີນພູສີດ້ານເໜືອ, ຕັ້ງຢູ່ລະຫວ່າງກາງຂອງ ວັດປ່າແຄ ແລະ ວັດປ່າຝາງ ຖືກສ້າງຂຶ້ນໃນປີ ຄ.ສ 1385 ໃນສະໄໝການປົກຄອງຂອງ ພະເຈົ້າສາມແສນໄທໄຕພູວະນາດ ເພື່ອເປັນຄູ່ກັບຮອຍພະພຸດທະບາດເໜືອ ທີ່ຢູ່ຕີນພູສີກ້ຳເໜືອ. ຍ້ອນວັດນີ້ຖືກຊຳລຸດເສຍຫາຍຍ້ອນການເວລາ. ດັ່ງນັ້ນ, ພໍມາເຖິງປີ ຄ.ສ 1960 ຈຶ່ງມີການສ້າງອາຮາມແຫ່ງໃໝ່ໃສ່ທີ່ຕັ້ງເດີມ ເປັນເຮືອນສອງຊັ້ນທີ່ມີຮູບແບບທຳມະດາ ມີສາມຫ້ອງຍາວ ແລະ ຫ້າຫ້ອງຂວາງ ແລະ ເຊຍດຽວໂງ້ງ ຫຼັງຄາປະດັບດ້ວຍຮູບນາກທຳມະດາ. ຫໍໄຫວ້ເທິງພະພຸດທະບາດສ້າງຂຶ້ນໃນປີ ຄ.ສ ປີ 1948 ແລະ ຂັ້ນໄດທີ່ລົງໄປຫາແມ່ນ້ຳຂອງກໍ່ໄດ້ສ້າງຂຶ້ນໃນໄລຍະເວລາດຽວກັນ. ດັ່ງນັ້ນ, ວັດແຫ່ງນີ້ຈຶ່ງບໍ່ເປັນທີ່ຮູ້ຈັກຂອງຄົນທົ່ວໄປພໍເທົ່າໃດ ເນື່ອງມາຈາກສ້າງເປັນວັດທີ່ມີຫຼາຍຫ້ອງເກີນໄປເພິ່ນເລີຍປ່ຽນໃຫ້ເປັນໂຮງຮຽນປາລີ ສົງ "ໂຮງຮຽນ ສົງ" ແຕ່ທີ່ຮູ້ກັນດີ ແມ່ນຢູ່ເມືອງຫຼວງພະບາງແຫ່ງນີ້ ມີຮອຍພະບາດຢູ່ສອງແຫ່ງ ນັ້ນກໍ່ຄືວັດພະບາດເໜືອ ແລະ ວັດພະບາດໃຕ້, ວັດດັ່ງກ່າວຈຶ່ງໄດ້ຮ່ວມກັນກັບວັດປ່າຝາງ ແລະ ວັດປ່າແຄ ແລ້ວປ່ຽນຊື່ມາເປັນວັດສີພຸດທະບາດມາຈົນປັດຈຸບັນ ເພື່ອຮັກສາຊື່ວັດພະບາດເໜືອໃຫ້ຢູ່ຄູ່ກັບຊາວເມືອງຕະຫຼອດໄປນັ້ນເອງ (ປັດຈຸບັນນີ້ວັດດັ່ງກ່າວໄດ້ກາຍເປັນໂຮງຮຽນມັດທະຍົມສົງໄປແລ້ວ).

### ວັດທັມໂມທະຍາລາມ (ວັດຖ້ຳເຖົ່າ ຫຼື ວັດຖ້ຳພູສີ)

ວັດນີ້ຕັ້ງຢູ່ທາງເຈີ້ຍພູທາງທິດໃຕ້ຂອງພູສີຝາກເບື້ອງນ້ຳຄານ ພູມສັນຖານເຂດຕັ້ງວັດນີ້ ເປັນເຂດແຜ່ນດ່ານຫີນຊາຍທີ່ມີຄວາມຊັນ 45 ອົງສາປະກອບກັນເປັນຖ້ຳຕາມເລື່ອງເລົ່າສືບຕໍ່ກັນມາວ່າມີພະລືສີໄດ້ເຂົ້າມາຈຳສິນພາວະນາຢູ່ໃນຖ້ຳແຫ່ງນີ້ຕໍ່ມາໃນປີ ຄ.ສ ປີ 1956 ພະມະຫາຈັນເພັງເພັດເມືອງຊວາໄດ້ທຳການປຸກສ້າງທີ່ພັກຂອງພະສົງ - ສຳມະເນນ ໃກ້ໆກັບຖ້ຳແຫ່ງນີ້ ຊາວເມືອງຫຼວງພະບາງຈຶ່ງຮຽກວັດນີ້ວ່າ: ວັດຖ້ຳພະລືສີ ແລ້ວ ພ້ຽນມາເປັນວັດຖ້ຳພູສີຈົນມາເຖິງປະຈຸບັນ. ພະພຸດທະຮູບໃນວັດແຫ່ງນີ້ບໍ່ຄືກັນກັບພະທີ່ພົບເຫັນທົ່ວໄປໃນເມືອງຫຼວງພະບາງ ພາຍໃນຖ້ຳນ້ອຍໆແຫ່ງນີ້ເຮົາຈະເຫັນຮູບປັ້ນພະລືສີທີ່ນັ່ງຈຳສິນຢູ່ໃນຖ້ຳ ແລະ ນີ້ ກໍ່ເປັນທີ່ມາຂອງຊື່ວັດຖ້ຳລືສີກ້ອງວັດຖ້ຳພູສີຍັງມີຮອຍພະພຸດທະບາດ ແລະ ຄວາມສຳຄັນຂອງຕຳນານພະຍານາກໃນພູສີ ຮອຍພະພຸດທະບາດແມ່ນຮອຍຕີນຂອງພະເຈົ້າທີ່ຕັ້ງຢູ່ທາງທິດເໜືອຂອງວັດຖ້ຳເທົ່າ, ຮອຍພະພຸດທະບາດນີ້ເປັນຮອຍຂະໜາດໃຫ່ຍມີຄວາມຍາວແທກໄດ້ 190 ຊັງຕີແມັດ, ບ່ອນກວ້າງແທກໄດ້ 125 ຊັງຕີແມັດ, ບ່ອນທີ່ແຄບທີ່ສຸດແທກໄດ້ 55 ຊັງຕີແມັດ, ເລິກ 80 ຊັງຕີແມັດ ແລະ ມີຄວາມຊັນໃນມູມ 45 ອົງສາ, ນອກຈາກນີ້ແລ້ວຍັງມີຮູອັນໜຶ່ງຢູ່ທາງສົ້ນພະພຸດທະບາດມີຄວາມຍາວປະມານ 20 ຊັງຕີແມັດທີ່ຊາວເມືອງຕ່າງກໍ່ເຊື່ອຖືວ່າເປັນຮູພະຍານາກທີ່ໃຊ້ທຽວຂຶ້ນທຽວລົງລະຫວ່າງພູສີຫາເມືອງບາດານ ເລົ່າກັນວ່າຢູ່ພາຍໃນຮອຍພະບາດນີ້ມີຮູອັນນີ້ທີ່ຍາວປ່ອງໃສ່ແມ່ນ້ຳຂອງປະຊາຊົນໄດ້ລ່ອງເອົາໝາກນາວ ແລະ ໝາກພ້າວປ່ອນລົງຮູດັ່ງກ່າວປະກົດວ່າມັນໄປຕົກລົງແມ່ນ້ຳຂອງຢູ່ບ້ານພະບາດຄົນທັງຫຼາຍຈຶ່ງໄດ້ສັນນິຖານວ່າຮູນີ້ອາດແມ່ນຮູພະຍານາກ.[20] [21] [22]

---

[20] ຜູ້ເຖົ້າຜູ້ແກ່ອາວຸດໂສພາຍໃນບໍລິເວນອ້ອມຮອບຕີນພູສີຈຳນວນໜຶ່ງ

[21] ທ່ານ ລຸງ ຈານທອງພັນ ເຖົ້າແກ່ແນວໂຮມບ້ານຂາມຢ່ອງ

[22] ເຈົ້າຄຳໝັ້ນ ວົງກົດລັດຕະນະ ຕຳນານວັດເມືອງຫຼວງພະບາງ :

## 14. ຫໍພິພິທະພັນແຫ່ງຊາດຫຼວງພະບາງ (ພະລາດຊະວັງເກົ່າ ຫຼວງພະບາງ).




ຫໍພິພິທະພັນແຫ່ງຊາດຫຼວງພະບາງ ຫຼືພະຣາຊວັງເກົ່າ ມີເນື້ອທີ່ 37,000 ຕາແມັດ, ຖືກສ້າງຂຶ້ນໃນປີ ຄ.ສ 1904 ແລະ ສຳເລັດໃນ ຄ.ສ 1909, ໃນຣາຊະການຂອງ ເຈົ້າມະຫາຊີວິດ ສີສະຫວ່າງວົງ. ການອອກແບບອາຄານນີ້ ແມ່ນສະຖາປະນິກຄົນຝຣັ່ງເສດ ຊື່ລາວທອນ ແລະ ມີລັກສະນະປະສົມປະສານ ລະຫວ່າງ ສິລະປະລາວ ແລະ ຝຣັ່ງເສດ, ວັດສະດຸນຳໃຊ້ເຂົ້າໃນການກໍ່ສ້າງສ່ວນໃຫຍ່ແມ່ນວັດສະດຸທີ່ສາມາດຫາໄດ້ໃນທ້ອງຖິ່ນ ໂດຍແມ່ນ ລັດຖະບານ ຝຣັ່ງເສດ ສ້າງຖວາຍໃຫ້ເປັນຂອງຂວັນແກ່ເຈົ້າຊີວິດ ແຫ່ງຣາຊອາຈັກລາວລ້ານຊ້າງ, ໃນຣາຊການ ເຈົ້າມະຫາຊີວິດ ສີສະຫວ່າງວົງ ເພື່ອນຳໃຊ້ເຂົ້າເປັນບ່ອນປະທັບ. ມາເຖິງປີ ຄ.ສ 1930 ຈຶ່ງໄດ້ປັບປຸງດັດແປງຍອດຊໍ່ຟ້າຄືນໃໝ່ ເພື່ອໃຫ້ເປັນແບບສິລະປະວັດທະນະທຳລາວຫຼວງພະບາງ.

ຈຸດເດັ່ນຂອງອາຄານແມ່ນ ສີໜ້າ ແລະ ຍອດຊໍ່ຟ້າ, ສີໜ້າຕົກແຕ່ງດ້ວຍຊ້າງສາມຫົວກັ້ງຮົ່ມຂາວ ແລະ ພະຍານາກ 15 ຕະກຸນ (ຊ້າງສາມຫົວນີ້ ແມ່ນຊ້າງຂອງພະອິນ ກໍ່ຄືພາຫະນະຂອງພະອິນ ຕອນພະອິນຂີ່ຊ້າງລົງມາໂລກມະນຸດ) ສ່ວນພະຍານາກ 15 ຕະກຸນນີ້ (ຈະກ່າວເຖິງພະຣັດສີສອງພີ່ນ້ອງມາປັກຫຼັກໝາຍເມືອງຢູ່ທີ່ພູຊວງ, ກໍຄືພູສີໃນປະຈຸບັນ ແລະ ພະຣັດສີໄດ້ຕັ້ງຊື່ເມືອງນີ້ວ່າ: ເມືອງຊຽງດົງ ຊຽງທອງ ສີສັດຕະນາກ (ເມືອງຊວາ) ພາຍຫຼັງປັກຫຼັກໝາຍເມືອງ ແລະ ຕັ້ງຊື່ ເມືອງເປັນອັນເສັດສິ້ນທຸກສິ່ງບໍລິບູນແລ້ວ, ພະຣັດສີສອງພີ່ນ້ອງ ຈິ່ງໄດ້ພາກັນມານັ່ງຢູ່ປາກແມ່ນ້ຳຄານກ້ອງຕົ້ນທອງ ພະຣັດສີ ຈິ່ງເອີ້ນຮຽກ ທ້າວ ທັງໝູ່ນາຄາມາຊຸມນຸມທຸກຕົວໃຫ້ຄົບຖ້ວນ.

ເຈົ້າຊີວິດ ຂອງອານາຈັກລາວຫຼວງພະບາງ ລ້ານຊ້າງຮົ່ມຂາວ, ລວມທັງໝົດມີ 63 ພະອົງ. ເຈົ້າຊີວິດອົງທຳອິດແມ່ນຂຸນລໍຣາຊາທິຣາດ, ພະຍາເຈົ້າຟ້າງຸ່ມແມ່ນເຈົ້າຊີວິດອົງທີ່ 23 ແລະ ເຈົ້າຊີວິດ ສີສະວ່າງ ວັດທະນາ ແມ່ນເຈົ້າຊີວິດສຸດທ້າຍ, ເມື່ອປີ ຄ.ສ 1960 ເຖິງ 1975 ແຕ່ຍັງບໍ່ມີພິທີລາຊາພິເສກ, ເພາະວ່າສະພາບການເມືອງໃນຣາຊອານາຈັກລາວ ໃນເວລານັ້ນບໍ່ມີຄວາມສະຫງົບ, ຢູ່ໃນໄລຍະນີ້ ຣາຊອານາຈັກລາວເປັນຫົວເມືອງຂຶ້ນຂອງສະຫະລັດອາເມລິກາ. ພະຣາຊະວັງ ແຫ່ງນີ້ ໄດ້ມີກະສັດປະທັບຢູ່ສອງ ພະອົງຄື: ເຈົ້າມະຫາຊີວິດ ສີສະຫວ່າງ ວົງ ໃນປີ 1905 ຫາ 1959 ແລະ ເຈົ້າຊີວິດສີສະຫວ່າງ ວັດທະນາໃນປີ 1959 ຫາ 1975. ພາຍຫຼັງເຈົ້າມະຫາຊີວິດສີສະຫວ່າງ ວົງ ສິ້ນພຣະຊົນ ໃນປີ ຄ.ສ 1959, ເຈົ້າຊີວິດສີສະຫວ່າງ ວັດທະນາ ຣາຊໂອລົດ ອົງທີ່ໜຶ່ງໄດ້ສືບຕໍ່ຂຶ້ນຄອງຣາຊສົມບັດ ປົກຄອງແຜນດິນອານາຈັກລາວລ້ານຊ້າງຮົ່ມຂາວຕາມ ຣາຊປະເພນີ ຈົນເຖິງປີ ຄ.ສ 1975.

ພາຍຫຼັງປະເທດຊາດໄດ້ຮັບການສະຖາປະນາເປັນປະເທດ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975, ເຈົ້າຊີວິດສີສະຫວ່າງວັດທະນາ ຈິ່ງໄດ້ສະຫຼະບັນລັງ ແລະ ມອບພຣະຣາຊະວັງນີ້ໃຫ້ແກ່ລັດຖະບານລາວ. ລັດຖະບານ ຈິ່ງໄດ້ປັບປຸງປ່ຽນແປງພະຣາຊະວັງແຫ່ງນີ້ມາເປັນ ຫໍພິພິທະພັນແຫ່ງຊາດແຕ່ວັນທີ 13 ມີນາ 1976 ເປັນຕົ້ນມາຈົນເຖິງປັດຈຸບັນ.

**ຫໍພະບາງ**

ຫໍພະບາງ ສ້າງຂຶ້ນໃນປີ ຄ.ສ 1969, ໃນຣາຊການຂອງເຈົ້າມາຫາຊີວິດ ສີສະຫວ່າງ ວັດທະນາ, ອອກແບບໂດຍ ທ່ານ ມະນີວົງ ຂັດຕິຍະຣາດ ທີ່ເປັນນາຍຊ່າງຊາວຫຼວງພະບາງ ທີ່ມີການສ້າງໂຄງສ້າງເປັນແບບ ເອກະລັກສີລະປະສະກຸນຊ່າງລາວ ຫຼວງພະບາງໂດຍແທ້ ແລະ ການກໍ່ສ້າງໃນຂະນະນັ້ນ ຍັງບໍ່ທັນສຳເລັດເປັນພຽງກໍ່ສ້າງຮາກຖານ ແລະ ເສົາ ຈຳນວນໜຶ່ງເທົ່ານັ້ນ ພາຍຫຼັງໄດ້ປັບປຸງປ່ຽນແປງພະຣາຊວັງມາເປັນຫໍພິພິທະພັນແຫ່ງຊາດຫຼວງພະບາງ.

**ພິທີອັງເຊີນພຣະບາງລົງຢູ່ທີ່ວັດໃຫ່ມສຸວັນພູມມາຣາມ.**

ໃນແຕ່ລະທຸກໆປີໃນງານເທດສະການບຸນປະເພນີປີໃໝ່ລາວຂອງບຸນເດືອນ 5 ຕຸດສົງການ, ປະຊາຊົນຊາວເມືອງຫຼວງພະບາງ ໄດ້ປະກອບພິທີອັງເຊີນ ອົງພະບາງອອກຈາກຫໍພິພິທະພັນແຫ່ງຊາດພຣະຣາຊວັງຫຼວງພະບາງໄປປະດິດສະຖານຢູ່ທີ່ ວັດໃໝ່ ສຸວັນນະພູມມາຣາມ, ເພື່ອໃຫ້ຊາວພຸດທະສາສະນິກະຊົນ ສະກະລະບູຊາຕາມຮີດຄອງປະເພນີ ທັງພາຍໃນ ແລະ ຕ່າງປະເທດໄດ້ຫົດສົງອົງພຣະບາງມີການຄົບງັນຕາມປະເພນີເປັນເວລາສີວັນ ສາມຄືນ, ຈຶ່ງໄດ້ອັງເຊີນ ອົງພຣະບາງກັບຄືນສູ່ ຫໍພິພິທະພັນແຫ່ງຊາດຫຼວງພະບາງ ແລະ ທຳພິທີທາງສາດສະໜາສຳເລັດແລ້ວເປັນອັນວ່າຈົບພິທີ.

**ພິທີແຫ່ພຣະບາງໄດ້ມີຂະບວນແຫ່ປະກອບມີ:**

1) ເຈົ້າໜ້າທີ່ເປີດທາງ, 2) ຊາວໜຸ່ມຈັບທຸງຊາດ ແລະ ທຸງສາດສະໜາ, 3) ຂະບວນເສບດົນຕີພື້ນເມືອງ, 4) ຂະບວນ ພາມທັງແປດ, 5) ຂະບວນເປົ່າຫອຍສັງ ແລະ ຕີລະຄັງ, 6) ຂະບວນພຣະສົງສຳມະເນນ, 7) ຂະບວນການນຸ່ງຜ້າຕ່ຽວຈັບໝາກເບີງ, 8) ຣາດຊລົດພຣະບາງ, 9) ພຣະເຖລານຸເຖລະທັງເຈັດ, 10) ເຖົ້າແກ່ຜູ້ຊົງຄຸນວຸດທິ, 11) ຂະບວນເມຍການນຳ, ພໍ່ແມ່ປະຊາຊົນພໍ່ຄ້າຊາວຂ້າຍ ພ້ອມທັງຂະບວນມ່ວນຊື່ນ, 12) ຊາວໜຸ່ມຈັບທຽນອາດນຸ່ງຊຸດສີຂຽວ (ຢູ່ຂ້າງພຣະສົງສຳມະເນມ ຟາກລະ 6 ຄົນ, 13) ຊາວໜຸ່ມກອງຕະໂພນ ຫຼື ຕີກອງໄຊ ນຸ່ງຊຸດສີແດງ (ຢູ່ຂ້າງການນຳນຸ່ງຜ້າຕ່ຽວ, ຣາຊຣົດພຣະບາງ ຟາກລະ 6 ຄົນ).

### ຄວາມເປັນມາຂອງໂຮງລະຄອນ

ລະຄອນເລື່ອງລາມາຍະນະຖືກນຳເຂົ້າມາສູ່ດິນແດນລ້ານຊ້າງ ໂດຍພຸດທະມາມະກະ ໄດ້ຫຼາຍສັດຕະວັດຜ່ານມາ. ຊຶ່ງມີເນື້ອໃນສັງລວມໄດ້ວ່າ: ພະລັກພະລາມ (ຕົວແທນແຫ່ງຄວາມຍຸດຕິທຳ) ຕິດຕາມກອບກູ້ເອົານາງສີດາ ຊຶ່ງຖືກຍັກທິດສະກັນ (ຕົວແທນແຫ່ງອະທຳ) ລາຊະແຫ່ງກຸງລັງກາລັກພາຕົວໄປ.

ລະຄອນເລື່ອງນີ້ໄດ້ອອກສະແດງຮັບໃຊ້ປະຊາຊົນບັນດາເຜົ່າ ໃນໂອກາດບຸນສຳຄັນຕ່າງໆ ໂດຍສະເພາະບຸນປີໃໝ່ລາວຂອງທຸກໆປີ, ບາງໄລຍະທີ່ບ້ານເມືອງ ພົບຂໍ້ຍຸ້ງຍາກກໍ່ໄດ້ຢຸດເຊົາໄປໄລຍະໜຶ່ງ ດ້ວຍສາເຫດວ່າ ລະຄອນພະລັກພະລາມນີ້ແມ່ນຂອງຊົນຊັ້ນກຳມະກອນເປັນຜູ້ຮຽບຮຽງ ຜະລິດຄິດແຕ່ງຂຶ້ນມາ, ພັກ ແລະ ລັດຖະບານຈຶ່ງໄດ້ຟື້ນຟູຄືນ, ເພື່ອສິດສອນໃຫ້ແກ່ຊາວໜຸ່ມ, ຍາວວະຊົນຜູ້ສືບທອດສືບຕໍ່ສະແດງຄືນ. ນັບຕັ້ງແຕ່ປີ 1993 ເປັນຕົ້ນມາ ແລະ ນຳອອກຮັບໃຊ້ມວນຊົນ, ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດຕະຫຼອດມາຈົນປັດຈຸບັນ.

ນອກນັ້ນ, ໂຮງລະຄອນຍັງໄດ້ຮັບທຶນສະໜັບໜູນອູ້ມຊູ ຈາກບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມຕ່າງໆ ເປັນຕົ້ນແມ່ນ: ການນຳ ພັກ - ລັດ, ຫ້ອງການບັນດາປະເທດທີ່ໃຊ້ພາສາຝຣັ່ງປະຈຳ ສປປ ລາວ ໃນປີ 2000, ສະຖາບັນບັນດາເຜົ່າແຫ່ງສະຫະພັນເຢຍລະມັນໃນປີ 2001 ໄດ້ຮັບທຶນຂອງໂຮງລະຄອນປະເທດສິງກະໂປ, ປີ 2002 – 2003  ແລະ ກອງທຶນພັດທະນາສັງຄົມຂອງສະຖານເອກອັກຄະລາດທູດຝຣັ່ງ ປະຈຳ ສປປ ລາວ ໃນປີ 2011 -2013.

## 15. ວັດວິຊຸນ, ພະທາດໝາກໂມ ແລະ ວັດອາຮາມ.




ວັດວິຊຸນນະລາຊ[23] ເປັນວັດໜຶ່ງທີ່ມີຄວາມເກົ່າແກ່ໃນຫຼວງພະບາງ. ສ້າງຂຶ້ນປີ ຄ.ສ 1512 ໃນລາຊະການຂອງພະເຈົ້າຊີວິດ ວິຊຸນນະລາຊ (ທ້າວ ພູໄພ) ຊຶ່ງສ້າງໃສ່ນາໄຮ່ດຽວ ຫຼື ນາເຂົ້າຈ້າວ ກໍຄືດິນແດນຂອງວັດວິຊຸນໃນປະຈຸບັນ ໄດ້ຕັ້ງຊື່ຕາມພະນາມຂອງພະອົງ. ໂດຍອີງຕາມຕຳນານວັດເມືອງຫຼວງພະບາງໄດ້ບັນທຶກໄວ້: ເພິ່ນໄດ້ນຳໃຊ້ໄມ້ເຂົ້າໃນການປຸກສ້າງວັດວິຊຸນຫຼາຍກວ່າ 4,000 ຕົ້ນ. ໂຄງຫຼັງຄາມີສອງຊັ້ນ, ເປັນຊິງສິລະປະແບບຊາວພວນ, ມີ 12 ເສົາ, ລວງສູງ 30 ແມັດ. ໃນຂອບເຂດວັດວິຊຸນມີສະຖາປັດຕິຍະກຳທີ່ລະອຽດອ່ອນທີ່ຊົງຄຸນຄ່າ ແລະ ງົດງາມ. ທິດຕາເວັນອອກສ່ຽງເໜືອມີທາດປະທຸມ (ດອກບົວ) 1 ລູກ, ຊາວບ້ານຮຽກທາດໝາກໂມເພາະຄືມາກໂມຕັດເຄິ່ງເຊິ່ງແມ່ນພະອັກຄະມະເຫສີເຈົ້າ ວິຊຸນນະລາຊ ຊົງສ້າງກວມໜອງຊິວ ໃນຮູບແບບຂອງຊາວລັງກາວີ. ທິດເໜືອມີປະຕູໂຄ່ງ, ຫໍກອງ, ຫໍແຈກ. ທິດຕາເວັນຕົກມີກະດີເຈົ້າອະທິການວັດ. ທິດຕາເວັນຕົກສ່ຽງໃຕ້ມີກຸດຕິພະສົງສຳມະເນນ. ອົງພະບາງເປັນພະພຸດທະຮູບອົງໜຶ່ງທີ່ຊາວພຸດສານິກກະຊົນໃຫ້ຄວາມເຫຼື້ອມໃສສັດທາອັນສູງສົ່ງໃນປະເທດລາວ, ເຄີຍປະດິດສະຖານຢູ່ທີ່ວັດແຫ່ງນີ້ 2 ຄັ້ງ ໃນປີ ຄ.ສ 1513 – 1715 ແລະ ປີ ຄ.ສ 1839 – 1894.

ໃນປີ ຄ. ສ 1887 ມີພວກຫໍ້ທຸງດຳໄດ້ເຜົາຜານ[24] ແລະ ປຸ້ນສະດົມຕົວເມືອງຫຼວງພະບາງ ແລະ ວັດແຫ່ງນີ້ກໍໄດ້ຖືກຈູດເຜົາເຊັ່ນດຽວກັນ ໃນເຫດການດັ່ງກ່າວບັນດາພະພຸດທະຮູບນ້ອຍ - ໃຫຍ່ທີ່ຊົງຄຸນຄ່າໄດ້ສູນຫາຍໄປຈຳນວນບໍ່ໜ້ອຍ. ເຖິງປີ ຄ.ສ 1896 ວັດວິຊຸນນະລາຊໄດ້ຮັບການບູລະນະປະຕິສັງຂອນຄືນໃໝ່ ໂດຍເຈົ້າຊີວິດຄຳສຸກ ສັກກະລິນ. ມາເຖິງປີ ຄ.ສ 1993 ແລະ ປີ ຄ.ສ 2016 ໄດ້ຮັບການບູລະນະປະຕິສັງຂອນໂຄງສ້າງຫຼັງຄາຄືນໂດຍພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງ

---

[23] ຕຳນານວັດເມືອງຫຼວງພະບາງ, ເຈົ້າຄຳໝັ້ນ ວົງກົດຣັດຕະນະ ປີ ຄ.ສ 1964

[24] ພົງສາວະດານລາວ, ມະຫາສີລາ ວີຣະວົງສ໌,ປີ ຄ.ສ 1966

ທ່ງອປະຈຳແຂວງ, ການກໍ່ສ້າງສິມແມ່ນກໍ່ດ້ວຍດິນຈີ່, ມຸງດ້ວຍດິນຂໍ, ຝາດ້ານໃນລົງນ້ຳກ້ຽງຟອກຄຳປີວ.

ສິມຂອງວັດວິຊຸນນະລາຊ ແມ່ນກໍ່ດ້ວຍດິນຈີ່, ມີສະຖາປັດຕີຍະກຳທີ່ລະອຽດອ່ອນ ແລະ ສວຍງາມ ມີສຽນນາກປະດັບຄຸຍປ້ານລົມ, ເທິງຫຼັງຄາມີຍອດຊໍ່ຟ້າປະດັບດ້ວຍເສດຕະສັດ 17 ລູກ (ສັດຕະບໍລະພາ) ແລະ ດອກກະຈັງດອກບັວແລນ, ຫຼັງຄາມຸງດ້ວຍດິນຂໍ. ໂຄງສ້າງປະຕູຂອງສິມທີ່ເຮັດດ້ວຍໄມ້ ຍັງແມ່ນອັນເກົ່າທີ່ຖືກຮັກສາໄວ້ ແຕ່ຕົ້ນສັດຕະວັດທີ 16, ບານປະຕູໃຫຍ່ແມ່ນຮູບຄວັດແກະສະຫຼັກລົງສີຟອກຄຳມີຄວາມປານີດວິຈິດບັນຈົງ ທີ່ສະແດງໃຫ້ເຫັນໃນຍຸກຣິນດູ.ມຸກດ້ານໜ້າເບື້ອງທາງເຂົ້າແມ່ນແຍກອອກເປັນຊັ້ນໆ, ຄ້ຳດ້ວຍເສົາໃຫຍ່ສີຂາວ, ລູກຕິ່ງທີ່ປະດັບປ່ອງຢ້ຽມທີ່ເຮັດດ້ວຍໄມ້ ມີລັກສະນະຄ້າຍຄືຜາສາດຫີນສະໄໝຂອມຄື: ອັງກໍວັດ ແລະ ວັດພູຈຳປາສັກທີ່ຢູ່ພາກໃຕ້ຂອງລາວ. ດ້ານໃນມີພະປະທານອົງຫຼວງປະດິດສະຖານຢູ່ ມີໜ້າຕັກກວ້າງ 5 ແມັດ 64 ຊັງຕີແມັດ. ເຊິ່ງເປັນພະພຸດທະຮູບອົງຫຼວງທີ່ໃຫຍ່ກວ່າທຸກໆອົງທີ່ປະດິດສະຖານຢູ່ວັດຂອງຫຼວງພະບາງ. ສິມແຫ່ງນີ້ໃນເມື່ອກ່ອນເຄີຍເປັນພິພິດຕະພັນສາສະໜາສະຖານແຫ່ງຊາດກໍວ່າໄດ້ ເພາະມີບູຮານວັດຖຸ, ສີລະປະວັດຖຸບັນຈຸໄວ້ເປັນຈຳນວນຫຼວງຫຼາຍເຊັ່ນ: ພະພຸດທະຮູບທີ່ຟອກດ້ວຍຄຳປີວ, ທີ່ເຮັດດ້ວຍທອງສຳລິດ, ໄມ້ ແລະ ປະທາຍປູນ ທີ່ມີອາຍຸຫຼາຍກວ່າ 400 ປີ ແລະ ຫີນສີລາຈາຣຶກໃນສັດຕະວັດທີ 15 ອີກດ້ວຍ.[25]

➢ **ທາດປະທຸມ**

ຕາມຕຳນານໄດ້ບັນທຶກໄວ້ວ່າ: ທາດປະທຸມ (ທາດດອກບົວຫຼວງ) ສ້າງຂຶ້ນໃນປີ ຄ.ສ 1514 ໂດຍນາງ ພັນຕິຊຽງ ພະອັກຄະມະເຫສີເຈົ້າວິຊຸນນະລາຊ ຊົງສ້າງກວມໜອງຊົວໜ້າວັດວິຊຸນ ທາດປະທຸມສ້າງຂຶ້ນໃນຮູບແບບຊາວລັງກາວີ ມີລວງສູງ 35 ແມັດ, ເຊິ່ງຮູບຊົງກົມຕັດຊື່ ນີ້ເປັນລັກສະນະພິເສດແຫ່ງດຽວ ເພາະບໍ່ເຄີຍພົບເຫັນຢູ່ບ່ອນໃດເລີຍໃນປະເທດລາວ. ນອກນັ້ນ ທາດປະທຸມຍັງມີອີກຊື່ໜຶ່ງວ່າ: ທາດໝາກໂມ ເພາະສ່ວນເທິງເປັນຮູບວົງກົມຕັດເຄິ່ງຄ້າຍຄືໜ່ວຍໝາກໂມ ເຊິ່ງຕັ້ງຢູ່ເບື້ອງໜ້າຂອງສິມເປັນຮູບຈັດຕຸລັດ ແລະ ອ້ອມຮອບທັງ 4 ດ້ານ, ຈອມທາດແມ່ນເປັນຊົງຮູບເກດທຸມມາລາ ດອກນັ້ນຮຽກວ່າ: ຫຸ່ນເບື້ອງແບບແປວໄຟ ຄືເກດພະພຸດທະຮູບລາວລ້ານຊ້າງຕອນຕົ້ນ. ເມື່ອທາດປະທຸມໄດ້ເກື່ອນເພພັງທະລາຍລົງ ປີ ຄ.ສ 1914 ເຈົ້າກົມຂຸນດວງຈັນ ແລະ ຊາວບ້ານກໍໄດ້ພົບເຫັນສິ່ງຂອງຮູບປະພັນທີ່ລ້ຳຄາຢ່າງຫຼວງຫຼາຍ ເປັນຕົ້ນແມ່ນພະພຸດທະຮູບທີ່ເຮັດດ້ວຍໄມ້, ທອງສຳລິດ, ເງິນ ແລະ ຄຳ. ແກ້ວແຫວນອັນປະເສີດແປກປະຫຼາດທີ່ຖືກຝັງໄວ້ແຕ່ສັດຕະວັດ ທີ 15 - 16. ປີ ຄ.ສ 1932 ເຈົ້າຂຸນດວງຈັນພ້ອມດ້ວຍເຈົ້ານາຍຂ້າລາຊະການ ແລະ ປະຊາຊົນໄດ້ອອກເງິນບູຊາເພື່ອບູລະນະປະຕິສັງຂອນທາດລູກນີ້. ພ້ອມໄດ້ນຳເອົາສິ່ງຂອງບາງຈຳນວນທີ່ຖືກຄົ້ນພົບນັ້ນເກັບຮັກສາໄວ້ຄືນໃນທາດ ແລະ ອີກຈຳນວນທີ່ຍັງເຫຼືອແມ່ນນຳໄປເກັບຮັກສາໄວ້ທີ່ ຫໍພິພິດຕະພັນແຫ່ງຊາດຫຼວງພະບາງຈົນເຖິງປະຈຸບັນ.[26]

➢ **ວັດອາຮາມ**

ວັດອາຮາມສ້າງຂຶ້ນ ໃນປີ ຈສ 1184 ໂດຍ ສົມເດັດພະເຈົ້າມັງທາຕຸຣາດ ພະອົງໄດ້ສ້າງວັດອາຮາມຂຶ້ນໃສ່ບ່ອນທີ່ ພະຍາຟ້າງຸ່ມຕັ້ງຫໍເສື້ອເມືອງ (ຫໍປູ່ເຍີຍ່າເຍີ ຫຼື ຫໍເທວະດາຫຼວງ). ມີຮູບປັ້ນທົດສະກັນຢືນທຳທ່າຢູ່ໜ້າວັດເບື້ອງລຸ່ມ ຮູບພານຣິນທໍລະລົງເພືອກທະນຸມານຢືນທຳທ່າຢູ່ໜ້າວັດເບື້ອງເທິງ. ໃນສະໄໝພະຍາຟ້າງຸ່ມ ບ້ານອາຮາມເອີ້ນວ່າ: ບ້ານຫໍເສື້ອ ເມືອງ ເຊິ່ງແມ່ນປະຊາຊົນໄທບ້ານເປັນຂ້ອຍຫໍ, ຫຼັງຈາກທີ່ສ້າງວັດອາຮາມຂຶ້ນແລ້ວ ບ້ານຫໍເສື້ອເມືອງເລີຍປ່ຽນຊື່ມາເປັນບ້ານອາ ຮາມຕາມຊື່ວັດຈົນເຖິງປະຈຸບັນນີ້ ຄຳວ່າ: “ອາຮາມ” ມີຄວາມໝາຍວ່າ “ສຳຮານເບີກບານໃຈ”.

ສົມເດັດພະເຈົ້າມັງທາຕຸຣາດ ໄດ້ສະຫວັນນະຄົດລົງໃນປີ ຈສ 1198 ລວມພັນສາໄດ້ 61 ພັນສາ ແລະ ຄອງຣາຊະສົມ ບັດເປັນເວລາ 20 ປີ ທີ່ ຫໍຄຳໜອງບົວ, ຊາວເມືອງຈຶ່ງໄດ້ຖວາຍພະນາມໃຫ້ວ່າ ເຈົ້າມະຫາຊີວິດບໍຣົມມະຣິດ ເພາະວ່າ ຣາດຊະຣິດທີ່ຕ່າງພະບໍຣົມມະສົບຊ່າງມີຄວາມງົດງາມຍິ່ງໜັກ.

ຕໍ່ມາ ໃນປີ ຈສ 1237, ພະຍາພິໄຊ (ນາຍດິສ) ແມ່ທັບໄທ ແລະ ເຈົ້າຣາດຊະວົງສຸວັນນະພົມມາແມ່ທັບລາວ ໄດ້ພາກັນຍົກທັບຂຶ້ນໄປຕີຫໍເກີດຳແຕກໜີຈາກ

[25] ພື້ນຂຸນບູຣົມຣາຊາທິຣາດ, ກົມວັນນະຄະດີ, ປີ ຄ.ສ 1967.

[26] ປະຫວັດສາດສິລະປະ ແລະ ສະຖາປັດຕະຍະກຳສິນລາວ ເຫຼັ້ມ I ຄ.ສ 1991. ເຫຼັ້ມ II, ,ປີ ຄ.ສ 1995 ບຸນເຮັງ ບົວສີແສງປະເສີດ.

ເມືອງພວນ ຝ່າຍແມ່ທັບໄທໄດ້ກວດເອົາຄົວພວນລົງມາເມືອງຫຼວງພະບາງ ວ່າຈະເອົາໄປບາງກອກ ເວລານັ້ນໂຣກອະຫິວາລະບາດຂຶ້ນໃນເມືອງພວນເຮັດໃຫ້ຄົນລົ້ມຕາຍຈຳນວນຫຼວງຫຼາຍ ພະຊາບຸນມີ ຫົວຄູວັດເພຍວັດເມືອງຊຽງຂວາງກໍ່ໄດ້ເດີນທາງມາພ້ອມກອງທັບລາວ ພໍມາເຖິງເມືອງຫຼວງພະບາງ ເຈົ້າຣາດຊະວົງໄດ້ນິມົນໃຫ້ ພະຊາບຸນມີໄປຢູ່ວັດອາຣາມ. ຕໍ່ມາ ສົມເດັດພະເຈົ້າມະຫິນອຸ່ນຄຳໄດ້ຫົດສົງໃຫ້ເປັນສົມເດັດຣາຊະຄູ ເພິ່ນກໍ່ໄດ້ສ້າງກຸຕິຂຶ້ນ1ຫຼັງ ລັກສະນະເປັນຕຶກຊັ້ນດຽວ ໃສ່ທາງຂ້າງວັດອາຣາມຝ່າຍຕາເວັນອອກເພື່ອຖວາຍໃຫ້ແກ່ພະຊາບຸນມີ ຄົນທັງຫຼາຍເອີ້ນເພິ່ນວ່າ: ສົມເດັດຣາຊະຄູໂຮງທຳ ຫຼື ໂຮງຄຳ. ນອກນີ້ ເພິ່ນຍັງໄດ້ສ້າງສົມນ້ອຍໃສ່ກອຍວັດໃຫ້ຄືກັບວັດເມືອງພວນ ແລະ ສ້າງທຳໄຕ ຂຶ້ນໃສ່ກາງໜອງກອຍ ຫຼັງຈາກນັ້ນ ວັດກໍ່ເອີ້ນວ່າ: ໜອງໄຕ.

ຮອດຂວບຟ້າລະດູປີໃໝ່ ເດືອນຫ້າລາວ ສົມເດັດຣາຊະຄູໄດ້ສະເດັດນັ່ງເທິງລົດຫວໍ່ ພ້ອມດ້ວຍພະສົງສາມະເນນ ແລະ ປູ່ເຍີຍ່າເຍີ ໄປຫົດສົງພະບາງຢູ່ທີ່ວັດວິຊຸນນະຣາດ, ພະພຸດທະຮູບທີ່ວັດຊຽງທອງ ແລະ ວັດທາດ. ກາງຄືນມີການຄົບງັນ ເຝົ້າພະພຸດທະຮູບລົງສົງ ແລະ ເດືອນສິບສອງລາວ ໄດ້ມີການແຂ່ງຂັນເຮືອແຫງມ ຊ່ວງກັບເຮືອແຫງມຂອງວັດວິຊຸນ ແຕ່ປະຈຸບັນນີ້ ປະເພນີທັງສອງໄດ້ຍຸດຕິລົງແລ້ວ.

ໃນປີ ຈສ 1293 ວັດອາຣາມຊຳລຸດຊຸດໂຊມລົງ ເວລານັ້ນແມ່ນພະເພັດໄທໃຕ້ມາເປັນເຈົ້າອະທິການ ກົມທຳມະການທໍສະໜາມຫຼວງໄດ້ຊ່ອມແຊມເຄືອງເທິງຊຸດແຄະພື້ນວັດເຕັມແຕ່ເບ້ຍແກ່ນແລ້ວເອົາປະທາຍປູ. ພະເພັດໜີໄປໃຕ້ ກໍ່ແມ່ນພະບົວພໍຈາຣສີພາ ບ້ານຄອກງົວມາແທນ ແລ້ວມໍຣະນະພາບ, ເວລານີ້ແມ່ນພະອຸ່ນຄຳໄຫນ້ຳຄານມາແທນທັງເປັນເຈົ້າຄະນະຕາແສງຝາກພູ (ຝາກນ້ຳຄານ). ໃນປີ ຈສ 1325 ພະພິກຂຸສົງ ແລະ ສຳມະເນນໄດ້ຂຸດກຳແພງເທິງຫົວໂຮງທຳ ພົບຂອງມີຄ່າຈຳນວນໜຶ່ງຝັງຢູ່ພື້ນດິນ ມີປອກແຂນແຊກນ້ຳຄຳຫໍ້ 1 ກິ່ງ ໜັກ 7 ບາດ 2 ສະຫຼຶງ; ປອກແຂນແຊກຄຳຜຸຍ 1 ກິ່ງ ໜັກ 7 ບາດ; ບອກປູນຄຳຜຸຍ 1 ໜ່ວຍ ໜັກ 5 ບາດ ແລະ ປອກແຂນເງິນ 11 ກິ່ງ ໜັກ 1 ກິໂລການກວ່າ.

## 16. ວັດໃໝ່.



ວັດໃຫມ່ຊື່ເດີມແທ້ຂອງວັດນີ້ຊື່ວ່າ **ວັດສີ ສຸວັນນະພູມມາຣາມ** ແຕ່ສ່ວນຫຼາຍມັກເອີ້ນກັນສັ້ນໆວ່າ **ວັດໃຫມ່** ເພາະວັດນີ້ໄດ້ສ້າງທັບວັດເກົ່າແກ່ເດີມທີ່ມີຊື່ວ່າ: ວັດສີພູມ ເມື່ອງວກເບິ່ງຈາກຈອມພູສີ ລົງມາຈະເຫັນວິວ ແລະ ພື້ນທີ່ວັດທັງຫມົດຂອງວັດຢ່າງສວຍງາມ. ວັດນີ້ຖືກສ້າງຂຶ້ນເມື່ອຊ່ວງສັດຕະວັດທີ່ XIX ປີ ຄ.ສ 1796 **ໃນລາຊການຂອງເຈົ້າອະນຸຣຸດ ເຊິ່ງເປັນພະເຈົ້າມະຫາອຸຕຕະມະວົງສ໌ຊົງສີສັຕນາຄນະຫຸດ ມະຫາຣາຊທານີລ້ານຊ້າງຮົ່ມຂາວ** ຫຼວງພະບາງ. ຕໍ່ມາປີ ຄ.ສ 1821 ເຈົ້າມັນທາຕຸລາດ ເຊິ່ງເປັນໂອຣົດ ໄດ້ປະຕິສັງຂອນຕໍ່ເຕີມຄືນໃໝ່ ແລ້ວໃສ່ຊື່ວັດນີ້ວ່າ: **ວັດໃຫມ່ ສີສຸວັນນະພູມມາຣາມ** ຢ່າງເປັນທາງການ ເຊິ່ງມີຄວາມໝາຍວ່າ ຄວາມຈະເລີນຮຸ່ງເຮືອງ ຄືພື້ນແຜ່ນດິນຄໍາ, ແຕ່ຄໍາວ່າ ໃໝ່ ທີ່ປະຊາຊົນພາກັນເອີ້ນເພາະວ່າ ຊົງສິມເປັນສະຖາປັດຮູບແບບໃໝ່ ແລະ ມີຄວາມຮຸ່ງເຮືອງງົດງາມ.

ມາຮອດປີ ຄສ 1891 ເຈົ້າຊີວິດສັກກະລິນ ໄດ້ບູລະນະ ພ້ອມຕົກແຕ່ງຄືນໃໝ່ອີກຄັ້ງ ແລະ ມາຮອດປີ ຄ.ສ 1894 ເຈົ້າຊີວິດສັກກະລິນໄດ້ອະພິເສກຫົດສົງສະຖາປະນາແຕ່ງຕັ້ງ ພະມະຫາລາຊຄູຕັນ ເປັນສົມເດັດພຣະສັງຄະຣາຊອົງທໍາອິດແຫ່ງຣາຊອານາຈັກຫຼວງພະບາງ ແລະ ໃນປີດຽວກັນນີ້ ເຈົ້າຊີວິດສັກກະລິນ ຍັງໄດ້ອາຣາດທະນາອັນເຊີນເອົາພະບາງພຸທທະລາວັນ ຈາກວັດວິຊຸນນະຣາຊມາປະດິດສະຖານໄວ້ຢູ່ວັດໃໝ່ແຫ່ງນີ້, ຕັ້ງແຕ່ນັ້ນເປັນຕົ້ນມາ. ອັນເນື່ອງມາຈາກວັດຢູ່

ໃກ້ກັບພະຣາຊະວັງຫຼວງ ແລະ ນັບແຕ່ນັ້ນເປັນຕົ້ນມາ ວັດໃໝ່ ສີສຸວັນນະພູມ ມາຣາມແຫ່ງນີ້ ຈຶ່ງເປັນບ່ອນຈັດພິທີພຣະພິພັທນ໌ກ່າວຖວາຍສັຕຕະຍາບັນປະຕິຍານ ຕົນ (ກິນນ້ຳສາບານ) ຂອງຂ້າຣາຊການບ້ານເມືອງເພື່ອເປັນຂ້າຣາຊການທີ່ດີ, ຊື່ສັດ (ສັດຊື່) ແລະ ຈົ່ງຮັກພັກດີ ຕໍ່ໜ້າທີ ຢູ່ຕໍ່ໜ້າອົງພະບາງໃນແຕ່ລະປີ.

ວັດໃໝ່ໄດ້ຖືກບູລະນະ ປະຕິສັງຂອນຕໍ່ເຕີມຄືນໃໝ່ ຜ່ານຫຼາຍຍຸກຫຼາຍສະໄໝ ແຕກຕ່າງກັນ ແລະ ຊື່ຂອງວັດກໍ່ໄດ້ປ່ຽນໄປຕາມການເວລາຕາມຍຸກສະໄໝ ເຊັ່ນດຽວກັນ ເຊິ່ງຍັງຄົງໄວ້ເປັນຊື່ທາງການປະຈຸບັນນີ້ແມ່ນ ວັດໃຫມ່ ສຸວັນນະພູມ ມາຣາມ ແປວ່າ: ອາຣາມທີ່ຕັ້ງຢູ່ໃນພື້ນແຜນດິນທອງຄຳ ໝາຍເຖິງຄວາມຮຸ່ງເຮືອງ ເຫຼື້ອງລືອາລາມ.

ອາຣາມເປັນຫຼັງຄາ 5 ຊັ້ນ, ຕາມລັກສະນະຂອງສະຖາປັດຕະຍະກຳແບບ ລາວປະສົມແບບລື້ ແຕ່ເດີມຫຼັງຄາມຸງດ້ວຍດິນຂໍແບບຫຼວງພະບາງທົ່ວໄປ ເມື່ອ ປະຕິສັງຂອນຄັ້ງລ່າສຸດ ຈຶ່ງປ່ຽນມາມຸງດ້ວຍກະເບື້ອງສີແດງເຄືອບເຫຼື້ອມ, ອາຄານໂຕ ອຸໂບສົດ (ສິມ) ເປັນລັກສະນະອາຄານຊົງໂລ່ງ ຫຼັງຄາມີຂະໜາດໃຫຍ່ ມີຊາຍຄາປົກ ຄຸມທັງສີ່ດ້ານສອງລະດັບຕໍ່ເນື່ອງກັນ. ດ້ານຂ້າງມີຖານຍື່ນອອກມາຮັບກັບຊາຍຄາ ເປັນລະບຽງທັງສອງຂ້າງ ຝ່າຍຕາເວັນອອກ ແລະ ຕາເວັ້ນຕົກ ທີ່ທອດຍາວລົງມາ ເກືອບຮອດພື້ນດິນ ແມ່ນໄດ້ມີຕໍ່ເຕີມພາຍຫຼັງເມື່ອປີ ຈ.ສ 1253 ໂດຍສົມເດັດພະ ເຈົ້າສັກກະຣິນທຣ໌ຄຳສຸກ ເທິງຍອດຫຼັງຄາເປັນໜ້າຈົ່ວຂະໜາດໃຫຍ່ ໂດຍມີຫຼັງຄາ ນ້ອຍໆ ຊ້ອນຢູ່ອີກຊັ້ນໜຶ່ງ ເຄິ່ງກາງຂອງຫຼັງຄານ້ອຍປະດັບດ້ວຍຍອດຊໍ່ຟ້າ ສາມ ຍອດ ໝາຍເຖິງພະພຸທພະທັມ ແລະ ພະສົງ (ເປັນວັດຫລວງທີ່ຍອດຊໍ່ຟ້າແຕກຕ່າງ ຈາກວັດອື່ນ), ທັງດ້ານໜ້າ ແລະ ຫຼັງມີອາຄານເປັນຫໍສາລາຂວາງສ້າງຂຶ້ນຕິດກັນກັບ ສິມ ເຊິ່ງມາຕໍ່ເຕີມປະດັບປະດາຕົກແຕ່ງພາຍຫຼັງເຊັ່ນກັນເມື່ອປີ ຈ.ສ 1315 ໃນສະ ໄໝສົມເດັດພຣະສັງຄະຣາຊບຸນທັນ ອົງສຸດທ້າຍແຫ່ງຣາຊອານາຈັກລາວໄດ້ຈັດການ ຊ້ອມແຊມ ແລະ ສ້າງຫໍຂວາງໜ້າກ່ອນນີ້ຂຶ້ນ ມີເສົາໃຫຍ່ຮຽງກັນໂສຄວາມໂດດເດັ່ນ ທ່ານ້ຳກ່ຽງພອກຄຳປິວລວດລາຍລາວຢ່າງສວຍງາມ ປະຕູຫຼັກຂອງສິມດ້ານໜ້າຝາ ແກະສະລັກດ້ວຍຮູບນາງສີດາ ໃນເລື່ອງລາມາຍານະພອກຄຳປິວ ສຳລັບ ຝາຜະນັງ ດ້ານໜ້າອຸໂປສົດສິມແກະສະລັກຊີມັງມາປະສົມ ເຮັດປະທາຍເພັດປັ້ນຮູບ ທັງຝາ ເປັນຮູບພາບເລື່ອງລາວຂອງພະເວດສັນດອນຊາດົກ ໂດຍຊ່າງສະກຸນເພັຍຕັນ ຊ່າງ ຫຼວງປະຈຳຣາຊສຳນັກໃນຣາຊການເຈົ້າມະຫາຊີວິດ ສີສະຫວ່າງ ວົງ. ແກະສະລັກ ຮູບພາບປິດຄຳປິວທັງຫມົດໃຫ້ຮຸ່ງເຮືອງເຫຼືອງເຫຼື້ອມງາມຕາ ແລະ ກົມກືນກັບສິລະ ປະລາວ, ດ້ານລຸ່ມສຸດແມ່ນຮູບສັດຊະນິດຕ່າງໆທີ່ມີໃນລາວ.

ຂ້າງນອກດ້ານໜ້າ ກົງກັນຂ້າມກັບ ອາຣາມ ມີພຣະທາຕ 1 ອົງ ກໍ່ດ້ວຍດິນຈີ ບໍ່ທາສີ. ບັນຈຸອັດຖິເປັນຊົງດອກບົວສີ່ຫຼ່ຽມ, ດ້ານຂ້າງເບື້ອງເໜືອມີ ຫໍຊົງຕູບເປັນ ອູບມຸງນ້ອຍ ກໍ່ດ້ວຍດິນຈີໂບກປູນໝົດທັງຫຼັງ ຫັນໜ້າອອກມາທາງຖະຫນົນ ເມື່ອ ກ່ອນເປັນບ່ອນພຣະສົງເຂົ້າໄປນັ່ງສະມາທິ ເອີ້ນວ່າ: ເຂົ້າກຳມະຖານແຕ່ປະຈຸບັນນີ້ ເປັນບ່ອນປະດິດສະຖານພຣະພຸທທະຮູບອົງນ້ອຍ ເພື່ອຂາບໄຫວ້ສັກກາລະບູຊາ, ເບື້ອງໃຕ້ມີຫໍອູບມຸງຂະໜາດໃຫຍ່ ກໍ່ດ້ວຍດິນຈີໂບກປູນທັງອາຄານ, ຂ້າງໃນມີພຣະ ພຸທທະຮູບອົງໃຫຍ່ປາງມານວິໄຊ ແຕ່ຫັນພະພັກ (ຫນ້າ) ມາທາງສິມ ເຂດນີ້ ສັນນິຖານວ່າເປັນບ່ອນສິມເກົ່າ.

ໃນຊ່ວງປີໃໝ່ລາວຂອງທຸກໆປີ ໄດ້ມີການອັງເຊີນ ພະບາງພຸທທະລາວັນ ຈາກຫໍພະບາງ ໃນຫໍພິພິທະພັນແຫ່ງຊາດ ຫຼວງພະບາງ ແຫ່ມາປະດິດສະຖານທີ່ຜາມ ພະບາງ ໜ້າສິມວັດໃໝ່ແຫ່ງນີ້ ເພື່ອໃຫ້ປະຊາຊົນໄດ້ຫົດສົງ ເປັນເວລາສາມມື້ສາມ ຄືນ ຈຶ່ງໄດ້ແຫ່ກັບເມືອປະດິດສະຖານໄວ້ທີ່ຫໍພະບາງຄືນຄືເກົ່າ.



LAOS
Simply Beautiful

## 17. ໜອງຂຽວ ແລະ ບ້ານເມືອງງອຍ.



ຈາກການບອກເລົ່າຂອງ ພໍ່ເຖົ້າສິມຊາຍ ພົມມະນີຈັນ ອາຍຸ 70 ປີ ທີ່ຢູ່ບ້ານໜອງຂຽວໄດ້ເລົ່າສູ່ຟັງວ່າ ໃນເມື່ອຫຼາຍສິບປີກ່ອນໜ້ານີ້ ຢູ່ທີ່ບ້ານໜອງຂຽວຍັງບໍ່ທັນມີໝູ່ບ້ານ, ບໍ່ທັນມີຜູ້ຄົນມາຢູ່ເທື່ອ ເພາະມັນເປັນປ່າໄມ້ໃຫຍ່ ຫຼື ເອີ້ນກັນວ່າ: ປ່າດົງກົດ, ປ່າດິກດົງຂຶມທີ່ປົກຄຸມໄປທົ່ວບໍລິເວນດັ່ງກ່າວ. ພໍມາເຖິງ ປີ ຄ.ສ 1975 ພາຍຫຼັງທີ່ປະເທດຊາດບ້ານເມືອງ ໄດ້ຮັບການປົດປ່ອຍ. ລັດຖະບານລາວ ໄດ້ອະນຸຍາດໃຫ້ ຈີນ ມາສຳຫຼວດເສັ້ນທາງຍຸດທະສາດທາງເລກ 1 ພ້ອມທັງສ້າງຂົວຂ້າມແມ່ນ້ຳອູ. ດັ່ງນັ້ນຈິ່ງໄດ້ເກນເອົາພະນັກງານ, ທະຫານ, ຕຳຫຼວດຈາກສຳນັກເມືອງງອຍລົງມາຮັບຜິດຊອບ ຢູ່ບໍລິເວນດັ່ງກ່າວ. ເມື່ອຮອດປີ ຄ.ສ 1977 ໄດ້ສຳເລັດການສ້າງຂົວ ຝ່າຍລັດຖະບານ ສປ ຈີນ ໄດ້ມອບທາງ ແລະ ຂົວໃຫ້ຝ່າຍລັດຖະບານ ສປປ ລາວໃນປີ ຄ.ສ 1978 ຕໍ່ຈາກນັ້ນມາ, ຈິ່ງໄດ້ຍົກຍ້າຍສຳນັກງານໃຫຍ່ ຢູ່ບ້ານເມືອງງອຍເກົ່າ ລົງມາເປັນທາງການ, ແຕ່ກໍ່ຍັງບໍ່ທັນມີຊື່ເທື່ອ.

ກ່ອນເພິ່ນຈະເອີ້ນຊື່ ບ້ານຂຽວນັ້ນ ກໍເພາະວ່າ ຍັງມີໜອງນ້ຳແຫ່ງໜຶ່ງ ທີ່ຕິດກັບຜານາງນອນ ແລະ ກໍມີຕົ້ນໂພໃຫຍ່ຕົ້ນໜຶ່ງ ຢູ່ໃກ້ກັບແຄມໜອງ, ເຊິ່ງໜອງດັ່ງກ່າວມີລວງຍາວ 300 ແມັດ, ລວງກວ້າງ 100 ແມັດ ແລະ ຄວາມເລິກປະມານ 1-2 ແມັດ. ລັກສະນະຂອງນ້ຳທີຢູ່ໃນໜອງ ເປັນນ້ຳໃສສີຂຽວ ມໍລະກົດ ຢູ່ຕະຫຼອດປີ ແຕ່ກໍເປັນທີ່ໜ້າອັດສະຈັນໃຈ ທີ່ໜອງດັ່ງກ່າວບໍ່ມີໃບໄມ້ຕົກລົ່ນລົງໃສ່ໜອງນ້ຳເລີຍ ແລະ ຢູ່ຕາມລຽບແຄມໜອງ ກໍສະອາດເໝືອນກັບວ່າມີຜູ້ຄົນມາບົວລະບັດປັດກວາດໃຫ້ສະອາດຢູ່ສະເໝີ ຍ້ອນສາຍເຫດດັ່ງກ່າວນີ້, ຊາວບ້ານຈິ່ງເອີ້ນຊື່ບ້ານແຫ່ງນີ້ວ່າ: ບ້ານໜອງຂຽວ ຈົນເຖິງປັດຈຸບັນນີ້. ແຕ່ມາຮອດດຽວນີ້ ໜອງດັ່ງກ່າວກໍໄດ້ມີການປ່ຽນແປງສະພາບໄປ ຍ້ອນປະຊາຊົນມາຢູ່ອາໄສ ຕັ້ງບ້ານປຸກເຮືອນຢູ່ໃກ້ກັບໜອງ ແລະ ນ້ຳທີ່ມີຢູ່ໃນໜອງກໍ່ບົກແຫ້ງ ແຕ່ຈະມີນ້ຳສະເພາະໃນເດືອນ ກັນຍາ ໜອງດັ່ງກ່າວ ກໍ່ຍັງຮັກສາຮູບຮ່າງຂອງໜອງໄວ້ໃຫ້ເຫັນຈົນທຸກວັນນີ້.

ແຫຼ່ງທ່ອງທ່ຽວທີສຳຄັນໄດ້ແກ່: ຖ້ຳຜາກວາງ, ຖ້ຳຜາທອກ ເຊິ່ງຖ້ຳເຫຼົ່ານີ້ມັນໄດ້ຕິດພັນກັບປະຫວັດສາດໃນສະໄໝມີການຕໍ່ສູ້ກູ້ຊາດໃນເມື່ອກ່ອນ ແລະ ຍັງມີນ້ຳຕົກຕາດໜອງອ່ຽນ. ພິເສດແມ່ນ ຈຸດຊົມວິວຈອມພູຜາແດງ ຫຼື ຈຸດຊົມວິວ (View point) ຢູ່ບ້ານສົບຣຸນ ເປັນອີກຈຸດໜຶ່ງທີ່ໂດດເດັ່ນ ໃນເມື່ອທ່ານຫາກໄດ້ຂຶ້ນໄປທ່ຽວຊົມແລ້ວ ກໍ່ຈະໄດ້ສຳຜັດ ກັບ ທະເລໝອກທີ່ສວຍງາມ ສົມດັ່ງຄຳລ້ຳລື.

**ບ້ານເມືອງງອຍເກົ່າ**

ຕາມການບອກເລົ່າຂອງຜູ້ເຖົ້າ, ຜູ້ແກ່ໄດ້ເລົ່າສູ່ຟັງວ່າ: ແຕ່ກ່ອນຍັງມີເມືອງໜຶ່ງຊື່ວ່າເມືອງ ພິມມະກົດ ເຊິ່ງຕັ້ງຢູ່ກ້ອງບ້ານເມືອງງອຍ ໃນປັດຈຸບັນ, ຢູ່ໃຕ້ຜາບູ່ມທີ່ຫ່າງຈາກເມືອງງອຍໄປປະມານ 2 ກິໂລແມັດ. ຊາວບ້ານຊາວເມືອງກໍໄດ້ພາກັນດຳລົງຊີວິດທຳມາຫາກິນຕາມປົກກະຕິ. ແຕ່ຢູ່ມາປີໜຶ່ງ ໄດ້ເກີດມີໂລກອະຫິວາ ແລະ ໂລກໝາກສຸກລະບາດຢ່າງໜັກ ອັນໄດ້ເຮັດໃຫ້ມີຜູ້ຄົນເຈັບປ່ວຍ ແລະ ລົ້ມຕາຍເປັນຈຳນວນຫຼາຍ. ດັ່ງນັ້ນ, ເຈົ້າຜູ້ປົກຄອງເມືອງຊື່ວ່າ ທ້າວ ກາດອອຍ ແກ້ວຄຳ, ຈິ່ງໄດ້ນຳພາຊາວບ້ານ ຊາວເມືອງຍົກຍ້າຍຂຶ້ນເມືອຕັ້ງບ້ານຕັ້ງເມືອງບ່ອນໃໝ່ ຢູ່ທີ່ເມືອງງອຍໃນປັດຈຸບັນ ທີ່ມີຊື່ວ່າເມືອງ (ວອຍ) ແຕ່ສິ່ງທີ່ຫຼົງເຫຼືອ ຈາກເມືອງພິມມະກົດມາເຖິງປັດຈຸບັນຄື ການເອີ້ນຫ້ວຍນ້ອຍຫ້ວຍໜຶ່ງ ຢູ່ເໜືອບ້ານຫາດຈັ້ນນັ້ນວ່າຫ້ວຍກົດ ແລະ ຂົງເຂດເໜືອບ້ານຫາດຈັ້ນນັ້ນກໍ່ເອີ້ນວ່າ (ລ້ອງກົດ) ເຊິ່ງອາດມາຈາກຄວາມສຸດທ້າຍຂອງ ເມືອງພິມມະກົດໃນເມື່ອກ່ອນ.

ພໍມາຮອດສະໄໝຂອງ ທ້າວ ລືເດດ ໄຊຍະຣາຊກາດອອຍ ແກ້ວຄຳ ເມື່ອອາຍຸໄດ້ 35 ປີ ເຊິ່ງເປັນຜູ້ປົກຄອງເມືອງວອຍ ແທນບິດາ (ຜູ້ເປັນພໍ່) ຄື ທ້າວກາດອອຍ ແກ້ວຄຳ. ຈິ່ງໄດ່ເອີ້ນເອົາຄົນເຖົ້າ, ຄົນແກ່ ແລະ ບັນດານັກປາດອາຈານມາປະຊຸມ ລົງຄວາມຄິດເຫັນເພື່ອປ່ຽນລືກ (ປ່ຽນຊື່) ບ້ານນາມເມືອງ ໃຫ້ມັນຖືກຕ້ອງຕາມລາຍລັກອັກສອນຂອງພາສາບາລີ, ຕາມສະພາບການບ້ານເມືອງທີ່ມີການປ່ຽນແປງໄປນັ້ນ. ທ້າວ ລືເດດ ໄຊຍະຣາຊກາດອອຍ ແກ້ວຄຳ ໄດ້ອະທິບາຍເຫດຜົນວ່າ: ເມືອງວອຍທີຕົນເອງປົກຄອງຢູ່ ທີ່ຂຶ້ນຕົ້ນດ້ວຍຕົວໜັງສື “ວ” ນັ້ນບໍ່ເໝາະສົມເພາະຕົວ “ວ” ຖືກກັບຄຳວ່າ “ວາຍ”, “ວອດ”, “ເວນກຳ” ເຊິ່ງເປັນສິ່ງທີ່ບໍ່ເປັນມຸງຄຸນຕໍ່ກັບການປົກຄອງ, ບ້ານເມືອງກໍຈະມີອັນເປັນໄປ ເພາະດັ່ງນັ້ນ, ຈິ່ງໄດ້ເອົາຕົວ “ວ” ອອກແລ້ວເອົາຕົວ “ງ” ມາແທນໃສ່ ຈິ່ງເອີ່ນວ່າເມືອງ “ງອຍ” ນັບຕັ້ງແຕ່ນັ້ນມາ ຈົນເຖິງປັດຈຸບັນ.

ແຫຼ່ງທ່ອງທ່ຽວທາງທຳມະຊາດທີ່ຕິດພັນກັບປະຫວັດສາດຫຼາຍແຫ່ງໄດ້ແກ່: ຖ້ຳຜາກ່າງ, ຖ້ຳຜາແກ້ວ, ຖ້ຳຜານ້ອຍ ແລະ ຖ້ຳຫ້ວຍດູດ ຫຼື (ຖ້ຳພະລືສີ). ນອກນີ້ຍັງມີນ້ຳຕົກຕາດເຊັ່ນ: ຕາດໝອກທີ່ບ້ານສົບກອງ, ການລອງເຮືອຊົມວິວເບິ່ງທິວທັດທຳມະຊາດອັນສວຍງາມຕາມລ້ອງແມ່ນ້ຳອູ ຫຼື ການໄປທ່ຽວຊົມໝູ່ບ້ານຕ່າງໆເປັນຕົ້ນບ້ານສົບແຈມ, ບ້ານສົບກອງ, ບ້ານນາ ແລະ ບ້ານອື່ນໆ.

## 18. ວັດແສນ.

ວັດແສນເປັນວັດໜຶ່ງທີ່ເກົ່າແກ່ ແລະ ມີປະຫວັດຄວາມເປັນມາຍາວນານພໍສົມຄວນ. ຖືກສ້າງຂຶ້ນ ໂດຍພໍ່ຕາເຈົ້າຮັ່ງ ເປັນຜູ້ສ້າງວັດແສນຂຶ້ນ ໃນປີ ຄ.ສ 1718 ໃນສະໄໝເຈົ້າກິ່ງກິສຣາຊ. ອີງຕາມປື້ມຕຳນານວັດໃນຫຼວງພະບາງ ທີ່ຖືກຈັດພິມຂຶ້ນ ໃນປີ ຄສ 1964 ໂດຍ ເຈົ້າຄຳໝັ້ນ ວົງກົດຣັດຕະນະຊາບວ່າ: ໃນເມື່ອກ່ອນ ພາຍໃນກຳແພງວັດແສນແມ່ນແບ່ງອອກເປັນ 3 ວັດຄື: ວັດແສນ, ວັດທາດນ້ອຍ ແລະ ວັດພະເຈົ້າ 18 ສອກ. ສ່ວນວັດທາດນ້ອຍແມ່ນໄທພວນເປັນຄົນສ້າງ ບັດນີ້ຍັງແຕ່ພະພຸດທະຮູບອົງ 1 ເພິ່ນປຸກຫຸ່ງອຳໄວ້ ແລະ ວັດພະເຈົ້າ 18 ສອກ ຢູ່ເໜືອວັດທາດນ້ອຍ ບັດນີ້ຍັງແຕ່ຊາກພະເຈົ້າ 18 ສອກ ຕາຍ ຢືນຢູ່ (ເປັນຫຍັງຈຶ່ງເອີ້ນພະຕາຍຢືນ…ເພາະໃນເມື່ອກ່ອນ ພະເຈົ້າ 18 ສອກ ບໍ່ມີຫົວ ມີແຕ່ຄໍລົງມາ ເພິ່ນຈຶ່ງເອີ້ນພະຕາຍຢືນ), ຕໍ່ມາໄດ້ມີການກໍ່ຫົວຄືນໃຫ້ພະເຈົ້າ 18 ສອກ ໃນປີ 1968. ວັດທາດນ້ອຍ ແລະ ວັດພະເຈົ້າ 18 ສອກ ແມ່ນຖືກສ້າງຂຶ້ນໃນຊ່ວງໄລຍະດຽວກັບວັດແສນ ແລະ ທັງ 3 ວັດ ໄດ້ເອົາມາຮວມເຂົ້າກັນໃນກຳແພງວັດແສນສຸຂາຣາມ ໃນປັດຈຸບັນ.

ຕາມຈາຣຶກ ທີ່ ສາທຸໃຫຍ່ຄຳຈັນ ວິລະຈິດໂຕ ໄດ້ພົບຢູ່ໃນກອງໃຫ່ຍມີວ່າ: “ມະຫາ” ແມ່ນແທນນາມມະຍົດຂອງພະສົງ; “ອັກຄະວໍລະລາດ” ແມ່ນຊື່. ເປັນເຄົ້າພ້ອມດ້ວຍສັງຂະຊາດີ ສະປັນຍາ (ສາທຸດີ ສະປັນຍາ), ສຳມະເນນ ແລະ ພໍ່ອອກຊາວຫຼວງພະບາງພ້ອມກັນຫຸ້ມກອງນີ້ ໃນປີ ຄ.ສ 1882. ຫຼັງຈາກທີ່ມະຫາອັກຄະວໍລະລາດຊະຖູຫຼວງ ໄດ້ມໍລະນະພາບລົງ, ຫຼັງຈາກນັ້ນແມ່ນສາທຸດີເປັນເຈົ້າອາວາດແທນ ແລ້ວມໍລະນະພາບ ໃນປີ ຄ.ສ 1914. ຕໍ່ມາກໍ່ແມ່ນ ພະແກ່ນຈັນ ກະຈາຍຍະໂນ ເປັນເຈົ້າອາວາດແທນ ທັງເປັນເຈົ້າຄະນະຕາແສງເໜືອ ແລ້ວມໍຣະນະພາບ ໃນປີ ຄສ 1953 ກົງກັບປີ ຄສ 1943 ເດືອນ 11 ຂຶ້ນ 2 ຄ່ຳ. ຫຼັງຈາກນັ້ນ, ສາທຸໃຫຍ່ ຄຳຈັນ ຢູ່ວັດສີພຸດທະບາດ ຮັບນິມົນມາເປັນເຈົ້າອາວາດແທນ ໃນເດືອນຈຽງ ຂຶ້ນ 2 ຄ່ຳປີດຽວກັນ.

ວັດຫຼັງນີ້ໄດ້ຊ່ອມແຊມເປັນລຳດັບ, ຈົນມາເຖິງປີ ຄ.ສ 1932 ນາງເຈົ້າພະຍາຫຼວງເມືອງຈັນຄຳສຸກ ບ້ານຫຼັກຄຳ (ຜູ້ເປັນແມ່ເຖົ້າຂອງສາທຸໃຫຍ່ຄຳຈັນ, ໃນເມື່ອກ່ອນບ້ານຫຼັກຄຳແມ່ນທີ່ຢູ່ຂອງຄອບຄົວສາທຸໃຫຍ່ຄຳຈັນ ວິຣະຈິດໂຕ ແຕ່ປະຈຸບັນຖືກສຳປະທານໂດຍພາກສ່ວນເອກະຊົນ ໂຮງແຮມ 3 ນາກາປັດຈຸບັນ ແລະ ບ້ານຫຼັກຄຳກໍ່ໄດ້ໂຮມເຂົ້າເປັນບ້ານວັດແສນ ໃນປີ ຄ.ສ 1976 ເຊັ່ນດຽວກັນ) ໄດ້ເປັນເຄົ້າພ້ອມດ້ວຍບ້ານຊອງທຸກຄົນເປັນສັດທາປູພື້ນ, ພອກຄຳແທ່ນພະເຈົ້າ, ສຸ່ມປະຕູ, ຂອບປະຕູ, ບານປະຕູ ແລະ ຝາດ້ານໜ້າວັດ. ມາຮອດປີ ຄ.ສ 1936 ເພັຍຣັດຕະນະມຸງຄຸນ ຊຽງອຸ່ນຄຳ ແລະ ນາງເພັຍຄຳສຸກ ບ້ານລະແມດ ເປັນສັດທາພອກຄຳສີໜ້າຮວງເຜິ້ງ, ຂ້າວ, ກອນຫ້ອງໜ້າຕ່າງ...ໃນການປະຕິສັງຂອນຄັ້ງນັ້ນແມ່ນພະແກ່ນຈັນທນ໌ ພ້ອມດ້ວຍສຳມະເນນເປັນຜູ້ຣິຈນາ (ຣິຈະນາ ແມ່ນບັນທຶກໄວ້). ມາຮອດປີ ຄ.ສ 1957 ພູະຄຳຈັນທນ໌ ວິຣຈິຕໂຕ ເຈົ້າອະທິການວັດທັງເປັນເຈົ້າຄະນະແຂວງ ເຫັນວ່າວັດແສນຊຳຣຸດຊຸດໂຊມຫຼາຍ ທ່ານພູະຄູພ້ອມດ້ວຍສຳມະເນນຈຶ່ງໄດ້ມ້າງ ແລະ ປະຕິສັງຂອນຂຶ້ນໃໝ່ ໂດຍການເປັນເຈົ້າສັດທາຮ່ວມຈາກຜູ້ໃຈບຸນທັງຫຼາຍ, ຍົກຫຼັງຄາຂຶ້ນໃຫ້ສູງກ່ວາຂອງເກົ່າ, ຕໍ່ອອກໄປທາງດ້ານໜ້າຕື່ມຫ້ອງໜຶ່ງ ແລະ ໄດ້ເກາະດ້ານຂ້າງຂອງທັງ 2 ເບື້ອງອອກອີກ (ເບື້ອງລະ 2 ແມັດ) ປະດັບດອກພອກຄຳໝົດຕັ້ງແຕ່ ຂ້າວ, ກອນ, ສີໜ້າລົງມາຮອດຝາຮຸ່ງເຮືອງເຫຼືອງເຫຼື້ອມງົດງາມຕະການຕາ ແລະ ກໍ່ກຳແພງໃສ່ໃບເສມາລ້ອມຮອບທັງ 4 ດ້ານ.

ຕໍ່ມາ ໃນປີ 1743 ວັດແສນໄດ້ເສີມນາມໃໝ່ຕື່ມອີກວ່າ: ວັດແສນສຸຂາຣາມ ໂດຍ ສາທຸໃຫຍ່ຄຳຈັນ ວິຣະຈິດຕະເຖຣະ, ແຕ່ປະເພນີຄົບງັນວັດຮັກສາພະພຸດທະຮູບລົງສົງ ເດືອນ 5 ແລະ ຫຼິ້ນນາງແກ້ວ ເດືອນ 12 ນັ້ນໄດ້ຍຸຕິລົງແລ້ວ.[27]

ວັດແສນສຸຂາຣາມມີປະຕູທາງເຂົ້າທັງໝົດ 8 ທາງ: ທາງດ້ານໜ້າມີ 4 ທາງ ແຕ່ເປີດໃຫ້ເຂົ້າໄດ້ແຕ່ 3ທາງ ສ່ວນອີກທາງໜຶ່ງເບື້ອງເໜືອສຸດແມ່ນປິດໄວ້, ທາງດ້ານຂ້າງເບື້ອງເໜືອ 1 ທາງ, ແລະ ທາງດ້ານຫຼັງມີ 3ທາງ. ລັກສະນະຮູບຊົງຂອງອາຄານວັດແສນສຸຂາຣາມແມ່ນຄ້າຍຄືກັນກັບໂຕໄກ່ແມ່ຝັກ; ມີອາຣາມໃຫຍ່ 1 ຫຼັງ, ຫຼັງຄາອາລາມລຽນຊ້ອນກັນ 3 ຊັ້ນ, ຢູ່ເທິງຫຼັງຄາຂອງອາຣາມແມ່ນປະດັບດ້ວຍຫວໍ່ອັນແລ່ນ

---

[27] ຂໍ້ມູນໄດ້ຈາກປື້ມຕຳນານວັດໃນຫຼວງພະບາງ ໜ້າທີ 35 - 33

ທັງ 12 ດ້ານ, ມີສັດຕະບົວລະພາ 1 ອັນ, ຍອດຊໍ່ຟ້າ 5 ຊໍ່, ທ້ອນບາກ 6 ທ້ອ; ມີປ່ອງຢ້ຽມ 8 ປ່ອງ, ກັນຂະໂມຍແມ່ນເຮັດດ້ວຍໄມ້ເປັນຮູບລູກຕິ່ງ ປະດັບດ້ວຍດອກສ້ອຍສາ ແລະ ດອກຜັກແວ່ນ; ປະຕູກາງທາງດ້ານຂ້າງກ້ຳນ້ຳຄານ 1 ບານ, ປະຕູກາງທາງດ້ານຂ້າງກ້ຳນ້ຳຂອງ 1 ບານ, ຂັ້ນໄດບ່ອນປະຕູທາງເຂົ້າດ້ານຂ້າງ 2 ດ້ານຈະມີຮູບຫຼໍ່ໂຕນາກກິນປາ (ແຂ້) ປະດັບຢູ່ຝາກລະ 2 ໂຕ; ປະຕູໃຫຍ່ທາງດ້ານໜ້າມີ 5 ບານ, ປະດັບດ້ວຍຮູບນາງສຸມິນທາ, ຫະນຸມານ ແລະ ຮູບທ້າວ, ຊຸ້ມປະຕູມີຮູບພະຍານາກ ແລະ ດອກດວງລວດລາຍທີ່ສວຍງາມ ລາຍສ່ວນໃຫຍ່ແມ່ນລາຍດອກບົວເຄືອ; ດ້ານໜ້າອາຮາມມີຂັ້ນໄດທາງເຂົ້າຫາປະຕູໃຫຍ່ 3 ທາງ: ຂັ້ນໄດທາງດ້ານໜ້າ ແມ່ນປະດັບດ້ວຍຮູບຫຼໍ່ໂຕສິງ ແລະ ທາງດ້ານຂ້າງທັງ 2 ດ້ານແມ່ນປະດັບດ້ວຍຮູບຫຼໍ່ໂຕນາກກິນປາ (ແຂ້); ດ້ານໜ້າອາຮາມມີເສົາທັງໝົດ 10 ເສົາຄື: ເສົາໃຫຍ່ 2 ເສົາ, ເສົາກາງ 4 ເສົາ ແລະ ເສົານ້ອຍ 4 ເສົາ ປະດັບດ້ວຍລາຍດອກຜັກແວ່ນ, ລົງນ້ຳກ້ຽງພອກດ້ວຍຄຳປິວທັງໝົດ; ທາງດ້ານໃນອາຮາມ ມີເສົາໃຫຍ່ 12 ເສົາ ປະດັບດ້ວຍລາຍດອກສ້ອຍສາ, ດອກພະຍານາກ, ດອກຕາເວັນ ແລະ ດອກກາບປີ ແຕ່ລະເສົາແມ່ນມີລວດລາຍດອກດວງທີ່ສວຍງາມແຕກຕ່າງກັນໄປ ແຕ່ສິ່ງທີ່ຄືກັນຄື ລວດລາຍດອກດວງຂອງທຸກໆເສົາແມ່ນລົງນ້ຳກ້ຽງພອກດ້ວຍຄຳປິວ; ຢູ່ເທິງເພດານຂອງອາຮາມໃຫຍ່ແມ່ນມີຮູບພາບທີ່ສວຍສົດງົດງາມ ມີທັງໝົດ 50 ພາບ ທັງເພດານດ້ານນອກ ແລະ ດ້ານໃນອາຮາມ ທີ່ອະທິບາຍເຖິງຄວາມເປັນມາຂອງພະໂຫວດສັນດອນ, ຮູບພຸດທະປະຫວັດ, ຮູບພະເຈົ້າ 10 ຊາດ, ຮູບກ່ຽວກັບເລື່ອງສິນ 5, ຮູບພະພູຣິທັດ. ນອກຈາກນີ້, ຍັງມີຮູບທາດທີ່ພອກດ້ວຍຄຳຢູ່ເທິງຝາທັງ 4 ດ້ານແຕກຕ່າງກັນຄື:

**ຝາກ້ຳນ້ຳຂອງ**

- ພະປະຖົມເຈດີໄທ.
- ທາດຖຸ້ນເມືອງຢູ່ກອຍວັດພູະສີມຫາທາຕຸທາຊບົວຣວິຫາຣ (ວັດທາດ) ເມືອງຫຼວງພະບາງ.
- ທາດສີທັມຫາຍໂສກຣາຊ ຢູ່ກອຍວັດສີທັມຫາຍໂສກຣາຊ ຫຼື ວັດທາດຫຼວງເມືອງພະບາງ.

ຝາກ້ຳນ້ຳຄານ

- ພະທາດຫຼວງວຽງຈັນ.
- ພະທາດພຸທຼະຄະຍາ ບ່ອນພະພຸດທະເຈົ້າຕັສສັພພັນຍູ (ຕັສສັພພັນຍູ ແມ່ນຕັດສະລູ້) ປະເທດອິນເດຍ.
- ພະທາດຊະເວດາກອງ ເມືອງຢ່າງກຸ້ງ, ປະເທດພະມ້າ.

ຝາກ້ຳໃຕ້ດ້ານກອຍ (ຝາເບື້ອງພະເຈົ້າແສນສຸຂປະດິດສະຖານຢູ່)

- ພະທາດຫຣິພູນໄຊຍ໌ ເມືອງລຳພູນ.
- ພະທາດໝາກໂມ ໜ້າວັດວິຊຸນ ເມືອງຫຼວງພະບາງ.
- ພະທາດບ່ອນພະພຸດທະເຈົ້ານິພພານ ທີ່ເມືອງກຸສິນາຣາ ປະເທດອິນເດຍ.

ຝາກ້ຳເໜືອດ້ານໜ້າ

- ພະທາດສີໂຄຕະບູນ (ທາຕຸຈອມພູກຽວປາກນ້ຳເຊືອງ) ເມືອງຫຼວງພະບາງ.
- ພະທາດພະນົມ ຢູ່ນະຄອນພະນົມ, ປະເທດໄທ.
- ພະທາດເກດແກ້ວຈຸນລະມະນີ ຢູ່ໜ້າວັດແສນ ເມືອງຫຼວງພະບາງ. (ຕອນເທວບຸຕເມັດໄຕມາພົບກັບພູະມະໄລຊັ້ນດາວດຶງສາ).
- ພະທາດຫຼັກເມືອງຈອມພູສີ, ເມືອງຫຼວງພະບາງ.
- ສຸວັນນະມາລີກະເຈດີ, ສີລັງກາ

ນອກນັ້ນ, ຍັງມີພະເຈົ້ານ້ອຍ ແລະ ໃຫຍ່ຫຼາຍໆອົງທີ່ມີອາຍຸຫຼາຍກ່ວາ 200 ປີ, ມີສະລ່ຽງຂອງສົມເດັດເຈົ້າມະຫາອຸປຣາຊບຸນຄົງ ບູຊາໄວ້, ມີຮູບປັ້ນສາທຸໃຫຍ່ແກ່ນຈັນ, ຮູບປັ້ນສາທຸໃຫຍ່ສົມເດັດພະສັງຄະຣາດ ທຳມະຍານະມະຫາເຖຣະ, ຮູບປັ້ນສາທຸໃຫຍ່ຄຳຈັນ ຈິດຕະມະຫາເຖຣະ ແລະ ທີ່ສຳຄັນໄປກ່ວານັ້ນແມ່ນມີພະເຈົ້າໃຫຍ່ອົງໜຶ່ງ ຊື່ວ່າ: ພະເຈົ້າແສນສຸກ ເຊິ່ງເປັນພະເຈົ້າສັກສິດອົງໜຶ່ງທີ່ຊາວບ້ານຊາວເມືອງໃຫ້ຄວາມນັບຖືສັກກາລະບູຊາມາຕະຫຼອດ ຈົນເຖິງປັດຈຸບັນນີ້. ຝາດ້ານນອກທາງດ້ານໜ້າອາຮາມແມ່ນປະດັບດ້ວຍລາຍດອກຕາເວັນ, ລາຍດອກຜັກກູດ ແລະ ລາຍດອກຜັກແວ່ນ, ລົງນ້ຳກ້ຽງພອກດ້ວຍຄຳປິວທັງໝົດ ເຊິ່ງມີຄວາມຮຸ່ງເຮືອງເຫຼືອງເຫຼື້ອມສວຍສົດງົດງາມຕະການຕາ, ລາຍດອກດວງທັງໝົດແມ່ນອອກແບບ, ແຕ້ມ ແລະ ລົງສີໂດຍຊ່າງເຈົ້າມະນີວົງ ແລະ ຈານບຸນທັນ; ມີໂກດ 1 ອັນ ທີ່ສ້າງຂຶ້ນໃນປີ 2007 ໂດຍຊ່າງເຈົ້າມະນີວົງ ສ້າງຂຶ້ນ ເພື່ອເກັບພະສົບຂອງສາທຸໃຫຍ່ຄຳຈັນ ວິຣະຈິດຕະເຖຣະ; ມີຫໍ 1

ອັນ ແລະ ລົດຫວໍ 1 ອັນ ທີ່ເອົາໄວ້ໃຫ້ພະສົງນັ່ງ ເພື່ອໃຫ້ປະຊາຊົນໄດ້ຫົດສົງນໍ້າ ໃນຂະບວນແຮ່ໃນປີໃໝ່ລາວ.

ຢູ່ພາຍໃນວັດແສນຍັງມີ ສາລາໂຮງທຳ (ຫໍແຈກ) 1 ຫຼັງ, ກຸຕິ (ກະດີ) 3 ຫຼັງ, ຫໍກອງໃຫຍ່ 1 ຫຼັງ, ຫໍພິພິຕະພັນພະທຳ (ຫ້ອງວາງສະແດງໜັງສືຜູກ, ໃບລານ…) 1 ຫຼັງ, ຫໍພິພິຕະພັນພະພຸດ (ບ່ອນວາງສະແດງພະພຸດທະເຈົ້າຈຳນວນຫຼວງຫຼາຍ ທີ່ມີອາຍຸຫຼາຍກວ່າ 300 ປີ) 1 ຫຼັງ, ຫໍພິພິຕະພັນພະສົງ (ບ່ອນວາງສະແດງເຄື່ອງຂອງ ຂອງສາທຸໃຫຍ່ຄຳຈັນທຣ໌) 1 ຫຼັງ, ທັງ 3 ຫໍພິພິຕະພັນຈະອະນຸຍາດເປີດໃຫ້ເຂົ້າຊົມໃນເວລາອັນໃກ້ນີ້. ປະຕູທາງເຂົ້າຫາວັດດ້ານໜ້າເບື້ອງຊ້າຍມີມີພະທາດເກດແກ້ວຈຸນລະມະນີ ແລະທາດນ້ອຍ 1ທາດ ແຕ່ຖືກຍ້າຍໄປໄວ້ກັບທາດໃຫຍ່ເບື້ອງຂວາມື ໃນປີ 1966, ທາດທັງ 2 ບໍ່ມີຊື່ ແຕ່ຖືກສ້າງຂຶ້ນເພື່ອເປັນຕົວແທນພະພຸດທະເຈົ້າ ເພື່ອໃຫ້ປະຊາຊົນໄດ້ກາບໄຫວ້ສັກກາຣະບູຊາ ; ໂຮງເຮືອ 1 ໂຮງ; ຫໍພະເຈົ້າ 1 ຫໍ ທີ່ສ້າງຂຶ້ນມາ ເພື່ອຮັກສາພະເຈົ້າທີ່ເຄີຍມີຢູ່ໃນວັດສີບ ໃນເມື່ອກ່ອນໄວ້; ຫໍພະເຈົ້າ 18 ສອກ 1 ຫຼັງ ທັງ 2 ຫໍແມ່ນສ້າງຂຶ້ນໃນປີ 1968. ວັດດັ່ງກ່າວຍັງມີພະສົງ, ສຳມະເນນຈຳພັນສາຢູ່.[28]

[28] ຂໍ້ມູນໄດ້ມາຈາກການສຳພາດ ສາທຸບຸນເພັງ ສີອຸດົມພັນ

## 19. ນ້ຳຕົກຕາດກວາງຊີ ແລະ ບ້ານທ່າແປ້ນ.




ນ້ຳຕົກຕາດກວາງຊີ ເປັນແຫຼ່ງທ່ອງທ່ຽວໃນຈຸດໝາຍປາຍທາງຂອງນັກທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ ເມື່ອມາຮອດມາເຖິງ ຫຼວງພະບາງແລ້ວ ຕ້ອງມາທ່ຽວຊົມໃຫ້ໄດ້, ມີໄລຍະທາງຫ່າງຈາກ ເທດສະບານເມືອງຫຼວງພະບາງ ປະມານ 30 ກມ, ໃຊ້ເວລາປະມານໃນການເດີນທາງ ປະມານ 1 ຊົ່ວໂມງ ໃນການເດີນທາງດ້ວຍລົດ ມີເສັ້ນທາງເຂົ້າເຖິງສະດວກ.

ບ້ານທ່າແປ້ນ ແມ່ນບ້ານທີ່ມີພົນລະເມືອງປະມານ 400 ກວ່າຄົນ. ເຊິ່ງຕັ້ງຢູ່ລຸ່ມຂອງນ້ຳຕົກຕາດກວາງຊີ ແລະ ມີອາຍຸໄດ້ ປະມານ 100 ກວ່າປີແລ້ວ. ຊື່ຂອງບ້ານໄດ້ຖືກເອີ້ນ ຕາມສະພາບຄວາມເປັນຈິງຂອງຄົນໃນເມື່ອກ່ອນ ທີ່ຫາກໍຍົກຍ້າຍເຂົ້າມາອາໄສ ໂດຍປະຊາຊົນໄດ້ເອົາໄມ້ແປ້ນມາປູໃຊ້ບໍລິເວນທ່າ ເພື່ອເປັນບ່ອນອາບນ້ຳຂອງເຂົາເຈົ້າ ຈຶ່ງໄດ້ຊື່ວ່າບ້ານທ່າແປ້ນ. ປັດຈຸບັນມີປະຊາຊົນສອງຊົນເຜົ່າຄື: ຊົນເຜົ່າກຶມມຸ ແລະ ຊົນເຜົ່າລາວລຸ່ມ ອາໄສຢູ່ນຳກັນ.

ຕາດກວາງຊີມີປະຫວັດຄວາມເປັນມາ ໂດຍການເລົ່າຂານກັນວ່າ: ໄດ້ມີພະລືສີ ອົງໜຶ່ງ ໄດ້ໃຊ້ໄມ້ເທົ້າຊີເຂົ້າໃນດິນ ເພື່ອໃຫ້ເກີດມີນ້ຳອອກມາໃຊ້. ສະນັ້ນ, ຈຶ່ງເກີດຫ້ວຍຊີແຫ່ງນີ້ຂຶ້ນມາ ເມື່ອກະແສນ້ຳໄຫຼອອກມາຕົກໃສ່ຜາຫີນສູງນີ້ ຈຶ່ງເກີດມີຕາດ ແລະ ໄດ້ມີຄົນເຫັນກວາງຄຳໂຕໜຶ່ງ ອາໄສຢູ່ກ້ອງລຶບຫີນ ຊັ້ນທາງກາງຂອງນ້ຳຕົກ ເຊິ່ງລຶບຫີນຊັ້ນດັ່ງກ່າວ ແມ່ນໄດ້ງອກຍຶດຍາວອອກມາ ເຮັດໃຫ້ນ້ຳທີ່ໂຕນຢູ່ໃນຊັ້ນລຶບຫີນນີ້ ມີສຽງດັງກ້ອງກັງວານ ໄປທົ່ວບໍລິເວນ. ແຕ່ຕໍ່ມາ ຊັ້ນຫີນງອກນັ້ນ ກໍໄດ້ຫັກພັງລົງ ເຖິງຢ່າງໃດກໍຕາມ ນ້ຳຕົກຕາດແຫ່ງນີ້ ກໍຍັງມີຄວາມງາມ ຍັງເປັນທີ່ດຶງດູດໃຫ້ນັກທ່ອງທ່ຽວນິຍົມກັນເຂົ້າມາທ່ຽວຊົມ ຢ່າງບໍ່ຂາດສາຍ, ສະນັ້ນຕາດກວາງຊີແມ່ນໄດ້ມາຈາກ “ຕາດ” ແມ່ນນ້ຳຕົກ,”ກວາງ” ແມ່ນກວາງຄຳ ແລະ “ຊີ” ແມ່ນພະລືສີ ໃຊ້ໄມ້ເທົ້າຊີດິນ ເພື່ອໃຫ້ເກີດນ້ຳໄຫຼອອກມາ.

ອຸດທະຍານສາຍນ້ຳຊີທີ່ໄຫຼລົງມາຫາຕາດນັ້ນ ແມ່ນໄຫຼອອກມາຈາກຮ້ອຍຕີນພູທີ່ມີຄວາມໃສເຢັນສະອາດໄກຈາກຫົວຕາດປະມານ 4 ກິໂລແມັດ ມີນ້ຳຫຼາຍສາຍ ແລະ ຫຼາຍແງ່ໄຫຼໂຮມເຂົ້າກັນ ແລະ ມີຫຼາຍວັງນ້ຳ ອັນປະກອບເປັນທິວທັດທຳມະຊາດທີ່ສວຍສົດງົດງາມທີ່ສຸດ. ຕາດກວາງຊີມີຄວາມສູງ 71 ແມັດ, ກວ້າງສຸດ 35 ແມັດ, ປະກອບດ້ວຍ 6 ຊັ້ນ ແລະ ສູງຈາກລະດັບໜ້ານ້ຳທະເລປະມານ 460–560 ແມັດ ໃນໄລຍະທີ່ຜ່ານມາຕາດນີ້ເຄີຍຫັກ ແລະ ຍຸບຕົວລົງ 2 ຄັ້ງຄື: ກ່ອນນີ້ 70 ປີ ແລະ ຄັ້ງວັນທີ 04/12/2011. ສະເພາະລະດູຝົນຕາດກວາງຊີຈະມີນ້ຳໂຕນຫຼາຍທີ່ສຸດ ແຕ່ລະດູແລ້ງຄືລະຫວ່າງ ເດືອນມັງກອນ - ພຶດສາພາ ປະລິມານນ້ຳຝົນຈະໜ້ອຍລົງ.

ອຸດທິຍານປ່າໄມ້ແຫ່ງນີ້ ລັດຖະບານໄດ້ປະກາດໃຫ້ເປັນແຫຼ່ງທ່ອງທ່ຽວໃນປີ 1987 ເປັນຕົ້ນມາ. ເຊິ່ງໃນເມື່ອກ່ອນມີຫຼາຍບ້ານທີ່ຢູ່ອາໄສ ຢູ່ເທິງສາຍນ້ຳຊີແຫ່ງນີ້, ເນື່ອງຈາກວ່າ ລັດຖະບານເຫັນໄດ້ຄວາມຈຳເປັນ ເພື່ອການອະນຸລັກຫ້ວຍນ້ຳແຫ່ງນີ້ໃຫ້ອຸດົມສົມບູນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຍ້າຍຖິ່ນຖານ ປະຊາຊົນເຫຼົ່ານັ້ນ ລົງໄປຢູ່ເຂດໃຕ້ບ້ານ ກໍຄືບ້ານທ່າແປ້ນ, ໂນນສະຫວາດ, ບ້ານນາອອນ ແລະ ບັນດາບ້ານຕ່າງໆຢູ່ໃກ້ຄຽງ.

ນອກຈາກນັ້ນ, ຕາດກວາງຊີຍັງເປັນນ້ຳຕົກທີ່ສວຍງາມ ເໝາະສົມເປັນສະຖານທີ່ທ່ອງທ່ຽວທາງທຳມະຊາດ ລະດັບຊາດ ເໝາະສົມໃຫ້ເປັນເຂດທີ່ປະກອບດ້ວຍພືດພັນນາໆຊະນິດ ທີ່ຫາກຫຼາຍອັນປຽບທຽບໄດ້ຍາກ, ຍັງເປັນສະຖານທີ່ຄົ້ນຄວ້າວິໄຈພືດພັນນາໆຊະນິດ ເພື່ອໃຫ້ສົມດຸນກັບທຳມະຊາດ ແລະ ເພື່ອການຍືນຍົງຂອງມວນມະນຸດ.

# ແຂວງຫົວພັນ

## 1. ສວນອຸທິຍານຫີນຕັ້ງ.



**ທີ່ຕັ້ງ:** ຕັ້ງຢູ່ບ້ານນາຕອກ, ເມືອງຫົວເມືອງ ຫ່າງຈາກເທດສະບານແຂວງ 64 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ນັບເປັນເວລາຊ້ານານກວ່າ 1500 ປີ ຜ່ານມາແລ້ວ, ຢູ່ບົນສັນພູສູງທີ່ປົກຄຸ້ມໄປດ້ວຍປ່າໄມ້ອັນອຸດົມສົມບູນຂອງແຂວງຫົວພັນນີ້ ຍັງມີມະນຸດກຸ່ມໜຶ່ງ ຊຶ່ງບໍ່ຊາບກົກເຄົ້າຕົ້ນກຳເນີດແນ່ຊັດວ່າ ດັ້ງເດີມເປັນຊົນເຜົ່າໃດ ປະຮ່ອງຮອຍຫີນຕັ້ງຈຳນວນຫຼາຍຮ້ອຍອັນຢັ່ງຢາຍຕາມເສັ້ນທາງທີ່ຍາວຢຽດໄຕ່ຕາມສັນພູ ແລະແກ່ວພູ ແລະ ໂດຍສະເພາະແມ່ນໄດ້ຈັດເປັນ 3 ກຸ່ມໃຫ່ຍທີ່ສຳຄັນ, ນອກຈາກນີ້ຍັງມີກຸ່ມນ້ອຍໆອີກຈຳນວນໜຶ່ງທີ່ຕັ້ງຢູ່ປ່ຽວ ແລະ ຢັ່ງຢາຍເກາະກ່າຍຈາກຈຸດໜຶ່ງຫາອີກຈຸດອື່ນ, ຫີນຕັ້ງແມ່ນສ້າງດ້ວຍຫີນມີກາຊິດຕັດແຕ່ງເປັນແຜ່ນບາງ ແລະ ຍາວນຳມາຝັງລຽງລາຍກັນເປັນກຸ່ມ, ໂດຍສ່ວນໃຫ່ຍແລ້ວຫີນຕັ້ງທີ່ມີຂະໜາດສູງກວ່າໝູ່ມັກຈະຝັງລຽງລາຍກັນເປັນກຸ່ມ, ຫີນຕັ້ງທີ່ມີຂະໜາດສູງກວ່າໝູ່ມັກຈະຝັງຢູ່ໃຈກາງຂອງກຸ່ມ, ສ່ວນທິດທາງໃນການຈັດວາງແມ່ນບໍ່ໄດ້ມີຫຼັກການກຳນົດຕາຍ

ຕົວ, ຢູ່ໃຕ້ດິນລົງໄປເພິ່ນເຄີຍໄດ້ຄົ້ນພົບຫຼຸມອຸມົງຂະໜາດໃຫ່ຍ ແລະ ເລິກຕາມປົກກະຕິແລ້ວຫຼຸມເຫຼົ່ານີ້ແມ່ນຖືກປົກປິດດ້ວຍແຜ່ນຫີນກົມຂະໜາດໃຫ່ຍຊຶ່ງບາງແຜ່ນມີເສັ້ນຜ່າສູນກາງເກີນກວ່າສອງແມັດຂຶ້ນໄປ, ມີປ່ອງແປວຂຸດເປັນຮູບທໍ່ໃນລວງດິ່ງ ແລະ ມີປ່ຽງຫີນນ້ອຍທີ່ຝັງຕິດກັບຜະໜັງຫຼຸມເພື່ອໃຊ້ເປັນລູກຂັ້ນໄດປີນລົງໄປສູ່ຫ້ອງໃຕ້ດິນ, ຢູ່ພາຍໃນຫຼຸມເປັນຜີ້ງກວ້າງສາມາດຝັງສົບໄດ້ຫຼາຍສົບ ແລະ ມີປ່ຽງຫີນຂັ້ນແບ່ງອອກເປັນຫ້ອງນ້ອຍໆອີກ, ສ່ວນຫຼາຍບໍ່ພົບຮ່ອງຮອຍຂອງກະດູກມະນຸດນອກຈາກເສດດິນໜຽວທີ່ເຈື່ອນລົງໄປ.

ໃນປີ 1931 ມີນັກຄົ້ນຄວ້າຊາວຝຼັ່ງເສດຊື່ວ່າ ນາງ ມາເດີແລນ ໂກລານີ ຊຶ່ງສັງກັດສະຖາບັນຝຼັ່ງເສດແຫ່ງພາກຕາວັນອອກໄກໄດ້ເດີນທາງມາທຳການສຳຫຼວດ ແລະ ຂຸດຄົ້ນທາງບູຮານນະຄະດີຢູ່ບໍລິເວນຫີນຕັ້ງແຫ່ງນີ້, ມີການຄົ້ນພົບວັດຖຸຫຼັກຖານທາງບູຮານນະຄະດີຈຳນວນໜຶ່ງ, ໃນນັ້ນມີໂຖໃສ່ກະດູກເຮັດດ້ວຍດິນເຜົາແບບເນື້ອຫຍາບຊຶ່ງດ້ານໃນມີເຄື່ອງຫີນຈຳນວນໜຶ່ງທີ່ກ່ຽວພັນກັບພິທີການຝັງສົບ, ມີເຄື່ອງປະດັບເຮັດດ້ວຍດິນເຜົາ ແລະ ກ້ອງແຂນທອງຈິນຕາບເທົ້າທຸກວັນນີ້ຫີນຕັ້ງຫືວພັນຍັງຄົງເຊືອງຊ້ອນຄວາມລຶກລັບປິດສະໜາໄວ້ໃຫ້ນັກຄົ້ນຄວ້າລຸ້ນຫຼັງໄດ້ຄົ້ນຄວ້າສືບຕໍ່ໄປ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** 6 ກິໂລແມັດຈາກບ້ານນາຕອກເຂົາໄປເປັນທາງດິນແດງຈິ່ງມີຄວາມຫຸ້ຍງຍາກໃນການເຂົ້າເຖິງໂດຍສະເພາະແມ່ນລະດູຝົນ, ຍັງເປັນແຫຼ່ງທ່ອງທ່ຽວທີ່ຍັງບໍ່ທັນມີການພັດທະນາພື້ນຖານໂຄງລ່າງສິ່ງຮອງຮັບ ແລະ ສິ່ງອຳນວຍຄາມສະດວກຕ່າງໆ

**ແຜນພັດທະນາໃນຕໍ່ໜ້າ:** ສວນອຸທິຍານຫີນຕັ້ງໄດ້ມີແຜນຈັດສັນ ແລະ ອອກແບບແນວຄວາມຄິດການພັດທະນາໂດຍທີມງານສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວຂອງກົມພັດທະນາຮ່ວມກັບພະແນກ ຖວທ ແຂວງ ເພື່ອພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວມໍລະດົກໂລກໃນອະນາຄົດ.



## 2. ບໍ່ນ້ຳອຸ່ນນາເມືອງ.



**ທີ່ຕັ້ງ:** ຕັ້ງຢູ່ບ້ານນາເມືອງ, ເມືອງຊຳເໜືອ ຫ່າງຈາກເທດສະບານແຂວງ 21 ກິໂລແມັດ.

**ປະຫວັດແຫຼ່ງທ່ອງທ່ຽວ:** ເປັນບໍ່ນ້ຳອຸ່ນທີ່ຄົ້ນພົບຫຼາຍເຊັ່ນຄົນມາແລ້ວ ຈາກທຳມະຊາດຢູ່ຕີນພູໃກ້ບ້ານນາເມືອງ ຊື່ບໍ່ນ້ຳອຸ່ນນາເມືອງ ກໍ່ເອີ້ນຕາມຊື່ບ້ານນາເມືອງຕັ້ງແຕ່ບ້ານນັ້ນໄດ້ມາຕັ້ງບ້ານຢູ່ເຂດນີ້.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ການເຂົ້າເຖິງສະດວກລົດສາມາດເຂົ້າໄປໄດ້ທັງ 2 ລະດູ. ມີອ່າງອາບ, ແຊ່ໃນຮົ່ມ ແລະ ກາງແຈ້ງ, ມີຫ້ອງນ້ຳ ແລະ ສາລາພັກ 1 ຫຼັງ.

**ແຜນພັດທະນາໃນຕໍ່ໜ້າ:** ບໍ່ນ້ຳອຸ່ນນາເມືອງໄດ້ມີແຜນຈັດສັນ ແລະ ອອກແບບແນວຄວາມຄິດໃນການພັດທະນາ ເພື່ອອະນຸລັກທຳມະຊາດ, ສິ່ງແວດລ້ອມ ແລະ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງນັກທ່ອງທ່ຽວກໍ່ຄືສັງຄົມຍັງມີຄວາມຈຳເປັນຕອງໄດ້ປັບປຸງ ແລະ ພັດທະນາສິ່ງຮອງຮັບ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເຊັ່ນ: ທາງເຂົ້າເຖິງ, ບ່ອນຈອດລົດ, ອ່າງອາບແຊ່ໃນຮົ່ມ ແລະ ກາງແຈ້ງ ແລະ ກິດຈະກຳຕ່າງໆ.



**ທີ່ຕັ້ງ:** ຕັ້ງຢູ່ບ້ານພູຫຼວງ, ເມືອງຊຳເໜືອຫ່າງຈາກເທດສະບານເມືອງປະມານ 6 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນພູທີ່ມີຄວາມສູງ, ມີປ່າໄມ້ຂຽວສົດງົດງາມ, ເປັນເຂດທີ່ມີຄວາມຊຸ່ມຊື່ນ ແລະ ໜາວເຢັນເກືອບຕະຫຼອດປີ, ເປັນຈຸດສູງທີສາມາດຫຼຽວເຫັນວິວທີ່ສວຍງາມຂອງເທດສະບານຕົວເມືອງຊຳເໜືອ .

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ໄລຍະທາງ 6 ກິໂລແມັດ ເປັນທາງດິນແດງການເຂົ້າໄປມີຄວາມຫຸ້ຍງຍາກໂດຍສະເພາະຊ່ວງລະດູຝົນ, ສິ່ງອຳນວຍຄວາມສະດວກຕ່າງໆ ຖືວ່າບໍ່ທັນມີຫັຍງເພາະເປັນແຫຼ່ງທ່ອງທ່ຽວທີ່ຍັງບໍ່ໄດ້ມີການພັດທະນາ.

**ແຜນພັດທະນາໃນຕໍ່ໜ້າ:** ພູຫຼວງໄດ້ມີແຜນຈັດສັນ ແລະ ອອກແບບແນວຄວາມຄິດໃນການພັດທະນາໂດຍທີມງານນັກຝຶກອົບຮົມການວາງແຜນ ແລະ ຈັດສັນແຫຼ່ງທ່ອງທ່ຽວຈາກກະຊວງ ແລະ 8 ແຂວງພາກເໜືອ

## 4. ບ້ານຫັດຖະກຳຕໍ່າຫູກ(ບ້ານສະເຫຼີ້ຍ).



**ທີ່ຕັ້ງ:** ບ້ານສະເຫຼີ້ຍຕັ້ງຢູ່ສອງພາກທາງເລກ 6 ຫ່າງຈາກເທດສະບານແຂວງ 39 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນບ້ານເຜົ່າລາວຟ້ອງນັບຖືສາດສະໜາພຸດເປັນບ້ານທີ່ມີມູນເຊື້ອໃນການຕໍ່າຫູກໂດຍສະເພາະແມ່ນການຕໍ່າສິ້ນໝີ່,ມັດໝີ່ ແລະ ຍ້ອມສີທຳມະຊາດ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ບ້ານສະເຫຼີ້ຍ ຕັ້ງຢູ່ແຄມທາງລົດການເຂົ້າເຖິງສະດວກ, ມີຫ້ອງນໍ້າ ແລະ ແຂກສາມາດພັກເຊົານຳເຮືອນປະຊາຊົນ.

**ແຜນພັດທະນາໃນຕໍ່ໜ້າ:** ເປັນບ້ານເປົ້າໝາຍສ້າງເປັນບ້ານວັດທະນະທຳຕິດພັນການທ່ອງທ່ຽວຕາມທິດສ້າງຂອງແຂວງ ແລະ ກະຊວງ.

## 5. ຖໍ້າປະຫັວດສາດເຂດຫາງລ້ອງ.

**ທີ່ຕັ້ງ:** ຕັ້ງຢູ່ເຂດບ້ານຫາງລ້ອງຫ່າງຈາກເທດສະບານແຂວງ 12 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ຖໍ້າປະຫັວດສາດເຂດຫາງລ້ອງລວມມີຫຼາຍຖໍ້າເຊິ່ງເປັນທີ່ຕັ້ງສຳນັກງານແຂວງໃນເມື່ອກ່ອນສະໄໝສົງຄາມກ່ອນ 1975.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ການເຂົ້າເຖິງສະດວກ, ເປັນແຫຼ່ງທ່ອງທ່ຽວທີ່ມີຄວາມສຳຄັນທາງດ້ານປະຫັວດສາດ ແຕ່ຍັງບໍ່ທັນໄດ້ມີການພັດທະນາດ້ານພື້ນຖານໂຄງລ່າງສິ່ງຮອງຮັບ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ.

**ແຜນພັດທະນາໃນຕໍ່ໜ້າ:** ພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວປະຫັວດສາດ, ຕິດພັນກັບແຫຼ່ງທ່ອງທ່ຽວເຊີງກະສິກຳ.



## 6. ພູຈອມກຸບ.

**ທີ່ຕັ້ງ:** ຫ່າງຈາກເທດສະບານຕົວເມືອງຊຳເໜືອປະມານ 23 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນແຫຼ່ງທ່ອງທ່ຽວທຳມະຊາດພູສູງ, ອາກາດປອດໂປ່ງເຢັນສະບາຍ. ເປັນເຂດຍຸດທະສາດການທະຫານ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ຈາກເສັ້ນທາງຊຳເໜືອ–ເມືອງວຽງໄຊເຂົ້າໄປປະມານ 8 ກິໂລແມັດ ເປັນທາງດິນແດງການເຂົ້າເຖິງຈິ່ງມີຄວາມຫຸ້ຍງຍາກໃນຊ່ວງລະດູຝົນ, ເປັນແຫຼ່ງທ່ອງທ່ຽວທີ່ບໍ່ທັນໄດ້ພັດທະນາ, ຍັງບໍ່ມີສິ່ງອຳນວຍຄວາມສະດວກຕ່າງໆ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນແຫຼ່ງທ່ອງທ່ຽວທຳມະຊາດທີ່ຕິດພັນກັບການທ່ອງທ່ຽວເຊີງກະສິກຳ, ສ້າງເປັນຈຸດຊົມວິວ.





## 7. ນາຄັງຄ້າຍ USA ເກົ່າ.

**ທີ່ຕັ້ງ:** ນາຄັງຄ້າຍ USA ເກົ່າຕັ້ງຢູ່ບ້ານນາກູດຫ່າງຈາກເທດສະບານເມືອງຮ້ຽມ 33 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ຈັກກະພັດອາເມລິກາໄດ້ເຂົ້າມາຕັ້ງຖານທັບຢູ່ນາຄັງ ແຕ່ 1966–1969 ເປັນເວລາ 3 ປີ

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** 33 ກິໂລແມັດເປັນທາງດິນແດງຈິ່ງມີຄວາມຫຸ້ຍງຍາກໃນການເຂົ້າເຖິງໂດຍສະເພາະແມ່ນລະດູຝົນ. ສິ່ງອຳນວຍຄວາມສະດວກກໍ່ຍັງບໍ່ໄດ້ພັດທະນາຮັບໃຊ້ແບບສາທາລະນະ ຫຼື ຮັບໃຊ້ການທ່ອງທ່ຽວແຕ່ແຂກຄົນໄປມາສາມາດພັກເຊົາ, ຢູ່ກິນນຳປະຊາຊົນ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນແຫຼ່ງທ່ອງທ່ຽວດ້ານປະຫັວດສາດເພື່ອທ່ຽວຊົມສິ່ງເສດເຫຼືອສົງຄາມ, ຮຽນຮູ້ປະຫວັດສາດ ແລະ ຜົນຮ້າຍຂອງສົງຄາມທຳລາຍ, ແລະ ວິຖີຊີວິດເຜົ່າພວນເຂດຖ້ຳລາ.

## ໘. ຕາດແກ້ງຊຳ.



**ທີ່ຕັ້ງ:** ຕັ້ງຢູ່ບ້ານຫົວຊຽງ, ຫ່າງຈາກເທດເມືອງຊຳເໜືອປະມານ 19 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນແຫຼ່ງທ່ອງທ່ຽວທຳມະຊາດ, ນ້ຳຕົກແກ້ງຊຳເກີດຈາກສາຍນ້ຳຊຳທີ່ໄຫຼຜ່ານຕົວເມືອງຊຳເໜືອ,ເປັນສາຍນ້ຳທີ່ໄສໄຫຼເຢັນຕະຫຼອດປີ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ, ຕິດພັນກັບວິຖີຊາວບ້ານ, ການຕຳຫູກ ແລະ ການປູຝັງລ້ຽງສັດ.

## ໙. ຕາດລຸນ.

**ທີ່ຕັ້ງ:** ຕັ້ງຢູ່ບ້ານຫ້ວຍສາຫ່າງຈາກເທດສະບານເມືອງຮ້ຽມ 4 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນແຫຼ່ງທ່ອງທ່ຽວທຳມະຊາດນ້ຳຕົກທີ່ມີຄວາມງາມມີຫຼາຍຊັ້ນ, ມີຄວາມຍາວປະມານ 300 ແມັດມີພະລານຫີນກ້ວາງ, ນ້ຳໃສ ແລະ ມີປາຫຼາຍເປັນແຫຼ່ງທຳມາຫາກິນຂອງຊາວບ້ານບໍລິເວັນນັ້ນ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** 4 ກິໂລແມັດເປັນທາງດິນແດງຈິ່ງຍັງມີຄວາມຫຸ້ຍງຍາກໃນການເຂົ້າເຖິງໂດຍສະເພາະແມ່ນຊ່ວງລະດູຝົນ, ເປັນແຫຼ່ງທ່ອງທ່ຽວທີ່ບໍ່ທັນໄດ້ພັດທະນາ.

**ແຜນພັດທະນາໃນຕໍ່ໜ້າ:** ພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ, ທ່ຽວຊົມທຳມະຊາດ, ກິນເຂົ້າປ່າ ຮຽນຮູ້ວິທີຫາກິນແບບທຳມະຊາດ.





**ທີ່ຕັ້ງ:** ຕາດຜາຫ່ວາງຕັ້ງຢູ່ບ້ານປາວເໜືອ, ຫ່າງຈາກເທດສະບານເມືອງຊຳໃຕ້ 26 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນແຫຼ່ງທ່ອງທ່ຽວທຳມະຊາດທີ່ຄົ້ນພົບໃນປີ 2014.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ປະມານ 4 ກິໂລແມັດຈາກບ້ານປາວເໜືອ ເຂົ້າໄປຫາແຫຼ່ງທ່ອງທ່ຽວ ເປັນທາງດິນແດງທະລຸໃໝ່ ຈຶ່ງຍັງມີຄວາມຫຍຸ້ງຍາກໃນການເຂົ້າເຖິງ, ເປັນແຫຼ່ງທ່ອງທ່ຽວທີ່ຍັງບໍ່ທັນໄດ້ສຳຫຼວດ ແລະ ບໍ່ທັນໄດ້ພັດທະນາສິ່ງອຳນວຍຄວາມສະດວກຕ່າງໆ.

**ແຜນພັດທະນາໃນຕໍ່ໜ້າ:** ພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ, ທ່ຽວຊົມທຳມະຊາດ, ທ່ຽວຊົມວິຖີຊີວິດຂອງເຜົ່າໄທແດງ.

## 11. ຕາດວັງໄນ.



**ທີ່ຕັ້ງ:** ຕັ້ງຫ່າງຈາກເທດສະບານເມືອງຊຳໃຕ້ 5 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ນ້ຳຕົກຕາດວັງໄນ ມີປະຫັວດຄວາມເປັນມາຈາກການເລົ່າລື ຂອງຜູ້ເຖົ້າຜູ້ແກ່ສືບທອດກັນມາວ່າ ແຕ່ກີ້ແຕ່ກ່ອນເຂດດັ່ງກ່າວ ມີຄວາມອຸດົມສົມບູນໄປ ດ້ວຍພູຜາປ່າໄມ້ ແລະ ສັດນ້ຳ, ສັດປ່ານາໆຊະນິດ ປະຊາຊົນອາໄສທຳມາຫາກິນຢ່າງສະດວກ ສະບາຍ ຢູ່ມາມື້ໜຶ່ງ ໄດ້ມີໝາໄນຕົວໜຶ່ງທີ່ອາໄສຢູ່ປ່າໃກ້ຄຽງກັບຕາດ ໄດ້ລົງມາຫຼິ້ນ ມື້ນັ້ນ ເປັນຊ່ວງລະດູຝົນນ້ຳນອງ ແລະ ໄຫຼແຮງ ໝາໄນໂຕນັ້ນ ພະຍາຍາມຈະຂ້າມຕາດ ເພື່ອໄປຫາ ບ່ອນທີ່ຕົນຢູ່ແຕ່ ໂຊກຮ້າຍໝາໄນໂຕນັ້ນ ກະໂດດຂ້າມຂ້າມບໍ່ເຖິງຝັ່ງ ຈິ່ງເຮັດໃຫ້ມັນຕົກລົງ ຕາດ ແລະ ໄຫຼລົງຕາມກະແສນ້ຳ ເຮັດໃຫ້ມັນເສຍຊີວິດໃນທີ່ສຸດ. ຕໍ່ຈາກນັ້ນມາ, ປະຊາຊົນ ຈິ່ງເອີ້ນຕາດດັ່ງກ່າວວ່າ: ຕາດວັງໄນ ເທົ່າທຸກວັນນີ້.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** 5 ກິໂລແມັດ ເປັນເສັ້ນທາງດິນແດງຈິ່ງ ຍັງມີຄວາມຫຸ້ຍງຍາກໃນການເຂົ້າເຖິງ ໂດຍສະເພາະແມ່ນຊ່ວງລະດູຝົນ ແລະ ສິ່ງອຳນວຍ ຄວາມສະດວກຕ່າງໆກໍ່ຍັງບໍ່ທັນໄດ້ພັດທະນາເທົ່າທີ່ຄວນ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນແຫຼ່ງທ່ອງທ່ຽວທຳມະຊາດ, ປັບປຸງເສັ້ນທາງເຂົ້າ ເຖິງ ແລະ ພັດທະນາສິ່ງອຳນວຍຄວາມສະດວກຕ່າງໆ.

## 12. ຕາດຫ້ວຍສ້ານ.



**ທີ່ຕັ້ງ:** ຕັ້ງຢູ່ບ້ານຫ້ວຍສ້ານ ຫ່າງຈາກເທດສະບານເມືອງຊຳໃຕ້ 7 ກິໂລແມັດ.

**ປະຫວັດແຫຼ່ງທ່ອງທ່ຽວ:** ບ້ານສ້ານ ແລະ ຕາດຫ້ວຍສ້ານໄດ້ຊື່ມາຈາກຫ້ວຍສ້ານ ເຊິ່ງລຽບສອງຝັ່ງຕາມຫ້ວຍຮ່ອມ ມີຕົ້ນໝາກສ້ານຫຼາຍຕົ້ນຢັ່ງຢາຍ ຈິ່ງມີນິທານເລົ່າລືກັນມາວ່າ ບ່າວສາວຄູ່ໜຶ່ງ ບໍ່ໄດ້ແຕ່ງງານກັນ ກໍ່ຍ້ອນພໍ່ຂອງຜູ້ສາວໄດ້ທ້າໃຫ້ຜູ້ບ່າວກິນໝາກສ້ານຕົ້ນລະໜ່ວຍ ແລະ ໜ່ວຍລະຄຳ ແຕ່ຍ້ອນມີຕົ້ນໝາກສ້ານຫຼາຍ ແລະ ເປັນໝາກໄມ້ປະເພດສົ້ມ ຊາຍໜຸ່ມຄົນນັ້ນ ຈິ່ງເຮັດບໍ່ໄດ້ຕາມຄຳທ້າຂອງພໍ່ຜູ້ສາວ ຈິ່ງເຮັດໃຫ້ບ່າວສາວຄູ່ນັ້ນ ບໍ່ໄດ້ແຕ່ງງານກັນ ແລະ ກໍ່ໄດ້ເອີ້ນຕາດຫ້ວຍສ້ານແຕ່ນັ້ນມາຮອດປະຈຸບັນ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** 5 ກິໂລແມັດ ເປັນເສັ້ນທາງດິນແດງ ຈິ່ງຍັງມີຄວາມຫຸ້ຍງຍາກໃນການເຂົ້າເຖິງ ໂດຍສະເພາະແມ່ນຊ່ວງລະດູຝົນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ກໍ່ຍັງບໍ່ທັນໄດ້ພັດທະນາເທົ່າທີ່ຄວນ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນແຫຼ່ງທ່ອງທ່ຽວທຳມະຊາດ, ປັບປຸງເສັ້ນທາງເຂົ້າເຖິງ ແລະ ພັດທະນາສິ່ງອຳນວຍຄວາມສະດວກຕ່າງໆ.

## 13. ຕາດຫ້ວຍແວກ.



**ທີ່ຕັ້ງ:** ຕັ້ງຢູ່ບ້ານຫ້ວຍແວກ, ຫ່າງຈາກເທດສະບານເມືອງຫົວເມືອງ 6 ກິໂລແມັດ.

**ປະຫວັດແຫຼ່ງທ່ອງທ່ຽວ:** ເປັນນໍ້າຕົກຕາດທີ່ມີຄວາມສູງປະມານ 30 ແມັດເປັນສອງຊັ້ນຈາກນໍ້າໄຫຼຜ່ານຮ່ອມພູເລິກ ມີປ່າໄມ້ໃຫ່ຍປົກຄຸມ ແລະ ອາກາດຊຸ່ມເຢັນຕະຫຼອດປີ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ການເຂົ້າເຖິງຂ້ອນຂ້າງສະດວກຢູ່ຫ່າງຈາກທາງລົດປະມານ 20 ແມັດ ແຕ່ເປັນແຫຼ່ງທ່ອງທ່ຽວທີ່ຍັງບໍ່ທັນພັດທະນາສິ່ງອຳນວຍຄວາມສະດວກຕ່າງໆ.

**ແຜນພັດທະນາໃນຕໍ່ໜ້າ:** ປັບປຸງທາງຍ່າງລົງໄປ, ປ້າຍຊີ້ບອກ ແລະ ສາລາພັກເພື່ອເປັນຈຸດແວ່ຂອງແຂກຄົນທີ່ຈະມຸ່ງໜ້າໄປເມືອງຊຳເໜືອ.



## 14. ບ້ານຫັດຖະກຳຕ່ຳຫູກ(ບ້ານນາສະລາ).

**ທີ່ຕັ້ງ:** ບ້ານນາສະລາຕັ້ງຢູ່ກິໂລແມັດທີ 40 ກ່ອນຈະເດີນທາງເຖິງເທດສະບານຕົວເມືອງຊຳເໜືອ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນບ້ານເຜົ່າລາວລຸ່ມຕັ້ງຢູ່ສອງພາກທາງເສັ້ນທາງ ເລກ 6 ຫ່າງຈາກເທດສະບານຕົວເມືອງຊຳເໜືອ 40 ກິໂລແມັດເປັນບ້ານທີ່ມີມູນເຊື້ອ ແລະ ຊື່ສຽງໃນການຕ່ຳຫູກໂດຍສະເພາະແມ່ນການຕ່ຳສິ້ນໝີ່,ມັດໝີ່, ເຂັນຝ້າຍ ແລະ ຍ້ອມນິນ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ການເຂົ້າເຖິງສະດວກ ແຕ່ຍັງບໍ່ທັນໄດ້ພັດທະນາໃຫ້ມີຄວາມສະດວກແກ່ນັກທ່ອງທ່ຽວເຊັ່ນ: ຫ້ອງນ້ຳສາທາລະນະ, ຫ້ອງຜະລິດ ແລະ ວາງສະແດງຜະລິດຕະພັນຊາວບ້ານ ຫຼື ຈຸດແວ່ພັກເຊົາຕ່າງໆ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນຈຸດແວ່ພັກເຊົາຂອງແຂກ ແລະ ຊື້ຜະລິດຕະພັນຊາວບ້ານ.

## 15. ບ້ານຫັດຖະກຳຕ່ຳຫູກ(ບ້ານຊຳໃຕ້).

**ທີ່ຕັ້ງ:** ເປັນບ້ານທີ່ຕິດກັບເທດສະບານເມືອງຊຳໃຕ້.

**ປະຫັວດແຫຼ່ງທ່ອງທ່ຽວ:** ບ້ານຊຳໃຕ້ເປັນບ້ານເກົ່າບ້ານເດີມມີມາຕັ້ງແຕ່ຕັ້ງເປັນເມືອງຊຳໃຕ້ເປັນບ້ານເຜົ່າລາວລຸ່ມຖືສາດສະໜາພຸດ, ມີມູນເຊື້ອ ໃນ ການຕ່ຳຫູກຊາວໄໝມາຕັ້ງແຕ່ປູ່ຍ່າຕາຍາຍ ແລະ ສືບທອດກັນມາຮອດເຊັ່ນລູກເຊັ່ນຫຼານ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ການເຂົ້າເຖິງສະດວກ ແຕ່ຍັງບໍ່ທັນໄດ້ພັດທະນາໃຫ້ມີຄວາມສະດວກແກ່ນັກທ່ອງທ່ຽວເຊັ່ນ: ຫ້ອງນ້ຳສາທາລະນະ, ຫ້ອງຜະລິດ ແລະ ວາງສະແດງຜະລິດຕະພັນຊາວບ້ານ ຫຼື ຈຸດແວ່ພັກເຊົາຕ່າງໆ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງເປັນບ້ານທ່ອງທ່ຽວເຊີງຫັດຖະກຳເປັນຕົ້ນການຕ່ຳຫູກ, ຊາວໄໝ ແລະ ການຍ້ອມສີທຳມະຊາດ.



## 16. ບ້ານຫັດຖະກຳຈັກສານ (ບ້ານນາຍົມ).



**ທີ່ຕັ້ງ:** ບ້ານນາຍົມ ຕັ້ງຢູ່ເມືອງສິບເບົາຫ່າງຈາກເທດສະບານແຂວງ 50 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນບ້ານເຜົ່າກຶມມຸ ທີ່ຕັ້ງຖິ່ນຖານບ້ານເຮືອນຢູ່ລຽບທາງກິໂລແມັດທີ 50 ລະຫ່ວາງທາງຊໍາເໜືອຫາເມືອງສິບເບົາ, ມີມູນເຊື້ອດ້ານຫັດຖະກໍາຈັກສານເຊັ່ນ: ສານຕິບເຂົ້າ, ກະບຸງ, ກະຕ່າ ແລະ ອື່ນໆເປັນອາຊີບເສີມທີ່ສ້າງລາຍຮັບໃຫ້ແກ່ຄອບຄົວ.

**ການເຂົ້າເຖິງ ແລະ ສິ່ງອໍານວຍຄວາມສະດວກ:** ການເຂົ້າເຖິງສະດວກ ແຕ່ຍັງບໍ່ທັນໄດ້ຮັບການພັດທະນາສິ່ງອໍານວຍຄວາມສະດວກຕ່າງໆ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນບ້ານຈຸດແວ່ພັກເຊົາຂອງແຂກເພື່ອຊື້ຜະລິດຕະພັນຫັດຖະກໍາຈັກສານຕ່າງໆ.

## 17. ບ້ານເຜົ່າມົ້ງຂາວ (ບ້ານຫ້ວຍໄຄ້).

**ທີ່ຕັ້ງ:** ບ້ານຫ້ວຍໄຄ້ ຂຶ້ນກັບເມືອງຫົວເມືອງ ຫ່າງຈາກເທດສະບານແຂວງ 64 ກິໂລແມັດ.



**ປະຫັວດແຫຼ່ງທ່ອງທ່ຽວ:** ເປັນບ້ານເຜົ່າມົ້ງຂາວທີ່ຍັງຮັກສາຮີດຄອງປະເພນີການນຸ່ງຖືແບບມົ້ງຂາວໄດ້ເປັນດີ. ບ້ານຫ້ວຍໄຄ້ເປັນບ້ານວັດທະນະທໍາແບບຢ່າງ ຂອງແຂວງຫົວພັນປະຊາຊົນ/ຊາວມີຄວາມສາມັກຄີເປັນປຶກແຜ່ນ,ມີຄວາມເປັນເອກະພາບ,ເປັນບ້ານປອດຢາເສບຕິດໝົດບ້ານມີຄົນສູບຢາພຽງ 2 ຄົນ, ພາຍໃນບ້ານມີຄວາມສະອາດຈົບງາມອ້ອມຈອດດ້ວຍປ່າໄມ້ທີ່ຂຽວສົດງົດງາມຕະຫຼອດປີ.

**ການເຂົ້າເຖິງ ແລະ ສິ່ງອໍານວຍຄວາມສະດວກ:** ຈາກທາງຢາງເຂົ້າໄປຫາບ້ານຫ້ວຍໄຄ້ 7 ກິໂລແມັດ ເປັນທາງດິນແດງແຕ່ກໍ່ສາມາດເຂົ້າເຖິງໄດ້ທັງສອງລະດູ. ສິ່ງອໍານວຍຄວາມສະດວກດ້ານຕ່າງໆແມ່ນອາໄສຄອບຄົວປະຊາຊົນເຊັ່ນ: ບ່ອນນັ່ງພັກເຊົາ, ຫ້ອງນໍ້າ ແລະ ອື່ນໆ.

**ແຜນພັດທະນາໃນຕໍ່ໜ້າ:** ພັດທະນາໃຫ້ເປັນບ້ານທ່ອງທ່ຽວຕິດພັນວິຖີຊີວິດຂອງເຜົ່າມົ້ງຂາວ.

## 18. ບ້ານເຜົ່າໄທພວນ(ບ້ານຖ້ຳລາ).



**ທີ່ຕັ້ງ:** ບ້ານຖ້ຳລາຂຶ້ນກັບເມືອງຮ້ຽມຫ່າງຈາກເທດສະບານເມືອງ 33 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ບ້ານຖ້ຳລາເປັນເຜົ່າພວນຖືສາດສະໜາພຸດທີ່ຍົກຍ້າຍຖິ່ນຖານບ້ານເຮືອນມາຈາກເມືອງຄຳ, ແຂວງຊຽງຂວາງແຕ່ສະໄໝສົງຄາມ, ມີວິຖີຊີວິດ, ການນຸ່ງຖື, ພາສາການປາກເວົ້າ ແລະ ຮີດຄອງປະເພນີທີ່ເປັນເອກະລັກຂອງເຜົ່າ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** 33 ກິໂລແມັດເປັນທາງດິນແດງຈຶ່ງມີຄວາມຫຍຸ້ງຍາກໃນການເຂົ້າເຖິງ ໂດຍສະເພາະແມ່ນລະດູຝົນ. ສິ່ງອຳນວຍຄວາມສະດວກກໍ່ຍັງບໍ່ໄດ້ພັດທະນາຮັບໃຊ້ແບບສາທາລະນະ ຫຼື ຮັບໃຊ້ການທ່ອງທ່ຽວແຕ່ແຂກຄົນໄປມາສາມາດພັກເຊົາ, ຢູ່ກິນນຳປະຊາຊົນ.

**ແຜນພັດທະນາໃນຕໍ່ໜ້າ:** ພັດທະນາໃຫ້ເປັນບ້ານທ່ອງທ່ຽວວັດທະນະທຳທີ່ຕິດພັນກັບວິຖີຊີວິດຂອງເຜົ່າພວນ ແລະ ທ່ອງທ່ຽວດ້ານປະຫັວດສາດຊົມສິ່ງເສດເຫຼືອສົງຄາມນາຄັງ ຖ້າຍ USA ເກົ່າສະໄໝສົງຄາມ.

## 19. ພູສາມເສົ້າ.

**ທີ່ຕັ້ງ:** ພູສາມເສົ້າຕັ້ງຢູ່ຫ່າງຈາກເທດສະບານເມືອງຊຽງຄໍ້ປະມານ 800 ແມັດ.

**ຫັວດແຫຼ່ງທ່ອງທ່ຽວ:** ແຕ່ກີ້ແຕ່ກ່ອນມີຄຳເລົ່າລືກັນມາວ່າ ມີອ້າຍ 7 ໄທ ທີ່ເລາະທ່ຽວແຕ່ຍອດນ້ຳມ່າລົງມາ ເພື່ອຊອກຫາບ່ອນເຮັດນາພໍມາຮອດເຂດນາແລງອ້າຍ 7 ໄທ ໄດ້ພັກແຕ່ງກິນ ລາວໄດ້ຫຼຽວເຫັນພູສາມໜ່ວຍຕັ້ງຄືກ້ອນເສົ້າ ຈຶ່ງໄດ້ເອົາໝໍ້ໄປຕັ້ງໃສ່ ແລ້ວຍື້ມືໄປລູບເອົາຫ້ຍ້າຢູ່ພູໜ່ວຍໜຶ່ງມາດັງໄຟ ແຕ່ນັ້ນມາພູໜ່ວຍນັ້ນ ຈຶ່ງເອີ້ນວ່າພູລູບ ແລະ ເມື່ອແຕ່ງກິນແລ້ວພູສາມໜ່ວຍນັ້ນໄດ້ເປັນກ້ອນເສົ້າອ້າຍ 7 ໄທ ຈຶ່ງພາກັນເອີ້ນວ່າພູສາມເສົ້າມາເຖິງປັດຈຸບັນ.



**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** ປະມານ 800 ແມັດ ເປັນທາງຍ່າງຂຶ້ນຮອດຈອມພູເປັນແຫຼ່ງທ່ອງທ່ຽວທີ່ຍັງບໍ່ທັນໄດ້ຮັບການພັດທະນາ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງເປັນຈຸດຊົວວິວ.

## 20. ວັດດ່ານຣິມ (ວັດວິຫູນ).



**ທີ່ຕັ້ງ:** ວັດດ່ານຣິມ(ວັດວິຫູນ)ຕັ້ງຢູ່ບ້ານດ່ານຣິມ, ຫ່າງຈາກເທດສະບານເມືອງສິບເປົາ 16 ກິໂລແມັດ.

**ປະຫັວດແຫຼ່ງທ່ອງທ່ຽວ:** ວັດດ່ານຣິມມມີຊື່ວ່າ: "ວັດວິຫູນ"ຕາມຕຳນານໃນປະຫັວດສາດໄດ້ຖືກສ້າງຕັ້ງຂຶ້ນໃນປີ ຄສ 1515. ສະໄໝພະເຈົ້າວິຫູນ ຂຶ້ນຄອງລາດເພິ່ນໄດ້ສ້າງວັດວິຫູນຢູ່ຫຼວງພະບາງ ເຊິ່ງມີພະທາດເຈດີເປັນທາດ ໝາກໂມ. ຫຼັງຈາກນັ້ນ, ເພິ່ນກໍ່ໄດ້ມາສ້າງວັດວິຫູນ ອີກຢູ່ບ້ານດ່ານຣິມ ເມືອງຊຽງຄໍ້. ສະໄໝນັ້ນ ຖືວ່າເປັນສະໄໝຮຸ່ງເຮືອງທາງດ້ານສາດສະໜາ, ວັດທະນະທຳ ແລະ ຈິດໃຈ. ວັດວິຫູນເປັນວັດທີ່ສ້າງຂຶ້ນກ່ອນໝູ່ໃນຈຳນວນ 4 ວັດທີ່ມີຊື່ສຽງຢູ່ແຂວງຫົວພັນຄື: ວັດຈອມສີ ນາແລ້ງ ຫົວເມືອງ, ວັດຈອມແຈ້ງຫົວເມືອງ ແລະ ວັດສີບູນເຮືອງ ເມືອງໂສຍ.

**ການເຂົ້າເຖິງ ແລະ ສິ່ງອຳນວຍຄວາມສະດວກ:** 12 ກິໂລແມັດເຂົ້າໄປບ້ານດ່ານໂຣມ ຍັງເປັນທາງດິນແດງການເຂົ້າເຖິງຈຶ່ງຍັງມີຄວາມຫຸ້ຍງຍາກ ໂດຍສະເພາະແມ່ນຊ່ວງລະດູຝົນ, ສິ່ງອຳນວຍຄວາມສະດວກຕ່າງໆ ກໍ່ຍັງບໍ່ທັນໄດ້ຮັບການພັດທະນາ.

**ແຜນພັດທະນາໃນຕໍ່ໜ້າ:** ສ້າງໃຫ້ເປັນສະຖານທີ່ແຫຼ່ງທ່ອງທ່ຽວດ້ານປະຫັວດສາດ ເພື່ອໃຫ້ຄົນລຸ້ນຫຼັງໄດ້ສຶກສາຮຽນຮູ້ປະຫັວດສາດ ແລະ ເປັນບ່ອນເຄົາລົບບູຊາ.

# ແຂວງໄຊຍະບູລີ

## 1. ອ່າງນໍ້າຕຽນ.



ອ່າງນໍ້າຕຽນ ມີເນື້ອທີ່ອ້ອມຮອບອ່າງທັງໝົດ 9.500 ເຮັກຕາ, ໃນນີ້ມີເນື້ອທີ່ອ່າງນໍ້າ 565 ເຮັກຕາ, ຄວາມສາມາດບັນຈຸນໍ້າສູງສຸດ 43,60 ລ້ານແມັດກ້ອນ, ລະດັບນໍ້າປົກກະຕິ 27,70 ລ້ານແມັດກ້ອນ ແລະ ປະລິມານນໍ້າທີ່ໃຊ້ໄດ້ 13,70 ລ້ານແມັດກ້ອນ, ຊຶ່ງປະຊາຊົນທີ່ໄດ້ຮັບຜົນປະໂຫຍດໃນການຊົມໃຊ້ນໍ້າຈາກອ່າງນໍ້າຕຽນມີ 20 ບ້ານໃນເທດສະບານເມືອງໄຊຍະບູລີ, 827ຄອບຄົວ, ມີປະຊາກອນ 4,135 ຄົນ ໂດຍທົ່ວໄປອ່າງນໍ້າຕຽນ ຍັງສະໜອງນໍ້າໃຫ້ແກ່ການຜະລິດ ຊຶ່ງມີເນື້ອທີ່ນາທີ່ໄດ້ຮັບຜົນປະໂຫຍດໂດຍກົງຈຳນວນ 543,13 ເຮັກຕາ, ເນື້ອທີ່ນາທີ່ໄດ້ຮັບຜົນປະໂຫຍດທາງອ້ອມຈຳນວນ 6,46 ເຮັກຕາ, ເນື້ອທີ່ໜອງປາ 18,00 ເຮັກຕາ.

## 2. ເຂດພັນຖໍ້ານໍ້າທັ່ງ.



ເຂດພັນຖໍ້ານໍ້າທັ່ງ ໄດ້ຮັບການພັດທະນາເປັນແຫຼ່ງທ່ອງທ່ຽວໃນປີ 2009 ໂດຍໄດ້ຮັບການສະໜັບໜູນຈາກໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ (STDP) ແລະ ໄດ້ເປີດບໍລິການໃນປີ 2011. ເຂດດັ່ງກ່າວ ມີຖໍ້າມີຮູຫຼາຍ ເຊິ່ງເປັນທີ່ມາຂອງຊື່ ເຂດພັນຖໍ້ານໍ້າທັ່ງ ເຊິ່ງຫ່າງຈາກຕົວເມືອງໄຊຍະບູລີ 43 ກິໂລແມັດ.



## 3. ຕາດເຈົ້າ.

ນ້ຳຕົກຕາດເຈົ້າ ແມ່ນສະຖານທີ່ທີ່ປະຊາຊົນຊາວເມືອງໄຊຍະບູລີ ກໍຄືແຂກຕ່າງດ້າວທ້າວຕ່າງແດນ ນິຍົມໄປທ່ຽວຊົມ, ພັກຜ່ອນ ຫຼື ພາກັນມາອາບນ້ຳ ໂດຍມີຄວາມເຊື່ອວ່າ ເມື່ອອາບແລ້ວ ຈະເຮັດໃຫ້ຮ່າງກາຍແຂງແຮງ ແລະ ສະສາງລ້າງສ່ວຍສິ່ງທີ່ບໍ່ດີອອກໄປ. ໃນສະໄໝກ່ອນ ພໍຮອດບຸນກຸດສົງ ການປີ ໃໝ່ລາວຂອງທຸກໆປີ ເຈົ້າຊີວິດຫຼວງພະບາງ ຈະໃຫ້ຄົນມານຳເອົານ້ຳຢູ່ແຫ່ງນີ້ ໄປຫົດສົງພະບາງ ຢູ່ທີ່ຫຼວງພະບາງ.

## 4. ຕາດຮຳ.



ແຕ່ກີ້ແຕ່ກ່ອນ ມີເມືອງໜຶ່ງຊື່ວ່າ ເມືອງທ່າໂຮງ ເຊິ່ງມີໜອງນ້ຳໃຫຍ່ແຫ່ງໜຶ່ງ ເຊິ່ງເປັນທີ່ຢູ່ອາໄສຂອງເງືອກໂຕໜຶ່ງ. ມື້ໜຶ່ງ, ເງືອກໂຕນັ້ນໄດ້ປອມໂຕເປັນກະປູ ແລ້ວໄປຄາບຕີນລູກສາວພະຍາ ທີ່ກຳລັງຕ່ຳຫູກຢູ່ກ້ອງລ່າງເຮືອນ ແລ້ວອຳເອົານາງລົງໄປທ່ານ້ຳ ພະຍາຈຶ່ງໄດ້ແຕ່ງໝໍມົນ ແລະ ເຖົ້າແກ່ຈຳ ນວນໜຶ່ງ ເພື່ອຊອກຫາລູກສາວ, ພວກເຂົາໄດ້ນຳຮອຍຕີນນັ້ນ ໄປຮອດທ່ານ້ຳແຫ່ງໜຶ່ງ (ເອີ້ນວ່າ ນ້ຳຮອຍ). ໝໍມົນ ແລະ ເຖົ້າແກ່ ໄດ້ນຳຮອຍໄປຈົນຄໍ່າເລີຍພໍ້ກະຕ່າຍຝູງໜຶ່ງຢູ່ແກ້ງ (ເລີຍເອີ້ນວ່າ ແກ້ງລາດກະຕ່າຍ). ເມື່ອພວກເຂົາໄປຮອດແກ້ງແຫ່ງໜຶ່ງ ແລະ ໄດ້ໄຕ້ທຽນ (ເລີຍເອີ້ນວ່າ ແກ້ງທຽນ).ຈາກນັ້ນ, ກໍນຳຮອຍຕີນຂຶ້ນໄປທາງເບື້ອງຕາເວັນຕົກຂອງນ້ຳຮອຍ ຝົນເລີຍຕົກຮຳ (ຈຶ່ງເອີ້ນວ່າ ນ້ຳຮຳ).  ພວກເຂົາກໍສືບຕໍ່ເດີນທາງໄປຕາມສາຍນ້ຳແຫ່ງນັ້ນ ຈົນໄປຮອດນ້ຳຕົກທີ່ສູງຊັນແຫ່ງໜຶ່ງ ແລະ ໄປຕໍ່ບໍ່ໄດ້ (ເລີຍເອີ້ນວ່າ ນ້ຳຕົກຕາດຮຳ) ຈົນເຖິງປະຈຸບັນ.

## 5. ວັດສີບຸນເຮືອງ.



ວັດສີບຸນເຮືອງ ຖືກສ້າງຂຶ້ນໃນປີ 1456. ໃນສະໄໝກ່ອນ ເປັນວັດທີ່ສ້າງດ້ວຍໄມ້, ໃນໄລຍະຫຼາຍປີທີ່ຜ່ານ ວັດໄດ້ຖືກໄຟໄໝ້ເປັນເວລາຫຼາຍຄັ້ງ. ດັ່ງນັ້ນ, ຈຶ່ງເຮັດໃຫ້ໜັງສືໃບລານ ແລະ ເລື່ອງລາວຕ່າງໆພາຍໃນວັດ ຖືກໄຟໄໝ້ຈົນໝົດ. ຕໍ່ມາ ວັດສີບຸນເຮືອງໄດ້ຖືກສ້າງຂຶ້ນໃໝ່, ແລະ ໃນປີ 2010 ພະນອນທີ່ມີ ຄວາມຍາວ 6 ແມັດ ໄດ້ຖືກສ້າງສໍາເລັດ. ຢູ່ໃນວັດແຫ່ງນີ້ ຍັງມີພະອົງໜຶ່ງຊື່ວ່າ: “ພະເຈົ້າໃຫຍ່” ເປັນພະພຸດທະຮູບທີ່ມີອາຍຸມີອາຍຸ 600 ກວ່າປີ.

## 6. ບ້ານວຽງແກ້ວ.

ແຕ່ກ່ອນ ບ້ານວຽງແກ້ວ ເປັນປ່າດົງຕຶບໜາ ມີຕົ້ນໄມ້ໃຫຍ່ ແລະ ໜອງໃຫ່ຍແຫ່ງໜຶ່ງເອີ້ນວ່າ: ໜອງປາດຸກ ພໍຮອດປີ 1953 ໄດ້ມີພໍ່ເຖົ້າ ແສນສຸທະ ຊິນເຜົ່າລີ້ ພ້ອມດ້ວຍໝູ່ 4 ຄົນອອກຈາກບ້ານບິໝີ ເມືອງເງິນ ມາຕັ້ງບ້ານຢູ່ບໍລິເວນນີ້, ເພາະມີສະຖານທີ່ເໝາະສົມກັບການຜະລິດ, ມີສາຍນໍ້າເຫຼືອກ, ມີທີດິນທີ່ສາມາດສັບຊ່າວນາໄດ້ຈໍານວນໜຶ່ງ, ເວລານີ້ ການຈັດຕັ້ງຕ່າງໆ ແມ່ນຂຶ້ນກັບບ້ານນາສ້ານ ແລະ ມີຊື່ວ່າ ບ້ານໜອງປາດຸກ. ເມື່ອຮອດປີ 1968 ມີເຖິງ 2໐ ຄອບຄົວ ທາງອໍານາດການປົກຄອງ ຄື: ທ່ານ ກິໂຕ ສຸວັນນະວົງ ເຈົ້າເມືອງຫົງສາ ຈຶ່ງໄດ້ປຽ່ນຈາກບ້ານໜອງປາດຸກ ມາເປັນບ້ານວຽນແກ້ວ ຈົນເຖິງປັດຈຸບັນ (ກ່ອນຈະໃສ່ຊື່ບ້ານວຽງແກ້ວ ແມ່ນເອົາຕາມຊື່ພູວຽງຂອງອ້າຍຮູດ ຕາມປະຫວັດສາດລາວ, ເຊິ່ງປະຈຸບັນຍັງມີຮ່ອງຮອຍພູວຽງ ຍັງເຫຼືອໃຫ້ເຫັນຢູ່).





## 7. ຫໍໄຊ.

ຫໍໄຊ ອາດຖືກສ້າງຂຶ້ນໃນປີ 1872, ເປັນຫໍໂຮງທີ່ເຮັດດ້ວຍໄມ້ສັກທັງໝົດ ໃນເມື່ອກ່ອນ ຫໍໄຊ ແມ່ນເປັນບ່ອນປະທັບຂອງເຈົ້າຊີວິດ ສີສະຫວ່າງວົງ ໃນເວລາທີ່ພະອົງ ສະເດັດມາເຮັດວຽກຢູ່ປາກລາຍ ຫຼື ຈະສະເດັດໄປນະຄອນຫຼວງວຽງຈັນ. ໄລຍະຕໍ່ມາ ຫໍໄຊ ໄດ້ຖືກນຳໃຊ້ເປັນບ່ອນສະຫຼອງໄຊຊະນະ ທີ່ລາວ ສາມາດຕີເອົາຊະນະພວກສັກດີນາສະຫຍາມ. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ໄດ້ລົບລ້າງລະບອບລາຊາ, ຫໍໄຊ ຈຶ່ງຖືກນຳໃຊ້ເປັນບ່ອນເຮັດວຽກ ຂອງສຳນັກງານອົງການປົກຄອງເມືອງປາກລາຍ.

## 8. ຖ້ຳສະຫວັນຮັກ.



ຖ້ຳສະຫວັນຮັກ ແມ່ນມີມາຫຼາຍເຊັ່ນຄົນແລ້ວ ແຕ່ຍັງບໍ່ທັນຖືກພັດທະນາໃຫ້ເປັນ ສະຖານທີ່ທ່ອງທ່ຽວ ຈົນຮອດປີ 2017 ທາງອຳນາດການປົກຄອງເມືອງໄຊຍະບູລີ ສົມທົບກັບຊາວບ້ານຫ້ວຍຊ່າວ ພັດທະນາຖ້ຳດັ່ງກ່າວ ໃຫ້ກາຍເປັນສະຖານທີ່ທ່ອງທ່ຽວທາງທຳມະຊາດ.

## ໑. ຖ້ຳລອດ.



ບັນດາຖ້ຳຕ່າງໆ ທີ່ຢູ່ບໍລິເວນບ້ານຖ້ຳລອດ ແມ່ນມີມາແຕ່ຕັ້ງຫຼາຍເຊັ່ນຄືນແລ້ວ, ແຕ່ບໍ່ມີໃຜສາມາດພິສູດໄດ້ວ່າ ພົບເຫັນປີໃດ ເປັນພຽງແຕ່ການບອກເລົ່າ ແລະ ການຈື່ຂອງທ່ານ ປ້ອງມຽງສາ ວ່າ: ປະມານປີ 1951 ພໍ່ເຖົ້າປ້ອງມຽງສາ ແລະ ພໍ່ເຖົ້າຂຸນໄດ້ພາກັນໄປຍິງລິງ ຢູ່ບໍລິເວນຖ້ຳລອດ, ລິງໃຫຍ່ໄດ້ຕົກລົງຢູ່ປາກຖ້ຳ ທັງສອງທ່ານໄດ້ເຂົ້າໄປເອົາລິງ. ຫຼັງຈາກເອົາລິງໃຫຍ່ອອກມາແລ້ວ ທັງສອງໄດ້ເຫັນແສງໄຟເທົ່າຫຼອດໄຟຟ້າຮຸ່ງຢູ່ໃນຖ້ຳ. ຕໍ່ມາ ທຸກໆວັນສິນ 8 ຄ່ຳ ແລະ 15 ຄ່ຳ ໄດ້ເກີດມີສຽງຄ້ອງ, ສຽງກອງດັງອອກມາຈາກຖ້ຳດັ່ງກ່າວ ຈຶ່ງໃສ່ຊື່ວ່າຖ້ຳລອດ.



## 10. ວັດພູທອກ.

ເປັນເວລາດົນນານມາແລ້ວ ມີພູໜ່ອຍໜຶ່ງທີ່ມີໝູປ່າເຖິກໃຫ່ຍອາໄສຢູ່, ເຊິ່ງຄົນສ່ວນຫຼາຍເຂົາເອີ້ນວ່າ: ໝູທອກ ທີ່ມີຂອງດີຕິດຕົວຄື: ແຂ້ວໝູຕັນ ຄ່າມຄີງເຊິ່ງຜ່ານໆມາ ຜູ້ໃດເອົາປືນຍິງກະບໍ່ເຂົ້າ ບໍ່ຕາຍຈັກເທື່ອ, ໝູດັ່ງກ່າວ ນອນເຝົ້າກິນຫົວມັນອ້ອນ (ມັນດ້າງ) ຢູ່ຈອມພູດົນນານພໍສົມຄວນ ດັ່ງນັ້ນ, ຈຶ່ງພາກັນເອີ້ນວ່າ ພູທອກຈົນເຖິງທຸກວັນນີ້.

ພູທອກ ເປັນພູໜ່ອຍໜຶ່ງ ທີ່ຕັ້ງຢູ່ໂດດດ່ຽວ ແລະ ເປັນພູທີ່ສູງກ່ວາໝູ່ ທີ່ຢູ່ໃກ້ກັບເທດສະບານເມືອງ, ດັ່ງນັ້ນ ໃນເມື່ອກ່ອນໄດ້ມີຜູ້ນຳພາການປະວັດຊາດປະຊາທິປະໄຕ ຢູ່ແຂວງໄຊຍະບູລີ ໄດ້ເອົາພູໜ່ອຍນີ້ເປັນປ້ອມສັງເກດການ ເພື່ອວາງແຜນທາງດ້ານການເມືອງ ແລະ ການຕໍ່ສູ້ທາງດ້ານການທະຫານ ເພື່ອປົດປ່ອຍ ແຂວງໄຊຍະບູລີ ພ້ອມໆກັບບັນດາແຂວງ ໃນທົ່ວປະເທດ.

## 11. ສວນຊາພັນປີ.

ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ ຢູ່ເມືອງໄຊສະຖານໃຫ້ຮູ້ວ່າ ສວນຊາ ຢູບໍລິເວນດັ່ງກ່າວມີມາຫຼາຍເຊັ່ນຄົນແລ້ວ ເປັນຊາພັນພື້ນເມືອງ ມີເນື້ອທີ່ 182 ເຮັກຕາ ບາງຕົ້ນມີອາຍຸເຖິງ 1.000 ປີ.



## 12. ຖ້ຳພະຜາຂີ້ໝີ້ນ.



ຖ້ຳພະຜາຂີ້ໝີ້ນ ເປັນຖ້ຳໜຶ່ງທີ່ມີຄົນເຂົ້າຊົມ ແລະ ສັກກາລະບູຊາມາແຕ່ດຶກດຳບັນ, ເມື່ອຮອດຍາມບຸນປີໃໝ່ລາວ, ເຖົ້າແກ່ແນວໂຮມ, ພະສົງອົງຄະເຈົ້າບ້ານນາໄຮ ແລະ ບ້ານອື່ນໆ ໄດ້ຂຶ້ນໄປກາບໄຫ້ວທົດສົງທຸກໆປີ ມີໝູ່ນັກຮຽນຢູ່ແຕ່ລະໂຮງຮຽນພາຍໃນເຫດສະບານເມືອງ ກໍ່ໄດ້ຂຶ້ນໄປຫຼິ້ນໄປທ່ຽວຊົມເປັນຈຳນວນຫຼວງຫຼາຍ ແຕ່ບໍ່ໄດ້ຮັບການພັດທະນາ, ການໄປມາພົບຄວາມຫຍຸ້ງຍາກ, ອາໃສແຕ່ການຍ່າງເປັນຕົ້ນຕໍ, ທ້າຍປີ 2017 ຄະນະນຳຂອງແຂວງ ກໍ່ໄດ້ມີທິດຊີ້ນຳໃຫ້ເມືອງໄຊຍະບູລີ ລົງສຳຫຼວດ ແລະ ເກັບກຳຂໍ້ມູນ ເພື່ອພັດທະນາເປັນແຫຼ່ງທ່ອງທ່ຽວທາງທຳມະຊາດແຫ່ງນີ້.

## 13. ຫໍພິພິທະພັນ ກອງເຂົ້າໃຫຍ່.



ເມືອງພຽງ ເປັນທີ່ມີທົ່ງພຽງກວ້າງໃຫຍ່ ເປັນອູ່ເຂົ້າອູ່ປາ ຂອງເມືອງ ກໍຄືຂອງແຂວງໄຊຍະບູລີ. ໃນເມື່ອກ່ອນ ຫຼັງຈາກການເກັບກ່ຽວເຂົ້ານາສຳເລັດແລ້ວ ປະຊາຊົນແຕ່ລະບ້ານກໍໄດ້ຈັດບຸນເຂົ້າເປືອກເຂົ້າສານຂຶ້ນ ເພື່ອເປັນການສະແດງຄວາມຮູ້ບຸນຄຸນຂອງເຂົ້າ. ຕໍ່ມາທາງເມືອງ ຈຶ່ງໄດ້ຈັດໃຫ້ມີບຸນກອງເຂົ້າໃຫຍ່ຂຶ້ນ ເພື່ອເປັນເຕົ້າໂຮມຄວາມສາມັກຄີຂອງປະຊາຊົນ ແຕ່ລະບ້ານ ແລະ ເປັນການຮັບໃຊ້ການທ່ອງທ່ຽວ. ແລະ ໄດ້ສ້າງຫໍພິພິທະພັນກອງເຂົ້າໃຫຍ່ຂຶ້ນ ໃນປີ 2018 ເພື່ອວາງສະແດງເຄື່ອງມືທຳມາຫາກິນ ຂອງປະຊາຊົນບັນດາເຜົ່າ ແລະ ສະຖານທີ່ທ່ອງທ່ຽວພາຍໃນເມືອງ.

## 14. ຕົ້ນໄມ້ຂ່າໃຫຍ່.



ໃນປີ 1990 ທ່ານ ລຽນ ປະຊາຊິນ ບ້ານສິມສະຫວາດ ໄດ້ເຂົ້າໄປຊອກຢູ່ຫາກິນຢູ່ປ່າ ເລີຍໄດ້ພົບເຫັນຕົ້ນໄມ້ຂ່າໃຫຍ່ ຈິ່ງໄດ້ກັບມາລາຍງານ ຕໍ່ອຳນາດການປົກຄອງບ້ານ ຈາກນັ້ນ ຊາວບ້ານຈິ່ງໄດ້ພ້ອມກັນປົກປັກຮັກສາ ໃຫ້ເປັນສະຖານທີ່ທ່ອງທ່ຽວທາງດ້ານທຳມະຊາດ ຈົນເຖິງປັດຈຸບັນ.



## 15. ປ່າສະຫງວນແຫ່ງຊາດນ້ຳປຸຍ.

ປ່າສະຫງວນແຫ່ງຊາດນ້ຳປຸຍ ໄດ້ຮັບການຂຶ້ນທະບຽນ ໃນປີ 1991 ມີເນື້ອທີ່ທັງໝົດ 1,912 ກິໂລແມັດມົນທົນ, ມີຊາຍແດນຕິດກັບ 3 ເມືອງຄື: ເມືອງພຽງ, ເມືອງທົ່ງມີໄຊ ແລະ ເມືອງປາກລາຍ. ພາຍໃນປ່າສະຫງວນຍັງມີຄວາມອຸດົມສົມບູນໄປດ້ວຍຕົ້ນໄມ້ຫຼາຍຊະນິດ ເຊັ່ນ: ໄມ້ດູ່, ໄມ້ແຕ້ຂ່າ, ໄມ້ແຄນ ແລະ ໄມ້ຊະນິດອື່ນໆ. ນອກ ຈາກນີ້ ຍັງມີສັດປະເພດຕ່າງໆ ເຊັ່ນ: ສັດລ້ຽງລູກດ້ວຍນົມ 52 ສາຍພັນ, ນົກ 98 ສາຍພັນ, ສັດເລືອຄານ 13 ສາຍພັນ, ສັດເຄິ່ງບົກເຄິ່ງນ້ຳ 03 ສາຍພັນ ແລະ ປາ 15 ສາຍພັນ.



# ແຂວງຊຽງຂວາງ

## 1. ທົ່ງໄຫຫີນ.



ຫີນທີ່ມີລັກສະນະເປັນຮູບຊົງໄຫຕັ້ງຢູ່ເປັນກຸ່ມ ຊຶ່ງເປັນທີ່ຮູ້ຈັກກັນໃນນາມ “ທົ່ງໄຫຫີນ” ນັ້ນ ຕັ້ງລຽງຢັ່ງຢາຍຢ່າງສະຫງ່າງາມ ຢູ່ພື້ນທີ່ຕອນເໜືອຂອງສາຍພູຫຼວງ. ທົ່ງໄຫຫີນດັ່ງກ່າວ ແຕ່ລະກຸ່ມຈະປະກອບມີຕັ້ງແຕ່ໜຶ່ງຮ້ອຍຫາສີ່ຮ້ອຍກ່ວາໜ່ວຍ ສ່ວນຫຼາຍແມ່ນຕັ້ງຢູ່ຈຸດໂນນພູ, ເນີນພູ ແລະ ສັນພູ ຕາມປະຫວັດສາດແລ້ວ ພື້ນທີ່ບໍລິເວນທົ່ງໄຫຫີນນີ້ເຄີຍເປັນເສັ້ນທາງລຳລຽງ ທີ່ສະດວກສະບາຍ ຊຶ່ງເລີ່ມແຕ່ອ່າວຕັງແກງ ຜ່ານເຂົ້າແຜ່ນດິນໃຫຍ່ຂອງທະວີບອາຊີຕາເວັນອອກສ່ຽງໃຕ້ ຈົນກາຍມາເປັນສ່ວນໜຶ່ງຂອງເສັ້ນທາງການຄ້າທີ່ເຊື່ອມຕໍ່ລະຫວ່າງອະລິຍະທຳອັນເກົ່າແກ່ຂອງລາວ, ໄທ ແລະ ຫວຽດນາມ ກັບວັດທະນະທຳຕ່າງໆ ຈາກດິນແດນທີ່ຫ່າງໄກ.

ອະລິຍະທຳດັ່ງກ່າວໄດ້ສ້າງໄຫຫີນ ແລະ ອານາຈັກພວນ ທີ່ຄັ້ງໜຶ່ງເຄີຍຈະເລີນຮຸ່ງເຮືອງຢູ່ເທິງທີ່ຕັ້ງຂອງທົ່ງໄຫຫີນ ຊຶ່ງປະຈຸບັນ ແມ່ນດິນແດນຂອງແຂວງຊຽງຂວາງ. ການກຳເນີດ ແລະ ສິ້ນສຸດ ຂອງບັນພະບູລຸດຜູ້ທີ່ສ້າງທົ່ງໄຫຫີນນີ້ຍັງບໍ່ຮູ້ໄດ້ຢ່າງຊັດເຈນເທື່ອ. ຄວາມຮຸ່ງເຮືອງສີວິໄລຂອງອານາຈັກພວນໄດ້ຖືກພວກຫໍ້ ຜູ້ຮຸກຮານບຸກໂຈມຕີໃນຕອນທ້າຍສັດຕະວັດທີ 19 ຊຶ່ງພວກເຂົາບໍ່ສະເພາະແຕ່ທຳລາຍອານາຈັກພວນເທົ່ານັ້ນ ແຕ່ຍັງຊ່ວງຊີງສິ່ງທີ່ມີຄ່າທາງດ້ານວັດທະນະທຳ ແລະ ສາສະໜາໄປພ້ອມ.



❖ **ຕາມຄວາມເຊື່ອຂອງປະຊາຊົນທ້ອງຖິ່ນ.**

ໄຫຫີນຂອງຂຸນເຈືອງ: ຕາມການບອກເລົ່າຂອງປະຊາຊົນທ້ອງຖິ່ນ ຂຸນເຈືອງໄດ້ຕີເອົາໄຊຊະນະເຈົ້າອັງຄາ ຜູ້ປົກຄອງແຂວງຊຽງຂວາງ ໃນສັດຕະວັດທີ 5 ຫຼື ທີ 6 ເພື່ອສະເຫຼີມສະຫຼອງໄຊຊະນະດັ່ງກ່າວ ຂຸນເຈືອງໄດ້ສັ່ງໃຫ້ກອງກຳລັງ ແລະ ປະຊາຊົນເຮັດໄຫຫີນຂຶ້ນມາ ເພື່ອບັນຈຸເຫຼົ້າສຳລັບ. ເຂົາເຈົ້າຍັງເຊື່ອອີກວ່າໄຫດັ່ງກ່າວເຮັດມາຈາກການປະສົມຂອງຂີ້ຊາຍ, ນໍ້າຕານ ແລະ ໜັງງົວ ແລ້ວນຳໄປອົບໃນເຕົາເຜົາຢູ່ຖໍ້າບໍລິເວນໃກ້ກັບທົ່ງໄຫຫີນ1.

ບາງຄົນມີຄວາມເຊື່ອວ່າ ຊົນເຜົ່າຂະມຸ ແມ່ນບັນພະບູລຸດຂອງໄຫຫີນ ແລະ ຍັງເຊື່ອວ່າໄຫຫີນແມ່ນຖ້ວຍຂອງຄົນແປດສອກ. ແຕ່ປະຊາຊົນທ້ອງຖິ່ນອີກກຸ່ມໜຶ່ງຊໍ້າພັດເຊື່ອວ່າ ມີວິນຍານທີ່ບໍ່ໄດ້ໄປເກີດມາວົນວຽນຢູ່ບໍລິເວນໄຫຫີນນັ້ນ.

ຕາມການສັນນິຖານວ່າເປັນປ່າຊ້າ: ປະຊາຊົນຈຳນວນໜຶ່ງຊໍ້າພັດກໍ່ເຊື່ອວ່າພາຍຫຼັງຄົນຜູ້ໜຶ່ງ ໄດ້ເສຍຊີວິດລົງ ສົບຜູ້ກ່ຽວກໍ່ໄດ້ຖືກນຳໄປທົ່ງໄຫຫີນ ເພື່ອນຳໄປໃວ້ໃນໄຫຫີນ ຄອບຄົວຜູ້ເສຍຊີວິດກໍ່ຈະລໍຖ້າຈົນສົບເປື່ອຍ ແລະ ແຫ້ງຈົນເຫຼືອແຕ່ກະດູກ ແລ້ວຈຶ່ງນຳອອກໄປຝັງ. ບາງຄອບຄົວກໍ່ຝັງໃນສຸສານທີ່ເຮັດດ້ວຍເຊລາມິກ ສ່ວນອີກຈຳນວນໜຶ່ງກໍ່ຝັງແບບງ່າຍໆ ຄືຝັງກະດູກລົງໄນຂຸມຝັງສົບ.

❖ **ການຄົ້ນຄ້ວາຂອງທ່ານ ນາງ ໂຄລານີ.**

ນັກທໍລະນີວິທະຍາ ແລະ ນັກບູຮານຄະດີ ຊາວຝຣັ່ງ ທ່ານ ນາງ ມາເດີແລງ ໂຄລານີ ເປັນຜູ້ນຳພາການຄົ້ນຄ້ວາດ້ານວິທະຍາສາດຄັ້ງທຳອິດ ໃນຊຸມປີ 1930. ທ່ານນາງ ໂຄລານີ ໄດ້ທຳການສຶກສາຄົ້ນຄ້ວາສິ່ງທີ່ຢູ່ພາຍໃນໄຫຫີນ ແລະ ຮ່ອງຮອຍຕ່າງໆບໍລິເວນອ້ອມແອ້ມໄຫຫີນ ລາວໄດ້ຄົ້ນພົບລູກປັດທີ່ເຮັດດ້ວຍແກ້ວ ແລະ ກະດູກຂອງມະນຸດ ນອກຈາກນີ້ລາວຍັງສຳຫຼວດຖໍ້າແຫ່ງໜຶ່ງບໍລິເວນໃກ້ຄຽງ ແລະ ພົບຫຼັກຖານບູຮານຄະດີ ທີ່ເປັນຂໍ້ມູນຊ່ວຍພິສູດສົມມຸດຖານຂອງລາວວ່າເປັນບ່ອນເຜົາສົບຄົນຕາຍ.

ທ່ານ ນາງ ໂຄລານີ ໄດ້ຮັບຮູ້ ແລະ ລວບລວມເອົາທົ່ງໄຫຫີນ 17 ແຫ່ງ ເຂົ້າໃນການຄົ້ນຄ້ວາຂອງລາວ, ລາວຍັງໄດ້ກຳນົດວ່າທົ່ງໄຫຫີນແຫ່ງທີ່1 ແມ່ນສູນກາງແຫ່ງອະລິຍະທຳທີ່ສ້າງໄຫຫີນຂຶ້ນມາ ລາວສັນນິຖານວ່າ ປະຊາຊົນໄດ້ນຳເອົາສົບຄົນຕາຍມາເຜົາຢູ່ຖໍ້າ ທີ່ຢູ່ໃກ້ຄຽງທົ່ງໄຫຫີນແຫ່ງທີ່1 ແລະ ນຳເອົາອັດທິໄປບັນຈຸໄວ້ຢູ່ໃນ ແລະ ອ້ອມແອ້ມໄຫຫີນ.

ນອກຈາກນີ້ ລາວຍັງຄິດວ່າ ທີ່ຕັ້ງຂອງໄຫຫີນນັ້ນ ເຊື່ອມກັບເສັ້ນທາງການຄ້າໃນສະໄໝເກົ່າ ຊຶ່ງພໍ່ຄ້າແມ່ຄ້າ ຈະນຳເອົາສິນຄ້າມາຂາຍຢູ່ພູພຽງຊຽງຂວາງ ແລະ ນຳເອົາສິນຄ້າຊະນິດອື່ນກັບໄປ.

❖ **ການຄົ້ນຄ້ວາໃນຍຸກປະຈຸບັນ.**

ການຄົ້ນຄ້ວາທີ່ໄດ້ດຳເນີນໃນຊຸມປີ 1990 ໄດ້ຢັ້ງຢືນວ່າ ສິ່ງທີ່ພົບເຫັນ ແມ່ນສອດຄ່ອງກັບທິດສະດີຂອງທ່ານ ນາງ ໂຄລານີ ຄື ໄຫຫີນຖືກສ້າງຂຶ້ນມາ ເພື່ອເປັນສິ່ງບັນຈຸຊາກສົບຄົນຕາຍ, ນັກຄົ້ນຄ້ວາອີກຄົນໜຶ່ງ ກໍ່ໄດ້ພົບເຫັນຊາກກະດູກຂອງສົບທີ່ບໍ່ໄດ້ຖືກເຜົາມາກ່ອນນັ້ນ ຝັງຢູ່ອ້ອມແອ້ມໄຫຫີນ ແລະ ໄດ້ໃຫ້ທັດສະນະວ່າເປັນກະດູກຂອງຄອບຄົວຂອງຜູ້ທີ່ຖືກຝັງໄວ້ໃນໄຫ.

ການຄົ້ນຄ້ວາໃນຊຸມປີທີ່ຜ່ານມານີ້ ໄດ້ໃຫ້ທັດສະນະວ່າ ໄຫຫີນດັ່ງກ່າວຖືກໃຊ້ເປັນສິ່ງບັນຈຸສົບຄົນຕາຍ ຈົນກ່ວາຊາກສົບນັ້ນຈະເປື່ອຍ ແລະ ແຫ້ງ, ສ່ວນກະດູກນັ້ນຈະຖືກນຳໄປຝັງຢູ່ໃກ້ກັບບໍລິເວນໄຫຫີນນັ້ນ, ສ່ວນການຄົ້ນຄ້ວາຂອງທ່ານ ນາງ ໂຄລານີ ກ່ຽວກັບກະດູກຂອງສົບທີ່ຖືກເຜົານັ້ນ ອາດເປັນການສັນນິຖານເຖິງການນຳໃຊ້ໄຫຫີນເປັນສ່ວນໜຶ່ງຂອງສຸສານຂອງຄົນໃນສະໄໝນັ້ນ. ໄຫຫີນບາງໜ່ວຍມີຂະໜາດ ແລະ ຊ່ອງຫວ່າງເປີດທີ່ນ້ອຍນັ້ນ ສັນນິຖານວ່າໃນຍຸກຕໍ່ມາອາດຈະຍ້ອນບໍ່ຈຳເປັນຕ້ອງບັນຈຸສົບຄົນຕາຍທັງໝົດໄວ້ໃນໄຫ ແຕ່ໃຊ້ສະເພາະບັນຈຸອັດທິຂອງຜູ້ຕາຍເທົ່ານັ້ນ.

### ກ. ທົ່ງໄຫຫີນ1.



ໄຫຫີນແມ່ນເປັນຫີນແຂງເຮັດດ້ວຍຫີນຊາຍ, ທົ່ງໄຫຫີນ ຈຸດທີ່ໃຫຍ່ກວ່າໝູ່ ມີທັງໝົດ 334 ໜ່ວຍ, ມີຖ້ຳ 1 ແຫ່ງ, ມີຈ່ານຫີນເປັນແຜ່ນ 30 ແຜ່ນ ແລະ ມີຈ່ານຫີນ ທີ່ໃຊ້ເປັນເຄື່ອງຕັດຫີນ 122 ແຜ່ນ, ຈຸດທີ່ຕັ້ງຂອງໄຫຫີນມີ 5 ຈຸດ ເຊິ່ງທັງໝົດຕັ້ງຢູ່ ໃກ້ໆກັນ ລຽງກັນໄປຕາມເປີ້ນພູ.

### ຂ. ທົ່ງໄຫຫີນ2.



ໄຫຫີນແຫ່ງນີ້ ຜະລິດຂຶ້ນຈາກຫີນ ຊາຍ ມີໄຫຫີນທັງໝົດ 93 ໜ່ວຍ, ມີ ຈ່ານຫີນເປັນແຜນ ຈຳນວນ 14 ແຜ່ນ, ມີກ້ອນຫີນເປັນກ້ອນ 9 ໜ່ວຍ. ຈຸດທີ່ ຕັ້ງຂອງໄຫຫີນ ແມ່ນຕັ້ງຢູ່ 2 ຈຸດ ໂດຍການແບ່ງຕາມເສັ້ນທາງ ແລະ ຕົ້ນໄມ້ທີ່ສວຍງາມ, ໃນນັ້ນມີໄຫ ຫີນ ທັງໝົດ 92 ໜ່ວຍ, ມີທາດ 1 ທາດ, ຊຶ່ງຊາວບ້ານ ເວົ້າວ່າສ້າງຂຶ້ນ ໂດຍຝຣັ່ງ ແຕ່ບໍ່ມີຂໍ້ມູນຢັ້ງຢືນ.



ຄ. ທົ່ງໄຫຫີນ3.



ທົ່ງໄຫຫີນແຫ່ງທີ 3 ຕັ້ງຢູ່ໂນນພູຕໍ່າ, ທາງເຂົ້າຫາທົ່ງໄຫຫີນຈາກບ່ອນຈອດລົດໄປແມ່ນໄດ້ຍ່າງຜ່ານທົ່ງນາຂອງປະຊາຊົນ. ໄຫຫີນ 3 ນີ້ ມີລັກສະນະພິເສດຄືໄຫຈະເປັນໄຫໜ່ອຍນ້ອຍສະເໝີກັນ ແລະ ມີຄວາມສວຍງາມ. ມີແຫຼ່ງຕັດຫີນຫ່າງຈາກຕົວເມືອງໂພນສະຫວັນ ປະມານ 32 ກິ ໂລແມັດ, ມີເນື້ອທີ່ທັງໝົດ 54,138.04 ຕາແມັດ, ໃນນັ້ນມີໄຫຫີນທັງໝົດ 150 ໜ່ວຍ, ມີຕົ້ນໄມ້ທີ່ສວຍງາມ.

ງ. ທົ່ງໄຫຫີນຜາແກ້ວ.



ສະຖານທີ່ແມ່ນຕັ້ງຢູ່ເນີນພູທີ່ມີປ່າໄມ້ ມີໄຫຫີນທັງໝົດເກືອບ 400 ໜ່ວຍ, ໄຫຫີນໃນຈຸດນີ້ ແມ່ນເຮັດດ້ວຍຫີນຊາຍ ມີການແກະສະຫຼັກດ້ວຍຄວາມປານີດ ແລະ ສວຍງາມ. ໄຫຫີນສ່ວນຫຼາຍແມ່ນຈະຖືກຝາປິດດ້ວຍກ້ອນຫີນ, ສ່ວນຫຼາຍແມ່ນແຕກ ແລະ ເຕັມໄປດ້ວຍບັນດາສິ້ນສ່ວນແຕກຫັກທັງຫຼາຍ.

## 2. ວັດເພຍວັດ.







ວັດເພຍວັດເປັນວັດແຫ່ງທຳອິດ ທີ່ສ້າງຂຶ້ນກ່ອນໝູ່ໝົດ ໃນດິນແດນຂອງເມືອງພວນ ສ້າງຂຶ້ນ ໃນປີ ຈສ 744 ມາຮອດປະຈຸບັນ (2018) ມີອາຍຸໄດ້ 687 ປີ.

ເຈົ້າລ້ານຄຳກອງ ເປັນອາດຍາປົກຄອງເມືອງພວນ ໄດ້ນຳພາປະຊາຊົນຊອກຫາຊ່າງຜູ້ມີຝີມືໃນການສ້າງວັດວາອາຮາມ ຈຶ່ງພົບອາຈານ ທຳມະຄາຖາ ຜູ້ທີ່ມີສີມືໃນການສ້າງວັດຢູ່ຫຼວງພະບາງມາແລ້ວມາສ້າງ. ພໍສ້າງສຳເລັດແລ້ວ ເຈົ້າລ້ານຄຳ ກໍ່ໄດ້ນຳພະພຸດທະຮູບອິງສັກສິດ ມາຈາກຫົງສາວະດີ (ພະມ້າໃນປະຈຸບັນ) ມາປະທັບໄວ້ວັດດັ່ງກ່າວ. ໃນຍຸກສະໄໝນັ້ນ ເມືອງພວນມີຄວາມຈະເລີນຮຸ່ງເຮືອງສຸດຂີດ. ດັ່ງນັ້ນ, ວັດເພຍວັດ ຈຶ່ງເປັນບ່ອນຮ່ຳຮຽນ ຂອງພະສົງສຳມະເນນໃນຍຸກນັ້ນ. ຕົກມາຮອດຊຸມປີ ຄສ 1874, ຈສ 1287 ສົງຄາມພາຍນອກໄດ້ເຂົ້າ ມາມ້າງເພທາລາຍ (ເສິກຫໍ້) ເຊິ່ງພວກເຂົາໄດ້ຕັດແຂນພະເຈົ້າອົງຕື້ເບື້ອງຂວາອອກ ເພື່ອຊອກຫາໂລຫະທີ່ມີຄ່າ ແຕ່ສິມຍັງບໍ່ຖືກທຳລາຍ. ມາຮອດປີ 1953, ຈສ 1315 ໄດ້ຖືກສົງຄາມຂອງຈັກກະພັດຝຮັ່ງທຳລາຍສິມ ແລະ ພະພຸດທະຮູບ ເຮັດໃຫ້ເພພັງຢ່າງໜັກ. ຕໍ່ມາຮອດ ປີ ຄສ 1954 ເຈົ້າສຸດທະກຸມມານ (ເຈົ້າຊາຍຄຳ) ເປັນເຈົ້າປົກຄອງເມືອງພວນ ໄດ້ນຳພາປະຊາຊົນຊາວເມືອງພວນປະຕິສັງຂອນວັດ ແລະ ສິມຄືນໃໝ ເຮັດໃຫ້ມີຄວາມສວຍງາມຄືກັບສະໄໝກ່ອນ. ມາຮອດປີ ຄສ 1969, ຈສ 1331 ໄດ້ຖືກສົງ ຄາມຂອງຈັກກະພັດອາເມລິກາ ທຳລາຍຈົນໝົດກ້ຽງ ຈຶ່ງຍັງເຫຼືອພຽງແຕ່ພະພຸດທະຮູບທີ່ຖືກບາດແຜຕາກແດດ ໃຫ້ເຮົາເຫັນເຖິງທຸກວັນນີ້.

## 3. ທາດຝຸ່ນ.



ຕັ້ງຢູ່ໃຈກາງຂອງເມືອງຄູນ, ປີ ຈສ 307 ໄດ້ປະດິດສະຖານທາດນ້ອຍ (ທາດທີ່ຢູ່ທາງໃນ). ຕໍ່ມາ ພະພຸດທະເຈົ້າຢູ່ທີ່ອິນເດຍໄດ້ເສຍຊີວິດ ກໍ່ໄດ້ພາກັນ ຈູດເຜົາສົບຂອງພະພຸດເຈົ້າ, ເມື່ອເຜົາແລ້ວ ກໍ່ໄດ້ ປະກາດໃຫ້ຜູ້ຄົນທົ່ວໂລກ ທີ່ນັບຖືສາສະໜາພຸດມາເອົາກະດູກຂອງພະພຸດທະເຈົ້າໄປບູຊາ  ໂດຍການ ສ້າງທາດໃສ່. ແຕ່ຊາວເມືອງພວນໄປຊ້າເລີຍໄດ້ແຕ່ຝຸ່ນ ຈຶ່ງໄດ້ນຳມາສ້າງໄວ້ໃຈກາງ ຂອງເມືອງພວນ ໃນ ປີ ຈສ 742 ກະສັດເມືອງພວນອົງທີ່ 24 ໄດ້ສັ່ງສ້າງທາດໂດຍສ້າງກວມທາດເກົ່າໃຫ້ໃຫຍ່ໂຕກ່ວາແຕ່ກ່ອນ ຊຶ່ງນອກນັ້ນ ທ່ານຍັງເປັນຜູ້ ທີ່ນຳເອົາສາສະໜາພຸດ ເຂົ້າມາເມືອງພວນ.

ນັບແຕ່ນັ້ນມາໃນທຸກໆ ປີໃໝ່ ຊາວເມືອງພວນ ໄດ້ພາກັນມາຫົດນ້ຳສົງພະ ແລະ ອວຍພອນຊຶ່ງກັນ ແລະ ກັນໃນທາດແຫ່ງນີ້. ຈົນມາຮອດປີ ຈສ 1237, ຄສ 1874 ທາດດັ່ງກ່າວ ໄດ້ຖືກສົງຄາມເສິກຫໍ້ທຳລາຍ ເພື່ອຂຸດຄົ້ນເອົາເງິນ, ຄຳທີ່ມີຄ່າ ອັນເຮັດໃຫ້ທາດເພພັງ ແລະຊຸດໂຊມ. ຕໍ່ມາຮອດສະໄໝເຈົ້າແຂວງ ຊາຍຄຳ ເປັນເຈົ້າແຜ່ນດິນເມືອງພວນ ໄດ້ນຳພາປະຊາຊົນປົວແປງຄືນໃໝ່,  ແຕ່ມາຮອດ ປີ ຄສ 1969 ຖືກສົງຄາມຂອງຈັກກະພັດອາເມລິກາທຳລາຍ ຈຶ່ງເຮັດໃຫ້ທາດດັ່ງກ່າວ ຊຸດໂຊມລົງອີກ ແລະ ເປັນດັ່ງທີ່ເຮົາເຫັນເຖິງທຸກວັນນີ້.

## 4. ທາດຈອມເພັດ.



ທາດຈອມເພັດຕັ້ງຢູ່ຕົວເມືອງຄູນ, ທາດດັ່ງກ່າວ ເປັນທາດທີ່ມີຄວາມສວຍສົດງົດງາມທີ່ສຸດ, ມີຮູບລັກສະນະການສ້າງຄືກັບທາດຝຸ່ນ, ສ້າງຂຶ້ນເປັນມິ່ງຂວັນໃຈ ຂອງປະຊາຊົນຊາວເມືອງພວນ ແລະ ເປັນບ່ອນ ທ້ອນໂຮມເພັດນິນຈິນດາ ຂອງຊາວເມືອງພວນ. ໃນປີ ຄສ 1422, ຈສ 787 ກະສັດ ເຈົ້າຜ້າຂາດ ໄດ້ນຳເອົາ ເພັດນິນຈິນດາ ທີ່ມີແສງລັດສະໝີອັນສວຍສົດງົດງາມ ສາມາດສົ່ງແສງລັດສະໝີໄປທົ່ວທຸກທິດຂອງເມືອງ ພວນໃສ່ຍອດເສົາ, ດັ່ງນັ້ນ ຈຶ່ງໃສ່ຊື່ວ່າ ທາດຈອມເພັດ. ຈາກນັ້ນມານານເຖິງ 577 ປີ, ມາຮອດປີ ຄສ 1874, ຈສ 1237 ສະໄໝສົງຄາມຫໍ້ໄດ້ເຂົ້າມາປຸ້ນສະດົມກໍ່ໄດ້ທຳລາຍທາດ ເພື່ອເອົາເພັດນິນຈິນດາ ແລະ ວັດຖຸມີຄ່າໃນທາດດັ່ງກ່າວ

## 5. ວັດສີພົມ.

ວັດສີພົມເປັນວັດໜຶ່ງທີ່ສຳຄັນ ໃນນະຄອນເມືອງພວນ, ມີສີສັນທີ່ສວຍສົດງົດງາມ ແລະ ໜ້າອັດສະຈັນ ກ່ອນໝູ່ໝົດ ຍ້ອນເຈົ້າລ້ານຄຳກອງ ໄດ້ສະເດັດໄປເມືອງຊົວ (ເມືອງຫຼວງພະບາງໃນປະຈຸບັນ) ເພື່ອຊອກຫາຜູ້ມີຄວາມຮູ້ ແລະ ຄວາມຊຳນານ ໃນການກໍ່ສ້າງໂຮງທຳ ແລະ ວັດວາອາຮາມ, ພະອົງຈຶ່ງໄດ້ພົບກັບ ອາຈານທຳມະຄາຖາເປັນຜູ້ທີ່ມີຝີມືດີເດັ່ນ. ດັ່ງນັ້ນ, ພະອົງຈຶ່ງໄດ້ນຳເອົາອາຈານທຳມະຄາຖາ ມາສ້າງວັດດັ່ງກ່າວ ໃນປີ ຄສ 1390, ຈສ 752. ຕໍ່ມາວັດສີພົມກໍ່ ຖືກທຳລາຍຄືກັບທາດຝຸ່ນ ແລະ ວັດເພຍວັດ. ແຕ່ມາຮອດປະຈຸບັນ ປະຊາຊົນໄດ້ພ້ອມກັນປັບປຸງປົວແປງໃຫ້ດີຂຶ້ນ.



## 6. ໂຮງໝໍເກົ່າ.



ສ້າງຂຶ້ນໃນປີ 1916 ໃນສະຖາປະຕິຍາກຳຂອງຝຣັ່ງປະສົມລາວ ໂຮງໝໍດັ່ງກ່າວ ໃນເມື່ອກ່ອນມີຄວາມສວຍງາມເປັນຢ່າງຍິ່ງ, ເປັນສະຖານທີ່ປິ່ນປົວຄົນເຈັບ ໃນສະໄໝນັ້ນ. ມາຮອດປີ 1966 ໄດ້ຖືກ ສົງຄາມທຳລາຍເຮັດໃຫ້ເຮືອນ ແລະ ອຸປະກອນຕ່າງໆ ໄດ້ຮັບການເສຍຫາຍຢ່າງໜັກ ຍັງເຫຼືອພຽງສິ່ງເສດເຫຼືອບ່ ໆງຢ່າງໃຫ້ເຮົາເຫັນເຖິງທຸກວັນນີ້.

## 7. ຕາດຄາ.



ຕາດຄາ ເປັນຕາດທຳມະຊາດ ມີຄວາມສວຍງາມເປັນຢ່າງຍິ່ງ ພາຍໃນຕາດ ແລະ ບໍລິເວນອ້ອມຂ້າງຕາດ ປະກອບດ້ວຍຕົ້ນໄມ້ໃຫຍ່ຫຼາຍຕົ້ນ, ປ່າໄມ້ ແລະ ຊີວະນາໆພັນທີ່ອຸດົມສົມບູນ. ຈຸດກຳເນີດຂອງນ້ຳຕາດຄານີ້ແມ່ນນ້ຳທີ່ເກີດຈາກຣູຜາໄຫຼອອກມາໂຕນລົງໃສ່ຕາດເປັນແຕ່ລະຂັ້ນ ແລະ ມີນ້ຳໄຫຼຕະຫຼອດປີ. ຕາດຄາ ຢູ່ບ້ານຄັງພະນຽນ ເມືອງໜອງແຮດ ຫ່າງຈາກຕົວເມືອງໂພນສະຫວັນ ປະມານ 104 ກິໂລແມັດ, ຫ່າງຈາກຕົວເມືອງໜອງແຮດປະມານ 22 ກິໂລແມັດ ແລະ ຈາກທາງເລກ 7 ເຂົ້າແຫຼ່ງທ່ອງທ່ຽວເປັນທາງປູແຮ່ປະມານ 5 ກິໂລແມັດ.

ຕາດຄາມີຄວາມສູງ141 ແມັດ, ຈາກຈຸດຕົ້ນນ້ຳຫາຈຸດພັກທີ່ 3 ແມ່ນມີຄວາມສູງ 81 ແມັດ, ແຕ່ພັກທີ່ 3 ລົງໃສ່ສາຍຫ້ວຍແມ່ນມີຄວາມສູງ 60 ແມັດ, ມີຂັ້ນໄດຍ່າງເຊື່ອມຕໍ່ຕາດແຕ່ລະຂັ້ນ, ມີເຮືອນຂາຍປີ້, ຫ້ອງນ້ຳສາທາລະນະ...







## 8. ພູກູດ ຈອມເຫຼັກວິລະຊົນ.

ພູກູດ ຕັ້ງຢູ່ຫ່າງຈາກສຳນັກງານເມືອງພູກູດທາງທິດຕາເວັນຕົກ 7 ກິໂລແມັດ, ທິດຕາເວັນຕົກຕິດກັບບ້ານປົວ, ທິດໃຕ້ຕິດກັບບ້ານຊາຍ ແລະ ທິດເໜືອຕິດກັບບ້ານແປນ, ທິດຕາເວັນອອກຕິດກັບບ້ານພູວຽງ.

ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ຢູ່ຕາມທ້ອງຖິ່ນນີ້ເລົ່າຕໍ່ໆກັນມາວ່າ ພູກູດ ເພິ່ນເອີ້ນຊື່ວ່າ ພູດອຍກາງເມືອງ ເພາະວ່າເບື້ອງຕາເວັນຕົກແມ່ນເມືອງສຸຍ, ເບື້ອງຕາເວັນອອກແມ່ນເມືອງເຄິງ, ກ່ອນຈະປ່ຽນພູດອຍກາງເມືອງມາເປັນພູກູດແມ່ນກ່ອນປີ 1353 ມີທ້າວພະຍາຫົວເຫຍີ່(ຫົວໃຫ່ຍ) ໄດ້ມາຕັ້ງຖິ່ນຖານຢູ່ຂອບເຂດນີ້ໂດຍໄດ້ເອົາພູດອຍກາງເມືອງເປັນບ່ອນລ້ຽງສັດ, ພະຍາຫົວເຫຍີ່ມີເມຍຊື່ນາງແກ່ນແກ້ວ ມີລູກນຳກັນ 3 ຄົນ ແລະ ໃນຄອບຄົວໄດ້ແບ່ງຄວາມຮັບຜິດຊອບລ້ຽງສັດແຕ່ລະປະເພດຄື:

1. ນາງ ຫຼວງ ຮັບຜິດຊອບລ້ຽງໂຕກະທິງເຂົາແດງ ຢູ່ດົງຮ່າງ
2. ນາງ ກາງ ຮັບຜິດຊອບລ້ຽງກວາງເຂົາ 9 ຍອດ ຢູ່ດົງແຮ້
3. ທ້າວ ນ້ອຍ ຮັບຜິດຊອບລ້ຽງໝູລອງຄຳ ຢູ່ຝາຍນາຮອນ

ຢູ່ຕໍ່ມາມີພະຍາອິງໜຶ່ງຂີ່ມ້າມະນີກະທັດ ເດີນທາງມາເຫັນສະຖານທີ່ລ້ຽງສັດຂອງພະຍາຫົວເຫຍີ່ ແລະ ພະຍາອິງນັ້ນໄດ້ເວົ້າກັບພະນາຫົວເຫຍີ່ວ່າ: ຂ້ອຍຂໍຝາກມ້າໄວ້ນຳເຈົ້າແດ່, ແລ້ວພະຍາຫົວເຫຍີ່ກໍ່ໄດ້ລ້ຽງມ້າມະນີກະທັດນັ້ນໃຫ້ພະຍາອິງນັ້ນ.ຢູ່ມື້ໜຶ່ງ, ມີໜໍພານຜູ້ໜຶ່ງມາຊອກລ່າສັດປ່າມາເຫັນໂຕກະທິງເຂົາແດງລົງມາແຕ່ພູດອຍກາງເມືອງ ລົງມາກິນປຸ່ງຢູ່ປຸ່ງນາຍິ່ງ, ໜໍພານໄດ້ຍິງໂຕກະທິງເຂົາແດງໂຕນັ້ນ (ແຕ່ບໍ່ຕາຍກັບບ່ອນ) ໂຕກະທິງໄດ້ຂຶ້ນເມືອພູດອຍກາງເມືອງຜ່ານແກ່ວດອຍກາງເມືອງລົງໄປຕາຍຢູ່ຄັງໜອງປາດ, ໃນຂະນະທີ່ໜໍພານພວມປາດໂຕກະທິງຢູ່ນັ້ນ, ນາງຫຼວງໄດ້ມາເຫັນຄົນກຳລັງປາດກະທິງເຂົາແດງ, ນາງຫຼວງ ກໍ່ຮີບໄປລາຍງານໃຫ້ພໍ່ຮີບຮ້ອນບອກຊາວບ້ານໄລ່ຈັບໜໍພານ, ຊາວບ້ານໄດ້ພາກັນເອົາຕາໜ່າງກາງໃສ່ແກ່ວດອຍກາງເມືອງເພື່ອຈັບໜໍພານ, ໜໍພານໄດ້ມາຖືກຕາໜ່າງທີ່ຊາວບ້ານພາກັນກາງໄວ້ນັ້ນ ແລະ ຊາວບ້ານໄດ້ພ້ອມກັນເອົາຫອກ, ເອົາຫຼັກແຫຼມແທງໜໍພານຈົນຕາຍ. ຫຼັງຈາກຂ້າໜໍພານຄົນນັ້ນແລ້ວຊາວບ້ານໄດ້ບອກຂ່າວໄປທຸກໆບ້ານ ເພື່ອໃຫ້ຮູ້ວ່າແມ່ນຄົນບ້ານໃດໃຫ້ມາເບິ່ງ ແລະ ສຸດທ້າຍກໍ່ໄດ້ຮູ້ວ່າໜໍພານຄົນນີ້ມີຊື່ວ່າ ທ້າວ ກູດ ຢູ່ບ້ານລາດບອກ, ຫຼັງຈາກຮູ້ແນວນັ້ນແລ້ວ ຊາວບ້ານຈຶ່ງໄດ້ປຶກສາຫາລື ແລະ ຕົກລົງເຫັນດີເປັນເອກະພາບ ເອົາທ້າວກູດຝັງໄວ້ດອຍກາງເມືອງແລ້ວຈຶ່ງປ່ຽນມາເອີ້ນວ່າພູກູດຈົນມາເຖິງປະຈຸບັນນີ້.

ພູກູດ ກ່ອນປີ 1968 ຄືນຫຼັງ ພູກູດມີຄວາມສູງຈາກລະດັບໜ້ານ້ຳທະເລ 1,463 ແມັດ ໂດຍອີງຕາມປະຫວັດສາດພູກູດແມ່ນມີຄວາມສູງຕ່ຳລົງ 7 ແມັດ, ແມ່ນຍ້ອນເຫດຜົນໃດ? ແມ່ນຍ້ອນຈັກກະພັດອາເມລິກາ ມາເຮັດສົງຄາມຮຸກຮານລາວເກືອບ 20 ປີ ນັບແຕ່ວັນທີ 17/05/1964 ປົດປ່ອຍທົ່ງໄຫຫີນຊຽງຂວາງ, ມາຮອດວັນທີ 12/06/1964 ສຸວັນນະພູມມາ ໃນນາມເປັນນາຍົກລັດຖະມົນຕີໄດ້ເຂົ້າພົບສະຖານທູດອາເມຣິກາປະຈຳລາວໄດ້ອະນຸຍາດໃຫ້ກອງທັບອາເມລິກາຍິງທຳລາຍເຂດປົດປ່ອຍຂອງແນວລາວຮັກຊາດ, ເປົ້າໝາຍແມ່ນຍິງທຳລາຍພູກູດເພາະວ່າພູກູດເປັນປະຕູຢູ່ທິດຕາເວັນຕົກສ່ຽງເໜືອຂອງທົ່ງໄຫຫີນ, ສັດຕູຈະຍຶດທົ່ງໄຫຫີນຕ້ອງຕີຍຶດພູກູດນີ້ກ່ອນ, ຈັກກະພັດອາເມຣິກາເລີ່ມຖິ້ມລະເບີດໃສ່ພູກູດແຕ່ເດືອນ 07/1964. ຕົ້ນເດືອນ 8/1964 ທ່ານ ສະໝານ ວິຍະເກດ ກອງບັນຊາ



ການທະຫານທົ່ງໄຫຫີນຊຽງຂວາງ ໄດ້ຕີລາຄາສະພາບການຂອງສັດຕູ ນັບມື້ນັບຮ້າຍແຮງ, ຖ້າພວກເຮົາຈະຮັກສາທົ່ງໄຫຫີນໄວ້ໄດ້ຕ້ອງໄດ້ສ້າງສະໜາມຈັ້ງທ່າຮັກສາພູກູດ, ກາງເດືອນ 08/1964 ທ່ານ ສະໝານ ວິຍະເກດ ແລະ ທ່ານ ຈັນດີ ກອງບັນຊາການທະຫານທົ່ງໄຫຫີນຊຽງຂວາງ ໄດ້ຕົກລົງໃຫ້ກອງພັນທີ່ໜຶ່ງຂຶ້ນຈັ້ງທ່າຮັກສາພູກູດ ນຳໂດຍທ່ານ ຄຳກ້ຽວ ແກ້ວນະຄອນ. ຮອດທ້າຍລະດູຝົນ ປີ 1964 ກອງທັບບັນຊາການເຂດທົ່ງໄຫຫີນຊຽງຂວາງ ຕົກລົງເອົາກອງພັນທີ 13

ແນວລາວຮັກຊາດ ຂຶ້ນປ່ຽນກອງພັນທີ່ໜຶ່ງ ບັນຊາໂດຍທ່ານ ບຸນອັ້ງ , ທ່ານ ບົວຄໍາ ຊຶ່ງທ່ານໄດ້ກ່າວວ່າ ຖ້າ ຢາກຮັກສາພູກູດໄວ້ໄດ້ແມ່ນຕ້ອງຮັກສາບັນດາປ້ອມທີ່ຢູ່ໃກ້ກັບພູກູດເຊັ່ນ: ພູໂຊ້, ພູສຸ່ງ, ພູບ້ານແປນ, ພູໂຊ້ ມອບໃຫ້ກອງພັນ 51 ທະຫານອາສາສະໝັກຫວຽດນາມ, ພູສຸ່ງ ມອບໃຫ້ກອງພັນ 16 ກໍາລັງເປັນກາງຮັກຊາດ, ພູເກັ້ງ ມອບໃຫ້ກອງພັນ 15 ກອງພັນ 13 ແນວລາວຮັກຊາດຮີບຮ້ອນຂຸດຂຸມຄອງອ້ອມຈອມພູກູດມີຄວາມຍາວ 1,000 ກ່ວາແມັດ ແລະ ຂຸດຂຸມຫຼົບໄພ 02 ຮູ, ແຕ່ຈອມພູຊອດໃສ່ຂຸມຄອງມີຄວາມຍາວ 100 ກ່ວາແມັດ ແຕ່ລະຮູ ແມ່ນເພື່ອຫຼົບຫຼີກລູກບົ່ມຂອງສັດຕູ ທ້າຍເດືອນ 12/1964 ກອງ ແລໄດ້ນໍາໃຊ້ກໍາລັງ 5 ກອງພັນບຸກໂຈມຕີຂຶ້ນພູກູດໄດ້ຮັບການຊ່ວຍໜູນຍິນສູ້ຮົບຂອງອາເມລິກາຖິ້ມລະເບີດໃສ່ພູກູດ ມື້ໜຶ່ງ 50–60 ຖ້ຽວ ເພື່ອຊ່ວຍໜູນທະຫານກອງແລ ບຸກຕີຂຶ້ນພູກູດຫຼາຍໆຄັ້ງ ແຕ່ພວກເຂົາບໍ່ສໍາເລັດເຮັດໃຫ້ສັດຕູຖືກປັດເຂ່ຍຈາກວົງສູ້ຮົບ 800 ກ່ວາບັກ. ວັນທີ 12/04/1966 ພວກສັດຕູເຕົ້າໂຮມກໍາລັງ ເປີດບັ້ນຮົບຂະໜາດໃຫ່ຍ ຫວັງຈະຕີບຽດຍຶດເອົາບັນດາປ້ອມພູຢູ່ໃກ້ກັບພູກູດ, ກອງພັນ 701 ສົມທົບກອງພັນ 51 ທະຫານອາສາສະໝັກຫວຽດນາມຕີ ຕ້ານຄືນເຮັດໃຫ້ສັດຕູປະລາໄຊຖອຍໜີເມືອ ເມືອງສຸຍ. ວັນທີ 15/04/1966 ພວກກອງແລລະດົມກໍາລັງທະຫານໄທ 100 ກ່ວາບັກ ທະຫານແຕ່ລະຄົນ ໄດ້ຮັບເງິນກ່ອນຜູ້ລະ 5,000 ບາດ ຖ້າຕີໄດ້ພູກູດຈະໄດ້ຮັບການ ເລື່ອນຊັ້ນ ແລະ ຮັບເງິນຕື່ມອີກ ທະຫານໄທກ້າຕາຍມືໜຶ່ງຈັບປືນແອມ 16 ມືໜຶ່ງຈັບແກ້ວເຫຼົ້າ ຮ້ອງໂຮຂຶ້ນພູກູດ. ອ້າຍນ້ອງພວກເຮົາປະໃຫ້ທະຫານໄທຂຶ້ນພູມາໄດ້ປະມານ 30 ແມັດອ້າຍນ້ອງພວກເຮົາຈຶ່ງຫວ່ານລະເບີດໃສ່ທະຫານໄທ ເຮັດໃຫ້ທະຫານໄທນອນຕາຍຢູ່ເປີ້ນພູກູດ 60 ກ່ວາຄົນ ເຮັດໃຫ້ທະຫານໄທແຕກສະ, ຈໍານວນທີ່ເຫຼືອຕາຍປົບໜີໄປເມືອງສຸຍ.

ໃນໄລຍະດຽວກັນນີ້ ສັດຕູໄດ້ເຕົ້າໂຮມກໍາລັງທາງໜ້າດິນ ແລະ ອາກາດ ບຸກຕີພູກູດຢ່າງຮ້າຍແຮງຖິ້ມລະເບີດໃສ່ພູກູດ ມື້ລະ 150–200 ຖ້ຽວລໍາ, ໃນເວລາ ນີ້ກອງພັນທີ 13 ແນວລາວຮັກຊາດມີກໍາລັງ 250 ຄົນ ຜ່ານການສູ້ຮົບກໍາລັງໄດ້ຮັບບາດເຈັບ, ເສຍຊີວິດ ແລະ ອ່ອນເພຍຍັງເຫຼືອກໍາລັງພຽງ 40 ຄົນ ແລະ ຍັງສືບຕໍ່ຕີສັດ ຕູຮັກສາພູກູດໄວ້ໄດ້ຢ່າງໝັ້ນຄົງ. ທະຫານກອງພັນທີ 13 ແນວລາວຮັກຊາດປະຈໍາຢູ່ພູກູດປະກາດວ່າ: ຍອມເສຍສະຫຼະເພື່ອພູກູດ ບໍ່ຍອມເສຍພູກູດໃຫ້ສັດຕູຢ່າງເດັດຂາດ ສູນກາງແນວລາວຮັກຊາດ, ກອງບັນຊາການສູງສຸດໄດ້ສົ່ງໂທລະເລກອວຍພອນມາຍັງນັກຮົບຮັກສາພູກູດໄດ້ຂະໜານນາມວ່າ (ພູກູດອາດຫານ). ປະຊາຊົນຊາວເມືອງແປກໃນເມື່ອກ່ອນໄດ້ມີຄໍາຂັວນທີ່ວ່າ: **ທຸກສິ່ງທຸກຢ່າງເພື່ອຮັກສາພູກູດ, ທຸກສິ່ງທຸກຢ່າງ ເພື່ອພະນັກງານນັກຮົບຮັກສາພູກູດວິລະຊົນ .** ຂະບວນການດັ່ງກ່າວ ໄດ້ແຜ່ລາມໄປທົ່ວແຂວງຊຽງຂວາງຕະຫຼອດໄລຍະ 5 ປີ ແຕ່ປີ 1964 ຫາຕົ້ນປີ 1969 ແມ່ນໄລຍະທີ່ດຸເດືອດການຮັກສາພູກູດ ເຖິງແມ່ນວ່າລູກລະເບີດຂອງສັດຕູຈະເຈາະ, ໄງ້ເປີ້ນພູກູດຕໍ່າລົງ 7 ກ່ວາແມັດແລ້ວກໍ່ຕາມ, ແຕ່ນັກຮົບຍັງຮັກສາພູກູດໄວ້ໄດ້ຢ່າງສະຫງ່າຜ່າເຜີຍ, ຮັກສາປະຕູເຂົ້າທາງໄຫຫີນຢູ່ທິດຕາເວັນຕົກສ່ຽງເໜືອໄວ້ໄດ້ຢ່າງໝັ້ນຄົງ ຈຶ່ງໄດ້ຂະໜານນາມວ່າ: “ພູກູດຈອມເຫຼັກ” ເທົ່າທຸກມື້ນີ້

## ໙. ຖ້ຳປິວ.





ເລີ່ມແຕ່ປີ 1964 (ສົງຄາມເພີ່ມທະວີຢູ່ລາວ) ຂອງອາເມລິກາ ແລະ ລູກມືຫວັງດັບມອດຂະບວນການຕໍ່ສູ້ ເພື່ອສັນຕິພາບ ແລະ ເອກະລາດແຫ່ງຊາດ ຂອງປະຊາຊົນເຮົາ ໄດ້ເພີ່ມທະວີຄວາມດຸເດືອດ ແລະ ຮຸນແຮງເລື້ອຍໆ, ພວກເຂົາ ໄດ້ເປີດສາກບຸກໂຈມຕີ ເຂົ້າເຂດປົດປ່ອຍຂອງກຳລັງຮັກຊາດ ດ້ວຍຫຼາຍບັ້ນຮົບໃນຂອບເຂດທົ່ວປະເທດ. ຢູ່ຊຽງຂວາງ ພວກເຂົາໄດ້ ເປີດຫຼາຍບັ້ນຮົບ ດ້ວຍຍຸດໂທບາຍ 3 ກ້ຽງ-ຂ້າກ້ຽງ, ທຳລາຍກ້ຽງ, ດັບສູນກ້ຽງ. ແຕ່ຍຸດທະສາດບຽດຍຶດຂອງພວກເຂົາ ໄດ້ຖືກກຳລັງຮັກ ຊາດ ແລະ ປະຊາຊົນເຮົາ ຕໍ່ຕ້ານຢັນຄືນ ຢ່າງດຸເດືອດ ພິລະອາດຫານ, ສາມາດຕີຖອຍ ແລະ ເປີດກ້ວາງເຂດ ປົດປ່ອຍຂຶ້ນເລື້ອຍໆ; ພາຍໃຕ້ການນຳພາຂອງສູນກາງພັກ ໂດຍສະເພາະ ຂອງຄະນະພັກການທະຫານ ແຂວງຊຽງຂວາງອັນມີ ທ່ານ ສະໝານ ວິຍະເກດ ເປັນຜູ້ບັນຊາການສູງສຸດ, ສາມາດທັບມ້າງກົນອຸບາຍບຽດຍຶດ ເຂດປົດປ່ອຍຂອງພວກເຂົາ ໃຫ້ປະລາໄຊລົງ. ຍ້ອນການປະລາໄຊອັນເຈັບແສບຢູ່ບັ້ນຮົບຕ່າງໆ ພວກຈັກກະພັດອາເມລິກາ ຈຶ່ງເພີ່ມທະວີຝູງບິນສູ້ຮົບຍິງທຳລາຍ ເຜົາຜ່ານເຂດປົດປ່ອຍຢ່າງປ່ວງປ້າ, ໃຊ້ຍົນຖິ້ມ ລະເບີດຢ່າງບໍ່ເລືອກເປົ້າໝາຍຕະຫຼອດຮອດເຮືອນຊານບ້ານຊ່ອງຂອງປະຊາຊົນ, ໂຮງຮຽນ, ໂຮງໝໍ, ວັດວາອາຮາມ ນັບທັງຊີວິດ ແລະ ຊັບສິນຂອງປະຊາຊົນຈົນ ນັບບໍ່ຖ້ວນ. ໃນນັ້ນມີເຫດການໜຶ່ງ ທີ່ທຸກຄົນອາດລືມໄດ້ນັ້ນກໍ່ຄື: ໂສກອະນາດຕະກຳຈາກການຍິງລູກ ສອນໄຟໃສ່ຖ້ຳປິວ, ເມືອງຄຳ, ແຂວງຊຽງຂວາງ ຂອງກຳລັງອາກາດສະຫະລັດອາເມລິກາ ໃນມື້ວັນທີ່ 24 ພະຈິກ 1968 ອັນໄດ້ເຂັ່ນຂ້າປະຊາຊົນ ທີ່ລີ້ໄພຢູ່ໃນນັ້ນ ເສຍຊີວິດພາບດຽວ 374 ຄົນ ໃນພຽງສ້ຽວວິນາທີ. ດັ່ງນັ້ນ ໃນວັນທີ່ 24 ຂອງທຸກໆປີ ຈຶ່ງກາຍເປັນວັນ ຄຽດແຄ້ນສົງຄາມຮຸກຮານ, ເປັນວັນລະນຶກ ແລະ ໄຫ້ວອາໄລເຖິງດວງວິນຍານຂອງພໍ່ແມ່ປະຊາຊົນຜູ້ບໍລິສຸດ ຊຶ່ງຕົກເປັນເຫື່ຍອເຄາະຮ້າຍຈາກເຫດການຄັ້ງ ນັ້ນ. ພວກເພິ່ນໄດ້ສະຫຼະຊີວິດເລືອດເນື້ອ ເພື່ອເອກະລາດແຫ່ງຊາດເພື່ອຄວາມສົມບູນພູນສຸກຂອງພວກເຮົາໃນວັນນີ້.

ຖ້ຳປິວເປັນຖ້ຳທີ່ເກີດຂຶ້ນຕາມທຳມະຊາດ ແຕ່ຮອດຊ່ວງໄລຍະສົງຄາມແມ່ນປະຊາຊົນໄປລີ້ໄພຢູ່ຖ້ຳນີ້ ແລະ ຖືກລູກສອນໄຟຍິງໃສ່ເຮັດໃຫ້ພາຍໃນຖ້ຳມີສີດຳໃໝ້. ຢູ່ກ້ອງຖ້ຳນີ້ຍັງມີຖ້ຳນ້ຳທີ່ມີນ້ຳໄຫຼອອກຈາກຮູຖ້ຳຕະຫຼອດປີ ພາຍໃນບໍລິເວນໜ້າຖ້ຳຈະມີອານຸສາວະລີ, ຫ້ອງວາງສະແດງໂສກນາດຕະກຳຖ້ຳປິວ, ມີສາລາໂຮງທຳ, ຜາມໄຊສະແດງ.

## 10. ຕາດຄະ.

ຕາດຄະເປັນຕາດທຳມະຊາດທີ່ເກີດຂຶ້ນມາຈາກນ້ຳຄະທີ່ໄຫຼລົງຈາກຮ່ອມພູລົງສູງລົງສູ່ຕີນພູ ຢູ່ບ້ານນາຄຳແພງ ເມືອງແປກ ຫ່າງຈາກຕົວເມືອງໂພນສະຫວັນ ປະມານ 32 ກິໂລແມັດ, ຫ່າງຈາກທາງແຍກ ທາງເລກ 7 ປະມານ 4 ກິໂລແມັດ. ຕັ້ງຢູ່ທາງທິດຕາເວັນອອກສ່ຽງເໜືອ ຂອງຕົວ ເມືອງໂພນສະຫວັນປະມານ 32 ກິໂລ ແມັດ, ມີໄລຍະທາງຈາກສາມແຍກໜອງເປັດປະມານ 4.4 ກິໂລແມັດ, ໃນນັ້ນໄລຍະທາງແຕ່ບ່ອນຈອດລົດລົງໄປຫາຕີນຕາດມີຄວາມຍາວປະມານ 1 ກິໂລແມັດ, ເປັນທາງຍ່າງລົງພູ. ຕາດຄະເປັນຕາດທຳມະຊາດທີ່ມີຄວາມສວຍງາມທາງທຳມະຊາດ ແລະ ມີຄວາມຫຼາກຫຼາຍ ທາງດ້ານຊີວະນາໆພັນ, ພາຍໃນຕາດມີຄວາມຍາວເກືອບ 2 ກິໂລແມັດ. ປະກອບດ້ວຍຫຼາຍຂັ້ນ, ຕາມສອງຟາກຝັ່ງປະກອບດ້ວຍຊີວະນາໆພັນທີ່ອຸດົມສົມບູນ, ພາຍໃນ ຕາດມີນ້ຳໄຫຼຕະຫຼອດປີ ເໝາະແກ່ການມາພັກຜ່ອນ ຢ່ອນໃຈຂອງແຂກທີ່ມາທ່ຽວຊົມ.



ຕາດຄະມີຄວາມຍາວປະມານ 1 ກິໂລແມັດ (ແຕ່ຕີນຕາດຫາຫົວຕາດ), ມີປະມານ 21 ຂັ້ນ ເຊິ່ງວ່າແຕ່ລະຂັ້ນມີ ຄວາມສູງຄວາມກ້ວາງຕ່າງກັນ.

ປະຈຸບັນ ໄດ້ມີນັກທຸລະກິດພາຍໃນ ກຳລັງເຂົ້າມາລົງທຶນສຳປະທານ ແລະ ໄດ້ພັດທະນາທາງຍ່າງຂຶ້ນຫາຕາດແຕ່ລະຂັ້ນ, ມີຮ້ານອາຫານ, ຫ້ອງນ້ຳສາທາລະນະ, ສະຖານທີ່ຈອດລົດ...



## 11. ບ້ານຊຽງກ່ຽວ ຫັດຖະກຳຕ່ຳຫູກໄໝມ້ອນ.



ບ້ານຊຽງກ່ຽວ ຕັ້ງຢູ່ ລະຫວ່າງທາງໂພນສະຫວັນ ຫາເມືອງຄຳ ຈາກເສັ້ນທາງເຂົ້າໄປປະມານ 1 ກິໂລແມັດ, ບ້ານດັ່ງກ່າວປະກອບດ້ວຍ 84 ຫຼັງຄາເຮືອນ, 104 ຄອບຄົວ, ຊາວບ້ານປະກອບອາຊີບ ໂດຍ ການເຮັດນາ, ເຮັດສວນ, ປູກພືດ ລະດູແລ້ງແມ່ນຕ່ຳຫູກທໍໄໝ ເປັນອາຊີບສຳຮອງ ມາຮອດປະຈຸ ບັນສິນຄ້າ ສ່ວນໃຫຍ່ ໄດ້ແກ່ສິ້ນ, ຕີນສິ້ນ, ແພໄໝ ແລະ ແພບຽງ, ຊາວບ້ານ ຈະຊື້ວັດຖຸດິບຈາກບ່ອນ ອື່ນ ແລ້ວມາຕ່ຳເປັນສິນຄ້າ ເພື່ອຂາຍໃນທ້ອງຕະຫຼາດ ແລະ ຮ້ານຫັດຖະກຳຂອງປະຊາຊົນ.

## 12. ຖ້ຳພະ.



ໄລຍະຫ່າງຈາກໜອງຕັ່ງປະມານ 3 ກິໂລແມັດ, ເປັນແຫຼ່ງທ່ອງທ່ຽວທາງດ້ານທຳມະຊາດ ແລະ ວັດທະນະທຳ. ຖ້ຳ ດັ່ງກ່າວ ມີຄວາມເລິກປະມານ 150 ແມັດ, ຈາກປາກຖ້ຳ ເຂົ້າໄປທາງໃນປະມານ 12 ແມັດ ມີພະອົງໃຫຍ່ອົງໜຶ່ງ ທີ່ມີ ຄວາມສູງປະມານ 4.20 ແມັດ, ບໍລິເວນເອິກ ກ້ວາງ 1.80 ແມັດ, ບໍເວນ ຫົວເຂົ່າ ກ້ວາງ 3.20 ແມັດ, ຈາກພະໃຫຍ່ ເຂົ້າໄປທາງໃນປະມານ 55 ແມັດ, ມີພະນ້ອຍຫຼາຍກ່ວາ 280 ອົງ. ນອກຈາກພະແລ້ວພາຍໃນຝາດ້ານຂ້າງຂອງຖ້ຳ ຍັງໄດ້ຈາລຶກຮູບ ຂອງຜູ້ນຳທາງດ້ານສາສະໜາພຸດ ຈຳນວນ 13 ທ່ານ, ຢູ່ກ້ອງຮູບດັ່ງກ່າວ ໄດ້ຂຽນຊື່ ຂອງແຕ່ລະທ່ານເປັນພາສາຂອມ. ນອກຈາກຮູບພາບ ຂອງຜູ້ນຳທາງດ້ານ ສາສະໜາແລ້ວ ຍັງມີຮູບພາບ ທີ່ສະແດງເຖິງວິຖີການດຳລົງຊີວິດຂອງພະສົງ ໃນສະໄໝ ດັ່ງກ່າວ.ຈາກໜັງສືຂອມ ແລະ ຄຳພີໃບລານແລ້ວເຫັນວ່າ: ພະດັ່ງກ່າວ ສ້າງຂຶ້ນໃນສະໄໝອານາຈັກຂອມ ຊຶ່ງເປັນສະໄໝທີ່ ສາດສະພຸດ ຈະເລີນຮຸ່ງ ເຮືອງສຸດຂີດ ໃນປີ ຈໍສໍ 145 ເດືອນ 11 ເພັງວັນເສົາ, ສ້າງໂດຍ ທ້າວ ສ ຖ. ຕົກມາຮອດປະຈຸບັນ (ປີ 2006) ພະດັ່ງກ່າວມີອາຍຸໄດ້ 1223 ປີ.

## 13. ຖ້ຳຊ້າງ.



ໄລຍະທາງ ຈາກຕົວເມືອງໂພນສະຫວັນໄປ ທາງທິດຕາເວັນອອກ ສຽງເໜືອ ປະມານ 40 ກິໂລແມັດ, ມີໄລຍະທາງຈາກສາມແຍກໜອງເປັດ ປະມານ 5 ກິໂລແມັດ ເປັນທາງດິນແດງ. ສະຖານທີ່ດັ່ງກ່າວ ຕັ້ງຢູ່ຂອບເຂດບ້ານຕ້າ ໃນນັ້ນປະກອບດ້ວຍ ສາມຖ້ຳ ຊຶ່ງໃນສະໄໝສົງຄາມ ຖ້ຳທັງໝົດແມ່ນໄດ້ຖືກນຳໃຊ້ເປັນໂຮງໝໍເພື່ອປິ່ນປົວ ທະຫານ ແລະ ປະຊາຊົນລາວທີ່ຖືກເຈັບຈາກການຕໍ່ສູ້ ມາຮອດປະຈຸບັນ ຖ້ຳດັ່ງກ່າວ ແມ່ນມີຄວາມສວຍງາມ ແລະ ເປັນເອກະລັກສະເພາະ ຊຶ່ງເໝາະແກ່ນັກທ່ອງທ່ຽວທີ່ ມັກເຂົ້າຊົມ ແລະ ສຶກສາຄົ້ນຄວ້າໃນຖ້ຳ, ບໍລິເວນພື້ນຖ້ຳເປັນຮູບໄຮ່ນາ ແລະ ຄັນນາທີ່ ມີຄວາມສວຍງາມ ສ່ວນຝາດ້ານຂ້າງ ແລະ ເພດານປະກອບດ້ວຍໜໍ່ຫີນທີ່ມີລວດ ລາຍ ສີເຫຼືອງເຫຼື້ອມຍິບຍັບ ສ້າງຄວາມປະທັບໃຈໃຫ້ແກ່ແຂກຄົນທີ່ມາຢ້ຽມຊົມ.



## 14. ບໍ່ນໍ້າຮ້ອນນ້ອຍບ້ານຊາງ.



ຕັ້ງຢູ່ບ້ານຊາງ ຫ່າງຈາກເທດສະບານຂອງເມືອງຄໍາ ປະມານ 4 ກິໂລແມັດ, ເປັນບໍ່ນໍ້າທໍາມະຊາດ ເກີດຂື້ນຢູ່ແຄມນໍ້າມັດ, ຊຶ່ງເປັນທ່າອາບນໍ້າຂອງປະຊາຊົນ.

ໃນລະດູຝົນນໍ້າຈະຖ້ວມ, ນັກທ່ອງທ່ຽວທີ່ໄປທ່ຽວ ຊົມແຫ່ງນີ້ທ່ານ ຈະພົບເຫັນຜະລິດຕະພັນຈາກການຕໍ່າຫູກທໍໄໝຂອງປະຊາຊົນບ້ານຊາງ. ໃນເດືອນທັນວາ ຂອງທຸກໆປີ ທ່ານຈະພົບເຫັນງານບຸນ ປະເພນີຂອງ ຊົນເຜົ່າຄະມຸ. ນໍ້າດັ່ງກ່າວມີອຸນຫະພູມ ປະມານ 60 ອົງສາ. ປະຈຸບັນໄດ້ເປີດເປັນແຫຼ່ງທ່ອງທ່ຽວແລ້ວ ໂດຍມີແຜນປັບປຸງເປັນແຫຼ່ງທ່ອງທ່ຽວຄົບວົງຈອນເຊັ່ນວ່າ: ບ່ອນອາບນໍ້າແຮ່, ໂຮງອົບນວດ, ຮົມຢາ, ຍ່າງປ່າທ່ຽວຊົມທໍາມະຊາດ ແລະ ໄຫຫີນ, ຮ້ານອາຫານ ແລະ ໂຮມສະເຕ.

## 15. ບໍ່ນໍ້າຮ້ອນໃຫຍ່ ບ້ານນໍ້າຮົ່ມ.



ປະຈຸບັນ ເຮືອນພັກ ແລະ ແຫຼ່ງທ່ອງທ່ຽວບໍ່ນໍ້າຮ້ອນໃຫຍ່ບ້ານນໍ້າຮົ່ມ ແມ່ນໄດ້ຖືກປັບປຸງ, ສ້າງເຮືອນພັກຂຶ້ນໃໝ່ ໂດຍການສໍາປະທານຈາກພາກເອກະຊົນ ເຮັດໃຫ້ມີຄວາມ ສະດວກສະບາຍຫຼາຍຂຶ້ນ ຫ່າງຈາກເທດສະບານເມືອງຄໍາ ໄປຕາມເສັ້ນທາງເລກ 7 ທາງທິດຕາເວັນອອກສ່ຽງໃຕ້ ປະມານ 17 ກິໂລແມັດ, ເປັນບໍ່ນໍ້າຮ້ອນທໍາມະຊາດ ທີ່ມີຄວາມຮ້ອນປະມານ 40 ອົງສາ. ບໍລິເວນອ້ອມຂ້າງບໍ່ ປະກອບດ້ວຍ ຕົ້ນໄມ້ໃຫ່ຍ ນາໆຊະນິດ ຊຶ່ງປະຊາຊົນເຊື່ອວ່າ ເປັນດົງສັກສິດມາແຕ່ດົນນານ, ແຫຼ່ງທ່ອງທ່ຽວແຫ່ງນີ້ ເປັນແຫຼ່ງທ່ອງທ່ຽວເໝາະແກ່ການມາພັກຜ່ອນຢ່ອນໃຈ ຂອງນັກທ່ອງທ່ຽວຕ່າງຊາດ ທີ່ມີຄວາມຕ້ອງການອາບນໍ້າແຮ່ ແລະ ພັກຜ່ອນ ໃນບ່ອນທີ່ມີປ່າໄມ້ທີ່ຮົ່ມເຢັນ.

## 16. ຣີສອດບໍ່ນ້ຳຮ້ອນນາທອງ (ໃໝ່).



ບໍ່ນ້ຳຮ້ອນນາທອງ ຕັ້ງຢູ່ບ້ານນາທອງ ເມືອງຄຳ ແຂວງຊຽງຂວາງ, ຫ່າງຈາກຕົວເມືອງ ໂພນສະຫວັນ 49 ກິໂລແມັດ, ຫ່າງຈາກຕົວເມືອງ ເມືອງຄຳ 7 ກິໂລແມັດ, ປະຈຸບັນບໍລິສັດອາສາ ວິສະວະກຳໄຟຟ້າ ຈຳກັດ ໄດ້ມາລົງທຶນສຳປະທານສ້າງຣີສອດ ແລະ ສະໜາມກ໋ອບ. ຣີສອດ ສຳເລັດແລ້ວ 80% ພາຍໃນຣີສອດຈະມີ ບໍ່ນ້ຳຮ້ອນທຳມະຊາດ, ອ່າງອາບນ້ຳລວມ, ອ່າງອາບນ້ຳສະເພາະ, ຮ້ານອາຫານ... ສຳລັບສະໜາມກ໋ອບແມ່ນກຳລັງປັບພື້ນທີ່ເດີນກ໋ອບ.



## 17. ຂຸມຫຼົບໄພຂອງທ່ານຜູ້ນຳ (ໃໝ່).





ຂຸມຫຼົບໄພທ່ານຜູ້ນຳຕັ້ງຢູ່ບ້ານຕ້າຍ ເມືອງແປກ ແຂວງຊຽງຂວາງ, ຫ່າງຈາກຕົວເມືອງໂພນສະຫວັນ 13 ກິໂລແມັດ, ຂຸມຫຼົບໄພດັ່ງກ່າວສ້າງຂຶ້ນໃນຊຸມປີ 1960 ສ້າງຂຶ້ນເພື່ອເປັນບ່ອນຫຼົບໄພຂອງທ່ານຜູ້ນຳພ້ອມຄະນະຂອງຜູ້ນຳແນວລາວຮັກຊາດ ນຳພາທະຫານ ແລະ ປະຊາຊົນຕໍ່ສູ້ກູ້ຊາດ ເຊິ່ງໃນໄລຍະເວລານັ້ນ ແມ່ນທ່ານ ປະທານ ຄຳໄຕ ສີພັນດອນ ເປັນຫົວໜ້ານຳພາ.

ປະທານ ຄຳໄຕ ສີພັນດອນ ໄດ້ຈັດຕັ້ງຊີ້ນຳກຳລັງປະກອບອາວຸດຝ່າຍປະເທດລາວຕີສັດຕູຈາກທິດຊຳເໜືອ ແລະ ທິດທາງເລກ 7 ເຂົ້າຊຽງຂວາງ ສົມທົບກັບກຳລັງທີ່ຖອນອອກຈາກວຽງຈັນປົດປ່ອຍທົ່ງໄຫຫີນ–ຊຽງຂວາງ ໃນວັນທີ 01 ມັງກອນ 1961 ຢ່າງມີໄຊ.

ໃນຊຸມປີ 1966, 1967, 1968 ປະທານ ຄຳໄຕສີພັນດອນ ເປັນຜູ້ບັນຊາການສູງສຸດໄດ້ຊີ້ນຳ ແລະ ກຳລັງປະຕິວັດໄດ້ຕີເອົາຊະນະສັດຕູຢູ່ທົ່ວສະໜາມຮົບພາກເໜືອ, ພາກກາງ ແລະ ພາກໃຕ້ ໃນນັ້ນເດັ່ນກ່ວາໝູ່ແມ່ນຕີທັບມ້າງບັ້ນບຸກໂຈມຕີຂອງສັດຕູເຂົ້າພູກູດ (ຊຽງຂວາງ), ປົດປ່ອຍນ້ຳບາກ, ປົດປ່ອຍຮັງກອງປຸ້ນຢູ່ຜາທີ່ (ຫົວພັນ).

ຕະຫຼອດໄລຍະ ທ່ານ ປະທານ ຄຳໄຕ ສີພັນດອນ ໄດ້ນຳພາກອງກຳລັງປະຕິວັດຕໍ່ສູ້ຢູ່ແຂວງຊຽງຂວາງ ທ່ານພ້ອມດ້ວຍຄະນະນຳຕ່າງໆໄດ້ມາຫຼົບໄພຢູ່ຖ້ຳແຫ່ງນີ້.



## 18. ຫໍພິພິທະພັນມູນເຊື້ອແຂວງຊຽງຂວາງ (ໃໝ່).

ຫໍພິພິທະພັນແຂວງຊຽງຂວາງ ຕັ້ງຢູ່ໃຈກາງຕົວເມືອງໂພນສະຫວັນ ໃນປີ 2017 ມາຮອດປະຈຸບັນ ໄດ້ເລີ່ມປັບປຸງຄືນໃໝ່ ໂດຍໄດ້ຮັບທຶນຈາກໂຄງການພັດທະນາການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ ເພື່ອຄວາມຍືນຍົງ ໄລຍະ II (ການຊ່ວຍເຫຼືອຈາກລັດຖະບານນິວຊີແລນ), ພາຍໃນຈະມີຂໍ້ມູນປະຫວັດສາດການຕໍ່ສູ້ກູ້ຊາດ ເປັນແຕ່ລະໄລຍະ, ຂໍ້ມູນຮີດຄອງປະເພນີການດຳລົງຊີວິດຂອງບັນດາເຜົ່າໃນທົ່ວແຂວງ, ຂໍ້ມູນມໍລະດົກໄຫຫີນທີ່ໄດ້ຄົ້ນພົບຢູ່ທົ່ງໄຫຫີນ ແລະ ຂໍ້ມູນອື່ນໆ.







## 19. ເຮືອນຈຳລອງຂອງຊົນເຜົ່າມົ້ງ (ໃໝ່).







ເຮືອນຈຳລອງຂອງເຜົ່າມົ້ງຕັ້ງຢູ່ບ້ານ ທ່າໂຈກ ເມືອງແປກ ແຂວງຊຽງຂວາງ, ຕັ້ງຢູ່ຫ່າງຈາກຕົວເມືອງໂພນສະຫວັນປະມານ 30 ກິໂລແມັດ, ສ້າງຂຶ້ນໃນຕົ້ນປີ 2018 ໂດຍໄດ້ຮັບທຶນຈາກໂຄງການພັດທະນາການທ່ອງທ່ຽວ ແບບປະຊາຊົນມີສ່ວນຮ່ວມ ເພື່ອຄວາມຍືນຍົງ ໄລຍະ II (ການຊ່ວຍເຫຼືອຈາກລັດຖະບານນິວຊີແລນ), ສ້າງຂຶ້ນເພື່ອເປັນເຮືອນຈຳລອງຂອງຊົນເຜົ່າມົ້ງ ພາຍໃນເຮືອນຈະມີອຸປະກອນເຄື່ອງໃຊ້ໃນການດຳລົງຊີວິດຄົບຊຸດ.



# ແຂວງວຽງຈັນ

## 1. ຖ້ຳປູຄຳ.



ສະຖານທີ່ຕັ້ງຢູ່ບ້ານນາທອງ, ເມືອງວັງວຽງ ແຂວງວຽງຈັນ ຫ່າງຈາກຕົວເມືອງວັງວຽງປະມານ 6 km ແຫຼ່ງທ່ອງທ່ຽວຖ້ຳປູຄຳເປັນສະຖານທີ່ທ່ອງທ່ຽວທາງທຳມະຊາດແຫ່ງໜຶ່ງທີ່ມີເອກະລັກ ແລະ ມີຄວາມໂດດເດັ່ນ, ມີຄວາມອຸດົມສົມບູນໄປດ້ວຍທຳມະຊາດ ມີວິວທິວທັດສະນີຍະພາບທຳມະຊາດທີ່ສວຍງາມ, ເປັນແຫຼ່ງທ່ອງທ່ຽວລະດັບເມືອງ, ຖ້ຳດັ່ງກ່າວຕັ້ງຢູ່ກາງໜ້າຜາກາ ມີລະດັບຄວາມສູງຈາກໜ້າດິນ 100 ແມັດ ແລະ ມີຄວາມຍາວປະມານ 400 ແມັດ, ຕາມການເລົ່າຂານຂອງປູ່ຍ່າຕາຍາຍໃນເມື່ອກ່ອນ ຖ້ຳດັ່ງກ່າວແມ່ນຖືກຄົ້ນພົບໂດຍປະຊາຊົນໃນໝູ່ບ້ານທີ່ໄປລ້າສັດເພື່ອນຳມາເປັນອາຫານ ແລະ ໄດ້ພົບເຫັນຖ້ຳດັ່ງກ່າວ ໃນເມື່ອກ່ອນເອີ້ນຊື່ວ່າ **ຖ້ຳເຈຍ** ເນື່ອງຈາກວ່າມີເຈຍມາອາໃສຢູ່ຢ່າງຫຼວງຫຼາຍ ຕໍ່ມາໃນປີ 1996 ອຳນາດການປົກຄອງບ້ານຈຶ່ງມີແຜນເປີດຖ້ຳເຈຍເປັນແຫຼ່ງທ່ອງທ່ຽວ ແລະ ໄດ້ປ່ຽນຊື່ຖ້ຳເຈຍມາເປັນຖ້ຳປູຄຳຕັ້ງແຕ່ນັ້ນມາ, ການປ່ຽນຊື່ເປັນຖ້ຳປູຄຳນັ້ນ ເນື່ອງຈາກວ່າ ມີຊາວບ້ານໄດ້ໄປພົບເຫັນປູທີ່ມີລັກສະນະແປກ ແຕກຕ່າງກັບປູອື່ນທົ່ວໄປ ເປັນປູທີ່ມີລັກສະນະຂາຍາວ ມີສີເຫຼືອງຄືສີຄຳ ແລະ ຊາວບ້ານເອີ້ນປູນີ້ວ່າ **ປູຄຳ** ຊາວບ້ານມີຄວາມເຊື່ອປູດັ່ງກ່າວເປັນເຈົ້າເຝົ້າຖ້ຳ, ດັ່ງນັ້ນ, ເຖົ້າແກ່ແນວໂຮມຈຶ່ງຕົກລົງປ່ຽນຊື່ຖ້ຳເຈຍ ມາເປັນຖ້ຳປູຄຳ ແລະ ເປີດໃຫ້ບໍລິການເຂົ້າຊົມຖ້ຳຕັ້ງແຕ່ ປີ ຄ.ສ. 1996 ເປັນຕົ້ນມາ ແລະ ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນແມ່ນນັກທ່ອງທ່ຽວລາວ, ໄທ, ເກົາຫລີ, ຈີນ, ຍີປຸ່ນ, ເອີລົບ….



## 2. ຖ້ຳນ້ຳ.

ປະຫວັດຂອງຖ້ຳນ້ຳ ໃນເມື່ອກ່ອນເອີ້ນວ່າ: ຖ້ຳຊ້າງ ຊາວບ້ານໄດ້ນຳໃຊ້ນ້ຳ ທີ່ໄຫລອອກມາຈາກຖ້ຳແຫ່ງນີ້ ເພື່ອເຮັດນາ ໂດຍໄດ້ເຮັດເໝືອງ–ຝາຍໄມ້ແບບບູຮານ ຊຶ່ງບໍ່ຮູ້ວ່າຕົ້ນນ້ຳ(ຍອດນ້ຳ) ດັ່ງກ່າວນັ້ນໄຫລມາຈາກໃສ ແລະ ໄຫລຕະຫລອດລະດູແລ້ງ ແລະ ຝົນ, ຈຶ່ງເປັນທີ່ມາຂອງຊື່: **“ ຖ້ຳນ້ຳ’ ’** ປັດຈຸບັນກຳລັງເປັນທີ່ນິຍົມຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ນັກທ່ອງທ່ຽວ ລາວ, ໄທ, ເກົາຫລີ,ຈີນ ແລະ ນັກທ່ອງທ່ຽວເອີຣົບ ທີ່ເຂົ້າມາທ່ອງທ່ຽວຖ້ຳແຫ່ງນີ້ ກ່ອນທີ່ຈະເຂົ້າໄປທາງໃນຖ້ຳຕ້ອງໄດ້ຂີ່ກົງເບັງລອດເຂົ້າໄປຕາມແລວນ້ຳທີ່ຜູ້ບໍລິການໄດ້ມັດເຊືອກຄຶງໄວ້ແລ້ວນັກທ່ອງທ່ຽວຕ້ອງໄດ້ຈັບໄປຕາມແລວເຊືອກທີ່ມີນ້ຳໃສ ແລະ ເຢັນຫລາຍຈົນກ່ວາຈະພົບກັບພື້ນທີ່ໃນຖ້ຳ ແລ້ວຈຶ່ງສາມາດຍ່າງໄປຕາມຫ້ອງໂຖງພາຍໃນຖ້ຳ ເຊິ່ງກິດຈະກຳນີ້ກຳລັງເປັນທີ່ນິຍົມຂອງນັກທ່ອງທ່ຽວ.

## 3. ຖໍ້າລົມ.



ປະຫວັດຄວາມເປັນມາຂອງຖໍ້າລົມ: ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ອາວຸໂສໃນທ້ອງຖິ່ນວ່າ: ເຫດຜົນທີ່ພາກັນເອີ້ນຊື່ວ່າ" **ຖໍ້າລົມ** " ກໍ່ເພາະຢູ່ບໍລິເວນປາກຖໍ້າ ຈະມີລົມພັດຜ່ານເຂົ້າໄປໃນຖໍ້າຕະຫຼອດລະດູການ ບໍ່ວ່າຈະເປັນເວລາກາງຄືນ ຫຼື ກາງເວັນ ຈະມີລົມພັດແຮງ ແລະ ເຢັນຢູ່ຕະຫລອດ ຈຶ່ງເປັນເຫດຜົນເປັນທີ່ມາຂອງຊື່ຖໍ້າວ່າ **ຖໍ້າລົມ**



## 4. ອ່າງຫຼວງ.



ຄວາມເປັນມາຂອງຖໍ້າອ່າງຫລວງ: ໃນສະໄໝສົງຄາມ ປະຊາຊົນໃນເຂດນີ້ ໄດ້ອາໃສຖໍ້າດັ່ງກ່າວ ໄວ້ເປັນບ່ອນລີ້ຊ່ອນສັດຕູ ແລະ ເກັບຮັກສາເຄື່ອງຂອງທີ່ມີຄ່າ, ຢູ່ບໍລິເວນດ້ານລຸ່ມຂອງຖໍ້າ ມີປ່າໄມ້ດົກໜາ, ມີອ່າງນໍ້າໃສເຢັນຂະໜາດທີ່ໃຫ່ຍ ແລະ ມີຄວາມເລິກ ຈຶ່ງເປັນທີ່ມາຂອງຊື່ຖໍ້າອ່າງຫລວງ (ອ່າງໃຫຍ່)ສະຖານທີ່ຕັ້ງແມ່ນຢູ່ ບ້ານນາມ່ວງ ເມືອງວັງວຽງຫ່າງຈາກຕົວເມືອງເຂົ້າໄປຫາສະຖານທີ່ທ່ອງທ່ຽວຖໍ້າອ່າງຫລວງແມ່ນມີໄລຍະທາງປະມານ 8 ກິໂລແມັດ ຄົ້ນພົບໃນປີ 1985, ເລີ່ມພັດທະນາໃນປີ 2014 ແລະ ເປີດໃຫ້ບໍລິການແກ່ນັກທ່ອງທ່ຽວໃນປີ 2017 ເຊິ່ງແມ່ນການລົງມືສາປະທານ ແລະ ພັດທະນາຂອງເອກະຊົນລາວ ປັດຈຸບັນກໍາລັງເປັນທີ່ນິຍົມຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ນັກທ່ອງທ່ຽວ ລາວ, ໄທ, ເກົາຫລີ,ຈີນ ແລະ ນັກທ່ອງທ່ຽວເອີຣົບທີ່ເຂົ້າມາພັກຜ່ອນ ແລະ ສໍາພັດກັບກິດຈະກໍາຕ່າງໆພາຍໃນສະຖານທີ່ທ່ອງທ່ຽວເປັນຕົ້ນແມ່ນກິດຈະກໍາໂດດນໍ້າ, ຂີ່ສະລິງ ປີນຜາຊົມທໍາມະຊາດພາຍໃນຖໍ້າ

## 5. ນ້ຳຕົກຕາດນ້ຳແຖ່ມ.



ນ້ຳຕົກຕາດນ້ຳແຖ່ມຕັ້ງຢູ່ບ້ານປາກເປາະ ເມືອງວັງວຽງ ແຂວງວຽງຈັນການເດີນທາງສູ່ນ້ຳຕົກຕາດນ້ຳແຖມ ອອກຈາກເມືອງວັງວຽງ ໄປຕາມເສັ້ນທາງ 13 ເຫນືອ ປະມານ 6 ກມ ຈາກນັ້ນຈະມີທາງແຍກ ທາງຊ້າຍມື ຕາມເສັ້ນທາງມາຍັງຈຸດຂ້າມເຮືອຂອງ TCK ຈາກເສັ້ນທາງ 13 ເຫນືອ ມາຮອດບ່ອນນີ້ ປະມານ 3 ກມ. ຂ້າມນ້ຳຊອງດ້ວຍແພຊາວບ້ານ ຍ່າງຕໍ່ອີກ 1 ກມ. ຮອດຈຸດຂີ່ສະລິງຂອງ TCK ແລ້ວເດີນທາງຕໍ່ຂ້າມພູໜ່ອຍທີ່ 1 ປະມານ 1.5 ກມ. ຈຶ່ງມາຮອດພູນ້ຳແຖມ ຈາກຈຸດນີ້ ເປັນການຍ່າງຂຶ້ນພູຢ່າງດຽວ ໄລຍະທາງຈາກຕີນພູຈົນຮອດນ້ຳຕົກຕາດ ປະມານ 3 ກມ. ມີຄວາມຊັນຂອງພູຕັ້ງແຕ່ 25 ຫາ 90 ອົງສາ ບາງບ່ອນຕ້ອງຍ່າງຕາມລຳຫ້ວຍ ປີນຜາ ໄຕ່ຂົວອູ່ ໃຊ້ເວລາເດີນທາງທັງໝົດ 8 ຊົ່ວໂມງ ຢູ່ໃກ້ນ້ຳຕົກຈະມີເຮືອນພັກໃຫ້ນັກທ່ອງທ່ຽວພັກ ເພາະສ່ວນໃຫຍ່ ຈະໃຊ້ເວລາໃນການໄປທຣິບ 2 ມື້ 1 ຄືນ ເມື່ອໄປຮອດເຮືອນພັກທ່ານສາມາດແນມເຫັນເມືອງວັງວຽງໄດ້ທັງໝົດ ສ່ວນນ້ຳຕົກ ທ່ານສາມາດຍ່ອນໂຕລົງມາຈາກຈຸດສູງສຸດຂອງນ້ຳຕົກນີ້ໄດ້ ເຊິ່ງນ້ຳຕົກນີ້ມີຄວາມສູງ ປະມານ 200 ເມັດ ເປັນນ້ຳຕົກຕາດທີ່ມີຄວາມສູງ ແລະສວຍງາມອີກແຫ່ງໜຶ່ງຂອງເມືອງວັງວຽງ.

## 6. ລ່ອງເຮືອໃຫຍ່ທ່ຽວຊົມທຳມະຊາດອ່າງນ້ຳງື່ມ 1 ເມືອງແກ້ວອຸດົມ.



ເຂື່ອນໄຟຟ້ານ້ຳງື່ມ 1 ໄດ້ເລີ່ມສ້າງໃນປີ 1968 ແລະ ສຳເລັດໃນປີ 1972 ສາມາດຜະລິດກະແສໄຟຟ້າໄດ້ 155 MKW ຢູ່ໜ້າຂອງເຂື່ອນ ໄດ້ກາຍເປັນອ່າງນ້ຳຂະໜາດໃຫ່ຍກວ່າໝູ່ ໃນ ສປປ ລາວ, ມີຄວາມເລິກ 90 ແມັດ, ຕື້ນ 5 ແມັດ, ອ່າງມີເນື້ອທີ່ທັງໝົດ 270 ກິໂລຕາແມັດ (ປະມານ 47,700 ເຮັກຕ່າ) ສະຫລັບຊັບຊ້ອນໄປດ້ວຍເກາະ-ດອນ ນ້ອຍໃຫຍ່ ທັງໝົດ 2199 ດອນ, ເຊິ່ງເໝາະສົມແກ່ການພັດທະນາໃຫ້ເປັນແຫຼ່ງທ່ອງທ່ຽວທາງນ້ຳ. ມາຮອດປີ 1990–1996 ອົງການປົກຄອງແຂວງວຽງຈັນ ໄດ້ລະດົມນັກທຸລະກິດ ແລະ ນຳໃຊ້ງົບປະມານຂອງລັດຈຳນວນຫນຶ່ງ ສ້າງເຮືອໃຫ່ຍ ທີ່ສາມາດບັນຈຸຜູ້ຄົນໄດ້ເຖິງ 100–150 ຄົນ ເພື່ອນຳທ່ຽວຕາມອ່າງນ້ຳງື່ມ ແລະ ສ້າງ ຫໍຊົມວິວຢູ່ດອນ ໃນອ່າງນ້ຳງື່ມ, ແຕ່ການທ່ອງທ່ອງໃນເວລານັ້ນ ກໍ່ຍັງບໍ່ທັນໄດ້ຮັບຄວາມສົນໃຈຈາກສັງຄົມພໍເທົ່າໃດ. ຮອດປີ 1999–2000 ສປປ ລາວ ໄດ້ເປີດປີທ່ອງທ່ຽວລາວ ຢ່າງເປັນທາງການ, ອ່າງນ້ຳງື່ມ 1 ເຂດເມືອງແກ້ວອຸດົມ ຈຶ່ງຄ່ອຍກາຍເປັນແຫຼ່ງທ່ອງທ່ຽວທີ່ສຳຄັນຂອງ ແຂວງວຽງຈັນ ແລະ ເປັນທີ່ຮູ້ຈັກກັນດີ ຂອງກຸ່ມນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ແລະ ເກີດມີການບໍລິການຂີ່ເຮືອໃຫຍ່ ທ່ຽວຊົມຕາມໝູ່ເກາະດອນ ອັນເປັນທີ່ຮູ້ຈັກກັນດີຂອງກຸ່ມນັກທ່ອງທ່ຽວວ່າ ທະເລນ້ຳຈືດເມືອງລາວ.

ກິດຈະກຳ ການບໍລິການລ່ອງເຮືອໃຫຍ່ທ່ຽວຊົມທຳມະຊາດອ່າງນ້ຳງື່ມ: ເປັນກິດຈະກຳທີ່ໂດດເດັ່ນ ແລະ ສາມາດດຶງດູດເອົານັກທ່ອງທ່ຽວເຂົ້າມາທ່ຽວເມືອງແກ້ວອຸດົມເປັນຈຳນວນຫລວງຫລາຍ, ປະຈຸບັນໄດ້ມີການຈັດຕັ້ງເປັນກຸ່ມບໍລິການເຮືອນຳທ່ຽວອ່າງນ້ຳງື່ມ ທີ່ຕິດພັນກັບຮ້ານອາຫານ, ມີເຮືອທັງໝົດ 41 ລຳ ໄວ້ຄອຍບໍລິການນັກທ່ອງທ່ຽວ ໃນແຕ່ລະໆດັບ

## 7. ແກ້ງຂິດຄູ້.



ແກ້ງຂິດຄູ້ ຕັ້ງຢູ່ບ້ານ ປາກມີ້ ເມືອງຊະນະຄາມ ຄຳວ່າ: "ຂິດຄູ້" ແມ່ນເອີ້ນຕາມການເສຍຊີວິດຂອງ ທ້າວຈິ່ງຂີ່ງ ດັງແດງ ທີ່ຫາບໂງ່ນຫີນມາຈາກຜາບ່ອງ-ຜາເລືອງ ມາຕັນນໍ້າຂອງ ເພື່ອເອົານໍ້າເຮັດນາ ແຕ່ລົ້ມຕາຍລົງຢູ່ກາງລຳນໍ້າຂອງ ເປັນລັກສະນະນອນຄິດຂູ້ ສະນັ້ນຈຶ່ງເປັນທີ່ມາຂອງຊື່ວ່າ: "ແກ້ງຂິດຄູ້" ມາຈົນເຖິງປະຈຸບັນ.

## ໘. ພູຄ້ຳ-ພູໃຫ່ຍ.



ແຫລ່ງທ່ອງທ່ຽວພູຄ້ຳໃຫຍ່-ພູໃຫຍ່ ເປັນພູເຂົາສູງຊັນ ທີ່ຍັງຄົງມີຄວາມອຸດົມສົມບູນທາງທຳມະຊາດ ຊີວະນາໆພັນ ເຊິ່ງເໝາະແກ່ການພັດທະນາ ໃຫ້ເປັນແຫລ່ງທ່ອງທ່ຽວຊົມທຳມະຊາດ ເປັນຈຸດຊົມວິວທີ່ສວຍງາມ ທ່ຽວຊົມວິວທະເລໝອກ ໃນຍາມເຊົ້າ, ຊົມຕາເວັນຕົກດິນໃນຍາມແລງ ແລະ ກິດຈະກຳອື່ນໆ. ເພື່ອດຶງດູດເອົານັກທ່ອງທ່ຽວແວ່ຢ້ຽມຢາມເມືອງຊະນະຄາມ ແລະ ເຊື່ອມຕໍ່ກັບແຫລ່ງທ່ອງທ່ຽວແຫ່ງອື່ນໆ ຂອງແຂວງໄຊຍະບູລີ ແລະ ຈັງຫວັດເລີຍ ຣາດຊະອານາຈັກໄທ

## ໑. ຜາທໍ່ໜໍ່ຄໍາ.



ສາມໝື່ນ ເມືອງເຟືອງ ເປັນເມືອງໜຶ່ງ ທີ່ຂຶ້ນກັບແຂວງວຽງຈັນ ມີຕໍານານມາແຕ່ດຶກດໍາບັນວ່າ: ສາມໝື່ນຕູບເຟືອງ ທີ່ມາຂອງສາມໝື່ນເມືອງເຟືອງ ມີຄື: ໃນສະໄໝກ່ອນ ຢູ່ໃນສະຕະວັດໃດກໍ່ບໍ່ຮູ້ ໄດ້ມີສຽງຊ່າລືຂອງຄົນ ແຕ່ເໜືອຮອດໃຕ້ ກ່າວຂານກັນມາວ່າ: ຜາທໍ່ໜໍ່ຄໍາ ໃນຄາວນັ້ນບໍ່ມີໃຜຮູ້ວ່າ ຜາທໍ່ໜໍ່ຄໍາ ຕັ້ງຢູ່ໃສ່? ບັງເອີນມີກຸ່ມຄົນຈໍານວນຫຼວງຫຼາຍ ເດີນທາງມາແຕ່ພາກໃຕ້ ຫວັງຊອກຄົ້ນຫາຜາທໍ່ໜໍ່ຄໍາ ວ່າຕັ້ງຢູ່ແຫ່ງຫົນໃດແທ້ ການເດີນທາງແມ່ນກໍານົດເອົາສາຍນໍ້າເປັນຫຼັກ, ເປັນເຂັມຊີ້ທິດບອກ. ເລີ່ມຕົ້ນເລາະລ່ອງຂຶ້ນມາຕາມສາຍແມ່ນໍ້າຂອງ ຕໍ່ໃສ່ສາຍນໍ້າງື່ມ-ນໍ້າລີກ, ຂະບວນດັ່ງກ່າວ ເດີນທາງຮອດປາກນໍ້າ ບ່ອນໃດກໍ່ມີການພັກຜ່ອນດູມໍ, ຈັບຕິ້ງລິງຫວ່າງ, ສ່ຽງດູໄປພ້ອມ ແຕ່ລະບ່ອນຜ່ານມາເຫັນວ່າ ບໍ່ທັນຈັບຕິ້ງໄດ້ເທື່ອ, ຈຶ່ງສ່ຽງອີກເລີຍຈັບຕິ້ງໄດ້, ຫົວໜ້າດູມໍເວົ້າອອກມາວ່າ: ໄດ້ແລ້ວ, ແມ່ນແລ້ວຈັບຕິ້ງໄດ້ແລ້ວ ພວກເຮົາທັງໝົດຕ້ອງເລາະຕາມນໍ້າຕິ້ງນີ້ ຂຶ້ນໄປຕ້ອງພົບຜາທໍ່ໜໍ່ຄໍາຢ່າງແນ່ນອນ. ຂະບວນກໍ່ສືບຕໍ່ເຄື່ອນຍ້າຍ ບໍ່ພໍເທົ່າໃດກໍ່ພົບ ຜາທໍ່ໜໍ່ຄໍາ ແທ້ຈິງ. ເມື່ອພົບແລ້ວ ກໍ່ພາກັນພັກຜ່ອນຢູ່ຕີນຜາ ຢູ່ເປັນກຸ່ມເປັນກອງຫຼາຍໆກຸ່ມ, ຊຶ່ງບ່ອນນັ້ນ ໄດ້ເອີ້ນວ່າ ຫາດຫີນກ້ອນ ຍ້ອນຄົນມາພັກເຊົາຢູ່ ເປັນຫຼາຍກຸ່ມຫຼາຍກອງ. ຈາກນັ້ນ, ຫົວໜ້າຂະບວນ ໄດ້ຊີ້ນໍາວາງແຜນປຸກຕູບ ເພື່ອເປັນບ່ອນພັກພາອາໄສຢູ່ບໍລິເວນນັ້ນ ເປັນຈໍານວນສາມໝື່ນຕູບເຟືອງ ເພາະເອົາເຟືອງມາມຸງແຕ່ຈໍານວນຄົນແມ່ນບໍ່ຮູ້ ເພາະວ່າບໍ່ກ່າວໄວ້ໃນຕໍານານ, ແຕ່ບໍລິເວນແຫ່ງນີ້ ພັດມີ 3 ຜາຄ້າຍຄືກ້ອນເສົ້າ, ຕອນນັ້ນ ບໍ່ທັນຮູ້ວ່າໃສ່ຊື່ຜາແຕ່ລະໜ່ວຍແນວໃດ, ບັງເອີນມີນົກອິນຊີໃຫຍ່ໂຕໜຶ່ງ ບິນມາຈັບຜາໜ່ວຍທໍາອິດເຮັດໃຫ້ ໜ່ວຍຜາເດື່ອງໄປເດື່ອງມາຄືຊິລົ້ມເລີຍໃສ່ຊື່ຜາໜ່ວຍທໍາອິດວ່າ ຜາເດື່ອງ, ແຕ່ດຽວນີ້ເອີ້ນວ່າ: ຜາເລືອງ, ນົກອິນຊີບິນໄປຈັບຜາໜ່ວຍທີສອງ ໝັ້ນຕິ້ງບໍ່ເໜັງບໍ່ສະເທືອນຫຍັງເລີຍ ເອີ້ນວ່າ: ຜາຕິ້ງ ເວລານົກອິນຊີຕົວນັ້ນບິນຈັບຜາຕິ້ງ ທາງກ່າຍຜາເລືອງ, ຈາກນັ້ນກໍ່ບິນມາຈັບຜາໜ່ວຍທີສາມ ຄືວ່າທໍ່ໆກັນກັບຜາຕິ້ງ ຈຶ່ງເອີ້ນວ່າ: ຜາທໍ່ໜໍ່ຄໍາ ເພາະວ່າມີສິ່ງປະຫຼາດຄ້າຍຄືກັບຄໍາ ເປັນ 2 ໜໍ່ ໃຫ້ທຸກຄົນໄດ້ເບິ່ງໄດ້ແຍງ ຈົນເຖິງທຸກມື້ນີ້.

ໃນໄລຍະທີ່ນົກອິນຊີບິນມາຈັບຜາແຕ່ລະໜ່ວຍນັ້ນ ໄດ້ສິ່ງສຽງຮ້ອງເປັນຕາອອນຊອນຟັງແລ້ວມ່ວນ ເບື່ອບໍ່ເປັນຫົວໜ້າຂະບວນໃນຄາວນັ້ນ ຈຶ່ງມີຄໍາເຫັນວ່າ ພວກເຮົາທຸກຄົນຄວນສ້າງສິ່ງໃດສິ່ງໜຶ່ງໄວ້ ເພື່ອເປົ່າທົດແທນ ໃຫ້ຄ້າຍຄືກັບສຽງນົກອິນຊີຕົວນັ້ນ ໄວ້ໃຫ້ລຸ້ນລູກລຸ້ນຫຼານໄດ້ອະນຸລັກຕໍ່ໄປພາຍໜ້າ, ຜູ້ທີ່ມີຫົວຄິດປັນຍາກໍ່ໄດ້ເຮັດເປັນປີ່, ເປັນຂຸ່ຍ, ກະຈັບປີ່ ແລະ ອື່ນໆນໍາມາເປົ່າ, ມາຕ່ອຍໃສ່ກັນກໍ່ບໍ່ມີສຽງຫຍັງຄ້າຍຄື, ອີກຜູ້ໜຶ່ງຈຶ່ງມີຫົວຄິດ ເຮັດແຄນຂຶ້ນມາເປົ່າທຽບກັບສຽງ

ນົກອິນຊີຮ້ອງ ເມື່ອຫຼາຍຄົນໄດ້ຟັງ ກໍ່ເວົ້າເປັນສຽງດຽວກັນວ່າ ອັນນີ້ແຄນ ຄ້າຍຄື ສຽງນົກອິນຊີຮ້ອງຈຶ່ງໃສ່ຊື່ວ່າ ແຄນ ຈົນມາເຖິງປະຈຸບັນນີ້.

ເມື່ອໄດ້ຊື່ຜາແຕ່ລະໜ່ວຍຄົບຖ້ວນແລ້ວ ປວງຊົນທີ່ມາປອງເອົາໜໍ່ຄຳ ກໍ່ນັບມື້ນັບຫຼາຍຂຶ້ນ ມາແຕ່ເໜືອ ແລະ ໃຕ້ກໍ່ມີ. ຕອນທຳອິດໜໍ່ຄຳ ແມ່ນຢູ່ລຸ່ມ, ມີພໍ່ເຖົ້າຜູ້ໜຶ່ງ ໄປອະທິຖານສັນຍາວ່າຈະເປັນຜູ້ບົວລະບັດຜັດສີ ປົກປັກຮັກສາໜໍ່ຄຳ ໃຫ້ເຫຼືອງງາມ ຢູ່ຕະຫຼອດເວລາ, ແຕ່ລະເຊົ້າ ແລະ ແລງໄດ້ເອົາຫີນຊາມາຜັດຖູໜໍ່ຄຳ ເຮັດໃຫ້ຄຳນັ້ນຊຸລົ່ນອອກເທື່ອລະນ້ອຍ, ຍ້ອນຄວາມສັກສິດຂອງເຈົ້າພໍ່ ຜາທໍ່ໜໍ່ຄຳ ໃນປາງນັ້ນໜໍ່ຄຳໄດ້ຫາຍຕົວ, ຢູ່ຕໍ່ມາ ຈຶ່ງໄດ້ເຫັນໜໍ່ຄຳພົ້ນຂຶ້ນຈອມຜາ ເຮັດໃຫ້ຄົນຂຶ້ນໄປບົວລະບັດຜັດສີ ຄືຜ່ານມາບໍ່ໄດ້.

ຫົວໜ້າຂະບວນການ ຜູ້ມີຄວາມຄຶດໄວ້ແລ້ວ ຫວັງມາເອົາໜໍ່ຄຳໃຫ້ມັນໄດ້ ກໍ່ມີແຜນການໃຫ້ສະມາຊິກທັງໝົດ ອອກແຮງຕັດໄມ້ໄຜ່ ເພື່ອສ້າງເປັນຂັ້ນໄດດັ່ງໄປຫາໜໍ່ຄຳ. ຈຸດທີ່ຕັ້ງຂັ້ນໄດໄປຫາໜໍ່ຄຳ ແມ່ນທົ່ງນາດັ່ງ ໃກ້ກັບບ້ານດອນ. ທຸກຄົນໄດ້ມີຄວາມສາມັກຄີກັນອອກແຮງ ຕັດໄມ້ໄຜ່ໃຫ້ໄດ້ຫຼາຍເຮັດຂັ້ນໄດ ໃຫ້ສຳເລັດ ປອງເອົາໜໍ່ຄຳໃຫ້ໄດ້ ເພາະໜໍ່ຄຳເປັນຊັບສົມບັດອັນລ້ຳຄ່າ. ຫຼາຍມື້ຫຼາຍເດືອນຕໍ່ມາ ຂັ້ນໄດທີ່ສ້າງຂຶ້ນດັ່ງໄປຫາໜໍ່ຄຳ ເກືອບສຳເລັດເລີຍຄ່ຳກ່ອນ, ຫົວໜ້າຂະບວນເວົ້າຂຶ້ນວ່າ: ມື້ນີ້ພວກເຮົາພັກຜ່ອນກ່ອນ, ມື້ອື່ນເຊົ້າຈຶ່ງພ້ອມກັນຂຶ້ນມາປັນເອົາໜໍ່ຄຳ. ຍ້ອນຄົນເຮົາມີແນວຄິດບໍ່ຄືກັນ ມີແນວຄິດໂລບມາກ ໂລພາ ຢາກໄດ້ແຕ່ໂຕ, ຟ້າບໍ່ທັນແຈ້ງຄັກ ຕ່າງຄົນຕ່າງຍາດຊິງກັນຂຶ້ນຢ້ານບໍ່ໄດ້ໜໍ່ຄຳນຳໝູ່ ເຮັດໃຫ້ຂັ້ນໄດຮັບນ້ຳໜັກບໍ່ລ້ອນ ໄມ້ໄຜ່ທີ່ນຳມາເຮັດຂັ້ນໄດນັ້ນຫຼາຍເດືອນ ມັນກໍ່ໂດກ, ເຄືອຫວາຍ ແລະ ເສັ້ນຕອກທີ່ເອົາມາມັດຂັ້ນໄດ ກໍ່ຊຸລົ່ນ ເກີດມີສິ່ງອັດສະຈັນຄື: ຂອດຕອກເກີດເປັນຂີ້ງເຂັບ, ແມງງອດ, ເປັນງູໄລ່ຕອດຄົນ, ຂັ້ນໄດໄດ້ຫັກລົງມາ ຍ້ອນຝູງຄົນ ຈັບພ້າໄລ່ຟັນແມງສາລະພິດຮ້າຍ ຈຳນວນຄົນທີ່ຂຶ້ນຂັ້ນໄດ ໄດ້ຕົກລົງມາ, ເກີດມີນ້ຳຖ້ວມບໍລິເວນນັ້ນ ພັດເອົາຄົນຈຳນວນຫຼວງຫຼາຍ ໄຫຼໜີ ຍັງເຫຼືອແຕ່ສອງຄົນ ແມ່ໝາຍທີ່ເຂົາບໍ່ບອກໃຫ້ຮູ້ບໍ່ໄດ້ຂຶ້ນຂັ້ນໄດຈຶ່ງບໍ່ຕາຍ ໄດ້ເປັນຜູ້ທຳບຳເພັນກຸສົນ ກໍ່ທາດກວມດູກຈຳນວນໜຶ່ງໄວ້ແຄມນ້ຳຕົງ (ໃກ້ກັບດິນສວນຂອງພໍ່ເຖົ້າສີວິໄລ ຈັນໂທ) ໃນປະຈຸບັນຍັງມີຮອງຮອຍປະກົດການໃຫ້ເຫັນຢູ່.

ມາເຖິງດຽວນີ້ ໄດ້ຢັ້ງຢືນໄວ້ວ່າ: ທີ່ມາຂອງບ້ານນາທົ່ວ ແມ່ນຈຳນວນຄົນຕົກຢູ່ບໍລິເວນນັ້ນຈົນທົ່ວ, ບ້ານນາແຍງ ແມ່ນບ່ອນນັ່ງຊົມນັ່ງແຍງໜໍ່ຄຳທັງເຊົ້າ ແລະ ແລງ, ບ້ານທ່າແມ່ນມີທ່ານ້ຳ ແລະ ເປັນບ່ອນນັດໝາຍ ເຕົ້າໂຮມລໍຖ້າກັນ, ບ້ານດອນ ແມ່ນເປັນດອນໜຶ່ງຂອງຈຸດເລີ່ມຕົ້ນຂອງການສ້າງຂັ້ນໄດ. ແຕ່ມື້ນັ້ນມາເຖິງມື້ນີ້ ກໍ່ບໍ່ທັນຮັບຂ່າວອັນແນ່ນອນວ່າ ແມ່ນໜໍ່ຄຳແທ້ ຫຼື ບໍ່ເພາະຢູ່ສູງຫຼາຍທາງຈະຂຶ້ນໄປຫາໜໍ່ຄຳ ກໍ່ບໍ່ມີ, ບໍ່ມີຜູ້ໃດຈະປີນຂຶ້ນໜ້າຜາ ໄປຫາໜໍ່ຄຳໄດ້ມີແຕ່ຄຳຊ່າລືກັນມາແຕ່ບູຮານນະການວ່າ: ຜາທໍ່ໜໍ່ຄຳ.

ຄຳວ່າ: ສາມໝື່ນ-ຕູບເຟືອງ ໃນເມື່ອກ່ອນ, ປ່ຽນມາເປັນ ສາມໝື່ນ-ເມືອງເຟືອງ ເຖິງທຸກວັນນີ້.

ຄຳຂວັນເມືອງເຟືອງ:

ຜາທໍ່ໜໍ່ຄາລືຊາ ທົ່ງນາແສນກວ້າງໃຫຍ່
ປ່າໄມ້ດົກໜາ ພູຜາອ້ອມບັງ
ສຽງດັງທົ່ວແຄວ້ນ ແດນເຊື້ອວິລະຊົນ.

## 10. ວັງຊ້າງ.



ພະພຸດທະຮູບວັງຊ້າງ ຕັ້ງຢູ່ບ້ານໂພນເງິນ ເມືອງໂພນໂຮງ ຫ່າງຈາກສຳນັກງານເມືອງໂພນໂຮງ ປະມານ 8 ກິໂລແມັດ, ມີອາຍຸເກົ່າແກ່ ຫຼາຍກວ່າ 1,000 ປີ ເປັນພະພຸດທະຮູບ ທີ່ຖືກສ້າງຂຶ້ນໃນປີ ຄສ 928, ປະດິດສະຖານຢູ່ໃນເຂດຖ້ຳວັງຊ້າງ, ລັກສະນະເດັ່ນ ຂອງພະພຸດທະຮູບນີ້ຄື: ເປັນພະພຸດທະຮູບ ທີ່ແກະສະລັກໃສ່ແຜ່ນຫີນຕໍ່ໜ້າຖ້ຳ, ລັກສະນະຂອງພະພຸດທະຮູບ ສັນນິຖານວ່າ ເປັນພະພຸດທະຮູບ ທີ່ສ້າງຂຶ້ນໃນຍຸກສະໄໝອານາຈັກທະວາລະວະດີ. ພາຍໃນໜ້າຜາຫີນທີ່ເອີ້ນວ່າ "ວັງຊ້າງ" ນອກນັ້ນຍັງມີພະພຸດທະຮູບອົງນ້ອຍໆ ອີກເປັນຈຳນວນຫຼວງຫຼາຍ, ຕາມຄຳຈາລຶກ ທີ່ຂຽນໄວ້ໃນແຜ່ນຫີນນັ້ນ ບອກວ່າພະພຸດທະຮູບອົງນີ້ ສ້າງຂຶ້ນ**ໃນສະຕະວັດທີ 11**.



## 11. ວັດວຽງຄຳບູຮານ.

ວັດວຽງຄຳບູຮານ ເປັນວັດທີ່ເກົ່າແກ່ ຂອງເມືອງວຽງຄຳ ກຳເນີດເກີດຂຶ້ນຕິດພັນກັບ ປະຫວັດສາດ ໃນສະໄໝເຈົ້າຟ້າງຸ່ມ ທ້ອນໂຮມ ແຜ່ນດິນລາວລ້ານຊ້າງ ວັດດັ່ງກ່າວ ຕັ້ງຢູ່ຫ່າງຈາກ ສຳນັກປົກຄອງ ເມືອງວຽງຄຳ ໄປທາງທິດໃຕ້ປະມານ 4 ກິໂລແມັດ ມີເນື້ອທີ່ 32.632 ມ$^2$, ລົດທຸກຊະນິດ ສາມາດໄປເຖິງໄດ້ ທັງລະດູແລ້ງ ແລະ ລະດູຝົນ. ສັນນິຖານວ່າ ວັດວຽງຄຳບູຮານກຳເນີດຂຶ້ນໃນປີ ພສ 1359 ເຊິ່ງແມ່ນເວລານີ້ເອງ ທີ່ເຈົ້າຟ້າງຸ່ມໄດ້ຊະນະສົງຄາມກັບພະຍາເພົາເຈົ້າເມືອງໆ ໄຜ່ໜາມ. ຫຼັງຈາກນັ້ນ ເພິ່ນໄດ້ໃຫ້ ພະມະຫາປາສະມັນຕະ ເຖວະເຈົ້າ ແລະ ພະມະຫາເທບລັງກາ ພ້ອມດ້ວຍພິຊຸສົງ 20 ອົງ, ພຣະພຸດທະຮູບປັນຈະໂລຫະອົງໜຶ່ງ ມີນາມວ່າ ພຣະບາງ ພ້ອມດ້ວຍຄຳພີພະໄຕປິດົກ ແລະ ຕົ້ນພະສີມະຫາໂພທິມາ ໃຫ້ປະຊາຊົນຊາວເມືອງໄຜ່ໜາມ ສັກກາລະບູຊາ ເປັນເວລານານພໍສົມຄວນ ຈຶ່ງເຄື່ອນຍ້າຍໄປເມືອງຊຽງທອງ. ສະນັ້ນ ຈຶ່ງສັນນິຖານວ່າ ວັດວຽງຄຳບູຮານ ອາດກຳເນີດເກີດຂຶ້ນໃນປີນັ້ນເອງ ປັດຈຸບັນ ວັດວຽງຄຳບູຮານ ໄດ້ເປັນບ່ອນນັບຖືສັກກະລະບູຊາ ຂອງຊາວພຸດທຸກທົ່ວສາລະທິດ ທີ່ມີຄວາມເຫລື້ອມໃສສັດທາ ແລະ ເປັນບ່ອນປະຕິບັດທຳຂອງພະສົງສຳມະເນນ ລວມທັງແມ່ຂາວນະທີ່ແຫ່ງນັ້ນ. ສ່ວນການບູລະນະປະຕິສັງຂອນວັດວຽງຄຳບູຮານຄືນໃຫມ່ນັ້ນ ຍັງຂາດງົບປະມານຈຳນວນຫລາຍ ບໍ່ວ່າຈະເປັນການສ້າງປະຕິສັງຂອນ ພະສິມມາ, ກຳແພງເກົ່າເມືອງວຽງຄຳບູຮານ, ປະຕູຂົງວັດ ແລະ ອື່ນໆ .....



## 12. ເມືອງວັງວຽງ.

ກຸ້ຍຫຼິນເມືອງລາວ ຄືຄຳນິຍາມອັນງົດງາມທີ່ບໍ່ເກີນກວ່າຄວາມເປັນຈິງຂອງເມືອງນ້ອຍໆ ທີ່ໂອບອ້ອມດ້ວຍພູຜາ ແລະ ສາຍນ້ຳແຫ່ງນີ້.

ວັງວຽງ ໜຶ່ງໃນເມືອງທ່ອງທ່ຽວທຳມະຊາດຍອດນິຍົມຂອງລາວ ຫ່າງຈາກນະຄອນຫຼວງວຽງຈັນ ໄປທາງທິດເໜືອປະມານ 160 ກມ ແລະ ໃຊ້ເວລາເດີນທາງປະມານ 3 ຊົ່ວໂມງ, ເຖິງແມ່ນວ່າວັງວຽງຈະເປັນພຽງເມືອງນ້ອຍໆ ຢູ່ກາງປ່າເຂົາລຳເນົາໄພ ແຕ່ໃນດ້ານການທ່ອງທ່ຽວ ເມືອງວັງວຽງຖືໄດ້ວ່າມີຊື່ສຽງໂດ່ງດັງ ແລະ ເປັນທີ່ຮູ້ຈັກບໍ່ນ້ອຍໄປກວ່າເມືອງອື່ນໃນລາວເລີຍ.ດ້ວຍພູມສັນຖານ ແລະ ບັນຍາກາດຂອງເມືອງວັງວຽງ ທີ່ໂອບອ້ອມໄປດ້ວຍພູຜາ ແລະ ສາຍນ້ຳ ເຮັດໃຫ້ວັງວຽງຖືກຍ້ອງຍໍໃຫ້ຄ້າຍຄືເມືອງກຸ້ຍຫຼິນຂອງປະເທດຈີນ ໂດຍສະເພາະໃນຕອນເຊົ້າ ທີ່ສາຍໝອກລອຍພາດຜ່ານຂຸນເຂົາ ແລະ ແມ່ນ້ຳຊອງອັນໄສເຢັນ ຖ້າທ່ານຜູ້ອ່ານໄດ້ພັກແຄມນ້ຳ ຕ້ອງຢ່າພາດໃນການຕື່ນແຕ່ເຊົ້າ ເພື່ອຊົມຈັກເທື່ອໜຶ່ງ ເຊິ່ງເປັນເລື່ອງແປກແຕ່ມີຈິງ ທີ່ເມືອງວັງວຽງຍັງມີຄູ່ແຝດທີ່ມີພູມສັນຖານ ແລະ ບັນຍາກາດຄ້າຍຄືເມືອງກຸ້ຍຫຼິນ.

ກິດຈະກຳຂີ່ເຮືອຊົມທິວທັດນ້ຳຊອງເມືອງວັງວຽງ ໄດ້ກາຍເປັນສະຖານທີ່ຍອດນິຍົມ ຂອງບັນດານັກທ່ອງທ່ຽວແບັກແພັກເກີ້ຢ່າງເຕັມໂຕ ດ້ວຍກິດຈະກຳອັນຫຼາກຫຼາຍຂອງເມືອງວັງວຽງ ທີ່ສ່ວນຫຼາຍແມ່ນຮອງຮັບນັກທ່ອງທ່ຽວແນວຜະຈົນໄພ ບໍ່ວ່າຈະເປັນການພາຍຄາຢັກ, ຂີ່ກິ່ງເບັງ, ປີນໄຕ່ທ່ຽວຖໍ້າງາມ ເປັນຕົ້ນ ແຕ່ສຳລັບຄົນມັກນອນເອນກາຍ ອີ່ມເອີບໄປດ້ວຍບັນຍາກາດ ແລະ ທຳມະຊາດ ເມືອງວັງວຽງ ເປັນດັ່ງສະຫວັນເທິງດິນຂອງທ່ານ. ລ່ອງນ້ຳຊອງດ້ວຍເຮືອຄາຢັກ ຈຸດເດັ່ນ ແມ່ນ້ຳຊອງ ອາດຈະບໍ່ມີຄວາມຍິ່ງໃຫຍ່ ແລະ ເປັນທີ່ຮູ້ຈັກດີຂອງຜູ້ຄົນທົ່ວໄປ ຖ້າທຽບກັບແມ່ນ້ຳຂອງ ແຕ່ສຳລັບນັກພະຈົນໄພ ທີ່ມັກຮັກໃນການລ່ອງແກ້ງ ສາຍນ້ຳຊອງແຫ່ງນີ້ອາດຈະເປັນສາຍນ້ຳແຫ່ງສະເໜ່ ແລະ ເປັນທີ່ນິຍົມຫຼາຍກວ່າສາຍນ້ຳອື່ນໆ ໃນ





ປະເທດລາວ ເພາະສາຍນ້ຳຊອງເປັນພຽງສາຍນ້ຳພຽງແຫ່ງດຽວໃນປະເທດລາວ ທີ່ມີບໍລິການລ່ອງແກ້ງຢ່າງຄົບວົງຈອນ ນັກເດີນທາງແບບແບັກແພັກເກີ້ຈຳນວນບໍ່ໜ້ອຍ ເລືອກວັງວຽງ ເປັນເມືອງທ່ອງທ່ຽວອັນດັບໜຶ່ງ ຫຼວງພະບາງ ເພາະເມືອງນ້ອຍໆ ກາງຂຸນເຂົາແຫ່ງນີ້ ນັກທ່ອງທ່ຽວຈະຮັບທັງຄວາມສະໜຸກສະໜານ ຄວາມຕື່ນເຕັ້ນປະທັບໃຈ ແລະ ຊື່ນຊອບທຳມະຊາດອັນສວຍງາມຂອງກຸ້ຍຫຼີນແຫ່ງເມືອງລາວ ທີ່ມີໃຫ້ໄດ້ສຳຜັດຕະຫຼອດທັງປີ.

ກິດຈະກຳການລ່ອງຄາຍັກເທິງແມ່ນ້ຳຊອງ ທ່ານສາມາດຕິດຕໍ່ ຂໍໃຊ້ບໍລິການໄດ້ຈາກເຄົາເຕີທົວພາຍໃນຕົວເມືອງວັງວຽງ ທີ່ມີໃຫ້ເລືອກຫຼວງຫຼາຍ ຈາກນັ້ນ ເລືອກຊ່ວງເວລາທີ່ຈະໄປເລີ່ມຕົ້ນການລ່ອງ ໂດຍກິດຈະກຳລ່ອງຄາຍັກເທິງແມ່ນ້ຳຊອງ ຈະໃຊ້ເວລາປະມານ 4–6 ຊົ່ວໂມງ ເຊິ່ງຖ້າໄປລ່ອງໃນຊ່ວງລະດູແລ້ງນີ້ ຈະໃຊ້ເວລາອ່າວດົນກວ່າ ແຕ່ສຳລັບລະດູຝົນການລ່ອງຄາຍັກ ແມ່ນຈະມີທັງຄວາມໄວ ແລະ ຄວາມແຮງ ເຊິ່ງຈະມ່ວນທີ່ສຸດເລີຍ. ເມື່ອທ່ານເລືອກຊ່ວງເວລາໄດ້ແລ້ວ ຜູ້ນຳທ່ຽວ ຈະພາໄປຫາຈຸດເລີ່ມຕົ້ນການລ່ອງ ເຊິ່ງສ່ວນຫຼາຍຈະເລີ່ມທີ່ບໍລິເວນຜາຕັ້ງ ນັບເປັນສັນຍະລັກຂອງກິດຈະກຳລ່ອງຄາຍັກກໍວ່າໄດ້ ແຕ່ຖ້າທ່ານໄປລ່ອງໃນລະດູແລ້ງ ຄືແນວນີ້ ຜູ້ນຳທ່ຽວ ຈະປ່ຽນຈຸເລີ່ມຕົ້ນ ໄປທີ່ບໍລິເວນບ້ານວຽງສະໄໝແທນ ກ່ອນຈະລົງຄາຍັກຜູ້ນຳທ່ຽວ ຈະແນະນຳ ແລະ ສອນວິທີການລ່ອງໃຫ້ຢ່າງຖືກວິທີ ພ້ອມທັງສອນການຊ່ວຍເຫຼືອຕົນເອງ ໃນເວລາເຮືອຂວ້ຳ ແລະ ບອກຈຸດແວ່ພັກຕ່າງໆ ໃນລະຫວ່າງກາງທາງ ການລ່ອງຄາຍັກແມ່ນ້ຳຊອງມີໄລຍະທາງປະມານ 20 ກິໂລແມັດ ໃນຊ່ວງທຳອິດ ເປັນເສັ້ນທາງຊົມທຳມະຊາດສອງຝັ່ງແມ່ນ້ຳ ຍັງບໍ່ມີແກ້ງໃຫຍ່ໆ ໃຫ້ຄວາມຮູ້ສຶກຕື່ນເຕັ້ນປານໃດ ຈາກນັ້ນຈະເຖິງບ່ອນພັກບໍລິເວນປາກຖ້ຳຊ້າງ ເຊິ່ງນອກຈາກຈະໄດ້ແວ່ພັກຮັບປະທານອາຫານແລ້ວ ຈະໄດ້ທ່ຽວຊົມບັນດາຖ້ຳໃນບໍລິເວນນີ້ອີກ ບໍ່ວ່າຈະເປັນຖ້ຳຊ້າງ ຖ້ຳຫຼູບ ຖ້ຳຫອຍ ແລະ ຖ້ຳນ້ຳ ຈາກນັ້ນລ່ອງຕໍ່ໄປ ຍັງບໍລິເວນຖ້ຳນອນ ນັບເປັນຈຸດແວ່ພັກອີກແຫ່ງໜຶ່ງ ທີ່ຄົນສ່ວນຫຼາຍ ເພາະເປັນຈຸດຫ້ອຍໂຫນໂຕນນ້ຳເຮຮາ ເຊິ່ງຖ້າລີລາຂອງໃຜງາມ





ຈະໄດ້ຮັບສຽງຕົບມື ແລະ ຮ້ອງໂຮເປັນລາງວັນ ນອກຈາກນີ້ ຍັງມີຮ້ານຂາຍເຄື່ອງດື່ມ ໃຫ້ບໍລິການແບບເປັນຊຸ້ມອີກຫຼາຍແຫ່ງ. ຈາກຖໍ້ານອນປະມານ 5 ກິໂລແມັດ ເປັນເສັ້ນທາງຊ່ວງສຸດທ້າຍທີ່ທ່ານຈະໄດ້ສຳຜັດກັບແກ້ງເລັກແກ້ງນ້ອຍ ແລະ ບັນຍາກາດອັນງົດງາມຂອງສາຍນໍ້າຊອງ ແລະເມືອງວັງວຽງ ເຊິ່ງເມື່ອເຖິງບໍລິເວນຕົວເມືອງວັງວຽງ ຜູ້ນຳທ່ຽວ ຈະພາທ່ານເຂົ້າຝັ່ງ ບໍລິເວນຖາວອນສຸກຣີສອດ ເປັນອັນສິ້ນສຸດການລ່ອງກົງເບັງປະຈົນໄພເທິງສາຍນໍ້າຊອງ ສາຍນໍ້າແຫ່ງຕຳນານທີ່ພ້ອມຈະສ້າງເລື່ອງລາວແຫ່ງຄວາມສຸກ ໃຫ້ແກ່ຜູ້ມາຢ້ຽມຢາມເມືອງວັງວຽງແຫ່ງນີ້.

ຈຸດເດັ່ນຂອງແມ່ນໍ້າຊອງ ບໍ່ໄດ້ມີຄວາມສະໜຸກສະໜານໃຫ້ພຽງລ່ອງເຮືອຄາຍັກເທົ່ານັ້ນ, ເທິງສາຍນໍ້າແຫ່ງນີ້ ຍັງມີກິດຈະກຳສະບາຍໆ ເຊັ່ນ: ລ່ອງກົງເບັງໃຫ້ທ່ານໄດ້ນອນສະບາຍ ຢູ່ເທິງກົງເບັງໃຫຍ່ໆ ແບບຫຼົງສູ້ນໍ້າ ໜ້າສູ່ທິວທັດ ໂດຍທີ່ທ່ານສາມາດຕິດຕໍ່ສອບຖາມໄດ້ທີ່ເຄົາເຕີທົວທົ່ວໄປພາຍໃນຕົວເມືອງວັງວຽງ. ເຖິງແມ່ນກິດຈະກຳລ່ອງກົງເບັງໃນລຳນໍ້າຊອງຈະສ້າງລາຍໄດ້ ໃຫ້ແກ່ເມືອງວັງວຽງບໍ່ໜ້ອຍໃນແຕ່ລະມື້ ແຕ່ທ່ານອາດຈະບໍ່ຮູ້ມາກ່ອນວ່າກິດຈະກຳ ທີ່ຫຼາຍຄົນມັກນີ້ມີຕົ້ນກຳເນີດມາຈາກເດັກນ້ອຍ ທີ່ມັກຈະພາກັນເອົາກົງເບັງຢູ່ເຮືອນໃຜເຮືອນລາວອອກມາລ່ອງ ເມື່ອນັກທ່ອງທ່ຽວຕ່າງປະເທດເຫັນແລ້ວສົນໃຈ ແລະ ທົດລອງລ່ອງຫຼິ້ນນຳເດັກນ້ອຍ ແລ້ວມີການບອກຕໍ່ກັນໄປ ຈົນກາຍມາເປັນກິດຈະກຳທ່ອງທ່ຽວຂອງເມືອງວັງວຽງໄປໃນໂຕ. ຈາກຕົວເມືອງຜູ້ນຳທ່ຽວ ຈະພາທ່ານພ້ອມກັບແບກກົງເບັງຂຶ້ນລົດເພື່ອໄປສົ່ງທີ່ຈຸດເລີ່ມຕົ້ນຂອງການລ່ອງ ເຊິ່ງໄກຈາກຕົວເມືອງວັງວັງວຽງ 4 ກິໂລແມັດ ສ່ວນຫຼາຍນິຍົມລ່ອງເປັນຄູ່ ຫຼື ໝູ່ຄະນະ ເພາະຈະສ້າງສຽງຫົວ ແລະ ມ່ວນຊື່ນຫຼາຍກວ່າລ່ອງຄົນດຽວ, ຈຸດແວ່ເຊົາແມ່ນ ບໍລິເວນຖໍ້ານອນຈຸດໂດດນໍ້າເຊັ່ນດຽວກັນກັບກິດຈະກຳລ່ອງເຮືອຄາຍັກ. ຈາກຈຸດແວ່ພັກຖໍ້ານອນລ່ອງລົງຕາມກະແສນໍ້າລົງມາຍັງຕົວເມືອງວັງວຽງ ທ່ານຈະໄດ້ຊົມບັນຍາກາດອັນສວຍງາມເປັນໄລຍະສຸດທ້າຍ ຈາກນັ້ນປາຍທາງທ່ານຈະຕ້ອງຂຶ້ນທີ່ບໍລິເວນຖາວອນສຸກຣີສອດ ຈາກນັ້ນຈະມີລົດມາຮັບກົງເບັງ ແຕ່ບາງ



ແຫ່ງທ່ານຕ້ອງໄດ້ເອົາກົງເບັງໄປສິ່ງເຂົາທີ່ເຄົາເຕີທົວ. ເມືອງວັງວຽງນອກຈາກຈະເປັນເມືອງທີ່ສວຍງາມທີ່ຖືກໂອບອ້ອມດ້ວຍໜ່ອຍພູ ແລະ ຜາຫີນອັນສະຫຼັບຊ້ອນ ພ້ອມທັງສາຍນໍ້າຊອງທີ່ແສນງາມແລ້ວ ຍັງມີຖໍ້າທີ່ໜ້າທ່ອງທ່ຽວຈໍານວນຫຼວງຫຼາຍ ເຊັ່ນ ຖໍ້າຈັງ, ຖໍ້າຊ້າງ, ຖໍ້າຫອຍ, ຖໍ້າພູຄໍາ, ຖໍ້ານໍ້າ, ຖໍ້ານອນ ແລະ ຜາຕັ້ງ. ຖໍ້າຈັງຕັ້ງຢູ່ ໄກຈາກສະໜາມບິນເກົ່າປະມານ 500 ແມັດ ເພິ່ນຈະເປີດໃຫ້ເຂົ້າທ່ຽວຊົມ ແຕ່ເວລາ 8:00 17:00ໂມງ. ເປັນຖໍ້າແຫ່ງດຽວທີ່ມີໄຟຟ້າຕິດຕັ້ງຢູ່ພາຍໃນຖໍ້າ, ໃນອະດີດປະຊະຊາຊົນເຊື່ອວ່າຖໍ້າແຫ່ງນີ້ເປັນຖໍ້າສັກສິດ ຖ້າໃຜເຮັດສິ່ງທີ່ບໍ່ດີບໍ່ງາມໃນຖໍ້າຈະເກີດອາການຈັງ ເຊິ່ງອາການຈັງໄດ້ກາຍມາເປັນຊື່ວ່າ “ຖໍ້າຈັງ”.

ຈາກທາງເຂົ້າຖໍ້າຈັງຣີສອດທ່ານຈະຕ້ອງໄດ້ເສຍຄ່າສະຖານທີ່ 1,000 ກີບຕໍ່ຄົນ ຈາກນັ້ນບໍລິເວນສະຖານທີ່ຈອດລົດ ທ່ານຈະເຫັນຂົວສີແສດສົດໃສເສັ້ນທາງສູ່ຖໍ້າຈັງ ເຊິ່ງສາມາດແວ່ຊົມວິວແມ່ນໍ້າຊອງໄດ້ດີ ແລະ ຈາກຈຸດນີ້ ທ່ານຈະເບິ່ງເຫັນປາກຖໍ້າຈັງ ຢູ່ບໍລິເວນກາງປ່າທາງໜ້າ ຖ້າທ່ານຊິຂຶ້ນໄປທ່ຽວຊົມ ຕ້ອງຊື້ປີ້ປະມານ 5,000 ກີບຕໍ່ຄົນ ຈາກນັ້ນຕ້ອງອອກແຮງຂຶ້ນຂັ້ນໄດ 147 ຂັ້ນ ເຊິ່ງທາງຂ້າງເທິງນັ້ນ ມີວິວທີ່ງາມໆ ຂອງຂົວ ແລະ ເມືອງວັງວຽງ ໃຫ້ໄດ້ເບິ່ງເປັນລາງວັນສໍາລັບຄົນອົດທົນຂຶ້ນຂັ້ນໄດ ນັບວ່າເປັນຈຸດຊົມວິວທິວທັດທີ່ສວຍງາມທີ່ສຸດຂອງເມືອງວັງວຽງອີກດ້ວຍ. ເມື່ອເຂົ້າໄປພາຍໃນຖໍ້າຈັງທ່ານຈະໄດ້ສໍາຜັດກັບອາກາດເຢັນສະບາຍ ທ່າມກາງຫີນຍ້ອຍຫີນງອກອັນງົດງາມທີ່ສຸດ ເມື່ອມີແສງໄຟຟ້າສາດສ່ອງ ເກີດມີສີສັນເປັ່ງປະກາຍ ເຮັດໃຫ້ພາຍໃນເບິ່ງລຶກລັບ ຄືດັ່ງເມືອງໃນເທບນິຍາຍ ທີ່ມີສະເໜ່ຊວນຫຼົງໄຫຼ ໂດຍທ່ານສາມາດຍ່າງເລາະຊົມໄດ້ຕາມທາງຊີມັງ ທີ່ເຮັດໄວ້ຢ່າງດີ ແລະ ຖ້າຍ່າງໄປທາງຊ້າຍສຸດເສັ້ນທາງ ຈະພົບກັບຈຸດຊົມວິວທີ່ສວຍງາມບໍ່ນ້ອຍໜ້າບໍລິເວນປາກທາງເຂົ້າຖໍ້າ.



# ແຂວງໄຊສົມບູນ

## 1. ພູເບຍ.



ພູເບ້ຍ ຕັ້ງຢູ່ບ້ານພູຫົວຊ້າງ ຫ່າງຈາກເທດສະບານເມືອງອະນຸວົງ ໄປທາງທິດເໜືອ ປະມານ 6 ກິໂລແມັດ, ຈາກຕີນພູເຖິງຈອມພູ ມີໄລຍະທາງປະມານ 56 ກິໂລແມັດ, ເຊິ່ງພູເບ້ຍ ເປັນພູທີ່ສູງທີ່ສູດໃນປະເທດລາວ ເຊິ່ງມີຄວາມສູງ 2,820 ແມັດ, ເປັນພູທີ່ມີຄວາມອຸດົມສົມບູນ ທາງດ້ານພືດພັນ, ມີພູມອາກາດທີ່ໜາວເຢັນ, ມີສັດສາວາສິ່ງນ້ອຍ-ໃຫຍ່ຫລາຍຊະນິດ ທີ່ອາໄສຢູ່ໃນພູແຫ່ງນີ້ ເປັນຕົ້ນ: ລິງ, ຄ່າງ, ທະນີ, ກວາງ, ຟານ, ເຍືອງ, ເສືອ, ໝີ, ເໝືອຍ, ໝູ່ປ່ານົກຍູງ ແລະ ສັດປະເພດອື່ນໆອີກ...ນອກນັ້ນ ຍັງມີໄມ້ຫລາຍຊະນິດເຊັ່ນ: ໄມ້ດູ່, ໄມ້ແຄນ, ໄມ້ຍຸງ, ໄມ້ຍາງ, ໄມ້ໂລງເລງ. ພູເບ້ຍ ເປັນພູທີ່ຕັ້ງສູງສະຫງ່າ ເປັນດັ່ງມິ່ງຂວັນຂອງຊາວເມືອງອະນຸວົງ ແຂວງໄຊສົມບູນ, ເປັນພູທີ່ມີຄວາມໂດດເດັ່ນ ແລະ ມີຊື່ສຽງຢູ່ໃນ ສປປ ລາວ, ມີປະຫວັດຄວາມເປັນມາອັນຍາວນານ. ໄລຍະທີ່ເປັນເຂດພິເສດໄຊສົມບູນ ການນຳເຂດໄດ້ມີການສ້າງເສັ້ນທາງຂຶ້ນໄປຫາພູເບ້ຍ ຈາກຕີນພູເຖິງຈອມພູ ເຊິ່ງມີໄລຍະທາງ 56 ກິໂລແມັດ ທີ່ສາມາດເດີນທາງໄປດ້ວຍຍານພາຫະນະທຸກປະເພດ ແຕ່ໂຄງການດັ່ງກ່າວ ສາມາດສ້າງໄດ້ພຽງ 16 ກິໂລແມັດ ກໍໄດ້ໂຈະໄວ້. ມາເຖິງປີ 2006-2013 ເຂດພິເສດໄຊສົມບູນໄດ້ຖືກຍຸບ ແລະ ໄດ້ໂຮມເຂົ້າກັບແຂວງວຽງຈັນ ໃນຊ່ວງນັ້ນພູເບ້ຍກໍໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ຈົນມາຮອດວັນທີ 13 ເດືອນທັນວາ ປີ 2013 ສະພາແຫ່ງຊາດ ໄດ້ມີມະຕິຕົກລົງ ວ່າດ້ວຍການຮັບຮອງເອົາການສ້າງຕັ້ງແຂວງໄຊສົມບູນ ເປັນແຂວງທີ່ 18 ຂອງ ສປປ ລາວ, ອຳນາດປົກຄອງແຂວງ ກໍໄດ້ມີຄຳສັ່ງຫ້າມ ແລະ ຍັງບໍ່ທັນອະນຸຍາດໃຫ້ນັກທ່ອງທ່ຽວເຂົ້າຢ້ຽມຊົມ ເນື່ອງຈາກສະຖານທີ່ດັ່ງກ່າວ ເປັນເຂດທີ່ຕັ້ງຍຸດທະສາດທາງການທະຫານໃນສະໄໝກ່ອນ ແລະ ສິ່ງສຳຄັນແມ່ນ ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ບໍ່ທັນສາມາດຮອງຮັບນັກທ່ອງທ່ຽວໄດ້.

## 2. ສັນພູໝອກ.



ສັນພູໝອກ ຕັ້ງຢູ່ບ້ານລ້ອງແຈ້ງ ເມືອງລ້ອງແຈ້ງ ແຂວງໄຊສົມບູນ ຮ່າງຈາກເທດສະບານເມືອງໄປທາງທິດເໜືອ ປະມານ 7 ກິໂລແມັດ, ເປັນພູຫົວໂລ້ນທີ່ມີລັກສະນະຍາວຢຽດໂດດເດັ່ນ ທີ່ແຕກຕ່າງຈາກພູໜ່ອຍອື່ນໆ ເຊິ່ງເປັນເອກະລັກສະເພາະຂອງຕົນ, ເປັນມົນສະເໜ່ທີ່ສ້າງຄວາມສົນໃຈ ໃຫ້ແກ່ນັກທ່ອງທ່ຽວເຂົ້າມາທ່ຽວຊົມເມືອງລ້ອງແຈ້ງ. ສັນພູໝອກມີຄວາມສູງປະມານ 1.300 ແມັດ ແລະ ຍາວປະມານ 12 ກິ ໂລແມັດ, ໃນສະໄໝກ່ອນ ຜູ່ເຖົ້າຜູ່ແກ່ເພິ່ນເວົ້າວ່າ ໃນແຕ່ລະວັນຈະມີໝອກເຝື້ອ ປົກຄຸ້ມຢູ່ບໍລິເວນເທິງພູຢູ່ຕະຫລອດເວລາ ຄ້າຍຄືກັບທະເລໝອກຫລື ສວງສະຫວັນວິມານຊັ້ນຟ້າ ຊຶ່ງກົງກັນຂ້າມກັບພູໜ່ອຍອື່ນໆຊໍາພັດເປີດແປນ. ສະນັ້ນ, ຍ້ອນມີປະກົດການດັ່ງກ່າວນີ້ ຈຶ່ງພາກັນເອີ້ນວ່າ“ສັນພູໝອກ” ຈົນມາເຖິງທຸກວັນນີ້. ໃນປະຈຸບັນສັນພູໝອກ ກາຍເປັນແຫລ່ງທ່ອງທ່ຽວທີ່ມີຊື່ສຽງ ຂອງເມືອງລ້ອງແຈ້ງ ເໝາະແກ່ການທ່ຽວຊົມທໍາມະຊາດ ແລະ ພັກຜ່ອນຕາກອາກາດທີ່ເຢັນສະບາຍສົດຊື່ນ ເມື່ອຂຶ້ນໄປຢູ່ຈອມພູໜ່ອຍນີ້ ຈະສາມາດແນມເຫັນທິວທັດຄວາມສວຍງາມຂອງເມືອງລ້ອງແຈ້ງ.

ໃນປີ ຄ.ສ 1960 ຫາ 1973 ສັນພູໝອກ ໄດ້ເປັນຖານທັບຂອງທະຫານ (ເອສ໌ຊີຢູ SCU ຫລື ວ່າກອງທັບພາກສອງຂອງອາເມຣິກາ ແລະ ລູກແຫລ່ງຕີມືຂອງພວກມັນ) ໂດຍມີ 2 ກອງພົນໃຫຍ່ປະຈໍາຢູ່ສັນພູແຫ່ງນີ້, ໃນນັ້ນມີກອງພົນພິເສດຂອງວາງປາວ ແລະ ກອງພົນພິເສດຂອງ ເຈົ້າສຸວັນນະພູມມາໃນການເຮັດສົງຄາມຢູ່ລາວໃນໄລຍະນັ້ນ. ມາຮອດປີ 1968 ຈຶ່ງໄດ້ສ້າງຊຸມມໍລະກົດ ຫລື ຕຣັງເຊ ເຊິ່ງຄວາມກ້ວາງຂອງຊຸມແມ່ນ ລົດອາແອ່ມ ສາມາດແລ່ນເຂົ້າໄປໄດ້ຢ່າງສະດວກສະບາຍ, ມີຄວາມຍາວປະມານ 1000 ກວ່າແມັດ, ສ່ວນຫລັງຄາ ແມ່ນໃຊ້ກາບປົ່ມແລ້ວເອົາດິນປົກຖົມໄວ້ ແລະ ຢູ່ຕາມສັນພູໝອກແຫ່ງນີ້ ແມ່ນເຕັມໄປດ້ວຍຂຸມຄອງຂຸມຫລົ້ໄພ ຢັ່ງຢາຍກັນຢູ່ເປັນຖັນແຖວ ແລະ ຢູ່ອ້ອມຮອບພູ ແມ່ນໃຊ້ເຫລັກໜາມໝາກຈັບ ທີ່ມີຄວາມແໜ້ນໜາ ເຊິ່ງບໍ່ມີຜູ້ໃດສາມາດເຂົ້າໄປຕີແຕກໄດ້. ເຖິງວ່າຈະມີການເຊັນສັນຍາຢຸດເຊົາ ໃນປີ1973 ກໍຕາມ ແຕ່ກອງທັບພາກ 2 ຍັງລະເມີດ ແລະສືບຕໍ່ໃນການຕໍ່ສູ້ກັບຝ່າຍແນວລາວຮັກຊາດຢ່າງດຸເດືອດ, ພາຍຫລັງປະເທດຊາດໄດ້ຮັບການສະຖາປານາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນກອງທັບດັ່ງກ່າວຈຶ່ງແຕກສະຫລາຍ,ຈໍານວນໜຶ່ງ ກໍ່ຖືກຈັບໄປກັກຂັງ ແລະ ຖືກສໍາມະນາຢູ່ເມືອງວຽງໄຊ ແຂວງຫົວພັນ ແລະ ອີກຈໍານວນໜຶ່ງ ກໍໂຕນໜີໄປຢູ່ປະເທດທີສາມ.

# 3. ຜາພະເຈົ້າ.



ຜາພະເຈົ້າ ຕັ້ງຢູ່ບ້ານພູຫົວຊ້າງ ເມືອງອະນຸວົງ ຫ່າງຈາກເທດສະບານເມືອງ ໄປທາງທິດເໜືອປະມານ 500 ແມັດ (ໄປທາງພູເບ້ຍ ເຈີສີແຍກ ແລ້ວລ້ຽວຂວາເຂົ້າໄປປະມານ 50 ແມັດ), ເປັນຜາຫີນ ທີ່ເກີດຈາກທຳມະຊາດທີ່ສວຍງາມຢ່າງສະຫລັບຊັບຊ້ອນ, ລັກສະນະຂອງຜາ ແມ່ນເປັນຜາຫີນປູນທີ່ຕິດຈອດເກາະກ່າຍກັນ, ຕີນຜາກວ້າງ, ມີຖ້ຳຂະໜາດໜ້ອຍລອດພື້ນ ແລະ ຈອມຜາເຈັ້ຍສູງຊັນຄ້າຍຄືກັບທາດ, ເຊິ່ງມີຄວາມສູງປະມານ 300 ແມັດ, ມີລວງຮອບປະມານ 400 ແມັດ ແລະ ນອນຢູ່ໃນເນື້ອທີ່ 4 ເຮັກຕາ. ຜາພະເຈົ້າໃນສະໄໝກ່ອນ ແມ່ນເປັນອີກສະ ຖານທີ່ໜຶ່ງ ທີ່ເຈົ້າອະນຸວົງໄດ້ໃຊ້ເປັນກຳບັງລີ້ຊ້ອນ ຫລື ບ່ອນລີບໄພ ໃນການເຮັດເສິກກັບສະຫຍາມໃນສະໄໝນັ້ນ. ອີກຢ່າງໜຶ່ງ ຄົນສະໄຫມກ່ອນມີຄວາມເຊື່ອກັນ ສະຖານທີ່ຜາພະເຈົ້າແຫ່ງນີ້ ເປັນສະຖານທີ່ສັກສິກ ແລະເປັນສະຖານທີ່ສັກກະລະບູຊາທາງພຸດທະສາສະໜາ, ເປັນສະຖານທີ່ບວງສວງຜີຟ້າ, ຜີແຖນ, ຜີປ່າ ແລະ ຜີດົງ ຂອງປະຊາຊົນບັນດາເຜົ່າໃນຂົງເຂດດັ່ງກ່າວ. ນອກນັ້ນ, ປະຊາຊົນຍັງເຊື່ອຖືກັນວ່າ ຖ້າຜູ້ໃດຫາກມາລີບລີ້ຢູ່ຜາແຫ່ງນີ້ ຈະຖືກຜີຟ້າ, ຜີແຖນປົດບັງ ແລະ ປົກປ້ອງຈົນບໍ່ມີຜູ້ໃດຊອກເຫັນ. ຍ້ອນຄວາມເຊື່ອຖືດັ່ງກ່າວ ບວກກັບຄວາມສັກສິດຂອງຜາພະເຈົ້າ ເຖົ້າແກ່ອະວຸໂສ ແລະ ປະຊາຊົນ ບ້ານດັ່ງກ່າວ ຈຶ່ງໃສ່ຊື່ຜາແຫ່ງນີ້ວ່າ: "ຜາພະເຈົ້າ" ຈົນເຖິງທຸກວັນນີ້.

ຜາພະເຈົ້າ ເປັນແຫລ່ງທ່ອງທ່ຽວໜຶ່ງທີ່ມີຊື່ສຽງຢູ່ໃນເມືອງອະນຸວົງ ແລະ ເປັນທີ່ໜ້າສົນໃຈຂອງນັກທ່ອງທ່ຽວທັງພາຍໃນ ແລະຕ່າງປະເທດ ທີ່ມີຄວາມສົນໃຈໃນການທ້າທາຍ ແລະ ຜະຈົນໄພ, ຖື



ໄດ້ວ່າແຂກໄປໄຫມາ ຖ້າບໍ່ໄດ້ໄປປີນຜາພະເຈົ້າ ເບິ່ງທັດສະນີຍະພາບຄວາມສວຍງາມຂອງຕົວເມືອງອະນຸວົງ ກໍຖືໄດ້ວ່າ ສໍາກັບບໍ່ໄດ້ມາຢ້ຽມຢາມແຂວງໄຊສົມບູນ. ໃນເມື່ອກ່ອນຊ່ວງທີ່ມີເທດສະການບຸນກິນຈຽງ ຂອງຊົນເຜົ່າມົ້ງ ແລະ ບຸນເກຣີ ຂອງຊົນເຜົ່າກຶມມຸ ມີນັກທ່ອງທ່ຽວເຂົ້າມາທ່ຽວຊົມຜາພະເຈົ້າເປັນຈໍານວນຫລວງຫລາຍ, ດັ່ງນັ້ນ, ທ່ານ ເນັ່ງເຢລໍ ໝາວເຮີ, ພະນັກງານບໍານານ ຈຶ່ງໄດ້ເຫັນເຖິງຄວາມສໍາຄັນຂອງວຽກງານການທ່ອງທ່ຽວ ແລະ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວ ຈຶ່ງໄດ້ເຂົ້າມາພັດທະນາຜາພະເຈົ້າ ໃຫ້ກາຍເປັນແຫລ່ງທ່ອງທ່ຽວ ເພື່ອໃຫ້ສາມາດຮອງຮັບ ແລະ ອໍານວຍຄວາມສະດວກ ໃຫ້ແກ່ນັກທ່ອງທ່ຽວ ທີ່ເຂົ້າມາຢ້ຽມຊົມຜາພະເຈົ້າ ໂດຍການສ້າງເສັ້ນທາງ, ສ້າງຂັ້ນໄດຂຶ້ນຜາ ແລະ ສ້າງສະຖານທີ່ນັ່ງພັກຜ່ອນຢູ່ເທິງຜາພະເຈົ້າ ແລະ ເປີດບໍລິການແກ່ນັກທ່ອງທ່ຽວເລີ່ມແຕ່ປີ 1996 ເປັນຕົ້ນມາຈົນເຖິງປະຈຸບັນ.



## 4. ອ່າງນ້ຳງື່ມ 2.



ອ່າງນ້ຳງື່ມ 2 ຕັ້ງຢູ່ບ້ານນາຕູ້ເກົ່າ ຫ່າງຈາກເທດສະບານເມືອງອະນຸວົງ ໄປທາງທິດຕາເວັນຕົກ ປະມານ 36 ກິໂລ ແມັດ, ເປັນອ່າງເກັບນ້ຳສຳລັບຜະລິດພະລັງງານໄຟຟ້ານ້ຳຕົກ ທີ່ມີບົດບາດສຳຄັນທີ່ສຸດໃນການກໍ່ສ້າງ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຂາຍໃຫ້ແກ່ຕ່າງປະເທດ, ເຮັດໃຫ້ເສດຖະກິດ-ສັງຄົມ ຂອງລາວຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມແນວທາງນະໂຍບາຍຂອງພັກ-ລັດ ເພື່ອພັດທະນາປະເທດລາວໃຫ້ກາຍເປັນແບດຕາລີຂອງອາຊຽນ. ອ່າງນ້ຳງື່ມ 2 ເປັນອ່າງເກັບນ້ຳທີ່ກວ້າງໃຫຍ່ໄພສານ ແນມເບິ່ງສຸດສາຍຕາ ເຊິ່ງຄົນລາວເຮົາມັກຂະໜານນາມວ່າ “ທະເລລາວ”, ນອກຈາກຈະເປັນອ່າງເກັບນ້ຳສຳລັບຜະລິດພະລັງງານໄຟຟ້າ ແລະ ຮັບໃຊ້ວຽກງານກະສິກຳແລ້ວ, ອ່າງນ້ຳງື່ມ 2 ຍັງເປັນສະຖານທີ່ທ່ອງທ່ຽວ ທີ່ສຳຄັນຂອງແຂວງໄຊສົມບູນ ທີ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ໃຫ້ຄວາມສົນໃຈເຂົ້າໄປທ່ຽວຊົມໃນຍາມວັນພັກຜ່ອນວັນເສົາ ແລະ ອາທິດ. ເປັນສະຖານທີ່ພັກຜ່ອນຢ່ອນອາລົມຊົມບັນຍາກາດທີ່ເຢັນສະບາຍ, ເພີດເພີນກັບການຂີ່ເຮືອທ່ຽວຊົມຄວາມອຸດົມສົມບູນຂອງທຳມະຊາດ, ຊົມເກາະດອນຕ່າງໆ, ເຮັດກິດຈະກຳໃນການສິດເບັດ ແລະ ກິນເຂົ້າປ່າສາມັກຄີຢ່າງມ່ວນຊື່ນ.

## 5. ອ່າງນ້ຳງື່ມ 1.



ອ່າງນ້ຳງື່ມ 1 ເປັນອີກສະຖານທີ່ທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ໃຫ້ຄວາມສົນໃຈ ເຂົ້າໄປທ່ຽວຊົມເປັນຈຳນວນຫລວງຫາຍ ໃນວັນພັກຜ່ອນວັນເສົາ ແລະ ອາທິດ ເພື່ອມາພັກຜ່ອນຢ່ອນອາລົມ, ເພີດເພີດກັບກິດຈະກຳຂີ່ເຮືອທ່ຽວຊົມຄວາມສວຍງາມຂອງທຳມະຊາດ, ເກາະດອນຕ່າງໆ, ເປັນສະຖານທີ່ໜຶ່ງ ທີ່ມີບົດບາດສຳຄັນທີ່ສຸດໃນການພັດທະນາເສດຖະກິດ-ສັງຄົມຂອງລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ເຊິ່ງເປັນອ່າງເກັບນ້ຳທີ່ໃຫຍ່ທີ່ສຸດແຫ່ງທຳອິດຂອງ ສປປ ລາວ ເຊິ່ງແມ່ນສົມເດັດ ເຈົ້າສຸພານຸວົງ ແລະ ທ່ານ ຢູຕາກະ ກູໂບຕະ ເປັນຜູ້ລິເລີ່ມແນວຄວາມຄິດ ໃນການກໍ່ສ້າງເຄື່ອນດັ່ງກ່າວນີ້ ຈົນປະສົບຜົນສຳເລັດ ແລະ ເປີດໃຫ້ປະຊາຊົນລາວນຳໃຊ້ມາຈົນເຖິງທຸກວັນນີ້.

ອ່າງນ້ຳງື່ມ 1 ມີໜ້າເຂື່ອນ ຕັ້ງຢູ່ບ້ານໜ້າເຂື່ອນ ເມືອງແກ້ວອຸດົມ ແຂວງວຽງຈັນ ເຊິ່ງຫ່າງຈາກເທດ ສະບານເມືອງປະມານ 1 ກິໂລແມັດ ແລະ ມີອ່າງໂຕ່ງເຊື່ອມຈອດກັບບ້ານໂພນສະອາດ ເມືອງລ້ອງຊານ ແຂວງໄຊສົມບູນ ເຊິ່ງມີໄລຍະທາງຫ່າງຈາກເທດສະບານເມືອງ ໄປທາງທິດຕາເວັນຕົກປະມານ 40 ກິໂລແມັດ, ລວງກວ້າງຂອງອ່າງມີເນື້ອທີ່ກວມເອົາປະມານ 300 ກິໂລຕາແມັດ. ລັກສະນະຂອງເຂື່ອນແມ່ນເປັນເຂື່ອນເບຕົງ ໂດຍອາໄສນ້ຳໜັກຖ່ວງຂອງຕົວມັນເອງລວງສູງຈາກຮາກຖານຂຶ້ນເມືອແມ່ນ 5 ແມັດ, ລວງຍາວຂອງຍອດເຂື່ອນແມ່ນ 468 ແມັດ, ມີຄວາມສາມາດເກັບນ້ຳສູງສຸດ 7,030 ລ້ານແມັດກ້ອນ. ອ່າງນ້ຳງື່ມ 1 ຖືກສ້າງຂຶ້ນຢູ່ໃນ 3 ໄລຍະດ້ວຍກັນຄື: ໄລຍະທີ 1: ສ້າງຂຶ້ນໃນປີ ຄ.ສ 1968-1971 ນຳໃຊ້ງົບປະ ມານ 28 ລ້ານໂດລາສະຫະລັດ; ໄລຍະທີ 2: ສ້າງຂຶ້ນໃນປີ ຄ.ສ 1976-1978 ໃຊ້ງົບປະມານ 49 ລ້ານໂດລາສະຫະ ລັດ ແລະ ໄລຍະທີ 3: ສ້າງຂຶ້ນໃນປີ ຄ.ສ 1983-1984 ໃຊ້ງົບປະມານ 20 ລ້ານໂດລາສະຫະລັດ ແລະ ໃນປະຈຸບັນ ພວມມີການພັດທະນາ ໃຫ້ມີກຳລັງແຮງຜະລິດກະແສໄຟຟ້າ ໃຫ້ໄດ້ສູງຂຶ້ນຕື່ມອີກ. ອ່າງນ້ຳງື່ມ ກໍ່ເປັນແຫຼ່ງທ່ອງທ່ຽວໜຶ່ງ ທີ່ແຂວງໄຊສົມບູນ ແລະ ແຂວງວຽງຈັນ ນຳໃຊ້ເຂົ້າໃນການບໍລິການນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

LAOS
Simply Beautiful

## 6. ຕາດຫ້ວຍນິກ.

ຕາດຫ້ວຍນິກ ຕັ້ງຢູ່ເຂດພູກອງເຂົ້າ ລະຫວ່າງເຂດແດນບ້ານນໍ້າໂມ້ ແລະ ບ້ານທົ່ງຮັກ ໃກ້ກັບທາງຕັດໃໝ່ຂອງ ບໍລິສັດພູເບ້ຍມາຍນິ່ງ ເຊິ່ງຕັ້ງຫ່າງຈາກເທດສະບານເມືອງອະນຸວົງ ໄປທາງທິດໃຕ້ປະມານ 25 ກິໂລແມັດ ແລະ ນອນຢູ່ໃນເຂດສວນຢາງພາລາຂອງປະຊາຊົນບ້ານທົ່ງຮັກ, ມີເນື້ອທີ່ທັງໝົດປະມານ 2.5 ໄລ່.

ຕາດຫ້ວຍນິກ ເປັນຕາດໜຶ່ງທີ່ມີຄວາມສວຍງາມ ແລະ ມີນໍ້າໄຫລເຢັນຕະຫລອດປີ, ເປັນຕາດຫີນທີ່ມີລັກສະນະເນີນຍາວລົງໄປ ເຊິ່ງຄວາມຍາວປະມານ 200 ແມັດ, ກວ້າງປະມານ 20 ແມັດ ແລະ ສູງຊັນລົງໄປປະມານ 30 ແມັດ. ພາຍໃນຕາດ ເປັນວັງນ້ອຍໆ ຢາຍຕາມພະລານຫີນຕ່າງໆ ເໝາະແກ່ການຫລິ້ນນໍ້າຂອງນັກທ່ອງທ່ຽວ. ນອກນັ້ນ ຍັງຖືກອ້ອມຮອບໄປດ້ວຍທິວທັດທຳມະຊາດທີ່ສວຍງາມ, ສວນອ້ອຍ, ສວນກ້ວຍ ແລະ ຕົ້ນໄມ້ເກດສະໜາ, ຕົ້ນຢາງພາລາຂອງປະຊາຊົນອີກດ້ວຍ.

ຕາດຫ້ວຍນິກ ເປັນແຫລ່ງທ່ອງທ່ຽວໜຶ່ງ ທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວພາຍໃນ ເປັນຈຳນວນຫລວງຫລາຍ ເປັນຕົ້ນແມ່ນ ປະຊາຊົນຊາວເມືອງອະນຸວົງ ໃຫ້ຄວາມສົນໃຈເຂົ້າໄປທ່ຽວຊົມ ແລະ ຫລິ້ນນໍ້າໃນຊ່ວງທີ່ມີເທດສະການສຳຄັນເຊັ່ນ: ວັນທີ 8 ມີນາ (ວັນແມ່ຍິງສາກົນ), ວັນບຸນປີໃໝ່ລາວ. ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຈຳນວນນັກທ່ອງທ່ຽວ ທີ່ມີຄວາມສົນໃຈເຂົ້າມາທ່ຽວຫລິ້ນຕາດນໍ້ານິກດັ່ງກ່າວ, ທ່ານ ຢູເຢ້ຊົ່ງ ໝາວຕູ້ຕົ່ງໄກ ຈຶ່ງໄດ້ມີແນວຄວາມຄິດຢາກພັດທະນາຕາດນໍ້ານິກ ໃຫ້ກາຍເປັນແຫລ່ງທ່ອງທ່ຽວ ເພື່ອຮອງຮັບໃຫ້ແກ່ນັກທ່ອງທ່ຽວໃນຊ່ວງທີ່ມີເທດສະການສຳຄັນ, ເຊິ່ງທ່ານໄດ້ສຳປະທານ ແລະ ເປີດບໍລິການນັກທ່ອງທ່ຽວໃນຊ່ວງທີ່ມີເທດສະການສຳຄັນນັບ



ແຕ່ປີ 2010 ເປັນຕົ້ນມາ. ໃນປີ 2015 ມີນັກທ່ອງທ່ຽວເຂົ້າໄປຫລິ້ນຕາດນໍ້ານິກທັງໝົດ 1.600 ຄົນ, ສາມາດສ້າງລາຍຮັບໄດ້ 8.000.000 ກີບ ແລະ ປີ 2016 ມີນັກທ່ອງທ່ຽວທັງໝົດຈຳນວນ 2.000 ຄົນ, ສາມາດສ້າງລາຍຮັບໄດ້ 10.000.000 ກີບ.



## 7. ນ້ຳຕົກຕາດພະແຈແຫລ້.

ນ້ຳຕົກຕາດພະແຈແຫລ້ ຕັ້ງຢູ່ບ້ານນ້ຳຄຽນ ເມືອງຣົ່ມແຂວງໄຊສົມບູນ ມີໄລຍະທາງຫ່າງຈາກຕົວເມືອງ ປະມານ 6 ກິໂລແມັດ, ມີເນື້ອທີ່ປະມານ 4 ເຮັກຕາ. ທິດເໜືອ ຕິດກັບບ້ານອ່າວໃຕ້, ທິດໃຕ້ຕິດ ກັບບ້ານນ້ຳຄຽນ, ທິດຕາເວັນອອກ ຕິດກັບພູສາມເສົ້າ ແລະ ທິດໃຕ້ ຕິດກັບບ້ານຊຽງມີ. ເປັນນ້າຕົກຕາດໜຶ່ງທີ່ມີຄວາມສວຍງາມ ມີນ້ຳໄຫລຕະຫລອດປີມີຄວາມສູງປະມານ 100 ແມັດ, ພາຍໃນບໍລິເວນນ້ຳຕົກຕາດອຸດົມສົມບູນໄປດ້ວຍພືດພັນນາໆຊະນິດ, ຖືກປົກຄຸມໄປດ້ວຍປ່າໄມ້ນ້ອຍໄມ້ໃຫຍ່ທີ່ຂຽວງາມຕະຫລອດມີ, ມີສັດນ້ອຍສັດໃຫຍ່ອາໄສຢູ່ທີ່ນ້ຳຕົກຕາດແຫ່ງນີ້ເຊັ່ນ: ລີງ, ຄ່າງ, ທະນີ, ນົກ, ໝູ ແລະ ສັດປະເພດອື່ນໆອີກ. ຕາມການບອກເລົ່າ ຂອງຜູ່ເຖົ້າຜູ່ແກ່ບ້ານນ້ຳຄຽນ ໄດ້ບອກໃຫ້ຮູ້ວ່າ ໃນປີ 1980 ໄດ້ມີປະຊາຊົນໄປພົບເຫັນພະອົງໜຶ່ງ ຢູ່ໃກ້ກັບນ້ຳຕົກຕາດແຫ່ງນີ້ ເຊິ່ງພະອົງດັ່ງກ່າວມີລັກສະນະສີດຳ ແລະ ມີຫລາຍແຈ.

ດັ່ງນັ້ນ, ປະຊາຊົນບ້ານດັ່ງກ່າວ ຈຶ່ງໄດ້ພາກັນເອີ້ນນ້ຳຕົກຕາດແຫ່ງນີ້ວ່ານ້ຳຕົກຕາດພະແຈແຫລ້ ຈົນມາຮອດທຸກວັນນີ້. ນ້ຳຕົກຕາດພະແຈແຫລ້ ເປັນນ້ຳຕົກຕາດທີ່ໄດ້ຮັບຄວາມນິຍົມ ຈາກນັກທ່ອງທ່ຽວພາຍໃນ ໂດຍສະເພາະປະຊາຊົນຊາວເມືອງຣົ່ມໃຫ້ຄວາມສົນໃຈ ເຂົ້າໄປທ່ຽວຊົມ, ອາບນ້ຳ, ເຮັດກິດຈະກຳກິນເຂົ້າປ່າສາມັກຄີໃນວັນພັກຜ່ອນ ແລະ ໃນວັນທີ່ມີເຫດສະການສຳຄັນຕ່າງໆພາຍໃນເມືອງເຊັ່ນ: ປີໃໝ່ສາກົນ, ວັນທີ 8 ເດືອນ 3, ບຸນປີໃໝ່ລາວ, ບຸນຫໍ່ເຂົ້າປະ ດັບດິນ ແລະ ບຸນຫໍເຂົ້າສະຫລາກ, ບຸນກິນຈຽງຂອງຊົນເຜົ່າມົ້ງ ແລະ ອື່ນໆ...ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຜູ່ເຂົ້າມາທ່ຽວຊົມ, ດັ່ງນັ້ນ, ປະຊາຊົນພາຍໃນບ້ານນ້ຳຄຽນ ຈຶ່ງໄດ້ຮ່ວມກັນເຂົ້າມາພັດທະນານ້ຳ ຕົກດັ່ງກ່າວ ເລີ່ມແຕ່ປີ 2012 ເປັນຕົ້ນມາ ເຊິ່ງເປີດບໍລິການໃຫ້ແກ່ນັກທ່ອງທ່ຽວເຂົ້າທ່ຽວຊົມແຕ່ເວລາ 08:00-16:00 ຂອງທຸກທຸກໆວັນ, ຄ່າປີເຂົ້າຊົມນັກທ່ອງທ່ຽວພາຍໃນ ແລະ ຕ່າງໆປະເທດ ຄົນລະ 10.000 ກີບ.



## 8. ນ້ຳຕົກຕາດປຸ່ງ.





ນ້ຳຕົກຕາດປຸ່ງ ຕັ້ງຢູ່ບ້ານນ້ຳຄຸຍ ເມືອງລ້ອງຊານ ຕັ້ງຫ່າງຈາກເທດສະບານເມືອງປະມານ 3 ກິໂລແມັດ, ເຊິ່ງເປັນອ່າງນ້ຳຂະໜາດໃຫຍ່ທີ່ຖືກຕົກແຕ່ງຂຶ້ນຢ່າງສວຍງາມ ແລະ ມີຫລາຍກິດຈະກຳໃຫ້ນັກທ່ອງທ່ຽວຫລິ້ນ, ພາຍໃນບໍລິ ເວນນ້ຳຕົກຕາດ ຖືກປົກຄຸມໄປດ້ວຍປ່າໄມ້ທີ່ຂຽວງາມຕະຫລອດປີ. ໃນເມື່ອກ່ອນນ້ຳຕົກຕາດປຸ່ງແຫ່ງນີ້ ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ມີຕົ້ນໄມ້ນ້ອຍໃຫຍ່ຫລາຍຊະນິດ, ມີສັດປ່າສັດປ່າ ແລະ ສັດນ້ຳອາໄສຢູ່ບໍລິເວນນີ້ເປັນຈຳນວນຫລວງຫລາຍ, ຕອນລຸ່ມຂອງຕາດມີບໍ່ນ້ຳ ແລະ ບວກນ້ຳເຄັມ ຫລື ເອີ້ນອີກຢ່າງໜຶ່ງວ່າ “ປຸ່ງ” ມີຄວາມກວ້າງປະມານ 4-5 ແມັດມົນທົບ ແລະ ໄດ້ມີຝູງສັດນ້ອຍໃຫຍ່ຫລາຍປະເພດມາລົງຫລິ້ນຢູ່ໃນປຸ່ງເຊັ່ນ: ຊ້າງ, ໝີ, ເໝືອຍ, ກວ້າງ, ຟານ, ໝູປ່າ, ນົກ, ໜູ ແລະ ສັດປະເພດອື່ນໆ ລົງມາກິນນ້ຳ ແລະ ດິນເຄັມຢູ່ໃນປຸ່ງແຫ່ງນີ້. ດັ່ງນັ້ນ, ປະຊາຊົນບ້ານດັ່ງກ່າວ ຈຶ່ງພາກັນໃສ່ຊື່ນ້ຳຕົກຕາດແຫ່ງນີ້ວ່າ “ຕາດປຸ່ງ”. ນ້ຳຕົກຕາດປຸ່ງ ໄດ້ຮັບມີບຸກຄົນເຂົ້າມາພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວ ນັບແຕ່ປີ 2003 ເປັນຕົ້ນມາ ໂດຍການສ້າງສິ່ງອຳນວຍຄວາມສະດວກຕ່າງໆເປັນຕົ້ນ: ເສັ້ນທາງເຂົ້າເຖິງ, ສ້າງອ່າງເກັບນ້ຳ, ຕູບນັ່ງພັກຜ່ອນ, ຫ້ອງນ້ຳ ແລະ ອື່ນໆ...

## ໙. ນ້ຳຕົກຕາດດ່ານຜາແຊບ.





ດ່ານຜາແຊບ ເປັນນ້ຳຕົກຕາດໜຶ່ງ ທີ່ມີຄວາມສວຍງາມ, ຖືກອ້ອມຮອບໄປດ້ວຍປ່າໄມ້ນ້ອຍໃຫຍ່ທີ່ຂຽວງາມຕະຫລອດປີ ແລະ ມີເຂດແດນເຊື່ອມຕໍ່ກັບປ່າສະຫງວນແຫ່ງຊາດພູເຂົາຄວາຍ ເຊິ່ງເປັນປ່າສະຫງວນທີ່ມີຄວາມອຸດົມສົມ ບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ສັດສາວາສິ່ງນາໆຊະນິດ. ນ້ຳຕົກຕາດດ່ານຜາແຊບ ຕັ້ງຢູ່ບ້ານພູປາມັນ ເຊິ່ງຫ່າງຈາກເທດສະບານເມືອງລ້ອງຊານ ໄປທາງທິດເໜືອປະມານ 18 ກິໂລ ແມັດ, ເປັນນ້ຳຕົກຕາດທີ່ມີຄວາມສູງປະມານ 20 ແມັດ, ກວ້າງ 30-40 ແມັດ ແລະ ແບ່ງອອກເປັນ 2 ຊັ້ນ ແຕ່ລະຊັ້ນສູງ 10 ແມັດ. ຊັ້ນລຸ່ມມີນ້ຳໄຫລລອດພື້ນອອກມາ ແລະ ຊັ້ນເທິງເປັນຊັ້ນທີ່ມີນ້ຳຕົກລົງມາ, ສ່ວນຊັ້ນລຸ່ມມີລັກສະນະເຈີ້ຍເລິກເຂົ້າໄປ, ມີຄວາມກວ້າງຂວາງຈົນສາມາດເປັນບ່ອນນອນຂອງຄົນໄດ້ເຖິງ 100 ກວ່າຄົນ; ນ້ຳຕົກຕາດດ່ານຜາແຊບ ເປັນດ່ານນ້ຳຕົກທີ່ມີຄວາມສວຍງາມ, ເປັນສະຖານທີ່ທ່ອງທ່ຽວທຳມະຊາດ ເພື່ອການພັກຜ່ອນຢ່ອນໃຈຂອງປະຊາຊົນຊາວເມືອງລ້ອງຊານ. ທີ່ມາຂອງຄຳວ່າ ດ່ານຜາແຊບຍ້ອນວ່າ ປະຊາຊົນມັກມານັ່ງກິນເຂົ້າປ່າຢູສະຖານທີ່ແຫ່ງນີ້ ແລະ ຮູ້ສຶກວ່າກິນເຂົ້າແຊບຫລາຍກວ່າປົກກະຕິ ດັ່ງນັ້ນ, ຈຶ່ງພາກັນໃສ່ຊື່ນ້ຳຕົກຕາດແຫ່ງນີ້ວ່າ: ດ່ານຜາແຊບ.

## 10. ນ້ຳຕົກຕາດຍອງ.



ນ້ຳຕົກຕາດຍອງ ຕັ້ງຢູ່ບ້ານປາກຍອງ ເມືອງທ່າໂທມ, ມີໄລຍະທາງຫ່າງຈາກເທດສະບານເມືອງ ປະມານ 22 ກິໂລ ແມັດ, ນອນຢູ່ໃນເຂດປ່າສະຫງວນຂອງເມືອງ, ມີເນື້ອທີ່ທັງໝົດ ປະມານ 276 ເຮັກຕາ ແລະ ເນື້ອທີ່ແຫລ່ງທ່ອງທ່ຽວ ປະມານ 98,5 ເຮັກຕາ. ເປັນນ້ຳຕົກຕາດ 3 ຊັ້ນລຽນຕິດກັນ, ເຊິ່ງມີຄວາມສູງປະມານ 30 ແມັດ ແລະ ນອນຢູ່ໃນເຂດປ່າສະຫງວນຂອງເມືອງ ມີເນື້ອທີ່ທັງໝົດ ປະມານ 276 ເຮັກຕາ ແລະ ເນື້ອທີ່ແຫລ່ງທ່ອງທ່ຽວ ປະມານ 98,5 ເຮັກຕາ, ເປັນນ້ຳຕົກຕາດທີ່ມີຄວາມສວຍງາມ ເຊິ່ງອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ພາຍໃນບໍລິເວນນ້ຳຕົກຕາດ ຖືກປົກຫຸ້ມໄປດ້ວຍ ຕົ້ນໄມ້ນ້ອຍໄມ້ໃຫຍ່ຫລາຍ ຊະນິດທີ່ຫາເບິ່ງຍາກ ແລະ ມີອາກາດທີ່ເຢັນສະບາຍ. ຕາມການບອກ ເລົ່າຂອງຜູ່ເຖົ້າຜູ່ແກ່ບ້ານປາກຍອງ ເລົ່າບອກໃຫ້ຮູ້ວ່າໃນເມື່ອກ່ອນຊາວບ້ານເຊື່ອຖືກັນວ່າ ສະຖານທີ່ນ້ຳຕົກຕາດຍອງ ເປັນສະຖານທີ່ສັກສິດ ແລະ ເປັນບ່ອນສັກກະລະບູຊາ ຂອງປະຊາຊົນບ້ານປາກຍອງ ເພາະວ່າໃນທຸກໆວັນສິນ 15 ຄ່ຳ ຈະມີສຽງຄ້ອງສຽງກອງດັງສະນັ່ນຢູ່ຕາມຮ່ອມນ້ຳຕົກຕາດ, ນອກນັ້ນ, ຍັງມີຜູ່ເຖົ້າຜູ່ແກ່ໃນສະໄໝກ່ອນ ໄດ້ເລົ່າຕໍ່ກັນມາວ່າ ສະຖານທີ່ນ້ຳຕົກຕາດຍອງ ເປັນສະຖານທີ່ທາງພຸດທະສາສະໜາ ທີ່ຈຳສິນຖືຄອງຢູ່ໃນຕາດດັ່ງກ່າວ. ອີກປະການໜຶ່ງ ຍັງໄດ້ພົບເຫັນຮອຍຕີນຄົນບູຮານ ແລະ ຮອຍຕີນໝາ ຕິດຢູ່ພະລານຫີນ ຂອງຕາດຊັ້ນທີ 2 ອີກດ້ວຍ.





## 11. ຖ້ຳຜາສິງ.

ຖ້ຳຜາສິງ ຕັ້ງຢູ່ບ້ານນາໄຊສະຫວ່າງ ເມືອງລ້ອງແຈ້ງ ມີໄລຍະທາງຫ່າງຈາກເທດສະບານເມືອງ ໄປທາງທິດຕາເວັນຕົກ ປະມານ 111 ກິໂລແມັດ, ມີໄລຍະທາງຫ່າງຈາກບ້ານນາໄຊສະຫວ່າງປະມານ 5 ກິໂລແມັດ ແລະ ຫ່າງຈາກບ້ານນາມອນ ເມືອງວັງວຽງ ແຂວງວຽງຈັນ ປະມານ 25 ກິໂລແມັດ. ຖ້ຳຜາສິງ ເປັນຜາໜຶ່ງ ທີ່ມີຫລາຍຖ້ຳລຽນຕິດກັນເປັນແຕ່ລະໄລຍະ, ບໍລິເວນອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ຖືກປົກຄຸມດ້ວຍປ່າໄມ້ທີ່ຂຽວງາມ, ມີທິວທັດທຳມະຊາດທີ່ສວຍງາມ, ມີອາກາດທີ່ສົດຊື່ນ, ດ້ານໜ້າຂອງຖ້ຳ ຍັງມີສາຍນ້ຳສິງໄຫລຜ່ານຕະຫລອດປີ, ຕາມສາຍນ້ຳປະກອບມີຕາດ, ແກ້ງ, ໂງ້ນຫີນນ້ອຍ-ໃຫຍ່ ສະລັບຊັບຊ້ອນກັນໄປມາຢ່າງສວຍງາມຕາ. ນອກນັ້ນ, ຍັງມີນ້ຳເຂົ້າ-ອອກຣູ ຢູ່ບໍລິເວນລຽບຕີນຜາຢ່າງສວຍງາມ ແລະ ບໍ່ເຄີຍເຫັນຢູ່ສະຖານທີ່ໃດມາກ່ອນ. ຜາດັ່ງກ່າວ ປະກອບມີທັງໝົດ 7 ຖ້ຳ, ເຊິ່ງແຕ່ລະຖ້ຳຈະມີລັກສະນະຄວາມສວຍງາມ ທີ່ເປັນເອກະລັກແຕກຕ່າງກັນໄປ, ແຕ່ລະຖ້ຳມີຫີນງອກ, ຫີນຍ້ອຍທີ່ມີລັກ ສະນະຫລາຍຮູບຫລາຍຊົງ, ມີຄວາມເຫລືອງເຫລື້ອມແວວວາວ ໃນເວລາທີ່ຖືກແສງສະຫວ່າງສາດແສງລົງໄປ ຄ້າຍກັບເພັດນິນຈິນດາທີ່ມີຄວາມສວຍງາມ, ບາງຖ້ຳມີອ່າງນ້ຳໃສຄ້າຍຄືກັບຖືກສ້າງຂຶ້ນໂດຍມະນຸດ ແລະ ບາງຖ້ຳກໍມີສາຍນ້ຳໄຫລຜ່ານລອດໃນຖ້ຳຕະຫລອດປີ, ຖ້ຳທີ່ໃຫຍ່ ແລະ ສູງກວ່າໝູ່ຍັງມີຮູສອດອອກທາງດ້ານຫລັງຂອງຖ້ຳ ເຊິ່ງມີຄວາມຍາວແຕ່ດ້ານໜ້າຫາດ້ານຫລັງຖ້ຳປະມານ 100 ແມັດ. ນອກນີ້ ຍັງມີສິ່ງທີ່ງົດງາມ ແລະ ແປກຕາຫລາຍຢ່າງທີ່ໜ້າອັດສະຈັນອີກດ້ວຍ.

## 12. ນ້ຳຕົກຕາດຫ້ວຍປາຕີນ.

ນ້ຳຕົກຕາດຫ້ວຍປາຕີນ ຕັ້ງຢູ່ຫ່າງຈາກບ້ານຜາສະຫງົບເມືອງອະນຸວົງ ແຂວງໄຊສົມບູນ ໄປທາງທິດຕາເວັນອອກສຽງເໜືອ ປະມານ 3 ກິໂລແມັດ. ນ້ຳຕົກຕາດນີ້ ເປັນນ້ຳຕົກຕາດທີ່ມີຄວາມສວຍງາມ ແລະ ໜ້າທ່ຽວຊົມ, ມີ 3 ຊັ້ນລຽນຕິດກັນ, ແຕ່ລະຊັ້ນເປັນພະນັກ, ມີຄວາມສູງປະມານ 30 ແມັດ ແລະ ມີອ່າງນ້ຳຢູ່ບໍລິເວນນ້ຳຕົກຂອງແຕ່ລະຊັ້ນ ເຊິ່ງເປັນບ່ອນທີ່ມີຄວາມເໝາະສົມໃນການຫລິ້ນນ້ຳ.

ທ່ານ ປ່າຊິ່ງ ວ່າງ, ນາຍບ້ານຜາສະຫງົບ ເມືອງອະນຸວົງ ແຂວງໄຊສົມບູນ ໄດ້ເລົ່າໃຫ້ຮູ້ວ່າ: ນ້ຳຕົກຕາດແຫ່ງນີ້ ເປັນນ້ຳຕົກທີ່ມີຄວາມອຸດົມສົມບູນໄປດ້ວຍ ຊັບພະຍາກອນປ່າໄມ້ນ້ອຍໃຫຍ່, ມີສັດນ້ອຍ, ສັດໃຫຍ່ອາໄສຢູ່ບໍລິເວນນ້ຳ ຕົກຕາດແຫ່ງນີ້ ເປັນຈຳນວນຫລາຍ ເປັນຕົ້ນ: ຟານ, ໝູປ່າ, ລີງ, ຄ່າງ, ທະນີ, ນົກໜູ ແລະ ສັດປະເພດອື່ນໆອີກ... ນອກນັ້ນ, ຍັງມີປູ, ປາ, ກຸ້ງ, ຫອຍ ແລະ ມີປາຕີນ (ປາມີຕີນ) ທີ່ອາໄສຢູ່ຕາມຫ້ວຍນ້ຳແຫ່ງນີ້ ປະກົດໃຫ້ເຫັນເປັນຈຳນວນຫລາຍ ເຊິ່ງເປັນສັດເຄິ່ງບົກເຄິ່ງນ້ຳທີ່ຫາເບິ່ງຍາກ. ດັ່ງນັ້ນ, ອຳນາດການປົກຄອງບ້ານ ຈຶ່ງໄດ້ເອີ້ນຊື່ນ້ຳຕົກຕາດແຫ່ງນີ້ວ່າ: “ນ້ຳຕົກຕາດຫ້ວຍປາຕີນ”.





## 13. ຖ້ຳຜາດອກ.

ຖ້ຳຜາດອກ ຕັ້ງຢູ່ບ້ານຊ້ຳທອງ ເມືອງລ້ອງແຈ້ງ ເຊິ່ງຕັ້ງຫ່າງຈາກເທດສະບານເມືອງໄປທາງທິດເໜືອປະມານ 30 ກິໂລແມັດ. ເປັນຖ້ຳໜຶ່ງທີ່ມີຄວາມສວຍງາມ, ພາຍໃນຖ້ຳມີຫີນງອກຫີນຍ້ອຍ, ມີລວຍລາຍຫລາຍສິ່ງຫລາຍຢ່າງຕິດຢູ່ຕາມພື້ນ, ຝາ ແລະ ເພດານຂອງຖ້ຳ, ນອກນັ້ນ ຍັງມີປະຫວັດຄວາມເປັນມາທີ່ກ່ຽວພັນກັບການຕໍ່ສູ້ປົດປ່ອຍຊາດໃນສະໄໝສົງຄາມແບບໃໝ່. ຖ້ຳຜາດອກ ເປັນຖ້ຳຂະໜາດໃຫຍ່ມີຄວາມກວ້າງປະມານ 20 ແມັດ, ສູງປະມານ 10 ແມັດ ແລະ ມີຄວາມເລິກປະມານ 200 ແມັດ, ຖືກຄົ້ນພົບໃນປີ 1954. ຕາມການບອກເລົ່າຂອງຜູ່ເຖົ້າຜູ່ແກ່ບ້ານຊຳທອງເລົ່າໃຫ້ຮູ້ວ່າ: ໃນສະໄໝສົງຄາມຕໍ່ສູ້ປົດປ່ອຍຊາດ ຕ້ານການຮຸກຮານຂອງພວກຈັກກະພັດລ່າເມືອງຂຶ້ນແບບໃໝ່ ທະຫານລາວ-ຫວຽດນາມ ໄດ້ເຂົ້າບຸກໂຈມຕີຂັບໄລ່ກຳລັງທະຫານຂອງນາຍພົນວັງປາວ ແລະ ລູກແຫລ່ງຕີນມືຂອງພວກມັນ, ປະຊາຊົນເຂດບ້ານດັ່ງກ່າວ ຈຳນວນ 200 ຄອບຄົວ ຫລືປະມານ 1000 ກວ່າຄົນ ໄດ້ພ້ອມກັນເຂົ້າໄປລີ້ໄພຢູ່ໃນຖ້ຳດັ່ງກ່າວ.



ນອກນັ້ນ, ປະຊາຊົນຍັງມີຄວາມເຊື່ອຖືກັນວ່າຖ້ຳດັ່ງກ່າວ ມີຄວາມສັກສິດ ແລະ ເປັນສະຖານທີ່ເຄົາລົບບູຊາຂໍພອນສິ່ງສັກສິດນຳຜີປ່າ, ເຈົ້າຖິ່ນເຈົ້າຖານ, ຜີບ້ານຜີເມືອງ, ເທວະດາຟ້າແຖນ. ໃນເວລາທີ່ປະຊາຊົນພາຍໃນບ້ານເຈັບໄຂ້ໄດ້ປ່ວຍ ຍາດຕິພີ່ນ້ອງໄດ້ແຕ່ງຂັນ, ດອກໄມ້ທູບທຽນໄປບູຊາ ເພື່ອຂໍຢາດີໂດຍນຳເອົາພືດພັນ, ຮາກໄມ້ໃນບໍລິເວນຖ້ຳດັ່ງ ກ່າວມາເຮັດຢາຮັບປະທານແລ້ວ ຮູ້ສຶກວ່າອາການເຈັບໄຂ້ໄດ້ປ່ວຍດີຂຶ້ນ, ໃນເວລາທີ່ຈະອອກເດີນທາງໄປແນວໜ້າ ຫລື ມີຄົນຫລົງທາງ ເມື່ອນຳເອົາດອກໄມ້ທູບທຽນມາບູຊາຂໍພອນສິ່ງສັກສິດຈາກຖ້ຳດັ່ງກ່າວ ແມ່ນໄດ້ຮັບຜົນດີເຫັນທັນຕາ. ດັ່ງນັ້ນ, ປະຊາຊົນຈຶ່ງໄດ້ເຊື່ອຖືສືບຕໍ່ໆກັນມາຢ່າງບໍ່ລົດລະ ໂດຍຖືເອົາຖ້ຳດັ່ງກ່າວເປັນສະຖານທີ່ສັກສິດຂອງບ້ານ ແລະ ເປັນສະຖານທີ່ຢຽວຍາທາງດ້ານຈິດໃຈຂອງປະຊາຊົນພາຍໃນບ້ານ.

## 14. ພູພະດ່າງ.

ພູພະດ່າງ ເປັນພູທີ່ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ມີປ່າໄມ້ຫລາຍຊະນິດ ທີ່ຂຽວງາມຕະຫລອດປີ, ມີສັດສາວາສິ່ງຫລາຍຈຳພວກອາໄສຢູ່ໃນພື້ນທີ່ແຫ່ງນີ້ເປັນຈຳນວນຫລາຍ. ພູພະດ່າງຕັ້ງຢູ່ບ້ານສັນປາຕອງ ຫ່າງຈາກເທດສະບານເມືອງລ້ອງຊານ ໄປທາງເບື້ອງທິດຕາເວັນຕົກປະມານ 30 ກມ. ອີງຕາມການລາຍງານ ຂອງຄະນະລົງສຳຫລວດ ແລະ ເກັບຂໍ້ມູນຕົວຈິງ ໃນພື້ນທີ່ແຫລ່ງທ່ອງທ່ຽວແຫ່ງນີ້ໃນປີ 2006 ເຊິ່ງການສຳຫລວດໄດ້ພົບເຫັນຮ່ອງຮອຍຂອງພະ 5 ອົງ, ເປັນພະທີ່ຖວັດຂຶ້ນກ່ອນ ຄ.ສ ຮຸ່ງເຮືອງກຳອຳນາດ ມີອາຍຸປະມານ 500 ກ່ວາປີມາແລ້ວ. ພະອົງໃຫ່ຍສຸດມີລວງກ້ວາງປະມານ 80 ຊມ, ໜ້າປະມານ 10 ຊມ, ສູງປະມານ 1,20 ແມັດ; ພະອົງນ້ອຍສຸດມີລວງກ້ວາງປະມານ 40 ຊມ, ໜ້າປະມານ 10 ຊມ, ສູງປະມານ 80 ຊມ ຕັ້ງຢູ່ຈອມພູພະດ່າງ. ໃນສະຖານທີ່ທີ່ພະ 5 ອົງສະຖິດຢູ່ນັ້ນ ສາມາດແນມເຫັນທິວທັດທຳມະຊາດທີ່ສວຍງາມ ພ້ອມທັງເຫັນເມືອງໂພນໂຮງ, ເມືອງແກ້ວອຸດົມ ແລະ ເຂດ 516 ເມືອງລ້ອງຊານ. ໃນເວລາກາງຄືນກໍ່ສາມາດແນມເຫັນດອກໄຟທີ່ຮຸ່ງມາຈາກນະຄອນຫຼວງວຽງຈັນຢູ່ດ້ານຫລັງຂອງພະ 5 ອົງ, ມີຫີນກ້ອນໜຶ່ງສູງປະມານ 4–5 ແມັດ, ຍາວປະມານ 8–9 ແມັດ ຊົບເປັນຮູບຜູ່ຍິງນອນປິ່ນໜ້າໄປທາງພູເຂົາຄວາຍ ແລ້ວເອີ້ນຈອມພູນັ້ນວ່າພູນາງນອນ ຫລື ເອີ້ນລວມພູໜ່ວຍນັ້ນວ່າ: ພູພະດ່າງ.



## 15. ຖ້ຳເຈົ້າອະນຸວົງ.

ຖ້ຳເຈົ້າອະນຸວົງ ເປັນແຫລ່ງທ່ອງທ່ຽວໜຶ່ງທີ່ມີຄວາມສວຍງາມທາງດ້ານທຳມະຊາດ ແລະ ມີຊື່ສຽງທາງດ້ານປະຫວັດສາດການຕໍ່ສູ້ ຂອງເຈົ້າອະນຸວົງ ກະສັດອົງສຸດທ້າຍຂອງອານາຈັກລ້ານຊ້າງ, ເປັນແຫລ່ງທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມສູງສຸດຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ທີ່ເດີນທາງເຂົ້າມາຢ້ຽມຢາມແຂວງໄຊສົມບູນ. ຖ້ຳດັ່ງກ່າວ ຕັ້ງຢູ່ບ້ານພູຫົວຊ້າງ ເມືອງອະນຸວົງ ໄປທາງທິດເໜືອປະມານ 4 ກິໂລແມັດ (ທາງຂຶ້ນພູເບ້ຍ) ເຊິ່ງມີເນື້ອທີ່ປະມານ 10 ເຮັກຕາ ຫລື ເທົ່າກັບ 96,000 ຕາແມັດ, ຖ້ຳນີ້ຕັ້ງຢູ່ຕີນຜາສູງຊັນປະມານ 200 ແມັດ, ດ້ານໜ້າຂອງຖ້ຳມີສາຍນ້ຳຈັ້ງໄຫລຜ່ານ, ດ້ານຫລັງ ແລະ ດ້ານຂ້າງເບື້ອງທິດຕາເວັນຕົກ ຖືກອ້ອມຮອບໄປດ້ວຍພູນ້ອຍພູໃຫຍ່ ແລະ ປ່າໄມ້ດົກໜາທີ່ຂຽວງາມຕະຫລອດປີ ເຊິ່ງບົ່ງບອກເຖິງຄວາມອຸດົມສົມບູນ ຂອງຊີວະນາໆພືດພັນ ໃນສວນອຸທິຍານແຫ່ງນີ້, ດ້ານຂ້າງທາງທິດເໜືອຕິດກັບຕີນພູເບ້ຍ. ຖ້ຳເຈົ້າອະນຸວົງເປັນຖ້ຳຫີນປູນທີ່ເກີດຈາກການສຽດເຊາະຂອງນ້ຳພາຍໃນຖ້ຳປະກອບມີນົມຜາ, ຫີນງອກຫີນຍ້ອຍ ຫລາຍຮູບຫລາຍຊົງທີ່ງົດງາມ ຕາມການຈິນຕະນາການຂອງຜູ່ເບິ່ງ, ນອກນັ້ນ ຍັງມີຫີນແກ້ວສີຂາວເຫລື້ອມຍິບຍັບ ຄ້າຍຄືເພັດພອຍກ້ອນນ້ອຍກ້ອນໃຫຍ່ ຫ້ອຍປະດັບປະດາ ຢູ່ຕາມຜາຫີນ ປຽບດັ່ງດອກໄຟແສງສີ ເມື່ອມີແສງປະກາຍໄຟສະທ້ອນໃສ່ຢ່າງສວຍງາມ. ຖ້ຳນີ້ປະກອບມີສອງຖ້ຳ 2 ຖ້ຳຢູ່ໃກ້ຄຽງກັນ: ຖ້ຳທີ 1 ປາກຖ້ຳກວ້າງ 5 ແມັດ, ສູງ 3,5 ແມັດ;ປະກອບມີ 2 ຫ້ອງ, ຫ້ອງທີ່ 1 ຫ່າງຈາກປາກຖ້ຳປະມານ 15 ແລະ ມີຄວາມເລິກປະ ມານ 50 ແມັດ ແລະ ຫ້ອງທີ 2 ເລິກເຂົ້າໄປປະມານ 300 ແມັດ, ສາມາດບັນຈຸຄົນໄດ້ປະມານ 100 ຄົນ, ເຊິ່ງຊາວ ບ້ານເຊື່ອກັນວ່າເປັນບ່ອນພັກເຊົາຂອງເຈົ້າອະນຸວົງ ພ້ອມດ້ວຍອົງຄະລັກ ແລະ ຖ້ຳທີ 2 ຕັ້ງຫ່າງຈາກຖ້ຳທີ 1 ປະມານ 15 ແມັດ ປາກຖ້ຳກວ້າງ 7 ແມັດ, ສູງ 4 ແມັດ, ເລິກເຂົ້າໄປປະມານ 30 ແມັດ, ສາມາດບັນຈຸຄົນໄດ້ປະ ມານ 50 ຄົນ ແລະ ເຊື່ອກັນວ່າ ເປັນສະຖານທີ່ພັກເຊົາຂອງກຳລັງທະຫານຂອງເຈົ້າອະນຸວົງ.

ຖ້ຳເຈົ້າອະນຸວົງ ໃນເມື່ອກ່ອນມີຊື່ວ່າ "ຖ້ຳຜາຊຽງທອງ" ແຕ່ເນື່ອງຈາກຖ້ຳແຫ່ງນີ້ ມີປະຫວັດກ່ຽວພັນກັບການຕໍ່ສູ້ ຂອງເຈົ້າອະນຸວົງໃນປີ ຄ.ສ 1829 ທີ່ໄດ້ເຮັດສົງຄາມຕ້ານການຮຸກຮານ ຂອງພວກສະຫຍາມຢູ່ແຂວງຊຽງຂວາງໃນເວລານັ້ນ ເພື່ອຫວັງກອບກູ້ເອກະລາດ ໃຫ້ຫລຸດພົ້ນອອກຈາກການເປັນເມືອງຂຶ້ນຂອງສະຫຍາມ, ແຕ່ເຫັນວ່າ ສູ້ກັບສັດຕູບໍ່ໄດ້ ຍ້ອນວ່າກຳລັງຂອງສັດຕູມີຫລາຍກວ່າ ແລະ ມີອາວຸດທີ່ທັນສະໄໝກວ່າ; ກອງທັບເຈົ້າອະນຸວົງຈຶ່ງໄດ້ຖອຍທັບຈາກຊຽງຂວາງ ມາຈັ້ງທັບຢູ່ແຄມນ້ຳເພື່ອດັກສະກັດຕີສັດຕູ ເຈົ້າອະນຸວົງ ຈຶ່ງໄດ້ໃສ່ຊື່ເຂດນີ້ວ່າ ″ເມືອງຈັ້ງນ້ຳ″. ແຕ່ພວກທະຫານສະຫຍາມ ໄດ້ໄລ່ຕິດຕາມມາ ຈຶ່ງໄດ້ມີການຕໍ່ສູ້ກັນຢ່າງດຸເດືອດ ແຕ່ກຳລັງຂອງຝ່າຍສັດຕູມີຫລາຍກວ່າ, ກອງທັບເຈົ້າອະນຸວົງຈຶ່ງຖອຍທັບຈາກເມືອງຈັ້ງນ້ຳໄປຕັ້ງທັບຢູ່ເມືອງອ້ອມ, ຕໍ່ມາເຈົ້ານ້ອຍເມືອງພວນ ພ້ອມກັບທະຫານສະຫຍາມ ກໍໄລ່ຕິດຕາມໄປປິດລ້ອມອີກ ເຈົ້າອະນຸວົງ ຈຶ່ງຕັ້ງຊື່ເຂດນີ້ວ່າ: ເມືອງອ້ອມ (ເມືອງອອມໃນປະຈຸບັນ); ກອງທັບເຈົ້າອະນຸວົງ ໄດ້ຖອຍທັບຈາກເມືອງອອມ ກັບຄືນມາຕັ້ງທັບຢູ່ເມືອງຈັ້ງນ້ຳອີກເທື່ອໜຶ່ງ ຈຶ່ງປ່ຽນຊື່ເຂດນີ້ມາເປັນ ″ເມືອງຈັ້ງບົກ″ ເພື່ອຕີຕ້ານກັບທະຫານສະຫຍາມ ແລະ ທະຫານເຈົ້ານ້ອຍເມືອງພວນ; ໃນເວລາທີ່ເຈົ້າອະນຸວົງ ແລະ ທະຫານມາຮອດເຂດນີ້ທຳອິດ ເພິ່ນໄດ້ເຂົ້າໄປຊ້ອນຕົວຢູ່ຖ້ຳຜາຊຽງທອງ ຫລື ຖ້ຳເຈົ້າອະນຸວົງຢູ່ຕໍ່ມາໄດ້ໄລຍະໜຶ່ງ ຮູ້ວ່າເສຍຄວາມລັບແລ້ວເຈົ້າອະນຸວົງຈຶ່ງແບ່ງກຳລັງອອກເປັນສອງຈຸດ: ຈຸດທີໜຶ່ງປະຈຳຢູ່ຖ້ຳຄືເກົ່າ ແລະ ຈຸດທີສອງຕິດຕາມເຈົ້າອະນຸວົງມາຕັ້ງທັບຢູ່ຜາພະເຈົ້າ, ຕໍ່ມາກໍເສຍຄວາມລັບອີກ ເຈົ້າອະນຸວົງ ຈຶ່ງໄດ້ນຳພາກຳລັງຍ້າຍອອກຈາກເຂດນີ້. ດັ່ງນັ້ນ ຜູ້ເຖົ້າຜູ້ແກ່ຈຶ່ງໄດ້ປ່ຽນຊື່ຖ້ຳຜາຊຽງທອງແຫ່ງນີ້ມາເປັນ ″ຖ້ຳເຈົ້າອະນຸວົງ″ ຈົນເຖິງທຸກວັນນີ້.



## 16. ເດີ່ນບິນເກົ່າເມືອງລ້ອງແຈ້ງ.



ເດີ່ນບິນເກົ່າເມືອງລ້ອງແຈ້ງ ເປັນສະຖານທີ່ໜຶ່ງ ທີ່ມີຄວາມສຳຄັນທາງດ້ານປະຫວັດສາດ, ເຊິ່ງເປັນສະຖານທີ່ຍຸດທະສາດ ໃນການຕໍ່ສູ້ສົງຄາມແບບໃໝ່ ໃນສະໄໝກ່ອນປີ ຄ.ສ 1975 ໂດຍສະເພາະ ເປັນສະຖານທີ່ຮອງຮັບການຂົນສົ່ງອາວຸດສົງຄາມ, ສະບຽງອາຫານ ແລະ ກຳລັງທະຫານທີ່ເປັນລູກແຫລ່ງຕີນມື ຂອງພວກຈັກກະພັດອາເມລິກາ ເພື່ອຕໍ່ສູ້ກັບຝ່າຍແນວລາວ. ເດີ່ນບິນເກົ່າເມືອງລ້ອງແຈ້ງ ຕັ້ງຢູ່ໃຈກາງເຫດສະບານເມືອງລ້ອງແຈ້ງ ແຂວງໄຊສົມບູນ ມີຄວາມຍາວ 1,700 ແມັດ, ກວ້າງປະມານ 15 ແມັດ, ປູດ້ວຍຢາງ 7 ຊັ້ນ, ມີຄວາມໜາ 40 ຊັງຕີແມັດ, ປະກອບມີ 4 ລານ ເປັນບ່ອນຈອດຍົນຢູ່ຕາມແຄມເດີ່ນ ແລະ ຫົວເດີ່ນເປັນບ່ອນພັກເຊົາ, ມີຫ້ອງການຈຳນວນ 3 ຫລັງ, ມີສະຖານທີ່ຫລິ້ນກິລາ, ມີໂຮງໝໍ, ເຮືອນຄົວ, ມີແມັກ, ສາງແກັບ, ເຄື່ອງນຸ່ງຖື, ມີສາງເກັບມ້ຽນນ້ຳມັນຍົນ ແລະ ອາວຸດຕ່າງໆ. ນອກນີ້ຢູ່ແຄມເດີ່ນ ຍັງມີຫໍຄອຍ ເພື່ອເປັນບ່ອນເຕືອນສັນຍານ, ລັກສະນະຂອງເດີ່ນເປັນຄ້ອຍຊັນລົງເລັກນ້ອຍ ເພື່ອໃຫ້ຍົນແລ່ນຂຶ້ນ-ລົງໄດ້ຢ່າງສະດວກ ແລະປອດໄພ.

ເດີ່ນບິນດັ່ງກ່າວ ຖືກສ້າງຂຶ້ນໃນປີ ຄ.ສ 1962 ແລະ ສຳເລັດໃນປີ ຄ.ສ 1964 ໂດຍແມ່ນນັກວິສະວະກອນ ຈາກປະເທດພິລິບປິນເປັນຜູ່ນຳພາກໍ່ສ້າງ. ຈຸດປະສົງສ້າງເດີ່ນບິ່ນ ແມ່ນເພື່ອເປັນບ່ອນຮັບໃຊ້ພາຫະນະຂົນສົ່ງທາງອາກາດເຂົ້າໃນຍຸດທະສາດການຕໍ່ສູ້ ເພື່ອຫວັງຍຶດເອົາສອງແຂວງ ໂດຍສະເພາະ ແຂວງຊຽງຂວາງ ແລະ ແຂວງຫົວພັນ ເຊິ່ງມີຍົນທັງໝົດ 11 ປະເພດ ໃນນັ້ນມີ: T28 ຈຳນວນ 12 ລຳ, ລາວໂກຕາ C121, C122 ຊະນິດລະ 12 ລຳ ແລະ C123 ຂະນາດໃຫຍ່ 4ໝາກປີ່ນ ຈຳນວນ 4 ລຳ ເປັນເຄື່ອງບິນສອດແນມ ຫລື ວ່າຊີ້ເປົ້າໝາຍ, ນອກນີ້ຍັງມີລາວໂກແຕ H3C, ວິເວີ, ປອກເຕີ, ຊຸບເປີເບັ່ນ, ເອລີກອບແຕະ ຈຳນວນລະ 12 ລຳ ແລະ ມີເຄື່ອງບິນສ່ວນຕົວ ຈຳນວນ 6 ລຳ ມີ H34 ຈຳນວນ 2 ລຳ, ລາກຸຕາ 2 ລຳ ບໍ່ຮູ້ຊື່ 2 ລຳ, ພາຍຫລັງໄດ້ຮັບການປົດປ່ອຍປີ 1975 ເປັນຕົ້ນມາເຖິງປະຈຸບັນ ເປັນເດີ່ນຮ້າງ.

## 17. ເຮືອນເກົ່າວາງປາວ.



ເຮືອນເກົ່າວາງປາວ ຕັ້ງຢູ່ໃຈກາງຂອງເທດສະບານເມືອງລ້ອງແຈ້ງ ແຂວງໄຊສົມບູນ. ເຊິ່ງເປັນສະຖານທີ່ໜຶ່ງ ທີ່ມີຄວາມສຳຄັນທາງດ້ານປະຫວັດສາດການຕໍ່ສູ້ກູ້ຊາດ ແລະ ມີລັກສະນະທາງດ້ານສະຖາປັດຕະຍະກຳ ຂອງອາຄານແບບຝຣັ່ງ, ເຮືອນຫລັງດັ່ງກ່າວ ເປັນໜຶ່ງໃນບັນດາເຮືອນພັກອາໄສຂອງ ນາຍພົນວາງປາວ ແລະ ບັນດາແກນນຳຂອງສັດຕູໃນສະໄໝນັ້ນ ເຊິ່ງຖືກສ້າງຂຶ້ນໃນປີ ຄສ 1966 ແລະ ສຳເລັດໃນປີ 1964 ໂດຍການອອກແບບ ແລະ ກໍ່ສ້າງຂອງນາຍຊ່າງທີ່ມາຈາກອຸດອນ (ປະເທດໄທ) ໂດຍນຳໃຊ້ປະຊາຊົນໃນເຂດບ້ານລ້ອງແຈ້ງ ເປັນກຳມະກອນໃນການກໍ່ສ້າງ. ນອນຢູ່ໃນເນື້ອທີ່ດິນປະມານ 1 ເຮັກຕາ, ຕົວອາຄານມີຄວາມກວ້າງຂະໜາດ 30x30 ແມັດ, ກໍ່ດ້ວຍຫີນຜາ, ເປັນອາຄານ 2 ຊັ້ນ, ມີດາດຟ້າທີ່ໃຊ້ເປັນບ່ອນເຮືອບິນລົງຈອດ. ໃນນັ້ນປະກອບມີທັງໝົດ 15 ຫ້ອງ, ບໍ່ນັບຫ້ອງໂຖງໃຫຍ່.

ຈຸດປະສົງຂອງການກໍ່ສ້າງ ແມ່ນເພື່ອເປັນບ່ອນພັກເຊົາ ໃຫ້ແກ່ນາຍພົນວາງປາວ ແລະ ເພື່ອເອກອ້າງເຖິງຄວາມຮັ່ງ ມີ, ຄວາມເຂັ້ມແຂງຂອງລູກແຫລ່ງຕີນມືຂອງພວກອາເມຣິກາ, ນອກຈາກຈະໃຊ້ເປັນບ່ອນພັກເຊົາແລ້ວ ຍັງໃຊ້ເປັນບ່ອນປະຊຸມລັບ, ປຶກສາຫາລື, ວຽກງານການທະຫານ ແລະ ກອງປະຊຸມໃຫຍ່ຂອງພວກມັນ. ນອກນັ້ນ ໃນບໍລິເວນດັ່ງກ່າວນີ້ ຍັງມີເຮືອນພັກ 1 ຫລັງ, ເຮືອນຄົວ 1 ຫລັງ ແລະ ເຮືອນນອນຂອງທະຫານຮັກສາການ ຫລື ເຮືອນປ້ອງກັນ 1 ຫລັງ, ເປັນເຮືອນ 2 ຊັ້ນ ຕັ້ງຢູ່ບໍລິເວນສ່ວນໜ້າເຮືອນໃນປະຈຸບັນ (ປະຈຸບັນແມ່ນເປ່ເພ ແລະ ຖືກມ້າງລົງ). ພາຍຫລັງທີ່ປະເທດຊາດໄດ້ຮັບການປົດປ່ອຍ ເຮືອນຫລັງດັ່ງກ່າວ ໄດ້ກາຍມາເປັນອະນຸສອນສະຖານທີ່ສຳຄັນທາງດ້ານການທ່ອງທ່ຽວ ເພື່ອເປັນສະຖານທີ່ໃນການສຶກສາອົບຮົມຄົນຮຸ່ນຫລັງໃຫ້ເຫັນ ເຖິງໂທດນິສະກຳຂອງພວກຂາຍຊາດ ທີ່ສ້າງໄວ້ຕໍ່ກັບປະຊາຊົນລາວບັນດາເຜົ່າໃນອະດີດ. ໃນປະຈຸບັນສະຖານທີ່ດັ່ງກ່າວ ແລະ ພາກສ່ວນທີ່ກ່ຽວຂ້ອງກໍໄດ້ເອົາໃຈໃສ່ບູລະນະສ້ອມແປງບາງຢ່າງຄືນໃໝ່ເຊັ່ນ: ເຮືອນຄົວ, ກຳແພງ, ຕາໜ່າງກັນຂະໂມຍ, ບານປະຕູ-ປ່ອງຢ້ຽມ ແລະ ອື່ນໆ ເພື່ອຮອງຮັບການທ່ອງທ່ຽວໃນບໍລິເວນດັ່ງກ່າວ.

## 18. ພະລາດຊະວັງເກົ່າ.

ພະລາດຊະວັງເກົ່າ ຕັ້ງຢູ່ບ້ານລ້ອງແຈ້ງ ເມືອງລ້ອງແຈ້ງ ແຂວງໄຊສົມບູນ ຕັ້ງຫ່າງຈາກເທດສະບານເມືອງ ໄປທາງທິດຕາເວັນຕົກສຽງໃຕ້ປະມານ 2 ກິໂລແມັດ, ເຊິ່ງຕັ້ງຢູ່ເທິງປ້ອມພູສູງຊັນ ເໜືອລະດັບໜ້ານໍ້າທະເລປະມານ 1113 ແມັດ ແລະ ກົງກັນຂ້າມກັບສັນພູໝອກ. ຖືກສ້າງຂຶ້ນໃນປີ ຄສ 1964-1967 ເປັນອາຄານ 2 ຊັ້ນ, ກໍ່ດ້ວຍດິນຈີ່, ຫລັງຄາມຸງດ້ວຍກະເບື້ອງ. ຈຸດປະສົງຂອງການສ້າງ ແມ່ນເພື່ອເປັນສະຖານທີ່ພັກເຊົາພະອໍ ລະກາຍໃນຊົມທິວທັດທໍາມະຊາດທີ່ສວຍງາມຂອງລ້ອງແຈ້ງ ໃນເວລາທີ່ພະອົງ ຫລື ພະບໍລົມມະວົງສານຸວົງທຸກພະອົງ ທີ່ສະເດັດມາຈາກນະຄອນຫລວງພະບາງ ໃນສະໄໝນັ້ນ ເພື່ອມາຢ້ຽມຢາມເທດສະການບຸນກິນຈຽງຂອງຊົນເຜົ່າມົ້ງ ທີ່ຢູ່ໃນເຂດລ້ອງແຈ້ງ ໃນເມື່ອຮອດຍາມປີໃໝ່ຂອງທຸກໆປີ ແລະ ເປັນການເປີດໂອກາດ ໃຫ້ແກ່ບ່າວໄພ່ຣາຊະດອນ ທີ່ຂຶ້ນກັບເຂດລ້ອງແຈ້ງ ໄດ້ເຂົ້າເຝົ້າກາບທູນລາຍງານວຽກງານລາດຊະການ ໃນການດໍາລົງຊີວິດຂອງປະຊາຊົນໃນດິນແດນລ້ອງແຈ້ງ.





## 19. ຂຸມມໍລະກົດ.





ໃນບໍລິເວນເທິງສັນພູໝອກ ເຕັມໄປດ້ວຍຮ່ອງຮອຍສິ່ງເສດເຫລືອຈາກສົງຄາມປົດປ່ອຍຊາດ ເປັນຕົ້ນ: ເສດລູກ ປືນໃຫຍ່-ນ້ອຍ, ເສດລະເບີດ, ບໍ່ມບີ, ເສດເຮືອບິນສູ້ຮົບ, ຄຸມຄອງ ແລະ ອື່ນໆ. ຂຸມມໍລະກົດ ຫລື ຂຸມຄອງສູ້ຮົບ ກໍເປັນອີກຮ່ອງຮອຍທາງປະຫວັດສາດໜຶ່ງ ທີ່ມີຄວາມໝາຍ ແລະ ຄວາມສຳຄຳຫລາຍ ທີ່ຍັງປະກົດໃຫ້ເຫັນຢູ່ເທິງສັນພູໝອກ ທີ່ຍັງບໍ່ທັນຖືກທຳລາຍ ແລະ ຍັງຄົງຮັກສາສະພາບເດີມເອົາໄວ້ໄດ້ດີ ເຖິງແມ່ນວ່າ ການເວລາຈະຜ່ານໄປຫລາຍປີພໍສົມຄວນ. ຂຸມມໍລະກົດ ຕັ້ງຢູ່ໃຈກາງສັນພູໝອກ ຖືກສ້າງຂຶ້ນໃນປີ ຄ.ສ 1969 ໂດຍແມ່ນນາຍພົນວາງປາວ ເປັນຜູ່ນຳພາກໍ່ສ້າງ ແລະ ນາຍຊ່າງແມ່ນ  ທ້າວ ນາ. ເຊິ່ງຖືກສ້າງຂຶ້ນ ໃຫ້ເປັນສະຖານທີ່ຍຸດທະສາດໃນການລົບໄພ ຂອງທະຫານວາງປ່າວ ໃນສະໄໝສົງຄາມໄດ້ເປັນຢ່າງດີ, ໂຄງສ້າງຂອງຂຸມດັ່ງກ່າວ ເຮັດດ້ວຍແກັບກາບບົມ, ມີລັກສະນະມົນກົມ, ກ້ວາງປະມານ 4 ແມັດ ແລະ ສູງ 2 ແມັດ, ມີທາງເຂົ້າ-ອອກ 2 ດ້ານຄື: ດ້ານຂ້າງ ແລະ ດ້ານເທິງ. ສຳລັບທາງເຂົ້າ-ອອກດ້ານເທິງ ແມ່ນມີຫລັງຄາປົກຄຸມເປັນຢ່າງດີ ໃນຍາມທີ່ຝົນຕົກ ກໍຈະສາມາດກັນຝົນໄດ້. ໃນປະຈຸບັນຂຸມມໍລະກົດ ໄດ້ເປັນສະຖານທີ່ສຳຄັນທາງດ້ານປະຫວັດສາດ ເພື່ອໃຫ້ຄົນຮຸ່ນໜຸ່ມລູກຫລານສຶກສາຮຽນຮູ້ ກ່ຽວກັບປະຫວັດຄວາມເປັນມາໃນການຕໍ່ ສູ້ປົດປ່ອຍຊາດ ແລະ ຍັງເປັນສະຖານທີ່ທ່ອງທ່ຽວທາງດ້ານປະຫວັດສາດ ທີ່ສຳຄັນຂອງເມືອງລ້ອງແຈ້ງອີກດ້ວຍ.

## 20. ສິມເກົ່າວັດຈອມແຈ້ງ.




ສິມເກົ່າວັດຈອມແຈ້ງ ຕັ້ງຢູ່ເທດສະບານເມືອງລ້ອງແຈ້ງ ເຊິ່ງເປັນສິມໜຶ່ງທີ່ມີຄວາມເກົ່າແກ່ ແລະ ມີຄວາມສວຍງາມທາງດ້ານສະຖາປັດຕະຍະກຳ, ມີຄວາມໂດດເດັ່ນທາງດ້ານການແກະສະຫລັກຫລວດລາຍຕ່າງໆຢ່າງສວຍງາມ ແລະ ມີລັກສະນະຮູບຊົງແບບລາວເດີມ. ສິມນີ້ຖືກສ້າງຂຶ້ນໃນປີ ຄ.ສ 1963 ແລະ ສຳເລັດລົງໃນປີ ຄ.ສ 1966 ໂດຍແມ່ນທ່ານ ພິຕ ວາງປາວ ເປັນຜູ່ນຳພາ ແລະ ສະໜອງງົບປະມານ ໃນການຈ້າງນາຍຊ່າງມາຈາກອຸດອນ (ປະເທດໄທ) ມາຮັບເໝົາກໍ່ສ້າງ,

ປະກອບມີສິມ 1 ຫລັງມີຂະໜາດ 14x20 ແມັດເພື່ອເປັນສະຖານທີ່ເກັບມ້ຽນຊັບສົມບັດທາງສາດສະໜາ, ອາຣາມ 1 ຫລັງຂະໜາດ 10x25 ແມັດ ໃຊ້ເປັນບ່ອນທາພິທີທາງສາດສະໜາ ແລະ ກໍ່ສ້າງກຸຕິ 1 ຫລັງ ຂະໜາດ 8x12 ແມັດ ໃຊ້ເປັນທີ່ພັກຂອງພະສົງສຳມະເນນ.

ພາຍຫລັງສຳເລັດການກໍ່ສ້າງໃນປີ ຄ.ສ 1966 ໃນເດືອນ 11 ລາວ ຂຶ້ນ 15 ຄ່ຳ ປະຊາຊົນຊາວເມືອງລ້ອງແຈ້ງ ກໍໄດ້ພ້ອມຈິດພ້ອມໃຈກັນຈັດພິທີອັນເຊີນພະອົງຕື້ ແລະ ພະນ້ອຍຈຳນວນໜຶ່ງ ເຂົ້າມາສະທິດຢູ່ສິມວັດດັ່ງກ່າວ ພ້ອມທັງເຮັດບຸນສະເຫລີມສະຫລອງບ່ອນບິສົມ ໃຫ້ຜູ່ມີຈິດໃຈໃສສັດທາໃນທົ່ວປະເທດ ມາຮ່ວມທຳບຸນຕັກບາດຕາມຮີດຄອງປະເພນີ. ມາຮອດກາງເດືອນຕຸລາ ປີ ຄ.ສ 1970 ກໍໄດ້ອັນເຊີນພະພຸດທະຮູບຈຳນວນ 6 ອົງມາແຕ່ກຸງເທບ (ປະເທດໄທ) ມາສະທິດຢູ່ສິມວັດແຫ່ງນີ້ ປະກອບມີພະອົງຕື້ 1 ອົງ, ພະແກ້ວ 1 ອົງ ແລະ ພະນ້ອຍທີ່ປັ້ນດ້ວຍຫີນ ແລະ ໄມ້ 4 ອົງ; ໂດຍມີຍາພໍ່ ມີ ເປັນເຈົ້າອະທິການວັດ, ມີຄູບາ ບຸນຕາ, ຄູບາ ຄຳເມິງ ແລະ ມີຈົວນ້ອຍທັງໝົດ 4 ອົງ, ໃນນັ້ນ, ມີຊົນ ເຜົ່າກຶມມຸ 3 ອົງ, ຊົນເຜົ່າມົ້ງ 2 ອົງ ແລະ ຊົນເຜົ່າລາວ 1 ອົງ; ຄູບາສ່ວນຫລາຍ ແມ່ນມາຈາກບ້ານຢອນ ເມືອງແປກ ແຂວງຊຽງຂວາງ. ຈາກນັ້ນ ໃນທຸກໆປີກໍໄດ້ຈັດງານບຸນຕັກບາດຕາມຮີດຄອງປະເພນີ ຮີດ 12 ຄອງ 14 ອັນດີງາມຂອງຊາດລາວຊາວພຸດ ເພື່ອໃຫ້ຊາວພຸດທະສາສະນິກກະຊົນ ຊາວເມືອງລ້ອງແຈ້ງ ໄດ້ມີສະຖານທີ່ສັກກະລະບູຊາ ແລະ ເປັນທີ່ເພິ່ງທາງຈິດໃຈຂອງຄົນຊາວພຸດ.

ມາຮອດປີ ຄ.ສ 1975 ປະເທດຊາດໄດ້ຮັບການປົດປ່ອຍ, ລົບລ້າງລະບອບລາຊາອານາຈັກລາວ ແລະ ສະຖາປານາເປັນປະເທດ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວຂຶ້ນ ຈຶ່ງເຮັດໃຫ້ຖານທັບຝ່າຍກຳລັງພິເສດ ທີ່ຕໍ່ຕ້ານກັບການປະຕິບັດຢູເຂດພາກ 2 ລ້ອງແຈ້ງ ຖືກປາລາໄຊລົງ, ສັດຕູ ແລະ ລູກແຫລ່ງຕີນມືທີ່ສຳຄັນ ຈຶ່ງໂຕນໜີໄປຢູ່ປະເທດໄທ, ສ່ວນປະຊາຊົນຢູ່ເຂດລ້ອງແຈ້ງ ກໍສົນລະວົນແຕກຕື່ນໜີອອກຈາກລ້ອງແຈ້ງໄປທຸກທິດທາງ, ຍັງເຫລືອປະຊາຊົນຈຳນວນໜຶ່ງ ທີ່ຍັງອາໄສຢູ່ເຂດລ້ອງແຈ້ງ. ດ້ວຍເຫດນີ້ຈຶ່ງເຮັດໃຫ້ສິມວັດຈອມແຈ້ງຖືກປ່ອຍປະລະເລີຍໃຫ້ກາຍເປັນສິມຮ້າງ, ຂາດການດູແລບົວລະບັດຮັກສາ ນັບແຕ່ເວລານັ້ນມາ ແລະ ເຮັດໃຫ້ກຸ່ມຄົນບໍ່ດີ ເຂົ້າມາງັດແງະລັກເອົາຊັບສິນທີ່ມີຄ່າພາຍໃນສິມ.

ພາຍຫລັງທີ່ປ່ອຍປະລະເລີຍ ໃຫ້ກາຍເປັນສິມຮ້າງມາເປັນເວລາເກືອບ 40 ກວ່າປີ ຈົນມາເຖິງຕົ້ນປີ 2014 ຫລັງຈາກທີ່ເມືອງລ້ອງແຈ້ງ ໄດ້ຮັບການປະກາດສ້າງຕັ້ງຂຶ້ນ ທາງອຳນາດປົກຄອງເມືອງ ຈຶ່ງໄດ້ແຕ່ງຕັ້ງຄະນະຮັບ ຜິດຊອບໂດຍມອບໃຫ້ແນວລາວສ້າງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ໃນການລະດົມທຶນດ້ວຍການແຜ່ປັດໄຈນຳທຸກພາກສ່ວນ ເພື່ອບູລະນະປະຕິສັງຂອນສິມເກົ່າວັດຈອມແຈ້ງຄືນໃໝ່.

# ນະຄອນຫຼວງວຽງຈັນ

# 1. ພຣະທາດຫລວງວຽງຈັນ.



ພຣະທາດຫຼວງວຽງຈັນ ປະກາຍສີທອງຄຳອັນຮຸ່ງເຮືອງ ຕັ້ງຢູ່ຢ່າງໂດດເດັ່ນທີ່ເຂດບ້ານທາດຫຼວງ, ເມືອງໄຊເສດຖາ, ເປັນປູຊະນີຍະສະຖານບູຮານອັນເປັນສັນຍາລັກຂອງປະເທດລາວ, ເປັນພຣະທາດໂລກະຈຸນລະມະນີ ທີ່ບັນຈຸພຣະສາລີກະທາດຂອງພຣະພຸດທະເຈົ້າ ແລະ ເປັນສູນລວມແຫ່ງຈິດວິນຍານຂອງປວງຊົນລາວທັງຊາດ. ພຣະທາດຫຼວງວຽງຈັນ ຖືກສ້າງຂຶ້ນເທື່ອທຳອິດເມື່ອປີ ພສ 236 ໂດຍການນຳພາຂອງເຈົ້າເມືອງວຽງຈັນ ຈັນທະບູລີ ປະສິດທິສັກ ຫຼື ບຸລີຈັນ  ແລະ

ຖືກຕໍ່ເຕີມສ້າງຕື່ມອີກໃນປີ ຄສ 1556 ໂດຍເຈົ້າໄຊຍະເສດຖາທິຣາຊ ກະສັດຜູ້ສະຖາປະນາວຽງຈັນ ເປັນນະຄອນຫຼວງຂອງອານາຈັກລາວລ້ານຊ້າງ. ມາຮອດປີ ຄສ 1957, ລັດຖະບານລາວ ພາຍໃຕ້ພະບໍລິມມະຊູປະຖໍາຂອງ ເຈົ້າສີສະຫວ່າງວົງ ກໍ່ໄດ້ນໍາພາປະຊາຊົນປັ້ນ ພະບໍລິມມະຣູບຂອງ ເຈົ້າໄຊຍະເສດຖາທິຣາຊ ປະດິດສະຖານໄວ້ ຢູ່ໜ້າທາງເຂົ້າພະທາດດ້ານຕາເວັນຕົກ ເພື່ອເປັນອະນຸສາວະລີທີ່



ພະອົງໄດ້ສ້າງພະທາດຫຼວງ ຂຶ້ນມາເປັນທີ່ສັກກະລະບູຊາຈົນຮອດປະຈຸບັນ. ພຣະທາດຫຼວງສູງ 45 ແມັດມີໃບສີມມາອອ້ມ 228 ໃບ, ມີບໍລິວານ (ທາດນ້ອຍ) ອ້ອມຮອບ 30 ອົງເອີ້ນວ່າປະລະມີສາມສິບທັດ, ຕົນພຣະທາດແຕ່ດ້ານຕາເວັນອອກ ຫາດ້ານຕາເວັນຕົກຍາວ 69 ແມັດ, ແຕ່ດ້ານເໜືອຫາໃຕ້ຍາວ 68 ແມັດ  ແລະ ມີກົມມະລຽນດ້ານນອກອອ້ມພຣະທາດຫຼວງ ແຕ່ລະດ້ານຍາວ 91,75 ແມັດ. ໃນວັນເພັງເດືອນສິບສອງຂອງທຸກໆປີ (ໄລຍະເດືອນ ຕຸລາ - ເດືອນພະຈິກ) ປະຊົນລາວຈາກທຸກສາລະທິດ ຈະພາກັນເດີນທາງມາສະເຫຼີມສະຫຼອງບຸນນະມັດສະການພຣະທາດຫຼວງ ເຊິ່ງເປັນບຸນມະໂຫລານທີ່ໃຫຍ່ທີ່ສຸດໃນປະເທດລາວ ຖືກຈັດຂຶ້ນເປັນເວລາ 7 ມື້ 7 ຄືນ ພ້ອມການສະແດງມະໂຫລີ, ສິລະປະ-ວັນນະຄະດີ ແລະ ງານວາງສະແດງສິນຄ້າ ຈາກຫຼາກຫຼາຍຫ້າງຮ້ານ. ບຸນພະທາດຫຼວງສະແດງໃຫ້ເຫັນເຖິງວັດທະນະທໍາ ແລະ ຮີດຄອງປະເພນີ ອັນດີງາມຂອງຊາວພຸດ ກໍ່ຄືຊາວລາວທັງຊາດໂດຍມີພິທີສໍາຄັນທາງສາດສະໜາເຊັ່ນ: ພິທີແຫ່ຜາສາດເຜິ້ງ, ວຽນທຽນ ແລະ ຕັກບາດຖວາຍທານ ເຊິ່ງມີພະສົງຈາກທົ່ວທຸກແຂວງໃນປະເທດລາວ ເດີນທາງມາຮ່ວມ ແລະ ພາຍຫລັງພິທີຕັກບາດ ກໍ່ມີການແຂ່ງຂັນຕີຄີ ເຊິ່ງເປັນກິລາພື້ນເມືອງ ທີ່ຈັດຂຶ້ນໃນທຸກໆປີໄລຍະບຸນດັ່ງກ່າວ.

ຕົກມາປີ 2016 -2017 ພັກ ແລະ ລັດຖະບານ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໄດ້ຕົກລົງປະຕິສັງຂອນ ແລະ ຍົກຍອດຄໍາຂຶ້ນສູ່ຈອມພະທາດຫລວງ ແລະ ພະທາດປາລະມີ 32 ທາດ ສໍາເລັດ, ເຮັດໃຫ້ພະທາດຫລວງ ເບັງປາລາມີ ແລະ ຄວາມສວຍງາມຍິ່ງຂຶ້ນ.

## 2. ຫໍທຳມະສະພາ.



ຫໍທຳມະສະພາ ຕັ້ງຢູ່ບໍລິເວນວັດທາດຫຼວງເໜືອ ເຊິ່ງຢູ່ທາງທິດເໜືອຂອງພຣະທາດຫຼວງວຽງຈັນ. ຫໍທຳມະສະພາຖືກສ້າງຕັ້ງຂຶ້ນ ດ້ວຍສະຖາປັດຕະຍະກຳອັນງົດງາມແບບສິນລະປະລາຍລາວ ເຊິ່ງມີຂະໜາດໃຫຍ່ ແລະ ກວ້າງຂວາງຖືກໃຊ້ເປັນສະຖານທີ່ປະກອບພິທີກຳຕ່າງໆທາງສາດສະໜາຂອງພຣະສົງ.





## 3. ປະຕູໄຊ.

ປະຕູໄຊ ຫລື ຊື່ເດີມເອີ້ນວ່າ "ອະນຸສາວະລີໄຊຊະນະ" ມັກຖືກປຽບທຽບໂດຍນັກທ່ອງທ່ຽວວ່າເປັນ "ອາກເດີ ທຣີອົມ" (ຢູ່ນະຄອນປາຣີ ປະເທດຝຣັ່ງ) ຂອງລາວເພາະວ່າ ມີລັກສະນະໂດດເດັ່ນຕັ້ງຢູ່ໃຈກາງນະຄອນຫລວງວຽງຈັນ ບໍລິເວນຕອນກາງຂອງຖະໜົນລ້ານຊ້າງ (ຄົນສະໄໝກ່ອນມັກເອີ້ນກັນວ່າ ຊອງ ເອລີເຊ້ ເປັນຖະໜົນຢູ່ໃນປາຣີເຊັ່ນກັນ). ປະຕູໄຊຖືກສ້າງຂຶ້ນນັບແຕ່ປີ ຄສ 1957-1962 ເພື່ອເປັນອານຸສອນໃຫ້ແກ່ການປະກາດເອກະລາດຂອງ ສປປ ລາວ ອອກຈາກແອກປົກຄອງຂອງລ່າເມືອງຂຶ້ນຝຣັ່ງ ໂດຍສ້າງຕາມສັດສ່ວນເລກຕຳລາອັນສຳຄັນຂອງຊາວພຸດ ຄື: 3-7-9. ຮູບຊົງດ້ານເທິງຂອງປະຕູໄຊ ແມ່ນມີລັກສະນະຄ້າຍຄືກັບຜາສາດ ທັດສ໌ມາຮານ ທີ່ຢູ່ປະເທດອິນເດຍ ແລະດ້ານໃນ ຖືກປະດັບປະດາດ້ວຍສິນລະປະລວດລາຍອັນເປັນເອກະລັກຂອງລາວ ທີ່ມີສີສັນງົດງາມ ລວມທັງຮູບປັ້ນນາງກິນນາລີ. ປະຕູໄຊມີຄວາມສູງ 49 ແມັດ ດັ່ງນັ້ນ ນັກທ່ອງທ່ຽວທີ່ມາທ່ຽວຊົມຈຶ່ງສາມາດຂຶ້ນໄປສູ່ສຸດ ເພື່ອຊົມທິວທັດອັນສວຍງາມຂອງຕົວເມືອງໃນນະຄອນຫລວງວຽງຈັນ. ຢູ່ບໍລິເວນດ້ານລຸ່ມ ກໍເປັນເດີ່ນກວ້າງ ປະກອບໄປດ້ວຍອ່າງນ້ຳພຸ, ດອກໄຟສີ ແລະ ດອກໄມ້ຫລາຍສະນິດ-ຫລາຍແນວພັນ ທີ່ສົ່ງກິ່ນອັນຫອມຫວນ ແລະ ສີສັນສົດໃສຕະການຕາ. ດ້ວຍເຫດນີ້ ປະຕູໄຊ ຈຶ່ງເປັນອີກສະຖານທີ່ທ່ອງທ່ຽວໜຶ່ງ ທີ່ລືຊື່ໃນນະຄອນຫລວງວຽງຈັນ ກໍຄືໃນປະເທດລາວເຮົາ ເຊິ່ງສາມາດດຶງດູດນັກທ່ອງທ່ຽວເປັນຈຳນວນຫລວງຫລາຍໃຫ້ເຂົ້າມາທ່ຽວຊົມ ແລະ ຖ່າຍຮູບເກັບພາບໄວ້ເປັນທີ່ລະນຶກ ເພື່ອສະແດງໃຫ້ຮູ້ວ່າໄດ້ເດີນທາງມາຮອດ ນະຄອນຫລວງວຽງຈັນແລ້ວ. (ທ່ານສາມາດຂຶ້ນໄປຊົມດ້ານເທິງຂອງປະຕູໄຊໄດ້ທຸກມື້ເວລາ 8:00 - 16:00 ໂມງ).

## 4. ໂຮງກາຍະສິນ.



ໂຮງກາຍະສິນ ຖືກສ້າງຂຶ້ນໃນປີ 1986 ຢູ່ທີ່ຖະໜົນເຈົ້າອານຸວົງ, ບ້ານສະຫວ່າງ, ເມືອງຈັນທະບູລີ. ສະຖານທີແຫ່ງນີ້ ມີຊື່ສຽງຫລາຍ ແລະ ເປັນທີ່ນິຍົມສຳລັບຈັດການສະແດງ ທາງດ້ານກາຍະສິນຍັງຖືກໃຊ້ເຂົ້າໃນການສະແດງສິນລະປະ-ວັນນະຄະນະດີຕ່າງໆ (ຮອງເພັງ, ຂັບ-ລຳ ແລະ ຟ້ອນ), ລະຄອນ, ການແຂ່ງຂັນສີກມວຍ ແລະ ກິດຈະກຳອື່ນໆ ເນື່ອງໃນວັນສຳຄັນຂອງຊາດ, ເຊິ່ງຈະມີການໂຄສະນາ-ປະຊາສຳພັນໃຫ້ທ່ານຮັບຊາບລ່ວງໜ້າກ່ຽວກັບວັນ, ເວລາ ແລະ ລາຍການສະແດງຜ່ານທາງໂທລະພາບ, ວິທະຍຸ ຫລື ໜັງສືພິມ.



## 5. ວັດສີເມືອງ.





ວັດສີເມືອງ ເປັນບ່ອນຕັ້ງຂອງເສົາຫລັກເມືອງ ຢູ່ເຂດບ້ານສີເມືອງ, ເມືອງ ຈັນທະບູລີ ເຊິ່ງມີປະຫວັດອັນເກົ່າແກ່ ທີ່ເລົ່າຂານສືບຕໍ່ກັນມາວ່າ ໃນສະໄໝກ່ອນ ຕອນທີ່ຊາວເມືອງພວມເຮັດພິທີປັກຫລັກເມືອງຢູ່ນັ້ນ ມີແມ່ຍິງຄົນໜຶ່ງຊື່ວ່າ ນາງ ສີ ເຊິ່ງກຳລັງຖືພາໄດ້ສະຫລະຊີບໂດດລົງໄປໃນຂຸມນັ້ນ, ນາງໄດ້ຖືກຝັງໄປພ້ອມຫລັກເມືອງ ແລະ ກາຍເປັນຜີຫລັກເມືອງ ຈຶ່ງເປັນທີ່ມາຂອງຊືວັດສີເມືອງແຫ່ງນີ້. ຍ້ອນວ່າວັດສີເມືອງເປັນສະຖານທີ່ສັກສິດ ຈຶ່ງໄດ້ກາຍເປັນທີ່ເພິ່ງທາງໃຈໃຫ້ແກ່ຊາວລາວ ແລະ ເປັນສະຖານທີ່ ທີ່ຊາວຕ່າງຊາດໃຫ້ຄວາມສົນໃຈເຂົ້າມາສຶກສາ ແລະ ທ່ຽວຊົມເປັນຈຳນວນຫຼວງຫຼາຍ. ປັດຈຸບັນ, ປະຊາຊົນທັງພາຍໃນ ແລະ ຕ່າງປະເທດໄດ້ພາກັນເຂົ້າມາສັກກະລະບູຊາ-ກາບໄຫວ້ວັດສີເມືອງທຸກໆມື້ ໂດຍສະເພາະວັນອັງຄານ ແລະ ວັນສິນ ຄົນສ່ວນໃຫຍ່ ແມ່ນມັກມາຂໍພອນ, ເສຍເຄາະ ບູຊາໂຊກ, ມາບະ-ມາບົນນຳເຈົ້າແມ່ສີເມືອງ ໃນສິ່ງທີ່ຕົນປາດຖະໜາ ແລະ ເມື່ອສົມຫວັງແລ້ວກໍມາແກ່ບະຢູ່ທີ່ນີ້ ຕາມຄວາມເຊື່ອຂອງແຕ່ລະຄົນ. ທຸກໆປີໃນມື້ຂຶ້ນ 15 ຄ່ຳເດືອນ 12 ຂອງລາວເຊິ່ງກົງກັບມື້ບຸນນະມັດສະການພະທາດຫລວງ ຈະມີພິທີແຫ່ປະສາດເຜິ້ງ ເຊິ່ງເລີ່ມຕົ້ນແຮ່ຈາກວັດສີເມືອງແຫ່ງນີ້ໄປຫາ ພຣະທາດຫລວງວຽງຈັນ. ວັດສີເມືອງເປີດໃຫ້ຄົນເຂົ້າທ່ຽວຊົມ ແລະ ກາບໄຫວ້ບູຊາທຸກມື້ ຕັ້ງແຕ່ຕອນເຊົ້າມືດຈົນເຖິງຄ່ຳ.

## 6. ຫໍຫລັກເມືອງ.

ກົງກັນຂ້າມກັບວັດສີເມືອງ ແມ່ນຫໍຫລັກເມືອງ ເຊິ່ງເປັນບ່ອນປົກປັກຮັກສາຮ່ອງຮອຍມໍຣະດົກທາງປະຫວັດສາດທີ່ຖືກຄົ້ນພົບຢູ່ສະຖານທີ່ແຫ່ງນີ້ ໂດຍນັກບູຮານະຄະດີໄດ້ທຳການຄົ້ນຄວ້າວິໃຈແລ້ວພົບວ່າ ວັດຖຸບູຮານນີ້ແມ່ນເປັນວັດຖຸທີ່ປະກອບເຂົ້າໃນພິທີການກໍ່ສ້າງເສົາຫລັກເມືອງວຽງຈັນໃນສະໄໝກ່ອນ ໂດຍໄດ້ພົບຫີນຫລັກເມືອງຈຳນວນ473 ຫລັກສ່ວນໃຫຍ່ຟອກດ້ວຍຄຳປົວ ແລະ ແກະສະຫລັກເປັນລວດລາຍງົດງາມ. ສິ່ງທີ່ສຳຄັນທີ່ສຸດແມ່ນເພິ່ນໄດ້ຄົ້ນພົບສີລາຈາລຶກ ໜຶ່ງແຜ່ນທີ່ໄດ້ລະບຸເລີກຍາມກົງກັບມື້ວັນຈັນ, ແຮມ 10 ຄ່ຳເດືອນ 3, ຈສ 901 ປີກຸນ ປີກັດໃຄ້ ເຊິ່ງກົງກັບວັນທີ 16 ກຸມພາ ຄສ 1540 ຣາຊະການຂອງພະເຈົ້າໂພທິຊະຣາຊ ເຊິ່ງເປັນບິດາຂອງເຈົ້າໄຊຍະເຊດຖາທິຣາຊ. ກຸ່ມຫີນຫລັກເມືອງດັ່ງກ່າວຖືກຈັດວາງໄວ້ເປັນ 3 ກຸ່ມຫ່າງກັນປະມານ 1,5 ແມັດ ແລະ ຫໍຫລັກເມືອງທີ່ຫາກໍ່ສ້າງຂຶ້ນມາໃໝ່ນີ້ແມ່ນກວມເອົາຫີນເສມາທັງ 3 ກຸ່ມ ແລະ ຕັ້ງຢູ່ບ່ອນເກົ່າແຕ່ເດີມເພື່ອເປັນການຮັກສາຄວາມໝາຍອັນສັກສິດທີ່ບັນພະບູລຸດໄດ້ກຳນົດໄວ້ ແລະ ປະຕິບັດຕາມຮີດເກົ່າຄອງເດີມທີ່ມີມາແຕ່ບູຮານ.



## 7. ຫໍພຣະແກ້ວ.

ຫໍພະແກ້ວ ຕັ້ງຢູ່ເຂດ ບ້ານຊຽງຍືນ, ເມືອງຈັນທະບູລີ, ກົງກັນຂ້າມກັບ ວັດສີສະເກດ ແລະ ໃກ້ກັບພະຣາຊະວັງເກົ່າ (ຫໍຄໍາ) ເຊິ່ງປະຈຸບັນເປັນສໍານັກງານປະທານປະເທດ. ສະໄໝກ່ອນ ຫໍພຣະແກ້ວ ຕັ້ງຢູ່ພາຍໃນວັດເກົ່າແກ່ໃນເຂດພຣະຣາຊະວັງ ຖືກສ້າງຂຶ້ນໂດຍພະເຈົ້າໄຊຍະເຊດຖາທິລາຊ ໃນລະຫວ່າງປີ ຄສ 1565-1779 ເຊິ່ງເປັນບ່ອນປະດິດສະຖານຂອງ “ພຣະແກ້ວມໍຣະກົດ” ເຖິງແມ່ນວ່າໃນປະຈຸບັນຈະບໍ່ມີພະແກ້ວມໍຣະກົດແລ້ວ ອັນເນື່ອງມາຈາກເຫດການທາງປະຫວັດສາດທີ່ຜ່ານມາ, ແຕ່ຫໍພະແກ້ວກໍຍັງຄົງເປັນທີສັກກະລະບູຊາຂອງຊາວລາວ ຍ້ອນເປັນແຫລ່ງຮວບຮວມວັດຖຸບູຮານອັນສໍາຄັນ ແລະ ລໍ້າຄ່າເປັນຕົ້ນແມ່ນພະພຸດທະຮູບປາງຕ່າງໆ ທີ່ຫລໍ່ຈາກທອງແດງ, ສີລາຈາກລຶກ ແລະ ອື່ນໆເມື່ອຍ່າງເລາະຊົມບໍລິເວນພາຍໃນສະຖາປັດຕະຍະກໍາອັນສວຍງາມນີ້ ທ່ານຈະຮູ້ສຶກໄດ້ເຖິງຄວາມສະຫງົບຮົ່ມເຢັນທີ່ແຕກຕ່າງຈາກບ່ອນອື່ນໆ. ຫໍພຣະແກ້ວເປີດໃຫ້ເຂົ້າທ່ຽວຊົມທຸກມື້ ເວລາ 8:00-17:00 ໂມງ.





## 8. ວັດສີສະເກດ.

ວັດສີສະເກດ ເປັນວັດທີ່ມີຄວາມສຳຄັນທາງປະຫວັດສາດ ເພາະວ່າເປັນວັດດຽວ ທີ່ລອດພົ້ນຈາກການຈູດເຜົາທຳລາຍຂອງສັກດິນາຕ່າງດ້າວ ທີ່ມາຮຸກຮານລາວ ໃນລະຫວ່າງປີ ຄສ 1827-1828. ວັດສີສະເກດໄດ້ຖືກສ້າງຂຶ້ນໃນປີ ຄສ 1818 ໂດຍການນຳພາຂອງເຈົ້າອານຸວົງ, ກະສັດອົງສຸດທ້າຍ ຂອງຣາຊະວົງວຽງຈັນ ແລະ ມີຄວາມພິເສດທີ່ສຸດ ເນື່ອງຈາກວ່າ ເປັນວັດທີ່ບັນຈຸຫໍໄຕປິດົກ, ກຸດຕິຂອງເຈົ້າເພັດຊະຣາຊ ແລະ ຢູ່ຕາມຝາດ້ານໃນຂອງສິມ ກໍ່ມີຮູບແຕ້ມລວດລາຍງົດງາມ. ບໍລິເວນວັດ ມີກົມມະລຽນອ້ອມສີ່ດ້ານ, ແຕ່ລະດ້ານ ມີພຣະພຸດທະຮູບນ້ອຍທີ່ເຮັດດ້ວຍປະທາຍເພັດ ລວມມີ 120 ອົງ. ສ່ວນຢູ່ຂ້າງອຸໂບສົດມີພຣະພຸດທະຮູບປະທານອົງໃຫຍ່ອັນສັກສິດ, ຢູ່ຂ້າງກ້ຳຊ້າຍ ແລະ ຂວາຂອງພຣະປະທານ ກໍມີພຣະພຸດທະຮູບທອງຫລໍ່ ປາງຫ້າມຍາດ 2 ອົງ ເຊິ່ງເຈົ້າອານຸວົງ ໄດ້ສ້າງໄວ້ເທົ່າກັບເລົ່າຄີງຂອງເພິ່ນເອງ. ນອກນັ້ນ ຢູ່ຕາມຊ່ອງຝາດ້ານໃນສິມ ກໍຍັງມີພຣະພຸດທະຮູບອົງນ້ອຍໆ ລວມທັງໝົດ 2052 ອົງ ເຊິ່ງໃນນັ້ນເຮັດດ້ວຍເງິນບຸ 276 ອົງ. (ເວລາເປີດໃຫ້ເຂົ້າທ່ຽວຊົມແມ່ນເລີ່ມແຕ່ 8:00-17:00 ໂມງ ຂອງທຸກໆມື້)





## ໙. ວັດອົງຕື້ ມະຫາວິຫານ.



ວັດອົງຕື້ ມະຫາວິຫານ ເຄີຍມີຊື່ວ່າ ວັດສີພູມ (ໄຊຍະພູມ) ຖືກສ້າງຂຶ້ນໂດຍ ເຈົ້າໄຊເຊດຖາທິຣາຊ ໃນປີ ຄສ 1566, ຕັ້ງຢູ່ເຂດ ບ້ານວັດຈັນ ເມືອງຈັນທະບູລີ ເຊິ່ງເປັນໜຶ່ງໃນບັນດາວັດທີເກົ່າແກ່ທີ່ສຸດໃນ ນະຄອນຫຼວງວຽງຈັນ ແລະ ມີຄວາມໝາຍສໍາຄັນທາງບູຮານສະຖານ ກໍຄືທາງປະຫວັດສາດ. ວັດອົງຕື ມີພຣະອຸໂບສົດໃຫຍ່ຢູ່ໜຶ່ງຫລັງ ກວ້າງ 16,34 ແມັດ, ຍາວ 40 ແມັດ ແລະ ສູງປະມານ 25 ແມັດ ເຊິ່ງມີພຣະເຈົ້າໃຫຍ່ອົງຕື້ເປັນປະທານ ມີໜ້າຕັກກວ້າງ 3,40 ແມັດ ແລະ ສູງ 5,80 ແມັດ. ວັດອົງຕື້ ເຄີຍເປັນສະຖານທີ່ປະກອບພິທີສໍາຄັນທາງລັດຖະການເຊັ່ນ: ພິທີດື່ມນໍ້າສັດຕະຍາບັນ (ດື່ມນໍ້າສາບານ) ຂອງບັນດາກະສັດກໍຄືຜູ້ນໍາປະເທດໃນສະໄໝກ່ອນປົດປ່ອຍ. ແຕ່ກ່ອນວັດອົງຕື້ ມີອານາເຂດຕິດກັບວັດອິນແປງ, ວັດມີໄຊ ແລະ ວັດຫາຍໂສກ ແຕ່ຍ້ອນການພັດທະນາຕົວເມືອງ ແລະ ການຕັດຖະໜົນຫົນທາງ ຈຶ່ງເຮັດໃຫ້ທັງສີ່ວັດຖືກແຍກອອກຈາກກັນດັ່ງທີ່ເຮົາເຫັນໃນປະຈຸບັນ.

## 10. ວັດອິນແປງ ວໍຣະວິຫານ.

ວັດອິນແປງ ເປັນສະຖານທີ່ທ່ອງທ່ຽວ ທີ່ປະສົມປະສານທາງດ້ານປະຫວັດສາດ ແລະ ວັດທະນະທຳ ເຊິ່ງຕັ້ງຢູ່ໃຈກາງເທດສະບານຂອງນະຄອນຫລວງວຽງຈັນ, ທາງທິດເໜືອຂອງວັດອິງຕື້. ມີການເລົ່າຂານສືບທອດຕໍ່ກັນມາວ່າ: ໃນໄລຍະການກໍ່ສ້າງວັດອິນແປງນີ້, ໄດ້ມີພະຍາອິນ ແປງກາຍເປັນຜູ້ເຖົ້າມາຊ່ວຍເຫລືອ ແລະ ແນະນຳໃນການ ກໍ່ສ້າງວັດ ແລະ ຫລັງຈາກນັ້ນພະຍາອິນ ກໍຍັງໄດ້ແປງກາຍເປັນຄູບາເຖົ້າອົງໜຶ່ງ ເພື່ອມາຊ່ວຍສ້າງພຣະພຸດທະຮູບນຳອີກ ຈຶ່ງເປັນທີ່ມາຂອງຊື່ວັດອິນແປງ ຈົນເທົ່າທຸກມື້ນີ້. ວັດນີ້ຖືໄດ້ວ່າເປັນບູຮານສະຖານທີ່ເກົ່າແກ່ແຫ່ງໜຶ່ງໃນປະເທດລາວ ຄ້າຍຄືກັນກັບວັດອົງຕື້ ແລະ ວັດສີເມືອງ. ປະຊາຊົນລາວໃນ ນະຄອນຫລວງວຽງຈັນ ກໍຄືແຂກທີ່ມາຈາກທ້ອງຖິ່ນອື່ນໄດ້ໃຫ້ຄວາມເຄົາລົບ ແລະ ສັດທາວັດນີ້ຫລາຍ ເນື່ອງຈາກວ່າເປັນສະຖານທີ່ບັນຈຸວັດຖຸບູຮານອັນມີຄ່າ ແລະ ສຳຄັນທາງສາດສະໜາພຸດ ເປັນຕົ້ນແມ່ນ ພຣະພຸດທະຮູບອິນແປງ, ໃບເສມາຫີນຮູບສິງ ແລະ ເສົາຫີນ. ຢູ່ດ້ານໜ້າຂອງວັດແຫ່ງນີ້ ຍັງມີເດີ່ນກວ້າງ ໄວ້ສຳລັບກິດຈະກຳທາງສາດສະໜາ ໃນວັນເທດສະການຕ່າງໆ...





## 11. ພິພິທະພັນໄກສອນ ພົມວິຫານ.



ພິພິທະພັນໄກສອນ ພົມວິຫານ ຕັ້ງຢູ່ແຄມຖະໜົນໄກສອນ ພົມວິຫານ ເຂດຫລັກ 6, ບ້ານຈອມມະນີ ເມືອງໄຊເສດຖາ ເຊິ່ງໄດ້ເປີດຂຶ້ນຢ່າງເປັນທາງການໃນວັນທີ 13ທັນາ ປີ 1995 ເນື່ອງໃນໂອກາດ ສະເຫຼີມສະຫຼອງວັນຄ້າຍວັນເກີດຂອງປະທານໄກສອນ ພົມວິຫານຄົບຮອບ 75ປີ. ຫໍພິພິທະພັນແຫ່ງນີ້ ເປັນອານຸສອນສະຖານ ແລະ ແຫຼ່ງຮຽນຮູ້ກ່ຽວກັບ ປະທານໄກສອນພົມວິຫານ ວິລະບູຣຸດແຫ່ງຊາດ, ອະດີດປະທານປະເທດ ແລະ ຜູ້ນໍາທີ່ດີເດັ່ນຄົນໜຶ່ງ ຂອງປວງຊົນລາວ ໃນການກອບກູ້ເອກະລາດຂອງຊາດ ແລະ ນໍາພາສ້າງສາປະເທດລາວສູ່ຍຸກໃໝ່. ສະຖານທີ່ນີ້ເປັນບ່ອນຮອບ ຮອມເລື່ອງລາວທຸກຢ່າງກ່ຽວກັບ ປະທານໄກສອນ ພົມວິຫານ ເປັນຕົ້ນແມ່ນຊີວະປະຫວັດ ນັບຕັ້ງແຕ່ເພິ່ນເກີດ ວັນທີ (13ທັນວາ ປີ ຄສ 1920) ຈົນເຖິງໄລຍະທີ່ເພິ່ນ ໄດ້ນໍາພາປະຊາຊົນລາວ ເຄື່ອນໄຫວປະຕິວັດຕໍ່ສູ້ຕ້ານສັດຕູຜູ້ຮຸກຮານ ເພື່ອປົດປ່ອຍຊາດ, ກອບກູ້ເອົາເອກະລາດ ແລະ ສ້າງສາປະເທດຊາດສູ່ການປ່ຽນແປງໃໝ່, ທ່ານຈະໄດ້ຮຽນຮູ້ເຖິງເຫດການທາງປະຫວັດສາດຂອງຊາດລາວ ແລະ ເລື່ອງລາວຂອງທ່ານປະທານໄກສອນ ພົມວິຫານ ທີ່ຖືກຖ່າຍທອດຜ່ານບັນດາຮູບພາບ, ຮູບປັ້ນ, ເອກະສານ, ປຶ້ມບັນທຶກ ແລະ ວັດຖຸເຄື່ອງໃຊ້ອື່ນໆ.

## 12. ອະນຸສອນສະຖານ ປະທານສຸພານຸວົງ.

ອະນຸສອນສະຖານ ປະທານສຸພານຸວົງ ຕັ້ງຢູ່ແຄມຖະໜົນ ໄກສອນ ພົມວິຫານ ເຂດບ້ານໂພນສະອາດ ເມືອງໄຊເສດຖາ. ໃນເມື່ອກ່ອນ, ສະຖານທີ່ແຫ່ງນີ້ ເຄີຍເປັນທີ່ພັກ ຂອງສະເດັດເຈົ້າສຸພານຸວົງ, ອະດີດຜູ້ນໍາທີ່ເຄົາລົບຮັກຂອງຊາດລາວ ແລະ ຕໍ່ມາໄດ້ຖືກບູລະນະ ໃຫ້ເປັນພິພິທະພັນລະນຶກເຖິງ ຄຸນງາມຄວາມດີ, ນໍ້າໃຈຮັກຊາດ ແລະ ຄວາມເສຍສະຫຼະອັນສູງສົ່ງ ຂອງທ່ານໃນການຕໍ່ສູ້ ເພື່ອຍາດເອົາເອກະລາດມາສູ່ລາວ. ພິພິທະພັນສຸພານຸວົງ ໄດ້ເລີ່ມເປີດໃຫ້ແຂກເຂົ້າຊົມຢ່າງເປັນທາງການ ໃນວັນທີ 30 ພະຈິກ 2005 ເປັນຕົ້ນມາ. ພິພິທະພັນດັ່ງກ່າວ ເປັນບ່ອນວາງສະແດງຮູບພາບກ່ຽວກັບ ການປະຕິບັດພາລະກິດປົດປ່ອຍຊາດ ແລະ ການເຄື່ອນໄຫວເຮັດກິດຈະກໍາຕ່າງໆ ຊຶ່ງສະເດັດເຈົ້າສຸພານຸວົງ ລວມທັງເປັນບ່ອນສະສົມເຄື່ອງໃຊ້ສ່ວນຕົວຫຼາຍໆຢ່າງຂອງທ່ານ.



## 13. ພິພິທະພັນກອງທັບ.



ພິພິທະພັນກອງທັບ ຕັ້ງຢູ່ໃກ້ກັບກະຊວງປ້ອງກັນປະເທດ ແຄມຖະໜົນໄກສອນ ພົມວິຫານ, ເຂດບ້ານໜອງສ້າງທໍ່ ເມືອງໄຊເສດຖາ ພິພິທະພັນແຫ່ງນີ້ ສ້າງຂຶ້ນໃນປີ 1976 ເພື່ອວາງສະແດງມູນເຊື້ອການຕໍ່ສູ້ ປົກປັກຮັກສາປະເທດຊາດໃນຫຼາຍຍຸກຫຼາຍສະໄໝ ຕ້ານການຮຸກຮານຂອງສັກດິນາຕ່າງດ້າວ ກໍຄືພວກຈັກກະພັດລ່າເມືອງຂຶ້ນ, ໂດຍສະເພາະແມ່ນ ເປັນບ່ອນຮວບຮວມ ແລະ ວາງສະແດງອາວຸດຍຸດໂທປະກອນ, ເຄື່ອງມື ແລະ ຮູບພາບຕ່າງໆ ຂອງກອງທັບປະຊາຊົນລາວໃນສະໄໝຕໍ່ສູ້ກູ້ຊາດ ຈົນເຖິງໄລຍະທີ່ປະເທດຊາດ ໄດ້ຮັບການປົດປ່ອຍ ແລະ ສະຖາປະນາໃຫ້ເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນປີ 1975. ສະຖານທີ່ນີ້ຍັງໄດ້ຮວບຮວມບັນດາເອກະສານ ທີ່ບັນທຶກເຫດການສຳຄັນທາງປະຫວັດສາດ ແລະ ຮູບປັ້ນຂອງອະດີດຜູ້ນຳ ແລະ ວິລະບູລຸດຂອງປວງຊົນລາວ. ຢູ່ບໍລິເວນດ້ານນອກຂອງພິພິທະພັນດັ່ງກ່າວ ຍັງມີການວາງສະແດງລົດຖັງ ແລະ ເຮືອບິນ ທີ່ເຄີຍໃຊ້ເຂົ້າໃນການຕໍ່ສູ້ໃນປາງສົງຄາມ.

## 14. ພິພິທະພັນປ້ອງກັນຄວາມສະຫງົບ.

ພິພິທະພັນປ້ອງກັນຄວາມສະຫງົບ ຕັ້ງຢູ່ຖະໜົນໄກສອນ ພົມວິຫານ, ຊ້າຍສວາຍກັບ ພິພິທະພັນກອງທັບ ແລະ ຫ່າງຈາກສະຖານີລົດໂດຍສານຕະຫຼາດເຊົ້າ ປະມານ 3 ກິໂລແມັດ. ພິພິທະພັນປ້ອງກັນຄວາມສະຫງົບ (ຫໍພິພິທະພັນຕຳຫຼວດ) ຖືກສ້າງຂຶ້ນໃນປີ 2011 ເພື່ອເປັນການສະເຫຼີມສະຫຼອງການກໍ່ຕັ້ງກຳລັງຮັກສາຄວາມສະຫງົບແຫ່ງຊາດ ກໍຄືບັນດາຕຳຫຼວດຂອງລາວ (ປີ1961) ຄົບຮອບ 50 ປີ. ພິພິທະພັນດັ່ງກ່າວ ມີການວາງສະແດງຮູບພາບທາງປະຫວັດສາດກວ່າ 8,000 ຮູບ ທີ່ສ່ອງແສງໃຫ້ເຫັນເຖິງຜົນງານອັນດີເດັ່ນ ແລະ ການເສຍສະຫຼະອັນຍິ່ງໃຫຍ່ ຂອງກຳລັງປ້ອງກັນຄວາມສະຫງົບໃນການຮັກສາຄວາມປອດໄພຂອງປະຊາຊົນລາວ.



## 15. ສວນເຈົ້າອານຸວົງ.

ເມື່ອທ່ານໄດ້ເດີນທາງມາຮອດ ນະຄອນຫຼວງວຽງຈັນ, ພໍຕົກແລງມາ ພວກເຮົາຂໍແນະນຳໃຫ້ທ່ານ ຍ່າງເລາະຊົມສວນເຈົ້າອານຸວົງ ເຊິ່ງເປັນກະສັດອົງສຸດທ້າຍຂອງອານາຈັກລາວລ້ານຊ້າງ. ສວນດັ່ງກ່າວ ຕັ້ງຢູ່ແຄມແມ່ນ້ຳຂອງ ຖະໜົນເຈົ້າຟ້າງຸ່ມ ເຊິ່ງຫາກໍ່ໄດ້ຮັບການປັບປຸງໃຫ້ມີຄວາມສວຍງາມຂຶ້ນໃນບໍ່ດົນມານີ້. ສວນເຈົ້າອານຸວົງ ມີຮູບປັ້ນເຈົ້າອານຸວົງ ທີ່ສູງ 17 ແມັດ ຕັ້ງຢູ່ຢ່າງສະຫງ່າຜ່າເຜີຍແລະຫັນໜ້າໄປທາງແມ່ນ້ຳຂອງ. ຮູບປັ້ນດັ່ງກ່າວ ຖືກຫຼໍ່ຂຶ້ນຈາກທອງແດງ ແລະ ມີນ້ຳໜັກທັງໝົດເຖິງ 8 ໂຕນ. ນອກຈາກນັ້ນ, ສວນເຈົ້າອານຸວົງ ຍັງມີເດີ່ນຫຍ້າອັນກວ້າງໃຫຍ່ ປົກຄຸມໄປດ້ວຍຕົ້ນໄມ້ທີ່ຂຽວສົດງົດງາມ, ເດີ່ນຫຼິ້ນສຳລັບເດັກນ້ອຍ ພ້ອມເຄື່ອງຫຼິ້ນຕ່າງໆເຊິ່ງ ເໝາະແກ່ການຍ່າງເລາະ, ນັ່ງຫຼິ້ນ ແລະ ອອກກຳລັງກາຍ ເພື່ອພັກຜ່ອນຍ່ອນໃຈກັບຄອບຄົວ ແລະ ໝູ່ເພື່ອນ ຫຼັງຈາກເລີກວຽກງານໃນຍາມແລງ. ບໍ່ພຽງແຕ່ເທົ່ານັ້ນ, ສວນດັ່ງກ່າວຍັງມີອາຫານແຊບໆ ທີ່ບັນດາພໍ່ຄ້າ ແລະ ແມ່ຄ້າມາຂາຍໃຫ້ທ່ານນຳອີກ.



## 16. ຕະຫລາດກາງຄືນແຄມຂອງ.

ຕະຫລາດກາງຄືນແຄມຂອງ ຕັ້ງຢູ່ແຄມແມ່ນ້ຳຂອງ, ຖະໜົນເຈົ້າຟ້າງຸ້ມ ເຊິ່ງບໍ່ໄກຈາກສວນເຈົ້າອະນຸວົງ ແລະ ໃກ້ກັບສາມແຍກປາກປ່າສັກ. ທຸກໆແລງ ຈະມີພໍ່ຄ້າ ແລະ ແມ່ຄ້າ ພາກັນມາເປີດຮ້ານຂາຍເຄື່ອງຂອງຕ່າງໆ ບໍ່ວ່າຈະເປັນ ເສື້ອຜ້າ, ເກີບ, ກະເປົາ, ເຄື່ອງໃຊ້ຂອງສອຍ ແລະ ຂອງທີ່ລະນຶກຕ່າງໆ ລຽງລາຍໄປຕາມເສັ້ນທາງຍ່າງທີ່ມີຄວາມຍາວປະມານ 1 ກິໂລແມັດ. ຕະຫຼາດກາງຄືນແຄມຂອງແຫ່ງນີ້ ເປັນສະຖານທີ່ທ່ອງທ່ຽວ ທີ່ນິຍົມຫຼາຍສຳລັບນັກທ່ອງທ່ຽວ ທັງຊາວລາວ ແລະ ຊາວຕ່າງປະເທດເຊິ່ງມັກຍ່າງເລາະຊົມ ແລະ ເລືອກຊື້ເຄື່ອງ ພ້ອມທັງເລາະຊື້ອາຫານແຊບໆ ຫລາກຫຼາຍປະເພດ. ຕະຫລາດກາງຄືນແຄມຂອງ ເປີດບໍລິການທຸກມື້ ເລີ່ມແຕ່ເວລາ 17:00-22:00ໂມງ.





## 17. ຕາດຫີນຄັນນາ.

ຕາດຫີນຄັນນາຕັ້ງຢູ່ ເມືອງນາຊາຍທອງ ຫ່າງຈາກເທດສະບານນະຄອນຫລວງວຽງຈັນ ໄປທາງທິດເໜືອປະມານ 25 ກິໂລແມັດ. ເຖິງວ່າ ຕາດຫີນຄັນນາຈະເປັນຕາດທີ່ມີຂະໜາດບໍ່ໃຫຍ່ຫລາຍ ແຕ່ກໍ່ເປັນແຫຼ່ງທ່ອງທ່ຽວທີ່ນິຍົມມາແຕ່ດົນນານ ເນື່ອງຈາກເປັນຕາດທີ່ມີຄວາມສວຍງາມ, ມີນໍາໃສໄຫຼເຢັນ ແລະ ປົກຄຸມໄປດ້ວຍ ທາມະຊາດອັນຂຽວສົດງົດງາມ ດຶງດູດນັກທ່ອງທ່ຽວໃຫ້ມາທ່ຽວຊົມເປັນຈໍານວນຫລວງຫລາຍ. ຢູ່ທີ່ນີ້ ທ່ານສາມາດພັກຜ່ອນຢ່ອນອາລົມ ແລະ ເຮັດກິດຈະກໍາທີ່ມ່ວນຊື່ນກັບຄອບຄົວ ແລະ ໝູ່ເພື່ອນໄດ້ຫຼາຍຢ່າງ ເປັນຕົ້ນແມ່ນການລິງຫຼິ້ນຕາດ, ການລ່ອງເຮືອ ແລະ ການກິນເຂົ້າປ່າສາມັກຄີຢູ່ແຄມຕາດ. ເຊິ່ງທ່ານສາມາດປຸ່ງແຕ່ງອາຫານກິນເອງ ຫລືວ່າຈະຊື້ອາຫານທ້ອງຖິ່ນທີ່ບໍລິການໂດຍປະຊາຊົນໃນຂົງເຂດດັ່ງກ່າວກໍໄດ້.





## 18. ຕາດຊອນ.



ຫ້ວຍຊອນ ກໍ່ເປັນສະຖານທີ່ທ່ອງທ່ຽວແຫ່ງໜຶ່ງ ໃນນະຄອນຫຼວງວຽງຈັນ ທີ່ໄດ້ຮັບຄວາມນິຍົມມາເປັນເວລາດົນນານ. ຫ້ວຍຊອນນີ້ຕັ້ງຢູ່ ບ້ານນາຍາງ, ເມືອງນາຊາຍທອງ, ໄປຕາມເສັ້ນທາງ ເລກທີ 13 ເໜືອ ເມື່ອເຖິງບ້ານນາຊອນ ລ້ຽວຊ້າຍເຂົ້າໄປ ປະມານ 30 ນາທີ. ຫ້ວຍຊອນ ເປັນບ່ອນທີ່ເໝາະແກ່ການພັກຜ່ອນທ້າຍອາທິດ ແລະ ວັນພັກຕ່າງໆ ເຊິ່ງທ່ານສາມາດລິງຫຼິ້ນນ້ຳຢ່າງມ່ວນຊື່ນ, ສຳຜັດກັບທຳມະຊາດທີ່ຂຽວງາມ ພ້ອມກິນເຂົ້າສາມັກຄີ-ຊຸມແຊວກັບໝູ່ຄູ່ ແລະ ຄອບຄົວ. ພິເສດຍັງມີການບໍລິການຂີ່ຊ້າງເລາະໄປຕາມຮົ່ມໄມ້ ຫາຍໃຈເອົາອາດກາດທີ່ສົດຊື່ນ ແລະ ຮົ່ມເຢັນ ທ່ານຍັງຈະໄດ້ຕື່ນຕາຕື່ນໃຈ ກັບການສະແດງຂອງຊ້າງ ທີ່ຄຳຮູ້ອີກດ້ວຍ.

## 19. ຕາດມູນ-ຕາດປ່າໄລ່-ຕາດວັງນອງ-ຕາດວັງນ້ຳເຜິ້ງ.



ຕາດມູນ-ຕາດປ່າໄລ່-ຕາດວັງນອງ-ຕາດວັງນ້ຳເຜິ້ງ ຕັ້ງຢູ່ບໍ່ຫ່າງຈາກກັນຫລາຍຢູ່ໃນບໍລິເວນບ້ານວຽງຄຳ ຫາ ບ້ານຈຳປາ, ຫ່າງຈາກເສັ້ນທາງເລກທີ 13 ເໜືອ ເຂົ້າໄປທາງແຍກບ້ານໜອງແຕ່ງ ປະມານ 15 ນາທີ. ຕາດເຫລົ່ານີ້ ເປັນສະຖານທີ່ທ່ອງທ່ຽວທີ່ນິຍົມສຳລັບພັກຜ່ອນຢ່ອນໃຈ ຂອງຊາວເມືອງວຽງຈັນ ແລະ ແຂກທີ່ມາຈາກທ່ອງຖິ່ນໃກ້ຄຽງ ເນື່ອງຈາກວ່າ ຢູ່ບໍ່ໄກຈາກຕົວເມືອງຫລາຍ. ຢູ່ບໍລິເວນຕາດມີນ້ຳໃສໄຫຼເຢັນ ແລະ ອ້ອມຮອບໄປດ້ວຍຕົ້ນໄມ້ ແລະ ທຳມະຊາດອັນຂຽວງາມ ເໝາະແກ່ການຊຸມແຊວ-ກິນເຂົ້າປ່າ ແລະ ລິງຫຼິ້ນນ້ຳເຢັນສະບາຍກັບຄອບຄົວ ແລະ ໝູ່ເພື່ອນໃນມື້ພັກທ້າຍອາທິດ ແລະ ວັນພັກ.

## 20. ສວນວັດທະນະທຳຊຽງຄວນ.

ສວນວັດທະນະທຳຊຽງຄວນ ຕັ້ງຢູ່ເທິງຝັ່ງແມ່ນ້ຳຂອງ ເຂດບ້ານຊຽງຄວນ ເມືອງຫາດຊາຍຟອງ, ໄກ້ກັບຂົວມິດຕະພາບລາວ-ໄທ ແຫ່ງທີໜຶ່ງ ຫ່າງຈາກຈຸດໃຈກາງຂອງນະຄອນຫລວງວຽງຈັນ ໄປທາງໃຕ້ປະມານ 24 ກິໂລແມັດ. ສວນວັດທະນະທຳແຫ່ງນີ້ ຖືກສ້າງຂຶ້ນໃນປີ ຄ.ສ 1958 ໂດຍ ປູ່ ບຸນເຫລືອ ສຸຣິຣັດ ເຊິ່ງປະກອບມີຮູບປັ້ນ ຍັ່ງຍາຍກວ່າ 200 ແບບ ໃນນັ້ນ ມີທັງຮູບຄົນ, ຜີ, ເທວະດາ, ພະ, ສັດເດລະສານ ແລະ ອື່ນໆ ທີ່ຢູ່ໃນອະລິຍະບົດຕ່າງໆ ແລະ ມີການປະສົມປະສານລະຫວ່າງຄະຕິພຸດ ແລະ ຮິນດູ ຊວນໃຫ້ເກີດຄວາມຮູ້ສຶກຊື່ນຊົມ, ອັດສະຈັນ ແລະ ຜິດສະຫວັງສົງໄສ ປະປົນກັນໄປເມື່ອໄດ້ພົບເຫັນ. ສິ່ງທີ່ໂດດເດັ່ນຢູ່ໃນອຸທິຍານແຫ່ງນີ້ ກໍຄືພະພຸດທະຮູບປາງນອນ (ປາງພຸດທະໄສຍາດ) ທີ່ມີຄວາມຍາວປະມານ 50 ແມັດ ແລະ ປະຕິມາກຳລາຫູຍັກ ທີ່ກຳລັງອາປາກຢູ່ ເຊິ່ງເປັນປະຕູເດີນທາງຂຶ້ນໄປສູ່ສະຫວັນຊັ້ນເຈັດ (ອອກຈາກປາກລາຫູໄປສູ່ຊັ້ນດາດຟ້າ). ສິ່ງເຫລົ່ານີ້ ໄດ້ສ້າງຄວາມສົນໃຈ ແລະ ດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ໃຫ້ມາທ່ຽວຊົມເປັນຈຳນວນຫລວງຫລາຍ.



## 21. ວັດພະບາດແອວຂັນ.

ວັດພະບາດແອວຂັນ ມີພະລານຫີນອັນສວຍງາມ ແລະ ຕົ້ນໄມ້ອັນສວຍງາມ ແລະ ຕົ້ນໄມ້ຮົ່ມເຢັນ ເໝາະແກ່ການພັກຜ່ອນຍ່ອນໃຈ, ຕັ້ງຢູ່ບ້ານນາຄວາຍ, ເມືອງໄຊທານີ ຫ່າງຈາກຕົວເມືອງວຽງຈັນ ປະມານ 30 ກິໂລແມັດ ຕາມເສັ້ນທາງໄປບ້ານເກີນ ແລ້ວແວ່ເຂົ້າໄປຕາມທາງໄປນານົກຂຸ້ມ ປະມານ 19 ກິໂລແມັດ. ວັດດັ່ງກ່າວ ຖືກຄົ້ນພົບໃນປີ 1936 ແລະ ໄດ້ຮັບການປະຕິສັງຂອນໃນປີ 1980 ເປັນຕົ້ນມາ, ມີເນື້ອທີ່ກວ່າ 840 ເຮັກຕາ ເຊິ່ງນອກຈາກນັ້ນ ເປັນບ່ອນກາບໄຫວ້ບູຊາແລ້ວ ຍັງມີສະຖານທີ່ທ່ອງທ່ຽວທາງທຳມະຊາດ ທີ່ຫຼາກຫຼາຍພາຍໃນບໍລິເວນວັດນີ້ເຊັ່ນ: ພຣະລານຫີນ, ຖໍ້າງູຊວງ ມີຫີນເປັນຮູບຮ່າງຂອງງູ, ມີຫົວ, ຫາງ ແລະ ເກັດ, ລຳຄີງຂອງໂຕງູຍາວເຖິງ 41 ແມັດ ແລະນໍ້າຕົກຕາດສູງປະມານ 430 ແມັດ. ສ່ວນລຸ່ມຂອງນໍ້າຕົກຕາດ ມີຮູບຮ່າງລັກສະນະຄືຮອຍຂອງພະບາດ ແລະ ສ່ວນເທິງ ເປັນຮູບລັກສະນະຄືຫົວຍັກ. ໜ້າສົນໃຈໄປກວ່ານັ້ນແມ່ນ ຖ້ຳຄູນ ເຊິ່ງເປັນຖໍ້າທີ່ສ້າງຊື່ສຽງໃຫ້ແກ່ວັດນີ້, ຢູ່ໃນຖໍ້າມີນໍ້າໃສ ແລະ ເຢັນພ້ອມປາດຸກສັກສິດ 3 ໂຕ, ເມື່ອຊາວພຸດທະສາສະນິກະຊົນ ຜູ້ທີ່ເຫຼື້ອມໃສສັດທາ ເຂົ້າໄປບູຊາ ເອົານໍ້າຢູ່ໃນຖໍ້ານີ້ມາດື່ມ ກໍ່ປາກົດວ່າ ຫາຍຈາກພະຍາດໂຣຄາ. ນັບແຕ່ປີ 2011 ເປັນຕົ້ນມາ, ເພິ່ນໄດ້ຈັດງານບຸນພະບາດແອວຂັນຂຶ້ນ ໃນວັນທີ 8,9 ແລະ 10 ເດືອນທັນວາຂອງທຸກໆປີ.





## 22. ວັດຖ້ຳພຣະລືສີ.

ວັດຖ້ຳພຣະລືສີ ຕັ້ງຢູ່ເຂດບ້ານໃໝ່, ເມືອງສີໂຄດຕະບອງ ຕາມເສັ້ນທາງເລກທີ 11B ຈາກເກົ້າລ້ຽວ ຢູ່ລະຫວ່າງຫຼັກກິໂລແມັດທີ 17 ຫຼືໃຊ້ເວລາໃນການເດີນທາງປະມານ 20ນາທີ ເປັນວັດປ່າທີ່ມີຄວາມສະຫງົບຮົ່ມເຢັນ ດ້ວຍຕົ້ນໄມ້ໃຫຍ່ພາຍໃນວັດ ຍັງມີຖ້ຳຂະໜາດນ້ອຍ ເຊິ່ງເປັນບ່ອນປະດິດສະຖານ ຂອງພະລືສີ ເຊິ່ງເປັນທີ່ມາຂອງຊື່ວັດນີ້. ນອກນັ້ນ ຍັງສາມາດ ຊົມຄວາມງາມຂອງ ສິມ ທີ່ສ້າງໃນແບບສິລະປະລາວເດີມ ແລະ ພາຍໃນວັດ ຍັງມີບໍ່ນ້ຳສັກສິດ ອີກດ້ວຍ. ໂດຍປົກກະຕິແລ້ວ ວັດແຫ່ງນີ້ ຈະມີນັກທ່ອງທ່ຽວ ຫຼື ຊາວພຸດເດີນທາງໄປມາກາບ ໄຫວ້ສັກກາລະບູຊາເປັນປະຈຳ ໂດຍສະເພາະແມ່ນໃນວັນສຳຄັນຕ່າງໆທາງພຸດທະສາ ສາສະ ນິກກະຊົນ ມາປະຕິບັດວິປັດສະນາກຳມະຖານ ຢູ່ວັດແຫ່ງນີ້ຢ່າງຫຼວງຫຼາຍ.

## 23. ເຮືອແພທ່າງ່ອນ.

ຮ້ານອາຫານເຮືອແພທ່າງ່ອນ ເປັນອີກສະຖານທີ່ໜຶ່ງ ທີ່ມີຄວາມສວຍງາມ ເປັນເອກກະລັກ ເຊິ່ງປະກອບມີເຮືອແພນ້ອຍ-ໃຫຍ່ 20 ກ່ວາລຳໄວ້ບໍລິການນັກ ທ່ອງທ່ຽວ ທີ່ຕ້ອງການຂີ່ແພ ລ່ອງຕາມນ້ຳງື່ມ ເພື່ອຊົມທິວທັດທຳມະຊາດອັນສວຍ ງາມ, ສຳຜັດກັບວິຖີຊີວິດຂອງປະຊາຊົນ ຢູ່ຕາມສອງຝັ່ງແມ່ນ້ຳງື່ມ ພ້ອມທັງຮັບ ປະທານອາຫານ ແລະ ເຄື່ອງດື່ມທີ່ແຊບຊ້ອຍ ບວກກັບຟັງສຽງເພງ ອັນອ້ອຍ ອິ່ນອອນຊອນ ເໝາະແກ່ການພັກຜ່ອນຢ່ອນໃຈເປັນທີ່ສຸດ. ຮ້ານອາຫານເຮືອແພ ຕັ້ງຢູ່ແຄມແມ່ນ້ຳງື່ມ ບໍລິເວນຂົວທ່າງ່ອນ, ມີອາຫານ ແລະ ເຄື່ອງດື່ມຫຼາກຫຼາຍປະ ເພດ ໃຫ້ທ່ານໄດ້ລອງຊີມ ໃນລາຄາທີ່ເໝາະສົມ.



## 24. ວັດຖ້ຳພະ.



ວັດຖ້ຳພະ ຕັ້ງຢູ່ເຂດບ້ານຫ້ວຍຫ້ອມ, ເມືອງສີໂຄດຕະບອງ ສາມາດເດີນທາງໄປຕາມເສັ້ນທາງ 11B ຈາກເກົ້າລ້ຽວ ຢູ່ລະຫວ່າງຫຼັກກິໂລແມັດທີ 19. ພາຍໃນວັດ ຈະມີສາລາພຣະພຸດທະຮູບເກົ່າແກ່ປາງຕ່າງໆ ຢູ່ປາກຖ້ຳ ຕິດກັບແມ່ນ້ຳຂອງ ເຊິ່ງມີພຸດທະສາສະນິກກະຊົນ ຫຼືນັກທ່ອງທ່ຽວ ມາກາບໄຫວ້ທ່ຽວຊົມ ເປັນປົກກະຕິ ໂດຍສະເພາະແມ່ນ ໃນມື້ວັນພັກ ຫຼື ໃນວັນສຳຄັນທາງພຸດທະສາສະໜາຕ່າງໆ, ນອກນັ້ນ ທ່ານຍັງສາມາດຊົມຄວາມງົດງາມຂອງສອງຟາກຝັ່ງແມ່ນ້ຳຂອງຍາມອາທິດອັດສະດົງ.



## 25. ວັດປ່າຖ້ຳເຄອກມ້າ.

ວັດປ່າຖ້ຳເຄອກມ້າ ຕັ້ງຢູ່ເຂດບ້ານຫ້ວຍຫ້ອມ, ເມືອງສີໂຄດຕະບອງ ເຊັ່ນດຽວກັນ ສາມາດເດີນທາງໄປຕາມເສັ້ນທາງ 11 B ຈາກເກົ້າລ້ຽວຫລຽບແຄມແມ່ນ້ຳຂອງ ຢູ່ລະຫວ່າງຫຼັກກິໂລແມັດທີ 20, ຫ່າງຈາກວັດຖ້ຳພະ ປະມານ 1 ກິໂລແມັດ, ເປັນວັດປ່າທີ່ສະຫງົບ ເຢັນສະບາຍ ແລະ ສວຍງາມດ້ວຍຜົນງານສິລະປະກຳ ຂອງຈິດຕະກອນທີ່ມີຄວາມສ້າງສັນຜ່ານຮູບປັ້ນລັກສະນະຕ່າງໆ ລຽງລາຍທົ່ວບໍລິເວນວັດ ເປັນຕົ້ນແມ່ນ ຮູບປັ້ນຂອງພຣະສັງກະຈາຍສີທອງອົງໃຫຍ່ ທີ່ຕັ້ງສະຫງ່າຢູ່ກາງວັດ, ພຣະພຸດທະຮູບປາງຕ່າງໆ ລວມຮູບປັ້ນຂອງໂຕມ້າ ເປັນສັນຍາລັກຂອງວັດແຫ່ງນີ້ ແລະ ນອກນັ້ນຍັງມີຈຸດຊົມວິວ ເຊິ່ງທ່ານສາມາດແນມເຫັນທັດສະນິຍະພາບຂອງສາຍແມ່ນ້ຳຂອງຢ່າງສວຍງາມ.



## 26. ພິພິທະພັນຜ້າໄໝບູຮານລາວ.

ພິພິທະພັນຜ້າໄໝບູຮານລາວ ຕັ້ງຢູ່ບ້ານໜອງທາ, ຫ່າງຈາກໂຮງກາຍະສິນແຫ່ງຊາດ ໄປທາງຕາເວັນອອກສ່ຽງເໜືອ ປະມານ 3 ກິໂລແມັດ, ແຕ່ເດີມ ພິພິທະພັນນີ້ ເຄີຍເປັນພິພິທະພັນຜ້າໄໝສ່ວນບຸກຄົນ ຂອງຄອບຄົວການຈະນາ, ແຕ່ພາຍຫຼັງ ໄດ້ຮັບການຊ່ວຍເຫຼືອ ຈາກບັນດາອົງການຈັດຕັ້ງສາກົນຕ່າງໆ ກໍ່ໄດ້ກາຍມາເປັນສູນວັດທະນໍາທໍາລາວ. ຫໍພິພິທະພັນດັ່ງກ່າວ ເປັນເຮືອນໄມ້ ເຊິ່ງໄດ້ວາງສະແດງແຜ່ນຜ້າຕ່າງໆ ທີ່ມີລວດລາຍງົດງາມ ຈາກຫຼາກຫຼາຍຊົນເຜົ່າຂອງລາວເຮົາ. ສະຖານທີ່ແຫ່ງນີ້ ຍັງເປັນບ່ອນສອນຕໍ່າຫູກ, ຍ້ອມໄໝ, ເຮັດອາຫານລາວ ແລະ ສອນຫຼິ້ນດົນຕີພື້ນເມືອງລາວອີກດ້ວຍ.



# ແຂວງບໍລິຄຳໄຊ

## 1. ນ້ຳຕົກຕາດຊາຍ.

ນ້ຳຕົກຕາດຊາຍ ເປັນນ້ຳຕົກແຫ່ງໜຶ່ງ ທີ່ມີຊື່ສຽງໃນເຂດເມືອງທ່າພະບາດ ກໍ່ຄືແຂວງບໍລິຄຳໄຊ ເຊິ່ງຕັ້ງຢູ່ບ້ານຫາດໄຄ້ ເຂດປ່າສະຫງວນແຫ່ງຊາດ ພູເຂົາຄວາຍ ໃກ້ກັບຕາດເລີກ. ຕາດຊາຍ ແມ່ນໄດ້ມີມາແຕ່ດົນນານ ແລະ ໃນເມື່ອກ່ອນ ບໍ່ມີໃຜຮູ້ວ່າ ນ້ຳຕົກຕາດຊາຍເກີດຂຶ້ນເມື່ອໃດ ໃນເມື່ອກ່ອນ ແມ່ນຍັງບໍ່ມີຄົນຮູ້ຫຼາຍ ມີແຕ່ປະຊາຊົນໃນແຖບນັ້ນທີ່ຮູ້ຈັກ ຈົນວ່າຖືກຄົ້ນພົບ ແລະ ເປີດເປັນສະຖານທີ່ທ່ອງທ່ຽວຢ່າງເປັນທາງການ ເມື່ອວັນທີ 26 ກັນຍາ 2003. ນ້ຳຕົກຕາດຊາຍຢູ່ຫ່າງຈາກທາງ ເລກທີ 13ໃຕ້ ປະມານ 16 ກິໂລແມັດ. ຖ້າເດີນທາງມາແຕ່ນະຄອນຫຼວງວຽງຈັນ ແມ່ນລ້ຽວຊາຍເຂົ້າໄປທາງແບ່ງ ບ້ານປ່າໄລ່ ແລ້ວລ້ຽວຂວາເຂົ້າ ບ້ານຫາດໄຄ້. ນ້ຳຕົກຕາດຊາຍເປັນນ້ຳຕົກຕາດທີ່ມີທິວທັດທາງທຳມະຊາດຊີວະນາໆພັນ ທີ່ສວຍງາມ ເລາະລຽບຕາມຕາມສາຍທາງແຄມນ້ຳຕົກຕາດ ມີດອກເຜີ້ງຫຼາຍສາຍພັນ ທີ່ເກີດຈາກທຳມະຊາດ ດອກເຜີ້ງດັ່ງກ່າວ ເປັນດອກໄມ້ ທີ່ອານຸລັກ ແລະ ປົກປັກຮັກສາ ໂດຍປ່າສະຫງວນແຫ່ງຊາດພູເຂົາຄວາຍ ໂດຍການມີສ່ວນຮ່ວມຂອງປະຊາຊົນໃນຂົງເຂດນັ້ນ. ນອກຈາກນັ້ນແລ້ວໃນບໍລິເວນດັ່ງກ່າວ ຍັງມີຕົ້ນໄມ້ທີ່ມີຂະໜາດໃຫຍ່ ແລະ ປ່າໄມ້ປ້ອງທີ່ຄອຍເປັນຮົ່ມເງົາໃຫ້ກັບແຂກທີ່ມາທ່ຽວຊົມ.



## 2. ນ້ຳຕົກຕາດເລີກ.



ຕາດເລີກ ຕັ້ງຢູ່ບ້ານຫ້ວຍເລີກ ເມືອງທ່າພະບາດ ຫ່າງຈາກເທດ ສະບານເມືອງດັ່ງກ່າວປະມານ 17 ກິໂລແມັດ ເປັນສະຖານທີ່ທ່ອງທ່ຽວທີ່ຂຶ້ນກັບປ່າສະຫງວນແຫ່ງຊາດພູເຂົາຄວາຍ, ເລີ່ມເປີດໃຫ້ບໍລິການຢ່າງເປັນທາງການແຕ່ປີ 2004. ຕາດເລີກ ເປັນນ້ຳຕົກຕາດທີ່ກີດຂວາງທິດທາງການໄຫຼຂອງກະແສແມ່ນ້ຳເລີກ ຈຶ່ງເຮັດໃຫ້ກະແສນ້ຳດັ່ງກ່າວ ໄຫຼເຊາະກ້ອນຫີນເປັນເວລາຫຼາຍລ້ານປີ ຈົນເຮັດໃຫ້ກາຍເປັນຮູບຫຼາຍລັກສະນະໃນປັດຈຸບັນ ແລະ ງົດງາມເປັນເອກະລັກ. ຢູ່ບໍລິເວນນີ້ ນັກທ່ອງທ່ຽວ ຍັງສາມາດຍ່າງປ່າ ເພື່ອສຶກສາຊີວະນາໆພັນ ແລະ ຕັ້ງເຕັ້ນຄ້າງຄືນນອນກາງປ່າ ເພື່ອສຳພັດກັບທຳມະຊາດຢ່າງແທ້ຈິງ ໂດຍການໃຫ້ຂໍ້ມູນຂອງຊາວບ້ານທີ່ບໍລິການນັກທ່ອງທ່ຽວ.

## 3. ຮອຍພະບາດ ຖ້ຳສະແນນ.



ຮອຍພະບາດຖ້ຳສະແນນ ຕັ້ງຢູ່ ບ້ານນາໄຊ ເມືອງທ່າພະບາດ ຫ່າງຈາກທາງເລກທີ 13ໃຕ້ 2 ກິໂລແມັດ. ຈຸດຂອງຮອຍພະບາດ ແມ່ນຢູ່ບໍລິເວນທາງຂຶ້ນພູ ເຂດປ່າສະຫງວນພູເຂົາຄວາຍ, ຢູ່ເໜືອຂຶ້ນໄປ ມີຖ້ຳນ້ອຍ ເອີ້ນວ່າຖ້ຳສະແນນ. ມີການຕັດເສັ້ນທາງເຂົ້າຫາ ໂດຍທຶນຜູ້ເຫຼື້ອມໄສສັດທາ, ມີສິ່ງອຳນວຍຄວາມສະດວກພື້ນຖານ ເຊັ່ນ: ສາລາ ແລະ ຫ້ອງນ້ຳ. ເປັນສະຖານທີ່ ທີ່ຊາວບ້ານໃຫ້ຄວາມເຊື່ອຖືວ່າ ໃຜທີ່ໄດ້ໄປຂໍພອນແລ້ວ ຈະໄດ້ດັ່ງປາດຖະໜາ.

## 4. ວັດໂພນສັນ.



ວັດໂພນສັນ ວັດຈອມທຳນາຄານິມິດ ຫຼື ພວກເຮົາເອີ້ນກັນວ່າ: ວັດໂພນສັນ ແມ່ນຕັ້ງຢູ່ບ້ານ ເມືອງທ່າພະບາດ ແຂວງບໍລິຄຳໄຊ  ຫ່າງຈາກນະຄອນຫຼວງວຽງຈັນ ປະມານ 75 ກິໂລແມັດ ເດີນທາງລົງມາຕາມເສັ້ນທາງ ເລກທີ່ 13 ໃຕ້ ໄປຮອດບ້ານພະບາດ ແລ້ວກໍ່ຈະເຫັນປ້າຍຊີ້ບອກຢູ່ທາງເບື້ອງຂວາມື ແວະເຂົ້າໄປປະມານ 2 ກມ ກໍ່ຈະເຫັນວັດນັ້ນຕັ້ງຢູ່ເທິງໂນນແຄມຝັ່ງ ຂອງແມ່ນ້ຳຂອງ. ວັນໂພນສັນ ເປັນວັດໜຶ່ງທີມີປະຫວັດຄວາມເປັນມາກ່ຽວກັບ ຕຳນານຂອງພະຍານາກ ເຊິ່ງຢູ່ໃກ້ກັບວັດພະບາດ ທີ່ມີຊື່ສຽງທາງດ້ານຮອຍພະບາດທີ່ປະທັບໄວ້ໃຫ້ບູຊາກາບໄຫວ້ ຈົນເຖິງທຸກວັນນີ້. ລັກສະນະຂອງວັດໂພນສັນແມ່ນຕັ້ງຢູ່ໂນນສູງ ທີ່ອ້ອມຮອບດ້ວຍຫ້ວຍນ້ຳ ແລະ ເປັນວັດທີ່ເກົ່າແກ່ມາແຕ່ດົນນານເປັນຈຸດໜຶ່ງທີ່ມີປະກົດການທາງທຳມະຊາດ (ບັງໄຟພະຍານາກ) ເກີດຂຶ້ນໃນທຸກປີ ຂອງວັນເພັງ 15 ຄ່ຳ ຂອງເດືອນ 11 ລາວ ແລະ ເປັນວັດທີປະຊາຊົນໃນເຂດນັ້ນ ກາບໄຫວ້ເຄົາລົບນັບຖື.



## 5. ວັດພະບາດ.

ວັດພະບາດ ເຊິ່ງເປັນວັດໜຶ່ງທີ່ມີຮອຍພະບາດ, ຫີນສີລາແລງ, ພະນອນ, ພະຊ່ຽງ, ເຈດີພະບາດ ທີ່ເກົ່າແກ່ມາເຫີງນານ ເປັນເຄົາລົບນັບຖື ຂອງຊາວເມືອງທ່າພະບາດ ແລະ ປະຊາຊົນ ຊາວພຸດທະສາສະໜາ ເພື່ອມາກາບໄຫວ້ບູຊາ ເປັນສິລິມຸງຄຸນໃຫ້ແກ່ຕົນເອງ ບໍ່ວ່າຈະເຮັດຫຍັງຕ່າງໆ ແມ່ນແຕ່ການເດີນທາງ ກໍ່ຍັງເຊື່ອວ່າ ຖ້າໄດ້ຂໍພອນຈາກສະຖານທີ່ສັກສິດນີ້ ກໍ່ຈະເດີນທາງດ້ວຍຄວາມສະດວກ ແລະ ປອດໄພ. ວັດພະບາດ ແມ່ນໄດ້ປະຕິສັງຂອນ ເລີ່ມຈາກເດືອນ 4 ປີ 1933 ເຊິ່ງຕັ້ງຢູ່ແຄມທາງເລກທີ13 ໃຕ້ ບ້ານພະບາດ ເມືອງທ່າພະພາດ ແຂວງບໍລິຄໍາໄຊ ຫ່າງຈາກ ນະຄອນຫຼວງວຽງຈັນ ປະມານ 80 ກມ.

## 6. ເສັ້ນທາງຍ່າງປ່າ ບ້ານນາ.



ຍ່າງປ່າ ບ້ານນາ ຕັ້ງຢູ່ ບ້ານນາ ເມືອງທ່າພະບາດ. ເສັ້ນທາງຍ່າງປ່າ ບ້ານນາ ແມ່ນເປັນການຍ່າງປ່າໄປຫໍຄອຍຊ້າງ ທີ່ຢູ່ໃນເຂດປ່າສະຫງວນພູເຂົາຄວາຍ. ເປັນກິດຈະກໍາທີ່ນັກທ່ອງທ່ຽວນິຍົມທີ່ສຸດ ຄຽງຄູ່ກັບ ຕາດຊາຍ ບ້ານຫາດໄຄ້; ມີກິດຈະກໍາຍ່າງຊົມຄວາມງາມຂອງປ່າສະຫງວນ, ກິນເຂົ້າແຄມນໍ້າ, ມີກິດຈະກໍາໃຫ້ນັກທ່ອງທ່ຽວສາມາດເລືອກນອນປ່າ, ນອນຢູ່ຫໍຄອຍ ຫຼື ກັບມານອນໂຮມສະເຕຢູ່ບ້ານ ຊົມວິຖີຊີວິດ ແລະ ການຈັກສານຂອງປະຊາຊົນບ້ານນາ.

## 7. ຕາດມັງກອນ.

ສະຖານທີ່ແຫຼ່ງທ່ອງທ່ຽວ **"ຕາດມັງກອນ"** ຕັ້ງຢູ່ ບ້ານທ່າບົກ ເມືອງທ່າພະບາດ ເຊິ່ງຕັ້ງຫ່າງຈາກເທດສະບານເມືອງ ໄປປະມານ 20 ກິໂລແມັດ ຕາມເສັ້ນທາງເລກທີ 13 ໃຕ້ ແລ້ວລ້ຽວຊ້າຍ (ຖ້າມາແຕ່ເທດສະບານເມືອງ) ໄປຕາມທາງແດງ ເຂົ້າໄປອີກປະມານ 4 ກິໂລແມັດ ຈະເຖິງສະຖານທີທ່ອງທ່ຽວ. ແຫຼ່ງທ່ອງທ່ຽວແຫ່ງນີ້ ເປັນອີກແຫ່ງໜຶ່ງ ທີ່ກຳລັງໄດ້ຮັບຄວາມນິຍົມຈາກການໄປທ່ຽວຫຼິ້ນ ຂອງປະຊາຊົນທັງພາຍໃນ ແລະ ຕ່າງແຂວງ ໂດຍສະເພາະນັກທ່ອງທ່ຽວທີ່ມາຈາກນະຄອນຫຼວງວຽງຈັນ ມາຫຼິ້ນເປັນຂະບວນຟົດຟື້ນ ໃນຮູບແບບທ່ຽວກັບຄອບຄົວມາພັກຜ່ອນ ຫຼື ມາທ່ຽວແບບເປັນກຸ່ມ, ມາກິນເຂົ້າປ່າ  ແລະ ລົງຫຼິ້ນອາບນໍ້າທີ່ເຢັນສະບາຍ. ຈຸດພິເສດຕາດມັງກອນແມ່ນສະຖານທີ່ຕາດກວ້າງຂວາງ ທີ່ອ້ອມຮອບດ້ວຍພະລານຫີນ, ມີປ່າໄມ້ທີ່ຂຽວງາມໄປທົ່ວບໍລິເວນ ແລະ ມີນໍ້າທີ່ໃສສະອາດເຢັນດີ, ມີຄວາມປອດໄພແກ່ຜູ້ທີ່ມາທ່ຽວຫຼິ້ນ ເພາະວ່າສາຍນໍ້າໄຫຼບໍ່ແຮງປານໃດ ລົງຫຼິ້ນໄດ້ທຸກບ່ອນ ລົງຫຼິ້ນນໍ້າໄດ້ທຸກເພດທຸກໄວ ບໍ່ວ່າເດັກນ້ອຍ ຫຼື ຜູ້ໃຫຍ່. ຕາດມັງກອນນີ້ ນອກຈາກຈະມີທີ່ສະອາດ, ສວຍງາມແລ້ວ ຍັງມີສິ່ງຮອງຮັບຢ່າງຫຼວງຫຼາຍ ໄວ້ບໍລິການໃຫ້ແກ່ນັກທ່ອງທ່ຽວເຊັ່ນ: ຮ້ານອາຫານ, ເສື້ອຊູຊີບ, ຫ້ອງນໍ້າທີ່ສະອາດ, ມີເສັ້ນທາງທີ່ອຳນວຍຄວາມສະດວກສາມາດເຂົ້າເຖິງນໍ້າຕົກ ແມ່ນສະດວກປອດໄພ ແລະ ສະຖານທີ່ຈອດລົດພຽງພໍ ໃນວັນຢຸດພັກຜ່ອນ ຫຼື ວັນສຳຄັນຕ່າງໆ.



## 8. ຫາດຊາຍຂາວ.



ຫາດຊາຍຂາວ ຕັ້ງຢູ່ບ້ານໂດນ ເມືອງປາກຊັນ ແຂວງບໍລິຄຳໄຊ, ໄປຕາມເສັ້ນທາງເລກທີ 13 ໃຕ້ ໄລຍະຫ່າງຈາກເທດສະບານເມືອງ 28 ກິໂລແມັດ. ຫາດຊາຍຢູ່ແຄມນ້ຳຂອງ ບ້ານໂດນ ເມືອງປາກຊັນ. ຫາດຊາຍຂາວ ໄດ້ເຮັດການທົດລອງເປີດບໍລິການໃນປີ 2016 ມີບໍລິການອາຫານ, ມີຕູບໃຫ້ເຊົ່າ, ຫ້ອງນ້ຳ ແລະ ມີເສັ້ນທາງເຂົ້າເຖິງສະດວກສະບາຍ ຢູ່ໃກ້ກັນນັ້ນ ມີແຫຼ່ງທ່ອງທ່ຽວ ດານໜອງສາມານ ແລະ ແກ້ງສະດອກ ທີ່ເປັນຈຸດຕຶກເບັດ. ຫາດຊາຍຂາວ ມີຂະໜາດກວ້າງ ບັນຍາກາດຄ້າຍຄືກັບຢູ່ແຄມທະເລ ເໝາະແກ່ການໄປພັກຜ່ອນກັບຄອບຄົວ.



## 9. ຖ້ຳມັງກອນ.

ຖ້ຳມັງກອນ ຢູ່ໃກ້ກັບທາງເລກ 8A ບ້ານປຸ່ງປ່າຕາວ ເມືອງຄຳເກີດ. ແຕ່ກ່ອນປະຊາຊົນທ້ອງຖິ່ນເອີ້ນວ່າ ຖ້ຳໜ່ອງ ຍ້ອນມີກົກໜ່ອງຢູ່ໃກ້ກັບຖ້ຳ. ຕໍ່ມາໃນສະໄໝສົງຄາມປົດປ່ອຍ ກອງທັບປະຊາຊົນປະຕິວັດລາວ ໄດ້ມາຈັດກອງປະຊຸມລັບຢູ່ຖ້ຳນີ້ໃນວັນທີ 1 ເດືອນມັງກອນ ແລະ ໄດ້ມີການປ່ຽນຊື່ເປັນ ຖ້ຳມັງກອນ. ພາຍໃນຖ້ຳມັງກອນ ເປັນຖ້ຳທີ່ກວ້າງໃຫຍ່ ມີສາຍນ້ຳຫຼອດພື້ນ ປະມານ 100 ແມັດ ແລະ ມີຫີນຮູບຫົວມັງກອນຢູ່ ຈຶ່ງເປັນທີ່ມາຂອງຊື່ພາສາອັງກິດວ່າ Dragon Cave ໃນເວລາຕໍ່ມາ.

## 10. ວັງນໍ້າເຢັນ.



ສະຖານທີ່ແຫຼ່ງທ່ອງທ່ຽວ **"ວັງນໍ້າເຢັນ"** ທີ່ຢູ່ບ້ານນາປ່າຫວ້ານ ເມືອງຄໍາເກີດ ໂດຍມີໄລຍະທາງຫ່າງຈາກເທດສະບານເມືອງລີງມາຕາມເສັ້ນທາງ 8A ອອກມາຫາເມືອງປາກກະດິງ ປະມານ 30 ກິໂລແມັດ ແລ້ວລ້ຽວຂວາບໍລິເວນບ້ານໂພນຕານ ກໍ່ຈະເຫັນປ້າຍຊີ້ບອກທາງເຂົ້າແຫຼ່ງທ່ອງທ່ຽວ **ວັງນໍ້າເຢັນ** ບ້ານນາປ່າຫວ້ານ ໄລຍະທາງແຕ່ແຍກທາງ 8A ເຂົ້າຫາ **"ວັງນໍ້າເຢັນ"** ໂດຍຜ່ານບ້ານເຮືອນ ແລະ ທົ່ງນາຂອງປະຊາຊົນ ທີ່ສາມາດເຫັນທິວທັດທໍາມະຊາດອັນກວ້າງສຸດສາຍຕາ. ແຕ່ດົນນານມາແລ້ວ ແມ່ນເລົ່າລືກັນວ່າ ສະຖານທີ່ດັ່ງກ່າວ ແມ່ນນໍ້າສ້າງຂອງສິນໄຊ. ຕົກມາປີ 1960 ເພິ່ນໄດ້ປ່ຽນຊື່ມາເປັນ ຍອດຜາງາມ, ມາຮອດປີ 1982 ໄດ້ປ່ຽນເປັນບໍ່ນໍ້າເຢັນ ແລະ ຮອດປີ 1999 ໄດ້ປ່ຽນຊື່ມາເປັນວັງນໍ້າເຢັນຈົນຮອດປະຈຸບັນ ເຊິ່ງມີຄໍາຂັວນວ່າ: ນໍ້າສ້າງແກ້ວເກີດຢູ່ບົນດອຍ ໃຜໄດ້ລອຍຟຸມຫຼິ້ນ ອາຍຸຍືນຍາວໝັ້ນ ຫາຍພະຍາດໂລຄາ.

## 11. ບໍ່ນ້ຳອຸ່ນ.



ບໍ່ນ້ຳອຸ່ນ ຕັ້ງຢູ່ບ້ານໜອງອໍ້ ເມືອງຄຳເກີດ ໃກ້ກັບທາງເລກ 8A ທີ່ອອກສູ່ ປະເທດ ຫວຽດນາມ. ເປັນສະຖານທີ່ທ່ອງທ່ຽວທີ່ມີບໍລິການຫ້ອງພັກ ແລະ ຫ້ອງອາບ ທີ່ດູດນ້ຳອຸ່ນຈາກ ບໍ່ ຂຶ້ນມາທີ່ອ່າງອາບນ້ຳ ພ້ອມດຽວກັນນັ້ນ ບ້ານໜອງອໍ້ຍັງເປັນບ້ານວັດທະນະທຳຂອງ ໄຕແຖງ ຫຼື ໄທແຖງ ພວກເຂົາມີຄວາມສາມາດໃນການປູກມອນລ້ຽງມ້ອນ, ເຮັດຫັດຖະກຳ ແລະ ເຄື່ອງນຸ່ງດ້ວຍຜ້າໄໝ ທີ່ເປັນເອກະລັກຂອງເຜົ່າ.

## 12. ແກ້ງຫຼວງ.



ແຫຼ່ງທ່ອງທ່ຽວ “ແກ້ງຫຼວງ” ຕັ້ງຢູ່າສາຍນ້ຳເທີນ ບ້ານທ່າບັກ ເມືອງຄາເກີດ ລຽບ ຕາມທາງເລກ 8A ເຊິ່ງຫ່າງຈາກເທດສະບານເມືອງ 23 ກິໂລແມັດ. ເປັນແກ້ງໜຶ່ງທີ່ ໃຫຍ່ທີ່ສຸດ ຕາມສາຍນ້ຳເທີນ, ຢູ່ສາຍນ້ຳເທີນ ເມືອງຄຳເກີດ ເປັນແຫຼ່ງທ່ອງທ່ຽວໃນລາຍ ການທ່ອງທ່ຽວຂອງບ້ານທ່າບັກ. ການເດີນທາງໄປດ້ວຍເຮືອ ຈາກຂືວນ້ຳເທີນ 1 ຊົ່ວໂມງ (12.7 ກິໂລແມັດ) ຕາມສາຍນ້ຳ ມີແກ້ງຫຼາຍແຫ່ງ ເຊັ່ນ: ແກ້ງຊູນ, ແກ້ງກະປອງ, ແກ້ງ ອີ່ລຸ່ງ, ແກ້ງຖ້ຳຮູ ແລະ ຍັງມີເສັ້ນທາງຍ່າງປ່າໃກ້ແຄມນ້ຳ ໄລຍະທາງ 1 ກິໂລແມັດ ເລີ່ມ ແຕ່ແກ້ງຖ້ຳຮູ ໄປຫາແກ້ງຫຼວງ. ແກ້ງຫຼວງ ເປັນໜຶ່ງໃນແຫຼ່ງທ່ອງທ່ຽວ ໃນວົງຈອນການ ທ່ອງທ່ຽວເດີລູບ ທີ່ກຳລັງເປັນທີ່ນິຍົມ ແລະ ມີລີສອດແຄມນ້ຳທີ່ໄວ້ໃຫ້ບໍລິການອີກ ດ້ວຍ.

## 13. ຕາດນ້ຳປາ.

“ຕາດນ້ຳປາ” ແມ່ນຢູ່ ບ້ານນ້ຳປາ ເມືອງບໍລິຄັນ, ຫ່າງຈາກເທດສະບານ ເມືອງປາກຊັນ ໄປຕາມທາງເລກທີ 4B ປະມານ 14 ກິໂລແມັດ ປະຊາຊົນບ້ານນ້ຳປາ ມີການດຳລົງຊີວິດ ດ້ວຍການຜະລິດເຄື່ອງຫັດຖະກຳຕ່ຳຫູກ, ຜະລິດເຄື່ອງຈັກສານ, ຕິບເຂົ້າ, ເຄື່ອງມືຫາປາ ແລະ ອື່ນໆ.  ການເດີນທາງໄປຕາດນ້ຳປາແມ່ນຂີ່ເຮືອ ເຊິ່ງເປັນເຮືອຂອງປະຊາຊົນ ທີ່ມີໄວ້ເພື່ອບໍລິການຜູ້ທີ່ຈະໄປທ່ຽວຊົມຕາດ ໂດຍໃຊ້ເວລາປະມານ 30 ນາທີ, ເລີ່ມຕົ້ນເດີນທາງຂີ່ເຮືອຈາກສາຍນ້ຳງຽບໄປ 300 ແມັດ ແລ້ວຕໍ່ໃສ່ສາຍນ້ຳປາ. ຕາດແຫ່ງນີ້ ເໝາະສາລັບການໄປກິນເຂົ້າປ່າ ເພາະຫຼາຍຈຸດອ້ອມຂ້າງນ້ຳຕົກຕາດ ມີຫີນແຜ່ນໃຫ່ຍ ທີ່ສາມາດນັ່ງກິນເຂົ້າ, ນັ່ງຫຼິ້ນ ແລະ ມີບ່ອນຫຼິ້ນນນ້ຳອີກດ້ວຍ. ນອກຈາກນີ້ ຕາດນ້ຳປາ ຍັງມີທິວທັດທຳມະຊາດທີສວຍງາມ ອ້ອມຮອບໄປ້ດ້ວຍປ່າໄມ້ທີ່ສວຍງາມ, ມີມຸມຖ່າຍຮູບງາມຕາມໂງ່ນຫີນ ແລະ ກ້ອນຫີນ ທີ່ຢັ້ງຢາຍກັນຢູ່ ເຊິ່ງຖືວ່າເປັນອີກສະເໜ່ໜຶ່ງຂອງຕາດນີ້.



## 14. ຕາດເຕັກ.



ຕາດເຕັກ ຕັ້ງຢູ່ບ້ານເອີນທາດ ເມືອງທ່າພະບາດ ແຂວງບໍລິຄຳໄຊ ຫ່າງຈາກເທດສະບານເມືອງທ່າພະບາດ ປະມານ 35 ກິໂລແມັດ, ແຕ່ຫ່າງຈາກເທດສະບານເມືອງປາກຊັນ ປະມານ 15 ກິໂລແມັດ. ທາງແບ່ງເອີນທາດ ຫຼັງຈາກນັ້ນ ກໍ່ລ້ຽວຂວາເຂົ້າໄປຕາມເສັ້ນທາງອີກ ປະມານ 3 ກິໂລແມັດ ແມ່ນຈະເຖິງແຫຼ່ງທ່ອງທ່ຽວຕາດເຕັກ ໂດຍການເດີນທາງ ແມ່ນຜ່ານທົ່ງນາ, ທຳມະຊາດປ່າໄມ້, ຜ່ານໜອງນ້ຳ ທີ່ເຕັມໄປດ້ວຍດອກບົວຫຼາກຫຼາຍສີ. ຕາດເຕັກ ມີສາຍນ້ຳທີ່ໄຫຼໄປຢ່າງບໍ່ຂາດສາຍ ເປັນສາຍນ້ຳທີໃສສະອາດ, ເຢັນດີພາຍໃນຕາດ ມີປ່າໄມ້ທີ່ຄອຍເປັນຮົ່ມເງົາ ໃຫ້ເຮົາໄດ້ພັກພາອາໄສ ແລະ ມີອາກາດປອດໂປ່ງ ປາສະຈາກມົນລະພິດ.

## 15. ຕາດຫ້ວຍກູ້.



'ຕາດຫ້ວຍກູ້' ຕັ້ງຢູ່ບ້ານເມືອງມ່ວນ ເມືອງວຽງທອງ ແຂວງບໍລິຄໍາໄຊ ໄປຕາມທາງເລກທີ່ 1D ຫ່າງຈາກເທດສະບານເມືອງໄປ 50 ກິໂລແມັດ ຫຼັງຈາກນັ້ນ ກໍ່ສືບຕໍ່ການເດີນທາງດ້ວຍການຍ່າງ ເຂົ້າອີກປະມານ 1 ກິໂລແມັດກວ່າ ກໍ່ເຖິງຈຸດດັ່ງກ່າວ. ຕາດຫ້ວຍກູ້ ເປັນຕາດທີ່ມີຄວາມສວຍງາມ ແລະ ໂດດເດັ່ນທີ່ສຸດ ຂອງເມືອງວຽງທອງ ທີ່ມີນໍ້າໄຫຼມາຈາກຍອດພູແລບຕາມສາຍນໍ້າຫ້ວຍກູ້ ທີ່ມີໄລຍະຍາວ ຜ່ານປ່າໄມ້ຕຶບໜາ ແລະ ມີຄວາມອຸດົມສົມບູນ. ເສັ້ນທາງການເຂົ້າເຖິງກໍ່ສະດວກສະບາຍ. ຕະຫຼອດເສັ້ນທາງ ຈະຖືກປົກຫຸ້ມດ້ວຍຕົ້ນໄມ້ໃຫຍ່ຫຼາກຫຼາຍສາຍພັນ, ສັດປ່າຫຼາຍຊະນິດ ທີ່ຢູ່ໃນການອະນຸລັກຮັກສາໄວ້ຂອງບ້ານ.  ນອກຈາກນີ້ ຕາດຫ້ວຍກູ້ ມີທໍາມະຊາດປ່າໄມ້ທີ່ສວຍງາມແລ້ວ ຕະຫຼອດສາຍຫ້ວຍ ແມ່ນມີນໍ້າຕົກນ້ອຍຫຼາຍຈຸດ ທີ່ມີເອກະລັກສວນງາມ ທີ ແຕກຕ່າງກັນໄປ ໂດຍມີສາຍນໍ້າທີ່ໃສສະອາດ ແລະ ຄວາມເຢັນຢູ່ຕະຫຼອດເວລາ.

## 16. ຕາດທອນ.



ຕາດທອນ ຕັ້ງຢູ່ບ້ານນາພິງ ເມືອງປາກກະດິງ, ຫ່າງຈາກເທດສະບານເມືອງປາກກະດິງ ຕາມທາງເລກທີ່ 13ໃຕ້ ປະມານ 30 ກິໂລແມັດ, ທາງແບ່ງຫຼັກຊາວກໍ່ລ້ຽວຊ້າຍເຂົ້າທາງ 8A ໄປອີກ 17 ກິໂລແມັດ ກໍ່ເຖິງ ຜາຊ້າງ ບ້ານນາພິງ ຫຼັງຈາກນັ້ນກໍ່ຍ່າງປ່າໄປອີກ 7 ກິໂລແມັດ ຫຼື ໃຊ້ເວລາປະມານ 4 ຊົ່ວໂມງ ໃນການຍ່າງ ແລ້ວກໍ່ຈະໄປເຖິງຕາດທອນ. ການຍ່າງປ່າ ກໍ່ແມ່ນການທ່ອງທ່ຽວອີກຮູບແບບໜຶ່ງທີ່ນັກທ່ອງທ່ຽວມັກ ເພາະການເດີນທາງດ້ວຍການຍ່າງ ຖືເປັນການໄດ້ສຳຫຼວດເສັ້ນທາງ ໄດ້ເຫັນຄວາມສວຍງາມຂອງທຳມະຊາດແບບໃກ້ຊິດ, ເປັນການພະຈົນໄພທີ່ໜ້າຕື່ນເຕັ້ນ, ທ້າທາຍ ເປັນຮູບແບບການເດີນທາງທີ່ມີສະເໜ່ເຊັ່ນກັນ. ນ້ຳຕົກຕາດທອນ ເປັນນ້ຳທີ່ໄຫຼຕົກລົງມາຈາກໜ້າຜາ 3 ຊັ້ນ ໂດຍທີ່ມີຄວາມສູງຂອງຕາດປະມານ 80 ແມັດ, ສາຍນ້ຳທີ່ຕົກລົງມາຈາກໜ້າຜາທີ່ສູງ ໄດ້ຕົກກະຈາຍອອກເປັນລະອອງນ້ຳ ກະຈາຍໄປທົ່ວບໍລິເວນ ແຕ່ກໍ່ຍັງມີບ່ອນທີ່ສາມາດລົງຫຼິ້ນນ້ຳໄດ້ຢ່າງເພີດເພີນຜ່ອນຄາຍຄວາມອິດເມື່ອຍໄດ້ຢ່າງມີຄວາມສຸກ ບໍລິເວນຕາດແມ່ນມີກ້ອນຫີນນ້ອຍໃຫຍ່ສະຫຼັບຊັບຊ້ອນກັນ, ມີຫີນແຜ່ນທີ່ໃຫຍ່ ນັກທ່ອງທ່ຽວສາມາດຈັດເປັນບ່ອນກິນເຂົ້າຊຸມກັນ ມີຫຼາຍມຸມທີ່ສວຍງາມສຳລັບມືກ້ອງທີ່ມັກໃນການຖ່າຍພາບເກັບຄວາມຊົງຈຳທີ່ປະທັບໃຈ.

## 17. ຕາດໄກ້.



ນ້ຳຕົກຕາດໄກ້ ແມ່ນຕັ້ງຢູ່ໃກ້ກັບເສັ້ນທາງ 8A ເຂດບ້ານທ່າບັກ ເມືອງຄຳເກີດ ແຂວງບໍລິຄຳໄຊ ຫ່າງຈາກເທດສະບານເມືອງຄຳເກີດ ປະມານ 36 ກິໂລແມັດ ສາມາດເຂົ້າເຖິງຕາດນີ້ໄດ້ 2 ເສັ້ນທາງຄື: ທາງຍ່າງ ແລະ ທາງເຮືອ. ຕາດໄກ້ ມີປະຫວັດໄດ້ເລົ່າຕໍ່ກັນມາວ່າ: ແຕ່ກ່ອນ ນ້ຳຕົກຕາດແຫ່ງນີ້ ແມ່ນມີຄວາມອຸດົມສົມບູນທີ່ສຸດໃນລຳນ້ຳມັງ ໃນເຂດປ່າດົງອັນກວ້າງໃຫຍ່ໄພສານ ມີສັດນ້ອຍ-ໃຫຍ່ຫຼາຍຊະນິດ ທີ່ອາໄສຢູ່ດິນແດນແຫ່ງນີ້ ເປັນຕົ້ນແມ່ນໂຕໄກ້ ທີ່ມີຈຳນວນຫຼາຍກວ່າສັດຊະນິດອື່ນ. ໃນຕອນບ່າຍຂອງແຕ່ລະມື້ ໂຕໄກ້ມັກລົງມາກິນນ້ຳຢູ່ນ້ຳຕົກແຫ່ງນີ້ຢ່າງຫຼວງຫຼາຍ (ມື້ໜຶ່ງ ໄດ້ມີຊາວບ້ານໄປຫາປາ ຈົນເຖິງຈຸດທີ່ມີໂຕໄກ້ໄປກິນນ້ຳ ບັງເອີນໄປເຫັນຝູງໂຕໄກ້ຈຳນວນຫຼາຍ ກຳລັງກິນນ້ຳຢູ່, ແຕ່ກໍ່ໜ້າແປກໃຈ ທີ່ຢູ່ບໍລິເວນນັ້ນ ມີປາຢ່າງຫຼວງຫຼາຍ ຫຼັງຈາກນັ້ນ ແຕ່ລະມື້ທີ່ລາວໄປຫາປາ ລາວກໍ່ມຸ່ງໜ້າມາທີ່ນ້ຳຕົກຕາດໄກ້ທຸກເທື່ອ ພໍເມື່ອກັບບ້ານ ກໍ່ມີຜູ້ຄົນມາຖາມວ່າເຈົ້າໄປຫາປາຢູ່ໃສຄືໄດ້ຫຼາຍແທ້ ລາວກໍ່ຕອບວ່າ: ໄປຫາຢູ່ນ້ຳຕົກບໍລິເວນທີ່ມີໂຕໄກ້ອາໃສຢູ່ຫຼາຍຫັ້ນເດ່. ຕັ້ງແຕ່ນັ້ນມາຊາວບ້ານກໍ່ພາກັນໄປຫາປາຢູ່ທີ່ນັ້ນຢ່າງເປັນປະຈຳ ເຊິ່ງຊາວບ້ານພາກັນເອີ້ນວ່າ "ນ້ຳຕົກຕາດໄກ້" ແລະ ນ້ຳຕົກຕາດໄກ້ ໄດ້ຕິດພັນກັບວິຖີຊີວິດຂອງປະຊາຊົນທ້ອງຖິ່ນນີ້ ຈົນເຖິງປັດຈຸບັນ.

ກິດຈະກຳຢູ່ທີ່ຕາດໄກ້ ນອກຈາກສາມາດເລືອກການເຂົ້າເຖິງຕາດດ້ວຍການຂີ່ເຮືອຊົມວິວທິວທັດທຳມະຊາດຂອງສາຍນ້ຳແລ້ວບັນຍາກາດຢູ່ທີ່ນັ້ນ ເໝາະສຳລັບການກິນເຂົ້າປ່າ, ມີບ່ອນທີ່ຫຼິ້ນນ້ຳໄດ້ ເພາະນ້ຳໄສ, ເຢັນ ເປັນນ້ຳມັງ ທີ່ໄຫຼມາຈາກວັງນ້ຳເຢັນແລ້ວຕົກໄປໃສ່ນ້ຳເທີນ ທີ່ມີຄວາມຄົດລ້ຽວ ເຊິ່ງມີໄລຍະທາງຫຼາຍກິໂລແມັດບັນຍາກາດດີ ອາກາດດີເໝາະກັບການພັກຜ່ອນໄດ້ຢ່າງໜ້າປະທັບໃຈ.

## 18. ຜາເມືອງ-ຜາສາດນາງຜົມຫອມ.

ຖ້ຳນາງຜົມຫອມ ຫຼື ຖ້ຳຜາເມືອງ ຕັ້ງຢູ່ບ້ານຜາເມືອງ ເມືອງບໍລິຄັນ ຫ່າງຈາກເທດສະບານເມືອງ ໄປປະມານ 27 ກິໂລແມັດ ຕາມເສັ້ນທາງເລກທີ 4B ໄປສູ່ແຂວງຊຽງຂວາງ. ຖ້ຳຜາເມືອງ ເປັນແຫຼ່ງທ່ອງທ່ຽວແຫ່ງໜຶ່ງ ທີ່ມີເອກະລັກສະເພາະ ມີຄວາມສວຍງາມ ຕັ້ງສູງສະຫງ່າຢູ່ກາງທົ່ງນາ ພໍເມື່ອເຮົາຍ່າງເຂົ້າໄປຮອດຕີນຜາແມ່ນຈະເຖິງຖ້ຳ ເຊິ່ງຈຸດພິເສດທີ່ສຸດພາຍໃນຖ້ຳແຫ່ງນີ້ ໃນເມື່ອກ່ອນໄດ້ມີພະເກສອນ ພະພຸດທະຮູບອົງນ້ອຍທີ່ເກົ່າແກ່ທີ່ຢູ່ຕາມເຫງີບຫີນ ເພື່ອໃຫ້ປະຊາຊົນຊາວພຸດທະສາສະໜາ ໄດ້ມາກາບໄຫວ້ທີ່ເປັນຄວາມເຊື່ອຖືຂອງຄົນລາວເປັນໃນສະໄໝກ່ອນ. ປະຈຸບັນ ຖ້ຳແຫ່ງນີ້ ເຄີຍຖືກນຳໃຊ້ເປັນຫ້ອງປະຊຸມ ໃນສະໄໝກ່ອນ ພາຍໃນຖ້ຳ ສາມາດຮອງຮັບຄົນໄດ້ຫຼາຍກວ່າຮ້ອຍຄົນ, ຖ້ຳດັ່ງກ່າວ ຍັງມີປະຫວັດກ່ຽວຂ້ອງກັບນິທານພື້ນບ້ານ ທີ່ເຮົາເຄີຍໄດ້ຍິນຜູ້ເຖົ້າຜູ້ແກ່ເລົ່າໃຫ້ຟັງເລື້ອຍໆ ນັ້ນກໍ່ຄືນິທານເລື່ອງ “ນາງຜົມຫອມ” ເຊິ່ງມີຫຼາຍຈຸດ ທີ່ມີຮ່ອງຮອຍທີ່ເຊື່ອມໂຍງກັບເລື່ອງລາວໃນນິທານອັນໂດ່ງດັງ ແລະ ເລົ່າຕໍ່ກັນມາຮອດປະຈຸບັນນີ້.



### ນິທານນາງຜົມຫອມ

ຕັ້ງແຕ່ດົນນານມາແລ້ວ ໄດ້ມີແມ່ໝ້າຍຜູ້ໜຶ່ງ ອາໄສຢູ່ພຽງລຳພັງ ແຕ່ລະມື້ລາວຈະອອກໄປຊອກຟືນມາດັງ ເພື່ອຕົ້ມນ້ຳດື່ມ ແລະ ປຸງແຕ່ງອາຫານ. ມື້ໜຶ່ງ ລາວອອກໄປຊອກເກັບຟືນຕາມປົກກະຕິ ບັງເອີນມື້ນັ້ນ ອາກາດຮ້ອນອົບເອົ້າຫຼາຍ ແມ່ໝ້າຍຄົນນັ້ນຫິວນ້ຳ ແຕ່ນ້ຳທີ່ຖືໄປນັ້ນໝົດແລ້ວ ຈຶ່ງໄດ້ຊອກຫາບໍ່ນ້ຳ ແລ້ວພົບກັບບໍ່ນ້ຳທີ່ເປັນຮອຍຕີນຊ້າງ ດ້ວຍຄວາມຫິວນ້ຳແຮງ ຈຶ່ງກອບເອົານ້ຳມາດື່ມ. ຫຼາຍວັນຕໍ່ມາແມ່ໝ້າຍກໍ່ຖືພາ ແລະ ໄດ້ເກີດລູກອອກມາເປັນລູກແຝດ ລາວໄດ້ຕັ້ງຊື່ໃຫ້ລູກທັງສອງວ່າ: ນາງຫຼ້າ ແລະ ນາງລຸນ. ເມື່ອລູກທັງສອງໃຫຍ່ຂຶ້ນມາ ເກີດຄວາມສົງໄສ ຈຶ່ງຖາມແມ່ວ່າ ແມ່ເອີຍ ພໍ່ເຮົາຢູ່ໃສ ລູກໄປຖາມໃຜກໍ່ບໍ່ບອກ ເວລາໄປຫຼິ້ນນຳໃຜ ກໍ່ບໍ່ມີໃຜໃຫ້ຫຼິ້ນນຳ ແມ່ໄດ້ຍິນແນວນັ້ນ ກໍ່ບໍ່ຮູ້ວ່າຈະຕອບລູກແນວໃດ ໄດ້ແຕ່ມິດຢູ່. ເມື່ອລູກສາວທັງສອງໄດ້ອາຍຸສິບປາຍປີ ຈຶ່ງອອກເດີນທາງໄປຫາພໍ່ ເດີນທາງໄປເລື້ອຍໆຫຼາຍມື້ຫຼາຍວັນ ໄດ້ພົບເຫັນບວກນ້ຳຢູ່ຂ້າງຜາ ຫຼື ຮ່ອມໜອງຜາເມືອງ ຈາກນັ້ນກໍ່ໄດ້ພົບເຫັນພໍ່ (ກໍ່ຄືຊ້າງນັ້ນເອງ) ແລະ ເວົ້າກັບພໍ່ວ່າ:

| | |
|---|---|
| ລູກນັ່ງນິບ | ພັນເຄຕາໄຫວ້ |
| ມາຫາລາທູນພໍ່ຊ້າງເອີຍ | ລູກນີ້ໄປຫຼິ້ນໃສກໍ່ບໍ່ໄດ້ |
| ມີແຕ່ເຂົາໄລ່ສັ່ງໜີ | ລູກຈຳເປັນຈຶ່ງໄດ້ |
| ຕາມມາຫາພໍ່ | ຈັ່ງໃຫ້ພໍ່ຊ່ວຍຍູ້ເອົາລູກຢູ່ນຳ |
| ເມື່ອເປັນເຊັ່ນນັ້ນພໍ່ | ຊ້າງຈຶ່ງຕອບລູກວ່າ: |
| ຄັນແມ່ນລູກພໍ່ແທ້ | ໃຫ້ລູກໄຕ່ງວງງາ |
| ຖ້າບໍ່ແມ່ນບຸດຕາ | ພໍ່ຈະທຳລາຍຂ້າຖິ້ມ |

ເມື່ອໄດ້ຍິນແນວນັ້ນ ນາງທັງສອງກໍ່ບໍ່ລໍຊ້າ ໄຕ່ງວງຂອງຊ້າງຂຶ້ນ ນາງລຸນໄດ້ຂຶ້ນໄປຂີ່ຄໍ ສ່ວນນາງຫຼ້າ ໄຕ່ມາຮອດງາກຕົກລົງ ພໍ່ຊ້າງຈຶ່ງຂ້າຖິ້ມ, ຈາກນັ້ນພໍ່ຊ້າກໍ່ໄດ້ເອີ້ນລູກຕົນວ່າ ນາງຜົມຫອມ ແລ້ວເອົາມາໄວ້ຢູ່ຜາເມືອງ ແຕ່ລະວັນພໍ່ຊ້າງໄດ້ອອກໄປຫາກິນທຸກມື້ ຈຶ່ງສັ່ງລູກໄປຢູ່ຫໍຜາສາດ ແລ້ວເອົາຜາຕັນໄວ້. ຫຼັງຈາກກັບມາຈາກຫາກິນໄດ້ເອີ້ນໃສລູກສາວວ່າ: ລູກເອີຍ ຢ່ອນແຄ່ງຢ່ອນຂາໃຫ້ພໍ່ຊົມ ຢ່ອມຜົມໃຫ້ພໍ່ຈູບ ພໍ່ຈູບແລ້ວ ພໍ່ຊິລາໄປ, ຫຼາຍປີຫຼາຍເດືອນ ນາງຜົມຫອມ ຫົນຫວຍຮ້ອນຮູດຢາກລົງໄປຊົມຫຼິ້ນນ້ຳ ວັງເອີນກ້ວາງໃຫຍ່ ເລີຍລັກໃຈພໍ່ໄດ້ ລົງອາບນ້ຳຮຸກເຫື່ອສີໄຄ ໄຄໄດ້ໄຫຼລົງໄປຕາມກະແສວັງນ້ຳ.

ເມື່ອນັ້ນ ທ້າວເພັດສະລາດນ້ອຍ ໄດ້ເອົາດາບໄປຕັນໄວ້ ເຫັນໄຄນາງຜົມຫອມປ້ານຢູ່ດາບ ທ້າວຈຶ່ງເລາະລ່ອງຂຶ້ນໄປຕາມແມ່ນ້ຳເຫືອງທີ່ມີກິ່ນຫອມ ຈຶ່ງນຳຕາມຄອງນ້ຳມາຮອດຖ້ຳຂອງນາງຜົມຫອມ ເຫັນນາງຢູ່ໃນຖ້ຳ ທ້າວຈຶ່ງຖາມນາງວ່າເປັນຫຍັງເຈົ້າຈຶ່ງມາຢູ່ໃນຖ້ຳນີ້ ພໍແຕ່ເຫັນຄັ້ງທຳອິດ ທ້າວເພັດສະລາດກໍ່ຮູ້ສຶກຮັກມັກຈຶ່ງໄດ້ເອົານາງຜົມຫອມມາເປັນເມຍ. ຫຼັງຈາກນັ້ນນາງຜົມຫອມກໍ່ມີລູກນຳຊາຍນັ້ນເສບສົມແລ້ວຈຶ່ງບໍ່ຍອມໃຫ້ພໍ່ດົມ. ພໍ່ຊ້າງບໍ່ເຫັນລູກສາວ ຈຶ່ງອອກຊອກຫາ ຮ້ອງໄປຮອດ ຜາໄດ, ຜາໂລກ, ຜາໂຫນ, ຜາສິງ, ຜາເມືອງ, ຜາຫີບ, ຜາມູນເມືອງ,ຜາແມ່ພາຊອກຫາລູກຈົນຮອຍຕີນຊ້າງເຕັມໄປໝົດ ຢູ່ທີ່ນັ້ນຈຶ່ງມີແຕ່ຮອຍລ້ານຊ້າງ, ເມື່ອພໍ່ຊ້າງຫາລູກຈົນອິດເມື່ອຍຈຶ່ງເອີ້ນສັ່ງລູກວ່າ: ຜົມຫອມເອີຍ ຢ່ອນແຄ່ງໃຫ້ພໍ່ຊົມ ຢ່ອນຜົມໃຫ້ພໍ່ຈູບ ພໍ່ຈູບແລ້ວພໍ່ຊິເລີກລາຕາຍ

ກ່ອນທີ່ພໍ່ຊ້າງຊິຕາຍ ພໍ່ໄດ້ສັ່ງລູກວ່າ, ຫົວພໍ່ໃຫ້ເຮັດຄົກແຈ່ວ, ງວງໃຫ້ເຮັດເຮືອພາຍ, ງາໃຫ້ເຮັດໄມ້ຄາຫໍ່, ດູກຂ້າງເຮັດໄມ້ພາຍ, ໜັງເຮັດສາດປູນອນ, ຫາງເຮັດຟອຍກວດເຮືອນ, ຫູເຮັດໃບວີ, ແຄ່ງເຮັດສາກແຈ່ວ. ເມື່ອພໍ່ຊ້າງສັ່ງໝົດຄວາມແລ້ວກໍ່ຕາຍຢູ່ໃນຜາເມືອງ ເມື່ອເຫັນພໍ່ຊ້າງຕາຍແລ້ວ ນາງຜົມຫອມກໍ່ໄດ້ປະຕິບັດຕາມຄຳສັ່ງຂອງພໍ່.

ດັ່ງນັ້ນ, ຖ້ຳຜາເມືອງຈຶ່ງກາຍເປັນສະຖານທີ່ທ່ອງທ່ຽວທຳມະຊາດຈົນເຖິງທຸກວັນນີ້ ໂດຍທີ່ຍັງມີຮ່ອງຮອຍບາງຢ່າງ ທີ່ກ່ຽວພັນກັບນິທານເລື່ອງນາງຜົມຫອມເຊິ່ງນິທານເລື່ອງນີ້ ຍັງຄົງເປັນເລື່ອງເລົ່າ ທີ່ຜູ້ເຖົ້າຜູ້ແກເລົ່າຕໍ່ສູ່ລູກຫຼານຟັງ. ຂໍ້ມູນອາດຈະບໍ່ລະອຽດປານໃດ ແຕ່ນີ້ກໍ່ເປັນເລື່ອງລາວ ບອກເລົ່າຂອງຜູ້ໃຫຍ່ບ້ານທີ່ເລົ່າໃຫ້ຟັງເປັນຄວາມເປັນມາຂອງແຫຼ່ງທ່ອງທ່ຽວນີ້ ທີ່ຍັງຄົງມີຄວາມອຸດົມສົມບູນໃນສະພາບເກົ່າ, ຍັງຄົງມີບາງຮ່ອງຮອຍໃຫ້ເຫັນ ເປັນອີກແຫ່ງໜຶ່ງທີ່ຄວນພັດທະນາ ແລະ ສຶກສາຮຽນຮູ້.

## 19. ຜາພີຮ້ອງ(ຜານາງຮ້ອງ).

ຜາພີຮ້ອງ(ຜານາງຮ້ອງ) ຕັ້ງຢູ່ບ້ານທົ່ງຈະເລີນ ເມືອງຄຳເກີດ ຜານາງຮ້ອງແມ່ນມີຄວາມໝາຍ ທາງດ້ານປະຫວັດສາດ, ພາຍໃນຖ້ຳມີເຫວເລິກ ເປັນບ່ອນລີ້ໄພຂອງປະຊາຊົນໃນສະໄໝສົງຄາມ ແລະ ມີປະຫວັດຄວາມເປັນມາແຕ່ບູຮານນະການວ່າ: ແຕ່ກີ້ແຕ່ກ່ອນໃນວັນສິນດັບ, ສິນເພັງ(ທາງພຸດທະສາດສະໜາ) ແມ່ນປາກົດເຫັນແມ່ຍິງອອກມາຢືນຫວີຜົມ ແລະ ຮ້ອງຢູ່ຊານປາກຖ້ຳກາງຜາຢູ່ເລື້ອຍໆ ແຕ່ວ່າບໍ່ມີໃຜສົນໃຈ ແລະ ເຮັດຫຍັງໃສ່. ໃນຕໍ່ມາມີຜູ້ຊາຍຂີ້ດື້ຄົນໜຶ່ງຫຼຽວເຫັນກໍ່ໄດ້ແກ້ໂສ້ງປະເປືອຍໃຫ້ເບິ່ງ, ເມື່ອຍິງຜູ້ຢືນຫວີຜົມນັ້ນເຫັນການເປືອຍຂອງຊາຍຄົນນັ້ນ ລາວກໍ່ສະແດງທ່າທີດ້ວຍການຮ້ອງຮ້າຍອອກມາພ້ອມກະຖືບຕີນ ຈົນຊານຫີນບ່ອນທີ່ລາວຢືນຫວີຜົມນັ້ນເຈື່ອນລົງມາ ແລ້ວກໍ່ຫາຍສາບສູນໄປ ຍ້ອນເຫດດັ່ງກ່າວເພິ່ນຈຶ່ງເອີ້ນກັນວ່າ ຜາພີຮ້ອງ ແຕ່ໃນຕໍ່ມາເພື່ອໃຫ້ເປັນຄຳທີ່ສຸພາບຈຶ່ງໄດ້ປ່ຽນຊື່ມາເປັນ ຜານາງຮ້ອງ ຈົນເຖິງປັດຈຸບັນ.



## 20. ວັດທາດພູວຽງ.



ວັດທາດພູວຽງເປັນວັດໜຶ່ງຕັ້ງຢູ່ບ້ານ 3 ສ້າງ ບ້ານຈອມທອງ ເມືອງວຽງທອງ , ຕັ້ງຢູ່ທາງທິດເໜືອຂອງ ເມືອງວຽງທອງ ຫ່າງຈາກເທດສະບານເມືອງ 33 Km ທິດເໜືອຕິດກັບບ້ານນໍ້າຕ້ອງ, ທິດໃຕ້ຕິດກັບບ້ານໂພນເມືອງ, ທິດຕາເວັນອອກຕິດກັບບ້ານນໍ້າກູ້ ແລະ ທິດຕາເວັນຕົກຕິດກັບບ້ານເມືອງມ່ອນ. ວັດທາດພູວຽງ ເປັນວັດແຫ່ງໜຶ່ງ ທີເປັນມູນມໍລະດົກທາງດ້ານວັດທະນະທຳທີ່ເກົ່າແກ່ທີ່ ເປັນເອກະລັກຂອງຊາວເມືອງວຽງທອງ, ເປັນບ່ອນສະຖານທີ່ສັກສິດໄວ້ກາບໄຫວ້ ສັກກະລະບູຊາ ເພື່ອເປັນສີລິມຸງຄູນແກ່ຊີວິດ ແລະ ຄອບຄົວ. ວັດທາດພູວຽງສ້າງຕັ້ງຂຶ້ນໃນ ປີ 1946 ໂດຍມີພະສົງຫຼາຍອົງເປັນຜູ້ສ້າງມີ: ຈານຄູມູນ, ຈານຄູກິ່ງ, ຈານຄູຍາ, ຈານຄູໄທ, ພໍ່ແມ່ຜາລີ ແລະ ຍັງມີພະສົງປະຈຳພັນສາຢູ່ວັດດັ່ງກ່າວ ມີຈານໄມ, ຄູບາວັນທອງ ແລະ ຍາພໍ່ເງິນ. ມາຮອດປີ 1959 ພ້ອມດ້ວຍອອກຕົນຍາດໂຍມ ສ້າງພະຢູ່ຈອມຜາວຽງ ເຊິ່ງມີຂະໜາດໜ້າຕັກ 1,5 ແມັດ ລວງສູງ 2,2 ແມັດ. ເປັນພະອົງໜຶ່ງທີ່ສ້າງຢູ່ຈອມຜາສູງ. ມາຮອດປີ 1966 ໄດ້ພ້ອມກັນສ້າງພະທັງ 5 ອົງຢູ່ຖໍ້າຜາວຽງຄື:

- ອົງທີ 1 ພະກຸກຸສັນໂທ ເປັນຜູ້ວາງສາດສະໜາ, ຕັດສະດຸຢູ່ໃນໂລກກ່ອນໝູ່,
- ອົງທີ 2 ໂກນາໂຄບ ເປັນຜູ້ສືບຕໍ່ອົງທີ່ 1.
- ອົງທີ່ 3 ກັດສະໂປ ເປັນພະສືບຕໍ່ອົງທີ 2.
- ອົງທີ 4 ໂຄຕະໂມ, ເປັນພະສືບຕໍ່ອົງທີ 3.
- ອົງທີ 5 ອະລິຍະເມັດໄຕ ເປັນພະສືບຕໍ່ອົງທີ່ 4 ແຕ່ລະອົງມີລວງສູງ 8 ສອກ ລວງກ້ວາງເພິ່ນບໍ່ໄດ້ກຳນົດ.

ມາຮອດປີ 1984 ໄດ້ພ້ອມພາກັນສ້າງພະທາດພູວຽງ ໂດຍການເຜົາຫີນຜາ ແລະ ປູນຂາວມາປະສົມກັນເພື່ອກໍ່ຮູບຮ່າງທາດ ແລະ ປະຊາຊົນພາຍໃນບ້ານທາດພູວຽງ ໄດ້ໄປຫາບຫີນຢູ່ແກ້ງວັງຟອງ ເມືອງ ປາກກະດິງ, ຜູ້ລະ 15 ກິໂລ ເພື່ອເອົາມາສ້າງທາດ ໃນໄລຍະສ້າງທາດແມ່ນ 3 ປີຈິ່ງສຳເລັດຄື:

- ຊັ້ນທີ 1 ແມ່ນຮອຍຂອງພະພຸດທະຮູບທີ່ເປ່ເພ.
- ຊັ້ນທີ 2 ແມ່ນເຄື່ອງສັກກະລະບູຊາທີ່ອອກຕົນຍາດໂຍມມາປ່ອນ.
- ຊັ້ນທີ 3 ແມ່ນຊິ້ນບັນຈຸພະພຸດທະຮູບອີງທີ່ບໍ່ເປເພ.
- ຊັ້ນທີ່ 4 ແມ່ນຍອດຊໍ່ຟ້າ. ນອກນັ້ນຢູ່ອ້ອມສີ່ແຈທາດຍັງມີສັດ 4 ຊະນິດ ຄື:

➢ ທິດເໜືອແມ່ນປູລິມັນ (ຊ້າງ).
➢ ທິດຕາເວັນອອກແມ່ນທັກຄິດ (ຄຸດ).
➢ ທິດໃຕ້ແມ່ນປັດສິມ (ລາຊາສີ).
➢ ທິດຕາເວັນຕົກແມ່ນອຸດຕະລັນ (ຍັກ).

ມາຮອດປີ 1987 ພະສົງ ສຳມະເນນພ້ອມດ້ວຍອອກຕົນຍາດໂຍມໄດ້ຮ່ວມແຮງກັນສ້າງອາຮາມ ແລະ ສິມຂຶ້ນ.

ມາຮອດ ປີ 2016 ວັດທາດພູວຽງເຕັມໄປດວາມອຸດົມສົມບູນທາງຮີດຄອງປະເພນີ ມີວັດວາອາລາມອັນເກົ່າແກ່ ແລະ ກຳລັງສ້າງອາຮາມແຫ່ງໜຶ່ງທີ່ໃຫຍ່ ມີກຸດຕິ 5 ແຫ່ງ, ຫໍກອງ 1 ແຫ່ງ, ອາລາມ 1 ແຫ່ງ, ສິມ 1 ແຫ່ງ, ຜາມ 4 ແຫ່ງ. ໃນແຕ່ລະປີພະສົງ ສຳມະເນນ ແລະ ອຳນາດການປົກຄອງບ້ານພ້ອມດ້ວຍພໍ່ແມ່ປະຊາຊົນບ້ານສາມສ້າງ ບ້ານຈອມທອງ ໄດ້ພ້ອມພາກັນເຮັດບູນນະມັດສະການພຣະທາດພູວຽງ (ພໍ່ແມ່ຜາລີ) ໃນເດືອນ 1 ລາວ ເປັນມື້ຂຶ້ນເດືອນເພັງ ຂອງທຸກໆປີ.

# ແຂວງຄຳມ່ວນ

## 1. ພະທາດສີໂຄດຕະບອງ.



ພະທາດສີໂຄດຕະບອງ ຕັ້ງຢູ່ບ້ານສີໂຄດ (ມ່ວງສຸມ) ແຄມຝັ່ງແມ່ນ້ຳຂອງ ເຊິ່ງບໍລິເວນນີ້ ເຄີຍເປັນໃຈກາງຂອງອະດີດເມືອງ ຫຼວງທີ່ເກົ່າແກ່ຂອງອານາຈັກລ້ານຊ້າງ. ຕາມທາງເລກທີ 11 ໃຕ້ ຫ່າງຈາກເມືອງທ່າແຂກ 6 ກິໂລແມັດ, ມີເສດຕະສັດ 7 ຊັ້ນ ໃນແກນເປັນເຫຼັກເສດຕະສັດ ເຮັດດ້ວນເງິນ ແລະ ຄຳ, ປາຍເສດ ຕະສັດມີໂຄມແກ້ວ (ປະຈຸບັນບໍ່ມີ) ສະເພາະເສດຕະສັດສູງ 2 ແມັດ ບໍລິເວນຕີນພະທາດກ້ວາງດ້ານລະ 25 ແມັດ, ສູງ30 ແມັດ).

ພະທາດສີໂຄດຕະບອງ ແມ່ນສາສະໜາຖານເກົ່າແກ່ ແລະ ສັກກາລະບູຊາຂອງ ຄົນຄຳມ່ວນ, ທີ່ມີຄວາມສັກສິດແຫ່ງໜຶ່ງ ຂອງ ສປປລາວ ພະທາດນີ້ສ້າງຂຶ້ນໃນສະໃໝອານາຈັກສີໂຄດຕະບອງ ລະຫວ່າງສັດຕະວັດທີ VI – VIII. ພະທາດໜ່ວຍນີ້ ເປັນບ່ອນບັນຈຸກະດູອັດຖິຂອງພະພຸດທະເຈົ້າໃນສັດຕະວັດ VI.

ນອກຈາກນັ້ນ ຍັງມີຮູບປັ້ນຂອງພະຍາສີໂຄດຕະບອງ ຢືນຢ່າງສະຫງ່າລາສີ. ຄຳວ່າ "ສີໂຄດຕະບອງ" ມີຄວາມໝາຍມາຈາກພາສາບາລີວ່າ: "ແສງສະຫວ່າງແຫ່ງປະລັດຊະຍາ". ດ້ວຍເຫດນັ້ນ, ຮູບປັ້ນຂອງພະຍາສີໂຄດຕະບອງ ຈຶ່ງປຽບເໝືອນທອນໄຟເບືອງທາງໃຫ້ແສງສະຫວ່າງແກ່ຄົນລຸ້ນຕໍ່ໄປ ແລະ ກໍ່ເປັນສູນລວມແຫ່ງຈິດໃຈຂອງຊາວຄຳມ່ວນ ຈົນເທົ່າທຸກວັນນີ້.

ໃນພົງສາວະດານ ກ່າວເຖິງພະທາດໜ່ວຍນີ້ວ່າ, ໃນສັດຕະວັດ XVI, ເຊິ່ງເປັນໄລຍະທີ່ອານາຈັກລ້ານຊ້າງຄອບຄອງແຖບນີ້, **ພຸດທະສາສະໜານິກາຍຫີນະຍານ ໄດ້ແຜ່ອິດທິພົນເຂົ້າມາໃນຂົງເຂດນີ້ ແລະ ເຈົ້າຊີວິດ** ໃນສັດຕະວັດທີ່ 16 (ຄ.ສ 15201 – 1747 ໄດ້ສັ່ງປະຕິມາກອນ ມາບູລະນະພະທາດໜ່ວຍນີ້). ໃນ ຄ.ສ 1539, ການປະຕິສັງຂອນເປັນ ແບບສິລະປະລ້ານຊ້າງ ໂດຍເພີ່ມແບບປະຕິມະກຳ ທີ່ຕິດດອກບົວໃສ່ຈອມທາດ.

ໃນຍຸກສະໄໝຂອງພະເຈົ້າໄຊຍະເສດຖາທິລາດ, ພະອົງໄດ້ບູລະນະຈົນເປັນແບບດັ່ງທີ່ເຫັນໃນປັດຈຸບັນນີ້. ມາເຖິງປີ ຄ.ສ 1806, ໃນສະໄໝການປົກຄອງຂອງ ເຈົ້າອານຸວົງ ພຣະທາດໜ່ວຍນີ້ ກໍ່ໄດ້ຖືກທຳລາຍຈາກຫຼາຍສົງຄາມ ຈົນຖືກປ່ອຍປະໃຫ້ພຣະທາດສີໂຄດເສົ້າໝອງຢ່າງສິ້ນເຊີງ.





ໃນສະໄໝທີ່ຝຣັ່ງຄອບຄອງອິນດູຈີນໃນປີ ຄ.ສ 1893 ຫາ 1949, ປະຊາຊົນຄຳມ່ວນ ໄດ້ຮ່ວມກັນສ້າງວິຫານໃສ່ດ້ານເໜືອຂອງພະທາດ ແລ້ວກໍ່ນິມົນເອົາພະພຶກຂຸສົງ ມາຈຳວັດຕະຫຼອດມາ. ພາຍຫຼັງປະກາດເອກະລາດ ໃນວັນທີ່ 12 ຕຸລາ 1945, ຊາວພຸດກໍ່ໄດ້ພາກັນບູລະນະພະທາດໜ່ວຍນີ້ ດ້ວຍຄວາມສັດທາເຫຼື້ອມໃສ. ໃນປີ 1950 ປະຊາຊົນລາວ ເຊິ່ງດຳລົງຊີວິດໃນບ້ານ ແລະ ເມືອງທີ່ຢູ່ອ້ອມແອ້ມພະທາດສີໂຄດຕະບອງ ໄດ້ພາກັນມາຖາກຖາງ,ອານາໄມເຄືອໄມ້ໃບຫຍ້າ ແລະ ຂູດໂໝກສີດຳອອກ. ຖັດນັ້ນມາ, ຫຼາຍສິ່ງຫຼາຍຢ່າງອ້ອມຂ້າງພະທາດໄດ້ຮັບການກໍ່ສ້າງຄືນໃໝ່ ໂດຍສະເພາະແມ່ນ “ສິມ”ໃນຊຸມປີ 1970 ແລະ ມີພະໃຫ່ຍອີງພະປະທານ ສະຖິດຢູ່ພາຍໄວ້ໃຫ້ຄົນສັກກາລະບູຊາ. ໃນຊຸມປີ 2010, ເພິ່ນໄດ້ສ້າງຮູບປັ້ນພະຍາສີໂຄດຕະບອງ ທີ່ຢືນຢ່າງສະຫງ່າຜ່າເຜີຍ ໃນບໍລິເວນເດີນພະທາດນີ້. ປັດຈຸບັນນີ້, ພະທາດສີໂຄດຕະບອງ ເປັນປູສະນີຍະສະຖານ ແລະ ກາຍເປັນສັນຍາລັກຂອງແຂວງ.”ຄົນທີ່ເດີນທາງໄປແຂວງຄຳມ່ວນ ບໍ່ໄດ້ໄປກາບໄຫ້ວພະທາດສີໂຄດຕະບອງ ຖືວ່າບໍ່ໄດ້ໄປຮອດໄປເຖິງແຂວງຄຳມ່ວນ”.

## 2. ຖ້ຳກອງລໍ.



ຖ້ຳກອງລໍ ເປັນແຫຼ່ງທ່ອງທ່ຽວທຳມະຊາດ ມີຊື່ສຽງລະດັບແນວໜ້າຂອງໂລກຍ້ອນວ່າ ເປັນຖ້ຳທີ່ມີສາຍນ້ຳຫີນບູນໄຫຼຜ່ານອຸມົງຂອງພູຫີນປູນ ເຂົ້າໄປແລ້ວໄຫຼລົງສູ່ແມ່ນ້ຳຂອງ. ຖ້ຳກອງລໍຕັ້ງຢູ່ລະຫວ່າງບ້ານນາຕານ ເມືອງນາກາຍ ແລະ ບ້ານກອງລໍ ເມືອງຄູນຄຳ, ເມືອງຄູນຄຳເຊິ່ງ ຫ່າງຈາກເມືອງ 46 ກິໂລແມັດ. ບັນດານັກທ່ອງທ່ຽວ ສາມາດເດີນທາງຈາກເສັ້ນທາງເລກທີ 13 ເຂົ້າໄປຕາມເສັ້ນ ທາງເລກ 8 ໄປຮອດບ້ານຄູນຄຳ ມີເສັ້ນທາງແວ່. ສຳລັບທາງເລືອກອື່ນທີ່ເໝາະສົມກັບຜູ້ມັກການປະຈົນໄພ ແມ່ນຂີ່ເຮືອຈັກຫາງຍາວ ລ່ອງໄປຕາມສາຍນ້ຳຫີນບູນຈາກບ້ານນາພອກ. ຈັ່ງໃດກໍ່ຕາມ, ບັນດານັກທ່ອງທ່ຽວສາມາດພັກແຮມຄືນ ນຳເຮືອນຊາວບ້ານ ບ້ານນາຕານ ແລະ ບ້ານກອງລໍ.

ຖ້ຳກອງລໍທີ່ມີຄວາມຍາວປະມານ 7.500 ແມັດ, ເຊິ່ງມີຄວາມກ້ວາງປະມານ 30 ແມັດ ແລະ ສູງນັບແຕ່ 20 ແມັດຫາ 100 ແມັດ. ຖ້ຳກອງລໍ ເປັນຖ້ຳທີ່ສວຍງາມ ແລະ ມີສະເໜ່ດຶງດູດທີ່ສຸດ ເພາະພາຍໃນຖ້ຳ ມີແກ້ງ, ຫີນຍ້ອຍ, ຫາດຊາຍທີ່ສວຍງາມຈຳນວນ 20 ກວ່າຈຸດ ເພື່ອໃຫ້ນັກທ່ອງທ່ຽວໄດ້ຊົມ. ບັນດານັກທ່ອງທ່ຽວສາມາດຂີ່ເຮືອລອດຜ່ານເຂົ້າໄປໃນຖ້ຳໄດ້ຕະຫຼອດ. ໃນລະດູແລ້ງ ເປັນໄລຍະເໝາະສົມທີ່ສຸດ ເພື່ອຊົມຮູບໂສມສີສັນຂອງຖ້ຳ ໂດຍການຂີ່ເຮືອເຂົ້າໄປພາຍໃນຖ້ຳ ແລ້ວກໍ່ສາມາດລົງຈາກເຮືອແວ່ທ່ຽວຊົມທິວທັດ ແລະ ຍ່າງເລາະຫຼິ້ນຕາມຫາດຊາຍຂາວ ດ້ວຍການສຳພັດກັບອາກາດທີ່ເຢັນສະບາຍ.





ຖ້ຳກອງລໍ–ນາຕານ ຖືກຄົ້ນພົບແຕ່ສະຕະວັດທີ XVI. ໃນຊຸມປີ 1960 ເລີ່ມນຳໃຊ້ເຮືອຫາງຍາວເປັນ ພາຫະນະເດີນທາງໄປ – ຜ່ານຖ້ຳແລ່ງນີ້ ຂອງຄົນທ້ອງຖິ່ນ.

ສຳຫຼວດຈິງຈັງ ເປັນຄັ້ງທຳອິດ ເລີ້ມໃນເດືອນກຸມພາ 1995 ແລະ ພົບວ່ານັກທ່ອງທ່ຽວສາມາດຂີ່ເຮືອ ຈັກຫາງຍາວ ແລ່ນລອດເຂົ້າຖ້ຳ ແລະ ຜ່ານອອກອີກດ້ານອື່ນ ເຊິ່ງຫຼຸດຜ່ອນເວລາໃນການສັນຈອນຈາກ 2 ຊົ່ວໂມງ ມາເປັນປະມານ 1 ຊົ່ວໂມງ. ດ້ວຍເຫດນີ້, ອຸມົງຂອງຖ້ຳນີ້ ຈຶ່ງເປັນເສັ້ນທາງການທ່ອງທ່ຽວທາງເຮືອ ໂດຍເກີດຂຶ້ນ ແລະ ຖືກນຳໃຊ້ທົ່ວໄປນັບແຕ່ວັນທີ 12 ມັງກອນ 2002 ເປັນຕົ້ນມາ. ປັດຈຸບັນນີ້ ອຸໂມງລອດຖ້ຳສາຍນີ້ ຈຶ່ງເປັນເສັ້ນທາງຄົມມະນະຄົມ ເຊື່ອມຕໍ່ລະຫວ່າງບ້ານກອງລໍ ຫາບ້ານນາຕານ.

ຖ້ຳກອງລໍມີປະຫວັດຢູ່ວ່າ: ສະໄໝຂຸນບໍລົມ ປະຖົມກະສັດລາວລ້ານຊ້າງ, ກອງທັບຂຸນລໍ ຈາກເມືອງຊວາ(ຫຼວງພະບາງ) ໄດ້ມາຕັ້ງທັບ ເພື່ອລໍຖ້າກອງທັບຂຸນເຈັດເຈືອງ ຈາກເມືອງພວນ (ຊຽງຂວາງ) ເພື່ອພ້ອມກັນໄປຊ່ວຍຂຸນລົກກົມ, ເຈົ້າຄອງນະຄອນສີໂຄດຕະບອງ (ຄຳມ່ວນ) ໃນການເຕົ້າໂຮມແຜນດິນ, ສະຖານທີ່ເຊິ່ງເປັນທີ່ຕັ້ງຂອງບ້ານກອງລໍໃນປະຈຸບັນ. ດັ່ງນັ້ນຈຶ່ງເອີ້ນຖ້ຳນີ້ວ່າ: “ຖ້ຳກອງລໍ”

ຖ້ຳກອງລໍ ມີຄວາມໝາຍມາຈາກ “ກອງທັບລໍ” ບໍ່ແມ່ນ “ກອງຫຼໍ່” ຍ້ອນເຫດຜົນວ່າດ ຄຳວ່າ “ກອງ” ມາຈາກ “ກອງທັບ” ສ່ວນ “ລໍ”ມາຈາກ “ລໍຖ້າ” ເມື່ອລວມເຂົ້າກັນຈຶ່ງເອີ້ນຖ້ຳກອງລໍ ຈົນເທົ່າທຸກວັນນີ້.

## 3. ຖ້ຳພະໜອງປາຝາ.



ຖ້ຳພະ-ໜອງປາຝາ ເປັນແຫຼ່ງທ່ອງທ່ຽວ ວັດທະນະທຳ. ຕັ້ງຢູ່ໃກ້ກັບບ້ານນາຂ້າງຊ້າງ, ຂຶ້ນລົດໄປຕາມທາງເລກທີ 12 ເຊິ່ງຫ່າງຈາກຕົວເມືອງທ່າແຂກໄປທາງທິດຕາເວັນອອກສຽງເໜືອ 14 ກິໂລແມັດ. ໃນຖ້ຳມີພະພຸດທະຮູບຈຳນວນຫຼວງຫຼາຍ ເຖິງ 229 ອົງທີ່ມີອາຍຸເກົ່າແກ່ກວ່າ 600 ປີ. ສ່ວນຢູ່ໜ້າຖ້ຳມີໜອງປາຝາທີ່ສວຍງາມ, ສະນັ້ນ ເພິ່ນຈຶ່ງໃສ່ຊື່ວ່າຖ້ຳພະ-ໜອງປາຝາ.

ບໍລິເວນຖ້ຳພະ-ໜອງປາຝາ ແມ່ນຖ້ຳສອງຊັ້ນຢອງກັນຢູ່, ເຊິ່ງຊັ້ນທີ່ຢູ່ຂ້າງເທິງ ແມ່ນຖ້ຳແຫ້ງ ທີ່ມີພະພຸດທະຮູບຂະໜາດໃຫ່ຍ ແລະ ນ້ອຍເກົ່າແກ່ປະດິດ ສະຖານຢູ່ຕາມພັກຄ້າຍຄືຂັ້ນບັນໄດ. ສ່ວນຖ້ຳທີ່ຢູ່ດ້ານລຸ່ມ ແມ່ນຖ້ຳນ້ຳທີ່ມີສາຍນ້ຳຈາກໜອງປາຝາ ໄຫຼຜ່ານທະລຸເຂົ້າໄປໃນຖ້ຳ. ຖ້ຳທັງສອງນີ້ ມີຄວາມຍາວປະມານ 200 ແມັດ ເຊິ່ງເປັນຖ້ຳທີ່ມີຄວາມສວຍງາມໄປດ້ວຍຫີນຫຼາຍຂະໜາດ ແລະ ຮູບຮ່າງແຕກຕ່າງກັນ ຢັ່ງຢາຍກັນຢູ່ເປັນຍ່ານ. ໃນປີ 2004, ລຸງບຸນນີງ ຊາວບ້ານນາຂ້າງຊ້າງ ເຫັນຝູງເຈຍບິນເຂົ້າ-ບິນອອກຮູຕາມຜາທີ່ສູງ 28 ກວ່າແມັດ, ລາວປີນໜ້າຜາຂຶ້ນໄປ ຈົນພົບປາກຖ້ຳ ທີ່ມີຄວາມກ້ວາງ 15 ແມັດ. ລາວໄດ້ພົບເຫັນພະພຸດທະຮູບຈຳນວນຫຼວງຫຼາຍ. ຕໍ່ມາ, ອຳນາດການປົກຄອງ ແລະ ຊາວບ້ານ ຈຶ່ງໄດ້ທຳພິທີຄາລະວະ ແລະ ປົກປັກຮັກສາພະພຸດທະຮູບ ອັນລ້ຳຄ່າເຫຼົ່ານີ້ໄວ້ ໃນສະຖານທີ່ດັ່ງເດີມ. ພະພຸດທະຮູບເຫຼົ່ານີ້ ແມ່ນມໍລະດົກຕົກທອດມາ ແຕ່ຍຸກສະໄໝຂອງອານາຈັກສີໂຄດຕະບອງ ແລະ ລ້ານຊ້າງ.









## 4. ຖ້ຳຊ້າງ.

ຖ້ຳຊ້າງ: ຢູ່ໃນຖ້ຳມີຫີນປູນມີຮູບຮ່າງຄ້າຍ ຄືກັນກັບຮູບຊ້າງ. ໃນໄລຍະບຸນປີໃໝ່ລາວ ມີຜູ້ຄົນນິຍົມໄປ ສົງນ້ຳບູຊາຫົວຊ້າງ ຕາມປະເພນີ. ຖ້ຳຊ້າງຕັ້ງຢູ່ບ້ານຖ້ຳ ເມືອງທ່າແຂກ, ຫ່າງຈາກຕົວເມືອງທ່າແຂກປະມານ 8 ກມ, ຂຶ້ນລົດໄປຕາມທາງເລກ 12 ພາຍໃນຖ້ຳຈະມີພະພຸດທະຮູບ ມີຮູບປັ້ນອົງຄະລັກຕ່າງໆ. ສິ່ງທັງໝົດເລົ່ານັ້ນ ແມ່ນພູມປັນຍາ, ສັດທາຂອງຊາວພຸດໄດ້ພ້ອມກັນສ້າງ ແລະ ເອົາໄປປະດິດໄວ້ ແຕ່ໃນສ່ວນທີ່ເປັນທຳມະຊາດ ນັ້ນພາຍໃນຖ້ຳ ກໍ່ມີຫີນທີ່ເປັນຮູບສັດຕ່າງໆ ເຊິ່ງແລ້ວ ແຕ່ຜູ້ທີ່ພົບເຫັນ ຈະໃຫ້ຈິນຕະນາການ ມີຫີບໃສ່ໃບລານ  ທີ່ເຮັດດ້ວຍຫີນ ຢູ່ກ້ຳຊ້າຍຂອງຖ້ຳ(ສັງເກດເວລາເຮົາເຂົ້າປາກຖ້ຳ) ສ່ວນປະຫວັດຄວາມເປັນມາຂອງຖ້ຳແຫ່ງນີ້ ກໍ່ຍັງມີຫລາຍອັນທີ່ຍັງຈະຕ້ອງໄດ້ສຶກສາເກັບກຳຂໍ້ມູນຕື່ມ, ແຕ່ທີ່ຈະແຈ້ງປາກຖ້ຳແຫ່ງນີ້ທະຫານອາສາສະຫມັກຫວຽດ ນາມທີ່ມາປະຕິບັດຫນ້າທີ່ຄຽງບ່າຄຽງໄຫຼ່ ກັບທະຫານກອງທັບລາວອິດສະລະ ໄດ້ສະລະຊີບ ເປັນຈຳນວນຫລາຍຮ້ອຍຄົນໃນຊ່ວງຊຸມປີ 1960





## 5. ກຳແພງຫີນຍັກ ພູຄັນນາ.

ພູຄັນນາ ຫຼື ກຳແພງຍັກ ເປັນສະຖານທີ່ທ່ອງທ່ຽວ ທາງທຳມະຊາດ ຕັ້ງຢູ່ບ້ານໃໝ່ໂພສີ ເຊິ່ງຫ່າງຈາກເທດສະບານເມືອງທ່າແຂກ 8 ກິໂລແມັດ ຂຶ້ນລົດໄປຕາມທິດທາງເໜືອຕາມເສັ້ນທາງເລກທີ 13 ໃຕ້. ສາຍພູຄັນນາເປັນກຳແພງຫີນທີ່ກ້ວາງ ແລະ ສູງ ມີຫຼາຍຕອນ ເຊິ່ງເມື່ອລວມກັນແລ້ວຍາວ ເຖິງ 15 ກິໂລແມັດ. ສະຖານທີ່ສຳລັບຊົມກຳແພງຍັກນີ້ ດີທີ່ສຸດແມ່ນຢູ່ແຖບບ້ານນາໂພນສີທາ – ບ້ານໃໝ່ໂພນສີ, ກຳແພງຫີນຍັກ ຢູ່ທີ່ນີ້ເປັນບ່ອນທີ່ມີກ້ອນຫີນຍັກ ໃນຮູບຊົງກຳແພງ ທີ່ບໍ່ທັນແຕກແຍກ ຍາວກ່ວາໝູ່ ໂດຍມີຄວາມຍາວເຖິງ 75 ແມັດ ແລະ ມີສູງເຖິງ 16 ແມັດ.

ມີບັນດານັກບູຮານຄະດີຊີ້ແຈງວ່າ: ແມ່ນກຳແພງທີ່ເກີດຂຶ້ນຈາກທຳມະຊາດ ບໍ່ແມ່ນຄົນປັ້ນແຕ່ງ ເຊິ່ງຜ່ານຂະບວນວິວັດທະນາການຫຼາຍລ້ານປີ ຈຶ່ງກາຍເປັນກຳແພງຍັກຫີນຊາຍ. ຢ່າງໃດກໍ່ດີ, ຍັງມີທິດສະດີອື່ນອີກ ທີ່ສັນນິຖານວ່າ ແມ່ນອະຣິຍະທຳແຫ່ງລະບົບປ້ອງກັນທີ່ສ້າງຂຶ້ນໃນສະຕະວັດ VIII ພາຍໃຕ້ຍຸກສະໄໝຂອງອານາຈັກສີໂຄດຕະບອງເກົ່າແກ່.





## 6. ຖ້ຳນ້ຳລອດເຊບັ້ງໄຟ.



ຖ້ຳນ້ຳລອດເຊບັ້ງໄຟ: ຕັ້ງຢູ່ທາງທິດຕາເວັນຕົກສ່ຽງເໜືອຂອງປ່າສະຫງວນແຫ່ງຊາດພູຫີນໜາມໜໍ່. ຊຶ່ງກວມເອົາເນື້ອທີທັງໝົດ 10.430 ເຮັກຕາ ແລະ ຕິດກັບບ້ານປະຊາຊົນ 3 ບ້ານຄື: ບ້ານຫຍ້າແວດ,ບ້ານໜອງປີງ ແລະ ບ້ານກອນຄະໂຍມ. ຄວາມຍາວຂອງຖ້ຳມີ 11,5 ກມ. ຂຶ້ນລົດໄປຕາມເສັ້ນທາງເລກທີ 12 ເມືອງມະຫາໄຊແລ້ວລ້ຽວຂວາມຸ້ງກົງສູ່ຖ້ຳນ້ຳລອດເຊບັ້ງເຊບັ້ງໄຟ ເມືອງບົວລະພາ ຫ່າງຈາກຫ້ອງການປົກຄອງເມືອງ ປະມານ 14 ກິໂລແມັດ.ໃນປີ 1995 ໄດ້ມີນັກສຳຫຼວດຊາວຝລັ່ງ ລ່ອງແພໄມ້ໄຜ່ເຂົ້າໄປສຳຫຼວດຖ້ຳນີ້ເປັນເທື່ອອິດ, ຖ້ຳແຫ່ງນີ້ ເມື່ອກ່ອນຊາວບ້ານໄດ້ເອີ້ນວ່າ: ຖ້ຳຂຸນເຊ ແລະ ມີນັກທ່ອງທ່ຽວເຂົ້າມາທ່ຽວເປັນປະຈຳ. ຖ້ຳແຫ່ງນີ້ປະປ່ອຍເປັນເວລາ 90 ກວ່າປີ. ຈາກນັ້ນມາ, ທີມງານສຳຫຼວດຈາກປະເທດຝຣັ່ງ ກໍ່ໄດ້ເຂົ້າມາສຳຫຼວດອີກເທື່ອໃຫ່ມໃນປີ 1995 ແຕ່ກໍ່ເກັບກຳຂໍ້ມູນໄດ້ພຽງເລັກນ້ອຍ. ຫຼັງຈາກນັ້ນໃນປີ 2006 ແລະ ໃນປີ2008 ທ່ານ ຈອນໂພແລກ ຜູ້ຊ່ຽວຊານກ່ຽວກັບຖ້ຳ ໄດ້ນຳພານັກວິໄຈຈາກປະເທດການດາ ແລະ ອາເມລິກາ ເຂົ້າຮ່ວມສຳຫຼວດນຳອີກ. ນອກຈາກນັ້ນ ຍັງມີຜູ້ຊ່ວຍຄົນລາວ ແລະ ພະນັກງານນຳທາງອີກຈຳນວນໜຶ່ງທີ່ໄດ້ຖືກແຕ່ງຕັ້ງ ໄດ້ເຂົ້າສຳຫຼວດ. ຖ້ຳແຫ່ງນີ້ເປັນຫ້ອງທີ່ໃຫ່ຍ ແລະ ມີຄວາມສວຍງາມໜ້າປະທັບໃຈ. ນັກສຳຫຼວດຖ້ຳໄດ້ໃສ່ຊື່ຫ້ອງດັ່ງກ່າວເປັນ: ຫໍວິຫານໃຫຍ່ຍ້ອນວ່າເປັນຫ້ອງທີ່ກວ້າງ, ໃຫຍ່ ແລະ ສູງ. ໃນນີ້ ຍັງມີຫີນງອກທີ່ມີຂະໜາດໃຫຍ່ ຢູ່ບໍລິເວນໃກ້ກັບປາກຖ້ຳ. ພາຍໃນຖ້ຳ ໄດ້ມີການຕົບແຕ່ງຈາກທຳມະຊາດຢ່າງສວຍສົດງົດງາມ ເປັນຕົ້ນແມ່ນຫີນຍ້ອຍທີ່ມີຂະໜາດໃຫຍ່ ແລະ ນ້ອຍທີ່ແຕກຕ່າງກັນ ທີ່ເກີດຈາກການສະສົມຂອງທາດຫີນປູນ ບາງບ່ອນກໍເປັນອ່າງຫີນປູນ, ບາງບ່ອນກໍເປັນຫີນຊາຍ ທີ່ເປັນຮູບໜ່ວຍໄຂ່ ຢັ່ງຢາຍຢູ່ຢ່າງຫຼວງຫຼາຍ ແລະ ໜ້າອັດສະຈັນ.





## 7. ຖ້ຳພະຈັນ.

ຖ້ຳພະຈັນ ແມ່ນສະຖານທີ່ທ່ອງທ່ຽວທາງທຳມະຊາດ ຕັ້ງຢູ່ບ້ານດ່ອຍ ເມືອງທ່າແຂກ. ຂຶ້ນລົດໄປຕາມທາງເລກທີ 12 ຫ່າງຈາກຕົວເມືອງ 22 ກິໂລແມັດ ໃກ້ກັບພະທາດເມືອງພອນ ມາທາງບ້ານນາປະມານ 3 ກິໂລແມັດ. ເປັນຖ້ຳຮູໂລ່ງ ສາມາດເຂົ້າອອກໄດ້ສະບາຍ. ປາກຖ້ຳກວ້າງປະມານ 80 ແມັດ, ສູງປະມານ 90–100 ແມັດ, ເປັນຖ້ຳຊອດ ທີ່ມີນ້ຳພອນໄຫລຜ່ານປະມານ 350 ແມັດ ກໍ່ຊອດອອກ. ເອີ້ນວ່າ "ຖ້ຳພະຈັນ" ກໍ່ຍ້ອນວ່າພາຍໃນຖ້ຳ ມີພະພຸດທະຮູບທີ່ເຮັດດ້ວຍໄມ້ຈັນ ປະດິດສະຖານຢູ່, ແຕ່ກ່ອນ ພະອົງນີ້ ແມ່ນປິ່ນຫນ້າໄປໃສ່ກວນຫມາກຫຸງ (ປິ່ນລົງໃຕ້) ສາຍຕາຂອງພະອົງໂຕແມ່ ຕົກໃສ່ຈຸດໃດ ຈະມີປະກາຍແກ້ວອອກ ແຕ່ພາຍຫລັງ ຄົນຂີ້ຢາ ເຈາະເອົາລູກແກ້ວອອກຈາກພະສຽນຂອງພະອົງແມ່ອົງນີ້ ແລ້ວພະອົງຜູ້ ກໍ່ສະເດັດຫນີ. ໃນເວລາທີ່ຊາວບ້ານໄດ້ແກ້ໂສ້ທີ່ລ່າມໄວ້ອອກ, ຈາກນັ້ນມາ ຈິ່ງເອົາຫັນຫນ້າມາທິດຕາເວັນຕົກ ແລະ ນຳເອົາພະພຸດທະຮູບອີກຫລາຍອົງມາປະດິດສະຖານໄວ້. ເມື່ອຮອດເດືອນ 5 ເພັງ, ຊາວບ້ານ ຈະພ້ອມພາກັນເຮັດບຸນນະມັດສະການພະຈັນຢູ່ເປັນປະຈຳ.







## 8. ຂຸມນ້ຳໂດມ.

ຂຸມນ້ຳໂດມ ແມ່ນສະຖານທີ່ທ່ອງທ່ຽວ ຕັ້ງຢູ່ບ້ານນາ ເມືອງທ່າແຂກ ທ່ານສາມາດເດີນເຂົ້າໄປຂຸມນ້ຳໂດມໄດ້ສອງທາງຄື: ທາງບົກຫ່າງຈາກເມືອງ 33 ກິໂລແມັດ, ທາງນ້ຳ(ຂຶ້ນເຮືອ) ໂດຍຫ່າງຈາກເມືອງ 20 ກິໂລແມັດ, ເປັນບ່ອນນ້ຳໂດມໄຫລອອກ ໃນຮູແຈ້ງ ແລະມີຄວາມກວ້າງປະມານ 20 ແມັດ, ປາກຖ້ຳສູງປະມານ 5 ແມັດ, ຢູ່ຫນ້າຖ້ຳ ຈະມີກ້ອນຫີນ ລຽນກັນຄືກັບຄັນຄູປ້ານນ້ຳ, ທາງທິດຕາເວັນຕົກຂອງຂຸມ ຈະມີຖ້ຳຍາວລຽບໄປຕາມສາຍນ້ຳ ມີພະແກ້ວປະດິດສະຖານຢູ່, ສ່ວນຢູ່ທິດຕາເວັນອອກຂອງຖ້ຳ ຈະມີ 2 ຮູ ຊອດລົງໃສ່ວັງນ້ຳໃນຖ້ຳ. ຮອດຍາມເດືອນ 4–5 ແຕ່ລະປີ ຊາວບ້ານກົກຕ້ອງ, ບ້ານດອຍ, ນາຫົວງົວ, ຜ່າແຫລມ, ຈະພາກັນໄປເບືອປາໃນສາຍນ້ຳໂດມ. ຕາມ ທ່ານ ຝຣັ່ງຊີວບູກິດ ຂຽນບົດລາຍງານໃນການສຳຫລວດຮ່ວມກັນກັບເພື່ອນຮ່ວມງານຊາວຝຣັ່ງຂອງເພິ່ນ ໃຫ້ຮູ້ວ່າ: ໃນຂຸມ ນ້ຳໂດມມີປາຫລາຍ ໃນນັ້ນ ມີປາບໍ່ມີຕາ ປະມານ 4–5 ໂຕ, ຍາວປະມານ 5 ຊັງຕີແມັດ

## ໙. ເຂດທົ່ງຊາດ.

ເຂດທົ່ງຊາດ (ລາດໄຮ, ແລະ ຫ້ວຍສະງອງ) ເປັນແຫຼ່ງທ່ອງທ່ຽວທຳມະຊາດ ເລີ້ມຕົ້ນຂຶ້ນເຮືອຢູ່ບ້ານ ທ່າລັງ ເມືອງນາກາຍ ຫ່າງຈາກຕົວເມືອງ 30 ກິໂລແມັດ ຜ່ານອ່າງຫີນເກັບນ້ຳໄປລາດໄຮ ໄລຍະທາງຍາວ 17 ກິໂລແມັດ ໃຊ້ເວລາ 3 ຊົ່ວໂມງ ແລະ ຈາກລາດໄຮ  ຍ່າງໄປບ້ານທົ່ງຊາດ 6 ກິໂລແມັດ ແລະ ໃຊ້ເວລາ 2 ຊົ່ວໂມງ, ໃນເຂດນີ້ ຍັງເປັນເຂດປ່າໄມ້ ທີ່ຍັງຄົງມີຄວາມສວຍງາມ ແລະ ອຸດົມສົມບູນຫຼາກຫຼາຍໄປດ້ວຍຊີວະນາໆພັນ, ເປັນປ່າດົງດິບປະສົມ ຜັດປ່ຽນໃບ ແລະ ປ່າໄມ້ໃບແຫຼມ ໂດຍສະເພາະ (ໄມ້ແປກ, ໄມ້ຮິ້ງ ). ນອກຈາກນີ້ ຍັງມີສັດປ່າຫາຍາກ ໃກ້ສູນພັນຍັງພົບເຫັນໃນເຂດນີ້ ເຊັ່ນ: ທະນີແກ້ມຂາວ, ຄ່າງຂາແດງ, ລີງ ແລະ ຈຳພວກນົກຈຳນວນໜຶ່ງ. ມີຄວາມເປັນໄປໄດ້ສູງ ໃນການພັດທະນາເປັນແຫຼ່ງທ່ອງທ່ຽວທຳມະຊາດອຸດົມສົມບູນ ທີ່ສາມາດດຶງດູດນັກທ່ອງທ່ຽວ ແລະ ສຳພັດກັບຄວາມສະຫຼັບຊັບຊ້ອນ ຊຶ່ງຍັງຄົງໄວ້ໃນຄວາມລີ້ລັບຂອງທຳມະຊາດໃນເຂດນີ້ດ້ວຍຕົວເອງ.





## 10. ຕາດຖູນ.



ຕາດຖູນຕັ້ງຢູ່ບ້ານຂອນແກ່ນ ເມືອງນາກາຍ ຫ່າງຈາກຕົວເມືອງປະມານ 40 ກິໂລແມັດ. ໂດຍໃຊ້ເຮືອໂລ (ທີ່ເຮັດຈາກຖັງນໍ້າມັນຍົນ) ເປັນພາຫະນະໃຊ້ເວລາ 2 ຊົ່ວໂມງປາຍ, ຖ້າໃຊ້ເຮືອຫາງຍາວທີ່ເຮັດດ້ວຍໄມ້ແມ່ນ 4-6 ຊົ່ວໂມງ. ເປັນນໍ້າຕົກຕາດຂະໜາດໃຫ່ຍ, ມີຄວາມສູງປະມານ 4-7  ແມັດ, ກວ້າງປະມານ 30-50 ແມັດ. ຕາດຖູນຕັ້ງຢູ່ສາຍນໍ້າອອນ ເຊິ່ງມີທຳມະຊາດ ທີ່ສວຍງາມ ເໝາະສົມກັບການທ່ອງທ່ຽວຫຼາຍທີ່ສຸດ ເປັນຕົ້ນແມ່ນ ການເຮັດກິດຈະກຳ ທາງນໍ້າເຊັ່ນ: ໂດດນໍ້າ, ລອຍນໍ້າ, ຕຶກເບັດປາສູດ, ຂີ່ເຮືອທ່ຽວອ່າງນໍ້າ, ຖ້າໂຊກດີ ທ່ານຍັງຈະສາມາດເຫັນສັດຫຼາຍຊະນິດ ເປັນຕົ້ນແມ່ນ ນົກເປັດນໍ້າ, ນົກຍາງຂາວ, ນົກຄໍງູ, ລີງ ແລະ ຝູງຊ້າງ ທີ່ລົງມາກິນນໍ້າຢູ່ຕາມແຄມນໍ້າອອນ.



## 11. ທົ່ງກະແຈງ.

ທົ່ງກະແຈງ ຕັ້ງຢູ່ປ່າສະຫງວນ ເຂດນາວາງ ເມືອງນາກາຍ ຫ່າງຈາກເມືອງປະມານ 40 ກິໂລແມັດ. ທົ່ງກະແຈງ ເປັນທົ່ງຫຍ້າ. ຕັ້ງຢູ່ເທິງພູ ທີ່ມີຄວາມສວຍງາມອຸດົມສົມບູນ ທາງດ້ານປ່າໄມ້ຫຼາຍ. ນອກຈາກນັ້ນ ພູຍັງມີໜອງຂະໜາດໃຫ່ຍ ມີຊື່ວ່າ ໜອງກະແຈງ ຊຶ່ງມີຄວາມສູງ 1,400 ແມັດ ທຽບໃສ່ລະດັບໜ້ານໍ້າທະເລ ເໝາະສົມກັບການຍ່າງທ່ຽວປ່າ ໃຊ້ເວລາປະມານ 3-5 ວັນ. ຕາມສາຍນໍ້າຍັງມີນໍ້າຕົກຕາດ ທີ່ທຳມະຊາດຫຼາຍແຫ່ງ ທີ່ມີຄວາມສວຍງາມ. ຢູ່ຕາມສາຍນໍ້າ ຍັງມີປາ ອາໄສຢູ່ເປັນຈຳນວນຫຼວງຫຼາຍ, ນອກຈາກນັ້ນແລ້ວ ຖ້າໂຊກດີ ທ່ານຈະຍັງສາມາດເຫັນສັດປ່າຫຼາຍຊະນິດ ເຊັ່ນ: ນົກກົກ, ລີງ, ທະນີ, ຂາແດງ, ຟານ ແລະ ກວາງ ຊຶ່ງຍັງມີສັດອາໄສຢູ່ບໍລິເວນນີ້ ຫຼາຍຊະນິດ. ເນື່ອງຈາກເປັນເຂດອະນຸລັກຂອງໂຄງການນໍ້າເທີນ 2.











## 12. ຖ້ຳຜານາງຫຼີງ.

ຖ້ຳຜານາງຫຼີງ ຕັ້ງຢູ່ບ້ານ ຖູນເງິນ, ເມືອງ ຖູນຄຳ ຢູ່ເສັ້ນທາງ 8A ຫ່າງຈາກເມືອງຖູນຄຳ ປະມານ 12 km ແລະ ຫາງຈາກທາງແບ່ງ ຫຼັກ 20 ປະມານ 25 km. ເປັນແຫຼ່ງທ່ອງທ່ຽວທຳມະຊາດ (ຖ້ຳເປີດ, ອາກາດລ່ວງ) ມີສອງຊັ້ນ, ຄວາມຍາວປະມານ 2 ກິໂລແມັດ. ພາຍໃນຖ້ຳມີ ເຫວ ປະມານ 4 ຈຸດໃຫ່ຍໆ, ມີຫີນງອກ-ຫີນຍ້ອຍຫຼາຍແບບ ຫຼາຍສີສັນ, ມີອ່າງນ້ຳ ເປັນຫີນປູນ, ຫີນປະດັບ ມີຫຼາຍຮູບຊົງຫນ້າອັດສະຈັນ, ຖ້ຳແຫ່ງນີ້ ສາມາດເຂົ້າທ່ຽວຊົມໄດ້ຕະຫຼອດປີ, ປະຈຸບັນນີ້ ຊາວບ້ານໄດ້ສ້າງທາງຂຶ້ນ - ລົງ, ຂັ້ນໄດ, ຮາວຮົ້ວຈັບ ໃນບາງຈຸດທີ່ເປັນອັນຕະລາຍ ພາຍໃນຖ້ຳ, ປະຊາຊົນພາຍໃນບ້ານ, ເມືອງຖູນຄຳ ມີແຜນຈະພັດທະນາ ແລະ ເປີດເປັນແຫຼ່ງທ່ອງທ່ຽວ ຢ່າງເປັນທາງການ ເພື່ອຮອງຮັບໃຫ້ກັບການຂະຫຍາຍຕົວ ຂອງວຽກງານທ່ອງທ່ຽວ ໃຫ້ເປັນທາງເລືອກໜຶ່ງ ສຳລັບນັກທ່ອງທ່ຽວທີ່ມາໃນວົງຈອນ The Loop.

ປະຫວັດຂອງຖ້ຳຜານາງຫຼີງ: ຖ້ຳຜານາງຫຼີງ ມີປະຫວັດຄວາມເປັນມາ ໃນສະໄໝກ່ອນ ເປັນເມືອງເກົ່າທັກຂິນ ເຊິ່ງເພິ່ນເອີ້ນກັນວ່າ: ເຂດຂົງວຽງໃນສະໄໝເຈົ້າຟ້າງຸ່ມ ແຫຼ່ງຫຼ້າທໍລະນີ ທ້ອນໂຮມອານາຈັກລາວລ້ານຊ້າງ ເຊິ່ງເພິ່ນເຄື່ອນທັບມາແຕ່ພາກໃຕ້ ເພື່ອຕີເອົາເມືອງນ້ອຍໃຫ່ຍ ໃນ ຄ.ສ 1353, ຢູ່ເຂດນີ້ ເຈົ້າຟ້າງຸ່ມໄດ້ມາທ້ອນ ໂຮມໄພ່ພົນນັກຮົບຫຼາຍພັນຫຼາຍໝື່ນຄົນ, ໃນການມາຂອງເພິ່ນ ໄດ້ນຳເອົາພະສົງສຳມະເນນ, ຊ່າງຕີເຫຼັກ, ຕີເງິນ, ຕີຄຳ ຊ່າງປັ້ນໝໍ່ໄຫມາພ້ອມ ເພື່ອເຄື່ອນທັບໄປຕີເອົາເມືອງໄຜ່ລ້ອມ (ວຽງຈັນ), ເວລາເຄື່ອນທັບໄປພາກເໜືອ ມີໄພ່ພົນຈຳນວນໜຶ່ງ ບໍ່ສາມາດໄປໄດ້ ຈຶ່ງຈັດບ້ານເຮືອນຢູ່ເມືອງເກົ່າທັກຂິນ (ບ້ານຖຸນເງິນ) ໃນປັດຈຸບັນ.

ໃນຕໍ່ມາຊາວທັກຂິນ ແຕ່ລະວັນອອກໄປທຳມາຫາລ້ຽງຊີບ ຈຶ່ງມີນາງໜຶ່ງ ຫຼົງທາງເມືອບ້ານ ເມື່ອຍ່າງເລາະໄປເລາະມາຈົນລ້າລ່ອຍແລ້ວ ໄດ້ນັ່ງພັກເຊົາຢູ່ກ້ອງຕົ້ນໄມ້ໃກ້ກັບບໍລິເວນປາກຖ້ຳ ເມືອຫຼຽວໄປຫຼຽວມາ ຈຶ່ງພົບເຫັນນັກປາດພະອາຈານມະຫາໂຄດ ທີ່ກຳມະຖານຈຳສິນໃນຖ້ຳແຫ່ງນີ້ ເພິ່ນຈຶ່ງໄດ້ບອກທາງໃຫ້ນາງກັບເມືອບ້ານທັກຂິນ (ຖູນເງິນ) ຕາມເປົ້າໝາຍ ສະນັ້ນ ຕໍ່ມາຊາວບ້ານ ຈຶ່ງໄດ້ເອີ້ນຊື່ຖ້ຳແຫ່ງນີ້ວ່າ: **ຖ້ຳຜານາງຫຼີງ.**

## 13. ນ້ຳຕົກຕາດຊຽງລື.



ນ້ຳຕົກຕາດຊຽງລື ຕັ້ງຢູ່ບ້ານນາຕ່ອຍ ເມືອງບົວລະພາ. ເປັນນ້ຳຕົກຕາດທຳມະຊາດ ອີກແຫ່ງໜຶ່ງ ທີ່ມີຄວາມສວຍສົດງົດງາມບໍ່ແພ້ນ້ຳຕົກຕາດແຫ່ງອື່ນໆ ໃນປະເທດເຮົາ, ຄວາມສູງຂອງນ້ຳຕົກ ປະມານ 70 ແມັດ, ບໍລິເວນນ້ຳຕົກ ມີອ່າງນ້ຳທີ່ໃສເຢັນ ແລະ ສວຍງາມ ເໝາະແກ່ການລິງຫຼິ້ນອາບນ້ຳ, ລອຍນ້ຳ ເພື່ອສ້າງຄວາມເພີດເພີນແກ່ຜູ້ມາທ່ຽວຊົມ ແລະ ສອງຂ້າງອ່າງນ້ຳໃສເຢັນດັ່ງກ່າວນັ້ນ ປົກຄຸມດ້ວຍປ່າໄມ້ທີ່ຂຽວສະອຸ່ມ ທີ່ໜ້າປະທັບໃຈແກ່ຜູ້ມາພົບເຫັນ ນອກນັ້ນ ບໍລິເວນນ້ຳຕົກຍັງປະກອບດ້ວຍດອກໄມ້ສີຊົມພູ (ດອກທຽນ) ເບັ່ງບານເປັນຕາອອນຊອນ.ໃນປັດຈຸບັນນີ້ ແມ່ນໄດ້ຈັດສັນເປັນສະຖານທີ່ທ່ອງທ່ຽວ.

ຕາມການເລົ່າຂານກັນມາແຕ່ປູ່-ຍ່າ ຕາ-ຍາຍ ຂອງຊາວບ້ານຫຍ້າແວດວ່າ: ໃນເມື່ອກ່ອນ ນ້ຳຕົກຕາດແຫ່ງນີ້ ເພິ່ນເອີ້ນວ່າ: ″ຜາດຳຜາແດງ ຊຽງຈັນຊຽງລື ທຣໍາຊິຍິງຕາລິງອາຍຣອຍ″ ໝາຍຄວາມວ່າ: ທັງໝົດນີ້ ແມ່ນສາຍພົວພັນດຽວກັນ ລະຫວ່າງ ໜອງຍາດ, ໜອງປາດ, ຕາດຊຽງລື ສາຍພູກຳພ້າ (ທຣາຊິຍິງ), ນາກຳພ້າ(ຕາລິງອາຍລອຍ) ທີ່ຕັ້ງຢູ່ໃກ້ໆກັນນີ້ເອງ. ໃນເມື່ອກ່ອນສຽງນ້ຳຕົກດັງ " ຮຶງໆໆໆ " ສຽງດັງກ່າວ ໄດ້ກ້ອງກັງວານໄປໄລຍະໄກຫຼາຍກິໂລແມັດ..

ນ້ຳຕົກຕາດຊຽງລືໃນປັດຈຸບັນນີ້ ແມ່ນຍັງບໍ່ທັນໄດ້ເປີດໃຫ້ເຂົ້າທ່ຽວຊົມຢ່າງເປັນທາງການເທື່ອ ແຕ່ກໍ່ຍັງມີຫຼາຍໆຄົນ ທີ່ໄດ້ເຂົ້າໄປທ່ຽວຊົມ. ສະຖານທີ່ທ່ອງທ່ຽວ ນ້ຳຕົກຕາດຊຽງລື ຫ່າງຈາກຕົວເມືອງບົວລະພາ 12 ກິໂລແມັດ, ຊ່ວງໄລຍະເວລາທີ່ເໝາະສົມແກ່ການທ່ອງທ່ຽວ ແມ່ນຊ່ວງທ້າຍ ເດືອນມິຖຸນາ ຫາ ທ້າຍເດືອນ ຕຸລາ.

## 14. ທ່າລັ່ງ.



ບ້ານທ່າລັ່ງ ແມ່ນບ້ານໜຶ່ງທີ່ຂຶ້ນກັບເມືອງນາກາຍ, ແຂວງຄຳມ່ວນ. ບ້ານທ່າລັງ ມີໄລຍະທາງຫ່າງຈາກເມືອງທ່າແຂກ, ແຂວງຄຳມ່ວນ 99 ກິໂລແມັດ ແລະ ຫ່າງຈາກເທດສະບານເມືອງນາກາຍ 22 ກິໂລແມັດ, ເປັນເສັ້ນທາງປູຢາງ ຊຶ່ງການເດີນທາງເຂົ້າເຖິງແມ່ນສະດວກສະບາຍ, ສາມາດເຂົ້າເຖິງໄດ້ໂດຍພາຫະນະທາງບົກທຸກປະເພດ, ສຳລັບເສັ້ນທາງພາຍໃນບ້ານ ແມ່ນເປັນເສັ້ນທາງດິນແດງ,

ສະພາບແວດລ້ອມທຳມະຊາດບໍລິເວນໃກ້ຄຽງ ແມ່ນມີຍັງມີຄວາມອຸດົມສົມບູນ, ມີສັດປ່ານາໆຊະນິດ ທີ່ອາໃສຢູ່ຕາມປ່າບໍລິເວນໃກ້ຄຽງ ເຊັ່ນ: ກະຮອກ, ເຈຍ, ນົກ ແລະ ສັດໃຫຍ່ຈຳນວນໜຶ່ງ. ນອກຈາກນີ້, ທ່າລັ່ງ ແມ່ນເປັນເຂດໜຶ່ງ ທີ່ຢູ່ໃນເຂດຄູ້ມຄອງຂອງເຄື່ອນໄຟຟ້ານ້ຳເທີນ 2 ແລະ ເປັນເຂດທີ່ມີພູມສັນຖານສູງ ຊຶ່ງເຂດນີ້ ແມ່ນມີອາກາດຊຸ່ມຊື່ນ ແລະ ເຢັນດີ ເຫມາະສົມແກ່ການມາພັກຜ່ອນຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເພື່ອຊົມຄວາມສວຍງາມຂອງທິວທັດທຳມະຊາດ, ລົງຫຼິ້ນນ້ຳ, ຫາປາ ແລະ ອື່ນ.





ທ່າລັ່ງ ເປັນບ້ານທີ່ ມີຂົວຂ້າມນ້ຳເທີນ ເຊື່ອມຕໍ່ຕາມເສັ້ນທາງເລກທີ່ 1E ອອກໄປສູ່ເມືອງຄຳເກີດ ແຂວງບໍລິຄຳໄຊ, ສະພາບການພັດທະນາ ແລະ ສິ່ງເສີມການທ່ອງທ່ຽວທາງເຂດທ່າລັ່ງ. ໃນໄລຍະຜ່ານມາ ແມ່ນມີນັກທ່ອງທ່ຽວ ເພີ່ມຈຳນວນຂຶ້ນເລື່ອຍໆ ໂດຍສະເພາະແມ່ນ ນັກທ່ອງທ່ຽວຕ່າງປະເທດ ທີ່ນຳໃຊ້ລົດຈັກ ເຂົ້າທ່ຽວຊົມໃນວົງຈອນ The Loop ເປັນຕົ້ນແມ່ນໃນລະດູແລ້ງ, ສ່ວນລະດູຝົນ ແມ່ນຂ້ອມຂ້າງໃນບ້ານ. ມີໂຮມສະເຕ 10 ຫຼັງຄາເຮືອນ, ມີເຮືອນພັກ 2 ແຫ່ງ, ຮ້ານອາຫານ 3 ແຫ່ງ, ຮ້ານຂາຍເຄື່ອງຍ່ອຍ 7 ຮ້ານ ແລະ ບ່ອນຜະລິດນ້ຳກ້ອນ 1 ແຫ່ງ, ມີຮ້ານທີ່ຜະລິດ ແລະ ຈາໜ່າຍອາຫານ ເຮັດມາຈາກປາທີ່ກຸ່ມປະມົງຊາວບ້ານ ຫາມາສະໜອງ, ມີເຮືອທີ່ສາມາດບໍລິການນຳທ່ຽວຈຳນວນ 10 ລຳ.



## 15. ຕາດນ້ຳສະນາມ.

ນ້ຳຕົກຕາດນ້ຳສະນາມ ແມ່ນສະຖານທີ່ທ່ອງທ່ຽວທຳມະຊາດ ເປັນນ້ຳຕົກຕາດແຝດ ຕັ້ງຢູ່ໃນພູຜາໜ່ານ ຕັ້ງຢູ່ໃນເຂດປ່າສະຫງວນພູຫີນປູນ, ເຂດບ້ານຄູນຄຳ, ເມືອງຄູນຄຳ ແຂວງຄຳມ່ວນ. ນ້ຳຕົກຕາດ ຫ່າງຈາກຕົວເມືອງ 3 ກິໂລແມັດ. ສາມາດຂີ່ລົດປະເພດສີ່ລໍ້ເຂົ້າໄປໄດ້ ປະມານ 2 ກິໂລແມັດ. ຈາກນັ້ນ ເຮົາກໍ່ຍ່າງຂຶ້ນພູເຂົາດິນ ທີ່ມີປ່າໄມ້ອຸດົມສົມບູນ; ມີນົກ, ສັດປ່າຫລາຍຊະນິດພັນ, ໄລຍະທາງດັ່ງກ່າວນີ້ ກໍ່ປະມານ 1 ກິໂລແມັດ ກໍ່ຈະເຖິງຈຸດນ້ຳຕົກຕາດ. ຖ້າຫາກເຮົາເຂົ້າໄປໃນຍາມເຊົ້າ ໂດຍບໍ່ໃຊ້ສຽງດັງ ໂອກາດທີ່ເຮົາຈະເຫັນຝູງລິງໂຄ່ງ, ຂາແດງ ມາກິນນ້ຳ ໂດຍສະເພາະແລ້ວ ໃນຍາມເວລາ ປະມານ 8.00 ໂມງ. ນ້ຳຕົກຕາດນີ້ ຕົກຈາກຫນ້າຜາສູງ ປະມານ 70–100 ແມັດ ແບ່ງອອກເປັນສອງແງ່, ໃນຍາມເຊົ້າ ເມື່ອເວລາເຮົາຍ່າງເລາະລຽບ ກໍ່ຈະເຫັນແສງຕາເວັນ ຕ້ອງກັບນ້ຳຕົກ ເປັນແສງຮຸ້ງປະກາຍແສງອອກຢ່າງງົດງາມ.

ຕາມສາຍນ້ຳຕົກຕາດນ້ຳສະນາມ ລົງມາຈະເຫັນວັງນ້ຳ. ນ້ຳຕົກຕາດເປັນຈຸດໆລົງມາ. ຕາມການສຳຫລວດ ຂອງທີມງານປ່າສະຫງວນແຫ່ງຊາດພູຫີນປູນໃຫ້ຮູ້ວ່າ: ໃນຊ່ວງໄລຍະເດືອນ 8–11 ຈະມີນ້ຳຕົກສວຍງາມຫລາຍກວ່າໃນຊ່ວງເດືອນອື່ນໆ. ນ້ຳຕົກຕາດນີ້ຈະມີຕະຫລອດ, ຈຸດນ້ຳຕົກຕາດນ້ຳສະນາມ ຫ່າງຈາກນ້ຳຕົກຕາດມ່ວງ ປະມານ 3–4 ກມ ແລະ ສາມາດສ້າງເສັ້ນທາງເສື່ອມຕໍ່ກັນ ໄດ້ຜ່ານປ່າສະຫງວນຂອງແຂວງຄຳມ່ວນ ໄປຫາກັນໄດ້.





## 16. ຕາດມ່ອງ.



ຕາດມ່ອງ ແມ່ນສະຖານທີ່ທ່ອງທ່ຽວທຳມະຊາດ ເປັນນ້ຳຕົກຕາດທີ່ນອນຢູ່ບໍລິເວນດຽວກັນກັບ ຕາດນ້ຳສະນາມ ຕັ້ງຢູ່ບ້ານຄູນຄຳ ເມືອງຄູນຄຳ ທາງເຂົ້າລະຫວ່າງສອງນ້ຳຕົກຕາດນີ້ຫ່າງກັນປະມານ 600–700 ແມັດ, ຕາດມ່ອງນີ້  ຫ່າງຈາກທາງເລກ 8 ເຂົ້າໄປປະມານ 1.5 ກິໂລແມັດ ກໍ່ຈະເຫັນຈຸດສຸດທ້າຍຂອງນ້ຳຕົກ (ຊັ້ນທີ່ 18 ນັບແຕ່ເທິງລົງລຸ່ມ) ມີວັງນ້ຳ ເນື້ອທີ່ປະມານ 25–30 ມ ເລິກປະມານ 3–4 ມ. ຖ້າເຮົາຈະຍ່າງຂຶ້ນໄປເຖິງຈຸດສຸດຂອງນ້ຳຕົກ ໃຊ້ເວລາປະມານ 1–2 ຊົ່ວໂມງ ປີນຕາມພູດິນ ທີ່ມີປ່າໄມ້ອຸດົມສົມບູນ, ມີສັດປ່າໃຫ້ເບິ່ງຫລາຍຊະນິດ ຄວາມສວຍງາມຂອງຕາດມ່ອງ ຄືມັນຈະເປັນນ້ຳຕົກຕາດລຽນຕິດກັນລົງມາແບບຂັ້ນໄດ ໂດຍສະເພາະແມ່ນຊັ້ນ 17 ຫາ ຊັ້ນທີ່ 18 ເຮົາຈະເຫັນເປັນຄູຂັ້ນ ແຕ່ລະຂັ້ນສູງປະມານ 15 ແມັດ, ຕາມສາຍນ້ຳນີ້ ກໍ່ມີກ້ອນຫີນ, ວັງນ້ຳ ຄ້າຍກັບນ້ຳສະນາມ.

## 17. ຖ້ຳຜານາງ.

ຖ້ຳຜານາງ: ແມ່ນສະຖານທີ່ທ່ອງທ່ຽວທາງທຳມະຊາດ ທີ່ຕິດພັນກັບສະໄໝສົງຄາມ ຕັ້ງຢູ່ບ້ານຜານາງ ເມືອງມະຫາໄຊ ຫ່າງຈາກຕົວເມືອງ 12 ກິໂລແມັດ. ຖ້ຳຜານາງເຮົາສາມາດເຂົ້າໄດ້ທຸກລະດູ ໂດຍການລ່ອງເຮືອ ຫຼື ຂຶ້ນລົດ. ຢູ່ຕໍ່ໜ້າຖ້ຳຜານາງ ມີຂຸມລູກໂພມ ແລະ ມີພະພຸດທະຮູບຈຳນວນຫຼວງຫຼາຍ. ຖ້ຳຜານາງ ເປັນຖ້ຳຊອດ ບາງບ່ອນກ້ວາງ ແລະ ແຄບແຕກຕ່າງກັນພາຍໃນຖ້ຳ ມີຜາຫີນທີ່ດຳ, ມີຫີນງອກ, ຫີນຍ້ອຍ, ນ້ຳສ້າງທິດ ແລະ ຄູງຊວງສະຫຼັບຊັບຊ້ອນກັນເປັນຊັ້ນໆ. ຖ້ຳນີ້ ຍາວ 200 ແມັດ ເປັນຖ້ຳຊອດ ກອນຜາປາ ແລະ ກອນຜາແດງ.







## 18. ທາດຕຸມພະວັງ.



ພະທາດຕຸມພະວັງ ຕັ້ງຢູ່ເທິງຫົວສິມ ໃນວັດບ້ານນາວາງໃຫ່ຍ ເມືອງໜອງບົກ ຫ່າງຈາກຕົວເມືອງ 27 ກິໂລແມັດ. ເຮົາສາມາດຂີ່ນລົດ ເຂົ້າໄປເຖິງສະຖານທີ່ທ່ອງທ່ຽວໄດ້ທຸກໆລະດູ. ທີ່ເອີ້ນຊື່ວ່າ ທາດຕູມພະວັງ ແປວ່າ: “ ສະພາບຊີງໄວ້ “ ເຊີງໂອບຄຳ ແລະ ມີສິ່ງສຳຄັນ  ທີ່ບັນຈຸໄວ້ໃນອູບຄຳນັ້ນ ຕາມຕຳນານກ່າວວ່າ ມີອັດຖິ ຂອງພະອໍລະຫັນຕະທາດ ຢູ່ 4 ລູກໃຫຍ່, ທໍ່ໝາກທັນ 3 ລູກ ແລະ ຂາວໆ ທໍ່ເມັດໃນສາລີ 1 ລູກ ແລະ ມີຝຸ່ນອັດຖິ ຢູ່ໃນອູບຄຳນັ້ນອີກດ້ວຍ ນອກນີ້ຍັງມີພຸດທະປະຕິມາກອນ ແລະ ສິ່ງສັກສິດທີ່ຢູ່ໃນສນັ້ນຫຼາຍຢ່າງຕາມເລື່ອງກ່າວສືບໆມາວ່າ ຜູ້ທີ່ນຳເອົາອັດຖິອໍລະຫັນຕະທາດມານັ້ນຄື ທາດຫົວອີກຂອງພະພຸດທະເຈົ້າ ມາປະດິດສະຖານຕັ້ງໄວ້ທີ່ ພູກຳພ້າ ເອີ້ນວ່າ: “ ພະທາດພະນົມ”  ສ່ວນອັດຖິຂອງພະອໍລະຫັນຕະທາດ ເພິ່ນໄດ້ມອບໃຫ້ອຸບາສົກ ຜູ້ມີສັດທາ ໄປຊ່ວຍສ້າງທາດນັ້ນໃຫ້ນຳມາກໍ່ທາດກວມໄວ້ ທີ່ເຄິ່ງເມືອງຕຸມພະວັງສ້າງ ທີ່ນັ້ນ ແມ່ນບ້ານນາວາງ ໃນປັດຈຸບັນນີ້.

ກ່ອນສ້າງທາດໜ່ອຍນີ້ ຍັງມີອຸບາສົກ, ອຸບາສິກາທັງຫຼາຍ, ຊາວບ້ານດົງເທິງ ແລະ ບ້ານດົງທ່າ ເມືອງຂັນທະບູລີ ແຂວງສະຫວັນນະເຂດ ໄດ້ປ່າວເຕືອນກັນ ເພື່ອໄປຊ່ວຍສ້າງທາດພະນົມ ເມື່ອຕົກລົງປົງໃຈກັນແລ້ວ ຈຶ່ງໄດ້ພາກັນອອກຈາກບ້ານ ແລ້ວກໍ່ຍ່າງລົງມາຫາທ່າຂ້າມເຊບັ້ງໄຟ ມາແວ່ເຊົາທີ່ບ້ານນາວາງ ເພື່ອເວລາຈະອອກເດີນທາງຕໍ່ໄປສູ່ທາດພະນົມນັ້ນ ຈຶ່ງໄດ້ປ່າວເຕືອນ ຊັກຊວນເຖົ້າແກ່ອຸບາສົກ, ອຸບາສິກາທັງຫຼາຍໃນບ້ານນີ້ ໄປຊ່ວຍສ້າງທາດນຳພະຍາທັງ 5 ເມື່ອໄປເຖິງແລ້ວ ກໍ່ໄດ້ພາກັນຊ່ວຍຂົນຫີນແຮ່, ຫີນຊາຍ, ດິນໜຽວ, ປັ້ນດິນຈີ່, ເຜົາດິນຈີ່, ຂົນດິນຈີ່ ແລະ ປູນ ຕັກນ້ຳແຊ່ໜັງ, ແຊ່ໂບງ, ຄົນປູນແຮ່ຊາຍອອກກຳລັງກາຍຊ່ວຍສ້າງພະທາດພະນົມ ພໍສົມຄວນແກ່ກຳລັງເຮື່ອແຮງແລ້ວ ກໍ່ໄດ້ອຳລາຄາຈາກເພື່ອນຝູງມິດສະຫາຍ ທີ່ມາຈາກທິດທັງ 4 ເພື່ອຊ່ວຍສ້າງພະທາດພະນົມນັ້ນ ຂ້າມຂອງຄືນເມືອເຊົາຢູ່ບ້ານນາວາງ ອັນເປັນບ່ອນເຄີຍພັກເຊົາໄປມາ.

## 19. ພະທາດເມືອງພອນ.





ພະທາດເມືອງພອນ: ເປັນພະທາດທຳອິດ ທີ່ສ້າງຂຶ້ນໃນສະໄໝອານາຈັກສີໂຄດຕະບອງ ແລະ ໄດ້ຮັບການປະຕິສັງຂອນ ໃນປີ 1963. ປັດຈຸບັນນີ້ ຢູ່ບໍລິເວນທາດໄດ້ມີໝູ່ບ້ານ. ຢູ່ໃນເບື້ອງໜຶ່ງຂອງທາດ ມີພະພຸດທະຮູບ ເຊິ່ງເປັນທີ່ເຄົາລົບຂອງພຸດທະສາສະນິກກະຊົນ. ທາດນີ້ ຕັ້ງຢູ່ຫ່າງຈາກເມືອງທ່າແຂກໄປທາງທິດຕາເວັ້ນອອກສຽງເໜືອ ປະມານ 14 ກິໂລແມັດ, ຕາມເສັ້ນທາງເລກທີ່ 12 ລ້ຽວຊ້າຍແລ້ວສືບຕໍ່ໄປອີກ 16 ກິໂລແມັດ ກໍ່ຈະເຫັນຈຸດທີ່ຕັ້ງຂອງພະທາດ.

## 20. ໜອງໝາລອດ.



ໜອງໝາລອດຕັ້ງຢູ່ ບ້ານຜາແຄນ ເມືອງມະຫາໄຊ ຫາງຈາກເມືອງ 17 ກິໂລແມັດ ໄປຕາມທາງເລກທີ 1F ເຂົ້າປະມານ 1,5 ກິໂລແມັດ. ໜອງມີລັກສະນະມົນກົມ, ມີເນື້ອທີ່ກວ້າງທັງໝົດ 3 ເຮັກຕາ, ມີເສັ້ນທາງອ້ອມໜອງເປັນດິນແດງ ຍາວ 900 ແມັດ, ຄວາມເລິກສຸດຂອງໜອງ 2 ແມັດ, ພາຍໃນໜອງ ມີປາຢ່າງຫຼວງຫຼາຍ ເພາະໃນແຕ່ລະປີ ຫ້ອງການກະສິກຳເມືອງ ເພິ່ນໄດ້ນຳເອົາພັນປາໄປປ່ອຍໃສ່ໜອງດັ່ງກ່າວ. ຢູ່ບໍລິເວນໃກ້ຄຽງອ້ອມໜອງມີສາຍພູ ເຕັມໄປດ້ວຍໄມ້ຫຼາຍຊະນິດ.

ໜອງໝາລອດ ໄດ້ເປີດເປັນແຫຼ່ງທ່ອງທ່ຽວທຳມະຊາດຂັ້ນເມືອງ ໃນວັນທີ່ 4 ເມສາ 2018. ຈຸດປະສົງຫຼັກຂອງຊາວບ້ານຜາແຄນ ແມ່ນສ້າງເປັນແຫຼ່ງທ່ອງທ່ຽວອະນຸລັກທຳມະຊາດເຊັ່ນ: ປ່າໄມ້, ປາໃນໜອງ, ຊີວະນາໆພັນໃນໜອງ, ຊາວບ້ານສ້າງຕູບອ້ອມໜອງເພື່ອເປັນບ່ອນພັກຜ່ອນ. ກິດຈະກຳທີ່ຈະຂາຍ ແມ່ນພັກຜ່ອນກິນເຂົ້າປ່າຕາມຕູບ ແລະ ຕຶກເບັດໄດ້ຕາມລະດູການ.

ຕາມການບອກເລົ່າ ໜອງໝາລອດ ແຕ່ກ່ອນມີນາຍພານໃນໝູ່ບ້ານ ພ້ອມກັນໄປລ່າເນື້ອໃນດົງ ສະຖານທີ່ໃກ້ຄຽງກັບໜອງດັ່ງກ່າວ ເປັນເວລາຫຼາຍ ກໍ່ພາກັນພັກຜ່ອນກິນເຂົ້າຢູ່ແຄມໜອງ ພໍດີກິນເຂົ້າອີ່ມ ຕ່າງຄົນຕ່າງກໍ່ພັກຜ່ອນ. ໃນຂະນະທີ່ພັກຜ່ອນ ມີຜູ້ໜຶ່ງພັດຫຼຽວເຫັນລູກເຫງັນ ກໍ່ຫ້ອງຂຶ້ນຢ່າງແຮງ ລູກເຫງັນຕົກໃຈ ເລີຍແລ່ນເຂົ້າໄປລີ້ຢູ່ໂກນໄມ້ໂດກ ພວກເຂົາກໍ່ເລີຍພາກັນໄປເກາະເອົາ ແຕ່ພວກເຂົາບໍ່ຮູ້ຈະເຮັດຈະເອົາໄປເຮັດຫຍັງ ຈຶ່ງຕົກລົງເອົາໄປຂາຍໃຫ້ພໍ່ຄ້າ ໃນຂະນະທີ່ພໍ່ຄ້າໄປຊື້ນັ້ນ ເຫດການບໍ່ຄາດຄິດເກີດຂຶ້ນ ເຫງັນກໍ່ໄດ້ຫຼູດມືໄປ ບໍ່ທັນໄດ້ຈ່າຍເງິນ ເມື່ອເປັນແນວນັ້ນ ກໍ່ເກີດມີການຖົກຖຽງກັນດົນພໍສົມຄວນ ກໍ່ມີຜູ້ໜຶ່ງຄິດອອກວ່າ ໃຫ້ເມືອເອົາໝາຢູ່ບ້ານ ມານຳໄຫຼ່ໂຕເຫງັນນ້ອຍທີ່ປົບເຂົ້າປ່ານັ້ນ ເມື່ອຕັດສິນໃຈແນວນັ້ນແລ້ວ ພວກເຂົາກໍ່ພາກັນໄປຊອກຫາລູກເຫງັນກໍ່ ເລີຍພົບລູກເຫງັນແລ່ນເຂົ້າຮູແຄມໜອງ ແຕ່ກ່ອນມີຮູຮອດແຄມເຊ ເມື່ອເຫັນເປັນຄືແນວນັ້ນ ໝາໂຕນັ້ນກໍ່ຂວັດດິນນຳໄລ່ເຫງັນຈົນລອດແຄມເຊ ຍັງບໍ່ເຫັນເຫງັນໂຕນັ້ນຄືນມາ ແຕ່ນັ້ນມາຊາວບ້ານກໍ່ເລີຍເອີ້ນ: ໜອງນ້ຳແຫຼ່ງນັ້ນວ່າ: ໜອງໝາລອດ ຈົນເຖິງປັດຈຸບັນ.

# ແຂວງສະຫວັນນະເຂດ

# 1. ຕົວເມືອງເກົ່າ ເຂດເຮືອນເກົ່າຝຣັ່ງເສດ.



ເຮືອນເກົ່າຂອງສະໄໝຝຣັ່ງ ສ້າງຂຶ້ນໃນສະໄໝຝຣັ່ງເຂົ້າມາປົກຄອງລາວ ຄາດວ່າສ້າງໃນປີ 1940 ເຮືອນດັ່ງກ່າວ ມີສິນລະປະຊີງຂອງຝຣັ່ງ ແລະ ເປັນທີ່ພັກຂອງພະນັກງານລາສະການໃນສະໄໝນັ້ນ,ຕົກມາໃນປັດຈູບັນແມ່ນປະຊາຊົນເປັນຜູ້ຊົມໃຊ້ໂດຍການເຊົ່ານຳລັດ, ປັດຈຸບັນນີ້ ໄດ້ມີແຜນພັດທະນາໂດຍເບື້ອງຕົ້ນ ໄດ້ມີການສຳຫຼວດ ແລະ ເກັບກຳຂໍ້ມູນເບື້ອງຕົ້ນແລ້ວ ເພື່ອຈະຂຶ້ນບັນຊີອະນຸລັກ ແລະ ພັດທະນາເປັນສະຖານທີ່ທ່ອງທ່ຽວໃນຕົວເມືອງໃຫ້ມີສີສັນ ແລະ ກິດຈະກຳທີ່ລາກຫລາຍ.

ຂອບເຂດເມືອງເກົ່າຂອງເມືອງໄກສອນພົມວິຫານ ມີເນື້ອທີ່ 55.41 ຮຕ,ກວມເອົາເຂດລຽບແມ່ນ້ຳ ຂອງໄລຍະ 2 ກິໂລແມັດ ກວມເອົາພື້ນທີ່ 6 ບ້ານຄື: ບ້ານທ່າເມືອງ, ໄຊຍະພູມລັດຕະນະລັງສີເໜືອ, ລັດຕະນະລັງສີໃຕ້, ໄຊຍະມຸງຄູນ, ທ່າແຮ່ ປະກອບມີ 62 ຄອບຄົວ.



## 2. ພະທາດອິງຮັງ.

ພະທາດອິງຮັງ ແມ່ນຕັ້ງຢູ່ບ້ານທາດອິງຮັງ ເປັນມໍລະດົກຂອງຊາດ, ເປັນພະທາດທີ່ສັກສິດ ແລະ ເປັນທີ່ສັກກະລະບູຊາ ຂອງຊາວແຂວງສະຫວັນນະເຂດ. ພະທາດອິງນີ້ ສ້າງຂຶ້ນປະມານປີ ພສ 500 ເຊິ່ງນໍາພາໂດຍ ພະເຈົ້າສຸມິດຕະທໍາ ຜູ້ປົກຄອງເມືອງມະຣຸກຂະນະຄອນ (ອານາຈັກສີໂຄດຕະບູນ) ເພື່ອເປັນອະນຸສອນວ່າ ຄັ້ງໜຶ່ງ ພະພຸດທະເຈົ້າ ໄດ້ສະເດັດມາໂຜດສັດໃນດິນແດນສຸວັນນະພູມ ແລະ ໄດ້ນັ່ງສັນເຂົ້າອິງຕົ້ນຮັງ ຈຶ່ງໄດ້ເອີ້ນຊື່ວ່າ: ພະທາດອິງຮັງ, ພະທາດອິງນີ້ ໃນເບື້ອງຕົ້ນ ເປັນພະທາດນ້ອຍມີ 4 ລ່ຽມ, ໃນປີ ຄສ 1548, ພະເຈົ້າໄຊຍະເສດຖາຖິລາດ ແຫ່ງອານາຈັກລ້ານຊ້າງ ໄດ້ນໍາພາປະຕິສັງຂອນ ໃຫ້ເປັນແບບສິລະປະລ້ານຊ້າງ ພະທາດອິງນີ້ ກວ້າງ 9 ແມັດ ແລະ ສູງ 25 ແມັດ ເຊິ່ງຍອດພະທາດ ມີລັກສະນະຄືກັບດອກບົວ. ທຸກໆປີ ຈະມີງານສະເຫຼີມສະຫຼອງເພື່ອສັກກະລະບູຊາ ເຖິງພະພຸດທະເຈົ້າ ແລະ ຜູ້ທີ່ສ້າງພະທາດ

## 3. ແຫຼ່ງທ່ອງທ່ຽວແກ້ງຫຼວງ ( ຮອຍຕີນໄດໂນເສົາ ).



ສາຍນໍ້າເຊຊັ່ງຊອຍ ( ເຊຊັ່ງລອຍ ) ທີ່ເມືອງພະລານໄຊ, ເຖິງຍາມແລງນໍ້າບົກລົງ ເຜີຍໃຫ້ເຫັນຄວາມງາມ ຂອງນໍ້າຕົກຕາດຕໍ່າ ຫຼາຍຊັ້ນໃນແກ້ງຫີນ, ທີ່ພະລານຫີນແຄມຝັ່ງນໍ້າເຊ ມີຮອຍຕີນໄດໂນເສົາອີກຫຼາຍຮອຍ, ແກ້ງນີ້ ຢູ່ເໜືອຂົວເຊຊັ່ງຊອຍ ເສັ້ນທາງເລກທີ 9 ເມືອງພະລານໄຊ ຫ່າງຈາກຕົວເມືອງສະຫວັນນະເຂດ 102 ກມ.

## 4. ຫໍໄຕປິດົກ.



ຫໍໄຕປິດົກ ເລີ່ມຕົ້ນສ້າງຕັ້ງແຕ່ສັດຕະວັດທີ 17. ຕໍ່ມາ ແມ່ຍາທ່າຫຼັກຄໍາ ເປັນຜູ້ນໍາພາສ້າງ ແລະ ປະຕິສັງຂອນຄືນໃໝ່ ໃນສະຕະວັດທີ 19. ຕໍ່ມາ ໄດ້ມີພໍ່ຂຽວ, ຍາທ່ານພູຈອງ, ຍາທ່ານພິມມາ ເປັນຜູ້ຮັກສາສືບຕໍ່ມາຕາມລໍາດັບ. ໃນປີ ຄສ 1990-2001 ໄດ້ມີໂຄງການຮັກສາໜັງສືຜູກໃບລານ ໂດຍກະຊວງຖະແຫຼງຂ່າວ, ວັດທະນະທາ ແລະ ທ່ອງທ່ຽວ ໄດ້ຮັບທຶນຮັກສາ ແລະ ປົວແປງ ຈາກມູນນິທິໂຕໂຢຕ້າ ຈາກປະເທດຍີ່ປຸ່ນ, ລັດຖະບານສະຫະພັນເຢຍລະມັນ ຮ່ວມກັບພະແນກຖະແຫຼງຂ່າວ, ວັດທະນະທາ ແລະ ທ່ອງທ່ຽວແຂວງ ແລະ ຫ້ອງການເມືອງຈໍາພອນ ສໍາຫຼວດ ພ້ອມຂຶ້ນບັນຊີຕົວຈິງ, ແຍກ ແລະ ຈັດລາດັບ ໄດ້ດັ່ງນີ້: ໜັງສືຜູກໃບລານ ທັງໝົດມີ 219 ເລື່ອງ, 326 ມັດ, 2391 ຜູກ.

## 5. ແຫຼ່ງທ່ອງທ່ຽວປ່າສະຫງວນດົງນາຕາດ-ໜອງລິ່ມ.

ກ່ອນໜ້ານີ້ປະມານ 100ປີ ເຂດດົງນາຕາດ ເປັນປ່າໃຫຍ່ດົງຕຶບໜາ, ອຸດົມສົມບູນໄປດ້ວຍຊັບພະຍາກອນທໍາມະຊາດ, ປ່າໄມ້ນາໆຊະນິດ ເປັນຕົ້ນ: ໄມ້ຂະຍູງ, ໄມ້ແຕ້ຂ່າ, ໄມ້ດູ່, ໄມ້ແດງ ແລະ ອື່ນໆ ປ່າສະຫງວນດົງນາຕາດ ເປັນປ່າຕົ້ນນໍ້າ ປະກອບມີຫ້ວຍຕາດ, ຫ້ວຍສົມປ່ອຍ, ໜອງລິ່ມ, ໜອງໂກ່ມ, ໜອງເຊັ່ງ. ໃນເຂດດັ່ງກ່າວ ຍັງມີສັດປ່າ, ສັດນໍ້າຢູ່ຈານວນຫຼວງຫຼາຍ ເຂດດົງນາຕາດ ແມ່ນເປັນບ້ານດັ່ງເດີມ ມີມາຫຼາຍຮ້ອຍປີ. ຈຸດພິເສດຂອງປ່າສະຫງວນດົງນາຕາດ ແມ່ນມີຊາຍແດນຕິດກັບເຂດເສດຖະກິດພິເສດ ສະຫວັນ-ເຊໂນ ຊຶ່ງເປັນເງື່ອນໄຂອັນໜຶ່ງ ທີ່ເຮັດໃຫ້ປ່າສະຫງວນດົງນາຕາດ ມີທ່າແຮງ ແລະ ເປົ້າໝາຍຂອງການທ່ອງທ່ຽວ. ນອກນັ້ນ ຍັງຕັ້ງຢູ່ໃກ້ກັບປູສະນະຍະຖານ ພະທາດອິງຮັງມໍລະດົກແຮງຊາດທີ່ມີມານານກວ່າ 400 ປີ ຊຶ່ງແມ່ນສະຖານທີ່ທີ່ສັກສິດ ຂອງຊາວແຂວງສະຫວັນນະເຂດ ກໍ່ຄືປະຊາຊົນລາວທົ່ວປະເທດ.



## 6. ຜາສາດເຮືອນຫີນ.



ປະຫວັດຄວາມເປັນມາຂອງຜາສາດເຮືອນຫີນແຫ່ງນີ້ ບໍ່ມີລາຍລັກອັກສອນຢັ້ງຢືນຈະແຈ້ງ, ມີພຽງແຕ່ຜາສາດຫີນ ທີ່ມີການເລົ່າຕົກທອດມາ ໃນລັກສະນະປາກຕໍ່ປາກ, ລຸງມະຫາ ກັດ ບ້ານເຫຼົ່າໝາກຫູດ ເຊິ່ງເປັນເຈົ້າກວນ ເຈົ້າລ່າມ ຂອງເຮືອນຫີນ ມີປຶ້ມນິທານ ເຊິ່ງຕົກທອດມາແຕ່ປູ່ຍ່າຕານາຍໄດ້ບັນທຶກໄວ້ວ່າ: ອານາຈັກໂຄກະບູນ ແມ່ນເກົ່ງກ້າ ເປັນທີ່ເກງຂາມຂອງອານາຈັກທີ່ໃກ້ຄຽງ. ໃນປີ ຄ.ສ 557 ນັ້ນ ມີຂຸນອັງຄະຣາດ ແລະ ອິມມະຣາດ ທັງສອງອ້າຍນ້ອງ, ນ້ອງໄດ້ນໍາພາສ້າງຜາສາດຫີນຂຶ້ນ ເພື່ອເປັນທີ່ເຄົາລົບນັບໄຫ້ວຂອງສາສະໜາພາມ. ສະນັ້ນ ຈຶ່ງເອີ້ນວ່າ ຜາສາດຫີນ, ແຮງງານທີ່ກໍ່ສ້າງ ແມ່ນໄດ້ເກນເອົາຊົນເຜົ່າຕ່າງໆ ທີ່ມາຈາກອານາຈັກທີ 1 ຄື: ອານາຈັກໂຍນົກເງິນຢາງ ມາເປັນຂ້າທາດເຂົາເຈົ້າ, ຫຸບຫອບຄອບຄົວມາພ້ອມແລ້ວ ອາໄສຢູ່ຕາມຖໍ້າຫີນຕ່າງໆ ເພື່ອຊີ້ນແດດ ແລະ ຝົນ, ສ່ວນຂຸນອັງຄະຣາດຜູ້ນໍາພາສ້າງໄດ້ເຈາະອຸມົງ ຢູ່ກະໂຕພື້ນຜາສາດຫີນ, ກ້ອນຫີນທີ່ເອົາມາສ້າງນັ້ນ ໄດ້ສິ່ວເຈາະເອົາມາຈາກຫຼາຍບ່ອນ ເຊິ່ງບ່ອນໃຫຍ່ທີ່ສຸດແມ່ນ ຢູ່ເບື້ອງຕາເວັນຕົກຫ່າງຈາກຜາສາດຫີນ 1 ກິໂລແມັດ ເອີ້ນວ່າ: ( ວັງເຮືອ ) ຍ້ອນວ່າຮ່ອງຮອຍບ່ອນທີ່ສິ່ວເຈາະເອົາຫີນນັ້ນ ມີລັກສະນະຄ້າຍຄືເຮືອ ຍັງມີກ້ອນຫີນທີ່ອອກສິ່ວມາໄວ້ເສດເຫຼືອ ໃນສະຖານທີ່ເຫຼົ່ານັ້ນຢັ່ງຢາຍຢູ່ຫຼວງຫຼາຍ,ເພິ່ນສ້າງຈົນຮອດປີ ຄ.ສ 700 ກໍ່ໝົດສະໄໝລາຊະວົງ ຍ້ອນວ່າມີພາກສ່ວນອື່ນມາຍຶດຄອງແທນ. ເປັນອັນວ່າຢຸດຕິການສ້າງຜາສາດຫີນ.

## 7. ດົງລີງ.

ແຫຼ່ງທ່ອງທ່ຽວທາງທຳມະຊາດດົງລີງ ມີປະຫັວດຄວາມເປັນມາທີ່ໜ້າສົນໃຈ, ກ່ອນທີ່ສະເໜີໃຫ້ເຫັນສະພາບທີ່ຕັ້ງ ແລະ ຈຸດພິເສດໃນພາກນີ້ ທີມງານຈະໄດ້ນຳສະເໜີປະຫວັດຄວາມເປັນມາຂອງແຫຼ່ງທ່ອງທ່ຽວທຳມະຊາດດົງລີງ ເຊັ່ນ: ໃນໄລຍະຜ່ານມາບ້ານ ດົງເມືອງ ແມ່ນກ່ອນຈະໃສ່ຊື່ວ່າ; ດົງເມືອງ ແຕ່ສະໄໝປີ **1700** ຫຼື **313** ປີ ຄືນຫຼັງ. ສະຖານດັ່ງກ່າວນີ້ ແມ່ນເຄີຍຕັ້ງເປັນເມືອງທີ່ມີຊື່ວ່າ: ເມືອງສີມສະໜຸກຫົວຂວງ ເຊິ່ງແມ່ນ ພະຍາບາອິນ ເປັນເຈົ້າເມືອງໃນເວລານັ້ນ. ແຕ່ຕໍ່ມາ ຖືກສະຫຍາມເຂົ້າມາທຳລາຍ ໃນປີ ຄສ **1779** ເຫຼືອພຽງແຕ່ຊາກສະຫລັກຫັກພັງຂອງວັດວາອາລາມ. ມາຮອດ ປີ **1952** ມີຍາພໍ່ບຸນ ບ້ານເຊ ໄດ້ນຳພາອອກຕົນຍາດໂຍມ ພາກັນມາຕັ້ງວັດຂຶ້ນຢູ່ໃນສະຖານທີ່ນີ້, ຊຶ່ງປັດຈຸບັນ ຍັງມີຮ່ອງຮ່ອຍວັດເກົ່າ, ສິມຮ້າງ, ພະພຸດທະຮູບໃຫຍ່ອົງໜຶ່ງ ສະຖິດຢູ່ເທິງແທ່ນດິນຈີ່ປະສົມປູນ, ເຊິ່ງເຖົ້າແກ່ເມື່ອກ່ອນ ເຄີຍບອກວ່າ ເບື້ອງໜ້າແທ່ນພະ ມີຕົວອັກສອນຂຽນບອກວ່າ (ສ້າງເມື່ອສັກກະຫຼາດ **06** ຕົວ) ເຂົ້າໃຈວ່າແມ່ນປີ ຄ.ສ **1006**.

ຮອດປີ **1958** ປະຊາຊົນພາຍໃນບ້ານ ພ້ອມດ້ວຍ ຄູບາອາຈານ ໄດ້ສ້າງສາພັດທະນາສິມຂຶ້ນມາອີກ. ສ່ວນລີງ ຫຼື ເອີ້ນວ່າ: ດົງລີງ ນັ້ນ ແມ່ນຖືວ່າເປັນສັດທີ່ສັກສິດ ອີກອັນໜຶ່ງ ທີ່ປະຈຳຢູ່ໃນປ່າດົງເມືອງ ທີ່ມີມາແຕ່ດົນນານແລ້ວ ກ່ອນປະຊາຊົນຈະມາຕັ້ງຖິ່ນຖານຢູ່.

ດົງລີງ ແມ່ນດົງທີ່ມີຜີມະເຫສັກເຂັດຢຳ (ຕາມການເຊື່ອຖືຂອງປະຊາຊົນ), ມີເນື້ອທີ່ທັງໝົດ **20,73** ເຮັກຕາ, ມີຝູງລີງອາໃສຢູ່ຢ່າງຫຼວງຫຼາຍ, ໃນປັດຈຸບັນ ມີລີງປະມານ **2000** ກວ່າໂຕ ແລະ ແບ່ງອອກເປັນ **03** ຝູງຄື:

ຝູງທີ **01**: ມັກອອກມາຫາກິນນຳນັກທ່ອງທ່ຽວ ແລະ ຊາວບ້ານທີ່ກາຍໄປມາ ເຊິ່ງສາມາດພົບເຫັນໄດ້ງ່າຍ.

ຝູງທີ **02**: ແມ່ນຫາກິນນຳວັດ ແລະ ເຮືອນປະຊາຊົນ ບ້ານ ດົງເມືອງ.

ຝູງທີ **03**: ຈະອາໃສຫາກິນຢູ່ແຄມເຊ ແລະ ຫໍມະເຫສັກ ຢູ່ກາງດົງ.



## 8. ແຫຼ່ງທ່ອງທ່ຽວສຸຍ.



ອ່າງ ຫຼື (ຫ້ວຍສຸຍ) ມີຊື່ມາແຕ່ດຶກດຳບັນ ມັນເປັນເລິງທາມແຫ່ງໜຶ່ງ ທີ່ກວ້າງໃຫຍ່, ຕຶບໜາ, ອຸດົມສົມບູນໄປດ້ວຍດິນພຸພຸ່ຍ (ດິນຂີ້ມ້ອນ) ເຕັມໄປດ້ວຍປ່າປະເພດເກີດຕາມທົ່ງທາມ ຫຼາຍຊະນິດເຊັ່ນ: ໄມ້ທົ່ມ, ໄມ້ຫວ້າ, ໄມ້ເປືອຍນ້ຳ, ຕົ້ນຫູລິງ, ເຫງົ້າເບັນນ້ຳ... ຕົ້ນໄມ້ຊາດ ແລະ ອື່ນໆ. ອ່າງສູຍ ປະກອບດ້ວຍສາຍຫ້ວຍສາມສາຍ ໄຫຼ່ຕົກໃສ່ ເຊັ່ນ: ຫ້ວຍຂາວ ກຳເນີດຈາກຫວ້ຍໄຫຼ່ (ອຸທຸມພອນ), ຫວ້ຍກະແຊະ, ຫວ້ຍນ້ຳຄຳຄາວ (ຍໍ່ໂດນ) ຈາກດົງປ່າຫ້ຽນ ແລະ ຫວ້ຍສຸຍ ທີ່ເປັນໃຈກາງໄຫຼ່ຜ່ານ ແຕ່ເໜືອຕະຫຼອດໃຕ້ ແລ້ວຕົກລົງໃສ່ເຊຈຳພອນ (ເໜືອບ້ານແກ້ງປູນ).

ໃນອ່າງສຸຍ ປະກອບມີຫຼາຍບຸ່ງທາມໃຫຍ່ ຊຶ່ງມີຊື່ເອີ້ນແຕ່ດັ້ງເດີມແຕ່ລະບ່ອນເຊັ່ນ: ຟາກຂວາຂອງຫ້ວຍສຸຍ ມີວັງຍາງ, ເດີ່ນຂີວແປ້ນ, ໜອງບົວຂີ້ແບ້, ເດີ່ນໂພນກະຊະ, ທະຍານ, ເດີ່ນແກບສ້າງຈົ້ນ, ດອນທິດນຽມ, ດອນໝາກແຕກ ແລະ ດອນຕາໂຕ່ນ, ຟາກຊ້າຍມີລິງ, ໜອງໝາກກອກ, ໜອງອີ່ຕູ້, ເດີ່ນຫວ້າ, ດອນອຸ່ນແກ້ວ, ເດີ່ນຂີ້ໄຮ້, ໜອງເບັນເລິງກົກເປືອຍ, ເດີ່ນປາຕອງ ແລະ ໜອງສອງຫ້ອງ

ເມື່ອກ່ອນກໍ່ຄື ປະຈຸບັນ ທົ່ງທາມສຸຍແຫ່ງນີ້ ເປັນບ່ອນປະຊາຊົນຊາວບ້ານຕ່າງໆ ທີ່ຢູ່ໃກ້ຄຽງ ແລະ ເລາະລຽບຕາມຂອບແຄມສຸຍ ທຳມາຫາກິນ ເຊັ່ນ: ເຮັດນາແຊງ, ຊອກຢູ່ຫາກິນ, ບັນດາຝູງປູ-ປາ, ກຸ້ງຫອຍ... ຂາຍແລກປ່ຽນ ສ້າງເປັນເສດຖະກິດຄອບຄົວປະຈຳວັນຂອງປະຊາຊົນຕະຫຼອດມາ.

## 9. ຫໍພິພິຕະພັນມູນເຊື້ອໄຊຊະນະຮ່ວມສໍາພັນສູ້ຮົບລາວ- ຫວຽດນາມ ບໍລິເວນສາຍທາງເລກ 9.



ສ້າງຂຶ້ນເພື່ອໃຫ້ເປັນອະນຸສອນ ທາງດ້ານປະຫວັດສາດ ໃນຂະບວນການປະຕິວັດປົດປ່ອຍຊາດ, ບັນດາທ່ານຜູ້ນໍາພັກ-ລັດ ແລະ ນັກວິຊາການດ້ານວັດທະນະທໍາປະຫວັດສາດ ແຂວງສະຫວັນນະເຂດ ສປປ ລາວ ແລະ ແຂວງກວາງຈິ, ສສ ຫວຽດນາມ ຈຶ່ງໄດ້ທຸ່ມເທສະຕິປັນຍາ, ທຶນຮອນ ພ້ອມທັງເວລາ ເຂົ້າໃສ່ໂຄງການກໍ່ສ້າງຫໍພິພິຕະພັນແຫ່ງນີ້ ກໍ່ເພື່ອຈົດຈໍາ ລໍ້າລຶກເຖິງຄຸນງາມຄວາມດີ ແລະ ດວງວິນຍານ ຂອງສະຫາຍສະມາຊິກພັກ, ພະນັກງານ, ທະຫານ ແລະ ປະຊາຊົນລາວ ບັນດາເຜົ່າ ກໍ່ຄືກອງທັບ ແລະ ປະຊາຊົນຫວຽດນາມ ທີ່ໄດ້ອຸທິດຊີວິດ, ເລືອດເນື້ອ ພ້ອມກັນຕໍ່ສູ້ ຍາດເອົາໄຊຊະນະອັນກ້ອງກັງວານ ປາບແພ້ກົນອຸບາຍ ກະຫາຍສົງຄາມອັນຮ້າຍກາດ ຂອງຈັກກະພັດອາເມຣິກາ, ທະຫານຫຸ່ນໄຊ່ງ່ອນ ແລະ ທະຫານຫຸ່ນວຽງຈັນ ໃນບັ້ນຮົບລາມເຊີນ 719 ປີ 1971 ເສັ້ນທາງເລກທີ 9 ພາກໃຕ້ຂອງລາວ.

## 10. ວັດເກົ່າຕາແຫຼວ.



ວັດແຫ່ງນີ້ເປັນວັດ ທີ່ມີຄວາມງົດງາມ ແລະ ເປັນວັດທີ່ມີຄວາມໂດດເດັ່ນ ເນື່ອງຈາກມີລັກສະນະທີ່ພິເສດ ໃນການປະສົມປະສານກັນ ທາງດ້ານປະຕິມະກໍາຂອງວັດສາດສະໜາພຸດ ແລະ ຮູບຊົງດ້ານນອກສ່ວນກາງ ເປັນໂບດຄັດໂຕລິກ ເຊິ່ງດ້ານໃນເປັນເດີ່ນກວ້າງ ເຊິ່ງເປັນບ່ອນປະຕິບັດທໍາຂອງ ພະພຸດທະຮູບ ນອກຈາກນີ້ ດ້ານໃນຂອງວັດ ຍັງຖືກຕົກແຕ່ງສີສັນລວດລາຍຕາມຝາ ດ້ວຍຮູບແຕ້ມ ສະແດງເຖິງວິຖີຊີວິດຂອງພະພຸດທະເຈົ້າໃນເມື່ອກ່ອນ ເຊິ່ງສະແດງເຖິງ ປະຫວັດຂອງວັດແຫ່ງນີ້. ວັດແຫ່ງນີ້ ຖືກສ້າງຂຶ້ນໃນຕົ້ນສັດຕະວັດທີ 20 ໂດຍຍາທ່ານອົງໜຶ່ງ. ຕໍ່ມາ ໃນປີ 1969 ວັດໄດ້ຖືກທໍາລາຍດ້ວຍລູກລະເບີດ ໃນສະໄໝສົງຄາມຂອງອາເມລິກາ. ໃນປະຈຸບັນ ຍັງເຫຼືອໄວ້ພຽງຫໍແຈກພຽງຫລັງດຽວ, ອີກຫລັງໜຶ່ງ ໄດ້ຖືກທໍາລາຍເຫລືອໄວ້ພຽງແຕ່ສ່ວນໜຶ່ງຂອງອາຄານ (ສິມ) ແລະ ຍັງມີຮອ່ງຮອຍ ທີ່ສະແດງໃຫ້ເຫັນເຖິງປະຫວັດສາດຈາກສົງຄາມໃນຄາວນັ້ນ.

## 11. ແຫຼ່ງທ່ອງທ່ຽວພະທາດໂພ່ນ.



ພະທາດໂພ່ນ ແມ່ນ ສະຖານທີ່ກໍ່ສ້າງເວດຈະກຸດຕິ ຖວາຍແດ່ອໍລະຫັນຕາເຈົ້າ 5 ພະອົງ. ຮອດສະໄໝພະເຈົ້າ ພຸດທະວົງສາ ທຳມິກະລາດ ທີ່ຖືພະພຸດທະສາສະໜາແກ່ກ້າ ພ້ອມໄພ່ຟ້າຂ້າແຜ່ນດິນ ມາສ້າງພະທາດລູກນີ້ຂຶ້ນ, ຢູ່ສະຖານທີ່ແຫ່ງນີ້ ເມື່ອປີ ພສ 500 ຄສ 1093.

ກ່ອນທີ່ຈະສ້າງພະທາດລູກນີ້ຂຶ້ນ ມີທາດນ້ອຍຢູ່ແລ້ວ 7 ລູກ ທີ່ເປັນສັນຍາລັກມາແຕ່ດຶກດຳບັນ ຖືເປັນສິ່ງສຳຄັນ ຫຼັກຖານໜຶ່ງຂອງຕຳນານສືບສານມາ. ຕຳນານຍັ້ງຢືນວ່າ: ປະຫວັດທີ່ມາພະທາດໂພ່ນ ທຳອິດ ເພິ່ນໄດ້ສ້າງຂຶ້ນ ປະກອບສ່ວນຈາກຫຼາຍອານາຈັກ ໂດຍ ສົມເດັດ ພຣະພຸດທະນະຄະນາຈານທັງຫຼາຍ ພ້ອມຍິງຊາຍນ້ອຍໃຫຍ່ ຈາກຖິ່ນແດ່ວັນແດນໄດ ໃນຊົມພູທະວີບ ພ້ອມກັນສ້າງທັງວັດວາອາຮາມຕ່າງໆ, ມີ 7 ຫົວເມືອງຊຽງດົງຊຽງທອງ ໄດ້ຖວາຍດິນແດນສ່ວນນີ້ເປັນທານ ດ້ວຍຄຳສັດຈະອະທິຖານໄວ້ວ່າ “ ຖ້າຜູ້ໃດຫາກໄດ້ຕັ້ງບ້ານເຮືອນ, ເຮັດໄຮ່, ເຮັດນາ, ຕະຫຼອດເຖິງບອກນ້ຳ, ວັງປາໃນອະນາເຂດແຫ່ງນີ້ ຕ້ອງໄດ້ມາອຸປະຖຳຮັກສາປະຕິບັດເຄົາລົບບູຊານົບໄຫວ້ ຕາມລະດູການ ບໍ່ໃຫ້ຂາດທຸກໆປີ ”.

## 12. ຫໍພິພິທະພັນໄດໂນເສົາ.

ຫໍພິພິທະພັນວາງສະແດງກະດູກໄດໂນເສົາ ເປັນສະຖານທີ່ບ່ອນລວບລວມສິ່ງເກົ່າແກ່ ທາງດ້ານຊີວະສາດ, ທໍລະນີວິທະຍາ ທີ່ໄດ້ຄົ້ນພົບໃນແຂວງສະຫວັນນະເຂດເຊັ່ນ: ເຕົ່າຫີນ, ຫອຍຫີນ, ໄມ້ທີ່ກາຍເປັນຫີນ, ແຂ້ວຊ້າງຫີນ ແລະ ຊາກກະດູກໄດໂນເສົາ ຫຼືຊາວບ້ານເອີ້ນວ່າ: ກະປອມຫຼວງ ທີ່ມີອາຍຸ 110 ລ້ານກວ່າປີ, ການຄົ້ນພົບກະດູກໄດໂນເສົາ ແມ່ນຄົ້ນພົບຢູ່ບ້ານຕັ່ງຫວາຍ ເມືອງຊົນບູລີ ແຂວງສະຫວັນນະເຂດເຊິ່ງມີ 4 ສະນິດ : ສະນິດ ໂຊໂລໂປດ ( sauropode ), ສະນິດ ເຕໂລໂປດ ( Theropode ), ສະນິດ ອີກົວໂນ ( Igaunont ), ສະນິດສິດຕາໂກຊໍ

ສະຖານທ່ອງທ່ຽວແຫ່ງນີ້ ສາມາດເຂົ້າທ່ຽວຊົມໄດ້ທຸກມື້ ໃນໂມງລັດສະການ ແລະ ມີການບໍລິການໃຫ້ຂໍ້ມູນຂ່າວສານ ໂດຍຜູ້ທີ່ມີຄວາມຮູ້ກ່ຽວກັບດ້ານນີ້ໂດຍສະເພາະ.

.



## 13. ພະທາດນາງລາວ.



ຜ່ານການເກັບກຳຂໍ້ມູນ ທາງດ້ານເອກະສານ, ການບອກເລົ່າຂອງອຳນາດການປົກຄອງ ແລະ ປະຊາຊົນບ້ານທາດ ເມືອງວິລະບູລີ ແຂວງສະຫວັນນະເຂດ ກ່ຽວກັບປະຫວັດຄວາມເປັນມາ ຂອງພະທາດນາງລາວ ມີເນື້ອໃນລາຍລະອຽດດັ່ງນີ້:

ໂດຍສືບເນື່ອງຈາກ ນາງ ສຸມັງຄະລາ ຫຼື ນາງຄຳເຫຼົາ, ເປັນຜູ້ຫ້ອນໂຮມເມືອງວັງ ແລະ ເມືອງອ່າງຄຳເຂົ້າເປັນເມືອງດຽວ ແລ້ວເອີ້ນຊື່ຄວບກັນວ່າ ເມືອງວັງ-ອ່າງຄຳ ເຊິ່ງພະນາງລາວ ຂຶ້ນຄອງເມືອງໄດ້ 4 ປີ ແລ້ວຈາກໄປ ເຮັດໃຫ້ເມືອງວັງອ່າງຄຳ ບໍ່ມີເຊື້ອໜໍ່ກະສັດປົກຄອງເປັນມານານປີ ເພາະລູກຊາຍຂອງພະນາງເອງທາງເມືອງຈຳປາ ໄດ້ມາກາບບັງຄົມທູນ ຂໍໄປສະເຫວີຍລາດ ຢູ່ທີ່ນັ້ນກ່ອນ. ຈົນມາຮອດລະຫວ່າງປີ ຄສ 1841-1845 ເຊິ່ງແມ່ນລາສະການຂອງ ສະເດັດເຈົ້າອະນຸວົງ ມະຫາລາດ ປົກຄອງນະຄອງວຽງຈັນ ທາງກອງເມືອງແສນ, ກອງເມືອງຈັນ ແລະ ກອງອຸປະຮາດພ້ອມເຖົ້າບ້ານເຖົ້າເມືອງ ທີ່ຮັກສາການປົກຄອງເມືອງວັງອ່າງຄຳ ເປັນເວລານານມານັ້ນ ຈຶ່ງຕົກລົງແຕ່ງຕົວແທນນຳເອົາຂັນຫ້າຂັນແປດ ຂຶ້ນໄປນະຄອນຫຼວງວຽງຈັນ ເພື່ອກາບບັງຄົມທູນ ຂໍເຊື້ອພະວົງອົງໃດອົງໜຶ່ງ ລົງໄປປົກຄອງເມືອງ ຕາມລາຊະປະເພນີ.

ເມື່ອຊົງຊາບຄວາມປະສົງນັ້ນແລ້ວ ສະເດັດເຈົ້າອະນຸວົງ ມະຫາລາດ ຈຶ່ງມີພະກະແສຮັບສັ່ງ ໃຫ້ ນາງ ຄຳເພົາ ທີ່ເປັນມະເຫສີ ຫຼື ນາງສະໜົມຜູ້ທີ່ຫາກ ເຊິ່ງກຳລັງຊົງພະຄັນກັບພະອົງໄດ້ສາມເດືອນແລ້ວນັ້ນ ລົງປົກຄອງເມືອງວັງ ອ່າງຄຳ ເປັນການຊົ່ວຄາວ ເພື່ອລໍຖ້າໃຫ້ລູກເກີດມາ ແລ້ວສືບຕໍ່ໃຫ້ເປັນເຈົ້າ ປົກຄອງເມືອງໃນຖານນະເຊື້ອໜໍ່ກະສັດຕໍ່ໄປ, ເວົ້າສະເພາະ ນາງ ຄຳເພົາ ນັ້ນ ນາງເປັນລູກສາວອຸປະລາດຫຼວງພະບາງ ແຕ່ນາງມີຄວາມໂດດເດັ່ນດ້ານຄວາມ ງາມສະເພາະຕົວ ຈົນເປັນທີ່ສາລືໃນຫຼວງພະບາງເວລານັ້ນ, ສະນັ້ນ ອົງສະເດັດ ເຈົ້າອະນຸວົງມະຫາລາດ ຈຶ່ງຂໍນາງມາເປັນມະເຫສີ ຫຼື ນາງ ສະໜົມຢູ່ ນະຄອນຫຼວງວຽງຈັນ ດ້ວຍຄວາມຮັກມັກຂອງພະອົງ, ແຕ່ໂດຍຊົງຊາບການກາບ ບັງຄົມຂອງເຖົ້າບ້ານເຖົ້າເມືອງ ທີ່ໄປຈາກເມືອງວັງອ່າງຄຳ ພະອົງຈຶ່ງມອບ ນາງ ຄຳເພົາ ນຳສາຍເລືອດໜໍ່ກະສັດລົງປົກຄອງ ເມືອງວັງອ່າງຄຳ ຕາມການກາບ ບັງຄົມ ແລະ ການທູນຂໍດັ່ງກ່າວ.

ແຕ່ກ່ອນຈະອອກເດີນທາງມາເມືອງວັງອ່າງຄຳນັ້ນ ສະເດັດເຈົ້າອະນຸວົງ ມະຫາລາດ ໄດ້ຊົງພະລາດຊະທານຊ້າງງານິນກ້ຽວກອດຕົວໜຶ່ງ ເພື່ອນຳມາເປັນ ຊ້າງມິ່ງເມືອງຂວັນເມືອງວັງອ່າງຄຳ. ນອກນັ້ນ ທາງພະອົງ ຍັງໄດ້ພະລາດຊະທານ ແຢ່ງເງິນ, ແຢ່ງຄຳ, ຂັ້ນໄດເງິນ, ຂັ້ນໄດຄຳ ແນວລະອັນ, ພິເສດໄປກ່ວານັ້ນ ທາງ ພະອົງ ຍັງໄດ້ພະລາດຊະທານດາບຂັນໄຊດ້າມເງິນດວງໜຶ່ງ ແລະ ຟັກໃສ່ດາບທີ່ ເຮັດດ້ວຍເງິນອີກອັນໜຶ່ງ. ນອນນັ້ນ ທາງພະອົງ ຍັງໄດ້ພະລາດຊະທານເຄື່ອງຄ້ຳ ຂອງຄູນ ເພື່ອມາເປັນມໍລະດົກຂອງເມືອງວັງອ່າງຄຳອີກຈຳນວນໜຶ່ງ.

ເມື່ອຂະບວນແຮ່ເດີນທາງມາຮອດນາທົ່ງຕູນ ອັນເປັນທີ່ຕັ້ງເມືອງວັງ ປະຊາຊົນເມືອງ ກໍໄດ້ອອກໄປຕ້ອນຮັບ ແລະ ແຫ່ ນາງ ຄຳເຜົາ ເຂົ້າພັກຢູ່ທີ່ນັ້ນ, ສະເພາະຊ້າງງານິນກ້ຽວກອດ ປະຊາຊົນຊາວເມືອງ ໄດ້ນຳໄປຜ່ຽນໄວ້ ທີ່ທາປ່າ ເລົ່າ, ປ່າແຂມ ກໍຄືປາຫຍ້າອ້ອຍໝູ ເທິງຝັ່ງເຊນ້ອຍ ຫ່າງຈາກບ້ານ ນາທົ່ງຕູນ ທີ່ ເປັນສະຖານທີ່ຕັ້ງຂອງເມືອງວັງ ໄປທາງທິດເໜືອ ປະມານ 4 ກິໂລແມັດ (ບໍລິເວນພະທາດນາງລາວຕັ້ງຢູ່ປະຈຸບັນ) ເມື່ອຊ້າງໄດ້ກິນຫຍ້າອ້ອຍໝູ, ຫຍ້າເລົ່າ ຫຍ້າແຂມ ແລະ ກໍໄຜ່ນ້ອຍອັນແຊບຊ້ອຍຢູ່ຕາມບຸ່ງ, ຕາມທາງນັ້ນແລ້ວ, ຊ້າງກໍ່ບໍ່ ໄປໃສເລີຍ. ເປັນອັນວ່າ ນາງ ຄຳເພົາ ກໍໄດ້ພັກຢູ່ເມືອງວັງອ່າງຄຳ ໃນເວລານັ້ນ. ພ້ອມກັນນັ້ນ ປະຊາຊົນຊາວຜູ້ໄທ ທົ່ວເຂດເມືອງວັງອ່າງຄຳ ກໍ່ມີຄວາມເຫຼື້ອມ ໃສຕໍ່ພະມະເຫສີ ຂອງອົງສະເດັກເຈົ້າອະນຸງວົງມະຫາລາດ ຄົນນີ້ເປັນຢ່າງຍິ່ງຄື ກັນ. ແຕ່ດ້ວຍປະເພນີປະຊາຊົນຊາວຜູ້ໄທເຂດເມືອງວັງອ່າງຄຳ ມັກເອີ້ນຄົນຖິ່ນ ອື່ນ, ໂດຍສະເພາະຄົນເຜົ່າລາວ ດ້ວຍຄວາມສະນິດສະໜົມວ່າ ທ້າວລາວ ຫຼື ສະ ນິດໄປກ່ວານັ້ນ ເຂົາເຈົ້າຈະເອີ້ນວ່າ ອີ່ຕາລາວ, ຖ້າແມ່ຍິງເຂົາຈະເອີ້ນວ່າ ນາງລາວ ຫຼື ອີ່ນາຍລາວ ນັ້ນເອງ. ສະເພາະ ນາງ ຄຳເພົາ ທີ່ເປັນຄົນເຜົ່າລາວ ມາແຕ່ເມືອງ ຫຼວງພະບາງນັ້ນ ປະຊາຊົນຊາວເມືອງ ຈຶ່ງເອີ້ນເພິ່ນດ້ວຍຄວາມສະນິດສະໜົມ ແລະ ນັບຖືທີ່ສຸດນັ້ນວ່າ ນາງລາວ. ຕໍ່ມາ ນາງ ຄຳເພົາ ຫຼື ນາງລາວ ໄດ້ປະສູດລູກ ອອກເປັນບຸດຊາຍ, ປະຊາຊົນຊາວເມືອງວັງອ່າງຄຳ ຈຶ່ງໄດ້ຕັ້ງຊື່ໃຫ້ເພິ່ນວ່າ ເຈົ້າ ຫຸນ ເຊິ່ງເປັນໂອລົດຂອງເຈົ້າອະນຸວົງ ມະຫາລາດ ເຊື້ອໜໍ່ກະສັດຈາກ ນະຄອນຫຼວງວຽງຈັນ ທີ່ຈະໄດ້ປົກຄອງເມືອງຕາມຄວາມປາຖະໜາ.

ແຕ່ການເຮັດບຸນສະຫຼອງອົງພະທາດ ໄດ້ພຽງສອງປີເທົ່ານັ້ນ, ມາຮອດປີ ຄສ 1844 ເມືອງວັງອ່າງຄຳ ກໍ່ຄືທົ່ວປະເທດລາວລ້ານຊ້າງ ໄດ້ຖືກພວກສັກດີນາ ສະຫຍາມ ເຂົ້າມາປຸ້ນບ້ານຊິງເມືອງ ແລະ ກວດຕ້ອນປະຊາຊົນຊາວເມືອງວັງ ອ່າງຄຳ. ໄປຢູ່ຝັ່ງຂວາຂອງແມ່ນ້ຳຂອງ ເປັນຈຳນວນ 14,866 ຄົນ, ເວົ້າສະເພາະ ນາງ ຄຳເພົາ ຫຼື ນາງລາວ ແລະ ເຈົ້າປົກຄອງບ້ານເມືອງວັງອ່າງຄຳ ເວລານັ້ນ ຈຳເປັນຕ້ອງໄປລີ້ຢູ່ກາງດົງໃຫຍ່ ເຊິ່ງຫ່າງຈາກຕົວເມືອງວັງ (ບ້ານນາທົ່ງຕູມ) ໄປ ທາງທິດເໜືອ ປະມານ 25 ກິໂລແມັດ , ວັດທຸບູຮານ ແລະ ເຄື່ອງຄ້ຳຂອງຄູນ

ເຊິ່ງເປັນມໍລະຂອງເມືອງວັງອ່າງຄຳ ທີ່ນາງລາວ ພ້ອມເຈົ້າປົກຄອງກໍ່ຄືບ່າວໄພ້ລາຊະດອນ ທັນຖືໄປນຳໄດ້ນັ້ນ ກໍ່ມີພຽງໝໍ້ທອງສີ່ຫູໜ່ວຍໜຶ່ງ, ຄ້ອງເກົ້າດຸມໜ່ວຍໜຶ່ງ, ພະເງິນ, ພະຄຳ ແນວລະອີງເທົ່ານັ້ນ.

ເມື່ອນາງລາວ ສິ້ນພະຊົນຢູ່ທີ່ນັ້ນ ເຈົ້າປົກຄອງເມືອງ (ລູກຊາຍເພິ່ນ) ແລະ ປະຊາຊົນຊາວເມືອງ ໄດ້ກໍ່ທາດໃສ່ກະດູກ ໃຫ້ເພິ່ນຢູ່ທີ່ນັ້ນເລີຍ, ສ່ວນເຄື່ອງຄ້ຳຂອງຄູນທີ່ໄດ້ຖືໄປນຳນັ້ນ, ທາງຜູ້ຄອງເມືອງ ແລະ ປະຊາຊົນຊາວເມືອງກໍ່ໄດ້ປະໃຫ້ເພິ່ນຢູ່ທີ່ນັ້ນຄືກັນ, ເຊິ່ງບໍລິເວນດັ່ງກ່າວ ປະຊາຊົນຊາວເມືອງວັງອ່າງຄຳ ພາກັນເອີ້ນວ່າ: ເຫຼົ່ານາງລາວ ຫຼື ຍຸບນາງລາວ ຈົນເທົ່າປະຈຸບັນ.

ແຫຼ່ງທ່ອງທ່ຽວແຫ່ງນີ້ ມີປະຫວັດຄວາມເປັນມາທີ່ໜ້າສົນໃຈ, ການທ່ອງທ່ຽວສວນທູນໄຊ ຕັ້ງຢູ່ຂອບເຂດ ເມືອງໄກສອນ ພົມວິຫານ ແລະ ເມືອງອຸທຸມພອນ ເປັນຈຸດໃຈກາງຂອງສອງເມືອງ, ຈຸດດັ່ງກ່າວ ຫ່າງຈາກເທດສະບານແຂວງສະຫວັນນະເຂດ ໄປທາງທິດຕາເວັນອອກສ່ຽງເໜືອ ປະມານ 21 ກິໂລແມັດ. ທີ່ຕັ້ງຂອບເຂດຂອງແຫຼ່ງທ່ອງທ່ຽວ ປະກອບມີ 2 ເມືອງ ແລະ 5 ບ້ານອ້ອມຮອບ, 2,230 ຫຼັງຄາເຮືອນ, ມີເນື້ອທີ່ທັງໝົດ 332 ເຮັກຕາ

- ທິດຕາເວັນອອກຊຽງເໜືອ ຕິດກັບບ້ານກາງ ແລະ ເສັ້ນທາງເລກທີ 13 ໃຕ້
- ທິດຕາເວັນຕົກຊຽງໃຕ້ ຕິດກັບບ້ານໜອງໂກ່ມ ແລະ ເສັ້ນທາງເລກ 9
- ທິດຕາເວັນອອກ ຕິດກັບບ້ານນາທາດ ເສັ້ນທາງເລກ 9
- ທິດຕາເວັນຕົກ ຕິດກັບບ້ານເຄືອເຂົາກາດ-ດົງດຳດວນ ແລະ ດົງບັງ

ການສ້າງແຫຼ່ງທ່ອງທ່ຽວ ອຸທິຍານສວນທູນໄຊ ເປັນແຫຼ່ງທ່ອງທ່ຽວທີ່ມີຄວາມໂດດເດັ່ນ ແລະ ສວຍງາມ ຫ່າງຈາກຕົວເມືອງໄກສອນ, ສະຫວັນນະເຂດ ເຊໂນ, ໂຄງການດັ່ງກ່າວ ລວມທັງໝົດມີ 11 ກິດຈະກຳ ທີ່ເປັນວົງຈອນກ່ຽວເນື່ອງກັນ ເພື່ອດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ທີ່ເດີນທາງມາທ່ຽວ ນັບມື້ນັບຫຼາຍຂຶ້ນ, ເຮັດໃຫ້ແຫຼ່ງທ່ອງທ່ຽວໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ແລະ ປະຊາຊົນ ກໍ່ມີວຽກເຮັດງານທຳ.

# ແຂວງສາລະວັນ

## 1. ນ້ຳຕົກຕາດເລາະ, ຕາດຮັງ.



ນ້ຳຕົກຕາດເລາະ ແມ່ນກຳເນີດຂຶ້ນມາຈາກ ແມ່ນ້ຳເຊເຊັດ ທີ່ມີຕົ້ນກຳເນີດມາຈາກແຂວງເຊກອງ, ນ້ຳຕົກມີຄວາມສູງປະມານ 10 ແມັດ, ຕັ້ງຢູ່ທີ່ບ້ານແສນວັງ, ເມືອງສາລະວັນ. ໂດຍໄດ້ເປີດນຳໃຊ້ ແຕ່ປີ 1986 (ແຕ່ໃນຂັ້ນພື້ນຖານເທົ່ານັ້ນ) ສ່ວນຄຳວ່າ “ຕາດເລາະ” ແມ່ນມີຄວາມເປັນມາຄືດັ່ງລຸ່ມນີ້: ແມ່ນໄດ້ມາຈາກຄຳເວົ້າຂອງຊົນເຜົ່າ ທີ່ອາໄສຢູ່ໃນບໍລິເວນແຫ່ງນີ້ ຄືຄຳວ່າ “ໂລະ” ມີຄວາມໝາຍວ່າ ອະໄວຍະວະຂອງເພດຊາຍ, ຊຶ່ງພົວພັນກັບເຫດການບາງຢ່າງຄື: ໃນເມື່ອກ່ອນນັ້ນ ໄດ້ມີຜູ້ເຖົ້າຜູ້ໜຶ່ງ ທຸກມື້ລາວໄດ້ອອກໄປໄຮ່. ບັງເອີນມື້ໜຶ່ງ ໃນເວລາຄ່ຳຄ້ອຍຕາເວັນຈະລັບແສງ, ກ່ອນຈະໄປເຖິງບ້ານນັ້ນ ຄິດຢາກໄປອາບນ້ຳທີ່ມີນ້ຳຕົກຕາດ ທີ່ມີສຽງດັງຫຶມໆ ເມື່ອໄປຮອດນ້ຳຕົກຕາດແລ້ວ. ບັງເອີນ ພໍ່ເຖົ້າໄດ້ພົບກັບຜູ້ສາວສອງເອື້ອຍນ້ອງ ທີ່ມາແຕ່ໄຮ່ ແລະ ຄິດຢາກອາບນ້ຳຄືກັນ ແຕ່ອາດເປັນພົມລິຄິດ ໃຫ້ພໍ່ເຖົ້າແກ່ຄົນນັ້ນໄດ້ເມຍຊ້ຳເຖົ້າ ຫຼື ແມ່ນບໍ່ງແນມກັນ, ຈຶ່ງໄດ້ເອີ້ນຊັກຖາມ ຕາມພາສາຄົນບ້ານດຽວ ເລີຍໄດ້ຖາມຜູ້ເຖົ້ານັ້ນວ່າ: ພໍ່ເຖົ້າຢາກໄດ້ເມຍບໍ່? ພໍ່ເຖົ້າກໍ່ໄດ້ຕອບວ່າ ກໍ່ຢາກໄດ້ຫັນແລ້ວ, ແຕ່ບໍ່ມີຍິງໃດໃນບ້ານເຮົາສົນໃຈເລີຍ, ສອງນ້ອງເອື້ອຍ ຈຶ່ງໄດ້ພະນັນກັບພໍ່ເຖົ້ານັ້ນວ່າ: ພໍ່ເຖົ້າກ້າໂຕນລົງຕາດນີ້ບໍ່? ຖ້າພໍ່ເຖົ້າກ້າ ແລ້ວກັບຂຶ້ນມາໄດ້ ພວກຂ້ອຍທັງສອງຂານອາສາຈະເປັນເມຍທັງສອງເລີຍ, ເມື່ອໄດ້ຍິນແນວນັ້ນ ກໍ່ຄິດໄປຄິດມາ ວ່າຈະເຮັດແນວໃດດີຈະໂຕນຕາດກໍ່ຢ້ານຕາຍ ແລະ ຖ້າບໍ່ໂຕນຕາດ ກໍ່ຢ້ານສອງນ້ອງເອື້ອຍເຢາະເຢີ້ຍວ່າເປັນຜູ້ຊາຍທີ່ຂີ້ຂາດ ແລະ ອີກຢ່າງໜຶ່ງ ກໍ່ຢາກໄດ້ສອງນ້ອງເອື້ອຍນ້ອງເປັນເມຍ, ຈຶ່ງໄດ້ຕັດສິນໃຈຖາມສອງເອື້ອຍນ້ອງຄືນວ່າ: ພວກຫຼານເວົ້າແທ້ບໍ່? ສອງເອື້ອຍນ້ອງຕອບວ່າ ແທ້ຖ້າເຮັດໄດ້ ສາບານກໍ່ໄດ້ ພວກເຮົາຍອມເປັນເມຍ. ເມື່ອຢືນຢັນຄືແນວນັ້ນ ພໍ່ເຖົ້າເລີຍແກ້ຜ້າອອກ “ໂລະ” ຍານຕາບຊາບ ກໍ່ໄດ້ໂດດລົງໄປ ມິດຄົນເຕີບ ຈົນເຮັດໃຫ້ສອງເອື້ອຍນ້ອງຕົກໃຈ ວ່າພໍ່ເຖົ້າຕາຍແລ້ວ. ຫຼັງຈາກນັ້ນ ກໍ່ໂພ່ຫົວຂຶ້ນມາ ຈຶ່ງເຮັດໃຫ້ເອື້ອຍນ້ອງ ຕັດສິນໃຈເຮັດຕາມສັນຍາ ແລະ ພໍ່ເຖົ້າໄດ້ປະໂລະ ຂອງເພິ່ນຢ່າງບັງອາດ ຈຶ່ງບອກວ່າມື້ແລງໃຫ້ໄປສູ່ຂໍນຳພໍ່ແມ່ພວກຂ້ອຍເດີ້. ຈາກນັ້ນ ພໍ່ເຖົ້າກໍ່ປະຕິບັດຕາມ ແລະ ໄດ້ເມຍສອງຄົນພ້ອມດຽວກັນ ແລະ ຄົນທັງຫຼາຍກໍ່ເອີ້ນວ່າ: ຕາດໂລະ ຫຼື ຕາດເລາະ ເທົ່າທຸກວັນນີ້. ນ້ຳຕົກຕາດເລາະ ຕັ້ງຢູ່ບ້ານແສນວັງ, ເມືອງ ແລະ ແຂວງສາລະວັນ, ຫ່າງຈາກເທດສະບານເມືອງ 31 ກິໂລແມັດ.

## 2. ແກ້ງກຸ.



ຄາວແຕ່ກີ້ ມີຄອບຄົວພໍ່ເຖົ້າຜູ້ໜຶ່ງ ຊື່ວ່າ: ພໍ່ເຖົ້າກຸ; ຄອບຄົວຂອງລາວເປັນຄອບຄົວທີ່ທຸກຍາກ ແລະ ການດຳລົງຊີວິດຂອງເພິ່ນ ແມ່ນການເຮັດນາ, ເຮັດສວນ ແລະ ຊອກຫາສັດປ່າ. ພໍ່ເຖົ້າກຸ ໄດ້ຕັ້ງຖິ່ນຖານຢູ່ແຄມແມ່ນ້ຳເຊໂດນ ຢູ່ເຂດບໍລິເວນແກ້ງໃຫຍ່ ເພາະວ່າເຂດນີ້ ມີຄວາມອຸດົມສົມບູນ ແລະ ມີສັດສາວາສິ່ງອາໄສຢູ່ເຊັ່ນ: ປູ, ປາ, ຫອຍ, ກຸ້ງ ແລະ ພືດພັນຕ່າງໆ. ໃນແຕ່ລະມື້ ຄອບຄົວພໍ່ເຖົ້າກຸ ແລະ ເພິ່ນເອງໄດ້ລົງຫາປາຢູ່ຕາມແກ້ງ, ມີມື້ໜຶ່ງ ພໍ່ເຖົ້າກຸ ໄດ້ລົງຫາປາຜູ້ດຽວຢູ່ແກ້ງ ໃນຄະນະທີ່ລາວແນມຫາປາຢູ່ນ້ຳນັ້ນ, ບັງເອີນລາວພັດໝື່ນຫີນ ລົ້ມ ເຮັດໃຫ້ລາວເສຍຊີວິດຄາທີ່ ແລະ ຫຼາຍປີຕໍ່ມາ ປະຊາຊົນພາຍໃນບ້ານຈຶ່ງພາກັນເອີ້ນແກ້ງນີ້ວ່າ: ແກ້ງກຸ ເທົ່າທຸກວັນນີ້. ແກ້ງກຸ ຕັ້ງຢູ່ບ້ານພູມສະຫວັນ, ເມືອງວາປີ, ແຂວງສາລະວັນ, ຫ່າງຈາກເທດສະບານເມືອງ 7 ກມ. ໂດຍມີການເປີດນຳບໍລິການ ເລີ່ມແຕ່ປີ 1995.

## 3. ນ້ຳຕົກຕາດສູງ (ເຊເຊັດ).



ນ້ຳຕົກຕາດສູງ ຫຼື ນ້ຳຕົກຕາດເຊເຊັດ ທີ່ມີຊື່ສຽງຂອງແຂວງສາລະວັນ ແຫ່ງໜຶ່ງມີຕົ້ນກຳເນີດມາຈາກ ສາຍນ້ຳເຊເຊັດ ທີ່ມີຄວາມສູງປະມານ 70 ແມັດ, ທີ່ຕັ້ງຢູ່ບ້ານຄຽງຕາດສູງ ເມືອງສາລະວັນ ແລະ ມີປະຫວັດຄວາມເປັນມາ ພ້ອມໆກັບການສ້າງບ້ານຄຽງຕາດສູງ ໂດຍມີຜູ້ນຳຂອງເຜົ່າແງະ ທີ່ໄດ້ຕັ້ງຖິ່ນຖານແຄມແມ່ນ້ຳເຊເຊັດ ບ່ອນທີ່ມີຄວາມອຸດົມສົມບູນທາງທຳມະຊາດ ແລະ ມີຄວາມສະດວກ ໃນການດຳລົງຊີວິດ. ພາຍໃນບ້ານ ກໍ່ໄດ້ປຶກສາຫາລືກັນວ່າ ຈະຕັ້ງຊື່ບ້ານແນວໃດ ແລະ ມີເຖົ້າແກ່ຄົນໜຶ່ງ ສະເໜີຂຶ້ນວ່າ: ບ້ານເຮົາ ມີທີ່ຕັ້ງເໝາະສົມ ແລະ ມີນ້ຳຕົກຕາດທີ່ສູງຊັນ ແລະ ສວຍງາມ ທີ່ມີຄວາມໝາຍໃນດ້ານດີ. ຜ່ານການປຶກສາພາຍໃນບ້ານ ຈຶ່ງຕົກລົງເອກະພາບຕັ້ງຊື່ວ່າ: ບ້ານຄຽງຕາດສູງ ແລະ ເອີ້ນຊື່ນ້ຳຕົກຕາດດັ່ງກ່າວວ່າ: ນ້ຳຕົກຕາດສູງ ເທົ່າທຸກວັນນີ້. ໂດຍນ້ຳຕົກຕາດສູງ ໄດ້ເປີດບໍລິການ ນັບຕັ້ງແຕ່ປີ 1992. ນ້ຳຕົກຕາດສູງ ຕັ້ງຢູ່ບ້ານສະນົມໃນ, ເມືອງເລົ່າງາມ, ແຂວງສາລະວັນ, ຫ່າງຈາກເທດສະບານເມືອງ 25 ກິໂລແມັດ.

## 4. ນ້ຳຕົກຕາດເທວະດາ (ຕາດຕະຫູຍ).

ນ້ຳຕົກຕາດເທວະດາ ມີຊື່ເດີມວ່າ: ນ້ຳຕົກຕາດຕະຫູຍ ຕາມເຖົ້າແກ່ພາຍໃນບ້ານ ໄດ້ເລົ່າສູ່ກັນຟັງວ່າ: ໃນບໍລິເວນດ້ານລຸ່ມຂອງນ້ຳຕົກຕາດ ໄດ້ມີພະພຸດທະຮູບສະຖິດຢູ່ໃນຖ້ຳກ້ອງນ້ຳຕົກ. ແຕ່ລະປີ ພໍຮອດເດືອນຫ້າ ປະຊາຊົນພາຍໃນບ້ານ ຈັດຕັ້ງບຸນ ແລະ ພາກັນມາຫົດສົງພະ, ໃນບໍລິເວນຕໍ່ໜ້ານ້ຳຕົກຕາດ ຍັງມີຫີນຕັ້ງມີຮູບລັກສະນະຄ້າຍກັບພິມສີ່ໜ້າ (ໃນສາດສະໜາຮິນດູ) ໃນອະດີດມີສອງອັນ ແລະ ໃນປະຈຸບັນ ເຫຼືອພຽງອັນດຽວຍ້ອນຖືກລະເບີດຍິນສະໄໝສົງຄາມ. ຕໍ່ມາ ໃນປີ 2008 ນັກທຸລະກິດເຂົ້າມາສໍາປະທານເຂດດັ່ງກ່າວ ແລະ ເຫັນວ່ານ້ຳຕົກຕາດມີຄວາມສວຍງາມ ແລະ ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ມີຫີນພົມສີ່ໜ້າ ຈຶ່ງໄດ້ປ່ຽນຊື່ຕາດຕະຫູຍ ມາເປັນຕາດເທວະດາ ເທົ້າທຸກວັນນີ້. ນ້ຳຕົກຕາດເທວະດາ ເກີດມາຈາກຫ້ວຍນ້ຳໃສ, ບ້ານຫາງພູນ້ອຍ, ເມືອງສາລະວັນ, ຫ່າງຈາກທາງເລກທີ່ 20 ປະມານ 19 ກິໂລແມັດ ແລະ ຫ່າງຈາກເທດສະບານເມືອງ 35 ກິໂລແມັດ.



## 5. ຖ້ຳເກົ້າຮູ-ພູຕາກເຂົ້າ.



ຕາມການເລົ່າຂານຂອງເຖົ້າແກ່ໄດ້ເວົ້າວ່າ: ຖ້ຳເກົ້າຮູ ມີປະຫວັດຄວາມເປັນມາ ຕິດພັນກັບການສ້າງທາດພະນົມ ໂດຍທີ່ສະໄໝນັ້ນ ກ່ອນການສ້າງທາດພະນົມ ເຈົ້າຄອງນະຄອນ ໄດ້ປະກາດທົ່ວອານາເຂດແດນ ທີ່ຂຶ້ນກັບນະຄອນ ໃຫ້ຮິບໂຮມເອົາຊັບສິນທີ່ມີຄ່າ ໄປໄວ້ໃນພື້ນພະທາດ ຕາມການເຊື່ອຖືຂອງຊາວພຸດ, ໂດຍທີ່ໄພ່ພົນທີ່ນຳເອົາຊັບສິນມາຮອດບໍລິເວນພູຕາກເຂົ້ານັ້ນ ໄດ້ພັກເຊົາຢູ່ທີ່ນັ້ນ, ໃນຄະນະທີ່ພັກຢູ່ນັ້ນ ທາດພະນົມກໍ່ໄດ້ສ້າງສຳເລັດແລ້ວ ແລະ ໄດ້ຕີຄ້ອງຮ້ອງປ່າວ ເຮັດໃຫ້ເຂົາເຈົ້າຕ້ອງຊອກຫາບ່ອນໄວ້ຂອງທີ່ມີຄ່າ ເພາະໄປບໍ່ທັນ, ໂດຍມີສອງຈຸດ ທີ່ເຂົາເກັບຮັກສາໄວ້ຄື: ຖ້ຳເຈັດຕູ (ດ້ານລຸ່ມຂອງພູຕາກເຂົ້າ) ແລະ ຖ້ຳເກົ້າຮູ (ຖ້ຳເກົ້າຮູອາດເປັນຍ້ອນປະຊາຊົນເປັນຄົນຂຸດເຈາະ ເພື່ອໄວ້ສົມບັດ ເພາະໃນຮູປະກົດມີເສັ້ນຜົມ ແລະ ໄຫແຕກຈຳນວນໜຶ່ງ) ເມື່ອໄດ້ບ່ອນເກັບຮັກສາແລ້ວ ກໍ່ຕ້ອງມີຜູ້ຮັກສາສົມບັດ ໂດຍການອາສາສະໝັກສະຫຼະຊີວິດ ແລະ ໄດ້ມີຄຳກ່າວໄວ້ວ່າ: “ຫຼຽວມາແສງຕາຕົກ ກົກໄມ້ເນີ້ງ ກອງຫີນຢູ່ໜ້າ ໄຫຫີນນັ້ນຢູ່ຫຼັງ” ສ່ວນຄຳວ່າ: ພູຕາກເຂົ້ານັ້ນ ປະຊາຊົນທີ່ໄດ້ອາໄສຢູ່ໃນບໍລິເວນນັ້ນ ໄດ້ນຳເອົາເຂົ້າເປືອກປຽກ ຂຶ້ນໄປຕຳ ແລະ ຕາກຢູ່ບໍລິເວນພະລານຫີນ ແລະ ພາກັນເອີ້ນວ່າ: “ພູຕາກເຂົ້າ” ແລະ ໄລຍະຕໍ່ມາ ຄືສະໄໝຕໍ່ສູ້ກັບຝຣັ່ງ, ຍີ່ປຸ່ນ ແລະ ອາເມລິກາ ປະຊາຊົນຍັງໄດ້ໃຊ້ສະຖານທີ່ດັ່ງກ່າວ ໃນການລີ້ຊ່ອນສັດຕູ ບໍ່ໃຫ້ພົບເຫັນ ແລະ ພາກັນເອີ້ນສະຖານທີ່ດັ່ງກ່າວວ່າ: ເປັນຄຳລວມວ່າ ຖ້ຳເກົ້າຮູ-ພູຕາກເຂົ້າ. ຖ້ຳເກົ້າຮູ-ພູຕາກເຂົ້າ ຕັ້ງຢູ່ບ້ານທົ່ງຂາມ, ເມືອງເລົ່າງາມ ແລະ ຫ່າງຈາກທາງເລກ 20 ປະມານ 12 ກິໂລແມັດ ແລະ ຫ່າງຈາກເທດສະບານເມືອງ 14 ກິໂລແມັດ.

## 6. ບ້ານຫ້ວຍຫູນ (ຫັດຖະກຳຕ່ຳແຜ່ນ).

ບ້ານຫ້ວຍຫູນ ແມ່ນໄດ້ຍົກຍ້າຍຖິ່ນຖານມາຈາກແຂວງຕາແອັນອອກ (ປະຈຸບັນແຂວງເຊກອງ) ຈາກບ້ານປຣະລຸ, ມາຕັ້ງຢູ່ບ້ານຫ້ວຍຫູນໃຕ້ ໃນປີ 1976. ໂດຍການນຳພາຂອງນາຍບ້ານ ທ່ານ ຄຳໃບ (ການຍົກຍ້າຍແມ່ນມີສອງໄລຍະຄື: ສະໄໝປົດປ່ອຍໃໝ່ ແລະ ສະໄໝແບ່ງແຂວງສາລະວັນ ອອກເປັນແຂວງເຊກອງ) ໂດຍປະຊາຊົນພາຍໃນບ້ານ ແມ່ນຊົນເຜົ່າກະຕູ ທີ່ມີພາສາປາກເວົ້າ ແລະ ການນຸ່ງຖື ທີ່ເປັນເອກະລັກ, ສຳລັບດ້ານວັດທະນະທຳ ແລະ ຮີດຄອງປະເພນີ ປະຊາຊົນນັບຖືສາສະໜາຜີ (ບັນທະບູລຸດ) ແລະ ສິ່ງໜຶ່ງທີ່ເປັນເອກະລັກພາຍໃນບ້ານ ແມ່ນການມີໂລງສົບໄວ້ໃນແຕ່ລະເຮືອນ ແລະ ສຳລັບດ້ານຫັດຖະກຳນັ້ນ ປະຊາຊົນເຜົ່າກະຕູ ມີສີມືໃນການຕ່ຳແຜ່ນແພມາຕັ້ງແຕ່ບູຮານນະການ, ມີເອກລັກ ແລະ ມີຄວາມສວຍງາມ, ສະເພາະໃນດ້ານເຕັກນິກ ແລະ ລວດລາຍໂດດເດັ່ນຈົນສ້າງຊື່ສຽງມາເທົ່າທຸກວັນນີ້ (ບ້ານຫ້ວຍຫູນ) ຕັ້ງຢູ່ເມືອງເລົ່າງາມ ແຄມທາງເລກ 20 ສາລະວັນ-ປາກເຊ ແລະ ຫ່າງຈາກເທດສະບານເມືອງເລົ່າງາມ 10 ກິໂລແມັດ.



## 7. ຫໍໄຕບ້ານວັດກາງ.



ຫໍໄຕວັດກາງ ເປັນມໍລະດົກອັນລ້ຳຄ່າທາງດ້ານວັດທະນະທຳ, ເປັນສີມືອັນປານີດ ຂອງນັກຈິດຕະກອນບູຮານ, ເປັນຄັງສາງພະໄຕປີດົກຂອງສາດສະໜາພຸດ ນັບແຕ່ປະຖົມມະການ ແປດໝື່ນທຳມະຂັນ ໜັງສືສູດເທດ ແລະ ຄຳສອນຕ່າງໆ ລ້ວນແຕ່ແມ່ນພູມປັນຍາຂອງນັກປາດ. ສ້າງຂຶ້ນປີ ຄສ 1857 ທ້າຍການປົກຄອງຂອງສັກດີນາສະຫຍາມ, ເປັນເຈົ້າສັດທາ ຂອງພະເອກະລາດທີ 6; ທ້າວເຫງົ້າ ຊຽງກັນຍາ ແລະ ໄພ່ພົນໂຍທາ ໃນຂອບເຂດສາລະວັນ. ພະຍາເຫງົ້າຊຽງກັນຍາ ໄດ້ນິມົນອາຈານຄູຢູ່ໄທ ຈາກນະຄອນລາດຊະສີມາ ເປັນຊ່າງນຳພາການກໍ່ສ້າງ ຄູ່ກັບສິມຫຼັງເກົ່າ ຂ້າງຫ້ອງການ ປກສ ແຂວງສາລະວັນປະຈຸບັນ, ວັດສະດຸກໍ່ສ້າງ ແມ່ນໄມ້ກັບດິນ, ມີ 54 ເສົາ, ອາດຊີງລາວບູຮານເຊັ່ນ: ສິ່ວເຈາະຮູ, ຕອກລຸບໄມ້ຄັດຕ່າງໆ ສ່ວນຫຼາຍແມ່ນໄມ້ເຊັ່ນ: ໄມ້ມັນປາ, ໄມ້ແຄນ, ໄມ້ດູ່ ເປັນຕົ້ນຈາກນັ້ນ ເພິ່ນນັ່ງຄວັດຮູບພາບຕາມປ້ານລົມ, ສີໜ້າປະຕູສະແດງເຖິງ ປະຫວັດສາດຂອງສາດສະໜາ ແລະ ຄວາມອຸດົມຮັ່ງມີສະໄໝບູຮານ. ປີ ຄສ 1920 ຂ້າຫຼວງໃຫຍ່ຂອງຝຣັ່ງປະຈຳອິນດູຈີນ ໄດ້ຮັບທຶນຈາກເຄືອຈັກກະພັດ ແລະປະເທດທຶນນິຍົມ ເພື່ອມາປະຕິສັງຂອນວັດຖຸບູຮານ, ວັດອາສາດສະໜາ; ສຳລັບແຂວງສາລະວັນ ກໍ່ໄດ້ຮັບທຶນປະຕິສັງຂອນຫໍໄຕ ພະຄູຈັນທາ ມອບໃຫ້ຊຽງປ້ອມ ບ້ານດົງໜ້ອງ ຜູ້ມີສີມືເປັນຜູ້ສ້ອມແປງຕົບແຕ່ງລວດລາຍທີ່ຊຳລຸດຊຸດໂຊມ ໃຫ້ກັບຄືນມາຄືເກົ່າວັນທີ່ 10/06/1970. ຫໍໄຕປີດົກທີ່ເຫຼື້ອມສະຫງ່າ ຄຽງຄູ່ກັບຊາວພຸດທີ່ເຄົາລົບນົບໄຫວ້ຕາມຮີດ 12 ຄອງ 14, ນັບໄດ້ 177 ປີ, ຖືກຝູງບິນ T28 ຂອງອາເມລິກາ ຍິງທະລາຍ ກາຍເປັນເຖົ່າຖ່ານ ແລະ ເສົາບາງຕົ້ນຍັງຊີ້ຟ້າ, ປະຈຸບັນ ການຈັດຕັ້ງຂັ້ນເທິງ ແລະ ມວນຊົນສາລະວັນ ໄດ້ເພີ່ມພະລັງສັດທາ ສ້າງຫໍໄຕຫຼັງໃໝ່ ຕາມແບບສະບັບເດີມ. (ຫໍໄຕວັດກາງຕັ້ງຢູ່ບ້ານວັດກາງເທດສະບານເມືອງສາລະວັນ).



## 8. ຈຸດແວ່ ບ້ານນາປົ່ງ.

ໃນເບື້ອງຕົ້ນ ປີ້ງໄກ່ນາປົ່ງ ແມ່ນເລີ່ມຈາກການປີ້ງຂາໄກ່ ຫຼື ປີ້ງຊີ້ນ ສ່ວນຂອງພໍ່ທິດຫຼ້າເປັນຜູ້ລິເລີ່ມໃນປີ 1945 ມາຮອດປີ 1984 ໄດ້ເລີ່ມການຈັດຕັ້ງເປັນສາຫະກອນ ກຸ່ມການຄ້າປີ້ງໄກ່ໂຕ, ແຕ່ປີ 1986 ຫາ 2002 ແມ່ນໄດ້ມີການຈັດເປັນລະບຽບກວ່າເກົ່າ ແລະ ໄດ້ມີການຈັດງານນິທັດສະການພາຂວັນໃຫຍ່-ປີ້ງໄກ່ນາປົ່ງພ້ອມກັບການຈົດທະບຽນລິຂະສິດ, ມາຮອດປີ 2007 ເຖິງປະຈຸບັນ ໄດ້ມີການຂາຍເປີດກ້ວາງ ສູ່ໂລກພາຍນອກໂດຍທ່ານ ບຸນທ່ຽງ ໄດ້ເຊົ່າລິຂະສິດ ພ້ອມເປີດສາຂາຢູ່ວຽງຈັນ ມີຮ້ານສິບຸນເຮືອງສາຂາທີ 1 ແລະ ຮ້ານໂພນທັນສາຂາ 2 ໂດຍເອົາປະຊາຊົນບ້ານນາປົ່ງ ເປັນພະນັກງານປຸງແຕ່ງ ແລະ ປີ້ງໄກ່ຕາມເອກະລັກ ແລະ ລົດຊາດດັ່ງເດີມ. ບ້ານນາປົ່ງຕັ້ງຢູ່ເມືອງຄົງເຊໂດນ ຫ່າງຈາກເທດສະບານເມືອງ 4 ກິໂລແມັດ



## 9. ທາດກະເດົາທຶກ.

ທາດກະເດົາທຶກ ຕັ້ງຢູ່ບ້ານນາໂຄກ, ຄົງເຊໂດນ, ຫ່າງຈາກເທດສະບານເມືອງ 30 ກິໂລແມັດ. ປະຈຸບັນອຳນາດການປົກຄອງເມືອງປົກປັກຮັກສາ

## 10. ວັດໜອງສອງຫ້ອງ (ວັດພະແກ້ວນ້ຳຢາດ).



ວັດໜອງສອງຫ້ອງ ຕັ້ງຢູ່ບໍລິເວນທົ່ງນາບ້ານນາໂພ, ຕີນພູສິ້ມປ່ອຍ (ພູພະແກ້ວ) ຈາກເມືອງໃໝ່ອາປີ, ແວ່ບ້ານແກ້ງສຸທິ ໄປຫາຕີນພູ 10 ກິໂລແມັດ, ຫ່າງຈາກແຂວງສາລະວັນ ໄປທາງທິດຕາເວັນຕົກສຽງເໜືອ 55 ກິໂລແມັດ, ຕາມການເລົ່າລື ແລະ ເອກະສານກ່ຽວກັບ ພະແກ້ວພະລຶກໜອກ. ເບື້ອງຕົ້ນ ແມ່ນສະຖິດຢູ່ຖ້ຳ ຂອບເຂດພູພະແກ້ວ, ເມືອງວາປີ, ແຂວງສາລະວັນນີ້ເອງ ຊົນເຜົ່າພື້ນເມືອງ ໄດ້ແກ່: ພານເທິງ; ພານເທືອງ ໄປເຊີດເນື້ອຍິງສັດ ແລ້ວໄປພໍ້ພະແກ້ວອົງສັກສິດນີ້ ໃນທ່ານັ່ງສະມາທິ ຢູ່ປາກຖ້ຳພູສິ້ມປ່ອຍ (ພູພະແກ້ວປະຈຸບັນ) ພວກເພິ່ນໄດ້ຖະໜອມຫອມຮັກ ປົກປັກຮັກສາ ເຄົາລົບບູຊາ ຈົນປະກົດວ່າ: ມີຄວາມຢູ່ດີມີສຸກ ນຳໂຊກນຳໄຊມາສູ່ຄອບຄົວ ແລະ ກົກເຄົ້າເລົ່າກໍຂອງພານເທິງ ແລະ ພານເທືອງ ຈົນມີຊື່ສຽງໂດ່ງດັງ, ຕໍ່ມາ ເຈົ້າສ້ອຍສີສະໝຸດພຸດທະກາມ ເຈົ້າຄອງນະຄອນຈຳປາສັກ ແຕ່ງເສນາອາມາດມາເອົາພະແກ້ວອົງນີ້ ແຕ່ເອົາໄປບໍ່ໄດ້ ຍໍບໍ່ຂຶ້ນ ແລ້ວຈຶ່ງເມືອກາບທູນເຈົ້າສີສະໝຸດ. ຕໍ່ມາ ກໍ່ແຕ່ງເສນາອາມາດ ແລະ ຂຸນນາງຊັ້ນຜູ້ໃຫຍ່ ມາຫາມເອົາພຣະແກ້ວອົງນີ້ ແຕ່ເວລາຍໍຂຶ້ນ ພະແກ້ວກໍ່ຕົກລົງດິນ ປະກົດວ່າລຸບລົງໃນພື້ນດິນ ເຮັດໃຫ້ຊາວບ້ານຊາວເມືອງພາກັນຂຸດຫາຈຶ່ງເອີ້ນວ່າ: ໜອງສອງຫ້ອງ ບ່ອນປຸກວັດໃສ່ປະຈຸບັນ. ເມື່ອເປັນຈັ່ງຊັ້ນ ເຈົ້າສ້ອຍສີສະໝຸດພຸດທະກາມ ຈຶ່ງໄດ້ນຳອຳນາດບັງຄັບໃຫ້ຈຸ້ມເຈື້ອເຊື້ອສາຍ ແລະ ຍາດພີ່ນ້ອງຂອງພານເທິງ ແລະ ພານເທືອງ ນຳເອົາພະແກ້ວໄປສົ່ງນະຄອນຈຳປາສັກ, ສະຖິດໄວ້ວັດຫໍ, ຄຸ້ມບ້ານວັດຫໍເມືອງເກົ່າເກິ່ງ ຂຶ້ນກັບເມືອງໂພນທອງ, ແຂວງຈຳປາສັກປະຈຸບັນ. ສ່ວນພວກຊົນເຜົ່າທີ່ຮັບໃຊ້ ແລະ ຮັກສາພຣະແກ້ວນັ້ນ ເຈົ້າສ້ອຍສີສະໝຸດ ໃຫ້ໄປເຮັດນາຢູ່ບໍລິເວນເຂດໜອງແຕ້, ງິ້ວບາພິງໂພດ, ຫ້ວຍນາເຊິ່ງສັກດີນາທັງລຫຼາຍເອີ້ນວ່າ: "ພວກຂ້າພະແກ້ວ" ໃນລະຫວ່າງ ຄສ 1817 ເຈົ້າຫຼ້າວິໄຊ ສະຫວັນນະຄົດ, ຂ້າຫຼວງ, ຂ້າໄທມາຮ່ວມພິທີຊະປະນະກິດສິບ ຈຶ່ງເອົາພະແກ້ວພະລຶກໜອກຄູ່ບ້ານຄູ່ເມືອງ ຈາກເຂດສິ້ມປ່ອຍ-ນາຍອນ ມາສະຖິດຢູ່ຫໍພະແກ້ວອັນງົດງາມຢູ່ວັດຫໍເກົ່າແກ່ ໄປສູ່ດິນແດນສະຫຍາມບາງກອກ ເທົ່າທຸກວັນນີ້. ສິ່ງທີ່ຍັງເຫຼືອໄວ້ ກໍ່ຄືນ້ຳໃຈຊາວລາວບັນດາເຜົ່າທົ່ວທັງປະເທດ ສະເພາະຂອບເຂດເມືອງວາປີ ແຂວງສາລະວັນ ຍັງລະນຶກເຖິງສິ່ງສັກສິດຄູ່ບ້ານຄູ່ເມືອງໃນອະດີດ ແຕ່ລະປີຈັດງານສະເຫຼີມສະຫຼອງຢ່າງຍິ່ງໃຫຍ່ ເລີ່ມແຕ່ອອກໃໝ່ 10 ຄ່ຳ ຫາ 15 ຄ່ຳເດືອນ 3 ຂອງທຸກໆປີ.

## 11. ທາດກອງຫີນອົງແກ້ວ.

ອົງແກ້ວ ເກີດທີ່ບ້ານຈະກຳ, ເມືອງທ່າແຕງ, ແຂວງເຊກອງ. ເປັນບຸດຊາຍຂອງ ທ້າວ ມຸ່ຍ (ກຸ່ມຕັງປຣິນຕັງປອນ) ຊົນເຜົ່າກຣຽງ ແລະ ນາງໂຈ້ຍ (ກຸ່ມຕັງໂປງ) ເຜົ່າອາລັກ ບ້ານຣຶງ; ຊື່ເດີມຂອງເພິ່ນ: ທ້າວຫີມ, ອົງແກ້ວ ເຕີບໃຫຍ່ໃນຂະບວນວິວັດ ທີ່ຊາດລາວບັນດາເຜົ່າ ຕົກເປັນຫົວເມືອງຂຶ້ນຂອງສັກດີນາສະຫຍາມ ແລະ ຝຣັ່ງ, ອົງແກ້ວ ໄດ້ສ້າງຄອບຄົວກັບ ນາງ ໂຈດ ບ້ານກຳກອກ, ຊົນເຜົ່າກຣຽງ ມີລູກນຳກັນໜຶ່ງຄົນ ຊື່ວ່າ: ທ້າວມູນ

ໃນປີ ຄສ 1900 ໄດ້ສຳເລັດການຮ່ຳຮຽນວິຊາສູ້ຣົບ ນຳກຸລາ ທີ່ເປັນເຈົ້າເລີ່ມອນຂະແມ ແລ້ວກັບມາເຂດພູພຽງບໍລິເວນ ນຳພາປະຊາຊົນບັນດາເຜົ່າລຸກຂຶ້ນຕໍ່ສູ້ ຕ້ານການຮຸກຮານຂອງສັກດີນາຝຣັ່ງ ຢ່າງຟົດເດືອດໃນວັນທີ 8 ເດືອນ 6 ປີ 1901. ອົງແກ້ວ ໄດ້ບັນຊາທະຫານ ປິດລ້ອມຄ້າຍທະຫານຝຣັ່ງ ຢູ່ບ້ານກະເຊາະ, ບ້ານຕາເຊັ້ຍ ຂອບເຂດບໍລິເວນຂ້ານາຍທະຫານຝຣັ່ງຄື: ຮ້ອຍຕີ ປີແອ ແລະ ຮ້ອຍຕີ ຊຽງໄປຣ ໃນປີ ຄສ 1905 ລະດົມພົນໄດ້ 1000 ຄົນ ພ້ອມດ້ວຍອາວຸດພື້ນເມືອງ ແລະ ສ້າງອາວຸດເສີມທີ່ຢຶດໄດ້ຈາກຝຣັ່ງ ຈຳນວນໜຶ່ງ, ເດືອນ 10 ປີ 1910 ໄດ້ເປີດກອງປະຊຸມປຶກສາຫາລື ກັບກົມມະດຳ ແລະ ຄະນະນຳຊົນເຜົ່າ ທີ່ສຳນັກທົ່ງຫວາຍບ້ານຕອກ ເພື່ອເຈລະຈາສະຫງົບເສິກກັບ ແຟັງດາແລງ ໃນວັນທີ 12 ເດືອນ 11 ປີ 1910. ອົງແກ້ວ ຖືກແຟັງດາແລງ ຄາດຕະກຳຢູ່ກອງປະຊຸມ ທີ່ຄ້າຍທະຫານຢູ່ເມືອງທ່າແຕງ, ໂດຍຕັດຫົວເອົາມາໃຫ້ເຈົ້າແຂວງຢູ່ສາລະວັນ ຊື່ ໂດໄປຣ ໃນວັນທີ 15/11/1910. ສ່ວນຊາກສົບນັ້ນ ແມ່ນໃຫ້ປະຊາຊົນຈູດເຜົາຢູ່ຫ້ວຍນ້ຳໃສ, ທາດກອງຫີນຢູ່ບໍລິເວນໂຮງໝໍແຂວງປະຈຸບັນແມ່ນທາດກອງຫີນກວມເອົາກະໂຫຼກຫົວຂອງອົງແກ້ວ (ທາດຫີນອົງແກ້ວ ຕັ້ງຢູ່ບ້ານໂພນແກ້ວເທດສະບານເມືອງສາລະວັນ)





## 12. ຂົວທ່ານສຸພານຸວົງ (ຂົວບ້ານດ່ານ).



ຂົວທ່ານ ສຸພານຸວົງ ຫຼື ເອີ້ນອີກຊື່ໜຶ່ງວ່າ: ຂົວບ້ານດ່ານສ້າງຂຶ້ນໃນຊຸມປີ 1942 ໂດຍແມ່ນ ສະເດັດເຈົ້າສຸພານຸວົງ ເປັນຜູ້ອອກແບບ ແລະ ນໍາພາໃນການກໍ່ສ້າງໂດຍກົງ ເຊິ່ງເປັນຂົວກ່າຍຂ້າມແມ່ນໍ້າເຊໂດນ ບົນເສັ້ນທາງເລກທີ 23 ເຊື່ອມຕໍ່ລະຫວ່າງ ເມືອງສາລະວັນ ຫາເມືອງຕຸ້ມລານ ໄປຫາເມືອງພີນ, ແຂວງສະຫວັນນະເຂດ, ໂດຍຖືກຍິງເບ 52 ຂອງຈັກກະພັດອາເມລິກາ ທໍາລາຍໃນສະໄໝສົງຄາມອິນດູຈີນ ໃນປີ 1968. ປະຈຸບັນ ຍັງເຫຼືອພຽງຂົວເພ ແລະ ເສດສົງຄາມຈໍານວນໜຶ່ງ ເຊິ່ງທ່ານສາມາດທ່ຽວຊົມ ແລະ ຮຽນຮູ້ປະຫວັດສາດການຕໍ່ສູ້ປົດປ່ອຍຊາດ (ຂົວລຸງສຸພານຸວົງ ຕັ້ງຢູ່ບ້ານດ່ານ, ເມືອງສາລະວັນ, ຫ່າງຈາກເທດສະບານເມືອງ 25 ກິໂລແມັດ).

## 13. ນໍ້າຕົກຕາດລະໄຊຍ.



ຕາດລະໄຊຍ ຕັ້ງຢູ່ບ້ານລະແຊງ, ເມືອງ ຕະໂອ້ຍ, ຫ່າງຈາກເທດສະບານເມືອງ 14 ກິໂລແມັດ. ປະຈຸບັນອໍານາດການປົກຄອງເມືອງ ແລະ ບ້ານເປັນຜູ້ຄຸ້ມຄອງ.

## 14. ຮອຍພະບາດພະພຸດທະເຈົ້າ (ບ້ານນາດູ່).

ຕາມການເລົ່າລືກັນມາແຕ່ອະດີດ ຫາປະຈຸບັນວ່າ: ໃນລະຫວ່າງ ພສ 1927 ກົງກັບ ຄສ 1384 ພຸ້ນ; ມີພວກລ່າເນື້ອຍິງສັດ ນຳໂດຍ ພໍ່ພານເພັງ ທີ່ມີຖິ່ນຖານຢູ່ບ້ານທ່າຄັນຊຸມຊີວ ມາລ່າເນື້ອ ແລະ ໄດ້ພົບເຫັນຮອຍພະບາດ ຢູ່ພະລານຫີນແຫ່ງນີ້. ຈາກນັ້ນ ກໍ່ມີການປົກປັກຮັກສາ, ບູຊານົບໄຫວ້ ຕາມສັດທາຂອງປະຊາຊົນບັນດາເຜົ່າໃນແຖບນີ້ ພວກເພິ່ນຄິດວ່າ ເປັນຮອຍພະບາດ ຫຼື ຮອຍຕີນພະພຸດທະເຈົ້າ ໃນສະໄໝທີ່ພະອົງມີຊີວິດຢູ່. ນັບແຕ່ມື້ນັ້ນເປັນຕົ້ນມາ ພໍ່ພານເພັງ ກໍ່ໄດ້ນຳພາຍາດຕິພີ່ນ້ອງບໍລິວານ ອະນຸລັກປະຕິສັງຂອນສືບຕໍ່ກັນລຸ້ນຕໍ່ລຸ້ນ ມາເທົ່າທຸກວັນນີ້ ບຸນນະມັດສະການຮອຍພະບາດບ້ານນາດູ່, ເມືອງລະຄອນເພັງແຫ່ງນີ້ ໄດ້ຈັດຂຶ້ນໃນມື້ອອກໃໝ່ 10 ຄ່ຳ ຫາ 15 ຄ່ຳ ເດືອນ 3 ລາວຂອງທຸກໆປີ ໂດຍການເປັນປະທານຂອງທ່ານເຈົ້າເມືອງ ໃນງານນີ້ມີການຄົບງານ 5 ມື້ 5 ຄືນ, ກິດຈະກຳພາຍໃນງານ ມີການຕັກບາດຖວາຍສັງຄະທານ 108, ແຫ່ພະສາດເຜິ້ງ, ຊ່ຽງໂຊກຊ່ຽງຊີ ທີ່ພົວພັນເຖິງບຸນມາຄະບູຊາຂອງສາດສະໜາພຸດ, ມີຮ້ານວາງສະແດງສິນຄ້າຂອງມວນຊົນ, ທຸລະກິດ, ສິລະປະວັນນະຄະດີ ແລະ ການແຂ່ງຂັນມວຍລາຍລາວອີກດ້ວຍ. (ຮອຍພະບາດຕັ້ງຢູ່ບ້ານນາດູ່, ເມືອງລະຄອນເພັງ, ຫ່າງຈາກເທດສະບານເມືອງ 6 ກິໂລ ແມັດ).





## 15. ກອງເສົາເສ.

ແຕ່ກ່ອນ ພາຍໃນບ້ານ ມີພໍ່ຮ້າງລູກຕິດຄົນໜຶ່ງ ແລະ ແມ່ຮ້າງລູກຕິດຄົນໜຶ່ງ ໄດ້ຮັກແພງກັນ ແລະ ໄດ້ຕັດສິນໃຈສ້າງຄອບຄົວນຳກັນ ກໍ່ໄດ້ພາກັນເຮັດໄຮ່ຢູ່ແຄມຫ້ວຍເຊເຊັດ. ຢູ່ມາວັນໜຶ່ງ ລູກສາວສອງຄົນ ພາກັນໄປສ້ອນປາຢູ່ນ້ຳເຊເຊັດ, ລູກຜູ້ຕິດມານຳຜົວສ້ອນໄດ້ແຕ່ກ້ອນຫີນ, ສ່ວນລູກຜູ້ຕິດມານຳເມຍສ້ອນໄດ້ແຕ່ປາແຕ່ກຸ້ງ ເມື່ອສ້ອນແລ້ວ ກໍ່ຂຶ້ນຖຽງໄຮ່, ຜູ້ເປັນແມ່ເລີຍເວົ້າວ່າ ຜູ້ໃດສ້ອນໄດ້ກຸ້ງກໍ່ກິນປາກິນກຸ້ງ, ແຕ່ຜູ້ໃດສ້ອນໄດ້ກ້ອນຫີນ ແມ່ນໃຫ້ກິນກ້ອນຫີນ. ເມື່ອເປັນແນວນັ້ນ ລູກສາວຜູ້ຕິດມານຳຜົວ ກໍ່ຄຽດເລີຍລົງມາຫ້ວຍເຊເຊັດ, ມານັ່ງຢູ່ບ່ອນກອງຫີນ ໃນຂະນະນັ້ນ ປະກົດວ່າຫີນ ໄດ້ປົ່ງສູງຂຶ້ນສູງຂຶ້ນ ເມື່ອເປັນແນວນັ້ນ ລາວຄິດວ່າ ເປັນຍ້ອນຫີນຈຳນວນນີ້ລະ ເຮັດໃຫ້ແມ່ລາວຮ້າຍ ກໍ່ເລີຍເອົາຕີນຢັນກອງຫີນຈົນຖະຫຼົ່ມລົງກະຈາຍຢູ່ຕາມລຳນ້ຳ ຄືດັ່ງໃນປະຈຸບັນ. ກອງເສົາເສ ຕັ້ງຢູ່ບ້ານພໍ່ເຂັມ, ເມືອງສາລະວັນ, ຫ່າງຈາກເທດສະບານເມືອງ 25 ກິໂລແມັດ.

## 16. 4000 ຂຸມບ້ານທ່າ.



ແຫຼ່ງທ່ອງທ່ຽວ 4000 ຂຸມຕັ້ງຢູ່ບ້ານທ່າ, ເມືອງລະຄອນເພັງ, ຫ່າງຈາກເທດສະບານເມືອງ 25 ກິໂລແມັດ. ປະຈຸບັນ ອຳນາດການປົກຄອງເມືອງ ແລະ ບ້ານເປັນຜູ້ຄຸ້ມຄອງ.

## 17. ຕາດໄມ້ເຮ້ຍ.

ແຕ່ກ່ອນເອີ້ນວ່າ: "ຕາດລາ" ແຕ່ປະຈຸບັນເອີ້ນ "ຕາດໄມ້ເຮ້ຍ", ແຕ່ກ່ອນ ຢູ່ໃນຕາດມີ "ຄ້ອງລາ" ແຕ່ຕ້ອງເອົາອອກໄປ ຍ້ອນວ່າ: ຍາມວັນສິນໃດ ມີສຽງຄ້ອງລາ ດັງຂຶ້ນກໍ່ຈະມີຄົນຕາຍໂລດ. ເມື່ອເປັນແນວນັ້ນແລ້ວ, ເຖົ້າແກ່ພໍ່ແມ່ໃນບ້ານ ເລີຍນິມົນເອົາຄູບາອາຈານ ມາເອົາຄ້ອງລາໄປຈາກສະຖານທີ່ດັ່ງກ່າວ (ເອົາໄປໃສ ແມ່ນບໍ່ມີໃຜຮູ້) ແຕ່ນັ້ນມາພາຍໃນບ້ານ ຈຶ່ງມີຄວາມສະຫງົບ ແລະ ຊາວບ້ານກໍ່ບໍ່ຕາຍຍ້ອນຄ້ອງລານັ້ນອີກ ຮອດປະຈຸບັນ. ເຫິງຕາດໄມ້ເຮ້ຍ ແຕ່ກ່ອນເອີ້ນວ່າ: ຕາດລານ້ອຍ. ໃນສະໄໝຢຶດອານາດ ປີ 1975 ໄດ້ມີນິຄົມ 23 ມາຕັ້ງຖິ່ນຖານຢູ່ແຖບນີ້ ແລະ ໄດ້ເອີ້ນຊື່ວ່າ: "ຕາດໄມ້ເຮ້ຍ" ເພາະຢູ່ແຄມເຊເຊັດ ມີປ່າໄມ້ເຮ້ຍຫຼາຍ ກອງນິຄົມ ໄດ້ເອີ້ນຕາດໄມ້ເຮ້ຍເທົ່າທຸກວັນນີ້, ຕາດໄມ້ເຮ້ຍ ຕັ້ງຢູ່ບ້ານພໍ່ເຂັມ, ເມືອງສາລະວັນ, ຫ່າງຈາກເທດສະບານເມືອງ 25 ກິໂລແມັດ.



## 18. ນ້ຳຕົກຕາດເສນ.



ຕາມການເລົ່າຂານຂອງເຖົ້າແກ່ພາຍໃນບ້ານ ທີ່ບັນພະບູລຸດເຂົາເຈົ້າ ໄດ້ເລົ່າຕໍ່ກັນມາວ່າ: ໃນໄລຍະທີ່ຝຣັ່ງເຂົ້າມາປົກຄອງລາວໄລຍະທຳອິດນັ້ນ ປະຊາຊົນຍັງຕັ້ງບ້ານເຮືອນກະແຈກກະຈາຍ ແລະ ຍັງບໍ່ທັນຕັ້ງຊື່ບ້ານນາບອນ, ມີຊາຍຄົນໜຶ່ງ ຊື່ວ່າ: ທ້າວ ເສນ (ປະຊາຊົນພາຍໃນບ້ານເອີ້ນວ່າ: “ປະເສນ” ເຊິ່ງຄຳວ່າ “ປະ” ໃນພາສາຊົນເຜົ່າແງະ ແປວ່າ ເຈົ້າກົກເຈົ້າເລົ່າ ຫຼື ພໍ່ແມ່ເຖົ້າແກ່ອາວຸໂສ) ເປັນຜູ້ທີ່ມີວິຊາອາຄົມໃນບ້ານ, ຕໍ່ມາ ມີປີໜຶ່ງ ປະຊາຊົນພາຍໃນບ້ານ ເກີດມີການລົ້ມຕາຍໂດຍບໍ່ຮູ້ສາເຫດ ແລະ ມີລັກສະນະການຕາຍແບບແປກໆ; ດັ່ງນັ້ນ ປະຊາຊົນຈຶ່ງສົງໄສວ່າ ສາເຫດອາດເປັນຍ້ອນທ້າວປະເສນ ເພາະລາວເປັນຄົນມີວິຊາອາຄົມ ແລະ ກ່າວຫາລາວວ່າລາວເປັນປອບ (ຕາມຄວາມເຊື່ອຂອງທ້ອງຖິ່ນ) ຈຶ່ງພາກັນລວມຕົວກັນ ຈັບເອົາທ້າວ ປະເສນ ໄປຂ້າໂດຍການຕັດຄໍ ຢູ່ທີ່ນ້ຳຕົກຕາດແຫ່ງໜຶ່ງ ທີ່ບໍລິເວນສົ້ນບ້ານ ແລະ ປະຊາຊົນຈຶ່ງເອີ້ນວ່າ: ນ້ຳຕົກຕາດເສນ ຈົນຮອດເທົ່າທຸກວັນນີ້. ສຳລັບການບໍລິການ ແມ່ນໄດ້ເລີ່ມໃນປີ 1995, ນ້ຳຕົກຕາດເສນ ເກີດມາຈາກນ້ຳຫ້ວຍຕະປຸງ, ຕັ້ງຢູ່ບ້ານນາບອນ, ເມືອງເລົ່າງາມ, ຫ່າງຈາກເສັ້ນທາງເລກທີ 20 ປະມານ 8 ກິໂລແມັດ ແລະ ຫ່າງຈາກເທດສະບານເມືອງ 12 ກິໂລແມັດ.

## 19. ວັດຖຸບູຮານ (ສະໄໝພະທາດພະນິມ).





ວັດຖຸບູຮານ (ສະໄໝພະທາດພະນິມ) ຕັ້ງຢູ່ບ້ານນາພະບາງ, ເມືອງລະຄອນເພັງ, ຫ່າງຈາກເທດສະບານເມືອງ 20 ກິໂລແມັດ. ປະຈຸບັນ ອຳນາດການປົກຄອງເມືອງ ແລະ ບ້ານເປັນຜູ້ຄຸ້ມຄອງ.

# ແຂວງເຊກອງ

## 1. ນ້ຳຕົກຕາດແຝກ.





ຕັ້ງຢູ່ບໍລິເວນເຂດບ້ານດ່ານ, ເມືອງລະມາມ ແຂວງເຊກອງ ຫ່າງຈາກເທດສະບານແຂວງ ໄປທາງທິດໃຕ້ 18 km ແລະ ຫ່າງຈາກເສັ້ນທາງເລກທີ 16 B ໄປຫາຕາດ 2 km ແຕ່ກ່ອນ ບໍລິເວນເທິງຫົວຕາດ ແລະ ກ້ອງຕາດດັ່ງກ່າວ ມີດອນປົກຄຸມເຕັມໄປດ້ວຍຫຍ້າແຝກ ອັນເປັນທີ່ມາຂອງຊື່ ຕາດແຝກ, ແຕ່ພໍຮອດປີ 1968 ເກີດມີນ້ຳຖ້ວມຄັ້ງໃຫຍ່ຢູ່ເຂດນີ້ ຈຶ່ງເຮັດໃຫ້ຫຍ້າແຝກດັ່ງກ່າວ ດັບສູນຫາຍໄປ. ນ້ຳຕົກຕາດແຝກສູງ 10–15 m ແລະ ກວ້າງ 250 m, ມີຄວາມສ່ວຍສົດງົດງາມ ແລະ ອຸດົມສົມບູນໄປດ້ວຍປ່າໄມ້ສີຂຽວ, ມີອາກາດປອດໂປ່ງແຈ່ມໃສ ແລະ ມີນ້ຳໄຫຼຜ່ານຕະຫຼອດລະດູການ, ເລີ່ມໃຫ້ເຂົ້າທ່ຽວຊົມ ໃນປີ 2008 ເປັນຕົ້ນມາ.

## 2. ຕາດຫືອຄືນ.



ຕັ້ງຢູ່ເຂດ ບ້ານດ່ານ, ເມືອງລະມາມ, ແຂວງເຊກອງ ເປັນແຫຼ່ງທ່ອງທ່ຽວທຳມະຊາດທີ່ສວຍສົດງົດງາມອີກແຫ່ງໜຶ່ງ ມີຄວາມສູງ 10-15 m, ກວ້າງ 200 m ເປັນເຂດແດນ ລະຫວ່າງ ແຂວງເຊກອງ ແລະ ແຂວງອັດຕະປື ດ້ວຍສາຍເຊນ້ຳນອ້ຍຢູ່ຫ່າງຈາກເທດສະບານແຂວງ 19 km ຫ່າງ ຈາກເສັ້ນທາງເລກທີ 16 B ໄປຫາຕາດ 1 km. ຕາດຫືອຄືນ ໄດ້ເປີດບໍລິການນຳໃຊ້ ໃນແຕ່ປີ 1999 ແລະ ໄດ້ພັດທະນາໃຫ້ນັກທຸລະກິດ ສຳປະທານເພື່ອບໍລິການ ໃນປີ 2013 ໂດຍມີການບໍລິການກາເຟ, ລ່ອງແກ້ງດ້ວຍເຮືອກາຍັກ, ສາລາ, ມີອາຫານ, ເຄື່ອງດື່ມ ໄວ້ໃຫ້ບໍລິການຮັບໃຊ້ແຂກທີ່ມາທ່ຽວຊົມ ແລະ ພັກຜ່ອນ. ຕາດຫືອຄືນ ກັບຕາດແຝກ ແມ່ນຢູ່ໄກ້ກັນມີຊາຍແດນຕິດຈອດກັນ ຫ່າງໄກກັນປະມານ 1 km.



## 3. ຕາດປະອໍ.





ຕາດປະອໍ ຕັ້ງຢູ່ບ້ານແສນໃຕ້, ເມືອງທ່າແຕງ, ແຂວງເຊກອງ ຫ່າງຈາກເທດສະບານເມືອງທ່າແຕງ ມາທາງທິດຕາເວັນອອກ 16 ກິໂລແມັດ, ນ້ຳຕົກຕາດແຫ່ງນີ້ ມີຄວາມສູງ 50 ແມັດ, ກ້ວາງ 25 ແມັດ, ມີເສັ້ນທາງສະດວກສະບາຍ ສາມາດໄປໄດ້ທັງລະດູແລ້ງ ແລະ ລະດູຝົນ, ຕາດນີ້ໄດ້ເປີດບໍລິການນຳໃຊ້ແລ້ວແຕ່ປີ 2008, ກ່ອນຈະໃສ່ຊື່ວ່າ: ຕາດປະອໍ ຍ້ອນວ່າ ຢູ່ເທິງຫົວຕາດ ແລະ ກ້ອງຕາດນີ້ ແມ່ນເຕັມໄປດ້ວຍໄມ້ປະອໍ (ໄມ້ປ່ອງທີ່ປະຊາຊົນສານເຄື່ອງຫັດຖະກຳ ໃຊ້ສອຍໃນຊີວິດຄອບຄົວ). ດັ່ງນັ້ນ, ຊາວບ້ານ ຈິ່ງເອີ້ນຕາດນີ້ວ່າ: ຕາດປະອໍ.

## 4. ຕາດໄຟໄໝ້.

ແຫຼ່ງທ່ອງທ່ຽວ ທຳມະຊາດຕາດໄຟໄໝ້ ຕັ້ງຢູ່ບ້ານປະແຫຼງໃຕ້, ເມືອງທ່າແຕ່ງ, ແຂວງເຊກອງ ຫ່າງຈາກເທດສະບານ ເມືອງທ່າແຕງ 7 km,  ຄວາມສູງຂອງຕາດ 100 m, ກວ້າງ 20 m. ຕາມການເລົ່າຂານບອກວ່າ: ໄດ້ມີຄູ່ບ່າວສາວຄູ່ໜຶ່ງ ໄດ້ພາກັນມາຫຼິ້ນນ້ຳຕົກຕາດແຫ່ງນີ້. ເວລານັ້ນ ເຄື່ອງນຸ່ງປຽກໝົດ ເລີຍພາກັນດັງໄຟຝີງ ແລະ ຕາກເຄື່ອງປະໄວ້, ແຕ່ບັງເອີນ ມີລົມພັດເອົາເຄື່ອງນຸ່ງຂອງບ່າວສາວຄູ່ນັ້ນ ເຂົ້າກອງໄຟຈົນໄໝ້ໝົດກ້ຽງ. ດ້ວຍເຫດນັ້ນ ຊາວບ້ານ ຈິ່ງເອີ້ນຕາດນີ້ວ່າ : "ຕາດໄຟໄໝ້ " ຈົນເຖິງທຸກວັນນີ້, ປະຈຸບັນ ຍັງບໍ່ທັນມີຜູ້ສາປະທານເທື່ອ.





## 5. ຕາດນົກເຄົ້າ.





**ຕາດນົກເຄົ້າ** ຕັ້ງຢູ່ບ້ານໜອງບົງ ເມືອງລະມາມ ແຂວງເຊກອງ ຕາມເສັ້ນທາງເລກທີ 16 B ຈະມີປ້າຍຊີ້ບອກຈຸດທີ່ຕັ້ງຂອງຕາດນີ້. ຫ່າງຈາກເທດສະບານແຂວງ 14 km, ຫ່າງຈາກເສັ້ນທາງເລກທີ 16 B ຫາຕາດ 2 km. ຕາດນົກເຄົ້າ ແມ່ນສາຍນ້ຳຕົກຕາດຫ້ວຍອີ ເປັນຕາດທີ່ມີຄວາມສວຍງາມ ມີຄວາມສູງ 10-15m, ກວ້າງ 20 m. ໄດ້ເປີດບໍລິການນາໃຊ້ ໃນປີ 2008. ຕາມຄຳບອກເລົ່າຂອງພໍ່ແມ່ປະຊົນວ່າ: ແຕ່ກ່ອນ ຊາວບ້ານໄດ້ພາກັນໄປຫາກິນໃນເຂດນີ້ ພົບເຫັນໝູ່ນົກເຄົ້າເຮັດຮັງຢູ່ຕົ້ນໄມ້ໃຫຍ່ ເທິງຫົວຕາດຕົ້ນໜຶ່ງ ເປັນຈຳນວນຫຼວງຫຼາຍ. ດັ່ງນັ້ນ, ຈຶ່ງເອີ້ນຕາດນີ້ວ່າ: ຕາດນົກເຄົ້າ.

## 6. ແກ້ງຫຼວງ.



**ແກ້ງຫຼວງ :** ແຫຼ່ງທ່ອງທ່ຽວແກ້ງຫຼວງ ຕັ້ງຢູ່ບ້ານນາວາ ເມືອງລະມາມ ແຂວງເຊກອງ. ແມ່ນແກ້ງ ທີ່ເກີດຕາມສາຍນໍ້າເຊກອງ, ເປັນແກ້ງທີ່ໃຫຍ່ ແລະ ຍາວ 2 km. ຫ່າງຈາກເທດສະບານແຂວງໄປທາງທິດເໜືອ 15m, ມີເສັ້ນທາງພັດທະນາເຂົ້າເຖິງແລ້ວເປີດບໍລິການຮັບໃຊ້ໃນປີ 1999. ແກ້ງຫຼວງ ແມ່ນແກ້ງທີ່ໃຫຍ່ກວ່າໝູ່ໃນສາຍນໍ້າເຊກອງ, ໃນເມື່ອກ່ອນ ເພິ່ນເອີ້ນວ່: ແກ້ງໃຫຍ່ ຕໍ່ມາໃນສະໄໝຝຣັ່ງປົກຄອງ ຈຶ່ງປ່ຽນຊື່ມາເປັນ "ແກ້ງຫຼວງ" ເພາະຫຼວງໄດ້ມາຕັ້ງຈຸດເກັບເກນເອົາຊັບສິນເງິນຄຳ ໃຫ້ຝຣັ່ ງລົງໃສ່ເຮືອກໍາປັ່ນຢູ່ປະເທດຂະແມ ຫຼື ຂະເໝນ ໃນສະໄໝຝັ່ຣງປົກຄອງ ຈຶ່ງໃສ່ຊື່ວ່າ: "ແກ້ງຫຼວງ" ຈົນຮອດປະຈຸບັນນີ້.

## 7. ບ້ານກົກພຸງໃຕ້.



ບ້ານກົກພຸງໃຕ້ ຕັ້ງຢູ່ເມືອງທ່າແຕ່ງ ຫ່າງຈາກເມືອງ 16 km ແລະ ຫ່າງຈາກເທດສະບານແຂວງ 54 km. ເປັນບ້ານທ່ອງທ່ຽວທາງດ້ານວັດທະນະທຳ ທີ່ມີຮີດຄອງປະເພນີອັນດີງາມ, ມີວັດທະນະທຳ ທີ່ເປັນເອກະລັກຂອງເຜົ່າກະຕູ ແລະ ເຜົ່າອາຣັກ. ໃນແຕ່ລະປີ ພໍ່ແມ່ປະຊາຊົນ ຈະຈັດງານບຸນປະເພນີຂອງເຜົ່າຂຶ້ນ ເພື່ອສະເຫຼີມສະຫຼອງຜົນສໍາເລັດຂອງການເກັບກ່ຽວຜົນລະປູກ. ໃນງານບຸນປະເພນີດັ່ງກ່າວນັ້ນ ມີການສະແດງຟ້ອນສີລະປະພື້ນເມືອງຂອງເຜົ່າ, ມີລາຍການທ່ຽວຊົມງານວາງສະແດງ ເຄື່ອງຜະລິດຕະພັນແຜ່ນແພ, ຕຳຫູກກີ່ແອວ ແລະ ເຄື່ອງຫັດທະກຳຈັກສານ, ເບິ່ງໂລງສົບອັນເກົ່າແກ່ຂອງຊາວບ້ານ.

## ຂ. ຖ້ຳຕອກອີງແກ້ວ.





**ຖ້ຳອີງແກ້ວ** ຕັ້ງຢູ່ບ້ານຕອກອີງແກ້ວ, ເມືອງລະມາມ, ແຂວງເຊກອງ ຫ່າງຈາກເທດສະບານເມືອງລະມາມ 32 km. ຖ້ຳດັ່ງກ່າວ ເປັນເຂດທີ່ໝັ້ນຂອງແນວລາວອິດສະຫຼະ ໃນສະໄໝເຮັດການປະຕິວັດຊາດຕໍ່ສູ້ ຕ້ານກັບຈັກກະພັດຜູ້ຮຸກຮານ ແລະ ມາໃນໄລຍະໜຶ່ງ ເຂດດັ່ງກ່າວ ໄດ້ຕັ້ງເປັນແຂວງຕາເວັນອອກ, ອະດີດການນຳຫຼາຍທ່ານ ໄດ້ອາໄສຖ້ຳດັ່ງກ່າວ ໃນສະໄໝເຮັດການປະຕິວັດຊາດ ຈົນຍາດໄດ້ເອກະລາດແຫ່ງຊາດ.

# 9. ບ້ານກັນດອນ.





**ບ້ານກັນດອນໃໝ່** ເປັນບ້ານທ່ອງທ່ຽວທາງດ້ານວັດທະນະທຳ ແລະ ສຶກສາ ວິຖີການດຳລົງຊີວິດຂອງເຜົ່າກະຕູ, ເປັນບ້ານໜຶ່ງ ທີ່ໄດ້ຍ້າຍມາ ແຕ່ເມືອງກະລຶມ ມາຕັ້ງຖິ່ນຖານຢູ່ເມືອງທ່າແຕງ, ຫ່າງຈາກຕົວເມືອງທ່າແຕງໄປທາງຕອນໃຕ້ 17 km ແລະ ຫ່າງຈາກເທດສະບານແຂວງໄປທາງທິດເໜືອ 32 km, ໃນວັນທີ 5 ເດືອນ 3 ຂອງທຸກໆປີ, ຊາວບ້ານກັນດອນ ໄດ້ຈັດງານບຸນປະເພນີຂອງເຜົ່າຂຶ້ນ ເພື່ອສະຫຼອງໝາກຜົນຈາກການເກັບກ່ຽວ ໂດຍໃນງານ ຈະມີການສະແດງສິລະປະພື້ນເມືອງ ແລະ ການວາງສະແດງຜະລິດຕະພັນຫັດຖະກຳຕ່ຳແຜ່ນ, ຈັກສານ ຂອງເຜົ່າ, ນັກທ່ອງທ່ຽວຍັງສາມາດ ເລາະຊົມໂຮງສິບເກົ່າແກ່ - ດັ້ງເດີມ ຂອງເຜົ່າ ແລະ ທ່ຽວຊົມສາລາ (ກວນ) ກາງບ້ານ ໂດຍມີຜູ້ນຳທ່ຽວຂອງບ້ານ ເປັນຄົນອະທິບາຍຕະຫອດງານ ແລະ ຍັງມີພິທີຂ້າຄວາຍແປງຮີດ ເປັນຂະນົບທຳນຽມຮີດຄອງປະເພນີ ອັນດັ້ງເດີມຂອງເຜົ່າກະຕູ.

## 10. ເຮືອນຊິນເຜົ່າອາຣັກ.






**ເຮືອນຊິນເຜົ່າຣາຣັກ (ອາລັກ)** ເຮືອນເອກະລັກເຜົ່າຣາລັກ ບ້ານກະສັງກາງ, ເມືອງລະມາມ, ແຂວງເຊກອງ ຫ່າງຈາກເທສະບານເມືອງລະມາມ ແລະ ແຂວງເຊກອງ 24 km, ເປັນບ້ານຈຸດສຸມພັດທະນາທີສີ່ ຂອງເມືອງລະມາມ, ຕາມເສັ້ນທາງເລກທີ 16 B ອອກສູ່ຊາຍແດນຫວຽດນາມ, ເຮືອນດັ່ງກ່າວ ແມ່ນເຮັດດ້ວຍໄມ້ເນື້ອແຂງ, ມີວິຖີຊີວິດ, ຮີດຄອງປະເພນີ ຄ້າຍຄືກັນກັບເຜົ່າອື່ນໆ ມີວັດທະນາທຳອັນດີງາມເຊັ່ນ: ມີການຈັດງານບຸນປະເພນີປະຈຳປີ, ການສະແດງສີລະປະພື້ນເມືອງ, ການສະແດງຜະລິດຕະພັນຕ່ຳຫູກກີ່ແອວ ແລະ ຫັດຖະກຳຈັກສານ, ໃນນັ້ນ ມີການຂ້າຄວາຍ ເພື່ອໄວ້ຕ້ອນຮັບແຂກທີ່ມາທ່ຽວຊົມງານບຸນປະຈຳປີ.

## 11. ທຳມະຊາດທົ່ງນົມ.




**ທຳມະຊາດທົ່ງນົມ** ຕັ້ງຢູ່ບ້ານດາກຣັນ ເມືອງດາກຈຶງ ແຂວງເຊກອງຫ່າງຈາກເມືອງ 60 km, ຫ່າງຈາກເທສະບານແຂວງ 90 km, ມີເນື້ອທີ່ປ່າສະຫງວນສະເພາະການທ່ອງທ່ຽວທັງໝົດ 400 ເຮັກຕາ, ລະດັບຄວາມສູງຈາກໜ້ານ້ຳທະເລ 1,200–1,400 m, ອາກາດຊຸ່ມເຢັນຕະຫຼອດປີ, ເໝາະແກ່ການພັກຜ່ອນ ແລະ ທ່ອງທ່ຽວ ເຊັ່ນ: ຕັ້ງແຄ້ມ, ປິກນິກ, ຍ່າງປ່າທ່ຽວຊົມທຳມະຊາດ, ລົມພັດເຢັນສະບາຍ, ອາກາດສົດໃສ.

## 12. ທົ່ງເຫຼັກ.




ທົ່ງເຫຼັກ ຕັ້ງຢູ່ບ້ານດຣາກ, ເມືອງດາກຈຶງ, ແຂວງເຊກອງ. ຫ່າງຈາກເທສະບານແຂວງໄປທາງທິດຕາເວັນອອກ 55 km, ຈຸດທີ່ຕັ້ງຢູ່ຕາມເສັ້ນທາງ 16 B ເຊກອງ-ດາກຈຶງ ປີ 1946 ຝຣັ່ງໄດ້ມອບໃຫ້ຈັກກະພັດອາເມລິກາ ມາແທນຢູ່ປະເທດລາວ ໄດ້ຕັ້ງຄ້າຍໃຫຍ່ຂຶ້ນ ຢູ່ທົ່ງເຫຼັກແຫ່ງນີ້ ໂດຍມີທະຫານໄຊ່ງ່ອນ ແລະ ທະຫານຫຸ່ນໄທຈຳນວນໜຶ່ງ, ທົ່ງເຫຼັກໄດ້ຖືກຕີແຕກໃນປີ 1962 ກາຍເປັນສະໜາມລະພູມທີ່ດຸເດືອດ ເຕັມໄປດ້ວຍໝາກແຕກ, ບົມບີ, ປືນໃຫຍ່, ລົດຊາ, ລົດຕັງ...ອາວຸດສົງຄາມທີ່ກ່າວມາຂ້າງເທິງນັ້ນ ຕົກມາໃນປະຈຸບັນນີ້ ແມ່ນໄດ້ເກັບກູ້ ແລະ ສູນຫາຍໄປ ຍ້ອນມີການເກັບຊື້ສິ່ງເສດເຫຼືອຈາກເຫຼັກ. ດັ່ງນັ້ນ ເພິ່ນຈຶ່ງໃສ່ຊື່ວ່າ: ທົ່ງເຫຼັກ, ອາກາດຊຸ່ມເຢັນ ເໝາະແກ່ການຕັ້ງແຄ້ມພັກຜ່ອນ, ຕາກອາກາດ.

## 13. ດິນຍະທົ່ງໂກ.




**ດິນຍະທົ່ງໂກ** ຕັ້ງຢູ່ບ້ານດາກລານ ເມືອງດາກຈຶງ ແຂວງເຊກອງ, ໄປທາງທິດຕາເວັນອອກ ຫ່າງຈາກເທສະບານແຂວງ 50 km, ຄວາມກວ້າງຂອງດິນ 100 m, ຄວາມຍາວ 1.000 m. ຍ້ອນມີການເຄື່ອນເໜັງຂອງພູມສັນຖານ ດິນດັ່ງກ່າວ ຈຶ່ງໄດ້ຍະກວ້າງອອກຕື່ມອີກ 200-300 m, ສ່ວນຄວາມເລິກຂອງໜ້າດິນລົງໄປ ແມ່ນບໍ່ສາມາດແທກໄດ້. ໃນເຂດດັ່ງກ່າວນີ້ ເພິ່ນຈຶ່ງເອີ້ນທີ່ງນີ້ວ່າ: ດິນຍະທົ່ງໂກ.

## 14. ຖ້ຳເດັ້ງພູນາງລາວ.




**ຖ້ຳເດັ້ງພູນາງລາວ** ຕັ້ງຢູ່ບ້ານຖ້ຳເດັ້ງ ເມືອງກະລຶມ ແຂວງເຊກອງ, ຫ່າງຈາກເທສະບານແຂວງເຊກອງ 79 km. ຕາມປະຫວັດເລົ່າຂານວ່າ: ແຕ່ກ່ອນ ມີຊາຍຊົນເຜົ່າ ຫຼົງມັກສາວລາວຄົນໜຶ່ງ ເຊິ່ງເປັນລູກຄົນຮັ່ງມີ, ຢູ່ມາວັນໜຶ່ງ ຊາຍຄົນນັ້ນ ໄດ້ວາງແຜນໄປລັກເອົາສາວຄົນນັ້ນມາເຊື່ອງໄວ້ ຢູ່ພູກະແຕ ແຂວງສາລະວັນ. ໃນເບື້ອງຕົ້ນ ນາງກໍ່ຍັງແນມເຫັນບ້ານຕົນເອງ, ຈາກນັ້ນ ກໍ່ເລີຍຍ້າຍມາຢູ່ ພູລະກຸບ ແຂວງເຊກອງ ແຕ່ນາງກໍ່ຍັງແນມເຫັນບ້ານອີກ ແລະ ຄິດຮອດບ້ານຢູ່ຄືເກົ່າ. ໃນທີ່ສຸດ ຈຶ່ງເອົານາງມາເຊື່ອງໄວ້ຢູ່ ພູລະກາຍ ແຕ່ຍ້ອນຄວາມຄິດຮອດ ແລະ ຄິດເຖິງບ້ານ ນາງຈຶ່ງປີນຂຶ້ນໄປຢູ່ເທິງຈອມພູ ນາງນ້ຳຕາໄຫຼຈົນກາຍເປັນສອງຮ່ອງຫ້ວຍສອງສາຍຄື: ຫ້ວຍຂ້າງຊ້າຍແຕ່ຈອມພູເອີ້ນວ່າ: "ຫ້ວຍຖ້ຳນ້ຳລອດ" ໄດ້ຕົກລົງມາໃສ່ຫ້ວຍໄອ. ສ່ວນນາງລາວ ໄດ້ຢືນໄຫ້ຈົນຕາຍ ແລ້ວກາຍເປັນຫີນທີ່ຄືຮູບຄົນ ຕັ້ງຢູ່ຈອມພູ ດັ່ງນັ້ນ ຈຶ່ງເອີ້ນພູນີ້ວ່າ: "ຖ້ຳເດັ້ງພູນາງລາວ"

# ແຂວງອັດຕະປື

## 1. ລູກສອນໄພ ແລະ ເສັ້ນທາງໂຮ່ຈິມິນ.

ລູກສອນໄຟ ຕັ້ງຢູ່ບ້ານ ສີມບູນ (ປະອຳ) ເມືອງຊານໄຊ ແຂວງ ອັດຕະປື, ຫ່າງຈາກເທດສະບານແຂວງອັດຕະປື ປະມານ 31 km. ເປັນລູກສອນໄຟຂອງອະດີດສະຫະພາບໂຊຫວຽດຜະລິດ ແບບ 11 DMP 912, ກອງກາລັງທະຫານຫວຽດນາມ ໄດ້ແກ່ມາດ້ວຍລົດຫວອດ ເຂົ້າມາປະເທດລາວຕາມເສັ້ນທາງເລກ 09 ຜ່ານເມືອງພີນ, ເມືອງເຊໂປນ, ເມືອງນອງ ແຂວງ ສະຫວັນນະເຂດ ແລ້ວເຂົ້າເມືອງຕະໂອ້ຍ ແຂວງສາລະວັນ, ຂ້າມນ້ຳເຊກອງ ຜ່ານບ້ານບາກ ເມືອງກະລຶມ, ຂຶ້ນເມືອງດາກຈຶງ ລົງຫາທົ່ງເຫຼັກ ແລະ ລົງບ້ານກະຊັງກາງເມືອງລະມາມ ແຂວງເຊກອງ, ເຂົ້າບ້ານນ້ຳຫຽງ ເມືອງໄຊເສດຖາ ລົງຫາບ້ານປາກເປາະ ຫາບ້ານມີໄຊ ແລ້ວມາຈອດພັກນອນຄືນ ຢູ່ດົງປະອໍ ອັນຕືບໜາແຫ່ງນີ້ ໃນວັນທີ 8 ເດືອນມັງກອນ ປີ 1974. ເປັນລູກສອນໄຟທີ 2 ທີ່ສືບຕໍ່ເຄື່ອນເຂົ້າໄປສູ່ພາກໃຕ້ຫວຽດນາມ ເພື່ອປົດປ່ອຍໄຊ່ງ່ອນ. ບັງເອີນໃນຄືນນັ້ນກອງທັບຫວຽດນາມມີປະມານ 1.000 ກວ່າຄົນ ທີ່ນອນພັກຢູ່ນີ້ ໄດ້ຮັບຂ່າວມາວ່າ: ພາກໃຕ້ຫວຽກນາມ (ໄຊ່ງ່ອນ) ໄດ້ຮັບການປົດປ່ອຍແລ້ວ. ດັ່ງນັ້ນ, ລູກສອນໄຟດັ່ງກ່າວນີ້ ຈຶ່ງໄດ້ກາຍເປັນຮ່ອງຮອຍອະນຸສອນສົງຄາມ ໃນສະໜາມການປະຕິວັດປົດປ່ອຍພາກໃຕ້ຫວຽດນາມ ໃນຂອບເຂດສົງຄາມອິນດູຈີນມາໃຫ້ພວກເຮົາໄດ້ຮູ້ໄດ້ເຫັນຈົນຮອດທຸກວັນນີ້.





## 2. ຫັດຖະກຳປັ້ນດິນເຜົາ.

ຫັດຖະກຳປັ້ນດິນເຜົາຕັ້ງຢູ່ບ້ານ ທ່າຫີນ ເມືອງສາມັກຄີໄຊ ແຂວງ ອັດຕະປື ຫ່າງຈາກເທດສະບານແຂວງ ປະມານ 6 km ຕາມເສັ້ນທາງ 1 ໄອ ອັດຕະປື - ເຊກອງ.ຫັດຖະກຳເຄື່ອງປັ້ນດິນເຜົາ ດັ່ງກ່າວເປັນຫັດຖະກຳພື້ນບ້ານທີ່ສືບທອດກັນມາຫຼາຍເຊັ່ນຄົນ ແລະ ນຳໃຊ້ເຄື່ອງມືແບບດັ້ງເດີມເຂົ້າໃນການຜະລິດ.





## 3. ຫັດຖະກຳຕ່ຳແຜ່ນແພເຜົ່າຕະຫຼຽງ.

ສ່ວນຫຼາຍແມ່ນມີຖິ່ນກຳເນີດແບບດັ້ງເດີມ ມາຈາກເມືອງດັກຈຶງ ແລ້ວຍ້າຍມາຢູ່ເມືອງຊານໄຊ ແລະ ອີກສ່ວນໜຶ່ງແມ່ນຢູ່ແຂວງເຊກອງ, ສາລະວັນ, ອີກສ່ວນໜຶ່ງແມ່ນອາໃສຢູ່ບ້ານສີວິໄລໄກ້ຕະຫຼາດໃນເທດສະບານເມືອງສາມັກຄີໄຊ ແລະ ວິຖີຊີວິດຂອງເຂົາເຈົ້າແມ່ນການຜະລິດຫັດຖະກຳຕ່ຳຜ້າກະໂດ ຜ້າຮຽງດ້ວຍກີ່ແອວ ອັນເປັນເອກະລັກຂອງຕົນ.

ເຂົາເຈົ້າມັກຕັ້ງບ້ານເຮືອນເປັນຮູບວົງມົນອ້ອມ (ກ້ວານສາລາບ້ານ) ທີ່ຕັ້ງຢູ່ໃຈກາງມີເດີ່ນເພື່ອໃຊ້ໃນພິທີກຳອັນສັກສິດຂອງບ້ານເຊັ່ນ: ຂ້າຄວາຍຫຼາຍໂຕລ້ຽງຜີໃນພິທີ (ກິນອາດ) ເຊິ່ງຈັດຂຶ້ນໃນຮອບ 3 ຫຼື 5 ປີ ໂດຍອີງຕາມການເກັບກ່ຽວ, ບ່າວ - ສາວ ທີ່ແຕ່ງດອງກັນແລ້ວ ຕ້ອງນອນແຍກກັນ 9 ເດືອນເພື່ອປະຕິບັດຕາມຮີດຄອງຢ່າງເຄັ່ງຄັດ ແລະ ພິສູດຄວາມອົດທົນ ແລະ ຄວາມຮັກອັນບໍລິສຸດໃຈຂອງທັງສອງຝ່າຍ.

## 4. ຊົນເຜົ່າໂອຍ.



ເຜົ່າໂອຍ ຕັ້ງຢູ່ເຂດຈະເລີນສຸກ ແລະ ບ້ານລະຍາວ ເມືອງສາມັກຄີໄຊ ແຂວງອັດຕະປື ຫ່າງຈາກເທດສະບານແຂວງ 12 km. ຊົນເຜົ່າໂອຍ ເປັນຊົນເຜົ່າໜຶ່ງ ທີ່ມີພາສາປາກເວົ້າເປັນຂອງຕົນເອງ ເຊິ່ງນອນໃນກຸ່ມພາສາມອນຂະແມ, ມີຖິ່ນຖານພູມລຳເນົາ ຕັ້ງຢູ່ຕາມເປີ້ນພູຫຼວງ. ພາຍຫຼັງມີການພັດທະນາ ຈິ່ງຍົກຍ້າຍມາອາໄສຢູ່ລຽບຕາມຕີນພູຫຼວງ, ຕີນພູຕະປາກ ບໍລິເວນທົ່ງພຽງ ແຂວງອັດຕະປື ແລະ ສ່ວນໜຶ່ງ ກໍ່ຢູ່ເຂດປາກຊ່ອງ ແຂວງຈຳປາສັກ.

ຊົນເຜົ່າໂອຍ ມີວັດທະນະທຳການນຸ່ງຖື ທີ່ເປັນເອກະລັກສະເພາະ ເຊັ່ນວ່າ: ໃນສະໄໝກ່ອນ ເພດຊາຍ ນຸ່ງຜ້າກະຕ່ຽວໝາກປັດ, ຮົ່ມເສືອແຊະ, ໃສ່ກຸບໄມ້ ທາດ້ວຍຂີ້ສູດ, ແຂວນໝາກກະແລ່ງ 2 ໜ່ວຍໃສ່ແອວ, ຜ້າແພແດງບ່ຽງຊາຍຂວາ. ເພດຍິງ ນຸ່ງສິ້ນຜ້າກະໂດ ເຂັນພຽງຫົວເຂົ່າ ຮັດສາຍແອວຝ້າຍ ທີ່ເຝືອເຂົ້າກັນຫຼາຍສີເປັນຍອຍລົງທາງສອງຂ້າງ, ນຸ່ງເສື້ອກະແຊະ, ຖືໝາກປັດເປັນພົ້ວຫຼາຍໆເສັ້ນ, ໃສ່ກຸບຍອຍ ທີ່ມີຫຼາກຫຼາຍສີສັນ, ແພແດງພາດບ່າເບື້ອງຊ້າຍ. ຊົນເຜົ່ານີ້ ມີສິລະປະ ແລະ ດົນຕີປະຈຳເຜົ່າ ເປັນຕົ້ນແມ່ນ ການຕີດກະຈັບປີເຄືອ, ຕີລະນາດ, ເປົ່າຫອຍເດື່ອ, ເປົ່າສະເນັງ, ທັ່ງບັ້ງ, ລຳເຈືອງໂອຍ, ຕີຄອງລາ, ຄ້ອງຈູມ, ຄ້ອງຕະໂລະຄ້ອງຕະໜຽນ, ເປົ່າຕຣອານ ຫຼື ເຜົ່າລາວເອີ້ນວ່າ: ແຄນທອນ ຫຼື ແຄນນ້ຳເຕົ້ານັ້ນເອງ. ໂດຍສ່ວນໃຫ່ຍແລ້ວ ຊົນເຜົ່າໂອຍ ແມ່ນເຊື່ອຖືເທວະດາຟ້າແຖນ ແລະ ຖິ່ນຖານພູມລຳເນົາຢູ່ ຕົວຢ່າງວ່າ: ກ່ອນຈະທຳການຜະລິດ ຫຼື ເກັບກ່ຽວ ເຂົາເຈົ້າກໍ່ຈະມີການເຮັດຮີດເຮັດຄອງເສຍກ່ອນ ເຊັ່ນ: ເຮັດພະສະແຫວງ ແກງຫຼວງ, ເຮັດພະກະລາ, ພະໂລງ, ເຮັດພະບັ໋ງ ແລະ ພະອື່ນໆອີກຫຼາຍຢ່າງ. ລວມຄວາມແລ້ວ ກ່ຽວກັບວິຖີຊີວິດຂອງຊົນເຜົ່າໂອຍ ກໍ່ຍັງມີອີກຫຼາຍໆດ້ານດີ ທີ່ສ່ອງແສງໃຫ້ເຫັນເຖິງຄວາມເປັນເອກະລັກສະເພາະ ທາງດ້ານວັດທະນະທຳ ແລະ ສະພາບຈຸດພິເສດຕ່າງໆຫຼາຍດ້ານ.

## 5. ເຜົ່າເບຣາ.



ເຜົ່າເບຣາ ຕັ້ງຢູ່ບ້ານ ວຶງວິໄລ ເມືອງພູວົງ ແຂວງ ອັດຕະປື, ຫ່າງຈາກເທດສະບານແຂວງປະມ17 km. ຕາມການເລົ່າຂານຂອງຜູ້ເຖົ້າຜູ້ແກ່ໃຫ້ຮູ້ວ່າ: ເຜົ່ານີ້ ເຄື່ອນຍ້າຍມາຈາກພາກເໜືອຂອງລາວ ມາຕັ້ງຖິ່ນຖານຢູ່ເມືອງໄຊເສດຖາ, ເມືອງສາມັກຄີໄຊ, ເມືອງສະໜາມໄຊ ແລະ ໂດຍສ່ວນໃຫ່ຍ ແມ່ນຢູ່ເມືອງພູວົງ. ເຜົ່າເບຣາ ມັກຕັ້ງບ້ານເຮືອນຢູ່ເຂດພູສູງ ເພື່ອອາໄສລຳນ້ຳ ແລະ ທຳມະຊາດ ເປັນບ່ອນທຳມາຫາກິນ. ເຂົາເຈົ້າມີອາຊີບເຮັດໄຮ່ປູກເຂົ້າເປັນຕົ້ນຕໍ ແລະ ນອນໃນໝວດພາສາມອນ-ຂະແມ. ມີໜັງສືຂຽນ, ພາສາປາກເວົ້າທີ່ເປັນສະເພາະຂອງເຜົ່າຕົນເອງ ແລະ ສາມາດເວົ້າພາເຈັງ, ໂອຍ, ຢຣຸ, ຢະເຫີນ, ສະດາງ ແລະ ພາສາລາວໄດ້ດີ.

ວັດທະນະທຳ ແລະ ວິຖີຊີວິດຂອງເຜົ່າເບຣາ: ແມ່ຍິງ ນຸ່ງສິ້ນກາໂດ, ຫົ່ມເສື້ອດຳ, ເກົ້າຜົມປັກຫວີໄມ້ເຮັ້ຍ ຫຼື ເຂົາຄວາຍດ່ອນແຊມມັດດ້ວຍຝ້າຍສີແດງ ແລະ ສີຂາວ, ໃສ່ຕ້າງ, ຄາບກອກຢາໃຫ່ຍທອງ, ໄມ້ ຫຼື ຫີນອ່ອນ, ປະດັບເອ້ດ້ວຍໝາກປັດ, ໃສ່ປ້ອງແຂນ ແລະ ປ້ອງຂາທອງ. ຜູ້ຊາຍ ນຸ່ງກະຕ່ຽວ, ເກົ້າຜົມ, ຂັບລຳເຈືອງ, ໃຊ້ດົນຕີພື້ນເມືອງປະເພດຄ້ອງລາ, ຄ້ອງຈູມ, ຄ້ອງນ່ອງແນ່ງ, ຄ້ອງວົງ, ຕີບັ້ງເປັນເອກະລັກຂອງຕົນເອງ.

ລະຫວ່າງຍິງ-ຊາຍ ເຂົາເຈົ້າຈະມີປະເພນີຕັດແຂ້ວເບື້ອງເທິງ, ບ່ອງຫູໃຫ່ຍ ໃສ່ຕ້າງງາຊ້າງ, ສັກລາຍໜ້າ ແລະ ຕົນໂຕ. ການປຸກສ້າງເຮືອນຂອງເຜົ່ານີ້ ແມ່ນມັກນຳໃຊ້ໄມ້ປ່ອງ ເຮັດເສົາ, ປູ,ແ ອ້ມ ແລະ ມຸງ. ອີກສ່ວນໜຶ່ງ ມຸງໃບເສີຍ, ນັ້ນກໍ່ຍ້ອນວ່າ ເຂົາເຈົ້າມັກເຄື່ອນຍ້າຍໄປມາ ຢູ່ບໍ່ຖາວອນ, ເພາະເຂົາເຈົ້າມີຄວາມເຊື່ອວ່າ: ດິນໄຮ່, ດິນນາ ແລະ ຕົ້ນໄມ້ໃຫ່ຍ ນັ້ນມີຜີ, ຈະມີໝໍລ່າມ ໝໍເປົ່າ ເປັນຄົນທັກທ້ວງໃຫ້ໃນເວລາເຂົາເຈົ້າເຈັບເປັນ.

ສ່ວນປະເພນີຄອບຄົວ, ຖ້າອ້າຍເສຍຊີວິດ ຜູ້ເປັນນ້ອງຊາຍສາມາດສືບຕໍ່ເອົາເມຍຂອງອ້າຍໄດ້, ແຕ່ຫາກນ້ອງເສຍຊີວິດ ອ້າຍຈະບໍ່ມີສິດເອົາເມຍນ້ອງ. ຕົກມາໃນສະໄໝພັດທະນາ, ໂດຍສ່ວນໃຫ່ຍເຂົາເຈົ້າໄດ້ຫັນປ່ຽນອາຊີບ ຈາກການເຮັດໄຮ່ຢູ່ພູດອຍ ລົງມາເຮັດນາ ເຂດທົ່ງພຽງ ເມືອງພູວົງ.

## 6. ວັດອິງແສນສຸກຂະລາມ.



ວັດອິງແສນສຸກຂະລາມ ຕັ້ງຢູ່ບ້ານສະແຄະ ເມືອງໄຊເສດຖາ ແຂວງອັດຕະປື. ວັດແຫ່ງນີ້ ເປັນທີ່ປະດິດສະຖານພະພຸດທະຮູບປະອິງແສນ ທີ່ສັກສິດຄູ່ບ້ານຄູ່ເມືອງ ຊຶ່ງຄົນທັງຫຼາຍໃຫ້ຄວາມເຄົາລົບນັບຖື ແລະ ເລົ່າລືເຊື່ອຖືກັນມາວ່າ: ສາມາດດົນບັນດານໃຫ້ຜູ້ມາສັກກະລະບູຊາ, ໃຫ້ຄວາມໂຊກລາບສົມຫວັງ ໄດ້ສົມມັກປາດຖະໜາ ຕາມທີ່ຕັ້ງໃຈອະທິຖານ. ສາມາດເດີນທາງໄປຮອດ 2 ເສັ້ນທາງຄື:

- ຕາມເສັ້ນທາງ 1 I ອັດຕະປື–ເຊກອງ ຮອດຈຸດກິໂລແມັດທີ 22 ຈະມີປ້າຍຊີ້ບອກທາງເຂົ້າ, ລ້ຽວຂວາມື ເຂົ້າໄປ 3.5 km ແລ້ວຂ້າມນ້ຳເຊກອງດ້ວຍເຮືອ.
- ຕາມເສັ້ນທາງ 18 B ຈາກຂົວເຊກອງ ຮອດຈຸດກິໂລແມັດທີ 11 ແລ້ວລ້ຽວຊ້າຍມື ເຂົ້າໄປຕາມເສັ້ນທາງດິນແດງ ປະມານອີກ 17 km ກໍ່ເຖິງວັດອິງແສນສຸກຂະລາມ.

ຕາມການເລົ່າຂານຂອງເຖົ້າແກ່ວ່າ: ແຕ່ກ່ອນໆ ປະຊາຊົນຢູ່ທາງເຂດໃຕ້ໄດ້ເອີ້ນຊື່ບ້ານສະແຄະວ່າ: ບ້ານທັກແຄ່ ຫຼື ຊື່ໜຶ່ງ ເອີ້ນວ່າ: ບ້ານຊັກແຄ່ນັ້ນແລ. ເຫດ ແລະ ຜົນທີ່ຕັ້ງຊື່ນັ້ນ ຍ້ອນວ່າມີນາງສາວສອງເອື້ອຍນ້ອງ ຢູ່ບ້ານຫາດສະຫຼີຣິງຄະ (ຫາດສະຕື) ໄປເກັບເຫັດ ໄດ້ພາກັນຫຼົງທາງກັບບ້ານ ຄືຜູ້ເປັນນ້ອງ ໄດ້ເມືອຮອດບ້ານແລ້ວ, ສ່ວນຜູ້ເປັນເອື້ອຍ ບໍ່ຮູ້ທາງກັບບ້ານ ເລີຍໄປທົ່ວທິບ. ພໍໄປຮອດດອນໜາດ ໄດ້ພໍ້ກັບຜີເຊື້ອນ້ຳທັກແຄ່ ຫຼືວ່າ ຜີຊັກແຄ່, ຜີດັ່ງກ່າວ ໄດ້ເອົານາງໄປລ້ຽງ ຫຼາຍປີຕໍ່ມາເຂົາໄດ້ເອົາກັນເປັນຄູ່ຜົວເມຍ ແລະ ໄດ້ພາກັນໄປຕັ້ງເຮືອນ ຢູ່ບ້ານສະແຄະດຽວນີ້ແລ. ສະນັ້ນ ຄົນທັງຫຼາຍໃນປາງນັ້ນ ຈຶ່ງໃສ່ຊື່ວ່າ: ບ້ານທັກແຄ່ ຫຼື ບ້ານຊັກແຄ່ນັ້ນແລ.

ໃນປາງຕໍ່ມາ ປະຊາຊົນກຸ່ມໜຶ່ງ ໄດ້ອົບພະຍົບມາແຕ່ພາກເໜືອເຂດໜອງແສແສນຍ່ານ ມາຕັ້ງຫຼັກຖານ ແລະ ບ້ານເຮືອນ ລຽບຕາມລຳນ້ຳເຊກອງ ຕາມເຂດບ້ານຊະແຄະ ເປັນຈຳນວນຫຼວງຫຼາຍ. ດັ່ງນັ້ນ, ພໍມາຮອດປີ ຄສ 1569 ເມື່ອມີການສ້າງຂຶ້ນແລ້ວ ຈຶ່ງພາກັນປ່ຽນຊື່ ບ້ານທັກແຄ່ ມາເປັນ ບ້ານສະແຄະ ແລະ ວັດກໍ່ໄດ້ຕັ້ງຊື່ວ່າ: ວັດສຸຂະລາມ ບ້ານສະແຄະ ນັ້ນແລ.

ສ່ວນວ່າເລື່ອງພະອິງແສນ ໄດ້ເລົ່າກັນວ່າ: ໃນປາງຕໍ່ມານັ້ນ ທ້າວພະຍານະຄອນ ຢູ່ເມືອງນະຄອນ ໄດ້ມາຕີບ້ານໂຊກ ເມືອງ ຊຸງຄອກຊ້າງ ທີ່ເປັນເມືອງອິງການ.ຊາວເມືອງອິງການໂຊກຊຸງຄອກຊ້າງ ໄດ້ຮ້າງເມືອງໜີ,ພະອິງແສນ ຢູ່ວັດອະໂສກ ຫຼື ວັດທາຍໂສກ ຊາວເມືອງໄດ້ເອົາໄປເຊື່ອງໃນຄູຫາ (ໃນຖ້ຳ), ຈົນຫຼາຍຟ້າຫຼາຍປີຕໍ່ມາ ຊາວເຜົ່າຍະເຫີນໄດ້ພໍ້ ຈຶ່ງໄດ້ເອົາມາໄວ້ວັດສະແຄະດຽວນີ້ ແລະ ໝັ້ນຄົງມາຈົນຮອດປະຈຸບັນ.

## 7. ວັດທາດເຈົ້າໄຊຍະເສດຖາທິລາດ.



ວັດທາດພະເຈົ້າໄຊຍະເສດຖາທິລາດ ຕັ້ງຢູ່ບ້ານວັດທາດ ເມືອງໄຊເສດຖາ ແຂວງອັດຕະປື ຫ່າງຈາກເທດສະບານແຂວງ ປະມານ 15 km. ວັດທາດ ຊື່ເດີມຮຽກວ່າ: ວັດທາດຈຸລະມະນີ ຊຶ່ງເປັນບ່ອນທີ່ຕັ້ງສະຖູດອັດຖິຂອງພະເຈົ້າໄຊຍະເສດຖາທິລາດ (ຊື່ເດີມຮຽກວ່າ: ພະເຈົ້າເສດຖະວັງໂສ) ພະອົງ ແມ່ນໜຶ່ງໃນຈຳນວນບັນພະບຸລຸດເຊື້ອກະສັດຂອງລາວ ທີ່ອົງອາດກ້າແກ່ນ ຕໍ່ສູ້ບໍ່ຍອມຈຳນົນ ແລະ ຍັງເປັນບັນພະບູລຸດຂອງລາວອົງໜຶ່ງທີ່ ມີຄວາມຮູ້ທາງດ້ານສິນລະປະ, ດ້ານວິທະຍາຍຸດ ແລະ ອາຄົມຕາມປະຫວັດສາດຂອງຊາດລາວ, ນອກຈາກນັ້ນ ພະອົງ ຍັງມີບິດບາດຂຶ້ນຄອງລາດ ປົກຄອງນະຄອນຊຽງທອງ, ນະຄອນຊຽງໃໝ່ ແລະ ລົງມາເຄື່ອນໄຫວປັບປຸງກຳລັງ ຢູ່ເມືອງຣາມາລັກອົງການ (ແຂວງອັດຕະປືປະຈຸບັນ) ໃນປີ ຄສ 1572. ມາຮອດປີ 1577 ສະຖູດອັດຖິຂອງພະອົງ ໄດ້ຮັບການສ້າງຂຶ້ນ ຈົນກາຍເປັນຮ່ອງຮອຍປະຫັວດສາດ ໃຫ້ຄົນຮຸ້ນຫຼັງໄດ້ສຶກສາຄົ້ນຄ້ວາຕໍ່ໄປຈົນມາຮອດເທົ່າທຸກວັນນີ້.

## 8. ໜອງຟ້າ.



ໜອງຟ້າ ມີແປວທາງນໍ້າໄຫຼ ຕົກໃສ່ນໍ້າເຊກະໝານ ເຊິ່ງຕັ້ງຢູ່ເຂດວັງຕັດ ບ້ານໜອງຟ້າ ເມືອງຊານໄຊ ທາງທິດຕາເວັນອອກຂອງແຂວງອັດຕະປື, ນອນໃນ ເຂດປ່າສະຫງວນດົງອໍາພາມ ໃນພື້ນທີ່ຫົວພູ ຈຸ້ມເຂົ້າຫາກັນ, ລະດັບສູງ 1.200–1.500 ແມັດ ທຽບໃສ່ໜ້ານໍ້າທະເລ ເຊິ່ງໃກ້ກັບຊາຍແດນ ລາວ-ຫວຽດນາມ.

ໄດ້ຄົ້ນພົບໃນລະຫວ່າງປີ 1930 ເຊິ່ງຄົນຝຣັ່ງເສດ ທີ່ມາເປັນຄອມມີແຊຂອງແຂວງອັດຕະປື ຊື່ວ່າ: Commice. Mr CAME ແລະ Mr DAP LAY ໄດ້ສຶກສາຄົ້ນຄວ້າດ້ານທໍລະນີສາດ ໄດ້ໃຫ້ຂໍ້ມູນສັງເກດ ແລະ ສັນນິຖານໄວ້ວ່າ: ຄືງເປັນໜອງ ທີ່ເກີດຈາກພູໄຟລະເບີດ ເມື່ອຫຼາຍຮ້ອຍປີ ຫຼື ພັນໆປີກ່ອນໜ້າ. ໜອງຟ້າ ມີຄວາມກ້ວາງປະມານ 1 ກມ, ສ່ວນທາງເລິກ ທ່ານ ມີສເຕີ ໄດ້ເອົາກ້ອນຫີນມັດຕິດຝ້າຍກໍ້ດ້າຍ 1 ກໍ້ ແລ້ວຢ່ອນລົງກາງໜອງ ເພື່ອວັດແທກເບິ່ງຄວາມເລິກ ໃນທີ່ສຸດກໍ່ບໍ່ຈຸພື້ນ ເພາະເສັ້ນດ້າຍຝ້າຍສຸດກ່ອນ. ສະນັ້ນ ທ່ານຈຶ່ງບໍ່ສາມາດກຳນົດຄວາມເລິກໄດ້. ຈົນຮອດປະຈຸບັນນີ້ ກໍ່ຍັງບໍ່ທັນມີໃຜກຳນົດໄດ້ວ່າເລິກສໍ່າໃດ ແຕ່ສິ່ງທີ່ປະທັບໃຈໃນໜອງນໍ້າແຫ່ງນີ້ ຄືມັນເປັນໜອງນໍ້າ ທີ່ເປັນສີຂຽວເໝືອນນໍ້າທະເລ ແລະ ໃສສະອາດສາມາດ ດື່ມໄດ້ຄືນໍ້າດື່ມບໍລິສຸດ ຕາມການຢັ້ງຢືນວິເຄາະທາງການແພດ. ປະກົດແຮ່ທາດປະເພດຄໍາ, ແກ້ວຕົກຕະກອນຕາມຕະຄອງນໍ້າລົ້ນໄຫຼ ມີປະຊາຊົນພໍໄດ້ຮ່ອນມາແລກປ່ຽນຊື້-ຂາຍ ໃນແຕ່ລະປີ. ສາມາດເດີນທາງໄປເຖິງຕາມເສັ້ນ ທາງ 18 B (ອັດຕະປື-ດ່ານສາກົນພູເກືອ) ຫ່າງຈາກເທດສະບານແຂວງ ປະມານ 175 ກມ. ເມື່ອເດີນທາງໄປຮອດຈຸດກິໂລແມັດ 100 ຈະເຫັນປ້າຍຊີ້ບອກທາງເຂົ້າ ແລ້ວລ້ຽວຊ້າຍເຂົ້າໄປອີກປະມານ 75 ກມ ຕາມເສັ້ນທາງດິນແດງ, ຜ່ານສໍານັກງານເຂດວັງຕັດ ກໍ່ຈະເຖິງໜອງຟ້າ.

ຕາມການເລົ່າຂານຂອງຜູ້ເຖົ້າຜູ້ແກ່ວ່າ: ໃນທ້າຍສັດຕະວັດທີ V ມີໝູ່ບ້ານແຫ່ງໜຶ່ງ ໄດ້ດໍາລົງຊີວິດໃນດິນແດນແຫ່ງນີ້, ເຊິ່ງໃນສະໄໝນັ້ນ ແມ່ນສະໄໝສະຫະຊີບປະຖົມບູຮານ ຄົນ ແລະ ສັດ ສາມາດເຂົ້າໃຈພາສາກັນໄດ້ເຄິ່ງໜຶ່ງ, ເຊິ່ງເອີ້ນວ່າ: ບ້ານດາກບລໍ່າ (ຕາມພາສາເຜົ່າແຢະ). ຢູ່ນໍາກັນມາຫຼາຍຟ້າຫຼາຍປີ, ມາມື້ໜຶ່ງ ພວກຜູ້ຊາຍ ໄດ້ພາກັນໄປຊື້ຄວາຍນໍາພວກລາວລຸ່ມ ສ່ວນແມ່ຍິງອອກໄປໄຮ່ ມີແຕ່ເດັກນ້ອຍຢູ່ເຮືອນ ເລີຍໄດ້ພາກັນໄປສ້ອນຊິວ, ຫອຍ, ກະປູ ແລ້ວພາກັນເອາະກິນຢູ່ແຄມຫ້ວຍ. ຫຼັງຈາກນັ້ນ, ເດັກນ້ອຍໄດ້ເອົາເປືອກຫອຍເຮັດກ້ອນເສົ້າ, ອອງກະປູເຮັດຕາງຄ້ອງລາ, ເອົາກະດູກກົບເຮັດຕາງແຂນ ແລະ ເອົາຈິ່ນາຍຜູກມັດໄວ້ເຮັດຕາງຄວາຍ ແລ້ວພາກັນເຕັ້ນລໍາອ້ອມຮອບ, ບັງເອີນມີຄົນແປກໜ້າໃສ່ຊຸດສີຂາວ ມາສອງຄົນ ຖາມວ່າ: ອິມເປຫຍາຕາມພາສາເຜົ່າແຢະ (ແປເປັນພາສາລາວວ່າ: ພວກເຈົ້າເຮັດຫຍັງ). ຄາວໜຶ່ງ ພວກສອງຄົນກໍ່ຫາຍຕົວໄປ, ແຕ່ພວກເດັກນ້ອຍກໍ່ຍັງພາກັນມ່ວນຊື່ນບໍ່ເຊົາ, ພວກສອງຄົນມາອີກ ກໍ່ຖາມຄືເກົ່າ, ເດັກນ້ອຍຕອບວ່າ: ພວກຂ້ອຍເຮັດຄືພໍ່ແມ່ເຄີຍຂ້າຄວາຍ ໃນໄລຍະຜ່ານຫັ້ນແລ້ວ, ພວກສອງຄົນ ກໍ່ເລີຍເອົາຫອກສັກລົງດິນ ແລ້ວພົດຂຶ້ນກາຍເປັນນໍ້າໃຫ່ຍຖ້ວມຊາວບ້ານຈົມຕາຍໝົດ. ເຫຼືອແຕ່ພວກໄປຊື້ຄວາຍ ເພິ່ນເລີຍເອີ້ນຊື່ວ່າ: ຕວງກຣຽງ ຕາມພາສາເຜົ່າແຢະ (ຕວງ ແປເປັນພາສາລາວວ່າ: ໜອງ). ຕໍ່ມາບໍ່ດົນຊາວບ້ານໄດ້ພົບເຫັນຄວາຍເທິກດ່ອນຢູ່ກາງໜອງ ຊາວບ້ານຄິດຢາກໄດ້ເລີຍພາກັນເອົາເຊືອກມາຄ້ອງຜູກມັດ ດຶງໄປດຶງມາ, ຄວາຍເທິກດ່ອນພັດບໍ່ຕິງ ເລີຍພາກັນຕີ. ຫຼັງຈາກຕີ ຄວາຍເທິກດ່ອນເລີຍຕິງໄປຕິງມາ ແລ້ວເຮັດໃຫ້ໜອງກ້ວາງອອກກ້ວາງອອກ. ມາຮອດປີ 1990 ມີຊາວຈີນສອງຄົນ ມາຈົກເອົາດິນຢູ່ແຄມໜອງ ປະກົດມີອາການສະແດງອອກມາ ເຮັດໃຫ້ທ້ອງຟ້າມືດກຸ້ມ, ລົມພັດ ມີພະຍຸໃຫ່ຍ, ແຕ່ຝົນບໍ່ຕົກ ເຂົາເຈົ້າຈິ່ງເອີ້ນວ່າ: ໜອງຟ້າຈົນຮອດປະຈຸບັນ (ປະຈຸບັນ ໄດ້ມີຊ່ຽວຊານດໍານໍ້າ ຈາກປະເທດລັດເຊຍ ລົງສໍາຫຼວດເຖິງພື້ນໜອງ ໃນໄລຍະທ້າຍປີ2018).

## 9. ໜອງທົ່ງໄກ່ໂອກ.



ໜອງທົ່ງໄກ່ໂອກ ຕັ້ງຢູ່ບ້ານທົ່ງໄກ່ໂອກ ເຂດວັງຕັດ ເມືອຊານໄຊ ແຂວງອັດຕະປື ເຊື່ອມຕໍ່ຫ່າງຈາກໜອງຟ້າ ໄປຕາມເສັ້ນທາງດິນແດງ ປະມານ 15 km. ບໍລິເວນທົ່ງໄກ່ໂອກ ເປັນທົ່ງຫຍ້າຕໍ່າທີ່ຮາບພຽງກ້ວາງສຸດສາຍຕາ ແລະ ມີຄວາມສວຍງາມເປັນພິເສດ ຄ້າຍກັບການຕົບແຕ່ງໄວ້ໃຫ້ເປັນສະໜາມກ໊ອບ.

ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ວ່າ: ປະມານເຄິ່ງສັດຕະວັດທີ V, ມີຍ່າໂງະ ກັບຫຼານຊາຍຊື່ວ່າ: ທ້າວ ອິງຢັບ ເປັນກໍາພອຍຢູ່ນໍາຍ່າໂງະ ແລະ ມີໝູ່ບ້ານກະໂບຍ ໄດ້ອາໄສຢູ່ນໍາກັນ ໃນທົ່ງແຫ່ງນີ້ ຫຼາຍຟ້າຫຼາຍປີ ຈົນເກີດມີຄວາມຮັກແພງເຊິ່ງກັນ ແລະ ກັນ, ຕໍ່ມາ ຍ່າໂງະ ພ້ອມຫຼານຊາຍ ໄດ້ພາຊາວບ້ານ ໄປສ້ອນຢູ່ແຄມຫ້ວຍນໍ້າໃບ (ໃນປະຈຸບັນ), ຊາວບ້ານ ສ້ອນໄດ້ແຕ່ ປາ, ກະປູ, ກຸ້ງຫອຍ, ສ່ວນຍ່າໂງະ ສ້ອນໄດ້ແຕ່ກ້ອນຫີນ ຍ່າໂງະຄິດຂີ້ຄ້ານ ກໍ່ເລີຍພັກຜ່ອນນອນລັບຢູ່ກ້ອງຮົ່ມໄມ້. ໃນເວລານອນຫຼັບຢູ່ນັ້ນ ຍ່າໂງະ ໄດ້ຝັນເຫັນແຕ່ກ້ອນຫີນຖືກສ້ອນ ແລ່ນມາຫາໂຕເອງແລ້ວເວົ້າວ່າ: ຍ່າໂງະເອີຍ ຂ້ານ້ອຍຢາກເກີດຢາກຢູ່ນໍາເຈົ້າ, ເອົາຂ້ອຍໄປເບາະນໍາໄກ່ໃຫ້ໄດ້ 7 ແມ່. ຕື່ນຂຶ້ນມາ ຍ່າໂງະເອີ້ນຊາວບ້ານ ແລະ ຫຼານຊາຍ ກັບເມືອບ້ານ ແລ້ວບອກຫຼານຊາຍເຮັດຕາມຄວາມຝັນ, ຕໍ່ມາ ກ້ອນຫີນກໍ່ອອກເປັນໂຕໄກ່ຜູ້ໂອກໃຫ່ຍໆ, ຍ່າໂງະ ກັບຫຼານຊາຍ ພາກັນຮັກສາລ້ຽງໄວ້ ຢູ່ແຄມຫ້ວຍນໍ້າໃບ, ແຕ່ລະມື້ແຕ່ລະວັນ ໄກ່ຂີ້ອອກເປັນກ້ອນຄໍາ, ກາຍເປັນສິ່ງແປກປະຫຼາດ ຊາວບ້ານເຫັນເລີຍຄິດຢາກໄດ້, ປຶກສາຫາລືກັນຂ້າຍ່າໂງະ ກັບຫຼານຊາຍຕາຍ ເຫຼືອແຕ່ໄກ່, ໄກ່ຮ້າຍ ກໍ່ເລີຍອາລະວາດ ສັບຕອດຊາວບ້ານຈົນຕາຍໝົດ,ຕັ້ງແຕ່ນັ້ນມາ ປະຊາຊົນເຂດວັງຕັດ ຈິ່ງພາກັນເອີ້ນຊື່ວ່າ: ທົ່ງໜອງໄກ່ໂອກ ຈົນຮອດປະຈຸບັນນີ້.

## 10. ນ້ຳຕົກຕາດຫົວຄົນ.

ຕາດຫົວຄົນ ມີຕົ້ນກຳເນີດມາຈາກສາຍນ້ຳເຊນ້ຳນ້ອຍຕອນເທິງ,ເຊິ່ງຕັ້ງຢູ່ບ້ານໃຫ່ຍໝື່ນຫົວເມືອງ ເມືອງສາມັກຄີໄຊ ແຂວງອັດຕະປື.ຫ່າງຈາກເທດສະບານແຂວງເຊກອງ 18 km ແລະ ຫ່າງຈາກເທດສະບານແຂວງ ອັດຕະປື 60 km, ຕາມເສັ້ນທາງ 1ໄອ ອັດຕະປື - ເຊກອງ.ນ້ຳຕົກຕາດຫົວຄົນ ເປັນແຫຼ່ງທ່ອງທ່ຽວທີ່ອຸດົມສົມບູນໄປດ້ວຍທິວທັດທຳມະຊາດອັນສວຍສົດງົດງາມ ຢູ່ໃນເຂດປ່າຟື້ນຟູແຫ່ງຊາດ, ຕາດແຫ່ງນີ້ ມີຄວາມສູງ ປະມານ 10 –15 m ກ້ວາງປະມານ 200 m.



## 11. ຕາດແຊພະ.



ຕາດແຊພະ ຕັ້ງຢູ່ບ້ານຫີນລາດ ເມືອງສະໜາມໄຊ ແຂວງອັດຕະປື. ຢູ່ຕາມລຳນ້ຳເຊປຽນ, ເປັນນ້ຳຕົກຕາດທີ່ມີຄວາມສວຍສົດງົດງາມ ເຕັມໄປດ້ວຍທິວທັດທຳມະຊາດ ທີ່ໜ້າສົນໃຈ ເຊິ່ງຕາດນີ້ ມີຄວາມສູງປະມານ 23 m, ກ້ວາງ 120 m ແລະ ມີເນື້ອທີ່ປະມານກ່ວາ 100 ເຮັກຕາ ທີ່ໄດ້ອະນຸລັກເປັນແຫຼ່ງທ່ອງທ່ຽວ. ເສັ້ນທາງແຕ່ເທດສະບານເມືອງສະໜາມໄຊ ໄປເຖິງຕາດປະມານ 23 km.

ຕາມການເລົ່າຂານກັນມາຂອງຜູ້ເຖົ້າຜູ້ແກ່ວ່າ: ໃນເມື່ອກ່ອນຢູ່ໃນສະຖານທີ່ແຫ່ງນີ້ ມີຖ້ຳ ແລະ ໃນຖ້ຳແຫ່ງນີ້ ມີພະທີ່ສັກສິດ ສາມາດສະເດັດໄປມາໄດ້ທຸກຫົນທຸກແຫ່ງ. ນອກນັ້ນໃນຖ້ຳນັ້ນ ຍັງມີແກ້ວ, ແຫວນ, ເງິນ, ທອງ ຕື່ມອີກ. ປະຊາຊົນໃນສະໄໝກ່ອນ ຖ້າມີບຸນມີງານ ກໍ່ພາກັນໄປຢືມເຄື່ອງຕ່າງໆມາປະດັບເອ້ ຫຼັງຈາກແລ້ວງານແລ້ວ ກໍ່ນຳເອົາໄປຄືນໄວ້ບ່ອນເກົ່າ. ໃນລະດູແລ້ງ ຍັງມີພະກຳມະຖານ ເດີນທຸດົງໄປຈຳສິນໃນຖ້ຳແຫ່ງນີ້, ຕໍ່ມາອີກໄລຍະໜຶ່ງ ມີຈຳພວກລັກວັດຖຸບູຮານຕ່າງໆ ພະຍາຍາມຈະໄປລັກເອົາພະໃນຖ້ຳແຫ່ງນີ້ ແລະ ພະໃນຖ້ຳແຫ່ງນີ້ ຮູ້ເລື່ອງດັ່ງກ່າວ ຈິ່ງສະເດັດໜີໄປຢູ່ສະຖານທີ່ອື່ນ ແລະ ຜູ້ທີ່ມາຢືມແກ້ວ, ແຫວນ, ເງິນ, ທອງ ມີບາງຈຳພວກຢືມໄປແລ້ວກໍ່ບໍ່ເອົາມາສົ່ງ ຈິ່ງເຮັດໃຫ້ຖ້ຳແຫ່ງນີ້ ຫັກພັງເພລົງ ຈິ່ງບໍ່ມີໃຜສາມາດເຂົ້າໄປໃນຖ້ຳໄດ້ ຈົນເຖິງທຸກມື້ນີ້. ສະນັ້ນ ເພິ່ນຈິ່ງເອີ້ນຕາດແຫ່ງນີ້ວ່າ: ຕາດແຊພະ.

## 12. ຕາດແຊປ້ອງໄລ.



ຕາດແຊປ້ອງໄລ ຕັ້ງຢູ່ບ້ານຫີນລາດ ເມືອງສະໜາມໄຊ ແຂວງອັດຕະປື. ຢູ່ຕາມລຳນ້ຳເຊປຽນ, ເປັນນ້ຳຕົກຕາດທີ່ມີທຳມະຊາດສວຍສົດງົດງາມ ໄລຍະທາງຫ່າງຈາກແຊພະໄປປະມານ 10 km, ຫ່າງຈາກເທດສະບານເມືອງສະໜາມໄຊ ປະມານ 31 km, ຕາດນີ້ ມີຄວາມສູງດ້ານຝັ່ງຊ້າຍປະມານ 20 m, ຝັ່ງຂວາ 35–40 m, ກ້ວາງປະມານ 125-130 m ແລະ ມີເນື້ອທີ່ປະມານ 130 ກ່ວາເຮັກຕາ ທີ່ອະນຸລັກໄວ້ເປັນແຫຼ່ງທ່ອງທ່ຽວ ເຊິ່ງຊື່ເອີ້ນ ຂອງຕາດແຫ່ງນີ້ເປັນ ຊື່ພາສາເຜົ່າໃນປະຫວັດສາດຕັ້ງຂຶ້ນ ແຕ່ຍັງບໍ່ທັນຮູ້ວ່າມີຄວາມໝາຍແນວໃດໃນພາສາລາວ.

ຕາມການເລົ່າຂອງຜູ້ເຖົ້າຜູ້ແກ່ໃນບ້ານວ່າ: ໃນຕາດແຫ່ງນີ້ ມີມ້າມະນີກາບ ທີ່ເຫາະເຫີນເດີນອາກາດໄດ້ ອາໄສຢູ່ຕາດແຫ່ງນີ້. ໃນສະໄໝກ່ອນ ຜູ້ຄົນທີ່ນຳມ້າໄປລ້ຽງຢູ່ທີ່ຕາດແຫ່ງນັ້ນ ບໍ່ສາມາດລ້ຽງໄດ້ ເພາະນຳໄປລ້ຽງແລ້ວບໍ່ເກີນ 2–3 ວັນກໍ່ຕາຍ ເຂົາເຈົ້າເຊື່ອວ່າ ມ້າມະນີກາບອາໄສຢູ່ທີ່ນັ້ນ ມາຕີມາຂ້າມ້າທີ່ເຂົາລ້ຽງນັ້ນ ແລະ ປະຈຸບັນນີ້ ກໍ່ຍັງບໍ່ມີໃຜສາມາດໄປລ້ຽງມ້າຢູ່ສະຖານທີ່ນັ້ນໄດ້.

## 13. ເຂດອະນຸລັກດົງໄມ້ປ່ຽນທາດເປັນຫີນ.

ເຂດອະນຸລັກດົງໄມ້ກາຍເປັນຫີນ ມີເນື້ອທີ່ 36 ເຮັກຕາ, ມີຫີນລັກສະນະຄ້າຍຄືຮູບທ່ອນໄມ້ ຍັງຍາຍຢູ່ເທິງໜ້າດິນ ທີ່ບໍລິເວນກິໂລແມັດທີ 24 ໃນຂອບເຂດບ້ານຫາດຊັນ ເມືອງໄຊເສດຖາ. ສາມາດເຂົ້າໄປເຖິງໄດ້ງ່າຍ ແລະ ເດີນໄປຕາມເສັ້ນທາງ 18 ເບ.



## 14. ໜອງລີມ.

ໜອງລີມ ຕັ້ງຢູ່ບ້ານຣີມ ເມືອງສາມັກຄີໄຊ ແຂວງອັດຕະປື ຫ່າງຈາກເທດສະບານແຂວງ ປະມານ 12 km, ສາມາດໄປເຖິງໄດ້ງ່າຍ ດ້ວຍເສັ້ນທາງ 18A ສາມັກຄີໄຊ- ະໜາມໄຊ, ເປັນໜອງທີ່ມີຄວາມກ້ວາງປະມານ 100 m, ຍາວ 1,500 km, ເລິກ 2 m ແລະ ເປັນໜອງທີ່ໃຫ່ຍ, ຍາວພໍສົມຄວນ ໃນແຂວງອັດຕະປື, ເປັນໜອງນໍ້າທີ່ອຸດົມສົມບູນໄປດ້ວຍສັດນໍ້ານາໆພັນ ມີຄວາມເປັນທໍາມະຊາດເໝາະສໍາລັບການໄປພັກຜ່ອນ ກິນເຂົ້າປ່າ ເພາະບັນຍາກາດຢູ່ສະຖານທີ່ນີ້ມີຄວາມສົດຊື່ນປະທັບໃຈ.



## 15. ນ້ຳຕົກຕາດສະໜອງພາກ.

ຕາດສະໜອງພາກ ຕັ້ງຢູ່ບ້ານຕະມໍຢອດ ເມືອງສະໜາມໄຊ ແຂວງອັດຕະປື ເປັນນ້ຳຕົກຕາດທີ່ມີຄວາມສວຍສົດງົດງາມ ແລະ ໜ້າທ່ຽວຊົມທີ່ສຸດ. ຕາດແຫ່ງນີ້ ມີຄວາມສູງປະມານ 10 m, ກ້ວາງປະມານ 20 m ແລະ ມີເນື້ອທີ່ປະມານ 12 ເຮັກຕາ ທີ່ອະນຸລັກໄວ້ເປັນແຫຼ່ງທ່ອງທ່ຽວ. ໄລຍະຫ່າງແຕ່ເທດສະບານເມືອງສະໜາມໄຊ ໄປເຖິງຕາດປະມານ 22 km. ນ້ຳຕົກຕາດແຫ່ງນີ້ ມີຕົ້ນກຳເນີດມາຈາກປາຍນ້ຳ ໄຫຼແຕ່ລາງແສງຈັນ ແລະ ເຫຼົ່າຫຼວງ ຕົກລົງໃສ່ນ້ຳເຊປຽນ, ແຍກອອກຈາກກັນເປັນ 2 ຫ້ວຍ: ປາກໜຶ່ງ ຕົກລົງໃຕ້ບ້ານຫີນລາດ, ອີກປາກໜຶ່ງ ຕົກລົງເໜືອບ້ານຫີນລາດ. ສະນັ້ນ ເພິ່ນຈຶ່ງເອີ້ນວ່າ: ຕາດສະໜອງພາກ.



# ແຂວງຈຳປາສັກ

# 1. ນ້ຳຕົກຕາດຄອນພະເພັງ.

"ຄອນພະເພັງ" ມີຄົນເຂົ້າໃຈວ່າ ແມ່ນທີ່ດຽວກັນກັບຫຼີ່ຜີ, ແທ້ຈິງແລ້ວ ຄອນພະເພັງ ບໍ່ແມ່ນຫຼີ່ຜີ ເພາະຄອນພະເພັງ ຢູ່ຝັ່ງຕາເວັນອອກ ຕິດກັບຝັ່ງເມືອງເບື້ອງ ດິນລາວ ດ້ານໜຶ່ງຕິດກັບດອນ ຊື່ດຽວກັນ (ດອນພຣະເພັງ) ສ່ວນຫຼີ່ຜີນັ້ນ ຢູ່ຝັ່ງດ້ານ ຕາເວັນຕົກ ຂອງດອນພຣະເພັງນັ້ນ ແຕ່ຢູ່ຕິດຝັ່ງຂະເໝນພຸ້ນ ເຊິ່ງມີດອນຄອນຂັ້ນໄວ້ ຫາກນັກທ່ອງທ່ຽວຢາກໄປທ່ຽວທີ່ນັ້ນ ແມ່ນຕ້ອງໄດ້ຂີ່ລົດໄປລົງເຮືອ ທີ່ບ້ານນາກະສັງ ແລ້ວຂ້າມໃສ່ດອນເດດ ມີລົດໂດຍສານຮັບສົ່ງຂ້າມຂົວບູຮານ ໄປດອນຄອນ ແລະ ມີ ເຮືອນພັກສຳລັບນັກທ່ອງທ່ຽວ.



ກ. ຄອນພະເພັງ ຊາວທ້ອງຖິ່ນຈະຮຽກອອກສຽງວ່າ “ເພງ” ບໍ່ໄດ້ອອກສຽງ “ເພັງ” ເພາະຄວາມໝາຍທີ່ແທ້ຈິງ ມີທີ່ມາຢ່າງນ້ອຍສອງທາງ, ອີງຕາມຄວາມເປັນຈິງຕາມຮູບສັບຣະຫວ່າງ “ເພັງ” ກັບ “ເພງ” ມີທີມາດັ່ງນີ້:

ຄຳວ່າ “ເພັງ” ໝາຍຄວາມວ່າ “ເຕັມ” ຫຼື “ຮຸ່ງ” ຫຼື “ແຈ້ງ” ເຊັ່ນ “ເດືອນເພັງແຈ້ງ ແສງສ່ອງເຮືອງໃສ ຍາມຣາຕຣີສີວິໄລ ຮຸ່ງເຮືອງສະເທືອງຟ້າ” ຫຼື “ເດືອນເພັງແຈ້ງແສງສ່ອງເຮືອງສີ ລັດສະໝີໃສງາມຮຸ່ງກະຈາຍຍາມເຊົ້າ” ສ່ວນຄຳວ່າ “ພະ” ເດີມຂຽນວ່າ “ພຣະ” ມາຈາກພາສາປາລີ ຄື “ວຣ” ແປວ່າ “ປະເສີດ, ດີ” ແລ້ວແປງ “ວ” ໃຫ້ເປັນ 1. “ພ” ຈຶ່ງໄດ້ຄຳວ່າ “ພຣ” ໃນພາສາປາລີສະຫຼະ “xະ” ຈະບໍ່ມີຮູບ ໃນອັກສອນທຸກຕົວຍ່ອມມີສະຫຼະ “xະ” ຕິດພັນຢູ່ນຳສະ ເໝີ ດ້ວຍເຫດນັ້ນເມື່ອມາຂຽນເປັນພາສາລາວແລ້ວ ຈຶ່ງຕ້ອງເອົາສະຫຼະ “x” ມາຂຽນໄວ້ຫຼັງຈຶ່ງອ່ານວ່າ “ພຣ” ແລະແລ້ວຄອນນີ້ຈຶ່ງມີຊື່ວ່າ “ພຣະເພງ” (ຄຳວ່າເພງ ມີຄວາມເປັນມາຂອງຊື່ນີ້ຕໍ່ໄປ” ເມື່ອມີການຕັດໂຕ “ຣ” ອອກຈາກໄວຍາກອນລາວ ຄຳວ່າ “ພຣະ” ກໍເຫຼືອແຕ່ “ພະ” ເມື່ອຄົນທາງເໜືອອອກສຽງກັບກາຍເປັນ “ຄອນພະເພັງ”, ເພາະຄົນທາງເໜືອ ເມື່ອຂຽນ “ເພງ” ຈະຂຽນວ່າ “ເພັງ” ຈຶ່ງຊື່ວ່າ “ເພັງ” ມີຫຼາຍຄຳ ທີ່ຄົນທາງເໜືອອອກສຽງຜິດ ເຊັ່ນ “ສົມບູນ” ມັກເປັນ “ສົມບຸນ” ສະນັ້ນ ຄຳວ່າ ຄອນພຣະເພງ ພ້ຽນໄປເປັນຄອນພຣະເພັງ ນັ້ນເກີດຈາກຄວາມເຂົ້າໃຈຜິດ ຂອງຄົນຕ່າງຖິ່ນ ຈຶ່ງຂຽນບໍ່ຖືກຕາມຄວາມໝາຍເດີມຂອງຊື່ຄອນແຫ່ງນີ້.





ທີ່ມາ ແລະ ຄວາມເປັນມາຂອງຊື່ "ຄອນພະເພັງ" ນັ້ນມີທີ່ມາ 2 ກະແສດັ່ງນີ້ ຄື:

1. ກະແສທີໜຶ່ງ ຄືວ່າ "ຄອນພະເພງ" ທີ່ຊາວໂລກໃຫ້ສັນຍານາມວ່າ "ແອງກລາຕາເວັນອອກ" ນີ້ເມື່ອກ່ອນ ຈະມີສຽງດັງກ້ອງກັງວານໄກ ໄປຮອດຈຳປາສັກ ແລະ ພູພຽງບໍລິເວນ, ທາງຕາເວັນອອກ ຮອດສາຍພູແດນແກວ, ທາງໃຕ້ ຮອດກະແຈະ, ທາງຕາເວັນຕົກ ຮອດເມືອງຕໍ່າ (ສຸຣິນ), ເພາະມີຄຳໜຶ່ງ ທີ່ຄົນທາງໃຕ້ອາຍຸ 40-50 ປີມັກເວົ້າຄຳກ່ອມລູກວ່າ "ຮອດມາຕໍ່າເຮົາໄດ້ກິນປາ ຮອດເມືອງລາເຮົາໄດ້ກິນເຂົ້າ" ມີຄຳກ່າວອີກຄຳໜຶ່ງວ່າ "ເມື່ອຊາວສີພັນດອນ ໄປຫຼົງປ່າຫາກຢາກຮູ້ວ່າ ສີພັນດອນຢູ່ທີ່ໃດ ໃຫ້ຂຶ້ນຕົ້ນໄມ້ ຈະຍິນສຽງຄອນພະເພງດັງ ກໍ່ຈະໄປຫາສີພັນດອນຖືກ" ສຽງນີ້ດັງຕະຫຼອດຍາມແລ້ງ ແລະ ຍາມຝົນ, ຈົນມາຮອດສະໄໝຝຣັ່ງເຂົ້າມາປົກຄອງລາວພວກເຂົາຈະລ່ອງໄມ້ສັກຈາກບໍ່ແກ້ວ, ໄຊຍະບູຣີ ດ້ວຍແພ ຕາມລຳແມ່ນ້ຳຂອງ ລົງໄປຂະເໝນ ອອກສູ່ທະເລຈີນໃຕ້ ເມືອງໄຊ່ງ່ອນ. ເມື່ອແພໄປຮອດທາງດອນຄອນແລ້ວ ເຂົາຈະປ່ອຍແພລົງແກ້ງ ແຕ່ຈະບັງຄັບໃຫ້ແພໄມ້ສັກໄປທາງດອນເດດ ແລະດອນຄອນ ຫຼືທາງລີ່ຜີ ແຕ່ມີແພໄມ້ສັກຂະບວນໜຶ່ງ ໄດ້ໄຫຼໄປທາງຕາເວັນອອກເລີຍໄປຕົກໃສ່ຄອນພະເພງ ແລະແລ້ວ ໄມ້ສັກຈຶ່ງໄປຕົກຖືກລິ້ນຄອນພະເພງນັ້ນຫັກແຕ່ນັ້ນມາສຽງເພງແຫ່ງຄອນພະເພງ ກໍບໍ່ດັງເລີຍແຕ່ບັດນັ້ນ, ໃນປັດຈຸບັນນີ້ ສຽງຄອນພະເພງ ຈະດັງສະເພາະຍາມຝົນ ເວລາ 3-4 ໂມງ ໃກ້ຊິແຈ້ງ ຈະດັງຮອດເມືອງໂຂງ, ເມືອງແສນ, ຂະເໝົາ ຖ້າໃຜໄປທາງສີພັນດອນຍາມພັນສານັ້ນ ກໍ່ໃຫ້ສັງເກດເບິ່ງ ຜູ້ກ່ຽວຢັ້ງຢືນ ເພາະບ້ານເກີດຢູ່ແຖວຂະເໝົາ ເມືອງແສນ, ສະນັ້ນ ຄຳວ່າຄອນພະເພງນັ້ນ ມີທີ່ມາຈາກສຽງຄອນພະເພງ ດັງເໝືອນສຽງເພງຈາກສະຫວັນໝາຍຄວາມວ່າ ສຽງເພງທີ່ປະເສີດນັ້ນເອງ, ສຽງນັ້ນ ຍັງເຕືອນບອກໃຫ້ຊາວດອນຮູ້ອີກວ່າ ຫາກດັງຕອນຫົວຄ່ຳ ນ້ຳຈະມາກ ຫາກດັງຕອນໃກ້ຊິແຈ້ງນ້ຳຈະບົກ.

2. ກະແສທີສອງນີ້ ຄືວ່າ ບໍ່ວ່າຍາມແລ້ງ ແລະ ຍາມຝົນ ສຽງຄອນພະເພງກໍ່ດັງເໝືອນສຽງເພງ ຮອດບັດນີ້ ບໍເຊື່ອລອງໄປເບິ່ງ, ເພາະແຖວນັ້ນ ເມື່ອກ່ອນເປັນປ່າສົມບູນ ມີສັດສາວາສິ່ງຮ້ອງຂັບຂານ ກ່ອມກັບສຽງນ້ຳຕົກຕາດ ເລີຍກາຍ ເປັນສຽງເພັງ ເໝືອນດັ່ງສຽງເພງຈາກສວາງສະຫວັນສຸຄາໄລ.



## 2. ວັດພູຈຳປາສັກ.

ກຸ່ມສະຖານບູຮານວັດພູ ຕັ້ງຢູ່ບົນເປີ້ນພູເຂົາ ປິ່ນໜ້າໃສ່ທົ່ງພຽງຈຳປາສັກ ແລະ ແມ່ນ້ຳຂອງ. ຕົວວິຫານເອງ ແມ່ນປະດິດສະຖານຢູ່ບົນຖ້ານ ເທິງສຸດຂອງເປີ້ນພູ ເຊິ່ງມີຄວາມສູງຈາກລະດັບນ້ຳທະເລປະມານ 200 ແມັດ ແລະ ເປັນບ່ອນທີ່ມີນ້ຳທຳມະຊາດ ໄຫຼລິນອອກມາຈາກເງິບຫີນ. ສ່ວນວ່າໂຄງສ້າງອື່ນໆ ຂອງກຸ່ມສະຖານບູຮານທັງໝົດ ແຜນຜັງແບບຢຶດແນວເສັ້ນແກນຕາເວັນອອກ–ຕາເວັນຕົກເປັນຫຼັກ ແລະ ມີລວງຍາວທັງໝົດປະມານ 1,400 ແມັດ, ຊຶ່ງເຊື່ອມຕໍ່ພື້ນທີ່ຣາບພຽງຈຳປາສັກ ຂຶ້ນຫາເປີ້ນພູ. ການອອກແບບແຜນຜັງລວມ ແມ່ນແນ່ໃສ່ ເປີດທາງເຂົ້າຈາກທິດຕາເວັນອອກ ເພື່ອເຮັດໃຫ້ສາສະນິກກະຊົນທັງຫຼາຍ ມີຄວາມປະທັບໃຈ ໃນຄວາມເປັນສັກສິດຂອງສະຖານທີ່ຕັ້ງແຫຼ່ງນີ້, ທັງສາມາດແນມເຫັນພູສັກສິດ ລິງຄະປະວະຣະວະຕະທີ່ຕັ້ງຢູ່ດ້ານຫຼັງໄດ້ຢ່າງຊັດເຈນ. ການອອກແບບ ແຜນຜັງແບບຍຶດແນວເສັ້ນແກນເປັນຫຼັກນີ້ ຖືວ່າພົບເຫັນໜ້ອຍທີ່ສຸດຢູ່ໃນສາສະນະສະຖານຂອງຂອມ (ໂດຍສ່ວນຫຼາຍແມ່ນນຳໃຊ້ລວມສູນ) ແລະ ສ່ອງແສງໃຫ້ເຫັນການນຳໃຊ້ພື້ນທີ່ທາງທຳມະຊາດ ໃຫ້ເກີດປະໂຫຍດສູງສຸດ ໄດ້ຢ່າງກົມກືນ ໂດຍມີ ລິງຄະປະຣະວະຕະ ເປັນຈຸດສູນກາງ. ຢູ່ຖານລຸ່ມສຸດ ໂດຍເລີ່ມຈາກທິດຕາເວັນອອກມີໜອງສະໃຫຍ່ຂະໜາດ 200 x 600 ແມັດ, ອາດຈະສ້າງຂຶ້ນໃນລະຫວ່າງສະຕະວັດທີ 10 ຫາ 11, ຂອບສະດ້ານຕາເວັນຕົກ ມີການກໍ່ສ້າງເປັນແຖ່ນລະບຽບຫີນ, ມີການຈັດວາງຢ່າງປານີດ, ແຕ່ປັດຈຸບັນ ໄດ້ຖືກເພພັງ ແລະ ເຕັມໄປດ້ວຍສິ່ງປະຫຼັກຫັກພັງ ຢັ່ງຢາຍບໍ່ເປັນລະບຽບຈາກການສ້າງສາລາ ໃນປີ 1958. ຢູ່ດ້ານເໜືອ ຍັງມີໜອງສະໃຫຍ່ ອີກສອງໜອງ ທີ່ສ້າງດ້ວຍວິທີການປ້ານຄັນຄູກັ້ນດິນ ໝາຍຄວາມວ່າບໍ່ໄດ້ຂຸດ, ໜຶ່ງໃນສອງໜອງສະນີ້, ໜ່ວຍທີ່ຕິດກັບໜອງສະໃຫຍ່ ແມ່ນສ້າງຂຶ້ນໃນສະຕະວັດ ທີ 11 ຫາ ຕົ້ນສະຕາວັດ 12. ຈາກແຖ່ນຫີນຂອບໜອງສະ ເປັນຈຸດເລີ່ມຕົ້ນຂອງເສັ້ນທາງເດີນຈົງກົມຊຶ່ງປະດັບ ດ້ວຍເສົາເສ ລຽງລາຍຢູ່ຕາມສອງຂອບຂ້າງຂອງເສັ້ນທາງຫຼັກ.



ກຸ່ມສະຖານທີ່ບູຮານວັດພູ ຖືກສ້າງຂຶ້ນເປັນ 6 ຖ້ານ ທີ່ແຕກຕ່າງກັນ, ຖ້ານທີ່ໜຶ່ງ ມີຄວາມກ້ວາງຈາກທິດຕາເວັນອອກ ຫາທິດຕາເວັນຕົກ ຫຼາຍກວ່າ 130 ແມັດ, ດ້ານໜ້າ ປະກອບດ້ວຍສອງອາຄານໃຫຍ່ ເປັນຮູບສີ່ຫຼ່ຽມທີ່ເຮັດດ້ວຍຫີນກວ້າງ 44 ເມັດ, ແຕ່ລະອາຄານເປັນຮູບ 4 ຫຼ່ຽມ, ມີກຳແພງລ້ອມອ້ອມ

ສະໜາມຫຍ້າ ທີ່ມີຂະໜາດ 62 x 42 ແມັດ, ອາຄານທັ້ງສອງ ຕັ້ງຢູ່ກົງກັນຂ້າມກັນ ແລະ ຂະໜານກັບເສັ້ນສະແກນ, ຫ້ອງໂຖງດ້ານໜ້າ ເປັນ 4 ຫຼ່ຽມ ເປີດໄປສູ່ສະໜາມຫຍ້າ ໂດຍມີທາງເຂົ້າສູ່ອາຄານ ທີ່ແກະສະຫຼັກດ້ວຍລວດລາຍ ແລະ ເປັນປະຕູເຊື່ອມຕໍ່ໄປ ຍັງກຳແພງລ້ຽນອີກ 3 ດ້ານ. ອາຄານເຫຼົ່ານີ້ ໃນເມື່ອກ່ອນເອີ້ນວ່າ: ພະລາດຊະວັງ. ເຖິງຢ່າງໃດກໍ່ດີ ນັກຄົ້ນຄ້ວາ ໄດ້ມີການສັນນິຖານວ່າ ສະຖານທີ່ແຫ່ງນີ້ ອາດຖືກນຳໃຊ້ປະໂຫຍດໃນທາງສາດສະໜາ ໂດຍໃຊ້ເປັນສະຖານທີ່ຮັບຮອງພະສົງ ຫຼື ນັກສະແຫວງບຸນ ໃນໄລຍະດຳເນີນພິທີທາງສາດສະໜາ. ຮູບແບບທາງສະຖາປັດຕະຍາກຳແບບໂກະແກ (koh ker) ຊຶ່ງເລີ່ມຕົ້ນໃນຍຸກສະຕະວັດທີ 11.

ເນື້ອທີ່ທາງທິດຕາເວັນຕົກຂອງຖ້ານທີໜຶ່ງນີ້ ເປັນພື້ນທີ່ຫວ່າງເປົ່າ ແລະຄ່ອຍໆລາດຊັນຂຶ້ນໄປຫາຕີນຂອງຖ້ານທີສອງ. ລຽບຕາມສອງຂ້າງຂອງທາງຍ່າງ ຖືກປະດັບດ້ວຍຫຼັກເສົາເສ ວາງເປັນໄລຍະຫ່າງທີ່ສະໝ່ຳສະເໝີ ແລະ ຍັງມີຮ່ອງຮອຍຂອງໂຄງສ້າງເໜືອນກຳແພງລ້ຽນ ຊຶ່ງຄ້ຳດ້ວຍເສົາຫີນ ໂຄງຫຼັງຄາເຮັດດ້ວຍໄມ້ ແລະ ມຸງດ້ວຍດິນຂໍ. ຢູ່ທາງດ້ານໃຕ້ ມີອາຄານຮູບສີ່ຫຼ່ຽມຂະໜາດນ້ອຍຫຼັງໜຶ່ງ ທີ່ສ້າງດ້ວຍຫີນຊາຍ ເປີດປະຕູສູ່ທິດເໜືອ ແລະ ໃຕ້, ປະຊາຊົນເອີ້ນວ່າ ໂຮງງົວອຸສຸພະລາດ, ຖືກສ້າງຂຶ້ນໃນສະຕະວັດທີ 11. ສ່ວນຈຸດປະສົງອັນແທ້ຈິງໃນການສ້າງຫໍໄຫວ້ ຫຼັງນີ້ນັ້ນ ຍັງບໍ່ທັນເປັນທີ່ຊັດເຈນເທື່ອ, ບາງທີອາດຈະເປັນຈຸດຕົ້ນທາງ ທີ່ເຊື່ອມຕໍ່ໄປສູ່ເສັ້ນທາງບູຮານໃນຍຸກນັ້ນ ເພາະທີ່ຕັ້ງຂອງອາຄານຫຼັງນີ້ ແມ່ນຕົງກັບສົ້ນສຸດຂອງເສັ້ນທາງບູຮານນີ້ເອງ. ອາຄານດ່ຽວປະເພດນີ້ ທີ່ມີໂຄງສ້າງເປັນຮູບສີ່ລ່ຽມຍາວ ເປີດປະຕູໄປສູ່ສອງທິດ ຖືວ່າຫາຍາກທີ່ສຸດ



ໃນສະຖາປັດຕະຍະກຳຂອງຊາວຂະແມ. ຈາກການສຳຫຼວດພາກສະໜາມໃນປີ 1998. ໄດ້ພົບຮ່ອງຮອຍຂອງອາຄານ ທີ່ມີຂະໜາດຄ້າຍຄືກັນນີ້ອີກ ຢູ່ທິດເໜືອຂອງເສັ້ນທາງແກນກາງ ກົງກັນຂ້າມກັບໂຮງງົວນີ້ເອງ ແລະ ຍັງພົບຊາກຂອງສະຖານບູຮານອີກຈຳນວນໜຶ່ງ ຢູ່ທາງທິດຕາເວັນຕົກສ່ຽງເໜືອ.

ລະດັບສູງຈາກຖ້ານທີໜຶ່ງ ຂຶ້ນໄປປະມານ 2 ແມັດ ເປັນກຳແພງກັນເຈື່ອນຂອງຖ້ານທີສອງ. ຖ້ານນີ້ປະກອບ ສ້າງເປັນສະພານ ເຊື່ອມຕໍ່ເສັ້ນທາງຫຼັກລະຫວ່າງສອງຖ້ານເຂົ້າຫາກັນ. ຢູ່ສອງຂ້າງຂອງຈຸດເຊື່ອມຕໍ່ນີ້ ມີໂຄງສ້າງຂະໜາດນ້ອຍອີກສອງແຫ່ງ ຊຶ່ງເປັນບ່ອນປະດິດສະຖານຮູບແກະສະຫຼັກ ຂອງທະວາຣະບານ ຫຼື ຜູ້ຮັກສາປະຕູ, ສ້າງໃນສະຕະວັດທີ 13. ໃນນີ້ ມີຮູບແກະສະຫຼັກຂອງທະວາຣະບານ ທີ່ຍັງສົມບູນຢູ່ອົງໜຶ່ງ ຕັ້ງຢູ່ໃນສະພາບສົມບູນດີ. ຍັງມີຮູບທະວາຣະບານ ບໍ່ມີສຽນອີກສອງອົງ ແລະ ຊິ້ນສ່ວນອີກຈຳນວນໜຶ່ງ ທີ່ຢັ່ງຢາຍຢູ່ບໍລິເວນໃກ້ຄຽງ ແຕ່ບໍ່ແມ່ນຈຸດທີ່ຕັ້ງເດີມ.

ຈາກນັ້ນ ມີຂັ້ນໄດ້ອັນໜຶ່ງ ປະກອບສ້າງເປັນສະພານຍາວ ກໍ່ຍົກລະດັບມີຝາກຳແພງກັນເຈື່ອນທັງສອງຂ້າງ ອັນເປັນເສັ້ນທາງເຊື່ອມຕໍ່ເຂົ້າຫາພື້ນທີ່ຂອງຖ້ານທີສາມ. ເສັ້ນແກນກາງຂອງຂັ້ນໄດນີ້ ມີຄວາມຍາວ 75 ແມັດ ແລະ ຄ່ອຍໆລາດຊັນຂຶ້ນໄປເປັນລຳດັບ ມີຄວາມສູງເຖິງ 15 ແມັດ, ສອງຟາກຂ້າງ ເປັນພື້ນທີ່ຫວ່າງເປົ່າ ແລະ ເປັນເນີນພູທຳມະຊາດ.

ຖ້ານທີສີ່ ເຊິ່ງມີຄວາມກ້ວາງປະມານ 20 ແມັດ, ກັ້ນດ້ວຍກຳແພງກັນເຈື່ອນທີ່ສູງ, ເດີມແທ້ມີຂັ້ນໄດ 3 ອັນ ຂຶ້ນຫາຖ້ານນີ້, ຂັ້ນໄດສ່ວນທາງກາງຖືກດັດແປງ ແລະ ກໍ່ເພີ່ມເຕີມໃນຍຸກຕໍ່ມາ ດ້ວຍປ່ຽນຫີນທີ່ຖືກນຳໃຊ້ແລ້ວ. ຢູ່ຖ້ານີ້ມີຫໍໄຫວ້ ກໍ່ດ້ວຍດິນຈີ່ 6 ໜ່ວຍ, ຊຶ່ງແຕ່ລະຂ້າງຂອງເສັ້ນທາງຫຼັກມີ 3 ໜ່ວຍ. ຫໍໄຫວ້ເຫຼົ່ານີ້ ຕັ້ງຢູ່ໃນແນວເສັ້ນຊື່ດຽວກັນ ຕາມທິດເໜືອ–ໃຕ້. ຢູ່ດ້ານໃນຂອງຫໍໄຫວ້ແຕ່ລະຫຼັງ ມີສິວະລິງຄະ ປະດິດສະຖານຢູ່. ອີງຕາມຮູບ ແບບການກໍ່ສ້າງຂອງຫໍໄຫວ້ ແລະ ຮູບແບບສິລະປະຂອງລິງຄະ ແລ້ວບົ່ງບອກເຖິງຍຸກສະຕະວັດທີ 11.ຖ້ານທີ 5 ມີເນື້ອທີ່ກ້ວາງປະມານ 20 ແມັດ ເຊັ່ນກັນ, ແຕ່ແບ່ງອອກເປັນສອງສ່ວນດ້ວຍຂັ້ນໄດຫີນຕ່ຳໆ ແລະ ຍົກລະດັບສູງຂຶ້ນຈາກຖ້ານທີສີ່ເລັກໜ້ອຍ. ມີລານປູດ້ວຍຫີນ ປະກອບເປັນລະບຽງມາຄະບັນພົດ ຢູ່ຕົງແກນກາງຂອງເສັ້ນທາງຫຼັກ.ເລີ່ມຈາກຖ້ານທີ 5 ນີ້ ເປັນຕົ້ນໄປ ມີກຳແພງກັ້ນດິນທີ່ສູງຊັນ 7 ຊັ້ນ ຢອງກັນເປັນລັ່ນໆ ໂດຍມີຄວາມສູງ ເຖິງ 15 ແມັດ. ຢູ່ແນວແກນກາງ ມີຂັ້ນໄດ 7 ຖ້ານ, ແຕ່ລະຖ້ານມີ 11 ຂັ້ນ. ຂັ້ນໄດນີ້ ໄປບັນຈົບຢູ່ຂັ້ນທີ 6 ຊຶ່ງເປັນຖ້ານສຸດທ້າຍ ມີລະດັບຄວາມສູງເໜືອລະດັບໜອງສະ 75 ແມັດ, ເປັນຈຸດທີ່ສາມາດຊົມທັດສະນີຍະພາບຂອງກຸ່ມເທວະສະຖານທັງໝົດ, ທົ່ງພຽງ ແລະ ສາຍນ້ຳຂອງໄດ້ຢ່າງປະທັບໃຈ. ຖ້ານເທິງສຸດນີ້ ມີພື້ນທີ່ປະມານ 60 x 60 ແມັດ, ເປັນທີ່ຕັ້ງຂອງຜາສາດປະທານ (ວິຫານ) ຫຼື ສິມ ສ້າງເພື່ອອຸທິດແດ່ພະສິວະເທບທີ່ປະດິດສະຖານຢູ່ໃຈກາງຂອງສິມ. ພື້ນທີ່ດ້ານຫຼັງຂອງສິມ ຢູ່ໃຕ້ຕີນຜາຫີນ ມີບໍ່ນ້ຳທຳມະຊາດ ທີ່ຊາວບ້ານເອີ້ນກັນວ່ານ້ຳທ່ຽງ, ບໍລິເວນນີ້ ເປັນພື້ນທີ່ປິດທັງສີ່ທິດ ຊຶ່ງຖືວ່າເປັນພື້ນທີ່ສັກສິດໃນບໍລິເວນນີ້. ນ້ຳທ່ຽງ ຖືກໂຕ່ງສະສົມຢູ່ໃນອ່າງທີ່ກໍ່ດ້ວຍດິນຈີ່ ແລ້ວສົ່ງຜ່ານທາງທໍ່ຮາງລິນຫີນ ໄປຍັງສິມ ເພື່ອຫົດສົງ ພະສິວະລິງຄະ ທີ່ປະດິດສະຖານຢູ່ດ້ານໃນ. ເພາະສະນັ້ນ ຈຶ່ງຖືວ່າ ລິງຄະ ແມ່ນຖືກຫົດສົງຢູ່ຕະຫຼອດເວລາດ້ວຍນ້ຳທີ່ສັກສິດ ທີ່ອອກບໍ່ໄຫຼລິນຢູ່ຢ່າງບໍ່ເຫືອດແຫ້ງ. ຢູ່ດ້ານໃຕ້ຂອງສິມ ມີຊາກໂຄງສ້າງຂະໜາດນ້ອຍຫຼັງໜຶ່ງ ເອີ້ນວ່າ: “ບັນນາໄລ” ຫຼື “ຫໍໄຕ” ຫຼື “ ຫໍສະໝຸດສົງ ” ຈາກການສຶກສາເບິ່ງໂຄງສ້າງຂອງສິມ ສ່ວນສິ່ງທີ່ສ້າງດ້ວຍດິນຈີ່ ອາດຖືກສ້າງຂຶ້ນໃນລະຫວ່າງ ສະຕະວັດ ທີ 10–11 ແລະ ມີນດິບສ່ວນທີ່ສ້າງດ້ວຍຫີນ ອາດຖືກຕໍ່ເຕີມໃນຍຸກຕໍ່ມາ ຄືຢູ່ໃນລະຫວ່າງສະຕະວັດທີ 11, ສິລະປະທາງປະຕິມະກຳ ທີ່ປະດັບຢູ່ມີນດິບ ແມ່ນປານິດສອຍງາມ ເປັນສິລະປະແບບບາພວນ ຂອງຍຸກສະຕະວັດທີ 11.

ກຸ່ມສະຖານບູຮານທັງໝົດ ແມ່ນໄດ້ໄລຍະຜ່ານການຂະຫຍາຍຕົວອັນຍາວນານ ຄືດັ່ງທີ່ໄດ້ກ່າວມາຂ້າງເທິງ ຮ່ອງຮອຍທີ່ເກົ່າແກ່ທີ່ສຸດ ທີ່ຄົ້ນພົບ ແມ່ນຢູ່ຄຣິດສະຕະວັດທີ 7, ແຕ່ວ່າໂຄງສ້າງສ່ວນໃຫຍ່ເທົ່າທີ່ຫຼົງເຫຼືອໄວ້ໃຫ້ເຫັນທຸກວັນນີ້ ແມ່ນຖືກສ້າງຂຶ້ນໃນຍຸກລຸນຫຼັງ. ບັນດາໂຄງສ້າງຫຼັກໆ ແມ່ນຖືກຫັນປ່ຽນ



ຈາກລັດທິຮິນດູມາເປັນພະພຸດທະສາສະນະສະຖານ ໃນສະຕະວັດທີ 13 ແລະ ໄດ້ສືບເນື່ອງເປັນສາດສະໜາທີ່ນັບຖືສັກກາລະບູຊາໂດຍຊາວ ເມືອງໂດຍຕະຫຼອດມາຈົນເຖິງເທົ່າທຸກວັນນີ້

## 3. ນ້ຳຕົກຕາດສົມພະມິດ (ຫຼີຜີ).



ສົມພະມິດ (ຫຼີຜີ) ເປັນຄອນຂະໜາດໃຫຍ່ ແລະ ສວຍງາມ ຕົ້ນແມ່ນ້ຳຂອງຕອນເໜືອໄວ້ ຕັ້ງຢູ່ຝັ່ງຕາເວັນຕົກ ຂອງແມ່ນ້ຳຂອງ, ຝັ່ງໜຶ່ງຕິດກັບດອນຄອນ, ອີກຝັ່ງໜຶ່ງ ຕິດ ກັບຝັ່ງທ່າສິບໝື່ ເມືອງທະລາບໍຣິວັດ ແຂວງຊຽງແຕງ. ທີ່ມາ ແລະ ຄວາມໝາຍຂອງຊື່ນ້ຳຕົກຕາດມີດັ່ງນີ້:

ກະແສທີໜຶ່ງ ມາຈາກໜັງສືພະລັກພະຣາມ ອັນເປັນ ວັນນະກັມເອກຂອງລາວ, ມີເລື່ອງລາວດັ່ງນີ້, “ເມື່ອພຣະ ລັກພຣະຣາມໄດ້: ນາງສີດາ ກັບມາແລ້ວ ກໍເດີນທາງກັບມາຍັງ ເມືອງ ເມື່ອມາຮອດສະຖານທີ່ແຫ່ງໜຶ່ງ ບໍລິເວນມະຫານະທີ ສີທັນດອນ (ສີທັນຕະຣະ) ທີ່ນັ້ນ ບໍ່ມີດອນຈັກດອນເລີຍ ເປັນວັງນ້ຳທີ່ກວ້າງ ຮຽກວ່າ: ສະໝຸດ, ພໍດີເວລາໃກ້ຄ່ຳ ຈຶ່ງ ຈະພັກນອນແຮມຄືນ ພະລັກເຫັນວ່າ ຖ້ານອນທີ່ຝັ່ງ ກໍ່ຢ້ານບໍ່ ມີຄວາມປອດໄພ ພະລັກຈຶ່ງຍິງສອນລົງໄປຍັງມະຫານະທີ ສີທັນດອນ ແລະ ປາດຖະໜາໃຫ້ເປັນດອນ ຈຶ່ງເກີດມີດອນ ໜຶ່ງຂຶ້ນມາ, ພະລັກ ຈຶ່ງເຊີນພະຣາມ ແລະ ນາງສີດາ ໄປນອນ ທີ່ປາສາດນິມິດໃນດອນນັ້ນ, ໃນຂະນະນັ້ນເອງ ລາບພະນາ ສວນ ເມື່ອຮູ້ວ່າພະຣາມມາຕາມເອົານາງສີດາກັບຄືນແລ້ວ ກໍ ຕິດຕາມມາ, ຈຶ່ງມາທັນທີ່ມະຫານະທີສີທັນດອນນັ້ນ ຈຶ່ງເກີດ ສົງຄາມຂຶ້ນທີ່ນັ້ນ, ຝ່າຍພະລັກຢູ່ທາງເໜືອ ສ່ວນລາບພະນາ ສວນຢູ່ທາງໃຕ້ ສົງຄາມຣະຫວ່າງລາບພະນາສວນ ກັບພະລັກ-ພະຣາມ ຈຶ່ງເກີດຂຶ້ນທີ່ນັ້ນ; ທາງຝ່າຍລາບພະນາສວນ ຈຶ່ງ ແຕ່ງໃຫ້ຄຸດ ແລະ ນາກ ກໍ່ກຳແພງຂຶ້ນ ຕັນແມ່ນ້ຳ ເພື່ອຫວັງ ຈະໃຫ້ນ້ຳນັ້ນຖ້ວມດອນ ແຕ່ຍ້ອນອິດທິລິດຂອງສອນ ເຖິງ ວ່ານ້ຳຈະຖ້ວມຫຼາຍພຽງໃດກໍຕາມ ແຕ່ວ່າ ນ້ຳບໍ່ສາມາດຖ້ວມ ດອນນັ້ນໄດ້ ແຕ່ວ່ານ້ຳຈະຖ້ວມບໍລິວານຂອງພະລັກພະຣາມ



ແລະ ປະຊາຊົນ ພະຣາມ ຈຶ່ງສັ່ງໃຫ້ຫະນຸມານ ໄປມ້າງກຳແພງຫີນເປັນຊ່ອງໆ ຄົນທັງຫຼາຍ ຈຶ່ງຮຽກວ່າ “ຫຼີ່” ຫະນຸມານນັ້ນ ໄປເຫັນນາງມັດສາ ງາມຫຼາຍ ຈຶ່ງໄປກ້ຽວພາລາສີ ຈຶ່ງເຮັດໃຫ້ຫະນຸມານ ບໍ່ສາມາດມ້າງກຳແພງຫີນຕັນນ້ຳນະທີໄດ້ ຈຶ່ງເຮັດໃຫ້ສະຖານທີ່ນັ້ນເປັນຄອນ, ທ້າງຕັນນ້ຳຂອງເປັນໄລຍະໆຮອດບັດນີ້.

ໃນຂະນະນັ້ນເອງ ການສົງຄາມຍັງດຳເນີນໄປຢ່າງຮຸນແຮງເຮັດໃຫ້ບໍລິວານຂອງທັງສອງ ຕາຍຕົກລົງນ້ຳ ໄຫຼໄປເປີະຫຼີ່ຫີນນັ້ນເໝັ້ນສະເອືອນ ຄົນທັງຫຼາຍຈຶ່ງຮຽກວ່າ “ຜີ” ແຕ່ບັດນັ້ນມາ, ສ່ວນດອນຕ່າງໆ ທີ່ມີຫຼາຍກວ່າພັນດອນໃນເຂດນັ້ນ ກໍ່ເກີດຈາກອຳນາດອິດທິລິດ ຂອງລາບພຣະນາສວນ ໄດ້ໄປຂົນເອົາພູ ແລະ ຫີນມາໂຍນໃສ່ພະລັກພະຣາມ ກໍປ້ອງກັນດ້ວຍອິດທິລິດ ໄປຕົກລົງນ້ຳ ກໍກັບກາຍເປັນດອນ ຕົກລົງດິນກັບກາຍເປັນພູ ສະນັ້ນ ທີ່ດອນໂຂງຈຶ່ງມີພູຫຼາຍເຖິງ 99 ໜ່ວຍພູ (ຕາມການເລົ່າຂານກັນ).

ກະແສທີສອງ ແມ່ນມີເນື້ອຄວາມຕາມເລົ່າຂານສືບຕໍ່ກັນມາຂອງທ້ອງຖິ່ນ ແລະ ອີງຕາມຄວາມເປັນຈິງທາງພູມສາດ, ທີ່ບໍລິເວນທີເປັນຫຼີ່ຜີນັ້ນ ເປັນຕາດເປັນຄອນຫຼາຍຄ້າຍຄື ຫຼີ່  ເມື່ອຄົນຕາຍຕົກນ້ຳ ຫຼື ສັດຕາຍຕົກນ້ຳ ໄດ້ໄຫຼໄປເປີະຫຼີ່ຕາດຄອນທີ່ນັ້ນຊາວພື້ນເມືອງຈຶ່ງຮຽກທີ່ນັ້ນວ່າ: ຫຼີ່ຜີ, ອັນນີ້ ຢືນຢັນໄດ້ສະໄໝກ່ອນ ຍັງມີຄົນຕາຍຕົກນ້ຳຢູ່ທາງດອນເໜືອ ຫາຄາບບໍ່ໄດ້ ຊາວບ້ານຈຶ່ງພາກັນໄປຫາທີ່ແຖວຫຼີ່ຜີ ກໍເຫັນສົບເຫັນຄາບສົມປະສົງ.

## 4. ນ້ຳຕົກຕາດຜາສ້ວມ ເມືອງບາຈຽງ.



ນ້ຳຕົກຕາດຜາສ້ວມ ແລະ ຄວາມເປັນມາເປັນນ້ຳທີ່ຕົກຕາດທີ່ສ່ວຍງາມ, ລັກສະນະຂອງນ້ຳທີ່ໄຫຼຕາມຜາຫີນ ຈຸດພິເສດນ້ຳຕົກຕາດແຫ່ງນີ້ ເປັນຜາຫີນ ທີ່ຕັ້ງລຽນກັນເປັນລະບຽບ, ຄວາມສູງປະມານ 5 –7 ແມັດ ເປັນນ້ຳຕົກທີ່ໄຫຼມາຈາກຫ້ວຍຈຳປີ ເຊິ່ງມີຈຸດກຳເນີດຈາກ ພູເທວະດາ ເມືອງປາກຊ່ອງ ໄດ້ໄຫຼຜ່ານຫຼາຍໝູ່ບ້ານ, ເປັນລັກສະນະກະແສນ້ຳໄຫຼລົງສູ່ແທ່ນຫີນສີດຳ ທີ່ເກີດຈາກລາວາພູເຂົາໄຟທີ່ເຢັນຕົວ ເຊິ່ງທຳມະຊາດໄດ້ປັ້ນແຕ່ງຢ່າງສວຍງາມແລ້ວ, ໃນບໍລິເວນເຂດນ້ຳຕົກ ເພິ່ນເອີ້ນວ່າ: ປະຕູສ້ວມ ໃນພາສາຊົນເຜົ່າ ຄຳວ່າ “ສ້ວມ” ໝາຍເຖິງຫ້ອງນອນທີ່ ກັ້ນໄວ້ສຳລັບລູກສາວ, ລູກຊາຍ. ສ່ວນຄາວ່າ “ຕາດ” ໝາຍເຖິງ ລານຫີນເປັນຂັ້ນ. ດັ່ງນັ້ນ ຄຳວ່າ “ຕາດຜາສ້ວມ” ມີຄວາມໝາຍວ່ານ້ຳຕົກຕາດຫີນຕັ້ງ ທີ່ມີລັກສະນະສູງຊັນ ຄ້າຍຄືຫ້ອງຫໍ ທີ່ຂັ້ນເອົາໄວ້ສຳລັບລູກສາວ-ລູກຊາຍສະເພາະ. ສຳລັບຄວາມໝາຍນີ້ ຈະມີນິທານປະຣຳປະລາ ເລົ່າຂານກັນມາແຕ່ດົນນານເລື່ອງນີ້ມີຊື່ວ່າ: ສາວລາວລຸ່ມ ແລະ ໜຸ່ມລາວເທິງ (ເຊິ່ງມີລາຍລະອຽດດັ່ງລຸ່ມນີ້).




ອະດີດຕະການດົນນານມາແລ້ວ ມີໝຸ່ມລາວລຸ່ມ ເຊິ່ງເປັນປະຊາຊົນຄົນລາວ ທີ່ດຳລົງຊີວິດ ແລະ ຕັ້ງຖິ່ນຖານບ້ານເຮືອນ ຕາມແຄມແມ່ນ້ຳຂອງ ໄດ້ມີສຽວ ເປັນຄົນຊົນເຜົ່າລາວເທີງ ເຊິ່ງທັງສອງຄົນ ໄດ້ເປັນສ່ຽວຮັກສ່ຽວແພງກັນມາດົນນານ ແລະ ທັງສອງ ໄດ້ໃຫ້ຄຳໝັ້ນສັນຍາກັນວ່າ: ຖ້າຫາກໃນອະນາຄົດ ທັງສອງມີລູກເປັນຊາຍທັງສອງ ຫຼື ຍິງທັງສອງ ກໍ່ຈະຜູກໃຫ້ພວກເຂົາເປັນສ່ຽວຮັກແພງກັນຄືດັ່ງພໍ່, ແຕ່ຖ້າຫາກຝ່າຍໜຶ່ງໄດ້ລູກສາວ ແລະ ອີກຝ່າຍເປັນລູກຊາຍ ກໍ່ຈະໃຫ້ທັງສອງແຕ່ງງານກັນ ເຊິ່ງເປັນຄວາມຄິດ-ຄວາມຕັ້ງໃຈ ຂອງສອງສ່ຽວທີ່ຫັວງ ຢາກສ້າງສຳພັນທະໄມຕີກັນ ລະຫ່ວາງສອງເຜົ່າລາວລຸ່ມ-ລາວເທີງ ຕໍ່ມາວັນເວລາຜ່ານເລີຍໄປ ທັງສອງຝ່າຍກໍ່ມີລູກພ້ອມກັນ. ບັ້ງເອີ້ນວ່າ ເມຍຂອງຝ່າຍລາວລຸ່ມ ກໍ່ເກີດລູກເປັນແມ່ຍິງ ແລະ ໄດ້ຕັ້ງຊື່ວ່າ: ນາງມະໂລງ ນາງເປັນສາວທີ່ງາມ, ມີຜິວຂາວ, ຜົມຍາວດາງາມ ເມື່ອຊາຍໃດພົບເຫັນ ກໍ່ຈະເປັນທີ່ຮັກ ແລະ ຫຼົງໄຫຼໃນຄວາມງາມ. ສ່ວນສ່ຽວລາວເທີງ ກໍ່ໄດ້ລູກຊາຍ ຊື່ວ່າ: ທ້າວບາຈຽງ ເຊິ່ງມີຮູບຮ່າງຕ່ຳຄ້ອຍ, ຜົມກູດ, ສີຜິດດາຄ້ຳ, ມີແຂ້ວຕັດ ແລະ ສູບກອກຢາໃຫ່ຍ (ກອກເດີະ) ວັນເວລາຜ່ານໄປ ປຽບເໝືອນນ້ຳ ທີ່ບໍ່ມີວັນໄຫຼຍ້ອນກັບ; ຍິງຊາຍທັງສອງໄດ້ເຕີບໃຫ່ຍເປັນບ່າວສາວ, ທ້າວບາຈຽງ ເມື່ອເຫັນ ນາງມະໂລງ ກໍ່ເກີດມັກຮັກນາງ ຈົນຫັວງຈະແຕ່ງງານ ກໍ່ໄດ້ເລົ່າຄວາມຕ້ອງການຂອງຕົນສູ່ພໍ່ຟັງ, ສ່ວນພໍ່ ຄິດເຫັນຄຳສັນຍາກັນໄວ້ໃນເມື່ອກ່ອນ ຈຶ່ງຕົກລົງຕາມຈຸດປະສົງຂອງລູກຊາຍທີ່ຄາດຫັວງໄວ້.

ເມື່ອເຖິງວັນເວລາໝັ້ນໝາຍການແຕ່ງງານຂອງສາວລາວລຸ່ມ ກັບໜຸ່ມລາວເທີງຕາມສັນຍາຂອງພໍ່ ທັງສອງຝ່າຍຕົກລົງກັນໄວ້ໃນເມື່ອກ່ອນ (ກ່ອນໜ້ານີ້ ທ້າວບາຈຽງຫຼົງຮັກໃນຄວາມງາມຂອງ ນາງມະໂລງ ເປັນເວລາດົນນານສົມຄວນ ແຕ່ວ່າ ນາງມະໂລງ ບໍ່ເຄີຍຮູ້ຈັກກັບທ້າວບຽງ ເລີຍພຽງແຕ່ໄດ້ຮັບພັງເທົ່ານັ້ນ ສ່ວນນາງມະໂລງ ກ່ອນໜ້ານີ້ ໄດ້ໄປມາຫາສູ່ກັບທ້າວຈຳປາສັກ) ເມື່ອເຖິງເວລາເລີກງາມຍາມດີ ຂະບວນແຫ່ງຂັນໝາກຂອງທ້າວບາຈຽງ ກໍ່ອອກເດີນ ທາງມາສູ່ຂໍນາງມະໂລງແຕ່ງງານ ເມື່ອຂັນໝາກໄດ້ມາເຖິງ ມະໂລງກໍ່ຕັດສິນໃຈ ໂຕນໜີຕາມທ້າວຈຳປາສັກ ເຫຼືອໄວ້ພຽງຄວາມຊົງຈຳອັນເຈັບຊ້ຳ ໃຫ້ແກ່ບາຈຽງ, ສ່ວນຂະບວນແຫ່ຂັນໝາກມາສູ່ຂໍນາງມະໂລງ ເມື່ອຮູ້ຂ່າວມະໂລງໂຕນໜີ ດ້ວຍຄວາມເສຍໃຈໜັກ ທ້າວບາຈຽງ ບໍ່ເຄີຍຮັກຍິງຄົນໃດມາກ່ອນ ເຊິ່ງເປັນຄວາມຮັກຄັ້ງທຳອິດ ແລະ ຄັ້ງສຸດທ້າຍ ແຕ່ບໍ່ເປັນຮັກທີ່ສົມຫັວງ ຈຶ່ງເທເຄື່ອງຂອງທີ່ຈັດສັນມາເປັນຂັນໝາກ ຖິ້ມພ້ອມດ້ວຍເຫຼົ້າໄຫໄກ່ໂຕ. ສຸດທ້າຍ ແມ່ນຂ້າຕົນເອງ ເພື່ອສະແດງຄວາມຮັກ ທີ່ມີຕໍ່ນາງມະໂລງ.



ເລື່ອງນີ້ ເປັນຄວາມຮັກສາມເສົ້າຂອງສອງຊາຍໜຶ່ງຍິງທີ່ຍາດຊີງຄວາມຮັກຕຳນານຄວາມຮັກຂອງໜຸ່ມລາວເທິງ ແລະ ສາວລາວລຸ່ມໄດ້ກາຍເປັນຮ່ອງຮອຍໄວ້ຢູ່ຕາມຕົວເມືອງປາກເຊ,ເມື່ອບາຈຽງ ແລະ ເມືອງຈຳປາສັກ.ເຊັ່ນວ່າ:ພູມະໂລງ,ພູບາຈຽງ,ພູຈຳປາສັກ.ກັບອີກສະຖານທີ່ໜຶ່ງກໍ່ຄື:ນ້ຳຕົກຕາດຜາສ້ວມ ເພາະເຊື່ອວ່າສະຖານທີ່ແຫ້ງນີ້ເປັນສະຖານທີ່ ຈະສ້າງຫ້ອງຫໍຂອງ ທ້າວບາຈຽງ ສ້າງໄວ້ເພື່ອລໍຄອຍຄວາມຮັກຈາກນາງມະໂລງ ເມື່ອແຕ່ງງານແລ້ວກໍ່ຈະມາຢູ່ດ້ວຍກັນເຊິ່ງສະຖານທີ່ດັ່ງກ່າວຕັ້ງຢູ່ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ ເປັນສະຖານທີ່ບ້ານເກີດຂອງທ້າວບາຈຽງ.



## 5. ນ້ຳຕົກຕາດຟານ.



ອີງຕາມການບັກທຶກຂອງຫ້ອງການ ຖວທ ແລະ ການບອກເລົ່າຂອງອຳນາດການປົກຄອງບ້ານ ຄື: ນ້າຕົກຕາດຟານ ກຳເນີດມາຈາກສາຍຫ້ວຍບັງລຽງ ແລະ ຫ້ວຍຈີບ, ຕັ້ງຢູ່ເຂດບ້ານຫຼັກ 38 ກຸ່ມ 3 ເມືອງປາກຊ່ອງ ແຂວງຈຳປາສັກ, ຫ່າງຈາກຕົວເມືອງປາກຊ່ອງ ໄປທາງທິດຕາເວັນອອກປະມານ 12 ກິໂລແມັດ, ມີເດີ່ນຮາບພຽງ ເນື້ອທີ່ 3.250ຕາແມັດ ແລະ ມີສາລາຮ້າງ 1 ຫຼັງ( ເຮັດດ້ວຍໄມ້) ແລະ ມີເນື້ອທີ່ສະຫງວນທັງໝົດ 16 ເຮັກຕາ, ຕາດຟານໄດ້ໃຊ້ເປັນແຫຼ່ງທ່ອງທ່ຽວມາແຕ່ກ່ອນການປົດປ່ອຍ ເຊິ່ງຢູ່ພາຍໃຕ້ການຄຸ້ມຄອງຂອງບ້ານດັ່ງກ່າວ.

ໃນແຕ່ລະປີ ເມື່ອຮອດເດືອນ 3 ປະຊາຊົນໃນບ້ານດັ່ງກ່າວ ຈະຈັດບູນສະຫຼອງ ຫຼື ບູນນະມັດສະການປະຈຳປີຂຶ້ນ ເພື່ອບວງສວງສິ່ງສັກສິດໃນບໍລິເວນຕາດຟານ (ຄວາມເຊື່ອຂອງປະຊາຊົນ). ຕາດຟານ ຕັ້ງຢູ່ທິດໃຕ້ຂອງບ້ານຫຼັກ 38 ໄລຍະຫ່າງປະມານ 1 ກິໂລແມັດ, ສາມາດນຳພາຫະນະເຂົ້າ–ອອກໄດ້ຢ່າງສະດວກສະບາຍ, ຕາດແຫ່ງນີ້ ນອນໃນປ່າປ້ອງກັນກັບແຫຼ່ງນ້ຳ 1.415 ເຮັກຕາ, ເປັນຕາດສູງຊັນປະມານ 120 ແມັດ, ລັກສະນະເປັນນ້ຳສອງສາຍຄື: ສາຍຫ້ວຍບັງລຽງ ແລະ ຫ້ວຍຈີບ ຕົກໃສ່ຫ້ວຍດຽວກັນ, ບາງບ່ອນ ກໍ່ເປັນສວນກະເຟ, ໝາກແໜ່ງຂອງປະຊາຊົນບ້ານຫຼັກ 40. ນັບແຕ່ປາກນ້ຳຕົກ ລົງມາສອງຟາກຝັ່ງ ຍັງເປັນປ່າໄມ້ກົມ, ໄມ້ປ່ອງ ເປັນປ່າເຫວຊັນ ຂຶ້ນ–ລົງຍາກ, ສ່ວນບ່ອນທີ່ເປັນເນີນຈ້າຍ ແລະ ບ່ອນທີ່ເປັນຮາບພຽງ ກໍ່ເປັນສ່ວນກະເຟ, ໝາກແໜ່ງ ຂອງປະຊາຊົນບ້ານຫຼັກ 38 ແລະ ບ້ານຫຼັກ 40, ເອີ້ນຕາດຟານ ກໍ່ຍ້ອນວ່າ: ໃນເມື່ອກ່ອນ ເວົ້າລວມ ປະເພດສັດປ່າ; ຟານແມ່ນຫຼາຍກວ່າສັດອື່ນ, ມັນໄດ້ທຽວຊອກຫາກິນ ແລະ ໄດ້ຢອກກັນຫຼິ້ນຂ້າມໄປ–ມາ ຕາມຫ້ວຍບັງລຽງ ຫາຫ້ວຍຈີບ (ເບື້ອງຫົວຕາດ). ມີມື້ໜຶ່ງ ເກີດມີຝົນຕົກແຮງ ເຮັດໃຫ້ນ້ຳຫ້ວຍຫຼາຍແລະໄຫຼແຮງ, ແຕ່ຟານຍັງຂ້າມໄປມາໃນສາຍຫ້ວຍດັ່ງກ່າວ, ດ້ວຍຄວາມຂາດສະຕິ ຟານໂຕໜຶ່ງ ຖືກນ້ຳພັດຕົກລົງຕາດ ຫົວຟາດໃສ່ກ້ອນຫີນ ແລະ ຕາຍໃນເຂດຕາດແຫ່ງນີ້, ນັບແຕ່ນັ້ນມາ ຊາວບ້ານຫຼັກ 38 (ບາດຜັກກູດແກ້ວສິງຄຳໃນເມື່ອກ່ອນ) ກໍ່ຄື: ປະຊາຊົນໃນເຂດດັ່ງກ່າວ ຈຶ່ງພາກັນໃສ່ຊື່ ແລະ ເອີ້ນຕາດນີ້ວ່າ: “ຕາດຟານ” ຈົນເທົ່າທຸກວັນນີ້.



## 6. ນ້ຳຕົກຕາດເຢືອງ.

ອີງຕາມການບັກທຶກຂອງຫ້ອງການ ຖວທ ແລະ ການບອກເລົ່າຂອງອຳນາດການປົກຄອງບ້ານ ຄື:

ນ້ຳຕົກຕາດເຢືອງ ແມ່ນນ້ຳຕົກຕາດແຫຼ່ງໜຶ່ງທີ່ ມີຄວາມສວຍສົດງົດງາມ ໃນເຂດພູພຽງບໍລະເວນ, ມີຕົ້ນກຳເນີດຈາກສາຍນ້ຳຂອງຫ້ວຍບັງລຽງ, ຕັ້ງຢູ່ໃນເຂດຮັບຜິດຊອບຂອງບ້ານຫຼັກ 40 ເມືອງປາກຊ່ອງ ແຂວງຈຳປາສັກ, ຫ່າງຈາກບ້ານໄປທາງທິດຕາເວັນຕົກສຽງໃຕ້ ປະມານ 1.3 ກິໂລແມັດ, ຫ່າງຈາກຕົວເມືອງປາກຊ່ອງມາທາງທິດຕາເວັນຕົກ 10 ກິໂລແມັດ. ສາມາດນຳໃຊ້ຍານພາຫະນະທຸກປະເພດ ເຂົ້າເຖິງສະຖານທີ່ສະດວກສະບາຍ, ຕາດເຢືອງ ເປັນຕາດສູງຊັນ ປະມານ 50 ແມັດ, ແບ່ງເປັນ 2 ພັກ; ພັກເທິງ 10 ແມັດ, ພັກລຸ່ມເປັນ 40 ແມັດ, ສອງຟາກຝັ່ງ ເປັນຜາເຫວຊັນ ມີໄມ້ເຮ້ຍ, ປ່າກ້ວຍ, ປ່າຕົ້ນໄມ້ໃຫຍ່ຈຳນວນໜຶ່ງ (ນັບແຕ່ປາກຕາດລົງດ້ານລຸ່ມຕາດ) ທາງລົງກ້ອງ ຫຼື ວັງນ້ຳຕົກ ແມ່ນລົງຕາມຄັນໄດ. ຢູ່ຝັ່ງດ້ານລຸ່ມຕາດມີຖ້ຳ ບ່ອນເຢືອງອາໄສຢູ່ (ກວ້າງ 3 ແມັດ, ຍາວ 3 ແມັດ) ມີ 1 ຍ່ານ, ມີເນື້ອທີ່ສະຫງວນທັງໝົດ 129,000 ເຮັກຕາ, ກ່ອນເອີ້ນວ່າ ”ຕາດເຢືອງ” ຊື່ຕາດແຫ່ງນີ້ ແມ່ນມາຈາກຕຳນານຄາວປູ່ເຍີ ຜູ້ທີ່ເຄີຍອາໄສຢູ່ໃນເຂດຖິ່ນຖານແຫ່ງນີ້ມາກ່ອນ ເຊິ່ງເພິ່ນໄດ້ເຄີຍພົບເຫັນສັດຊະນິດໜຶ່ງ ເປັນປະຈຳຫຼາຍ ເຊິ່ງໄດ້ເອີ້ນໂຕສັດນີ້ວ່າ “ໂຕເຢືອງ” ໄດ້ອາໄສຫາກິນຢູ່ເຂດບໍລິເວັນນ້ຳຕົກຕາດແຫ່ງນີ້. ຈາກນັ້ນມາ ຊາວບ້ານຢູ່ບໍລິເວນເຂດນີ້ ຈຶ່ງໄດ້ພາກັນເອີ້ນຕາດນີ້ວ່າ “ຕາດເຢືອງ” ຈົນເທົ່າທຸກມື້ນີ້. ຈຸດພິເສດຂອງນ້ຳຕົກຕາດແຫ່ງນີ້ ແມ່ນຢູ່ສອງຟາກຝັ່ງຂອງຕາດ ເປັນຜາເຫວຊັນ, ມີປ່າໄມ້ຫຼາຍຊະນິດ, ມີປ່າກ້ວຍ ແລະ ເປັນປ່າຕຶບໜ້າ ມີໄມ້ໃຫ່ຍຫຼາຍຊະນິດ, ທີ່ສາມາດພົບເຫັນໄດ້ ນ້ຳຕົກຕາດແຫຼ່ງນີ້ ນັກທ່ອງທ່ຽວແມ່ນສາມາດລົງຫຼີ້ນນ້ຳໄດ້ທັງຢູ່ເທິງ ແລະ ຢູ່ໃຕ້ນ້ຳຕົກຕາດໄດ້.

## 7. ນ້ຳຕົກຕາດອີ່ຕູ້ ບ້ານຫຼັກ 35.



ຕາດອີ່ຕູ້ ແມ່ນສະຖານທີ່ທ່ອງທ່ຽວທີ່ມີຕົ້ນກຳເນີດມາຈາກຫ້ວຍຈຳປີ, ມີຂະໜາດກວ້າງປະມານ 28 ແມັດ, ມີຄວາມສູງປະມານ 50 ແມັດ, ໄລຍະຫ່າງຈາກເມືອງປາກເຊ 35 ກິໂລແມັດ, ຫ່າງຈາກເມືອງປາກຊ່ອງ 15 ກິໂລແມັດ, ຫ່າງຈາກບ້ານຫຼັກ 35 ປະມານ 900 ແມັດ, ກ່ອນຈະເອີ້ນຊື່ວ່າ ຕາດອີ່ຕູ້: ແຕ່ດັ້ງເດີມ ຕາດແຫ່ງນີ້ມີຊື່ວ່າ: ນ້ຳຕົກຕາດຈຳປີ ຍ້ອນວ່າກຳເນີດຈາກສາຍຫ້ວຍຈຳປີ, ສາຍຫ້ວຍນີ້ ມີຕົ້ນກຳເນີດມາຈາກພູໄຟເທວະດາ ເຊິ່ງແມ່ນຮ່ອງລາວາຂອງພູໄຟລະເບີດແລ້ວ ໄຫຼລະອິດ ລະອ້ຽວ ລົງໃສ່ນ້ຳເຊໂດນ. ຕາດແຫ່ງນີ້ ໄດ້ກຳເນີດຂຶ້ນຢູ່ລະຫວ່າງກາງຂອງສອງບ້ານຄື: ບ້ານອີ່ຕູ້ ແລະ ບ້ານຫ້ວຍຈຽດ, ບ້ານຫ້ວຍຈຽດ ກໍ່ແມ່ນບ້ານຊົນເຜົ່າໜຶ່ງ ທີ່ມີຊື່ເອີ້ນຕາມຊື່ຂອງເຈົ້າກົກເຈົ້າເຫຼົ່າ ທີ່ຍ້າຍມາທຳຫາກິນເຮັດໄຮ່ເຮັດສວນຢູ່ທີ່ນີ້ ກໍ່ຄືຢໍຈຽດ ເຊິ່ງແມ່ນຊົນເຜົ່າຕະໂອຍ ໄດ້ມາເຮັດໄຮ່ສວນຢູ່ແຄມຫ້ວຍແຫ່ງນີ້. ຈາກນັ້ນມາ ກໍ່ມີລູກຫຼານ ແລ້ວກາຍເປັນບ້ານຢໍຈຽດ. ຊົນເຜົ່ານີ້ໄດ້ເຄີຍເຮັດພິທີບວງສວງ ດວງວິນຍານຂອງຜີເຈົ້າຖິ່ນ ຕາມການເຊື່ອຖືຜ່ານມາ. ວັນໜຶ່ງ ຢໍຈຽດໄດ້ແຕ່ງໃຫ້ທ້າວໂຊໂລະ ເຊິ່ງແມ່ນລູກເຂີຍທັ ງແມ່ນເປັນຜູ້ສ່ວຍວຽກພາຍໃນບ້ານ ໄປຫາຊື້ຄວາຍ ເພື່ອມາເຮັດຮີດຕາມທີ່ເຄີຍເຮັດມາ, ທ້າວໂຊໂລະ ໄດ້ປະຕິບັດຕາມຄຳສັ່ງຂອງຜູ້ເປັນພໍ່ເຖົ້າ, ພໍດີໄດ້ຄວາຍອີ່ຕູ້ໜຶ່ງ ເມື່ອກັບມາຮອດຫ້ວຍຈຳປີ ເຫັນວ່າປະລິມານນ້ຳຫ້ວຍໄດ້ຫຼາຍຂຶ້ນ ແລະ ໄຫຼແຮງກວ່າເກົ່າ, ຍ້ອນສາເຫດຝົນຕົກໃນມື້ກ່ອນແຕ່ ທ້າວໂຊໂລະ ກໍ່ໄດ້ຕັດສິນ ໃຈນຳເອົາຄວາຍອີ່ຕູ້ນັ້ນ ຂ້າມນ້ຳໄປ ເພື່ອໃຫ້ທ່ວງທັນກັບຄວາມຕ້ອງການ. ເມື່ອທ້າວໂຊໂລະເອົາຄວາຍຂ້າມນ້ຳຮອດເຄິ່ງຫ້ວຍ; ປາກົດວ່າ ກະແສນ້ຳໄດ້ທົ່ງແຮງ ເຮັດໃຫ້ຄວາຍອີ່ຕູ້ ຕ້ານທານຕໍ່ກະແສນ້ຳບໍ່ໄດ້ ຈິ່ງສຸລົງຕາດແຫ່ງນັ້ນຈົນເຖິງແກ່ຄວາມຕາຍ. ສ່ວນທ້າວໂຊໂລະ ກໍ່ເອົາຕົວລອດຈາກຄວາມຕາຍຢ່າງໜ້າອັດສະຈັນ. ນັບແຕ່ນັ້ນມາ ນ້ຳຕົກຕາດຈຳປີ ກໍ່ໄດ້ປ່ຽນຊື່ເປັນ: ຕາດອີ່ຕູ້ຈົນ ຮອດທຸກວັນນີ້.

## 8. ນ້ຳຕົກຕາດຕາເກັດ (ຕາດ7ຊັ້ນ).



ນ້ຳຕົກຕາດຕາເກັດ ເປັນນ້ຳຕົກຕາດຂະໜາດໃຫຍ່ ກຳເນີດມາຈາກສາຍຫ້ວຍນ້ຳພາກ, ມີຄວາມສູງປະມານ 400 ແມັດ, ໃນເຂດບ້ານໜອງຫລວງ ຫ່າງຈາກຕົວເມືອງປາກຊ່ອງປະມານ 18 km, ເປັນເສັ້ນທາງສູງຊັນ ແລະ ທີ່ເຕັມໄປດ້ວຍທຳມະຊາດ ປ່າດົງຕຶບໜາ, ກ່ອນຈະເອີ້ນຊື່ວ່າ: ຕາດຕາເກັດ ກໍ່ຍ້ອນວ່າ: ຕາເກັດ ເປັນຊື່ເອີ້ນຂອງຄົນຊົນເຜົ່າລະເວນທີ່ຍ້າຍມາຈາກບ້ານກົກກ້ວຍສູງ ທີ່ອາໄສຢູ່ບ້ານພູໂອຍ ເມືອງປາກຊ່ອງ, ໄດ້ໄປເຮັດສວນກາເຟ ໃກ້ກັບຫົວຕາດ. ຕາດແຫ່ງນີ້, ຕາມການເຫລົ່າລືຂອງຊາວບ້ານອາວຸໂສຕາເກັດ, ເປັນຄົນມີຮູບຮ່າງໃຫ່ຍສູງ, ສັກລາຍແຄ້ວຄີງ, ມີເວດມົນກົນຄາຖາຕາມຄວາມເຊື່ອຖືຂອງຄົນບູຮານ. ວັນໜຶ່ງ ໄດ້ໄປອາບນ້ຳທີ່ຫົວຕາດ ພໍດີໄປພໍ້ຊຸມສາວນ້ອຍກຳລັງອາບນ້ຳຢູ່ຕາເກັດ ໄດ້ເວົ້າຍອກໃຍວ່າ ຈະເອົາເປັນເມຍນ້ອຍ. ທັງຊຸມສາວນ້ອຍ ກໍ່ໄດ້ເວົ້າຍອກຕາເກັດຄືນວ່າ: ຄັນເຈົ້າໂຕນລົງຕາດນີ້ໄດ້ ຊຸມຂ້ອຍກໍ່ຈະເອົາເປັນຜົວ, ຕາເກັດຫົວທ້າທາຍ ແລ້ວກໍ່ນັ່ງລົງ ພອມຈະລ້າງມື ບັງເອີນຟັກຟ້າຢູ່ໃນແອວ ໄດ້ໃປທັ່ງລົງໂດຍບໍ່ເຈດຕະນາ ຈຶ່ງເຮັດໃຫ້ຕາເກັດໝົ່ນຫົວຊ້ອນ ຕົກລົງຕາດແຫ່ງນີ້ ຊຶ່ງມີຄວາມສູງ 7 ຊັ້ນ ແຕ່ຕາເກັດ ກໍ່ບໍ່ເປັນຫຍັງ. ດົນນານມາ ຕາເກັດກໍ່ສູນເຫຍໄປໃນປາງສົງຄາມຮຸກຮານ ບໍ່ຮູ້ວ່າໄປໄສ. ດັ່ງນັ້ນ, ຈຶ່ງເອີ້ນຊື່ນ້ຳຕົກຕາດນີ້ວ່າ: ນ້ຳຕົກຕາດຕາເກັດມາຈົນເຖິງທຸກວັນນີ້.





ນັບແຕ່ປີ 2011 ບໍລິສັດທ່ອງທ່ຽວກຣີນແອັດເວັນເຈີ ໄດ້ເຂົ້າຮັບການພັດທະນາ ໃຫ້ເປັນສະຖານທີ່ທ່ອງທ່ຽວປະຈົນໄພ ເຊັ່ນ: ການຍ່າງປ່າ, ປີ້ນຜາ, ເຮືອນເທິງຕົ້ນໄມ້ ແລະ ຂີ່ສາຍສະລິງ ຍ້ອນທາງບໍລິສັດເຫັນວ່າ ໃນໂຊງເຂດແຫ່ງນີ້ ຍັງອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ສັດສາວາສິ່ງພັນ ເຊັ່ນ : ສັດປ່າ, ປ່າໄມ້, ອາກາດ ແລະ ພືດພັນອື່ນໆ ທີ່ອ້ອມແອບນ້ຳຕົກຕາດ ຈຶ່ງມີຄວາມຄິດໃນການນຳໃຊ້ປ່າໄມ້ ແລະ ທຳມະຊາດມາສູ່ການ ພັດທະນາການທ່ອງທ່ຽວແບບຍືນຍົງ ແລະ ປະຊາຊົນມີສ່ວນຮ່ວມ, ເປັນການສົ່ງເສີມ, ສ້າງວຽກເຮັດງານທຳໃຫ້ກັບປະຊາຊົນ. ໃນເຂດດັ່ງກ່າວ ໃຫ້ນັບມື້ດີຂຶ້ນ ແລະ ເປັນການສະກັດກັ້ນ ການຖາງປ່າເຮັດໄຮ່ ແລະ ລ່າສັດໃນຂົງເຂດປ່າສະຫງວນ.





ວັດພູອາສາ ແມ່ນບູຮານສະຖານແຫ່ງໜຶ່ງ ທີ່ມີຄຸນຄ່າທາງດ້ານປະຫວັດສາດ, ສະຖາປັດຍະກຳ ແລະ ບູຮານວິທະຍາ. ວັດພູອາສາ ແມ່ນສູນພຸດທະສາສະໜາ ແລະ ເປັນບ່ອນເຕົ້າໂຮມຄວາມສາມັກຄີ ຂອງປະຊາຊົນບັນດາເຜົ່າ. ທີ່ເປັນຈິດໜຶ່ງໃຈດຽວ ລຸກຂຶ້ນຕໍ່ສູ້ ຕ້ານການກົດຂີ່ຂູດຮີດທີ່ໄຮ້ມະນູດລະທຳຂອງຜູ້ມີອຳນາດເໜືອ ກໍ່ຄືສັກດີນາ ທີ່ປົກຄອງນະຄອນຈຳປາສັກ ໃນເວລານັ້ນ.

ວັດພູອາສາ ອີງຕາມພື້ນຂອງຂຸນບູລົມຣາຊາທິລາດ ແລະ ພົງສາວະດານລວມ ສະບັບຂອງ ມະຫາສີລາ ວິລະວົງ (ກະຊວງສຶກສາປີ1966) ມີປະຫວັດດັ່ງນີ້: ແຕ່ກ່ອນ ມີຊາຍຄົນໜຶ່ງ ຊື່ວ່າທ້າວສາ ບວດເປັນຄູບາ ແລະ ໄດ້ສຶກສາຮ່ຳຮຽນຢູ່ສະຫຍາມ (ປະເທດໄທ) ເມື່ອຮ່ຳຮຽນໄດ້ຫລາຍປີແລ້ວ ກໍ່ກັບຄືນມາບ້ານເກີດຂອງຕົນ (ບ້ານກຽດໂງ້ງໃນປະຈຸບັນ) ຕອນກັບມາ ເພິ່ນໄດ້ນຳເອົາແວ່ນຂະຫຍາຍຕິດຕົວມາພ້ອມ. ພໍມາຮອດບ້ານ ເພິ່ນກໍ່ໄດ້ເວົ້າກັບຊາວບ້ານວ່າ: ອາດຕະມີລໍເດດ ສາມາດສ້າງໄຟໃຫ້ລຸກໄໝ້ຢ່າງປະຕິຫານໄດ້ ໂດຍເພິ່ນໄດ້ສ່ອງໃສ່ໃບໄມ້ແຫ້ງ ຕ້ອມຂອງແສງດວງອາທິດ ໂດຍບໍ່ພໍເທົ່າໃດນັ້ນ ກໍລຸກໄໝ້ໃບໄມ້ແຫ້ງປະຊາຊົນຮູ້ສຶກປະຫຼາດ ແລະ ເກີດຄວາມເຊື່ອຖືວ່າ ຄູບາເປັນຜູ້ມີບຸນມາເກີດ ເຊິ່ງໃນເວລານັ້ນ ປະຊາຊົນ ຍັງບໍ່ທັນຮູ້, ຍັງຜູ້ອ່ອນນ້ອຍຕໍ່ການສຶກສາ ຈຶ່ງບໍ່ທັນເຂົ້າໃຈ

ກົດຟີຊິກຂອງແສງ. ປະຊາຊົນ ມີໃຈສັດທາເຫຼື້ອມໃສຕໍ່ຄູບາ ຈຶ່ງພາກັນເອົາດອກໄມ້, ທູບທຽນມາບູຊາຢ່າງຫຼວງຫຼາຍ ຈົນກາຍເປັນພະທາດຊາຍກອງໃຫ່ຍ.

ຄູບາສາ ໄດ້ຄົ້ນຄິດ ແລະ ເຂົ້າໃຈຄວາມເປັນທຳ ທີ່ເກີດຂຶ້ນໃນສັງຄົມ ໂດຍເຫັນວ່າ ຊາວບ້ານຖືກກົດຂີ່ຂູດຮີດ. ຄູບາ ໄດ້ຄົ້ນຄິດ ແລະ ເຂົ້າໃຈເຖິງຄວາມບໍ່ເປັນທຳ ທີ່ເກີດຂຶ້ນໃນສັງຄົມ ໂດຍສະເພາະແມ່ນ ເຫັນວ່າຊາວບ້ານ ຖືກເກັບເກນໄປອອກແຮງງານ ແລະ ຍັງຕ້ອງເສຍພາສີຢ່າງໜັກ. ຄູບາ ຈຶ່ງໄດ້ປຸກລະດົມປະຊາຊົນບັນດາເຜົ່າ ໃຫ້ເຕົ້າໂຮມສາມັກ ແລະ ພ້ອມລູກຂຶ້ນຕໍ່ສູ້ກັບສັກດີນາກ.

ມາປີ ຄສ 1815 ເພື່ອກຽມພ້ອມທາງດ້ານຈິດ ແລະ ກໍ່ສ້າງທາງດ້ານກຳລັງສູ້ຮົບ ຄູບາ ຈຶ່ງໄດ້ນຳພາປະຊາຊົນ ສ້າງສະຖານສັກສິດທີ່ເປັນວັດຂຶ້ນ ແລະ ເປັນບ່ອນອົບຮົມວິຊາການຕໍ່ສູ້ ກໍ່ຄືຍຸດທະວິທີ ແລະ ແບບແຜນໃນການສູ້ຮົບ ໂດຍການເຝິກຕີ, ການຂີ່ມ້າ, ຂີ່ຊ້າງ ແລະ ປ້ອງກັນຕົວ. ເພິ່ນໄດ້ກໍ່ສ້າງວັດຂຶ້ນທີ່ບໍລິເວນພູສູງແຫ່ງໜຶ່ງ ເຊິ່ງປະຊາຊົນເອີ້ນວ່າພູອາສາ, ສິ່ງກໍ່ສ້າງພູອາສາແຫ່ງນີ້ ແມ່ນມີຄວາມແຕກຕ່າງໄປຈາກແຫ່ງອື່ນໆ ສັງເກດໄດ້ຈູດທີ່ຕ້ອງການ ແມ່ນຢູ່ຈອມພູສູງມີກຳແພງຫີນອ້ອມຮອບ ແລະ ມີເສົາ ທີ່ເປັນຮູບດອກເຫັດຫີນ ເຊິ່ງທາງດ້ານໃນປະກອບດ້ວຍທາດໜຶ່ງໜ່ວຍ ແລະ ສິມ 1 ຫຼັງ. ນອກນັ້ນ ທາງດ້ານນອກຂອງກຳແພງ ຍັງມີຖ້ຳທຳມະຊາດ ເຊິ່ງປະປົນຢູ່, ໃນຖ້ຳ ຍັງມີພະພຸດທະຮູບຫຼາຍອົງ.

ຫຼັງຈາກກະກຽມກຳລັງພົນຢູ່ທີ່ພູອາສາແຫ່ງນັ້ນ ເປັນເວລາໜຶ່ງປີ ຄູບາກໍ່ໄດ້ນຳເອົາໄພ່ພົນ ໄປຕີເອົານະຄອນຈຳປາສັກ. ເຈົ້ານະຄອນຈຳປາສັກປະລາໄຊ, ຂະບວນການຕໍ່ສູ້ຂອງປະຊາຊົນ ໄດ້ຮັບໄຊຊະນະ ແລະຍຶດເອົາອຳນາດການປົກຄອງຢູ່ນະຄອນຈຳປາສັກ. ເຈົ້າຊີວິດສະຫຍາມ ໄດ້ສົ່ງໃຫ້ພະຍາມະຫູເອົານາດ ແລະ ພະຍາແສນຄຳ ມາປາບປາມ ໂດຍເສຍປຽບທາງດ້ານກຳລັງພົນ ແລະ ອາວຸດຍຸດໂທປະກອນ ຂະບວນການມະຫາຊົນ ຈຶ່ງເສຍອຳນາດ ແລະ ຖອຍໜີ. ໄປຢູ່ພູພະບາປູ່ ແຂວງອັດຕະປື. ການລຸກຂຶ້ນຕໍ່ສູ້ຄັ້ງນັ້ນ ໄດ້ກາຍເປັນມູນເຊື້ອອັນດີງາມເພື່ອໃຫ້ອະນຸຊົນລຸ້ນຫຼັງ ໄດ້ຮຽນຮູ້ນ້ຳໃຈກ້າຫານ, ສາມັກຄີກັນຕໍ່ສູ້ຕ້ານການກົດຂີ່ຂົ່ມເຫັງຂອງສັກດີນາ.

ສາທະລະນາລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບຮອງ ແລະ ປະກາດເອົາ ວັດພູອາສາ ເປັນມໍລະດົກແຫ່ງຊາດ ຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 14/ນຍ. ລົງວັນທີ 13/11/1993 ແລະ ພູອາສາ ໄດ້ກາຍເປັນບູຮານສະຖານທີ່ສຳຄັນແຫ່ງ 1 ຂອງ ເມືອງພະທຸມພອນ ແຂວງຈາປາສັກ ແລະ ຍັງເປັນແຫຼ່ງທ່ອງທ່ຽວທີ່ສຳຄັນ ສາມາດດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວຊົມໃນແຕ່ລະວັນຢ່າງບໍ່ຂາດສາຍ ເຊິ່ງສາມາດສ້າງລາຍຮັບໃຫ້ກັບປະຊາຊົນບ້ານກຽດໂງ້ງ ແລະ ທາງດ້ານການທ່ອງທ່ຽວຈາກທ່ຽວຊົມ ໃນລະດັບທີ່ດີພໍສົມຄວນ. ວັດພູອາສາ ແມ່ນສະຖານແຫ່ງໜຶ່ງ ທີ່ມີຄຸນຄ່າທາງປະຫັວດສາດສະຖາ, ປັດຕາຍະກຳ ແລະ ບູຮານວິທະຍາ. ວັດພູອາສາ ແມ່ນສູນພູດທະສາດສະໜາ ແລະ ເປັນບ່ອນເຕົ້າໂຮມຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ ທີ່ເປັນຈິດໜຶ່ງໃຈດຽວ ລຸກຂຶ້ນຕໍ່ສູ້ ຕ້ານການກົດຂີ່ຂູດຮີດທີ່ໄຮ້ມະນຸດສະທຳຂອງຊົນຊັ້ນທີ່ມີອຳນາດເໜືອກວ່າ ກໍ່ຄືສັກດີນາທີ່ປົກຄອງນະຄອນຈຳປາສັກໃນເວລານັ້ນ.





## 10. ບຶງໃຫຍ່ກຽດໂງ້ງ.

ບຶງໃຫຍ່ກຽດໂງ້ງ ແມ່ນບຶງທີ່ໃຫຍກ່ວາໝູ່ ໃນເຂດເມືອງປະທຸມພອນ ແຂວງຈຳປາສັກ. ຕັ້ງຢູ່ລະຫວ່າງກາງເຂດປາສະຫງວນເຊປຽນ ຫ່າງຈາກຫຼັກ48, ເສັ້ນທາງເລກທີ 13 ໃຕ້ ແຍກໄປທາງເລກທີ18 ປາກເຊ ຫາອັດຕະປື ປະມານ 18 ກິໂລແມັດ ຫຼື ຫ່າງຈາກເມືອງປາກເຊ 55 ກິໂລແມັດ, ບຶງໃຫຍ່ກຽດໂງ້ງ ດ້ານທິດຕາເວັກອອກຂອງແຄມບຶງ ແມ່ນຕິດກັບທາງເຂົ້າບ້ານພະໂພ ແລະ ບ້ານແກແລ ເຊິ່ງມີຄວາມຍາວຕິດຈອດ 4,000 ແມັດ, ທິດຕາເວັກຕົກຂອບເຂດບຶງ ຕິດກັບບໍລິເວນສາຍປ່າດົງຂອງບ້ານກຽດໂງ້ງ ມີຄວາມຍາວ 8.780 ແມັດ, ທິດເໜືອ ຕິດກັບເສັ້ນທາງເລກທີ 18 ແລະ ບ້ານພິມມະລື, ບ້ານທົບສອກ ມີຄວາມຍາວ 5,000 ແມັດ, ທິດໃຕ້ຂອງບຶງ ຕິດກັບຂອບເຂດປ່າດົງຕຶບໜາ ຕໍ່ໃສ່ພູອາສາ ແລະ ພູເຂົ້າ ຕາມແຜນທີ່ມາດຕາສ່ວນ 1/1.000 ຂອງເມືອງປະທຸມພອນ.

ໜອງດິ່ມ ແມ່ນມີເນື້ອທີ່ທັງໝົດ 1,819.5 ເຮັກຕາ, ບຶງໃຫຍ່ກຽດໂງ້ງ ໄດ້ປະກອບສ້າງຮູບລັກສະນະ ຮູບພາບທຳມະຊາດອັນງົດງາມ. ບັນດາໜອງນ້ອຍຢູ່ກາງບຶງ, ຕົ້ນກົກຖິ່ມແຕ່ດຶກດຳບັນ ມີຫີນກ້ອນນ້ອຍໃຫຍ່–ນ້ອຍ ລຽງກະຈາຍສະຫຼັບທົ່ວບໍລິເວນ. ນອກຈາກນັ້ນ ກໍ່ມີບັນດາດອນຕ່າງໆທີ່ມີຊື່, ປະຫວັດການເປັນມາອີກຫຼາຍດອນ ເຊິ່ງປະກອບດ້ວຍຫີນ ວາງປົກຫຸ້ມໄປດ້ວຍພືກສາຊາດ ແລະ ຕົ້ນໄມ້ນາໆ ພັນສົດຊື່ນຂຽວງາມຕະຫຼອດປີ ເຊັ່ນ: ດອນແກ, ດອນຈານ, ດອນມ່ວງ, ດອນກອກ, ດອນໝາກໝາມ ແລະ ດອນແມ່ເຖົ້າໝາ ທີ່ເປັນດອນໃຫຍ່ຢູ່ກາງບຶງ. ຕາມການເລົ່າລື່ສືບກັນມາແຕ່ບູຮານ ວັນທີ 24/4/1994 ໄດ້ຢັ້ງຢືນຂໍ້ມູນວ່າ ບຶງກຽດໂງ້ງ ທີ່ທຳມະຊາດໄດ້ປະກອບສ້າງຂຶ້ນມາແຕ່ດຶກດຳບັນ, ຮູບລັກສະນະຂອງໜອງດັ່ງກ່າວຈະກາຍ ເປັນພື້ນທີ່ອັນສຳຄັນ ໃຫ້ເປັນແຫຼ່ງທ່ອງທ່ຽວທຳມະຊາດ.



ບຶງໃຫຍ່ກຽດໂງ້ງ ຊື່ເດີມແມ່ນໜອງດົ່ມຫ້ວຍມ້າ ເຊິ່ງມີນິທານເລົ່າສືບມາຈາກ ເລື່ອງຜາແດງ–ນາງໄອ່, ກ່ຽວກັບເລື່ອງ ທ້າວພັງຄີ, ທ້າວຜາແດງ ແລະ ນາງໄອ່ ໄດ້ກ່ຽວພັນ ເຖິງຄວາມຮັກ ເຊິ່ງຖືກນາຍພານຍິງທ້າວກະຮອກດ່ອນຕາຍ ແລ້ວກໍ່ຈອງເວນກັບນາງໄອ່ ໃຫ້ແຜ່ນດິນຫຼົ່ມຫຼວງ ອັນໄດ້ກ່ຽວພັນກັບປະກົດການທາງທຳມະຊາດ ຫຼາຍເຊັ່ນຄືນຜ່ານມາ. ບໍລິເວນອັນກ້ວາງໃຫຍ່ຂອງໜອງ ທີ່ມີຫຼາຍບ່ອນໄດ້ຕິດຈອດກັບຫ້ວຍຮ່ອງຄອງນາ, ມີຫຼາຍບ່ອນ ໄດ້ເປັນປ່ອງແປວແລວນ້ຳ ໄຫຼອອກສູ່ແຫ່ງອື່ນເຮັດໃຫ້ຮູບໂສມຂອງໜອງ ໄດ້ປ່ຽນພາບພິດໄປຕາມລະດູການຄື: ລະດູຝົນ ນ້ຳຈະອັ່ງລົ້ນແຄມຝັ່ງ, ລະດູແລງ ນ້ຳຈະບົກຂາດຂອບແຄມບຶງລົງໄປສູ່ທ້ອງອ່າງໜອງ, ທ້ອງໜອງ ໄດ້ກາຍເປັນທົ່ງຫຍ້າສີຂຽວ ເອື້ອອຳນວຍສະໜອງຕອບແກ່ຝູງສັດ ເປັນຕົ້ນແມ່ນຊ້າງ, ງົວ, ຄວາຍ ຕັ້ງຫຼາຍຮ້ອຍໂຕ ໄດ້ເລາະລຽບກິນຫຍ້າອ່ອນຢ່າງອີ່ມພີຕະຫຼອດລະດູການ, ບຶງໃຫຍ່ກຽດໂງ້ງ ເປັນໜອງທຳມະຊາດກາຍເປັນແຫຼ່ງນ້ຳຄຳ ຂອງການແຜ່ພັນປາພື້ນບ້ານນາໆຊະນິດ ໃນຂົງເຂດດັ່ງກ່າວ ໃນທຸກລະດູການ.

## 11. ຜາສາດຫີນອຸງມຸງໂຕະໂໝະ.



ວັດໂຕະໂໝະ ແມ່ນພື້ນທີ່ແບບດຽວກັນກັບວັດພູ ຕັ້ງຢູ່ເຂດຄຸ້ມຄອງຂອງບ້ານໂຕະໂໝະທ່າ ຫ່າງຈາກສຳນັກງານເມືອງປະທຸມພອນປະມານ 4,5 ກິໂລແມັດ, ວັດນີ້  ສ້າງຂຶ້ນເປັນສອງແລວ ໂດຍມີແມ່ນ້ຳໂຕະໂໝະເປັນພົມແດນ. ເຂື່ອນກັນນ້ຳແມ່ນໄດ້ສ້າງຂຶ້ນ ຍາວຢຽດຕາມແຄມແມ່ນ້ຳ ອ້ອມຮອບພື້ນທີ່ສັກສິດ ປັດຈຸບັນອາດເປັນໄປໄດ້ ທີ່ຍັງເຫັນເສັ້ນທາງ ທີ່ຕັ້ງດ້ວຍກຳແພງ, ສ່ວນວັດ ໄດ້ສ້າງຂຶ້ນໃນໃຈກາງຂອງພື້ນທີ່ (ຄະນະນີ້ສະຖານທີ່ດັ່ງກ່າວເປັນເນີນດິນຈີ່) ສ່ວນເສັ້ນທາງໜຶ່ງອີກ ແມ່ນເສັ້ນທາງກຽດຕິຍົດ ເຊິ່ງມີກ້ອນຫີນຕັ້ງລຽນກັນເປັນຂອບເຂດ ຫຼື ພົມແດນທຸກວັນນີ້. ເສັ້ນທາງດັ່ງກ່າວ ບໍ່ຢູ່ໃນຕຳແໜ່ງເດີມ ພວກເຮົາຈະເຫັນເສັ້ນທາງທີ່ໄດ້ມາຈາກສອງແລວ (ສະຫຼຽງກັນ) ຂ້າງຊ້າຍຈະນ້ອຍກວ່າ, ມີດິນຈີ່ປະຫຼັກຫັກພັງເທິງແຄມຝັ່ງທາງ.ກ່ອນໜ້ານີ້ ຢູ່ໃນພື້ນທີ່ດັ່ງກ່າວ ໄດ້ມີວັດນ້ອຍ ທີ່ເຮັດດ້ວຍດິນຈີ່ ດຽວນີ້ແມ່ນລົ້ມລົງແລ້ວ. ແບບຂອງອາຄານ ແມ່ນໄດ້ເສີມສ້າງໃນສະຕະວັດທີ 11, ແຕ່ວ່າການແກະສະຫຼັກ ແລະ ການຕັດຫີນຈຳນວນໜຶ່ງທີ່ພົບເຫັນໃນພື້ນທີ່ ສະແດງໃຫ້ເຫັນວ່າມັນໄດ້ມີການກໍ່ສ້າງມາກ່ອນນັ້ນແລ້ວ ຕົວຢ່າງ: ການແກະສະຫຼັກທີ່ມີຄວາມສຳຄັນ soma sutra with makara (ນາກຄະລາດ ພະຍານາກ) ປະດິດສະຖານໃນສະຕະວັດທີ 7–8, ລິງຄະ ຢູ່ໃນຮູບແບບໜ້າຄົນ ສະຕະວັດທີ 7 ແມ່ນຕົວແທນຂອງຊີວະພາມ, ຈາກໜ້າຕາທີ່ເຄັ່ງຕຶງ ກັບກາຍມີໜວດຍາວ ແລະ ໜ້າຕາທີ່ຈ່ອຍຜອມ (ຮູບປັ້ນນີ້ ແມ່ນຫາໄດ້ຍາກ) ທັບຫຼັງປະຕູ ແລະ ຮູບດອກປະກາຍສອນ ທີ່ປະດັບຢູ່ມຸມຜະສາດ ແມ່ນຮູບຂອງອັງກໍວັດ. AYMONIER ນັກວັດຖຸບູຮານຊາວຝຣັ່ງເສດ ໄດ້ຄົ້ນພົບສິລາຈາລຶກ ທີ່ຂຽນເປັນພາສາບາລີສັນສະກຣິດ ໃນລະຫວ່າງທີ່ໄດ້ມາທ່ຽວຊົມວັດໂຕະໂໝະ, ທຳອິດຫີນສິລາລຶກ ໄດ້ຖືກເຄື່ອນຍ້າຍໄປ Saigon ປະເທດຫວຽດນາມໃນປີ 1901. ຕໍ່ມາໄດ້ຢູ່ໃນພະນົມເປັນ ແລະ ສຸດທ້າຍໄດ້ຖືກເກັບໄວ້ໃນຫໍພິພິດຕະພັນ (Aibertsaut) ແຫ່ງປະເທດອັງກິດ ໃນປີ 1920 ເຊິ່ງປະຊາຊົນ ໃນພື້ນທີ່ໄດ້ເວົ້າວ່າ ສິລາຈາລຶກດັ່ງກ່າວ ໄດ້ຖືກສູນຫາຍໄປນຳແມ່ນ້ຳຂອງ, ສິລາຈາລຶກນີ້ ມີນ້ຳເບີໝາຍເລກໄວ້ K362 ມີຂະໜາດ 1,46 ແມັດ x 0,75 ແມັດ. ສິລາຈາລຶກ ແມ່ນໄດ້ປະດິດສະຖານຂຶ້ນໃນລະຫວ່າງຕະກຸນຂອງ ເຈົ້າຍະໂສວໍລະມັນອົງທີ 1(888AD). ສິລາຈາລຶກ ໄດ້ກ່າວເຖິງການປະດິດສະຖານວັດ (ທີ່ຢູ່ຂອງນັກບວດ), ວັດ (ອາຮາມ) ພຽງແຕ່ຮັບໃຊ້ປະຊາຊົນ ແລະ ຄູບາອາຈານ

(ນັກບວດ) ລັດຖະບານ ຈະບໍ່ນຳໃຊ້ເປັນຫ້ອງການຕ່າງໆ. ສ່ວນໜຶ່ງຂອງສີລາຈາລຶກ ໄດ້ໃຫ້ຂໍ້ມູນບາງຢ່າງແກ່ພວກເຮົາ ກ່ຽວການຈັດລະບຽບຖານະ ຫຼື ຊົນຊັ້ນກຸ່ມຄົນໃນສະໄໝເກົ່າ ພວກເຂົາຢາກອ້າງເຫດຜົນວ່າ ລັດຖະບານ ແລະ ເຈົ້າພະນັກງານ ຄວນມີສວນຮັບຜິດຊອບ ພວກເຮົາກະຮູ້ດີວ່າ ພວກເຂົາໄດ້ຖືກຮັບໃຊ້ເລື້ອຍໆ ແລະ ທາດແທ້ ແມ່ນກຸ່ມຊົນຊັ້ນ ເປັນຜູ້ທຳພິທີທາງສາສະໜາ (ຂອງກຸ່ມຄົນທີ່ຖືສາສະໜາ).



ສີລາຈາລຶກ ແມ່ນກ່າວເຖິງການປະດິດສະຖານວັດ(ວັດວາອາຮາມ) ເພື່ອອຸທີ່ແດ່ ຣູນານີ ເຊິ່ງແມ່ນຊື່ໜຶ່ງຂອງເມຍພະຊີວະ (Pravaty Uma) ຊາວອິນດູ ໄດ້ຮຽກນາງວ່າ ຣູລານີ. ເມື່ອກ່ອນ ພະຊີວະ ພະອິງໄດ້ຕັດສິນໃຈ ໄປຕັ້ງສາມະທິຢູ່ທີ່ສະຖານທີ່ຫ່າງໄກ (ພູເຂົາຫິມະໄລຢາ) ແຫ່ງປະເທດອິນເດຍ ແລະ ຖ້າສຳເລັດຈະກັບກາຍເປັນພາມ. ພະອິງໄດ້ຈາກເມຍຂອງພະອິງໄປ, ກ່ອນໄປ ພະອິງໄດ້ໃຫ້ຄຳໝັ້ນສັນຍາວ່າຈະກັບມາພາຍໃນ 2–3 ເດືອນ. ດັ່ງນັ້ນ, ຜູ້ເປັນເມຍໄດ້ລໍຖ້າພະອິງຫຼາຍກວ່າພັນປີ ແລະ ໃນຄະນະນັ້ນ ໄດ້ມີຜີສາດ ໄດ້ມາບອກວ່າ ພະສາມີຂອງນາງໄດ້ສິ້ນພະຊົນແລ້ວ, ນາງກໍ່ເລີຍໂສກເສົ້າເສຍໃຈ ໂດດເຂົ້າກອງໄຟເສຍຊີວິດໄປ. ເມື່ອພະອິງກັບເມືອບ້ານເມືອງ ພະອິງມີຮູບຮ່າງລັກສະນະຈ່ອຍຜ່ອມ ແລະ ເຕັມໄປດ້ວຍໜວດເຄົາທີ່ຍາວປຽດທົ່ວໃບໜ້າ ພະອິງຮູ້ດີວ່າເມຍຕາຍຍ້ອນຄວາມຮັກຜົວ (ມີຄວາມຊື່ສັດຈິງຮັກພັກດີຕໍ່ຜົວ) ເມື່ອເປັນເຊັ່ນນັ້ນ ພະອິງມີຄວາມໂສກເສົ້າ ແລະປາສະຈາກຄວາມສຸກ ເພາະໄດ້ສູນເສຍຄົນຮັກໄປ. ວັນໜຶ່ງຕໍ່ມາ ພະອິງໄດ້ພົບຍິງສາວສວຍງາມຜູ້ໜຶ່ງ ແລະ ພະອິງຊິງຈຳໄດ້ວ່າ ອາດແມ່ນເມຍຂອງພະອິງກັບຊາດມາເກີດໃໝ່ (ເມຍຂອງພະອິງໄດ້ຊື່ວ່າຣູດານີ, ຣູດານີແມ່ນຜູ້ຍິງຊາວອິນເດຍ ແລະ ເປັນແມ່ຍິງທີ່ມີຄວາມຈົ່ງຮັກພັກດີ ຫຼື ມີຄວາມຊື່ສັດຕໍ່ຜົວ), ເພາະສະນັ້ນ ວັດໂຕະໂໝະຈຶ່ງໄດ້ກ່າວຂານໄວ້ວ່າ ແມ່ນການປະດິດສະຖານ(ທີ່ຢູ່ຂອງນັກບວດ) ເພື່ອອຸທິດແດ່ຣູດານີ ເມຍຜູ້ທີ່ມີຄວາມຈົ່ງຮັກພັກດີ ແລະ ຊື່ສັດບໍລິສຸດ.

## 12. ເຂດປ່າສະຫງວນພູຊຽງທອງ.



ພູຂ້ອງ ແລະ ປ່າສະຫງວນແຫ່ງຊາດພູຊຽງທອງ. ປ່າສະຫງວນແຫ່ງຊາດພູຊຽງທອງ ມີເນື້ອທີ່ທັງໝົດ 1,200 ກິໂລຕາແມັດ. ເຊິ່ງກວມເອົາເນື້ອທີ່ຂອງສອງແຂວງຄື: ແຂວງສາລະວັນ ແລະ ແຂວງຈຳປາສັກ. ເນື້ອທີ່ດັ່ງກ່າວ ແມ່ນປ່າໄມ້ຂຽວຕະຫຼອດປີ ແລະ ເປັນທີ່ຢູ່ອາໄສຂອງສັດໄກ້ຈະສູນພັນບາງຊະນິດເຊັ່ນ: ເສືອດາວ ແລະ ນົກຍຸງຂຽວ, ພູຂ້ອງແມ່ນນອນຢູ່ໃນປ່າສະຫງວນແຫ່ງຊາດພູຊຽງທອງ ແລະ ສາມາດເຂົ້າເຖິງໄດ້ຈາກບ້ານໃໝ່ສິງສຳພັນ ເຊິ່ງເປັນບ້ານທີ່ມີຊື່ສຽງເລື່ອງດອກເຜີ້ງປ່າ, ມີຫີນທີ່ພົ້ນຂຶ້ນມາຈາກໜ້າດິນທີ່ສວຍງາມ ເປັນສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳ ແລະ ສາສະໜາ, ທິວທັດທຳມະຊາດ ແລະ ແມ່ນ້ຳຂອງອັນໜ້າປະທັບໃຈ. ນອກຈາກນັ້ນ ຍັງມີລາຍການຍ່າງປ່າ ໃຊ້ເວລາປະມານ 4–6 ຊົ່ວໂມງ ໄປຫາພູຂ້ອງ. ການຍ່າງປ່າໄລຍະສັ້ນ 2 ຊົວໂມງໄປຊົມຂ້ອງຫີນ (ກະຕ່າໃສ່ປາເຮັດດ້ວຍຫີນ) ຊຶ່ງທ່ານສາມາດຈ້າງພະນັກງານນຳທ່ຽວທ້ອງຖິ່ນ ແລະ ພັກເຊົາຢູ່ບ້ານໃໝ່ສິງສຳພັນ

**ຫີນຂ້ອງ:**

ຫີນຂ້ອງ ເປັນຫີນຂະໜາດໃຫຍ່ ທີ່ຄ້າຍຄືກັບຂ້ອງໃສ່ປາ ແລະ ຕັ້ງຢູ່ດ່ານຫີນເທິງພູ. ມີຕຳນານໄດ້ກ່າວໄວ້ວ່າ ປູ່ພິມ ເປັນຍັກຕົວໜຶ່ງ ທີ່ອາໃສຢູ່ແຖບບໍລິເວນນີ້. ໃນສະໄໝກ່ອນ ປູ່ພິມ ໄດ້ຊອກຢູ່ທຳກິນໃນເຂດລຸ່ມແມ່ນ້ຳຂອງ ເຊິ່ງປະຂ້ອງໄວ້ໃນບໍລິເວນແຫ່ງນີ້ ແລ້ວໄປຈົກປູໃນເຂດເມືອງຄົງເຊໂດນ ເພື່ອມາໃສ່ຂ້ອງທີ່ປະໄວ້ຢູ່ເທິງຈ້າຍພູແຫ່ງນີ້. ດັ່ງນັ້ນ ປະຊາຊົນທ້ອງຖິ່ນໃນເຂດນີ້ ຈຶ່ງເອີ້ນວ່າ: ຂ້ອງປູ່ຈົກປູ ຈົນເຖິງທຸກວັນນີ້ (ປະຈຸບັນນີ້ ຍັງມີຮອງຮອຍປູ່ຈົກປູຢູ່ເຂດເມືອງຄົງ).

**ຜາເຜີ້ງ:**

ໜ້າຜາ ແລະ ຖ້ຳແຫ່ງນີ້ ມີຄວາມຍາວສູງປະມານ 40–50 m. ບໍລິເວນໜ້າຜາແຫ່ງນີ້ ມີມາຫຼາຍພັນປີຜ່ານມາ ແຕ່ປະຈຸບັນ ເຜີ້ງດັ່ງກ່າວ ແມ່ນຫຼຸດໜ້ອຍຖອຍລົງເລື້ອຍໆ ຍ້ອນການລົບກວນຈາກຊາວບ້ານ, ໃນປະຈຸບັນນີ້ ບໍລິເວນດັ່ງກ່າວ ໄດ້ກາຍເປັນສະຖານທີ່ສຳຄັນທາງສາສະໜາ ແລະ ສະຖານທີ່ຈຳສິນຂອງແມ່ຂາວ, ຜູ້ທີ່ອາໄສຢູ່ແຫ່ງນີ້ ເລີ້ມແຕ່ປີ 2003, ດຳລົງຊີບດ້ວຍການສັນອາຫານເຈຄາບດຽວ (ສັນພືດພັນທັນຍາຫານ ແລະ ໝາກໄມ້ປ່າ). ຂໍ້ຫ້າມໃນການໄປສັກກະລະບູຊາແມ່ຂາວ, ຕ້ອງນຸ່ງເຄື່ອງເປັນລະບຽບຖືກຕ້ອງຕາມຮີດຄອງປະເພນີ, ຫ້າມນຸ່ງເຄື່ອງສີແດງ, ຫ້າມເວົ້າຈາບໍ່ສຸພາບ, ຫ້າມຂ້າສັດຕັດຊີວິດ ແລະ ຫ້າມຕັດໄມ້ທຳລາຍປ່າໃນບໍລິເວນແຫ່ງນີ້.

**ດ່ານຊ້າງຕາຍ:**

ໃນແຕ່ກ່ອນ ບໍລິເວນພູຂ້ອງ ມີປົ່ງຊ້າງປ່າ ອາໄສຢູ່ຢ່າງໜາແໜ້ນ, ແຕ່ມາເຖິງປັດຈຸບັນນີ້ ກໍ່ຍັງມີຮອງຮອຍປົ່ງຊ້າງຫຼົງເຫຼືອໃຫ້ເຫັນຢູ່, ຕົກມາໃນປີ ຄສ 1970 ຊ້າງປ່າດັ່ງກ່າວ ໄດ້ອົບພະຍົກໄປຈາກບໍລິເວນແຫ່ງນີ້ ຍ້ອນການບຸກລຸກຂອງຄົນ, ສາເຫດທີ່ເອີ້ນບໍລິເວນດັ່ງກ່າວເປັນດ່ານຊ້າງຕາຍ ຍ້ອນວ່າໃນສະໄໝກ່ອນ ໄດ້ມີທະຫານໃຊ້ອາວຸດສົງຄາມຍິງຊ້າງປ່າຕາຍຕົວໜຶ່ງຢູ່ບໍລິເວນແຫ່ງນີ້.

**ດ່ານຕຶກ:**

ບໍລິເວນນີ້ ແມ່ນເຕັມໄປດ້ວຍດອກເຜີ້ງນາໆພັນ ແລະ ຍັງເປັນເຂດອະນຸລັກພັນດອກເຜີ້ງປ່າຂອງຊາວບ້ານ. ເປັນດ່ານທີ່ກວ້າງໃຫຍ່ລຽບຕາມແຄມດ່ານ ມີດອກເຜີ້ງປ່າທຳມະຊາດ ແລະ ເປັນບ່ອນຊົມທິວທັດທຳມະຊາດອັນສວຍສົດງົດງາມ.



**ຫີນຫິງ/ຫີນເຕົ່າ:**

ເປັນຫີນຂະໜາດໃຫຍ່ ເຊິ່ງມີຮູບຮ່າງຄ້າຍຄືເຕົ່າ, ອາດກ່າວໄດ້ວ່າ ຄືທັງເຕົ່າ ແລະ ຫົງ. ນິທານກ່າວໄວ້ວ່າ ເຕົ່າໂຕໜຶ່ງ ຕ້ອງການຄວາມຊ່ວຍເຫຼືອ ເພາະໜອງທີ່ຕົນອາໄສຢູ່ ໄດ້ຂອດແຫ້ງ, ຖ້າຫາກຢູ່ຕໍ່ໄປ ອາດຈະບໍ່ມີອາຫານບໍລິໂພກ, ບັງເອີນ ມີຫົງສອງໂຕ ບິນລົງໄປໜອງນໍ້າ ກໍ່ພົບເຫັນເຕົ່າກຳລັງຈະອຶດອາຫານຕາຍ ກໍ່ເລີຍອີດູຕົນສົງສານ ເຂົ້າໄປຊ່ວຍເຫຼືອເຕົ່າ. ໂດຍໃຫ້ເຕົ່າປາກຄາບງ່າໄມ້ທີ່ຕຽມໄວ້ ໃຫ້ຫົງສອງໂຕໃຊ້ຕີນທັງສີ່ຈັບງ່າໄມ້, ແລ້ວພາເຕົ່າບິນໄປທີ່ມີໜອງນໍ້າໃຫຍ່, ພໍໄປຮອດກາງທາງ ມີເດັກນ້ອຍກຸ່ມໜຶ່ງ ຫຼຽວຂຶ້ນຟ້າ ກໍ່ເລີຍເຫັນຫົງກຳລັງຫາມເຕົ່າພ້ອມທັງເວົ້າໄປວ່າ ຫົງຫາມເຕົ່າ.....ຫົງຫາມເຕົ່າ.....ຫົງຫາມເຕົ່າ. (ຄວາມຈິນຕະນາການ) ແຕ່ເຕົ່າເກີດທະນົງຕົວເອງ ທີ່ບໍ່ຍອມຮັບການຊ່ວຍເຫຼືອໃນຄັ້ງນີ້ ຈຶ່ງໂຕ້ຕອບໄປວ່າ ບໍ່ແມ່ນນ່າ ກູເປັນຜູ້ຫາມຫົງ, ແຕ່ບໍ່ທັນໂຕ້ຕອບກັບເດັກນ້ອຍ ພຽງແຕ່ເຕົ່າອ້າປາກທີ່ຄາບໄມ້ ກໍ່ຫຼຸດອອກສຸດທ້າຍເຕົ່າກໍ່ເລີຍຕົກສູ່ພື້ນດິນແລ້ວຕາຍທັນທີ.

**ຫີນຫຼັກສີລາຈາລຶກ:**

ທີ່ຄ້າຍຄືກັບຫີນ ຫຼັກສີລາຈາລຶກທີ່ວັດພູຈຳປາສັກ. ຕາມການເລົ່າຂອງນັກໂບຮານນະຄະດີຊາວຝລັ່ງ ເຊິ່ງໄດ້ສັນນິຖານໄວ້ວ່າ: ຫຼັກເຂດແດນໃນສະໄໝພະເຈົ້າວໍລະມັນທີ 2 ອາຍຸປະມານ 1400 ປີ, ຜ່ານມາຂຽນອັກສອນ ຕາມການສັນນິຖານເປັນພາສາອິນເດຍ, ພະມ້າ.

**ຫີນຫຼັກຄອນ:**

ຫາກພິຈາລະນາແລ້ວ ເປັນຫີນທີ່ມີລັກສະນະຄືອະໄວຍະວະເພດຊາຍ, ມີຄວາມງາມອັດສະຈັນ ຄົນໂບຮານສາມາດຂຸດຫີນເລິກປະມານ 1 ແມັດ ແລ້ວເອົາຫີນລົງໄປຄັດໄວ້ ເຊິ່ງສາມາດຄອນກ່າຍໄປມາໄດ້ແຕ່ບໍ່ສາມາດຍົກຂຶ້ນ.

ພິເສດ ແຕ່ດ່ານຊ້າງ ຕໍ່ມາຮອດຫີນສີລາຈາລຶກ ໃນລະຫວ່າງວັນທີ 21–28 ເດືອນກຸມພາຂອງທຸກໆປີ ຈະໄດ້ທ່ຽວຊົມດອກໄມ້ສີເຫຼືອງ ຕາມເສັ້ນທາງທີ່ສວຍງາມ ເປັນຕົ້ນດອກຊ້າງນ້າວ.

## 13. ວັງປາຂ່າ.



ປາຂ່າ ເປັນປາທີ່ລ້ຽງລູກດ້ວຍນ້ຳນົມ, ຫາຍໃຈດ້ວຍປອດ, ເປັນປາຕະກຸນດຽວກັບປາວານ ທີ່ຢູ່ທະເລນ້ຳເຄັມ ມີນົມສອງເຕົ້າ, ມີອະໄວຍະເພດເໝືອນກັບມະນຸດ, ສອງປີໃດອອກລູກໜຶ່ງໂຕ, ໄລຍະໃນການຖືພາດົນເຖິງ 11 ເດືອນ ຈຶ່ງຄອດ, ຕົນໂຕເປັນສີດະເບົາໄປທົ່ວໂຕ ແລະ ມີຄວາມຍາວ 1-2.50 ແມັດ, ເມື່ອຄອດຈາກທ້ອງແມ່ໃໝ່ໆ ມີຄວາມຍາວ 90 ຊັງຕີແມັດ, ມີອາຍຸຍືນປະມານ 30–40 ປີ.

ປາຂ່າ ເປັນປາທີ່ຮັບຮູ້ໄວ ແຕ່ເປັນປາທີ່ຕາຍງ່າຍ, ບໍ່ສາມາດເຄື່ອນຍ້າຍຈາກແຫ່ງນີ້ໄປສູ່ແຫ່ງອື່ນໄດ້, ເປັນປາທີ່ຊ່ວຍເຫຼືອຄົນເຮົາ ເວລາເຮືອຫຼົ້ມ ຫຼື ຈົມນ້ຳດ້ວຍການຮັກສາ ບໍ່ໃຫ້ປາອື່ນມາທຳລາຍ ດ້ວຍວິທີເອົາຫົວດູນຊຸກຄົນເຮົາ ໃຫ້ໄດ້ຮັບຄວາມປອດໄພ ຈົນເຖິງແຄມຕາຝັ່ງແມ່ນ້ຳ ຈຶ່ງປ່ອຍປະ, ຍ້ອນປາຂ່າ ມີບຸນຄຸນຕໍ່ຄົນເຮົາ; ປະຊາຊົນຊາວເມືອງໂຂງບັນດາເຜົ່າ ມີຄວາມຮັກ ແລະ ຫວງແຫນປາຂ່ານັບຕັ້ງແຕ່ສະໄໝປູ່ຍ່າຕາຍາຍ ຕະຫຼອດຈົນເຖິງປັດຈຸບັນ.

ປາຂ່າ ພັກອາໄສຢູ່ວັງນໍ້າເລິກ ບ່ອນສາຍນໍ້າໄຫຼບໍ່ແຮງເຂດ ໃຕ້ຄັນຫຼີ່ຜີ ຫຼື ຄອນພະເພັງຄື: ຫາງດອນຄອນ, ຫາງດອນສະດຳ ແລະ ເວີນຄາມ ເຊິ່ງເປັນແຫຼ່ງທີ່ອຸດົມສົມບູນດ້ວຍໝູ່ປານາໆຊະນິດ ແລະ ເປັນດິນແດນຕອນໃຕ້ສຸດ (ຊາຍແດນລາວ-ກຳປູເຈຍ) ຂອງເມືອງໂຂງ ແຂວງຈຳປາສັກ ແລະ ຂອງປະເທດລາວເຮົາ. ເຖິງເມື່ອຍາມລະດູຝົນ ນໍ້າຂອງເຕັມຕາຝັ່ງ ຝູງປາຂ່າ ຈະເຄື່ອນຍ້າຍຂຶ້ນໄປເຖິງກ້ອງສົມພະມິດ ແຕ່ບໍ່ລ່ອງຂຶ້ນເໜືອຄັນຫຼີ່ຜີ ຫຼື ສົມພະມິດ ແລະ ບໍ່ເຂົ້າຮູນໍ້າສາຍຄອນພະເພັງ, ມີບາງຊ່ວງລະດູຝົນ ຝູງປາຂ່າຈະເຄື່ອນຍ້າຍເຂົ້າສູ່ແມ່ນໍ້າເຊກອງເຊຂະໜານ ແລະ ຮູຫ້ວຍກະຫຼຽງ ເພື່ອຊອກປາກິນເປັນອາຫານ ເມື່ອນໍ້າຂອງລົດນ້ອຍຖອຍລົງ ກໍ່ເຄື່ອນຍ້າຍກັບສູ່ຖິ່ນເດີມ.

ແຕ່ສະໄໝກ່ອນ ປາຂ່າທີ່ອາໄສຢູ່ວັງນໍ້າເລິກດັ່ງກ່າວນັ້ນ ມີຈຳນວນຫຼວງຫຼາຍໝູ່ ຫຼື ຝູງໜຶ່ງໆ ບໍ່ຕໍ່າກ່ວາ 20–40 ໂຕ. ແຕ່ປັດຈຸບັນນີ້ ຍັງຫຼົງເຫຼືອແຕ່ພຽງ 20 ກ່ວາໂຕ ເນື່ອງຈາກໄດ້ຮັບຜົນກະທົບຈາກການຖິ້ມລະເບີດ ເພື່ອເອົາປາພື້ນເມືອງໄປຂາຍເປັນສິນຄ້າ ຂອງປະຊາຊົນກຳປູເຈຍ, ຈານວນໜຶ່ງ ແມ່ນຕາຍຍ້ອນຖືກມອງຂອງພໍ່ແມ່ປະຊາຊົນ ບ່ອນປາຂ່າພັກພາອາໄສຢູ່ ໂດຍບໍ່ເຈດຕະນາ ທີ່ເຂົາເຈົ້າໄສ່ມອງ ເພື່ອເອົາປາພື້ນເມືອງ.



ດັ່ງນັ້ນພັກ ແລະ ລັດທະບານແຫ່ງ ສປປ ລາວ ຖືໄດ້ວ່າ ປາຂ່າ ເປັນປາທີ່ຫາຍາກ ແລະ ແຜ່ພັນໄດ້ຊ້າ ຈຶ່ງເປັນສັດທີ່ຫວງຫ້າມປະເພດໜຶ່ງ ແລະ ໄດ້ອອກດຳລັດເລກທີ 118 /10/1989. ໂດຍຫ້າມຈັບກິນ, ນາໄປຂາຍ ແລະ ນາໄປລ້ຽງ ເພື່ອໃຫ້ປາຂ່າ ມີໂອກາດແຜ່ພັນ ແລະ ຍືນຍົງຄົງຕົວ ຢູ່ຄຽງຄູ່ກັບຊາດລາວຕະຫຼອດໄປ. ປາຂ່ານອກ ຈາກເປັນສັດທີ່ຊ່ວຍຄົນແລ້ວ ຍັງຊ່ວຍຊອກປານ້ອຍພົ່ນຂຶ້ນ ໃຫ້ນົກສີດາກິນເປັນອາຫານອີກດ້ວຍ ເມື່ອເຮົານັ່ງສັງເກດເບິ່ງ ກໍ່ຈະເຫັນໄດ້ເມື່ອຝູງນົກສີດາ ບິນເພື່ອຊອກຫາອາຫານບໍ່ໄດ້ຕາມຄວາມຕ້ອງການແລ້ວ ກໍພ້ອມພາກັນບິນເຈີດເຈີ້ຍສູ່ວັງນໍ້າເລິກ ແລະ ລຽບຕາມຫາດຊາຍໃກ້ກັບບໍລິເວນປາຂ່າອາໄສຢູ່ ນົກສີດາຈະພາກັນຮ້ອງປະສານສຽງກັນ ແລະ ເຈີດເຈີ້ຍວົນວຽນໄປມາ. ເມື່ອສັງເກດເບິ່ງແລ້ວຄືຈັ່ງວ່າ: "ຮ້ອງອ້ອນວອນຂໍອາຫານຈາກປາຂ່າ" ຝູງປາຂ່າເມື່ອໄດ້ມອງເຫັນ ແລະ ໄດ້ຍິນສຽງຮ້ອງອ້ອນວອນຢ່າງສະນັ່ນເນືອງມັນຢູ່ເຊັ່ນນັ້ນຈຶ່ງໄດ້ພ້ອມພາກັນຊອກຈັບປານ້ອຍ(ປາສ້ອຍ) ເມື່ອໄດ້ແລ້ວ ກໍ່ຟູຫົວຂຶ້ນ ພ້ອມກັບພົ່ນປາຂຶ້ນສູ່ເບື້ອງບົນໜ້ານໍ້າ, ນົກສີດາມອງເຫັນ ກໍ່ບິນເຈີດແສ່ວຄາບເອົາປານັ້ນໄປກິນຢູ່ຫາດຊາຍ ເມື່ອນົກສີດາອີ່ມໜຳສຳລານໃນການກິນອາຫານແລ້ວ ກໍ່ພາກັນພັກຜ່ອນຢູ່ຕາມຫາດຊາຍນັ້ນ ສ່ວນຝູງປາຂ່າ ກໍ່ຢຸດເຊົາຊອກຫາປາ.

ພຶດຕິກຳຄວາມຮັກລະຫວ່າງປາຂ່າແລະນາງສີດາ ໄດ້ມີການພົວພັນຊ່ວຍເຫຼືອເຊິ່ງກັນແລະກັນ ຍ້ອນມີເລື່ອງເລົ່າຂານສືບຕໍ່ກັນມາວ່າ: ຊາດປາງກ່ອນປາຂ່າ ແລະ ນົກສີດາເປັນມະນຸດ ແລະ ເປັນສາມີພັນລະຍາກັນ ເປັນບຸດຂອງກະສັດເມືອງຊວງ (ແຂວງຫລວງພະບາງ) ມີນາມວ່າ: ທ້າວຂ່າ ນາງສີດາ ທັງສອງໄດ້ອະພິເສກສົມລົດ(ແຕ່ງງານ) ກັນໃໝ່ໆ. ກໍ່ຖືກໄພສົງຄາມຈາກຕ່າງຊາດມາຮຸກຮານ ຈະເຂັ່ນຂ້າລ້າງຜານໝົດເຊື້ອກະສັດ ຈຶ່ງຮັບສັ່ງໃຫ້ເສນາອຳມາດ ຕົກລົງແຕ່ງເຮືອແພ ໂດຍມີຈຸດປະສົງໃຫ້ທ້າວຂ່າຜູ້ເປັນບຸດ ແລະ ນາງສີດາຜູ້ເປັນສະໄພ້ ໜີໄປໃຫ້ພົ້ນຈາກການເຂັ່ນຂ້າຂອງສັດຕູ. ຄັນຫາກເມື່ອສ້າງແພສຳເລັດແລ້ວ ກໍ່ໄດ້ຮັບສັ່ງໃຫ້ຂົນເຂົ້າປາອາຫານເຄື່ອງໃຊ້ຂອງສອຍລົງໃສ່ເຮືອແພ ພ້ອມດ້ວຍທັງຂ້າທາດບໍລິວານ ຜູ້ເປັນນາຍໜ້າ ນຳພາການເດີນທາງ ແລະ ຜູ້ໄປຄອ່ຍ ອຸປະຖາກຮັກສາເມື່ອໄດ້ເລີກງານຍາມດີແລ້ວ ພະບິດາ ຈຶ່ງສັ່ງຮັບໃຫ້ທ້າວຂ່າ ແລະ ນາງສີດາ ພ້ອມ

ດ້ວຍຂ້າທາດບໍລິວານ ລົງສູ່ເຮືອແພ ໂດຍມີພະໂອວາດ (ສັ່ງສອນ) ວ່າ: “ຂໍໃຫ້ເຈົ້າທັງສອງ ຈົ່ງເດີນທາງດ້ວຍຄວາມປອດໄພ, ດິນແດນຕອນໃດເປັນທີ່ພໍພະໄທ ຂໍລູກທັງສອງ ຈົ່ງສ້າງບ້ານແປງເມືອງເອົາເທີນ". ເຮືອຂອງທ້າວຂ່ານາງສິດາ ໄດ້ລອງຕາມລຳແມ່ນ້ຳຂອງ ມຸ້ງໜ້າລົງສູ່ພາກກາງ ແລະ ພາກໃຕ້ຂອງປະເທດລາວເຮົາ. ເວົ້າເຖິງເຂົ້າປາອາຫານທີ່ພະບິດາທ້າວຂ່ານາງສິດາ ໃນການເດີນທາງນັ້ນ ແມ່ນກຸ້ມໄດ້ສາມເດືອນ; ໃນນັ້ນ ມີສັດຫລາຍຈຳພວກເຊັ່ນ: ເປັດ, ໄກ່, ຫານ, ນົກຍຸງ, ຍົກກະແຊວ, ກົບ ແລະ ຂຽດເປັນຕົ້ນ. ຕະຫລອດໄລຍະການເດີນທາງຄັ້ງນີ້ ທ້າວຂ່າ ແລະ ນາງສິດາ ມີຄວາມຢ້ານກົວຫຼາຍທີ່ສຸດ, ທັງສອງໄດ້ແຕ່ລະນຶກເຖິງຄຸນບິດາມານດາ ແລະ ສິ່ງສັກສິດທັງຫຼາຍ ຊ່ວຍດົນບັນດານປະທານພອນ ໃຫ້ໄດ້ຮັບຄວາມປອດໄພໃນການເດີນທາງ. ນັບວ່າເປັນເວລາຫຼາຍຄືນຫຼາຍວັນ ທີ່ເຮືອແພທ້າວຂ່ານາງສິດາ ໄຫລລອງລົງຕາມລຳແມ່ນ້ຳຂອງ, ເປັນຍ້ອນຄວາມຫິວໂຫຍຂອງນາຍໜ້າຜູ້ນຳພາທາງ ຈຶ່ງພາກັນລົງພັກເຊົານອນແຮມຄືນຢູ່ດອນແຫ່ງໜຶ່ງ(ສັນນິຖານວ່າແມ່ນດອນຢູ່ເຂດເມືອງໂຂງໃນປະຈຸບັນ) ແຕ່ບໍ່ຮູ້ຊື່ຂອງດອນ ຕອນຄ່ຳຄືນມາ ຈຶ່ງໄດ້ຍິນສຽງນ້ຳຕົກຕາດຄອນພະເພັງ ດັ່ງຄຶກຄືນເນືອງນັນ ຟັງແລ້ວເປັນໜ້າຢ້ານກົວ ແຕ່ທ້າວຂ່ານາງສິດາ ແລະ ຂ້າທາດບໍລິວານ ບໍ່ຮູ້ວ່າສຽງດັງຄຶກຄືນໃຫ້ໄດ້ຍິນນັ້ນດັງມາຈາກໃສ ຍ້ອນບໍ່ຊິ້ນເຄີຍກັບທ້ອງຖິ່ນ ແລະ ການເດີນທາງ ຮຸ່ງເຊົ້າມານາຍທາງຜູ້ນຳໜ້າພາທາງ ກໍ່ເຄື່ອນແພອອກ ໄຫລລອງໄປຕາມລຳແມ່ນ້ຳຂອງຕໍ່ໄປ ຝ່າຍນາງສິດາ ມີຄວາມຢ້ານກົວຫຼາຍ ຢ້ານບໍ່ໄດ້ຮັບຄວາມປອດໄພ ນາງ ແລະທ້າວຂ່າໄດ້ຕັ້ງສັດຈະຍານິຖານໄຫວ້ອີນວອນພົຣມ ແລະ ສິ່ງສັກສິດທັງຫຼາຍ ໄດ້ມາຊ່ວຍດົນບັນດານ ອະພິບານຄຸ້ມຄອງ ໃຫ້ພົ້ນໄພພິບັດຕ່າງໆ ຄຳອ້ອນວອນຕ່າງໆຂອງທ້າວຂ່ານາງສິດາ  ໄດ້ຮ້ອນໄປເຖິງເທບພະເຈົ້າເລົ່າເທບທັງຫຼາຍ ແຕ່ບໍ່ມີວິທີຈະຊ່ວຍທ້າວຂ່ານາງສິດາໄດ້ ມີວິທີດຽວ ຈະດົນບັນດານໃຫ້ບັນດາສັດທັງຫຼາຍທີ່ຢູ່ໃນເຮືອແພນັ້ນ ປາກເປັນເໝືອນມະນຸດ ແລະ ບອກທາງໃຫ້ເຮືອແພໄຫລລົງໃກ້ຫົວຄອນພະເພັງ ແນມເຫັນເຫວໃຫຍ່ ເຊິ່ງມີສຽງດັງ ແລະ ຄວັນກຸ້ມເໝືອນເມກໝອກ ສັດທັງຫຼາຍກໍ່ຮ້ອງຂຶ້ນບອກທາງໄກ່ວ່າ: ຈໍ່ອດໆ, ນົກກະແຊວບອກວ່າ: ແຈ້ວເຫວດໆ, ເປັດບອກວ່າ: ວາດໆ, ກົບໂຕນລົງນ້ຳສັງເກດແລ້ວບອກວ່າ: ເລິກໆ, ສ່ວນນົກຍຸງແນມເຫັນວ່າຈະບໍ່ໄຫວໄດ້ພຽງບອກວ່າ: ເປວ ວິ່ງໆ ໆ. ສ່ວນທ້າວຂ່ານາງສິດາ ກອດກັນສະໜິດແໜ້ນ ຮ້ອງໃຫ້ຕໍ່ກັນ ທ້າວຂ່າໄດ້ກ່າວວ່າ: “ດ້ວຍຄວາມຮັກລະຫວ່າງເຮົາທັງສອງມີຕໍ່ກັນ ເຊິ່ງຈະເກີດຊາດໃດ, ເປັນສິ່ງໃດ ກໍ່ຈະຂໍຮັກນ້ອງຖະນຸຖະໜອມເບິ່ງແຍງຕະຫລອດໄປ ແລະ ຈະບໍ່ມາຫຍຸ້ງແຫ່ງນີ້ຕະຫລອດໄປ" ນາງສິດາ ກໍ່ສາບານກັບທ້າວຂ່າວ່າ: ຈະຮັກກັນຕະຫລອດໄປ ທັນໃດນັ້ນເຮືອແພກໍ່ຕົກລົງຄອນພະເພັງ ເຮັດໃຫ້ທ້າວຂ່ານາງສິດາ ແລະ ບໍລິວານຈົມນ້ຳ ຊິ້ນລົມຫາຍໃຈຈາກໂລກມະນຸດນີ້ໄປ.

ດ້ວຍຄວາມຮັກ ແລະ ຄວາມຫວງໄຍ ທ້າວຂ່າ ໄດ້ມາເກີດເປັນປາຂ່າ ສ່ວນວ່ານາງສິດາ ກໍ່ໄດ້ມາເກີດເປັນນົກສິດາ, ທ້າວຂ່າ ໄດ້ຖະນຸຖະໜອມນາງສິດາ ດ້ວຍການສົ່ງປາໃຫ້ກິນເປັນປົກກະຕິ ແລະ ບໍ່ລ່ວງເຂົ້າມາສາຍນ້ຳຄອນພະເພັງ ມີແຕ່ຢູ່ກ້ອງຄອນພະເພັງ ຫຼື ຄັນຫຼີ່ຜີ ບໍ່ລ່ວງຂຶ້ນມາເທິງຈັກເທື່ອ, ຕົວໃດ ຫຼົງຂຶ້ນໄປດ້ານເໜືອຄັນຫຼີ່ຜີ ກໍ່ກັ້ນໃຈຕາຍໄປທັນທີ.

# 14. ອຸທິຍານພູສະເຫຼົ່າ.



ພູສ່າເຫລົ້າ ກໍ່ແມ່ນພູເຂົາໜ່ວຍໜຶ່ງ ເຊິ່ງຕັ້ງຢູ່ໃນເຂດເທດສະບານເມືອງໂພນທອງ, ແຂວງຈຳປາສັກ. ຢູເທິງພູ ເຊິ່ງເຕັມໄປດ້ວຍທຳມະຊາດນາໆຊະນິດ ເຊັ່ນ: ມີປ່າໄມ້ທີ່ຂຽວສົດງົດງາມ, ມີຖໍ້າພະ, ມີວັດຖຸບູຮານ ແລະ ຮອງຮອຍປະຫວັດສາດທາງສາສະໜາຫລາຍແຫ່ງ ເຊິ່ງເໝາະສົມແກ່ການທ່ອງທ່ຽວ ຂອງພໍ່ແມ່ປະຊາຊົນບັນດາເຜົ່າທັງພາຍໃນ ແລະ ຕ່າງປະເທດ.

ກ່ອນຈະໄດ້ຊື່ວ່າ: ພູສ່າເຫລົ້າ, ຄືໃນສະໄໝດຶກດຳບັນ ໄດ້ມີນິທານເລື່ອງໜຶ່ງຊື່ວ່າ: ນິທານເລື່ອງ: ທ້າວບາຈຽງ ແລະ ນາງມະໂລງ. ໃນສະໄໝນັ້ນ ທ້າວບາຈຽງກັບ ນາງມະໂລງ ໄດ້ມັກຮັກກັນແບບບ່າວສາວ. ເຂົາທັງສອງ ກໍ່ໄດ້ສັນຍາຜູກໝັ້ນກັນວ່າ: ໃຫ້ທ້າວບາຈຽງ ໄປຂໍໄປໂອມເອົານຳພໍ່, ນຳແມ່ຂອງນາງມະໂລງ ( ທ້າວບາຈຽງເປັນຊົນເຜົ່າລາວເທິງ) ຢູ່ຕໍ່ມາ ນາງມະໂລງ ກໍ່ໄດ້ໄປຮັກມັກກັບ ທ້າວຈຳປາສັກ(ທ້າວ ຈາປາສັກເປັນຊົນເຜົ່າລາວລຸ່ມ) ແຕ່ໃນຈິດໃຈຂອງ ນາງມະໂລງ ແມ່ນມອບໃຫ້ທ້າວຈຳປາສັກພຽງຜູ້ດຽວເທົ່ານັ້ນ. ໃນເມື່ອຮອດເວລາທີ່ນັດໝາຍກັນແລ້ວນັ້ນທ້າວບາຈຽງ ກໍ່ໄດ້ຫ້າງຫາກະກຽມ ແຫ່ຂັນໝາກມາຂໍເອົານາງມະໂລງ ຕາມພໍ່ແມ່ຂອງນາງໄດ້ສັນຍາໄວ້. ເມື່ອເວລາແຮ່ມາຮອດເມືອງເກົ່າເກິ່ງ, ທ້າວບາຈຽງ ກໍ່ໄດ້ຂ່າວວ່ານາງມະໂລງ ໄດ້ລັກໜີໄປນຳທ້າວຈຳປາສັກແລ້ວ, ທ້າວບາຈຽງຈິ່ງມີຄວາມໂສກເສົ້າເສຍໃຈຫລາຍ ຈິ່ງໄດ້ເອົາເຂົ້າຂອງເງິນຄຳຕ່າງໆ ທີ່ຈະມາແຕ່ງດອງນັ້ນ ຖິ້ມໝົດເຊັ່ນ: ເຫລົ້າໄຫໄກ່ໂຕທີ່ກຽມມາແລ້ວນັ້ນ ເທຖິ້ມໃຫ້ໝົດຄື: ເທໄຫເຫລົ້າຖິ້ມຈິ່ງໄດ້ຈາລຶກໄວ້ເປັນພູສ່າເຫລົ້າ, ເທຕົ້ມໄກ່ຖິ້ມ ຈິ່ງໄດ້ຈາລຶກໄວ້ເປັນພູຕົ້ມໄກ່ ເທົ່າທຸກວັນນີ້. ເມື່ອທ້າວບາຈຽງເສຍຊີວິດໄປ ກໍ່ໄດ້ຈາລຶກໄວ້ເປັນພູບາຈຽງ, ເມື່ອນາງມະໂລງເສຍຊີວິດ ກໍ່ໄດ້ຈາລຶກໄວ້ເປັນພູມະໂລງ, ເມື່ອທ້າວຈຳປາສັກເສຍຊີວິດ ກໍ່ໄດ້ຈາລຶກໄວ້ເປັນພູຈຳປາສັກ. ພູເຂົາທັງສາມໜ່ວຍນີ້ ຈິ່ງໄດ້ມີນາມໃສ່ຊື່ໄວ້ຕາມນິທານທ້າວບາຈຽງ ແລະ ມະໂລງ ເທົ້າທຸກວັນນີ້:

1./ ຢູ່ຕາມຖານລຽບຕີນພູ ຈະມີສະຖານທີ່ສຳຄັນຫລາຍບ່ອນເຊັ່ນ: ເລີ່ມຕົ້ນຈະຂຶ້ນພູສ່າເຫລົ້າ ພວກເຮົາຈະໄດ້ເຫັນຮ່ອງຮອຍປະຫວັດສາດຂອງຄົນລຸ້ນເກົ່າກໍ່ຄືກຳແພງຫີນທີ່ເປັນກູນວັດເກົ່າ (ຊື່: ວັດປ່າສີລາກຳແພງເພັດ) ຈ້າຍພູສ່າເຫົ້າ ຫ່າງຈາກນີ້ ໄປລຽບຈ້າຍພູທາງຂວາມີປະມານ 1.000 ກວ່າແມັດ ເຮົາຈະໄດ້ເຫັນຖໍ້າພະບູຮານ, ເຊິ່ງເພິ່ນໄດ້ຕັ້ງວັດໃສ່ໃນສະໄໝກ່ອນ (ຊື່ວ່າ: ວັດຈຳປາສີລາລາມຖໍ້າພະພູສ່າເຫລົ້າ) ໃນວັດນີ້ ຈະມີບ່ອນສັກສິດ ເພື່ອສັກກະລະບູຊາຫລາຍຢ່າງເຊັ່ນ: ຖໍ້າພະເກົ່າແກ່, ພະພຸດທະຮູບໃຫຍ່ສັກສິດ, ຮູບນາກລາຫູ, ຫີນບູຮານທີ່ນຳຈາກດິນຈີ່ພູມະໂລງ.



2./ ຫລັງຈາກເລາະລຽບຕາມຈ້າຍພູແລ້ວ ເຮົາຈະໄດ້ຂຶ້ນສູ່ພັກທີໜຶ່ງຂອງພູ, ຊື່ວ່າ ພັກຫລັງຄຳມ່ວນ. ໃນພັກນີ້ ເຮົາຈະໄດ້ທ່ຽວຊົມທຳມະຊາດປ່າໄມ້ ແລະ ຊົມວິວທິວທັດເທດສະບານຂອງເມືອງໂພນທອງ ແລະ ເມືອງປາກເຊ, ແຕ່ພັກນີ້ ບໍ່ຫລຽວເຫັນກວ້າງໄກປານໃດ (ຄິດໄລ່ທາງຊັນລະດັບໜ້ານໍ້າທະເລ ສູງປະມານ 80 ແມັດ)

3./ ຕໍ່ຈາກພັກຫລັງຄາມ່ວນ ເຮົາຈະໄດ້ຂຶ້ນສູ່ພັກທີສອງຂອງພູຊື່ວ່າ: ພັກສົ້ມມໍ. ພັກນີ້ ຈະໄດ້ທ່ຽວຊົມທຳມະຊາດປ່າໄມ້ທີ່ຂຽວສົດງົດງາມໄປຕາມລະດູການ, ພ້ອມທັງມີບ່ອນຊົມວິວທິວທັດຂອງເທດສະບານເມືອງໂພນທອງ ແລະ ເມືອງປາກເຊ ໄດ້ຫລາຍມູມຫລາຍແຈ ຕາມທີ່ຕ້ອງການ(ພັກນີ້ຄິດໄລ່ຄວາມສູງລະດັບໜ້ານໍ້າທະເລ ປະມານ 130 ກວ່າແມັດ).

4./ ຕໍ່ຈາກພັກສົ້ມມໍ ເຮົາຈະໄດ້ຂຶ້ນສູ່ພັກທີສາມຂອງພູ ຊື່ວ່າ ພັກໜອງ, ພັກນີ້ ພວກເຮົາຈະໄດ້ທ່ຽວຊົມທຳມະຊາດຫລາຍຢ່າງເຊັ່ນ: ທ່ຽວຊົມທຳມະຊາດບາງໆຊະນິດແລ້ວ ຍັງມີຈຸດຊົມວິວທິວທັດຂອງເທດສະບານເມືອງໂພນທອງ ແລະ ເມືອງປາກເຊໄດ້ໂດຍຮອບ.

ນອກຈາກນັ້ນ ທ່ານຈະໄດ້ໄປພົບກັບ ຜາດານຈຳປາ ເຊິ່ງບູຮານເອີ້ນວ່າ: ຜາທ້າວຈຳປາສັກ ກັບນາງມະໂລງ ນັດພົບກັນຢູ່ທີ່ນັ້ນ ຈຶ່ງເອີ້ນວ່າ: ຜາດ່ານຈຳປາ (ພັກນີ້ຄິດໄລ່ຄວາມສູງລະດັບໜ້ານໍ້າທະເລປະມານ 250 ກວ່າແມັດ)

5./ ຕໍ່ຈາກພັກໜອງນີ້ ເຮົາຈະໄດ້ສູ່ພັກທີສີ່ຂອງພູ ຊື່ວ່າ: ພັກເບີແປດ (ເດີ່ນບິນ) ເພາະວ່າພັກນີ້ ນອກຈາກເປັນພັກຈອມສຸດຂອງພູແລ້ວ, ຄາວສະໄໝຈັກກະພັດອາເມລິກາ, ກໍ່ຄືອຳນາດການປົກຄອງເກົ່າ, ພວກເຂົາໄດ້ເອົາກອງທະຫານຂຶ້ນໄປຕັ້ງຄ້າຍຢູ່ເທິງຈອມພູນັ້ນ, ພວກເຂົາຈຶ່ງໄດ້ສ້າງເດີ່ນບິນໄວ້ ເພື່ອຂົນທະຫານຂຶ້ນໄປ. ບ່ອນນີ້ ເປັນສະຖານທີ່ຈົບງາມກ້ວາງຂວາງດີ ເໝາະແກ່ການສ້າງສິ່ງສັກສິດເພື່ອສັກກະລະບູຊາຄື: ສ້າງວັດໃສ່ ເພື່ອເປັນແຫຼ່ງທ່ອງທ່ຽວ ແລະ ສັກກະລະບູຊາຂອງມວນຊົນທັງຫຼາຍທັງພາຍໃນ ແລະ ຕ່າງປະເທດ (ໃສ່ຊື່ວ່າ: ວັດປ່າເວລະວັນຈອມເພັດພູສະເຫຼົ້າ) ໃນພັກນີ້ ຍັງຈະໄດ້ທ່ຽວຊົມທຳມະຊາດຂອງປ່າໄມ້ທີ່ຂຽວສົດງົດງາມຕາມທຳມະຊາດຂອງພູ, ພ້ອມທັງໄດ້ທ່ຽວຊົມວິວທິວທັດຂອງເທດສະບານເມືອງໂພນທອງ ແລະ ເມືອງປາກເຊອີກດ້ວຍ.

ສິ່ງທີ່ສຳຄັນຈະໄດ້ທ່ຽວຊົມວິວທິວທັດຂອງຜາຄອຍນາງ, ຜານີ້ ບູຮານເອີ້ນວ່າ: ຜາທ້າວບາຈຽງຄອຍນາງມະໂລງ (ສະນັ້ນຈຶ່ງເອີ້ນວ່າ: ຜາຄອຍນາງ) ຄວາມສູງຂອງໜ້າຜານີ້ປະມານ 80 ແມັດ (ພັກເບີແປດນີ້ ຄິດໄລ່ທາງຊັນລະດັບໜ້ານໍ້າທະເລສູງປະມານ 350 ແມັດ) ຖ້າຮອດຈອມສຸດປະມານ 380 ແມັດ.

## 15. ຕາດກອຍ.

ຕາດກອຍ ຫ້ວຍນ້ຳພາກ ກໍ່ແມ່ນຕາດໜຶ່ງ ທີ່ຕັ້ງຢູ່ບໍລິເວນບ້ານຫວ້ຍນ້ຳພາກ ຫ່າງຈາກຫຼັກກິໂລແມັດທີ 25 ຕາມເສັ້ນທາງເລກທີ 13 ໃຕ້ ປະມານ 7 ກິໂລແມັດ, ຕາດກອຍ ແມ່ນແກ້ງຫີນຂອງສາຍຫ້ວຍນ້ຳພາກ ທີ່ໄຫຼຕັດຜ່ານເຂດປ່າສະຫງວນດົງຫົວສາວ ເມືອງປະທຸມພອນ, ຕາດກອຍ ປະກອບດ້ວຍແກ້ງຫີນທີ່ມີສອງພັກຂອງໜ້າຜາຫີນ ເປັນບ່ອນນ້ຳຕັດໂຕນລົງເບື້ອງລຸ່ມ ຜ່ານໜ້າຜາທີ່ມີຄວາມສູງປະມານ 4 ແມັດ, ຄວາມຍາວຍຽດປະມານ 200 ແມັດ, ລວງກວ້າງປະມານ 80 ແມັດ, ຕາດກອຍ ຍັງມີຖ້ຳລອດພື້ນທີ່ໃຫຍ່, ຍາວ ຢູ່ກ້ອງຕາດ ຊາວບ້ານໄດ້ກ່າວຂານກັນວ່າ: ເປັນຖ້ຳເງິນ, ຖ້ຳຄຳ ແຕ່ສະໄໝດຶກດຳບັນ ເຮັດໃຫ້ຄົນໃນເຂດນັ້ນ ກ່າວຂານວ່າ: ເປັນຖ້ຳທີ່ມີຄວາມສັກສິດ, ໃນບໍລິເວນຂອງຕາດກອຍ ດັ່ງນັ້ນ ຈິ່ງເປັນຕາດທີ່ໄດ້ຮັບຄວາມເກງຂາມ ຈາກຜູ້ທີ່ຫວັງທຳຮ້າຍ. ສອງຟາກຝັ່ງຂອງຕາດ ແມ່ນປົກຄຸ້ມໄປດ້ວຍປ່າໄມ້ໃຫຍ່.





## 16. ບ້ານດອນແດງ.



ກ່ຽວກັບຄວາມເປັນມາຂອງບ້ານ ແລະ ປະຫວັດຄວາມເປັນມາຂອງການທ່ອງທ່ຽວແບບອະນຸລັກທຳມະຊາດປະຊາຊົນມີສ່ວນຮ່ວມ. ບ້ານຫົວດອນແດງແມ່ນບ້ານໜຶ່ງ ທີ່ນອນຢູ່ໃນ 5 ບ້ານ ຂອງກຸ່ມດອນແດງ ເມືອງປະທູມພອນ ແຂວງຈຳປາສັກ ໂດຍໄດ້ເຕົ້າໂຮມເອົາ 3 ຄຸ້ມບ້ານເຂົ້າກັນ ຄຸ້ມ 1 ບ້ານຫົວດອນ, 2 ບ້ານບັງ 3 ບ້ານບັງຊາຍ. ໂຮມເຂົ້າກັນ ເອີ້ນວ່າຫົວດອນແດງ. ຫົວດອນແດງ ຕັ້ງຢູ່ເໜືອສຸດຂອງດອນແດງ. ຫ່າງຈາກສຳນັກງານເມືອງປະທຸມພອນ ໄປທາງທິດຕາເວັນຕົກທາງທິດເໜືອ ປະມານ 8 ກິໂລແມັດ. ເປັນບ້ານທີ່ໄດ້ຕັ້ງຂຶ້ນມາໄດ້ຫຼາຍເຊັ່ນຄົນແລ້ວ, ປະຊາຊົນມີມູນເຊື້ອທີ່ອົດທົນໝັ່ນພຽນ ໃນການອອກແຮງງານ ຖືເອົາການຜະລິດ

ປູກເຂົ້າເປັນຕົ້ນຕໍ, ປູກຝັງພືດຕະກູນຖົ່ວ, ລ້ຽງສັດ, ຫາປາເປັນອາຊີບສາຮອງ ແລະ ບໍລິການທ່ອງທ່ຽວເປັນອາຊີບເສີມ

ເວົ້າລວມແລ້ວ ດອນແດງ ເປັນດອນໜຶ່ງ ທີ່ທາງອົງການທ່ອງທ່ຽວ ຈັດຢູ່ໃນແຫຼ່ງທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳແບບປະຊາຊົນມີສ່ວນຮ່ວມ. ເມື່ອເປັນແນວນັ້ນ ໃນຕົ້ນເດືອນທີ 8/2004 ອົງການທ່ອງທ່ຽວແຫ່ງຊາດ ໄດ້ປະກອບທຶນພັດທະນາການທ່ອງທ່ຽວ.ໃຫ້ແກ່ບ້ານ ໃນວົງເງິນ 109,754,000 ກີບ ເພື່ອນຳໃຊ້ເຂົ້າໃນກິດຈະກຳໃຫ້ບໍລິການແຂກທີ່ເຂົ້າມາທ່ອງທ່ຽວເຊັ່ນ, ເຮືອນພັກແຮມ 1 ຫຼັງ, ຮ້ານອາຫານ 1 ຫຼັງ, ຫ້ອງນ້ຳລວມ 1 ຫຼັງ. ເຈາະນ້ຳສ້າງບາດານ 1 ບໍ່ ແລະ ທຶນສົມທົບຂອງຊາວບ້ານ 5,1580.000ກີບ, ສຳເລັດໃນການກໍ່ສ້າງໃນເດືອນ 7 ປີ 2005 ແລ້ວມອບໃຫ້ຊຸມຊົນປົກປັກຮັກສາຄຸ້ມຄອງນຳໃຊ້ ບໍລິການຕະຫຼອດມາ. ນອກຈາກນັນ ບ້ານຍັງໄດ້ຮັບການຝຶກອົບຮົມດ້ານການບໍລິການທ່ອງທ່ຽວ ຈາກສູນກາງແຂວງ. ເມືອງ ແລະ ສິ່ງຕົວແທນຂອງບ້ານໄປຖອດຖອນບົດຮຽນຢູ່ຕ່າງແຂວງອີກດ້ວຍ.

ປະຈຸບັນ ບ້ານມີກຸ່ມບໍລິການຕ່າງໆເຊັ່ນ: ກຸ່ມປຸງແຕ່ງ, ກຸ່ມບໍລິການເຮືອນພັກ, ກຸ່ມຂົນສົ່ງທາງບົກ, ກຸ່ມຂົນສົ່ງທາງນໍາ, ກຸ່ມນຳທ່ຽວ, ກຸ່ມພາຂວັນ ແລະ ໝໍພອນ.

ສັງລວມໃນປີ 2010 ນັບແຕ່ເດືອນທີ 1 ຫາເດືອນ 11 ປີ 2010 ມີແຂກເຂົາມາບ້ານພັກຊຸມຊົນ ແລະ ເຂົ້າພັກໂຮມສະເຕ (ເຮືອນຊາວບ້ານ) ເປັນປົກກະຕິ.

ບ້ານຫົວດອນແດງ ເວົ້າສະເພາະ ເປັນດອນທີ່ອົງການທ່ອງທ່ຽວແຫ່ງຊາດ ຈັດຢູ່ໃນແຫຼ່ງທ່ອງທ່ຽວທຳມະຊາດ ແລະ ວັດທະນະທຳ ແລະ ຢູ່ຈຸດໃຈກາງແຂວງ ແຫຼ່ງທ່ອງທ່ຽວທາງດ້ານປະຫວັດສາດ ເຊັ່ນ: ຜາສາດຫີນວັດພູ. ຜາສາດຫີນອຸບມຸງ (ບ້ານໂຕະໂໜະ). ແລະ ແຫຼ່ງທ່ອງທ່ຽວພູອາສາ,ກຽດໂງ້ງ, ນອກຈາກນັ້ນ ບ້ານດອນແດງ ຍັງມີຣີສອດແຫ່ງທີສອງ ທີ່ປຸກສ້າງຢູ່ໃນເນື້ອທີ່ຄຸ້ມຄອງຂອງບ້ານຄື: ບ້ານພັກດາໂຟຣີສອດ ເປັນການລົງທຶນຈາກນັກລົງທຶນຈາກຕ່າງປະເທດ ມີເຮືອນພັກ 12 ຫຼັງ, ມີຫ້ອງນອນ 24 ຫ້ອງ, ບັນຈຸແຂກໄດ້ 48 ຄົນ, ສຳລັບພະນັກງານຮັບໃຊ້ບໍລິການສ່ວນຫຼາຍ ແມ່ນຊາວບ້ານຫົວດອນແດງ ມີ 47 /30 ຄົນ, ເງິນເດືອນຕໍ່າສຸດ 600.000 ກີບ/ເດືອນ. ເປັນເງື່ອນໄຂໜຶ່ງທີ່ເຮັດໃຫ້ຊາວບ້ານມີວຽກເຮັດງານທຳ ສາມາດສະກັດກັ້ນ ເພື່ອບໍ່ໃຫ້ປະຊາຊົນຫຼັ່ງໄຫຼໄປເຮັດວຽກຢູ່ປະເທດເພື່ອນບ້ານໄດ້ຈຳນວນໜຶ່ງ.

## 17. ກຸ່ມຕາດຕາຢິກເສືອ.

ຫ່າງຈາກຕົວເມືອງປາກຊ່ອງປະມານ 40 Km. ເອີ້ນກຸ່ມຕາດຕາຢິກເສືອ ກໍ່ຍ້ອນວ່າ: ມີນໍ້າຕົກຕາດ 4 ແຫ່ງຢູ່ໃນຂົງເຂດດຽວກັນຄື:

1. ນໍ້າຕົກຕາດ ຮ່າລັ່ງ ກຳເນີດຈາກຫ້ວຍນໍ້າຕາງ.
2. ນໍ້າຕົກຕາດ ອິນຊີ ກຳເນີດຈາກຫ້ວຍໝາກຈັນ.
3. ນໍ້າຕົກຕາດ ເຊນໍ້ານ້ອຍ ກຳເນີດຈາກເຊນໍ້ານ້ອຍ.
4. ນໍ້າຕົກຕາດ ກົບ ກຳເນີດຈາກຫ້ວຍໝາກຈັນ.

ທັງໝົດ 4 ຕາດນີ້ ແມ່ນຂຶ້ນກັບບ້ານຕາຢິກເສືອ ເຊິ່ງແຕ່ກ່ອນເອີ້ນວ່າ ບ້ານກົກກ້ອຍສູງ, ເຊິ່ງເປັນບ້ານກຳເນີດຂອງຊົນເຜົ່າລະເວນ, ຍ່າເຫີນ, ກ່ອນຈະເອີ້ນວ່າບ້ານກົກກ້ອຍສູງ ຍ້ອນວ່າ: ຕົ້ນກ້ອຍ ໄດ້ເກີດທີ່ໂກນຕົ້ນໄມ້ ຊຶ່ງຄົນຊົນເຜົ່າໄດ້ເຊື່ອຖືກັນວ່າເປັນສິ່ງສັກສິດ ໜ້າອັດສະຈັນຈາກນັ້ນ ມາດົນນານໄດ້ມີ ຕາຢິກ ແລະ ຕາເສືອ ຍ້າຍອອກຈາກບ້ານ ໄປຢູ່ໃນສວນ ຫ່າງຈາກບ້ານປະມານ 5 ຫາ 8 ກິໂລແມັດ. ດົນນານຕໍ່ມາ ກໍ່ກາຍເປັນບ້ານໃໝ່ ເກີດຂຶ້ນເອີ້ນວ່າ: ບ້ານຕາຢິກເສືອ, ສ່ວນບ້ານກົກກ້ອຍ ກໍ່ໝົດໄປ ໃນປະຈຸບັນ ຈຳນວນນໍ້າຕົກຕາດທັງ 4 ແຫ່ງ ກໍ່ຂຶ້ນກັບບ້ານຕາຢິກເສືອ ກໍ່ເລີຍເອີ້ນຊື່ວ່າ: ກຸ່ມຕາດຕາຢິກເສືອເທົ່າທຸກວັນນີ້.





## 18. ນ້ຳຕົກຕາດຈຳປີ.



ນ້ຳຕົກຕາດຖ້ຳຈຳປີ ເປັນແຫຼ່ງທ່ອງທ່ຽວທຳມະຊາດໜຶ່ງ ທີ່ມີຄວາມສວຍງາມ ແລະ ອຸດົມສົມບູນໄປດ້ວຍຊີວະນາໆພັນຫຼາຍຊະນິດ ແລະ ມີທິວທັດສະນີຍະພາບທຳມະຊາດທີ່ໂດດເດັ່ນ, ເປັນແຫຼ່ງທ່ອງທ່ຽວລະດັບແຂວງ, ນ້ຳຕົກດັ່ງກ່າວ ຕາມການເລົ່າຂານຂອງປູ່ຍ່າຕາຍາຍແຕ່ກ່ອນວ່າ ນ້ຳຕົກຕາດແຫ່ງນີ້ມີເຈົ້າ ເຊິ່ງເປັນງູໃຫຍ່ ທີ່ອາໄສຢູ່ໃນຖ້ຳບໍລິເວນນ້ຳຕົກ, ໃນສະໄໝກ່ອນ ຈົນເຖິງປັດຈຸບັນ ເຊື່ອຖືວ່າ ເປັນນ້ຳຕົກທີ່ມີຄວາມສັກສິດ ປະຊາຊົນໃນພື້ນທີ່ບ້ານຫຼັກ 38 ແລະ ພື້ນທີ່ບ້ານໃກ້ຄຽງ ໃຫ້ຄວາມເຄົາລົບບູຊາ ແລະ ເຊື່ອຖືກັນມາຈົນມາຮອດປັດຈຸບັນ. ສ່ວນການເອີ້ນຊື່ນ້ຳຕົກຕາດຖ້ຳຈຳປີ ຈາກການໃຫ້ຂໍ້ມູນຂອງອຳນາດການປົກຄອງທ້ອງຖິ່ນ ແມ່ນເອີ້ນຕາມຊື່ຫ້ວຍນ້ຳຈຳປີ ທີ່ໄຫຼມາຕົກໃສ່ຕາດ, ດັ່ງນັ້ນ, ຈຶ່ງເອີ້ນກັນວ່າ ນ້ຳຕົກຕາດຖ້ຳຈຳປີ ມາເຖິງປັດຈຸບັນ. ນ້ຳຕົກຕາດຖ້ຳຈຳປີ ຕັ້ງຢູ່ບ້ານຫຼັກ 38 ຫ່າງຈາກບ້ານປະມານ 2.2 ກິໂລແມັດ, ເທດສະບານເມືອງປາກຊ່ອງ ໄປຫາບ້ານຫຼັກ 38 ປະມານ 12 ກິໂລແມັດ, ໄລຍະຫ່າງຈາກເທດສະບານແຂວງປະມານ 38 ກິໂລແມັດ.

## 19. ສະຖານທີ່ບູຮານທາດສາມປາງ.




ທາດສາມປາງ ຕັ້ງຢູ່ເຂດ 4 ໂນນຍ່າງ, ເປັນສະຖານບູຮານທີ່ເກົ່າແກ່ຂອງເມືອງສຸຂຸມາ ກໍ່ຄືແຂວງຈໍາປາສັກ, ຫ່າງຈາກເມືອງສຸຂຸມາ ໄປທາງຕາເວັນຕົກສ່ຽງເໜືອປະມານ 13 ກິໂລແມັດ, ຫ່າງຈາກເມືອງປາກເຊ ໄປທາງຕາເວັນຕົກສ່ຽງໃຕ້ປະມານ 72 ກິໂລແມັດ, ສະຖານທີ່ແຫ່ງນີ້ ຕັ້ງຢູ່ທົ່ງຮາບຫ້ວຍຂະໜອນເຊິ່ງເປັນສາຂາໜຶ່ງຂອງແມ່ນໍ້າຂອງ. ໃນອາດີດ ຫ້ວຍນີ້ມີນໍ້າໄຫຼຕະຫຼອດ, ຄົນບູຮານໄດ້ໃຊ້ເປັນທາງຂົນສົ່ງ ແລະ ໄປມາຫາສູ່ກັນ. ພ້ອມນີ້ ຍັງ

ມີເສັ້ນທາງບູຮານໄດ້ເນັ່ງຈາກວັດພູໄປທາງໃຕ້ ຈົນເຖິງຊາຍແດນກຳປູເຈຍ. ປະຈຸບັນນີ້ ຍັງໄດ້ພົບເຫັນຢູ່, ບາງຕອນກໍ່ຖືກທຳລາຍ ໂດຍສະເພາະປະຊາຊົນເຮັດໄຮ່, ເຮັດນາ, ປູກເຮືອນຊານໃສ່ ແຕ່ກໍ່ຍັງສາມາດສັນນິຖານໄດ້ວ່າ: ແມ່ນເສັ້ນທາງຄູບູຮານ.

ສະຖານບູຮານທາດສາມປາງນີ້ ເຂົາເຈົ້າໄດ້ຖົມດິນຂຶ້ນສູງ, ນອກຈາກບໍລິເວນທາດແລ້ວ ກໍ່ຍັງມີຕໍ່ທຸກທິດຂອງສະຖານທີ່ແຫ່ງນີ້. ອາດເປັນເມືອງໜຶ່ງທີ່ສຳຄັນ ທີ່ຂຶ້ນກັບເມືອງເສດຖາປູລະໃນອາດີດ. ທາດສາມປາງໜ່ວຍທີ່ໜຶ່ງ ຢູ່ທາງທິດໃຕ້; ທາດໜ່ວຍນີ້ ເປັນທາດທີ່ກໍ່ດ້ວຍຫີນຊາຍ, ເປັນຮູບ 4 ຫຼ່ຽມມົນທົນ, ຕີນທາດ ຫຼື ຊັ້ນຮອງພື້ນເປັນຮູບ 4 ຫຼ່ຽມຫຍໍ້ມູມ, ທາດນີ້ກໍ່ສ້າງດ້ວຍຄິດອກໄມ້.ມີຕີນ ແລະ ແອວທາດກົ່ວ, ຢູ່ສ່ວນຕຸງປຸ້ງອອກ ແລ້ວກໍ່ເປັນພັກນ້ອຍໆຂຶ້ນປາຍຮູບ 4 ຫຼ່ຽມມີ 4 ພັກ ແຕ່ລະພັກ ແລະ ແຕ່ລະທິດ ມີປະຕູປິດ, ແຕ່ລະແຈກໍ່ເປັນຮູບຫຍໍ້ມູມ ເໜືອນກັນກັບແອວຂອງທາດ, ຖັດຈາກນັ້ນຂຶ້ນເທິງ ເພິ່ນເປັນຮູບວົງມົນຂຶ້ນ ແຕ່ເສຍດາຍຈອມທາດໄດ້ຫັກລົງ ບໍ່ສາມາດເຫັນໄດ້ວ່າເປັນຮູບຊົງແນວໃດ. ທາດໜ່ວຍທາງໃຕ້ຂ້າງໜ້າຂອງໜ່ວຍທາດຢູ່ແອວກ້ຳຕາເວັນອອກ ມີປະຕູເປີດໜຶ່ງ ປ່ອງສ່ວນທິດອື່ນ, ປະຕູປິດໝົດ. ທາດນີ້ ຢູ່ທາງຕາເວັນອອກ ເຫັນວ່າຍັງດີ 80% ເພາະເຫັນເປັນຮູບແບບເກືອບຄົບຖ້ວນ, ຍັງມີບາງສ່ວນແຕກຫັກເຄື່ອນຍ້າຍເລັກນ້ອຍ.

–ກ້ຳໃຕ້ສ່ວນລຸ່ມຂອງໜ່ວຍທາດຍັງດີ ຖ້ານທີ່ 2–3 ເປ້ເພເຄື່ອນຍ້າຍໄປແລ້ວ

– ກ້ຳຕາເວັນຕົກ ຂ້າງລຸ່ມຍັງດີ, ຂ້າງເທິງຖ້ານ 2–3 ຍອດເພ ແລະເຄື່ອນຍ້າຍ, ທິດເໜືອນ ສ່ວນລຸ່ມຂອງພັກ ທີ່ໜຶ່ງຍັງດີ, ແຕກຫ່ານເລັກນ້ອຍຖ້ານທີ່ 2–3 ຍອດເພ ແລະ ເຄື່ອນຍ້າຍ, ກົກຂອງຈອມທາດເຫັນເຄິ່ງໜຶ່ງ ທາດໜ່ວຍທີໜຶ່ງ ຢູ່ທາງທິດໃຕ້ ເຫັນວ່າຍັງດີ ແລະ ແໜ້ນໜາກ່ວາໜ່ວຍອື່ນໆ. ໜ່ວຍປະທານຂອງທາດໜ່ວຍທີ 2 ຫຼື ໜ່ວຍປະທານຂອງທາດສາມປາງນີ້ເປັນທາດໃຫ່ຍ, ຕັ້ງຢູ່ລະຫວ່າງທາດ 2 ໜ່ວຍ, ຮູບແບບການກໍ່ສ້າງມີລັກສະນະເໜືອນກັນ ແຕ່ໃຫ່ຍ ແລະ ສູງກ່ວາ, ຖືກເພພັງລົງ ຍັງເຫຼືອແຕ່ 2 ຖ້ານ ( 2 ພັກ).

– ດ້ານທິດຕາເວັນອອກ ແຕ່ລຸ່ມຂຶ້ນໄປເກືອບຮອດພັກ 2 ໂຄງສ້າງຍັງເຫຼືອເກືອບຄົບຖ້ວນ, ສ່ວນຖານພັກ ແມ່ນເພພັງເຄື່ອນຍ້າຍ, ສ່ວນຈອມແມ່ນເພລົງໝົດ

ດ້ານທິດໃຕ້, ທິດເໜືອ ແລະ ທິດຕາເວັນຕົກກໍ່ເຊັ່ນດຽວກັນ ທາດໜ່ວຍນີ້ ກໍ່ໃກ້ຈະເພພັງລົງ ຍ້ອນຕົ້ນໄມ້ໄດ້ເກີດຢູ່ໃນທາດ. ຮາກໄມ້ໄດ້ເຂົ້າໄປໃນທາດ ເຮັດໃຫ້ທາດເຄື່ອນຍ້າຍອອກຈາກທີ່ເດີມຫຼາຍບ່ອນ, ປະຕູທາງເຂົ້າທາດທາງຕາເວັນອອກ ມີເສົາປະດັບແກະສະລັກ ຍັງເຫຼືອແຕ່ສ່ວນລຸ່ມວົງປະຕູ ໄດ້ເຮັດດ້ວຍຫີນຊາຍຍັງແໜ້ນໜາ, ຂ້າງໃນທາດ ໄດ້ເຫັນແທ່ນແອວຂັນໂກນກາງ. ເບິ່ງຄືແທ່ນລິງຄະ, ສ່ວນລຸ່ມນີ້ ຖືກທຸບຕີແຕກຫຼາຍບ່ອນ. ທາດໜ່ວຍທີ່ 3 ຢູ່ທິດເໜືອ ທາດໜ່ວຍນີ້ ກໍ່ແບບລັກສະນະການກໍ່ສ້າງ ຄືທາດສອງໜ່ວຍທີ່ກ່າວແລ້ວຂ້າງຕົ້ນ ສິ່ງກໍ່ສ້າງແມ່ນວັດຖຸຊະນິດດຽວກັນ ແຕ່ທາດໜ່ວຍນີ້ ຖືກເພພັງເຫຼືອແຕ່ 30% ຄືສ່ວນເທິງແຕ່ຖ້ານທີ່ 2 ເທິງຍອດ ໄດ້ເພພັງລົງເຄິ່ງທາດ ຍ້ອນສາຍເຫດຕົ້ນໄຮທີ່ເກີດຂຶ້ນໃນທາດໜ່ວຍນີ້, ໃນ 1954 ປະຊາຊົນໄດ້ເຮັດບຸນບັ້ງໄຟ ແລະ ເສັງກອງຢູ່ຕໍ່ໜ້າທາດ ຍ້ອນຮາກໄຮຄືຫີນອອກ ແລະ ສຽງກອງດັງ ແລະ ຄົນເສັງກອງຂຶ້ນຢູ່ທາດໜ່ວຍນີ້ ຈຶ່ງເຮັດໃຫ້ທາດ ເຄື່ອນລົງ, ມີຜູ້ເສຍຊີວິດກັບທີ່ 8 ຄົນ ແລະ ເສຍຊີວິດຢູ່ບ່ອນອື່ນອີກ 3 ຄົນ ແລະ ມີຄົນໄດ້ຮັບບາດເຈັບອີກຈຳນວນ ໜຶ່ງ. ທາດສາມປາງ ທັງປະກອບຫຼາຍຢ່າງທີ່ພົວພັນກັນຄື:

